ພຣະວິນັຍປິຏົກ

ເຫຼັ້ມ ໔

ມຫາວັຄຄ໌ ພາຄ ໑

ຂໍນອບນ້ອມແດ່ພຣະຜູ້ມີພຣະພາຄອຣຫັນຕະສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ

ມຫາຂັນສກະ

ໂພທິກຖາ ປຕິຈຈສມຸປບາທມນສິກາຣ

[໑] ໂດຍສມັຍນັ້ນ ພຣະຜູ້ມີພຣະພາຄພຸທສເຈົ້າ ແຣກຕຣັສຣູ້ ປະທັບຢູ່ ຓ ຄວງໄມ້ໂພທິພຶກສ໌ ໃກ້ຝັ່ງແມ່ນ້ຳເນຣັນຊຣາ ໃນອຸຣຸເວລາປະເທສ. ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບນັ່ງດ້ວຍບັລລັງກ໌ດຽວ ສເວີຍວິມຸຕຕິສຸຂ ຓ ຄວງໄມ້ໂພທິພຶກສ໌ຕລອດ ໗ ມື້ ແລະທຣົງມນສິກາຣປຕິຈຈສມຸປບາທເປັນອນຸໂລມ ແລະປຕິໂລມ ຕລອດປຖົມຍາມແຫ່ງຣາຕຣີ ວ່າດັ່ງນີ້:-

ປຕິຈຈສມຸປບາທ ອນຸໂລມ

ເພາະອວິຊຊາເປັນປັຈຈັຍ	ຈຶ່ງມີສັງຂາຣ
ເພາະສັງຂາຣເປັນປັຈຈັຍ	ຈຶ່ງມີວິญญาณ
ເພາະວິญญาณເປັນປັຈຈັຍ	ຈຶ່ງມີນາມຣູປ
ເພາະນາມຣູປເປັນປັຈຈັຍ	ຈຶ່ງມີສລາຍຕນະ
ເພາະສລາຍຕນະເປັນປັຈຈັຍ	ຈຶ່ງມີຜັສສະ
ເພາະຜັສສະເປັນປັຈຈັຍ	ຈຶ່ງມີເວທນາ
ເພາະເວທນາເປັນປັຈຈັຍ	ຈຶ່ງມີຕັณຫາ
ເພາະຕັณຫາເປັນປັຈຈັຍ	ຈຶ່ງມີອຸປາທານ
ເພາະອຸປາທານເປັນປັຈຈັຍ	ຈຶ່ງມີພົພ
ເພາະພົພເປັນປັຈຈັຍ	ຈຶ່ງມີຊາຕິ

ເພາະຊາຕິເປັນປັຈຈັຍ ຈຶ່ງມີຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຍາສ ເປັນອັນວ່າກອງທຸກຂ໌ທັ້ງມວລນັ້ນຍ່ອມເກີດ ດ້ວຍປະກາຣລະນີ້.

ປຕິຈຈສມຸປບາທ ປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊານັ້ນແຫຼະດັບໂດຍບໍ່ເຫລືອດ້ວຍມັຄຄ໌ຄືວິຣາຄະ ສັງຂາຣ ຈຶ່ງດັບ

ເພາະສັງຂາຣດັບ	ວິຍຍານຈຶ່ງດັບ
ເພາະວິຍຍານດັບ	ນາມຣູປຈຶ່ງດັບ
ເພາະນາມຣູປດັບ	ສລາຍຕນະຈຶ່ງດັບ
ເພາະສລາຍຕນະດັບ	ຜັສສະຈຶ່ງດັບ
ເພາະຜັສສະດັບ	ເວທນາຈຶ່ງດັບ
ເພາະເວທນາດັບ	ຕັນຫາຈຶ່ງດັບ
ເພາະຕັນຫາດັບ	ອຸປາທານຈຶ່ງດັບ
ເພາະອຸປາທານດັບ	ກົພຈຶ່ງດັບ
ເພາະກົພດັບ	ຊາຕິຈຶ່ງດັບ

ເພາະຊາຕິດັບ ຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຍາສ ຈຶ່ງດັບ ເປັນອັນວ່າກອງທຸກຂ໌ທັ້ງມວລນັ້ນຍ່ອມດັບ ດ້ວຍປະກາຣລະນີ້.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຮົງຮູ້ເນື້ອຄວາມນັ້ນແລ້ວ ຈຶ່ງທຮົງເປັ່ງອຸທານນີ້ໃນເວລານັ້ນ ວ່າດັ່ງນີ້:-

ພຸທສອຸທານຄາຖາທີ່ ໑

ເມື່ອໃດແລ ສັມມ໌ທັ້ງຫຼາຍ ປາກົຕແກ່ພຣາຫ໌ມຕ໌
ຜູ້ມີພຽຣເພັ່ງຢູ່ ເມື່ອນັ້ນ ຄວາມສົງສັຍທັ້ງປວງ
ຂອງພຣາຫ໌ມຕ໌ນັ້ນຍ່ອມສິ້ນໄປ ເພາະມາຮູ້ສັມມ໌
ພ້ອມທັ້ງເຫຕຸ.

[໔] ລຳດັບນັ້ນ ພຣະຜູ້ມີພຣະກາຄທຮົງມນສິກາຣປຕິຈຈສມຸປບາທ ເປັນອນຸໂລມແລະປຕິໂລມ ຕລອດມັຊຊິມຍາມແຫ່ງຣາຕຣີ ວ່າດັ່ງນີ້:-

ປຕິຈຈສມຸປບາທ ອນຸໂລມ

ເພາະອວິຊຊາເປັນປັຈຈັຍ	ຈຶ່ງມີສັງຂາຣ
ເພາະສັງຂາຣເປັນປັຈຈັຍ	ຈຶ່ງມີວິຍຍານ
ເພາະວິຍຍານເປັນປັຈຈັຍ	ຈຶ່ງມີນາມຮູປ
ເພາະນາມຮູປເປັນປັຈຈັຍ	ຈຶ່ງມີສຄາຍຕນະ
ເພາະສຄາຍຕນະເປັນປັຈຈັຍ	ຈຶ່ງມີຜັສສະ
ເພາະຜັສສະເປັນປັຈຈັຍ	ຈຶ່ງມີເວທນາ
ເພາະເວທນາເປັນປັຈຈັຍ	ຈຶ່ງມີຕັນຫາ
ເພາະຕັນຫາເປັນປັຈຈັຍ	ຈຶ່ງມີອຸປາທານ
ເພາະອຸປາທານເປັນປັຈຈັຍ	ຈຶ່ງມີກົພ
ເພາະກົພເປັນປັຈຈັຍ	ຈຶ່ງມີຊາຕິ

ເພາະຊາຕິເປັນປັຈຈັຍ ຈຶ່ງມີຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຍາສ ເປັນອັນວ່າກອງທຸກຂ໌ທັ້ງມວລນັ້ນຍ່ອມເກີດ ດ້ວຍປະກາຣລະນີ້.

ປຕິຈຈສມຸປບາທ ປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊານັ້ນແຫຼະດັບໂດຍບໍ່ເຫລືອດ້ວຍມັຄຄ໌ຄືວິຣາຄະ ສັງຂາຣ ຈຶ່ງດັບ

ເພາະສັງຂາຣດັບ	ວິຍຍານຈຶ່ງດັບ
ເພາະວິຍຍານດັບ	ນາມຮູປຈຶ່ງດັບ
ເພາະນາມຮູປດັບ	ສຄາຍຕນະຈຶ່ງດັບ
ເພາະສຄາຍຕນະດັບ	ຜັສສະຈຶ່ງດັບ
ເພາະຜັສສະດັບ	ເວທນາຈຶ່ງດັບ
ເພາະເວທນາດັບ	ຕັນຫາຈຶ່ງດັບ
ເພາະຕັນຫາດັບ	ອຸປາທານຈຶ່ງດັບ

ເພາະອຸປາທານດັບ	ກົພຈຶ່ງດັບ
ເພາະກົພດັບ	ຊາຕິຈຶ່ງດັບ

ເພາະຊາຕິດັບ ຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຢາສ ຈຶ່ງດັບ

ເປັນອັນວ່າກອງທຸກຂ໌ທັ້ງມວລນັ່ນຍ່ອມດັບ ດ້ວຍປະການຣະນີ້.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ເນື້ອຄວາມນັ້ນແລ້ວ ຈຶ່ງທຣົງເປັ່ງອຸທານນີ້ໃນເວລານັ້ນ ວ່າດັ່ງນີ້:-

ພຸທສອຸທານຄາຖາທີ່ ໔

ເມື່ອໃດແລ ສັມມ໌ທັ້ງຫຼາຍ ປາກົຕແກ່ພຣາຫ໌ມຕ໌
ຜູ້ມີພຽຣເພັ່ງຢູ່ ເມື່ອນັ້ນ ຄວາມສົງສັຍທັ້ງປວງ
ຂອງພຣາຫ໌ມຕ໌ນັ້ນຍ່ອມສິ້ນໄປ ເພາະໄດ້ຮູ້ຄວາມ
ສິ້ນແຫ່ງປັຈຈັຍທັ້ງຫຼາຍ.

[໓] ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງມນສິການປຕິຈຈສມຸປບາທ ເປັນອນຸໂລມແລະປຕິໂລມ ຕລອດປັຈສິມຍາມແຫ່ງຣາຕຣີ ວ່າດັ່ງນີ້:-

ປຕິຈຈສມຸປບາທ ອນຸໂລມ

ເພາະອວິຊຊາເປັນປັຈຈັຍ	ຈຶ່ງມີສັງຂາຣ
ເພາະສັງຂາຣເປັນປັຈຈັຍ	ຈຶ່ງມີວິญຍາຓ
ເພາະວິญຍາຓເປັນປັຈຈັຍ	ຈຶ່ງມີນາມຮູປ
ເພາະນາມຮູປເປັນປັຈຈັຍ	ຈຶ່ງມີສລາຍຕນະ
ເພາະສລາຍຕນະເປັນປັຈຈັຍ	ຈຶ່ງມີຜັສສະ
ເພາະຜັສສະເປັນປັຈຈັຍ	ຈຶ່ງມີເວທນາ
ເພາະເວທນາເປັນປັຈຈັຍ	ຈຶ່ງມີຕັຓຫາ
ເພາະຕັຓຫາເປັນປັຈຈັຍ	ຈຶ່ງມີອຸປາທານ
ເພາະອຸປາທານເປັນປັຈຈັຍ	ຈຶ່ງມີກົພ
ເພາະກົພເປັນປັຈຈັຍ	ຈຶ່ງມີຊາຕິ

ເພາະຊາຕິເປັນປັຈຈັຍ ຈຶ່ງມີຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຍາສ

ເປັນອັນວ່າກອງທຸກຂ໌ທັ້ງມວລນັ່ນຍ່ອມເກີດ ດ້ວຍປະກາຣລະນີ້.

ປຕິຈຈສມຸປບາທ ປຕິໂລມ

ອີກຢ່າງນຶ່ງ ເພາະອວິຊຊານັ່ນແຫຼະດັບໂດຍບໍ່ເຫລືອດ້ວຍມັຄຄ໌ຄືວິຣາຄະ ສັງຂາຣ ຈຶ່ງດັບ

ເພາະສັງຂາຣດັບ	ວິຍຍານຈຶ່ງດັບ
ເພາະວິຍຍານດັບ	ນາມຣູປຈຶ່ງດັບ
ເພາະນາມຣູປດັບ	ສລາຍຕນະຈຶ່ງດັບ
ເພາະສລາຍຕນະດັບ	ຜັສສະຈຶ່ງດັບ
ເພາະຜັສສະດັບ	ເວທນາຈຶ່ງດັບ
ເພາະເວທນາດັບ	ຕັນຫາຈຶ່ງດັບ
ເພາະຕັນຫາດັບ	ອຸປາທານຈຶ່ງດັບ
ເພາະອຸປາທານດັບ	ກົພຈຶ່ງດັບ
ເພາະກົພດັບ	ຊາຕິຈຶ່ງດັບ

ເພາະຊາຕິດັບ ຊຣາ ມໍຣຕະ ໂສກະ ປຣິເທວະ ທຸກຂ໌ ໂທມນັສ ອຸປາຍາສ ຈຶ່ງດັບ

ເປັນອັນວ່າກອງທຸກຂ໌ທັ້ງມວລນັ່ນຍ່ອມດັບ ດ້ວຍປະກາຣລະນີ້.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ເນື້ອຄວາມນັ້ນແລ້ວ ຈຶ່ງທຣົງເປັ່ງອຸທານນີ້ໃນເວລານັ້ນ ວ່າດັ່ງນີ້:-

ພຸທສອຸທານຄາຖາທີ່ ໓

ເມື່ອໃດແລ ສັມມ໌ທັ້ງຫຼາຍ ປາກົຕແກ່ພຣາຫ໌ມຕ໌
ຜູ້ມີພຽຣເພັ່ງຢູ່ ເມື່ອນັ້ນ ພຣາຫ໌ມຕ໌ນັ້ນ ຍ່ອມ
ກຳຈັດມາຣແລະເສນາເສັຽໄດ້ ຄືພຣະອາທິຕຍ໌ອຸທັຍ
ທຳອາກາສໃຫ້ສວ່າງ ດັ່ງນັ້ນ.

ໂພຮິກາຖາ ຈົບ

ອຊປາລນິໂຄ຺ຣກຖາ

ເຣື່ອງພຣາຫ໌ມຕ໌ຫຸຫຸກຊາຕິ

[໔] ຄັ້ນລ່ວງ ໆ ມື້ ພຣະຜູ້ມີພຣະກາຄທຣົງອອກຈາກສມາຘິນັ້ນ ສເດັຈຈາກຄວງໄມ້ໂພຘິພຶກສ໌ ເຂົ້າໄປຍັງຕົ້ນໄມ້ອຊປາລນິໂຄ຺ຣ ແລ້ວປະທັບນັ່ງດ້ວຍບັລລັງກ໌ດຽວ ສເວີຍວິມຸຕຕິສຸຂ ໓ ຄວງໄມ້ອຊປາລນິໂຄ຺ຣຕລອດ ໆ ວັນ.

ຄັ້ງນັ້ນ ພຣາຫ໌ມຕ໌ຫຸຫຸກຊາຕິຄົນນຶ່ງ ໄດ້ໄປໃນພຸທສສຳນັກ ຄັ້ນເຖິງແລ້ວໄດ້ທູລປ຺າສຣັຍກັບພຣະຜູ້ມີພຣະກາຄ ຄັ້ນຜ່ານກາຣທູລປ຺າສຣັຍພໍໃຫ້ເປັນທີ່ບັນເທີງ ເປັນທີ່ຣະລຶກເຖິງກັນໄປແລ້ວ ໄດ້ຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ. ພຣາຫ໌ມຕ໌ນັ້ນໄດ້ຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ທູລຄຳນີ້ແດ່ຜູ້ມີພຣະກາຄວ່າ ທ່ານພຣະໂຄດົມ ບຸຄຄົລຊື່ວ່າເປັນພຣາຫ໌ມຕ໌ດ້ວຍເຫຕຸພຽງເທົ່າໃດນໍ ກໍແລຘັມມ໌ເຫຼົ່າໃດທຳບຸຄຄົລໃຫ້ເປັນພຣາຫ໌ມຕ໌?

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ເນື້ອຄວາມນັ້ນແລ້ວ ຈຶ່ງທຣົງເປັ່ງອຸທານນີ້ໃນເວລານັ້ນວ່າດັ່ງນີ້:-

ພຸທສອຸທານຄາຖາ

ພຣາຫ໌ມຕ໌ໃດມີບາປຘັມມ໌ອັນລອຍເສັຽແລ້ວ ບໍ່
ຮ້ອງໃສ່ຜູ້ອື່ນວ່າ ຫຶ ຫຶ ບໍ່ມີກິເລສຄືນ້ຳຝາດ ມີຕົນ
ສຳຣວມແລ້ວ ເຖິງທີ່ສຸດແຫ່ງເວທ ມີພຣົຫ໌ມຈັຣຍ໌
ຢູ່ຈົບແລ້ວ ພຣາຫ໌ມຕ໌ນັ້ນບໍ່ມີກິເລສເຄື່ອງຟູຂຶ້ນ
ໃນອາຣົມນ໌ໃດໆ ໃນໂລກ ຄວຣກ່າວຄຳວ່າ
ຕົນເປັນພຣາຫ໌ມຕ໌ໂດຍຘັມມ໌.

ອຊປາລນິໂຄ຺ຣກຖາ ຈົບ

ມຸຈຈລິນທກາຖາ
ເຣື່ອງມຸຈຈລິນທນາຄຣາຊ

[໕] ຄັ້ນລ່ວງ ໆ ມື້ ພຣະຜູ້ມີພຣະກາຄທຮົງອອກຈາກສມາທິນັ້ນ ສເດັຈຈາກຄວງໄມ້ອຊປາລນິໂຄຼຣ ເຂົ້າໄປຍັງຕົ້ນໄມ້ມຸຈຈລິນທ໌ ແລ້ວປະທັບນັ່ງດ້ວຍບັລລັງກ໌ດຽວ ສເວີຍວິມຸຕຕິສຸຂ ໗ ຄວງໄມ້ມຸຈຈລິນທ໌ ຕລອດ ໆ ວັນ.

ຄັ້ງນັ້ນ ເມຄໃຫຍ່ໃນສມັຍບໍ່ແມ່ນຣະດູການຕັ້ງຂຶ້ນແລ້ວ ຝົນຕົກຮຳເຈືອດ້ວຍລົມໜາວ ຕລອດ ໆ ວັນ. ຄັ້ງນັ້ນ ມຸຈຈລິນທນາຄຣາຊອອກຈາກທີ່ຢູ່ຂອງຕົນ ໄດ້ແວດວົງພຣະກາຍພຣະຜູ້ມີພຣະກາຄດ້ວຍ ຂົດ ໆ ຮອບ ໄດ້ແຜ່ພັງພານໃຫຍ່ເຫນືອພຣະສຽຣສຖິຕຢູ່ດ້ວຍຫວັງໃຈວ່າ ຄວາມໜາວ ຄວາມຮ້ອນ ຢ່າບຽດບຽນພຣະຜູ້ມີພຣະກາຄ ສັມຜັສແຫ່ງເຫລືອບ ຍຸງ ລົມ ແດດ ແລະສັຕວ໌ເລື້ອຍຄານ ຢ່າ ບຽດບຽນພຣະຜູ້ມີພຣະກາຄ. ຄັ້ນລ່ວງ ໆ ມື້ ມຸຈຈລິນທນາຄຣາຊຮູ້ວ່າ ອາກາສປອດໂປ່ງປາສຈາກ ຝົນແລ້ວ ຈຶ່ງມາຍຂົດຈາກພຣະກາຍຂອງພຣະຜູ້ມີພຣະກາຄ ຈຳແລງຮູປຂອງຕົນເປັນເພສມານົພ ໄດ້ຢືນ ປະຄອງອັນຊລີຖວາຍນມັສການພຣະຜູ້ມີພຣະກາຄ ທາງເບື້ອງພຣະພັກຕຣ໌ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຮົງຮູ້ເນື້ອຄວາມນັ້ນແລ້ວ ຈຶ່ງທຮົງເປັ່ງອຸທານນີ້ໃນເວລານັ້ນ ວ່າດັ່ງນີ້:-

ພຸທສອຸທານຄາຖາ

ຄວາມສງັດເປັນສຸຂຂອງບຸຄຄົລຜູ້ສັນໂດຊ ມີທັມມ໌
ປາກົຕແລ້ວ ເຫັນຢູ່ ຄວາມບໍ່ພຍາບາທ ຄືຄວາມ
ສຳຣວມໃນສັຕວ໌ທັ້ງຫຼາຍ ເປັນສຸຂໃນໂລກ ຄວາມ
ປາສຈາກກຳຫນັດ ຄືຄວາມລ່ວງກາມທັ້ງຫຼາຍ
ເສັຽໄດ້ ເປັນສຸຂໃນໂລກ ການກຳຈັດອັສມິມານະ
ເສັຽໄດ້ນັ້ນແລ ເປັນສຸຂຢ່າງຍິ່ງ.

ມຸຈຈລິນທກາຖາ ຈົບ

ຣາຊາຍຕນກຖາ

ເຣື່ອງຕປຸສສະກັລລິກະ ໒ ພໍ່ຄ້າ

[໖] ຄັ້ນລ່ວງ ໆ ມື້ ພຣະຜູ້ມີພຣະພາຄທຮົງອອກຈາກສມາທິນັ້ນ ແລ້ວສເດັຈຈາກຄວງໄມ້ມຸຈຈລິນທ໌ ເຂົ້າໄປຍັງຕົ້ນໄມ້ຣາຊາຍຕນະ ແລ້ວປະທັບນັ່ງດ້ວຍບັລລັງກ໌ດຽວ ສເວີຍວິມຸຕຕິສຸຂ ໗ ຄວງໄມ້ຣາຊາຍຕນະ ຕລອດ ໆ ວັນ.

ກໍສມັຍນັ້ນ ພໍ່ຄ້າຊື່ຕປຸສສະ ໑ ກັລລິກະ ໑ ເດີນທາງໄກລຈາກອຸກກລຊົນບົທ ເຖິງຕາແສງນັ້ນ. ຄັ້ງນັ້ນ ເປັນເທພຍດາຜູ້ເປັນຍາຕິສາໂລຫິຕຂອງຕປຸສສະ ກັລລິກະ ໒ ພໍ່ຄ້າ ໄດ້ກ່າວຄຳນີ້ກັບ ໒ ພໍ່ຄ້ານັ້ນ ວ່າ ດູຣາທ່ານຜູ້ນິຣທຸກຂ໌ ພຣະຜູ້ມີພຣະພາຄພຣະອົງຄ໌ນີ້ຫາກໍຕຣັສຣູ້ ປະທັບຢູ່ ໗ ຄວງໄມ້ຣາຊາຍຕນະ ທ່ານທັ້ງສອງຈົ່ງໄປບູຊາພຣະຜູ້ມີພຣະພາຄນັ້ນ ດ້ວຍສັຕຕຸຜົງ ແລະ ສັຕຕຸກ້ອນ ການບູຊາຂອງທ່ານທັ້ງສອງນັ້ນຈະເປັນໄປເພື່ອປະໂຍຊນ໌ແລະຄວາມສຸຂແກ່ທ່ານທັ້ງຫຼາຍຕລອດກາລນານ.

ຄັ້ງນັ້ນ ພໍ່ຄ້າຊື່ຕປຸສສະ ແລະກັລລິກັບຖືສັຕຕຸຜົງແລະສັຕຕຸກ້ອນເຂົ້າໄປເຝົ້າພຣະຜູ້ມີພຣະພາຄແລ້ວຖວາຍບັງຄົມ ໄດ້ຢືນຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງ. ສອງພໍ່ຄ້ານັ້ນຢືນຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ຄັ້ນແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະພາຄຈົ່ງທຮົງຮັບສັຕຕຸຜົງສັຕຕຸກ້ອນຂອງຂ້າພຣະພຸທສເຈົ້າທັ້ງສອງ ຊຶ່ງຈະເປັນໄປເພື່ອປະໂຍຊນ໌ເພື່ອຄວາມສຸຂແກ່ຂ້າພຣະພຸທສເຈົ້າທັ້ງຫຼາຍຕລອດກາລນານ. ຂຓະນັ້ນ ພຣະຜູ້ມີພຣະພາຄໄດ້ທຮົງປຣິວິຕົກວ່າ ພຣະຕຖາຄົຕທັ້ງຫຼາຍ ບໍ່ຮັບວັຕຖຸດ້ວຍມື ເຮົາຈະຄວຣຮັບສັຕຕຸຜົງ ແລະສັຕຕຸກ້ອນດ້ວຍຫຍັງນໍ

ລຳດັບນັ້ນ ທ້າວມຫາຣາຊທັ້ງ ໔ ອົງຄ໌ທຮົງຮູ້ພຣະປຣິວິຕົກແຫ່ງຈິຕຂອງພຣະຜູ້ມີພຣະພາຄ ດ້ວຍໃຈຂອງຕົນແລ້ວ ສເດັຈມາຈາກ ໔ ທິສ ທຮົງນຳບາຕຣ໌ທີ່ສຳເຣັຈດ້ວຍສິລາ ໔ ໃບເຂົ້າໄປຖວາຍພຣະຜູ້ມີພຣະພາຄຂາບທູລວ່າ ຂໍພຣະຜູ້ມີພຣະພາຄຈົ່ງທຮົງຮັບສັຕຕຸຜົງແລະສັຕຕຸກ້ອນດ້ວຍບາຕຣ໌ນີ້ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະພາຄທຮົງໃຊ້ບາຕຣ໌ສຳເຣັຈດ້ວຍສິລາອັນໃຫມ່ອ່ຽມ ຮັບສັຕຕຸຜົງແລະສັຕຕຸກ້ອນແລ້ວສເວີຍ.

ຄັ້ງນັ້ນ ພໍ່ຄ້າຕປຸສສະແລະກັລລິກັບໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂ້າພຣະພຸທສເຈົ້າທັ້ງສອງນີ້ ຂໍເຖິງພຣະຜູ້ມີພຣະພາຄແລະພຣະທັມມ໌ວ່າ ເປັນສຣຓະ ຂໍພຣະຜູ້ມີພຣະພາຄຈົ່ງທຮົງຈຳຂ້າພຣະພຸທສເຈົ້າທັ້ງສອງວ່າເປັນອຸບາສົກຜູ້ມອບຊີວິຕເຖິງສຣຓະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ກໍນາຍພາຓິຊສອງຄົນນັ້ນ ໄດ້ເປັນອຸບາສົກກ່າວອ້າງ ໒ ຣັຕນະ ເປັນຊຸດທຳອິດໃນໂລກ.

ຣາຊາຍຕນກຖາ ຈົບ

---

[໗] ຄັ້ນລ່ວງ ໆ ມື້ ພຣະຜູ້ມີພຣະພາຄທຣົງອອກຈາກສມາທິນັ້ນແລ້ວ ສເດັຈຈາກຄວງໄມ້ຣາຊາຍຕນະ ເຂົ້າໄປຍັງຕົ້ນໄມ້ອຊປາລນິໂຄຣສ. ຮູ້ວ່າ ພຣະອົງຄ໌ປະທັບຢູ່ ໓ ຄວງໄມ້ອຊປາລນິໂຄຣສນັ້ນ ແລະພຣະອົງຄ໌ສເດັຈໄປໃນທີ່ສງັດ ຫລີກເຮັ້ນຢູ່ ໄດ້ມີພຣະປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ທັມມ໌ທີ່ເຮົາໄດ້ບັຣລຸແລ້ວນີ້ ເປັນຄຸຕອັນເລິກ ເຫັນໄດ້ຍາກ ຮູ້ຕາມໄດ້ຍາກ ເປັນທັມມ໌ສງົບ ປະຕີຕ ບໍ່ຫຍັ່ງລົງສູ່ຄວາມຕຶກ ລະອຽດ ເປັນວິສັຍທີ່ບັຕທິຕຈະຄວຣຮູ້ແຈ້ງ ສ່ວນຫມູ່ສັຕວ໌ນີ້ເຣິງຣົມຍ໌ດ້ວຍອາລັຍ ຍິນດີໃນອາລັຍ ຊື່ນຊົມໃນອາລັຍ ການະຄືຄວາມທີ່ອວິຊຊາເປັນປັຈຈັຍແຫ່ງສັງຂາຣເປັນຕົ້ນນີ້ ເປັນສກາພອາສັຍປັຈຈັຍເກີດຂຶ້ນນີ້ ອັນຫມູ່ສັຕວ໌ຜູ້ເຣິງຣົມຍ໌ດ້ວຍອາລັຍ ຍິນດີໃນອາລັຍ ຊື່ນຊົມໃນອາລັຍເຫັນໄດ້ຍາກ ແມ້ການະຄືທັມມ໌ເປັນທີ່ຣະງັບສັງຂາຣທັ້ງປວງ ເປັນທີ່ສລະຄືນອຸປທິທັ້ງປວງ ເປັນທີ່ສິ້ນຕັຕຫາ ເປັນທີ່ສິ້ນກຳຫນັດ ເປັນທີ່ດັບສນິທ ຫາກິເລສເຄື່ອງຮ້ອຍຮັດບໍ່ໄດ້ນີ້ ກໍແສນຍາກທີ່ຈະເຫັນໄດ້ ກໍຖ້າເຮົາຈະຄວຣສແດງທັມມ໌ ສັຕວ໌ເຫຼົ່າອື່ນກໍຈະບໍ່ຮູ້ທົ່ວເຖິງທັມມ໌ຂອງເຮົາ ຂໍ້ນັ້ນ ອາຈຈະເປັນຄວາມອິດເໝື່ອຍຫຼ້າແກ່ເຮົາ ອາຈຈະເປັນຄວາມລຳບາກຫຼ້າແກ່ເຮົາ.

ອີກຢ່າງນຶ່ງ ອນັຈຈຣິຍຄາຖາເຫຼົ່ານີ້ ທີ່ບໍ່ເຄີຍໄດ້ສດັບໃນກາລກ່ອນ ປຼາກົຕແກ່ພຣະຜູ້ມີພຣະພາຄວ່າດັ່ງນີ້:-

ອນັຈຈຣິຍຄາຖາ

ບັດນີ້ ເຮົາຍັງບໍ່ຄວຣຈະປະກາສທັມມ໌ທີ່ເຮົາໄດ້ບັຣລຸແລ້ວ
ໂດຍຍາກ ເພາະທັມມ໌ນີ້ອັນສັຕວ໌ຜູ້ອັນຣາຄະແລະໂທສະ
ຄອບງຳແລ້ວບໍ່ຕຣັສຮູ້ໄດ້ງ່າຍ ສັຕວ໌ຜູ້ອັນຣາຄະຍ້ອມແລ້ວ
ຖືກກອງອວິຊຊາຫຸ້ມຫໍ່ແລ້ວ ຈະບໍ່ເຫັນທັມມ໌ອັນລະອຽດ
ເລິກເຊິ່ງ ຍາກທີ່ຈະເຫັນ ລະອຽດຍິ່ງ ອັນຈະຍັງສັຕວ໌
ໃຫ້ເຖິງທັມມ໌ທີ່ທວນກະແສຄືນິພພານ.

ເມື່ອພຣະຜູ້ມີພຣະພາຄທຣົງພິຈາຣຕາເຫັນຢູ່ ດັ່ງນີ້ ພຣະທັຍກໍນ້ອມໄປເພື່ອຄວາມຂວນຂວາຍນ້ອຍ ບໍ່ນ້ອມໄປເພື່ອທຣົງສແດງທັມມ໌.

ພຣົຫ໌ມຢາຈນກຄາ

[໘] ຄັ້ງນັ້ນ ທ້າວສຫັມບໍດີພຣົຫ໌ມຮູ້ພຣະປຣິວິຕົກແຫ່ງຈິຕຂອງພຣະຜູ້ມີພຣະພາຄດ້ວຍໃຈຂອງຕົນແລ້ວເກີດຄວາມປຣິວິຕົກວ່າ ຊາວເຮົາຜູ້ຈເຣີຍ ໂລກຈະຈິບຫາຍນໍ ໂລກຈັກວິນາສນໍ ເພາະ

ພຣະຕຖາຄົຕອຣຫັນຕສັມມາສັມພຸທສເຈົ້າ ທຣົງນ້ອມພຣະທັຍໄປເພື່ອຄວາມຂວນຂວາຍນ້ອຍ ບໍ່ທຣົງນ້ອມພຣະທັຍໄປເພື່ອທຣົງສແດງສັມມ໌.

ລຳດັບນັ້ນ ທ້າວສຫັມບໍດີພຣົຫ໌ມໄດ້ຫາຍໄປໃນພຣົຫ໌ມໂລກ ມາປຣາກົຕ ໓ ເບື້ອງພຣະພັກຕຣ໌ຂອງພຣະຜູ້ມີພຣະກາຄ ຄືບຸຣຸษມີກຳລັງຢຽດແຂນທີ່ຄູ້ຫຼືຄູ້ແຂນທີ່ຢຽດດັ່ງນັ້ນ ຄັ້ນແລ້ວຫົ່ມຜ້າອຸຕຣາສົງຄ໌ພາດບ່າ ຄຸກຊາຕຸມົຓທົລເບື້ອງຂວາລົງເທິງແຜ່ນດິນ ປະຓົມອັຍຊລີໄປທາງພຣະຜູ້ມີພຣະກາຄ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະກາຄໄດ້ໂປຼດທຣົງສແດງສັມມ໌ ຂໍພຣະສຸຄົຕໄດ້ໂປຼດທຣົງສແດງສັມມ໌ ເພາະສັຕວ໌ທັ້ງຫຼາຍຈຳພວກທີ່ມີຣຸລີໃນຈັກษຸນ້ອຍມີຢູ່ ເພາະບໍ່ໄດ້ຟັງສັມມ໌ຍ່ອມເສື່ອມ ຜູ້ຮູ້ທົ່ວເຖິງສັມມ໌ຈັກມີ.

ທ້າວສຫັມບໍດີພຣົຫ໌ມໄດ້ຂາບທູລດັ່ງນີ້ແລ້ວ ຈຶ່ງຂາບທູລເປັນປະພັນສຄາຖາຕໍ່ໄປວ່າ

ເມື່ອກ່ອນສັມມ໌ບໍ່ບໍຣິສຸທສິ່ງອັນຄົນມີມົລທິນທັ້ງຫຼາຍ
ຄິດແລ້ວໄດ້ປຣາກົຕໃນມຄົສຊົນບົທ ຂໍພຣະອົງຄ໌ໄດ້
ໂປຼດທຣົງເປີດປະຕູແຫ່ງອມຕສັມມ໌ນີ້ ຂໍສັຕວ໌ທັ້ງ
ຫຼາຍຈົ່ງຟັງສັມມ໌ທີ່ພຣະສັມມາສັມພຸທສເຈົ້າ ຜູ້ຫມົດ
ມົລທິນຕຣັສຮູ້ແລ້ວຕາມລຳດັບ ປຽບເຫມືອນບຸຣຸษ
ມີຈັກษຸຢືນຢູ່ເທິງຍອດພູເຂົາ ຊຶ່ງລ້ວນແລ້ວດ້ວຍສີລາ
ຄວຣເຫັນຊຸມຊົນໄດ້ໂດຍຮອບລັນໃດ ຂ້າແດ່ພຣະອົງຄ໌ຜູ້ມີ
ປັຍຍາດີ ມີພຣະປັຍຍາຈັກษຸຮອບຄອບ ຂໍພຣະອົງຄ໌
ຜູ້ປຣາສຈາກຄວາມໂສກຈົ່ງສເດັຈຂຶ້ນສູ່ປຣາສາທ ອັນ
ສຳເຣັຈດ້ວຍສັມມ໌ ແລ້ວທຣົງພິຈາຣຕາຊຸມຊົນ ຜູ້
ຖ້ວມທົ້ນດ້ວຍຄວາມໂສກ ຜູ້ອັນຊາຕິແລະຊຣາ
ຄອບງຳແລ້ວ ມີອຸປມັຍລັນນັ້ນເຖີດ ຂ້າແດ່
ພຣະອົງຄ໌ຜູ້ມີຄວາມພຽຣ ທຣົງຊນະສົງຄາມ ຜູ້ນຳຫມູ່
ທາງນີ້ບໍ່ໄດ້ ຂໍພຣະອົງຄ໌ຈົ່ງທຣົງອຸຕສາຫະທ່ຽວໄປ
ໃນໂລກເຖີດ ຂໍພຣະຜູ້ມີພຣະກາຄໂປຼດສແດງສັມມ໌
ເພາະສັຕວ໌ຮູ້ທົ່ວເຖິງສັມມ໌ຈັກມີ.

ທຣົງພິຈາຣຕາສັຕວ໌ໂລກປຽບດ້ວຍດອກບົວ ໔ ເຫຼົ່າ

[໙] ລຳດັບນັ້ນ ພຣະຜູ້ມີພຣະກາຄ ທຣົງຊາບຄຳທູລອາຣາຮນາຂອງພຣົຫ໌ມ ແລະທຣົງອາສັຍຄວາມກຣຸຕາໃນຫມູ່ສັຕວ໌ ຈຶ່ງທຣົງກວດເບິ່ງສັຕວ໌ໂລກດ້ວຍພຸທຮຈັກຂຸ ເມື່ອກວດເບິ່ງສັຕວ໌ໂລກດ້ວຍພຸທຮຈັກຂຸ ໄດ້ທຣົງເຫັນສັຕວ໌ທັ້ງຫຼາຍທີ່ມີຮຸລີຕິກິເລສໃນຈັກຂຸນ້ອຍກໍມີ ທີ່ມີຮຸລີຕິກິເລສໃນຈັກຂຸຫຼາຍກໍມີ ທີ່ມີອິນທຣີຍ໌ແກ່ກ້າກໍມີ ທີ່ມີອິນທຣີຍ໌ອ່ອນກໍມີ ທີ່ມີອາກາຣດີກໍມີ ທີ່ມີອາກາຣຊາມກໍມີ ທີ່ຈະສອນໃຫ້ຮູ້ໄດ້ງ່າຍກໍມີ ທີ່ຈະສອນໃຫ້ຮູ້ໄດ້ຍາກກໍມີ ທີ່ມີປົກຕິເຫັນປໍຣໂລກແລະໂທຮໂດຍຄວາມເປັນກັຍຢູ່ກໍມີ.

ມີອຸປມາເຫມືອນດອກອຸບົລໃນກໍອຸບົລ ດອກປທຸມໃນກໍປທຸມ ຫຼືດອກບຸຕຫຣິກໃນກໍບຸຕຫຣິກ ທີ່ເກີດແລ້ວໃນນ້ຳ ຈເຣີລແລ້ວໃນນ້ຳ ງອກງາມແລ້ວໃນນ້ຳ ບາງເຫຼົ່າຍັງຈົມໃນນ້ຳ ອັນນ້ຳລ້ຽງໄວ້ ບາງເຫຼົ່າຕັ້ງຢູ່ສເມີນ້ຳ ບາງເຫຼົ່າຕັ້ງຢູ່ພົ້ນນ້ຳ ອັນນ້ຳບໍ່ຕິດແລ້ວ.

ພຣະຜູ້ມີພຣະກາຄທຣົງກວດເບິ່ງສັຕວ໌ໂລກດ້ວຍພຸທຮຈັກຂຸ ໄດ້ທຣົງເຫັນສັຕວ໌ທັ້ງຫຼາຍ ບາງພວກມີຮຸລີຕິກິເລສໃນຈັກຂຸນ້ອຍ ບາງພວກມີຮຸລີຕິກິເລສໃນຈັກຂຸຫຼາຍ ບາງພວກມີອິນທຣີຍ໌ແກ່ກ້າ ບາງພວກມີອິນທຣີຍ໌ອ່ອນ ບາງພວກມີອາກາຣດີ ບາງພວກມີອາກາຣຊາມ ບາງພວກສອນໃຫ້ຮູ້ໄດ້ງ່າຍ ບາງພວກສອນໃຫ້ຮູ້ໄດ້ຍາກ ບາງພວກມີປົກຕິເຫັນປໍຣໂລກແລະໂທຮໂດຍຄວາມເປັນກັຍຢູ່ ຈັນນັ້ນເຫມືອນກັນ ຄັ້ນແລ້ວໄດ້ຕຣັສຄາຖາຕອບທ້າວສຫັມບໍດີພຣົຫ໌ມວ່າ ດັ່ງນີ້:-

ເຮົາເປີດປະຕູອມຕະແກ່ທ່ານແລ້ວ ສັຕວ໌ເຫຼົ່າໃດຈະຟັງ
ຈົ່ງປ່ອຍສຣັທຮາມາເຖີດ ດູຣາພຣົຫ໌ມ ເພາະເຮົາ
ມີຄວາມສຳຄັນໃນຄວາມລຳບາກ ຈຶ່ງບໍ່ສແດງສັມມ໌
ທີ່ເຮົາຄລ່ອງແຄລ່ວ ປະຕີຕ ໃນຫມູ່ມນຸຂຍ໌.

ຄັ້ນທ້າວສຫັມບໍດີພຣົຫ໌ມຮູ້ວ່າ ພຣະຜູ້ມີພຣະກາຄທຣົງປະທານໂອກາສເພື່ອຈະສແດງສັມມ໌ແລ້ວ ຈຶ່ງຖວາຍບັງຄົມພຣະຜູ້ມີພຣະກາຄທຳປະທັກຂິຕແລ້ວ ອັນຕຣທານໄປໃນທີ່ນັ້ນແລ.

ພຣົຫ໌ມຢາຈນກາຖາ ຈົບ

ພຸທສປຣິວິຕົກກາຖາ

[໑໐] ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງດຳຣິວ່າ ເຮົາຈະຄວຣສແດງສັມມ໌ແກ່ໃຜກ່ອນນໍ ໃຜຈັກຮູ້ທົ່ວເຖິງສັມມ໌ນີ້ໄດ້ທັນທີ ຄັ້ນແລ້ວທຣົງພຣະດຳຣິຕໍ່ໄປວ່າ ອາຄາຣດາບົສ ກາລາມໂຄຕຮ໌ນີ້ແລ ເປັນຜູ້ລາດ ລຽບແຫລມ ມີປັນຍາ ມີທຸລີຄືກິເລສໃນຈັກນຸ້ອຍເປັນປົກກະຕິມານານ ຖ້າຈັ່ງໃດ ເຮົາຄວຣສແດງສັມມ໌ແກ່ອາຄາຣດາບົສ ກາລາມໂຄຕຮ໌ກ່ອນ ລາວຈັກຮູ້ທົ່ວເຖິງສັມມ໌ນີ້ໄດ້ທັນທີ. ບ່ອນນັ້ນ ເທພດາອັນຕຣທານມາຂາບທູລພຣະຜູ້ມີພຣະກາຄວ່າ ອາຄາຣດາບົສ ກາລາມໂຄຕຮ໌ ສິ້ນຊີພໄດ້ ໆ ວັນແລ້ວ ພຣະພຸທສເຈົ້າຂ້ານ້ອຍ. ແມ້ພຣະຜູ້ມີພຣະກາຄກໍທຣົງຮູ້ວ່າ ອາຄາຣດາບົສ ກາລາມໂຄຕຮ໌ສິ້ນຊີພໄດ້ ໆ ວັນແລ້ວ ຈຶ່ງທຣົງພຣະດຳຣິວ່າ ອາຄາຣດາບົສກາລາມໂຄຕຮ໌ ເປັນຜູ້ມີຄວາມເສື່ອມໃຫຍ່ ເພາະຖ້າລາວໄດ້ຟັງສັມມ໌ນີ້ ຈະຄວຣຮູ້ທົ່ວເຖິງໄດ້ທັນທີ.

ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ເຮົາຈະຄວຣສແດງສັມມ໌ ແກ່ໃຜກ່ອນນໍ ໃຜຈັກຮູ້ທົ່ວເຖິງສັມມ໌ນີ້ໄດ້ທັນທີ ຄັ້ນແລ້ວທຣົງພຣະດຳຣິຕໍ່ໄປວ່າ ອຸທກດາບົສ ຣາມບຸຕຮ໌ນີ້ແລເປັນຜູ້ລາດ ລຽບແຫລມ ມີປັນຍາ ມີທຸລີຄືກິເລສໃນຈັກນຸ້ອຍເປັນປົກກະຕິມານານ ຖ້າຈັ່ງໃດ ເຮົາຄວຣສແດງສັມມ໌ແກ່ອຸທກດາບົສ ຣາມບຸຕຮ໌ກ່ອນ ລາວຈັກຮູ້ທົ່ວເຖິງສັມມ໌ນີ້ໄດ້ທັນທີ. ບ່ອນນັ້ນ ເທພດາອັນຕຣທານມາຂາບທູລພຣະຜູ້ມີພຣະກາຄວ່າ ອຸທກດາບົສ ຣາມບຸຕຮ໌ສິ້ນຊີພເສັຽວານນີ້ແລ້ວ ພຣະພຸທສເຈົ້າຂ້ານ້ອຍ. ແມ້ພຣະຜູ້ມີພຣະກາຄກໍທຣົງຮູ້ວ່າ ອຸທກດາບົສ ຣາມບຸຕຮ໌ສິ້ນຊີພເສັຽວານນີ້ແລ້ວ ຈຶ່ງທຣົງພຣະດຳຣິວ່າ ອຸທກດາບົສ ຣາມບຸຕຮ໌ນີ້ ເປັນຜູ້ມີຄວາມເສື່ອມໃຫຍ່ ເພາະຖ້າລາວໄດ້ຟັງສັມມ໌ນີ້ ຈະຄວຣຮູ້ທົ່ວເຖິງໄດ້ທັນທີ.

ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ເຮົາຈະຄວຣສແດງສັມມ໌ແກ່ໃຜກ່ອນນໍ ໃຜຈັກຮູ້ທົ່ວເຖິງສັມມ໌ນີ້ໄດ້ທັນທີ ຄັ້ນແລ້ວທຣົງພຣະດຳຣິຕໍ່ໄປວ່າ ກິກນຸປັນຈວັຄຄີຍ໌ມີອຸປກາຣະແກ່ເຮົາຫຼາຍ ໄດ້ບຳຣຸງເຮົາຜູ້ຕັ້ງຫນ້າບຳເພັນພຽຣຢູ່ ຖ້າຈັ່ງໃດ ເຮົາຄວຣສແດງສັມມ໌ແກ່ກິກນຸປັນຈວັຄຄີຍ໌ກ່ອນ ຄັ້ນແລ້ວໄດ້ທຣົງພຣະດຳຣິຕໍ່ໄປວ່າ ບັດນີ້ ກິກນຸປັນຈວັຄຄີຍ໌ຢູ່ທີ່ໃດນໍ. ພຣະຜູ້ມີພຣະກາຄໄດ້ທຣົງເຫັນກິກນຸປັນຈວັຄຄີຍ໌ຢູ່ ໓ ປ່າອິສິປຕນະມຣິຄທາຍວັນ ເຂຕພຣະນຄຣພາຣາຓສີ ດ້ວຍທິພຍຈັກນຸອັນບໍຣິສຸທສິ່ລ່ວງຈັກນຸມນຸພຍ໌ ຄັ້ນພຣະອົງຄ໌ປະທັບຢູ່ ໓ ອຸຣຸເວລາປະເທສຕາມຄວຣແກ່ພຸທສາກິຣົມຍ໌ແລ້ວ ສເດັຈຈາຣິກໄປທາງພຣະນຄຣພາຣາຓສີ.

ເຣື່ອງອຸປກາຊີວົກ

[໑໑] ອາຊີວົກຊື່ອຸປກະໄດ້ພົບພຣະຜູ້ມີພຣະກາຄສເດັຈດຳເນີນທາງໄກລຣະຫວ່າງແມ່ນ້ຳຄຍາແລະໄມ້ໂພທິພຶກນ໌ ຄັ້ນແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ດູຣາອາວຸໂສ ອິນທຣີຍ໌ຂອງທ່ານຜ່ອງໃສ

ຍິ່ງນັກ ຜິວພັຣຄ໌ຂອງທ່ານບໍຣິສຸທຫຼື່ຜຸດຜ່ອງ ດູຣາອາວຸໂສ ທ່ານບວຊອຸທິສໃຜ? ໃຜເປັນສາສດາຂອງ ທ່ານ? ຫຼືທ່ານມັກສັມມ໌ຂອງໃຜ?. ເມື່ອອຸປກາຊີວົກຂາບທູລຢ່າງນີ້ແລ້ວ. ພຣະຜູ້ມີພຣະກາຄ ໄດ້ຕຣັສພຣະຄາຖາຕອບອຸປກາຊີວົກວ່າດັ່ງນີ້

ເຮົາເປັນຜູ້ຄອບງຳສັມມ໌ທັ້ງປວງ ຮູ້ສັມມ໌ທັ້ງປວງ
ອັນຕັຕຫາແລະທິຕຖີບໍ່ລາບທາແລ້ວ ໃນສັມມ໌ທັ້ງປວງ
ລະສັມມ໌ເປັນໄປໃນພູມີສາມໄດ້ຫມົດ ພົ້ນແລ້ວເພາະ
ຄວາມສິ້ນໄປແຫ່ງຕັຕຫາ ເຮົາຕຣັສຮູ້ຍິ່ງເອງແລ້ວ ອາຈຈະ
ອ້າງໃຜລະ ອາຈາຣຍ໌ຂອງເຮົາບໍ່ມີ ຄົນເຊັ່ນເຮົາ
ກໍບໍ່ມີ ບຸຄຄົລສເມີເຫມືອນເຮົາກໍບໍ່ມີ ໃນໂລກກັບ
ທັ້ງເທວໂລກ ເພາະເຮົາເປັນພຣະອຣຫັນຕ໌ໃນໂລກ
ເຮົາເປັນສາສດາ ຫາສາສດາອື່ນຍິ່ງກວ່າບໍ່ໄດ້ ເຮົາຜູ້ດຽວ
ເປັນພຣະສັມມາສັມພຸທສະ ເຮົາເປັນຜູ້ເຢັນໃຈ ດັບກິເລສ
ໄດ້ແລ້ວ ເຮົາຈະໄປເມືອງໃນແຄວັນກາສີ ເພື່ອ
ປະກາສສັມມ໌ຈັກຣ໌ໃຫ້ເປັນໄປ ເຮົາຈະຕີກອງປະກາສ
ອມຕສັມມໃນໂລກອັນມືດ ເພື່ອໃຫ້ສັຕວໄດ້ສັມມ໌ຈັກຸ.

ອຸປກາຊີວົກທູລວ່າ ດູຣາອາວຸໂສ ທ່ານປຕິຍາຕໂດຍປະການໃດ ທ່ານຄວຣເປັນຜູ້ຊນະຫາທີ່ສຸດ ບໍ່ໄດ້ ໂດຍປະການນັ້ນ.

ພຣະຜູ້ມີພຣະກາຄຕຣັສວ່າ ບຸຄຄົລເຫຼົ່າໃດເຖິງຄວາມສິ້ນອາສວະແລ້ວ ບຸຄຄົລເຫຼົ່ານັ້ນຊື່ວ່າ ເປັນຜູ້ຊນະເຊັ່ນເຮົາ ດູຣາອຸປກັບເຮົາຊນະສັມມ໌ອັນລາມົກແລ້ວ ເພາະດັ່ງນັ້ນເຮົາຈຶ່ງຊື່ວ່າເປັນຜູ້ຊນະ.

ເມື່ອພຣະຜູ້ມີພຣະກາຄຕຣັສຢ່າງນີ້ແລ້ວ ອຸປກາຊີວົກທູລວ່າ ເປັນໃຫ້ພໍເຖີດ ພໍ່ ດັ່ງນີ້ ແລ້ວ ສັ່ນຫົວ ຖືເອົາທາງຜິດຢ່າງໜີໄປ.

ເຣື່ອງອຸປກາຊີວົກ ຈົບ

ເຣື່ອງພຣະປັຌຈວັຄຄີຍ໌

[໑໔] ຄັ້ງນັ້ນ ພຣະຜູ້ມີພຣະພາຄສເດັຈຈາຣິກໂດຍລຳດັບ ເຖິງປ່າອິສິປຕນະມຣິຄທາຍວັນ ແຂວງເມືອງພາຣາຓສີ ສເດັຈເຂົ້າໄປທາງສຳນັກພຣະປັຌຈວັຄຄີຍ໌. ພຣະປັຌຈວັຄຄີຍ໌ໄດ້ເຫັນພຣະຜູ້ມີພຣະພາຄ ສເດັຈມາແຕ່ໄກລ ແລ້ວໄດ້ນັດໝາຍກັນແລະກັນວ່າ ທ່ານທັ້ງຫຼາຍ ພຣະສມຓະໂຄດົມນີ້ເປັນຜູ້ມັກຫຼາຍ ມາຍຄວາມພຽຣ ວຽນມາເພື່ອຄວາມເປັນຄົນມັກຫຼາຍ ກຳລັງສເດັຈມາ ພວກເຮົາບໍ່ຄວຣອະພິວາທ ບໍ່ຄວຣ ລຸກຂຶ້ນຕ້ອນຮັບພຣະອົງຄ໌ ບໍ່ຄວຣຮັບບາຕຣ໌ຈີວຣຂອງພຣະອົງຄ໌ ແຕ່ຄວຣວາງອາສນະໄວ້ ຖ້າພຣະອົງຄ໌ປັຕຖນາ ກໍຈັກປະທັບນັ່ງ. ຄັ້ນພຣະຜູ້ມີພຣະພາຄສເດັຈເຂົ້າໄປເຖິງພຣະປັຌຈວັຄຄີຍ໌ ພຣະປັຌຈວັຄຄີຍ໌ນັ້ນບໍ່ຕັ້ງຢູ່ ໃນກະຕິກາຂອງຕົນ ຕ່າງລຸກຂຶ້ນຕ້ອນຮັບພຣະຜູ້ມີພຣະພາຄ ອົງຄ໌ນຶ່ງຮັບບາຕຣ໌ຈີວຣຂອງພຣະຜູ້ມີພຣະພາຄ ອົງຄ໌ນຶ່ງປູອາສນະ ອົງຄ໌ນຶ່ງຈັດຫານ້ຳລ້າງພຣະບາທ ອົງຄ໌ນຶ່ງຈັດຕັ້ງຕັ່ງຮອງພຣະບາທ ອົງຄ໌ນຶ່ງ ນຳກະເບື້ອງເຊັດພຣະບາທເຂົ້າໄປຖວາຍ ພຣະຜູ້ມີພຣະພາຄປະທັບນັ່ງເທິງອາສນະ ທີ່ພຣະປັຌຈວັຄຄີຍ໌ ຈັດຖວາຍ ແລ້ວທຣົງລ້າງພຣະບາທ. ຝ່າຍພຣະປັຌຈວັຄຄີຍ໌ເອີ້ນພຣະຜູ້ມີພຣະພາຄໂດຍຣະບຸພຣະນາມ ແລະ ໃຊ້ຄຳວ່າ "ອາວຸໂສ" ເມື່ອພຣະປັຌຈວັຄຄີຍ໌ກ່າວຢ່າງນັ້ນແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສຫ້າມພຣະ ປັຌຈວັຄຄີຍ໌ວ່າ ດູຣາພິກຂຸທັ້ງຫຼາຍ ພວກທ່ານຢ່າເອີ້ນຕຖາຄົຕໂດຍຣະບຸຊື່ ແລະຢ່າໃຊ້ຄຳວ່າ "ອາວຸໂສ" ດູຣາພິກຂຸທັ້ງຫຼາຍ ຕຖາຄົຕເປັນອຣຫັນຕ໌ ຕຣັສຮູ້ເອງໂດຍຊອບ ພວກທ່ານຈົ່ງເງີ່ຍໂສຕສດັບ ເຮົາໄດ້ບັຣລຸ ອມຕສັມມ໌ແລ້ວ ເຮົາຈະສັ່ງສອນ ຈະສແດງສັມມ໌ ພວກທ່ານປຕິບັຕິຢູ່ຕາມທີ່ເຮົາສັ່ງສອນແລ້ວ ບໍ່ຊ້າ ປານໃດ ຈະທຳໃຫ້ແຈ້ງຊຶ່ງຄຸຕອັນຍອດຢ່ຽມ ອັນເປັນທີ່ສຸດແຫ່ງພຣົຫ໌ມຈັຣຍ໌ ທີ່ກຸລບຸຕຣ໌ທັ້ງຫຼາຍ ອອກຈາກເຮືອນບວຊເປັນບັຣພຊິຕໂດຍຊອບຕ້ອງການນັ້ນ ດ້ວຍປັຌຍາອັນຍິ່ງດ້ວຍຕົນເອງໃນປັຈຈຸບັນ ເຂົ້າເຖິງຢູ່.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ. ພຣະປັຌຈວັຄຄີຍ໌ໄດ້ທູລຄ້ານພຣະຜູ້ມີພຣະພາຄວ່າ ອາວຸໂສໂຄດົມ ແມ້ດ້ວຍຈຣິຍານັ້ນ ແມ້ດ້ວຍປຕິປທານັ້ນ ແມ້ດ້ວຍທຸກກຣກິຣິຍານັ້ນ ພຣະອົງຄ໌ກໍຍັງບໍ່ໄດ້ ບັຣລຸອຸຕຕຣິມນຸສສັມມ໌ ອັນເປັນຄວາມຮູ້ຄວາມເຫັນພິເສສຢ່າງປະເສີຖ ຢ່າງສາມາຖ ກໍບັດນີ້ ພຣະອົງຄ໌ເປັນຜູ້ມັກຫຼາຍ ມາຍຄວາມພຽຣວຽນມາເພື່ອຄວາມເປັນຄົນມັກຫຼາຍ ແນວໃດຈັກບັຣລຸອຸຕຕຣິ-ມນຸສສັມມ໌ ອັນເປັນຄວາມຮູ້ຄວາມເຫັນພິເສສຢ່າງປະເສີຖ ຢ່າງສາມາຖໄດ້ລະ.

ເມື່ອພຣະປັຌຈວັຄຄີຍ໌ຂາບທູລຢ່າງນີ້ແລ້ວ ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸທັ້ງຫຼາຍ ຕຖາຄົຕບໍ່ແມ່ນເປັນຄົນມັກຫຼາຍ ບໍ່ໄດ້ເປັນຄົນໜ່າຍຄວາມພຽຣ ບໍ່ໄດ້ວຽນມາເພື່ອຄວາມເປັນຄົນມັກຫຼາຍ ດູຣາພິກຂຸທັ້ງຫຼາຍ ຕຖາຄົຕເປັນອຣຫັນຕ໌ ຕຣັສຮູ້ເອງໂດຍຊອບ ພວກທ່ານຈົ່ງເງີ່ຍໂສຕສດັບ ເຮົາໄດ້

ບັຣລຸອນຕຣັມມ໌ແລ້ວ ເຮົາຈະສັ່ງສອນ ຈະສແດງຣັມມ໌ ພວກທ່ານປຕິບັຕິຢູ່ຕາມທີ່ເຮົາສັ່ງສອນແລ້ວ ບໍ່ຊ້າປານໃດ ຈະທຳໃຫ້ແຈ້ງຊຶ່ງຄຸຕອັນຍອດຢ່ຽມ ອັນເປັນທີ່ສຸດແຫ່ງພຣົຫ໌ມຈັຣຍ໌ ທີ່ກຸລບຸຕຣ໌ທັ້ງຫຼາຍອອກຈາກເຮືອນບວຊເປັນບັຣພຊິຕໂດຍຊອບຕ້ອງການນັ້ນ ດ້ວຍປັຍຍາອັນຍິ່ງດ້ວຍຕົນເອງໃນປັຈຈຸບັນເຂົ້າເຖິງຢູ່.

ແມ້ຄັ້ງທີ່ສອງ ພຣະປັຍຈວັຄຄີຍ໌ໄດ້ທູລຄ້ານພຣະຜູ້ມີພຣະພາຄວ່າ ...

ແມ້ຄັ້ງທີ່ສອງ ພຣະຜູ້ມີພຣະພາຄກໍໄດ້ຕຣັສວ່າ ...

ແມ້ຄັ້ງທີ່ສາມ ພຣະປັຍຈວັຄຄີຍ໌ໄດ້ທູລຄ້ານພຣະຜູ້ມີພຣະພາຄວ່າ ອາວຸໂສໂຄດົມ ແມ້ດ້ວຍຈຣິຍານັ້ນ ແມ້ດ້ວຍປຕິປທານັ້ນ ແມ້ດ້ວຍທຸກກຣກິຣິຍານັ້ນ ພຣະອົງຄ໌ກໍຍັງບໍ່ໄດ້ບັຣລຸອຸຕຕຣິມນຸສສຣັມມ໌ ອັນເປັນຄວາມຮູ້ຄວາມເຫັນພິເສສຢ່າງປະເສີຖ ຢ່າງສາມາຖ ກໍບັດນີ້ພຣະອົງຄ໌ເປັນຜູ້ມັກຫຼາຍ ມາຍຄວາມພຽຣ ວຽນມາເພື່ອຄວາມເປັນຄົນມັກຫຼາຍ ແນວໃດຈັກບັຣລຸອຸຕຕຣິມນຸສສຣັມມ໌ ອັນເປັນຄວາມຮູ້ຄວາມເຫັນພິເສສຢ່າງປະເສີຖ ຢ່າງສາມາຖໄດ້ລະ.

ເມື່ອພຣະປັຍຈວັຄຄີຍ໌ຂາບທູລຢ່າງນີ້ແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ ດູຣາກິກຂຸທັ້ງຫຼາຍພວກທ່ານຍັງຈຳໄດ້ຫຼືວ່າ ຄຳເຊັ່ນນີ້ເຮົາໄດ້ເຄີຍເວົ້າແລ້ວໃນປາງກ່ອນ ແຕ່ກາລນີ້.

ພຣະປັຍຈວັຄຄີຍ໌ຂາບທູລວ່າ ຄຳນີ້ບໍ່ເຄີຍໄດ້ຟັງເລີຍ ພຣະພຸທຣເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະພາຄຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ຕຖາຄົຕເປັນອຣຫັນຕ໌ ຕຣັສຮູ້ເອງໂດຍຊອບພວກທ່ານຈົ່ງເງີ່ຽໂສຕສດັບ ເຮົາໄດ້ບັຣລຸອນຕຣັມມ໌ແລ້ວ ເຮົາຈະສັ່ງສອນ ຈັກສແດງຣັມມ໌ ພວກທ່ານປຕິບັຕິຢູ່ຕາມທີ່ເຮົາສັ່ງສອນແລ້ວ ບໍ່ຊ້າປານໃດ ຈະທຳໃຫ້ແຈ້ງຊຶ່ງຄຸຕອັນຍອດຢ່ຽມ ອັນເປັນທີ່ສຸດແຫ່ງພຣົຫ໌ມຈັຣຍ໌ ທີ່ກຸລບຸຕຣ໌ທັ້ງຫຼາຍອອກຈາກເຮືອນບວຊເປັນບັຣພຊິຕໂດຍຊອບຕ້ອງການນັ້ນ ດ້ວຍປັຍຍາອັນຍິ່ງດ້ວຍຕົນເອງໃນປັຈຈຸບັນເຂົ້າເຖິງຢູ່. ພຣະຜູ້ມີພຣະພາຄຫຣົງສາມາຖໃຫ້ພຣະປັຍຈວັຄຄີຍ໌ຍິນຍອມໄດ້ແລ້ວ. ລຳດັບນັ້ນພຣະປັຍຈວັຄຄີຍ໌ ໄດ້ຍອມເຊື່ອຟັງພຣະຜູ້ມີພຣະພາຄ ເງີ່ຽໂສຕສດັບ ຕັ້ງຈິຕເພື່ອຮູ້ຍິ່ງ.

ຣັມມຈັກກັປປວັຕຕນສູຕຣ໌

ປຖົມເທຫນາ

[໑໓] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງກັບພຣະປັຍຈວັຄຄີຍ໌ວ່າ ດູຣາກິກຂຸທັ້ງຫຼາຍ ທີ່ສຸດສອງຢ່າງນີ້ອັນບັຣພຊິຕບໍ່ຄວຣເສພ ຄື

ການປະກອບຕົນໃຫ້ພົວພັນດ້ວຍກາມສຸຂໃນກາມທັ້ງຫຼາຍ ເປັນຂັ້ນມ໌ອັນຊົ່ວ ເປັນຂອງຊາວບ້ານ ເປັນຂອງປຸຖຸຊົນ ບໍ່ແມ່ນຂອງພຣະອຣິຍະ ບໍ່ປະກອບດ້ວຍປະໂຍຊນ໌ ໑

ການປະກອບຄວາມອິດເໜື່ອຍແກ່ຕົນ ເປັນຄວາມລຳບາກ ບໍ່ແມ່ນຂອງພຣະອຣິຍະ ບໍ່ປະກອບດ້ວຍປະໂຍຊນ໌ ໑

ດູຣາກິກສຸທັ້ງຫຼາຍ ປຕິປທາສາຍກາງ ບໍ່ເຂົ້າໄປໃກ້ທີ່ສຸດສອງຢ່າງນັ້ນ ນັ່ນຕຖາຄົຕໄດ້ຕຣັສຮູ້ແລ້ວດ້ວຍປັນຍາອັນຍິ່ງ ທຳດວງຕາໃຫ້ເກີດ ທຳຍານໃຫ້ເກີດ ຍ່ອມເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານ

ດູຣາກິກສຸທັ້ງຫຼາຍ ກໍປຕິປທາສາຍກາງທີ່ຕຖາຄົຕໄດ້ຕຣັສຮູ້ແລ້ວດ້ວຍປັນຍາອັນຍິ່ງ ທຳດວງຕາໃຫ້ເກີດ ທຳຍານໃຫ້ເກີດ ຍ່ອມເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານນັ້ນ ເປັນແນວໃດ?

ປຕິປທາສາຍກາງນັ້ນ ໄດ້ແກ່ອຣິຍມັຄຄ໌ ມີອົງຄ໌ ໘ ນີ້ແຫຼະ ຄືປັນຍາອັນເຫັນຊອບ ໑ ຄວາມດຳຣິຊອບ ໑ ເຈຣຈາຊອບ ໑ ການງານຊອບ ໑ ລ້ຽງຊີວິຕຊອບ ໑ ພຍາຍາມຊອບ ໑ ຣະລຶກຊອບ ໑ ຕັ້ງຈິຕຊອບ ໑

ດູຣາກິກສຸທັ້ງຫຼາຍ ນີ້ແລຄືປຕິປທາສາຍກາງນັ້ນ ທີ່ຕຖາຄົຕໄດ້ຕຣັສຮູ້ແລ້ວດ້ວຍປັນຍາອັນຍິ່ງ ທຳດວງຕາໃຫ້ເກີດ ທຳຍານໃຫ້ເກີດ ຍ່ອມເປັນໄປເພື່ອຄວາມສງົບ ເພື່ອຄວາມຮູ້ຍິ່ງ ເພື່ອຄວາມຕຣັສຮູ້ ເພື່ອນິພພານ.

[໑໔] ດູຣາກິກສຸທັ້ງຫຼາຍ ຂໍ້ນີ້ແລເປັນທຸກຂອຣິຍສັຈ ຄື ຄວາມເກີດກໍເປັນທຸກຂ໌ ຄວາມແກ່ກໍເປັນທຸກຂ໌ ຄວາມເຈັບໄຂ້ກໍເປັນທຸກຂ໌ ຄວາມຕາຍກໍເປັນທຸກຂ໌ ຄວາມປະຈວບດ້ວຍສິ່ງທີ່ບໍ່ເປັນທີ່ຮັກກໍເປັນທຸກຂ໌ ຄວາມພລັດພຣາກຈາກສິ່ງເປັນທີ່ຮັກກໍເປັນທຸກຂ໌ ປັຕຖນາສິ່ງໃດບໍ່ໄດ້ສິ່ງນັ້ນກໍເປັນທຸກຂ໌ ໂດຍຫຍໍ້ນຫຍໍ່ ອຸປາທານຂັນຄ໌ ໕ ເປັນທຸກຂ໌

ດູຣາກິກສຸທັ້ງຫຼາຍ ຂໍ້ນີ້ແລເປັນທຸກຂສມຸທັຍອຣິຍສັຈ ຄືຕັນຫາອັນທຳໃຫ້ເກີດອີກ ປະກອບດ້ວຍຄວາມກຳຫນັດດ້ວຍອຳນາຈຄວາມເພີນ ມີປົກຕິເພີດເພີນໃນອາຣົມນ໌ນັ້ນໆ ຄື ກາມຕັນຫາ ພວຕັນຫາ ວິພວຕັນຫາ.

ດູຣາກິກສຸທັ້ງຫຼາຍ ຂໍ້ນີ້ແລເປັນທຸກຂນິໂຣຄອຣິຍສັຈ ຄື ຕັນຫານັ້ນແລດັບ ໂດຍບໍ່ເຫລືອດ້ວຍມັຄຄ໌ຄືວິຣາຄະ ສລະ ສລະຄືນ ປ່ອຍໄປ ບໍ່ພົວພັນ.

ດູຣາກິກສຸທັ້ງຫຼາຍ ຂໍ້ນີ້ແລເປັນທຸກຂນິໂຣຄຄາມິນີປຕິປທາອຣິຍສັຈ ຄື ອຣິຍມັຄຄ໌ມີອົງຄ໌ ໘ ນີ້ແຫຼະ ຄື ປັນຍາເຫັນຊອບ ໑ ... ຕັ້ງຈິຕຊອບ ໑.

[໑໕] ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ນີ້ທຸກຂອຣິຍສັຈ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂອຣິຍສັຈນີ້ນັ້ນແລ ຄວຣກຳຫນົດຮູ້.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂອຣິຍສັຈນີ້ນັ້ນແລ ເຮົາກໍໄດ້ກຳຫນົດຮູ້ແລ້ວ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ນີ້ທຸກຂສມຸທັຍອຣິຍສັຈ

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂສມຸທັຍອຣິຍສັຈນີ້ນັ້ນແລ ຄວຣລະເສັຽ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂສມຸທັຍອຣິຍສັຈນີ້ນັ້ນແລ ເຮົາໄດ້ລະແລ້ວ

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ນີ້ທຸກຂນິໂຣຘອຣິຍສັຈ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂນິໂຣຘອຣິຍສັຈນີ້ນັ້ນແລ ຄວຣທຳໃຫ້ແຈ້ງ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂນິໂຣຘອຣິຍສັຈນີ້ນັ້ນແລ ເຮົາທຳໃຫ້ແຈ້ງແລ້ວ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ນີ້ທຸກຂນິໂຣຘຄາມິນີປຕິປທາອຣິຍສັຈ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂນິໂຣຘຄາມິນີປຕິປທາອຣິຍສັຈນີ້ນັ້ນແລ ຄວຣໃຫ້ຈເຣີຍ.

ດູຣາກິກະຫຸທັ້ງຫຼາຍ ດວງຕາ ຌາຓ ປັຌຌາ ວິທຍາ ແສງສວ່າງ ໄດ້ເກີດຂຶ້ນແລ້ວແກ່ເຮົາ ໃນສັມມ໌ທັ້ງຫຼາຍທີ່ເຮົາບໍ່ເຄີຍຟັງມາກ່ອນວ່າ ທຸກຂນິໂຣຘຄາມິນີປຕິປທາອຣິຍສັຈນີ້ນັ້ນແລ ເຮົາໃຫ້ຈເຣີຍແລ້ວ.

ຌາຓທັສສນະ ມີຣອບ ๓ ມີອາກາຣ ໑໒

[໑໖] ດູຣາກິກຸທັ້ງຫຼາຍ ປັຌຌາອັນຮູ້ເຫັນຕາມເປັນຈິງຂອງເຮົາໃນອຣິຍສັຈ ໔ ນີ້ ມີຣອບ ๓ ມີອາກາຣ ໑໒ ຢ່າງນີ້ ຍັງບໍ່ຫມົດຈົດດີແລ້ວ ພຽງໃດ ດູຣາກິກຸທັ້ງຫຼາຍ ເຮົາຍັງຢືນຢັນບໍ່ໄດ້ວ່າ ເປັນຜູ້ຕຣັສຮູ້ສັມມາສັມໂພຘິຌາຓ ອັນຍອດຢ່ຽມໃນໂລກ ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ໃນ ຫມູ່ສັຕວ໌ ພ້ອມທັ້ງສມຓະ ພຣາຫ໌ມຓ໌ເທວດາແລະມນຸຉຍ໌ ພຽງນັ້ນ.

ດູຣາກິກຸທັ້ງຫຼາຍ ກໍເມື່ອໃດແລ ປັຌຌາອັນຮູ້ເຫັນຕາມເປັນຈິງຂອງເຮົາ ໃນອຣິຍສັຈ ໔ ນີ້ ມີຣອບ ๓ ມີອາກາຣ ໑໒ ຢ່າງນີ້ ຫມົດຈົດດີແລ້ວ ດູຣາກິກຸທັ້ງຫຼາຍ ເມື່ອນັ້ນ ເຮົາຈຶ່ງຢືນຢັນໄດ້ວ່າ ເປັນຜູ້ຕຣັສຮູ້ສັມມາສັມໂພຘິຌາຓ ອັນຍອດຢ່ຽມໃນໂລກ ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ໃນຫມູ່ສັຕວ໌ ພ້ອມທັ້ງສມຓະ ພຣາຫ໌ມຓ໌ເທວດາແລະມນຸຉຍ໌.

ອີກຢ່າງນຶ່ງ ປັຌຌາອັນຮູ້ເຫັນໄດ້ເກີດຂຶ້ນແລ້ວແກ່ເຮົາວ່າ ຄວາມພົ້ນວິເສຉຂອງເຮົາບໍ່ກັບກຳເຣີບ ຊາຕິນີ້ເປັນທີ່ສຸດ ກົພໃຫມ່ບໍ່ມີຕໍ່ໄປ.

ກໍແລເມື່ອພຣະຜູ້ມີພຣະກາຄຕຣັສໄວຍາກຣຓກາຉິຕນີ້ຢູ່ ດວງຕາເຫັນຘັມມ໌ ປຼາສຈາກຘຸລີ ປຼາສຈາກມົລທິນ ໄດ້ເກີດຂຶ້ນແກ່ທ່ານພຣະໂກຓຑັຌຌະວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນຘັມມ໌ດາ ສິ່ງນັ້ນທັ້ງມວລ ມີຄວາມດັບເປັນຘັມມ໌ດາ.

[໑໗] ຄັ້ນພຣະຜູ້ມີພຣະກາຄທຣົງປະກາສຘັມມ໌ຈັກຣ໌ໃຫ້ເປັນໄປແລ້ວ ເຫຼົ່າກຸມມເທວດາໄດ້ ບັນລືສຽງວ່າ ນັ່ນພຣະຘັມມ໌ຈັກຣ໌ອັນຍອດຢ່ຽມ ພຣະຜູ້ມີພຣະກາຄທຣົງປະກາສໃຫ້ເປັນໄປແລ້ວ ຓ ປ່າອິສິປຕນະມຣິຄທາຍວັນ ເຂຕພຣະນຄຣພາຣາຓສີ ອັນສມຓະ ພຣາຫ໌ມຓ໌ເທວດາ ມາຣ ພຣົຫ໌ມ ຫຼື ໃຜໆ ໃນໂລກ ຈະປຕິວັຕິບໍ່ໄດ້.

ເທວດາຊັ້ນຈາຕຸມຫາຣາຊ ໄດ້ຍິນສຽງຂອງພວກກຸມມເທວດາແລ້ວ ກໍບັນລືສຽງຕໍ່ໄປ.

ເທວດາຊັ້ນດາວດຶງສ໌ ໄດ້ຍິນສຽງຂອງພວກເທວດາຊັ້ນຈາຕຸມຫາຣາຊແລ້ວ ກໍບັນລືສຽງຕໍ່ໄປ.

ເທວດາຊັ້ນຍາມາ ...

ເທວດາຊັ້ນດຸສິຕ ...

ເທວດາຊັ້ນນິມມານຣດີ ...

ເທວດາຊັ້ນປຣນິມມິຕວສວດີ ...

ເທວດາທີ່ນັບເນື່ອງໃນຫມູ່ພຣົຫ໌ມ ໄດ້ຍິນສຽງຂອງພວກເທວດາຊັ້ນປຣນິມມິຕວສວດີແລ້ວ ກໍ ບັນລືສຽງຕໍ່ໄປວ່າ ນັ່ນພຣະຘັມມ໌ຈັກຣ໌ອັນຍອດຢ່ຽມ ພຣະຜູ້ມີພຣະກາຄທຣົງປະກາສໃຫ້ເປັນໄປແລ້ວ

໓ ປ່າອິສິປຕນະມຣິຄທາຍວັນ ເຂຕພຣະນຄຣພາຣາຓສີ ອັນສມຕະ ພຣາຫ໌ມຕ໌ເທວດາ ມາຣ ພຣົຫ໌ມ ຫຼືໃຜໆ ໃນໂລກ ຈະປຕິວັຕິບໍ່ໄດ້.

ຊົ່ວຂຕະນຶ່ງນັ້ນ ສຽງກະສ່ອນຂຶ້ນໄປຈົນເຖິງພຣົຫ໌ມໂລກ ດ້ວຍປະການຣະນີ້ແລ.

ທັ້ງຫມື່ນໂລກທາຕຸນີ້ໄດ້ຫວັ່ນໄຫວສະເທືອນສະທ້ານ ທັ້ງແສງສວ່າງອັນຍິ່ງໃຫຍ່ຫາປະມາຕບໍ່ໄດ້ ໄດ້ປຼາກົຕແລ້ວໃນໂລກ ລ່ວງເທວານຸກາພຂອງເທວດາທັ້ງຫຼາຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເປັ່ງພຣະອຸທານວ່າ ທ່ານຜູ້ຈເຣີນ ໂກຓທັນຍະ ໄດ້ຮູ້ແລ້ວນໍ ທ່ານຜູ້ຈເຣີນ ໂກຓທັນຍະໄດ້ຮູ້ແລ້ວນໍ ເພາະເຫຕຸນັ້ນ ຄຳວ່າ ອັຍຍາໂກຓທັນຍະນີ້ ຈຶ່ງໄດ້ເປັນຊື່ ຂອງທ່ານພຣະໂກຓທັນຍະ ດ້ວຍປະການຣະນີ້.

ທັມມຈັກກັປປວັຕຕນສູຕຣ໌ ຈົບ

ປັຍຈວັຄຄີຍ໌ທູລຂໍບັຣພຊາອຸປສົມບົທ

[໑໗] ຄັ້ງນັ້ນ ທ່ານພຣະອັຍຍາໂກຓທັນຍະ ໄດ້ເຫັນທັມມ໌ແລ້ວ ໄດ້ບັຣລຸທັມມ໌ແລ້ວ ໄດ້ ຮູ້ທັມມ໌ແຈ່ມແຈ້ງແລ້ວ ມີທັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຼາສຈາກຄຳສແດງ ຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ ຕໍ່ພຣະຜູ້ມີພຣະກາຄວ່າ ຂໍຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທ ໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທຊເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ທ່ານຈົງເປັນກິກຂຸມາເຖີດ ດັ່ງນີ້ ແລ້ວຕຣັສຕໍ່ໄປວ່າທັມມ໌ອັນເຮົາ ກ່າວດີແລ້ວ ທ່ານຈົງປະພຶຕພຣົຫ໌ມຈັຣຍ໌ ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸນັ້ນ.

[໑໘] ຄັ້ນຕໍ່ມາ ພຣະຜູ້ມີພຣະກາຄໄດ້ທຣົງປະທານໂອວາທສັ່ງສອນກິກຂຸທັ້ງຫຼາຍທີ່ເຫລືອ ຈາກນັ້ນດ້ວຍທັມມີກຖາ. ເມື່ອພຣະຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນດ້ວຍທັມມີກຖາຢູ່ ດວງຕາ ເຫັນທັມມ໌ ປຼາສຈາກທຸລີ ປຼາສຈາກມົລທິນ ໄດ້ເກີດຂຶ້ນແກ່ທ່ານພຣະວັປປະແລະທ່ານພຣະກັທທິຍະວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມມ໌ດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນທັມມ໌ດາ. ທ່ານທັ້ງສອງນັ້ນ

ໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂໍຂ້າພຣະອົງຄ໌ທັ້ງສອງຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທ ໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ທ່ານທັ້ງສອງຈົ່ງເປັນກິກຂຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນເຮົາກ່າວດີແລ້ວ ທ່ານທັ້ງສອງຈົ່ງປະພຶຕພຣົຫ໌ມຈັຣຍ໌ ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະອາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸທັ້ງສອງນັ້ນ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເວີຍພຣະກະຍາຫາຣທີ່ທ່ານທັ້ງສາມນຳມາຖວາຍ ໄດ້ທຣົງປະທານໂອວາທສັ່ງສອນກິກຂຸທີ່ເຫລືອຈາກນັ້ນດ້ວຍສັມມີກຖາ. ກິກຂຸທ່ຽວບິຓฑບາຕນຳບິຓฑບາຕໃດມາ ທັ້ງ ໖ ອົງຄ໌ກໍລ້ຽງຊີພດ້ວຍບິຓฑບາຕນັ້ນ.

ວັນຕໍ່ມາ ເມື່ອພຣະຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນດ້ວຍສັມມີກຖາຢູ່ ດວງຕາເຫັນສັມມ໌ ປາສຈາກທຸລີ ປາສຈາກມົລທິນໄດ້ເກີດຂຶ້ນແກ່ທ່ານພຣະມຫານາມະແລະທ່ານພຣະອັສສຊີວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ. ທ່ານທັ້ງສອງໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂໍຂ້າພຣະອົງຄ໌ທັ້ງສອງ ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ທ່ານທັ້ງສອງຈົ່ງເປັນກິກຂຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນເຮົາກ່າວດີແລ້ວ ທ່ານທັ້ງສອງຈົ່ງປະພຶຕພຣົຫ໌ມຈັຣຍ໌ ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະອາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸທັ້ງສອງນັ້ນ.

ທຣົງສແດງອນັຕຕລັກຂຓສູຕຣ໌

[໔໐] ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກັບພຣະປັຓຈວັຄຄີຍ໌ວ່າ ດູຣາກິກຂຸທັ້ງຫຼາຍ ອົງຄ໌ເປັນອນັຕຕາ ດູຣາກິກຂຸທັ້ງຫຼາຍ ຖ້າຮູປນີ້ຈັກໄດ້ເປັນອັຕຕາແລ້ວ ອົງຄ໌ນີ້ບໍ່ຄວຣເປັນເພື່ອອາພາສ ແລະບຸຄຄົລຄວຣໄດ້ໃນຮູປວ່າ ຮູປຂອງເຮົາຈົ່ງເປັນຢ່າງນີ້ເຖີດ ຮູປຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ. ດູຣາກິກຂຸທັ້ງຫຼາຍ ກໍເພາະຮູປເປັນອນັຕຕາ ດັ່ງນັ້ນຮູປຈຶ່ງເປັນໄປເພື່ອອາພາສ ແລະບຸຄຄົລຍ່ອມບໍ່ໄດ້ໃນຮູປວ່າ ຮູປຂອງເຮົາຈົ່ງເປັນຢ່າງນີ້ເຖີດ ຮູປຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ.

ເວທນາເປັນອນັຕຕາ ດູຣາກິກຂຸທັ້ງຫຼາຍ ຖ້າເວທນານີ້ຈັກໄດ້ເປັນອັຕຕາແລ້ວ ເວທນານີ້ບໍ່ຄວຣເປັນໄປເພື່ອອາພາສ ແລະບຸຄຄົລຄວຣໄດ້ໃນເວທນາວ່າ ເວທນາຂອງເຮົາຈົ່ງເປັນຢ່າງນີ້ເຖີດ ເວທນາຂອງເຮົາຈົ່ງຢ່າໄດ້ເປັນຢ່າງນັ້ນເລີຍ. ດູຣາກິກຂຸທັ້ງຫຼາຍ ກໍເພາະເວທນາເປັນອນັຕຕາ ດັ່ງນັ້ນ ເວທນາຈຶ່ງເປັນໄປເພື່ອອາພາສ ແລະບຸຄຄົລຍ່ອມບໍ່ໄດ້ໃນເວທນາວ່າ ເວທນາຂອງເຮົາ ຈົ່ງເປັນຢ່າງນັ້ນເຖີດ ເວທນາຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ.

ສັຍຍາເປັນອນັຕຕາ ດູຣາກິກຂຸທັ້ງຫຼາຍ ຖ້າສັຍຍານີ້ຈັກໄດ້ເປັນອັຕຕາແລ້ວ ສັຍຍານີ້ບໍ່ຄວຣເປັນໄປເພື່ອອາພາສ ແລະບຸຄຄົລຄວຣໄດ້ໃນສັຍຍາວ່າ ສັຍຍາຂອງເຮົາຈົ່ງເປັນຢ່າງນີ້ເຖີດ ສັຍຍາຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ. ດູຣາກິກຂຸທັ້ງຫຼາຍ ກໍເພາະສັຍຍາເປັນອນັຕຕາ ດັ່ງນັ້ນ ສັຍຍາຈຶ່ງເປັນໄປເພື່ອອາພາສ ແລະບຸຄຄົລຍ່ອມບໍ່ໄດ້ໃນສັຍຍາວ່າ ສັຍຍາຂອງເຮົາຈົ່ງເປັນຢ່າງນີ້ເຖີດ ສັຍຍາຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ.

ສັງຂາຣທັ້ງຫຼາຍເປັນອນັຕຕາ ດູຣາກິກຂຸທັ້ງຫຼາຍ ຖ້າສັງຂາຣເຫຼົ່ານີ້ຈັກໄດ້ເປັນອັຕຕາແລ້ວ ສັງຂາຣເຫຼົ່ານີ້ບໍ່ຄວຣເປັນໄປເພື່ອອາພາສ ແລະບຸຄຄົລຄວຣໄດ້ໃນສັງຂາຣທັ້ງຫຼາຍວ່າ ສັງຂາຣທັ້ງຫຼາຍຂອງເຮົາຈົ່ງເປັນຢ່າງນີ້ເຖີດ ສັງຂາຣທັ້ງຫຼາຍຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ. ດູຣາກິກຂຸທັ້ງຫຼາຍ ກໍເພາະສັງຂາຣທັ້ງຫຼາຍເປັນອນັຕຕາ ດັ່ງນັ້ນ ສັງຂາຣທັ້ງຫຼາຍຈຶ່ງເປັນໄປເພື່ອອາພາສ ແລະບຸຄຄົລຍ່ອມບໍ່ໄດ້ໃນສັງຂາຣທັ້ງຫຼາຍວ່າ ສັງຂາຣທັ້ງຫຼາຍຂອງເຮົາ ຈົ່ງເປັນຢ່າງນີ້ເຖີດ ສັງຂາຣທັ້ງຫຼາຍຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ.

ວິຍຍານເປັນອນັຕຕາ ດູຣາກິກຂຸທັ້ງຫຼາຍ ຖ້າວິຍຍານນີ້ຈັກໄດ້ເປັນອັຕຕາແລ້ວ ວິຍຍານນີ້ບໍ່ຄວຣເປັນໄປເພື່ອອາພາສ ແລະບຸຄຄົລຄວຣໄດ້ໃນວິຍຍານວ່າ ວິຍຍານຂອງເຮົາຈົ່ງເປັນຢ່າງນີ້ເຖີດ ວິຍຍານຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ ດູຣາກິກຂຸທັ້ງຫຼາຍ ກໍເພາະວິຍຍານເປັນອນັຕຕາ ດັ່ງນັ້ນ ວິຍຍານຈຶ່ງເປັນໄປເພື່ອອາພາສ ແລະບຸຄຄົລຍ່ອມບໍ່ໄດ້ໃນວິຍຍານວ່າ ວິຍຍານຂອງເຮົາຈົ່ງເປັນຢ່າງນີ້ເຖີດ ວິຍຍານຂອງເຮົາຢ່າໄດ້ເປັນຢ່າງນັ້ນເລີຍ.

ຕຣັສຖາມຄວາມເຫັນຂອງພຣະປັຍຈວັຄຄີຍ໌

[໒໑] ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກິກຂຸທັ້ງຫຼາຍ ພວກທ່ານສຳຄັນຄວາມນັ້ນເປັນແນວໃດ ຮູປທ່ຽງຫຼືບໍ່ທ່ຽງ?

ພຣະປັຍຈວັຄຄີຍ໌ທູລວ່າ ບໍ່ທ່ຽງ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫຼືເປັນສຸຂລະ?

ປ. ເປັນທຸກຂ໌ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຼປຼວນເປັນທັມມດາ ຄວຣບໍ່ຈະຕາມເຫັນສິ່ງນັ້ນວ່າ ນັ່ນຂອງເຮົາ ນັ່ນເປັນເຮົາ ນັ່ນເປັນຕົນຂອງເຮົາ?

ປ. ຂໍ້ນັ້ນ ບໍ່ຄວຣເລີຍ ພຣະພຸທສເຈົ້າຂ້ານ້ອຍ.

ກ. ເວທນາທ່ຽງຫຼືບໍ່ທ່ຽງ?

ປ. ບໍ່ທ່ຽງ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫຼືເປັນສຸຂລະ?

ປ. ເປັນທຸກຂ໌ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຼປຼວນເປັນທັມມດາ ຄວຣບໍ່ຈະຕາມເຫັນສິ່ງນັ້ນວ່າ ນັ່ນຂອງເຮົາ ນັ່ນເປັນເຮົາ ນັ່ນເປັນຕົນຂອງເຮົາ?

ປ. ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸທສເຈົ້າຂ້ານ້ອຍ.

ກ. ສັຍຍາທ່ຽງຫຼືບໍ່ທ່ຽງ?

ປ. ບໍ່ທ່ຽງ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫຼືເປັນສຸຂລະ?

ປ. ເປັນທຸກຂ໌ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຼປຼວນເປັນທັມມດາ ຄວຣບໍ່ຈະຕາມເຫັນສິ່ງນັ້ນວ່າ ນັ່ນຂອງເຮົາ ນັ່ນເປັນເຮົາ ນັ່ນເປັນຕົນຂອງເຮົາ?

ປ. ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸທສເຈົ້າຂ້ານ້ອຍ.

ກ. ສັງຂາຣທັ້ງຫຼາຍທ່ຽງຫຼືບໍ່ທ່ຽງ?

ປ. ບໍ່ທ່ຽງ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ສິ່ງນັ້ນເປັນທຸກຂ໌ຫຼືເປັນສຸຂລະ?

ປ. ເປັນທຸກຂ໌ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຼປຼວນເປັນທັມມດາ ຄວຣບໍ່ຈະຕາມເຫັນສິ່ງນັ້ນວ່າ ນັ່ນຂອງເຮົາ ນັ່ນເປັນເຮົາ ນັ່ນເປັນຕົນຂອງເຮົາ?

ປ. ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸທສເຈົ້າຂ້ານ້ອຍ.

ກ. ວິຍຍານທ່ຽງຫຼືບໍ່ທ່ຽງ?

ປ. ບໍ່ທ່ຽງ ພຣະພຸທธເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ຫຼືເປັນສຸຂລະ?

ປ. ເປັນທຸກຂ໌ ພຣະພຸທธເຈົ້າຂ້ານ້ອຍ.

ກ. ກໍສິ່ງໃດບໍ່ທ່ຽງ ເປັນທຸກຂ໌ ມີຄວາມແປຼປວນເປັນທັມມດາ ຄວຣບໍ່ຈະຕາມເຫັນສິ່ງນັ້ນວ່າ ນັ່ນຂອງເຮົາ ນັ່ນເປັນເຮົາ ນັ່ນເປັນຕົນຂອງເຮົາ?

ປ. ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸທธເຈົ້າຂ້ານ້ອຍ.

ຕຣັສໃຫ້ພິຈາຣຕາໂດຍຢຖາພູຕຍານທັສສນະ

[໔໔] ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແລ ຣູປຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫຼືພາຍນອກ ຫຍາບຫຼືລະອຽດ ຊົ່ວຫຼືປະນີຕ ໄກລຫຼືໃກ້ ທັ້ງຫມົດກໍເປັນແຕ່ສັກວ່າຣູປ ທ່ານທັ້ງຫຼາຍຄວຣເຫັນຣູປນັ້ນດ້ວຍປັນຍາອັນຊອບຕາມເປັນຈິງຢ່າງນີ້ວ່າ ນັ່ນບໍ່ແມ່ນຂອງເຮົາ ນັ່ນບໍ່ເປັນເຮົາ ນັ່ນບໍ່ແມ່ນຕົນຂອງເຮົາ.

ເວທນາຢ່າງໃດຢ່າງນຶ່ງ ທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫຼືພາຍນອກ ຫຍາບຫຼືລະອຽດ ຊົ່ວຫຼືປະນີຕ ໄກລຫຼືໃກ້ ທັ້ງຫມົດກໍເປັນແຕ່ສັກວ່າເວທນາ ທ່ານທັ້ງຫຼາຍຄວຣເຫັນເວທນານັ້ນດ້ວຍປັນຍາອັນຊອບ ຕາມເປັນຈິງຢ່າງນີ້ວ່າ ນັ່ນບໍ່ແມ່ນຂອງເຮົາ ນັ່ນບໍ່ເປັນເຮົາ ນັ່ນບໍ່ແມ່ນຕົນຂອງເຮົາ.

ສັນຍາຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫຼືພາຍນອກ ຫຍາບຫຼືລະອຽດ ຊົ່ວຫຼືປະນີຕ ໄກລຫຼືໃກ້ ທັ້ງຫມົດກໍເປັນແຕ່ສັກວ່າເວທນາ ທ່ານທັ້ງຫຼາຍຄວຣເຫັນສັນຍານັ້ນດ້ວຍປັນຍາອັນຊອບ ຕາມເປັນຈິງຢ່າງນີ້ວ່າ ນັ່ນບໍ່ແມ່ນຂອງເຮົາ ນັ່ນບໍ່ເປັນເຮົາ ນັ່ນບໍ່ແມ່ນຕົນຂອງເຮົາ.

ສັງຂາຣທັ້ງຫຼາຍຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫຼືພາຍນອກ ຫຍາບຫຼືລະອຽດ ຊົ່ວຫຼືປະນີຕ ໄກລຫຼືໃກ້ ທັ້ງຫມົດກໍເປັນແຕ່ສັກວ່າສັງຂາຣ ທ່ານທັ້ງຫຼາຍຄວຣເຫັນສັງຂາຣນັ້ນດ້ວຍປັນຍາອັນຊອບ ຕາມເປັນຈິງຢ່າງນີ້ວ່າ ນັ່ນບໍ່ແມ່ນຂອງເຮົາ ນັ່ນບໍ່ເປັນເຮົາ ນັ່ນບໍ່ແມ່ນຕົນຂອງເຮົາ.

ວິຍຍານຢ່າງໃດຢ່າງນຶ່ງທີ່ເປັນອດີຕ ອນາຄົຕ ແລະປັຈຈຸບັນ ພາຍໃນຫຼືພາຍນອກ ຫຍາບຫຼືລະອຽດ ຊົ່ວຫຼືປະນີຕ ໄກລຫຼືໃກ້ ທັ້ງຫມົດກໍເປັນແຕ່ສັກວ່າວິຍຍານ ທ່ານທັ້ງຫຼາຍ

ຄວຣເຫັນວິນຍາໝນັ້ນດ້ວຍປັນຍາອັນຊອບ ຕາມເປັນຈິງຢ່າງນີ້ວ່າ ນັ່ນບໍ່ແມ່ນຂອງເຮົາ ນັ່ນບໍ່ເປັນເຮົາ ນັ່ນບໍ່ແມ່ນຕົນຂອງເຮົາ.

[໔໓] ດູຣາພິກສຸທັ້ງຫຼາຍ ອຣິຍສາວົກຜູ້ໄດ້ຟັງແລ້ວ ເຫັນຢູ່ຢ່າງນີ້ ຍ່ອມເບື່ອໜ່າຍແມ້ໃນຣູປ ຍ່ອມເບື່ອໜ່າຍແມ້ໃນເວທນາ ຍ່ອມເບື່ອໜ່າຍແມ້ໃນສັນຍາ ຍ່ອມເບື່ອໜ່າຍແມ້ໃນສັງຂາຣທັ້ງຫຼາຍ ຍ່ອມເບື່ອໜ່າຍແມ້ໃນວິນຍາໝ ເມື່ອເບື່ອໜ່າຍ ຍ່ອມສິ້ນກຳຫນັດ ເພາະສິ້ນກຳຫນັດ ຈິຕກໍພົ້ນ ເມື່ອຈິຕພົ້ນແລ້ວ ກໍຮູ້ວ່າພົ້ນແລ້ວ ອຣິຍສາວົກນັ້ນຮູ້ຊັດວ່າ ຊາຕິສິ້ນແລ້ວ ພຣົຫ໌ມຈັຣຍ໌ໄດ້ຢູ່ຈົບແລ້ວ ກິຈທີ່ຄວຣທຳໄດ້ທຳແລ້ວໆ ກິຈອື່ນອີກເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີ.

[໔໔] ພຣະຜູ້ມີພຣະພາຄໄດ້ຕຣັສພຣະສູຕຣ໌ນີ້ແລ້ວ ພຣະປັນຈວັຄຄີຍ໌ມີໃຈຍິນດີ ເພີດເພີນພາษິຕຂອງຜູ້ມີພຣະພາຄ. ກໍແລເມື່ອພຣະຜູ້ມີພຣະພາຄຕຣັສໄວຍາກຣໝພາษິຕນີ້ຢູ່ ຈິຕຂອງພຣະປັນຈວັຄຄີຍ໌ພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ.

ອນັຕຕລັກຂໝສູຕຣ໌ ຈົບ

ຄັ້ງນັ້ນ ມີພຣະອຣຫັນຕ໌ເກີດຂຶ້ນໃນໂລກ ໖ ອົງຄ໌.

ປຖົມພາໝວາຣ ຈົບ

ເຣື່ອງຍສກຸລບຸຕຣ໌

[໔໕] ກໍໂດຍສມັຍນັ້ນແລ ໃນພຣະນຄຣພາຣາໝສີ ມີກຸລບຸຕຣ໌ ຊື່ ຍສ ເປັນບຸຕຣ໌ເສຣษຖີ ສຸຂຸມາລຊາຕິ. ຍສກຸລບຸຕຣ໌ນັ້ນມີປຼາສາທ ໓ ຫລັງ ຄື ຫລັງນຶ່ງເປັນທີ່ຢູ່ໃນຣະດູໜາວ ຫລັງນຶ່ງເປັນທີ່ຢູ່ໃນຣະດູຮ້ອນ ຫລັງນຶ່ງເປັນທີ່ຢູ່ໃນຣະດູຝົນ. ຍສກຸລບຸຕຣ໌ນັ້ນຮັບບຳເຣີດ້ວຍພວກດົນຕຣີ ບໍ່ມີບຸຣຸษເຈືອປົນ ໃນປຼາສາທຣະດູຝົນຕລອດ ໔ ເດືອນ ບໍ່ລົງມາຕະລ່າງປຼາສາທ. ຄ່ຳມື້ນຶ່ງ ເມື່ອຍສກຸລບຸຕຣ໌ອີ່ມເອີບພ້ອມພັ່ງບຳເຣີຢູ່ດ້ວຍກາມຄຸໝ ໕ ໄດ້ນອນຫລັບກ່ອນ ສ່ວນພວກບໍຣິວາຣຊົນນອນຫລັບພາຍຫລັງ. ປະທີປນ້ຳມັນຕາມສວ່າງຢູ່ຕລອດຄືນ. ຄືນນັ້ນຍສກຸລບຸຕຣ໌ຕື່ນຂຶ້ນກ່ອນ ໄດ້ເຫັນບໍຣິວາຣຊົນຂອງຕົນກຳລັງນອນຫລັບ ບາງນາງມີພິໝຕົກຢູ່ທີ່ຂີ້ແຮ້ ບາງນາງມີຕະໂພນວາງຢູ່ຂ້າງຄໍ ບາງນາງມີເປີງມາງຕົກຢູ່ທີ່ເອິກ ບາງນາງສຍາຍຜົມ ບາງນາງມີນ້ຳລາຍໄຫລ ບາງນາງຈົ່ມລະເມີຕ່າງໆ

ປຼາກົຕແກ່ຍສກຸລບຸຕຣ໌ຄືປ່າຊ້າຜີດິບ. ຄັ້ນແລ້ວຄວາມເຫັນເປັນໂທษໄດ້ປຼາກົຕແກ່ຍສກຸລບຸຕຣ໌ ຈິຕຕັ້ງຢູ່ໃນຄວາມເບື່ອໜ່າຍ ຈຶ່ງຍສກຸລບຸຕຣ໌ເປັ່ງອຸທານວ່າ ທ່ານຜູ້ຈເຣີຍ ທີ່ນີ້ວຸ່ນວາຍນໍ ທີ່ນີ້ຂັດຂ້ອງນໍ ແລ້ວໃສ່ເກີບທອງຍ່າງກົງໄປຍັງປະຕູນິເວສນ໌ ພວກອມນຸษຍ໌ເປີດປະຕູໃຫ້ດ້ວຍຫວັງໃຈວ່າ ໃຜໆ ຢ່າໄດ້ທຳອັນຕຣາຍແກ່ການອອກຈາກເຮືອນບວຊເປັນບັຣພຊິຕຂອງຍສກຸລບຸຕຣ໌ເລີຍ. ລຳດັບນັ້ນ ຍສກຸລບຸຕຣ໌ຍ່າງກົງໄປທາງປະຕູພຣະນຄຣ. ພວກອມນຸษຍ໌ເປີດປະຕູໃຫ້ດ້ວຍຫວັງໃຈວ່າ ໃຜໆ ຢ່າໄດ້ທຳອັນຕຣາຍແກ່ການອອກຈາກເຮືອນບວຊເປັນບັຣພຊິຕຂອງຍສກຸລບຸຕຣ໌. ບ່ອນນັ້ນ ຍສກຸລບຸຕຣໄດ້ຍ່າງກົງໄປທາງປ່າອິສິປຕນະມຣິຄທາຍວັນ.

[໔໕] ຄັ້ນປັຈຈຸສສມັຍແຫ່ງຣາຕຣີ ພຣະຜູ້ມີພຣະພາຄຕື່ນບັຣທົມແລ້ວສເດັຈຈົງກົມຢູ່ ໓ ທີ່ແຈ້ງ ໄດ້ທອດພຣະເນຕຣ໌ເຫັນຍສກຸລບຸຕຣ໌ຍ່າງມາແຕ່ໄກລ ຄັ້ນແລ້ວສເດັຈລົງຈາກທີ່ຈົງກົມປະທັບນັ່ງເທິງອາສນະທີ່ປູລາດໄວ້. ຂຓະນັ້ນ ຍສກຸລບຸຕຣ໌ເປັ່ງອຸທານໃນທີ່ບໍ່ໄກລພຣະຜູ້ມີພຣະພາຄວ່າ ທ່ານຜູ້ຈເຣີຍ ທີ່ນີ້ວຸ່ນວາຍນໍ ທີ່ນີ້ຂັດຂ້ອງນໍ. ທັນໃດນັ້ນ ພຣະຜູ້ມີພຣະພາຄຕຣັສກະຍສກຸລບຸຕຣ໌ວ່າ ດູຣາຍສ ທີ່ນີ້ບໍ່ວຸ່ນວາຍ ທີ່ນີ້ບໍ່ຂັດຂ້ອງ ມາເຖີດຍສ ນັ່ງລົງ ເຮົາຈັກສແດງສັມມ໌ແກ່ທ່ານ. ທີ່ນັ້ນ ຍສກຸລບຸຕຣ໌ຮ່າເຣີງບັນເທີງໃຈວ່າໄດ້ຍິນວ່າ ທີ່ນີ້ບໍ່ວຸ່ນວາຍ ທີ່ນີ້ບໍ່ຂັດຂ້ອງ ດັ່ງນີ້ ແລ້ວຖອດເກີບທອງເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ ເມື່ອຍສກຸລບຸຕຣ໌ນັ່ງຮຽບຮ້ອຍແລ້ວພຣະຜູ້ມີພຣະພາຄໄດ້ທຣົງສແດງອນຸປຸພພິກຖາ ຄື ທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທษຄວາມຕ່ຳຊາມ ຄວາມເສົ້າຫມອງຂອງກາມທັ້ງຫຼາຍ ແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະອົງຄ໌ທຣົງຮູ້ວ່າ ຍສກຸລບຸຕຣ໌ມີຈິຕສງົບ ມີຈິຕອ່ອນ ມີຈິຕປູອດຈາກນິວຣຓ໌ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວຈຶ່ງທຣົງປະກາສພຣະສັມມ໌ເທສນາ ທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ສມຸທັຍ ນິໂຣຣ ມັຄຄ໌. ດວງຕາເຫັນສັມມ໌ ປຼາສຈາກຣຸລີ ປຼາສຈາກມົລທິນ ວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ໄດ້ເກີດແກ່ຍສກຸລບຸຕຣ໌ ໓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດປຼາສຈາກມົລທິນ ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີ ດັ່ງນັ້ນ.

ບິດາຂອງຍສກຸລບຸຕຣ໌ຕາມຫາ

[໔໖] ຄັ້ນເຊົ້າມາ ມາຣດາຂອງຍສກຸລບຸຕຣ໌ຂຶ້ນໄປຍັງປຼາສາທ ບໍ່ເຫັນຍສກຸລບຸຕຣ໌ ຈຶ່ງເຂົ້າໄປຫາເສຣษฐີຜູ້ຄຫບໍດີ ແລ້ວໄດ້ຖາມວ່າ ທ່ານຄຫບໍດີຂ້ານ້ອຍ ພໍ່ຍສກຸລບຸຕຣ໌ຂອງທ່ານຫາຍໄປໃສ? ຝ່າຍ

ເສຣບກືຜູ້ຄຫບໍດີສົ່ງທູຕຂີ່ມ້າໄປຕາມຫາທັ້ງ ໔ ທິສແລ້ວ ສ່ວນຕົວເອງໄປຫາທາງປ່າອິສິປຕນະມຣຶຄທາຍວັນ. ໄດ້ພົບເກີບທອງວາງຢູ່ ຄັ້ນແລ້ວຈຶ່ງຕາມໄປສູ່ທີ່ນັ້ນ. ພຣະຜູ້ມີພຣະພາຄໄດ້ທອດພຣະເນຕຣ໌ເຫັນ ເສຣບກືຜູ້ຄຫບໍດີມາແຕ່ໄກລ. ຄັ້ນແລ້ວທຣົງພຣະດຳຣິວ່າ ແນວໃດນໍ ເຣົາຄວຣບັນດາລອິທສາກືສັງຂາຣໃຫ້ ເສຣບກືຄຫບໍດີນັ່ງຢູ່ ໓ ທີ່ນີ້ ບໍ່ເຫັນຍສກຸລບຸຕຣ໌ຜູ້ນັ່ງຢູ່ ໓ ທີ່ນີ້ ແລ້ວທຣົງບັນດາລອິທສາກືສັງຂາຣ ດັ່ງພຣະພຸທສດຳຣິ. ຄັ້ງນັ້ນ ເສຣບກືຜູ້ຄຫບໍດີໄດ້ເຂົ້າເຝົ້າພຣະຜູ້ມີພຣະພາຄແລ້ວທູລຖາມວ່າ ພຣະຜູ້ມີພຣະພາຄ ທຣົງເຫັນຍສກຸລບຸຕຣ໌ແດ່ບໍ່ ພຣະພຸທສເຈົ້າຂ້ານ້ອຍ?

ພຣະຜູ້ມີພຣະພາຄຕຣັສວ່າ ດູຣາຄຫບໍດີ ຖ້າຢ່າງນັ້ນ ເຊີນນັ່ງ ບາງເທື່ອທ່ານນັ່ງຢູ່ ໓ ທີ່ນີ້ ອາຈຈະໄດ້ເຫັນຍສກຸລບຸຕຣ໌ຜູ້ນັ່ງຢູ່ ໓ ທີ່ນີ້.

ຄັ້ງນັ້ນ ເສຣບກືຜູ້ຄຫບໍດີຣ່າເຣີງບັນເທີງໃຈວ່າ ໄດ້ຍິນວ່າ ເຣົານັ່ງຢູ່ ໓ ທີ່ນີ້ແຫຼະ ຈັກເຫັນ ຍສກຸລບຸຕຣ໌ຜູ້ນັ່ງຢູ່ ໓ ທີ່ນີ້ ຈຶ່ງຖວາຍບັງຄົມພຣະຜູ້ມີພຣະພາຄ ແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ. ເມື່ອ ເສຣບກືຜູ້ຄຫບໍດີນັ່ງຮຽບຮ້ອຍແລ້ວ ພຣະຜູ້ມີພຣະພາຄໄດ້ທຣົງສແດງອນຸປຸພພິກຖາ ຄື ທຣົງປະກາສ ທານກຖາ ສີລກຖາ ສັຄຄກຖາ ໂທษ ຄວາມຕ່ຳຊາມ ຄວາມເສົ້າໝອງຂອງກາມທັ້ງຫຼາຍ ແລະ ອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະຜູ້ມີພຣະພາຄທຣົງຮູ້ວ່າ ເສຣບກືຜູ້ຄຫບໍດີ ມີຈິຕສງົບ ມີຈິຕອ່ອນ ມີຈິຕປູອດຈາກນິວຣຕ໌ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະສັມມ໌ເທສນາ ທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຜ ມັຄຄ໌. ດວງຕາ ເຫັນສັມມ໌ ປູາສຈາກທຸລີ ປູາສຈາກມົລທິນວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນ ທັ້ງມວລມີຄວາມດັບເປັນສັມມດາ ໄດ້ເກີດແກ່ເສຣບກືຜູ້ຄຫບໍດີ ໓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດປູາສຈາກ ມົລທິນ ຄວຣໄດ້ຮັບນ້ຳຍ້ອມ ດັ່ງນັ້ນ.

ຄັ້ນເສຣບກືຜູ້ຄຫບໍດີ ໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປູາສຈາກຄຳສແດງຄວາມສົງສັຍ ເຖີງຄວາມເປັນ ຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ຂ້າແຕ່ ພຣະອົງຄ໌ຜູ້ຈເຣີນ ກາษິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ກາษິຕຂອງພຣະອົງຄ໌ຄັກຫຼາຍ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ທຣົງປະກາສສັມມ໌ໂດຍອເນກປຣິຍາຍຢ່າງນີ້ ປຽບເໝືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຈັກษຸຈັກເຫັນຮູປດັ່ງນີ້ ຂ້າພຣະພຸທສເຈົ້ານີ້ ຂໍເຖິງພຣະຜູ້ມີພຣະພາຄ ພຣະສັມມ໌ ແລະພຣະສົງฆ໌ ວ່າເປັນສຣຕະ ຂໍພຣະອົງຄ໌ ຈົ່ງທຣົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຕະຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ກໍເສຣບກືຜູ້ຄຫບໍດີນັ້ນ ໄດ້ເປັນອຸບາສົກກ່າວອ້າງພຣະຣັຕນຕຣັຍ ເປັນຄົນແຮກໃນໂລກ.

ຍສກຸລບຸຕຣ໌ສຳເຣັຈພຣະອຣຫັຕຕ໌

[໔໗] ຄາວເມື່ອພຣະຜູ້ມີພຣະກາຄຫຣົງສແດງຣັມມ໌ແກ່ບິດາຂອງຍສກຸລບຸຕຣ໌ ຈິຕຂອງຍສກຸລບຸຕຣ໌ ຜູ້ພິຈາຣຕາກູມີຣັມມ໌ຕາມທີ່ຕົນໄດ້ເຫັນແລ້ວ ໄດ້ຮູ້ແຈ້ງແລ້ວ ກໍພົ້ນຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຫຣົງພຣະດຳຣິວ່າ ເມື່ອເຮົາສແດງຣັມມ໌ແກ່ບິດາຂອງຍສກຸລບຸຕຣ໌ຢູ່ ຈິຕຂອງຍສກຸລບຸຕຣ໌ ຜູ້ພິຈາຣຕາເຫັນກູມີຣັມມ໌ຕາມທີ່ຕົນໄດ້ເຫັນແລ້ວ ໄດ້ຮູ້ແຈ້ງແລ້ວ ພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ. ຍສກຸລບຸຕຣ໌ບໍ່ຄວຣຈະກັບເປັນຄຣືຫັສຖ໌ບໍຣິໂກຄການ ເຫມືອນເປັນຄຣືຫັສຖ໌ຄັ້ງກ່ອນ ຖ້າຈັ່ງໃດ ເຮົາຄວຣມາຍອິທສາກິສັງຂາຣນັ້ນໄດ້ແລ້ວ. ພຣະອົງຄ໌ກໍໄດ້ຫຣົງມາຍອິທສາກິສັງຂາຣນັ້ນ. ເສຣຊກີຜູ້ຄຫບໍດີໄດ້ເຫັນຍສກຸລບຸຕຣ໌ນັ່ງຢູ່ ຄັ້ນແລ້ວໄດ້ເວົ້າກະຍສກຸລບຸຕຣ໌ວ່າ ພໍ່ຍສ ມາຣດາຂອງເຈົ້າໂສກເສົ້າຄ່ຳຄວນເຖິງ ເຈົ້າຈົ່ງໃຫ້ຊີວິຕແກ່ມາຣດາຂອງເຈົ້າເຖີດ. ຄັ້ງນັ້ນ ຍສກຸລບຸຕຣໄດ້ເຫຼືອບເບິ່ງພຣະຜູ້ມີພຣະກາຄໆ ໄດ້ຕຣັສແກ່ເສຣຊກີຜູ້ຄຫບໍດີວ່າ ດູຣາຄຫບໍດີ ທ່ານຈະສຳຄັນຄວາມຂໍ້ນັ້ນເປັນແນວໃດ? ຍສກຸລບຸຕຣໄດ້ເຫັນຣັມມ໌ດ້ວຍຍາຕທັສສນະພຽງເສຂກູມີເຫມືອນທ່ານ ເມື່ອທ່ານພິຈາຣຕາກູມີຣັມມ໌ຕາມທີ່ຕົນໄດ້ເຫັນແລ້ວ ໄດ້ຮູ້ແຈ້ງແລ້ວ ຈິຕພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ ດູຣາຄຫບໍດີ ຍສກຸລບຸຕຣ໌ຄວຣບໍ່ເພື່ອຈະກັບເປັນຄຣືຫັສຖ໌ບໍຣິໂກຄການ ເຫມືອນເປັນຄຣືຫັສຖ໌ຄັ້ງກ່ອນ?.

ເສຣຊກີຜູ້ຄຫບໍດີຂາບທູລວ່າ ຂໍ້ນັ້ນບໍ່ຄວຣເລີຍ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສຮັບຮອງວ່າ ດູຣາຄຫບໍດີ ຍສກຸລບຸຕຣໄດ້ເຫັນຣັມມ໌ດ້ວຍຍາຕທັສສນະພຽງເສຂກູມີເຫມືອນທ່ານ ເມື່ອທ່ານພິຈາຣຕາກູມີຣັມມ໌ຕາມທີ່ຕົນໄດ້ເຫັນແລ້ວ ໄດ້ຮູ້ແຈ້ງແລ້ວ ຈິຕພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ ດູຣາຄຫບໍດີ ຍສກຸລບຸຕຣ໌ບໍ່ຄວຣຈະກັບເປັນຄຣືຫັສຖ໌ບໍຣິໂກຄການ ເຫມືອນເປັນຄຣືຫັສຖ໌ຄັ້ງກ່ອນ.

ເສຣຊກີຜູ້ຄຫບໍດີຂາບທູລວ່າ ການທີ່ຈິຕຂອງຍສກຸລບຸຕຣ໌ພົ້ນຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນນັ້ນ ເປັນລາກຂອງຍສກຸລບຸຕຣ໌ ຍສກຸລບຸຕຣໄດ້ດີແລ້ວ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະກາຄມີຍສກຸລບຸຕຣ໌ເປັນປັຈຈາສມຕະ ຈົ່ງຫຣົງຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າ ເພື່ອສເວີຍໃນວັນນີ້ເຖີດ ພຣະພຸທສເຈົ້າຂ້ານ້ອຍ.ພຣະຜູ້ມີພຣະກາຄຫຣົງຮັບໂດຍດຸຜະນີກາພ. ຄັ້ນເສຣຊກີຜູ້ຄຫບໍດີຮູ້ການຮັບນິມົນຕ໌ຂອງພຣະຜູ້ມີພຣະກາຄແລ້ວ ໄດ້ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກສິຕແລ້ວກັບໄປ.

ກາລເມື່ອເສຣຊກີຜູ້ຄຫບໍດີກັບໄປແລ້ວບໍ່ນານ ຍສກຸລບຸຕຣໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສວ່າ ທ່ານຈົ່ງເປັນກິກຂຸມາເຖີດ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນເຮົາກ່າວດີແລ້ວ ທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸນັ້ນ

ສມັຍນັ້ນ ມີພຣະອຣຫັນຕ໌ເກີດຂຶ້ນໃນໂລກ ໗ ອົງຄ໌.

ຍສປັຣພຊາ ຈົບ

ມາຣດາແລະກັຣຍາເກົ່າຂອງພຣະຍສໄດ້ສັມມ໌ຈັກຂຸ5

[໔໙] ຂຕະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄທຣົງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣມີທ່ານພຣະຍສເປັນປັຈຈາສມຕະ ສເດັຈພຣະພຸທສດຳເນີນໄປສູ່ນິເວສນ໌ຂອງເສຣສຖີຜູ້ຄຫບໍດີ ຄັ້ນເຖິງແລ້ວປະທັບນັ່ງເຫນືອພຸທສອາສນ໌ທີ່ເຂົາປູລາດຖວາຍ. ລຳດັບນັ້ນ ມາຣດາແລະກັຣຍາເກົ່າຂອງທ່ານພຣະຍສພາກັນເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ. ພຣະຜູ້ມີພຣະກາຄຕຣັສອນຸປຸພພິກຖາແກ່ນາງທັ້ງສອງ ຄື ທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທສ ຄວາມຕ່ຳຊາມຄວາມເສົ້າຫມອງຂອງກາມທັ້ງຫຼາຍ ແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະຜູ້ມີພຣະກາຄທຣົງຮູ້ວ່າ ນາງທັ້ງສອງມີຈິຕສງົບ ມີຈິຕອ່ອນ ມີຈິຕປູອດຈາກນິວຣຕ໌ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະສັມມ໌ເທສນາທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄືທຸກຂ໌ ສມຸທັຍ ນິໂຣສ ມັຄຄ໌. ດວງຕາເຫັນສັມມ໌ ປາສຈາກທຸລີ ປາສຈາກມົລທິນວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ໄດ້ເກີດແກ່ນາງທັ້ງສອງ ຓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດປາສຈາກມົລທິນ ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີ ດັ່ງນັ້ນ. ມາຣດາແລະກັຣຍາເກົ່າຂອງທ່ານພຣະຍສໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂ້າແຕ່ພຣະອົງຄ໌ຜູ້ຈເຣີນກາບິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ກາບິຕຂອງພຣະອົງຄ໌ຄັກຫຼາຍ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ທຣົງປະກາສສັມມ໌ໂດຍອເນກປຣິຍາຍ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່

ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຈັກຫຸຈັກເຫັນຮູປ ດັ່ງນີ້ ຂ້ານ້ອຍທັ້ງສອງນີ້ ຂໍເຖິງພຣະຜູ້ມີພຣະພາຄ ພຣະທັມມ໌ ແລະພຣະພິກຂຸສົງຄ໌ວ່າເປັນສຣຕະ ຂໍພຣະອົງຄ໌ຈົ່ງທຣົງຈຳຂ້ານ້ອຍທັ້ງສອງວ່າ ເປັນອຸບາສິກາຜູ້ມອບຊີວິຕເຖິງສຣຕະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ກໍມາຣດາແລະພັຣຍາເກົ່າຂອງທ່ານພຣະຍສ ໄດ້ເປັນອຸບາສິກາ ກ່າວອ້າງພຣະຣັຕນຕຣັຍເປັນຊຸດທຳອິດໃນໂລກ. ຄັ້ງນັ້ນ ມາຣດາບິດາແລະພັຣຍາເກົ່າຂອງທ່ານພຣະຍສໄດ້ອັງຄາສພຣະຜູ້ມີພຣະພາຄແລະທ່ານພຣະຍສ ດ້ວຍຂາທນີຍໂພຊນີຍາຫາຣອັນປະນີຕດ້ວຍມືຂອງຕົນໆ ຈົນໃຫ້ຫ້າມພັຕ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ແລ້ວ ຈຶ່ງນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ. ຂຓະນັ້ນ ພຣະຜູ້ມີພຣະພາຄທຣົງຊີ້ແຈງໃຫ້ມາຣດາບິດາ ແລະພັຣຍາເກົ່າຂອງທ່ານພຣະຍສ ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງ ດ້ວຍທັມມີກະຖາ ແລ້ວສເດັຈລຸກຈາກອາສນະກັບໄປ.

ສຫາຍຄຣິຫັສຖ໌ ໔ ຄົນຂອງພຣະຍສອອກບັຣພຊາ

[໑໐] ສຫາຍຄຣິຫັສຖ໌ ໔ ຄົນຂອງທ່ານພຣະຍສ ຄື ວິມົລ ໑ ສຸພາຫຸ ໑ ປຸຓຓຊິ ໑ ຄວັມປຕິ ໑ ເປັນບຸຕຣ໌ຂອງສກຸລເສຣຍຖີສືບໆ ມາ ໃນພຣະນຄຣພາຣາຓສີ ໄດ້ຮູ້ຂ່າວວ່າ ຍສກຸລບຸຕຣ໌ແຖຜົມແລະໜວດ ນຸ່ງຫົ່ມຜ້າກາສາຍະ ອອກຈາກເຮືອນ ບວຊເປັນບັຣພຊິຕແລ້ວ. ຄັ້ນຮູ້ດັ່ງນັ້ນແລ້ວໄດ້ດຳຣິວ່າ ທັມມ໌ວິນັຍແລະບັຣພຊາທີ່ຍສກຸລບຸຕຣ໌ ແຖຜົມແລະໜວດນຸ່ງຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕແລ້ວນັ້ນ ຄົງບໍ່ຕ່ຳຊາມແນ່ນອນ ດັ່ງນີ້ ຈຶ່ງພາກັນເຂົ້າໄປຫາທ່ານພຣະຍສ ອະພິວາທແລ້ວໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຈຶ່ງທ່ານພຣະຍສພາສຫາຍຄຣິຫັສຖ໌ທັ້ງ ໔ ນັ້ນ ເຂົ້າເຝົ້າພຣະຜູ້ມີພຣະພາຄຖວາຍບັງຄົມແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ສຫາຍຄຣິຫັສຖ໌ຂອງຂ້າພຣະອົງຄ໌ ໔ ຄົນນີ້ ຊື່ ວິມົລ ໑ ສຸພາຫຸ ໑ ປຸຓຓຊິ ໑ ຄວັມປຕິ ໑ ເປັນບຸຕຣ໌ຂອງສກຸລເສຣຍຖີສືບໆ ມາໃນພຣະນຄຣພາຣາຓສີ ຂໍພຣະຜູ້ມີພຣະພາຄໂປຼດປະທານໂອວາທສັ່ງສອນສຫາຍຂອງຂ້າພຣະອົງຄ໌ເຫຼົ່ານີ້.

ພຣະຜູ້ມີພຣະພາຄທຣົງສແດງອນຸປຸພພີກະຖາແກ່ພວກເຂົາ ຄື ທຣົງປະກາສທານກະຖາ ສີລກະຖາສັຄຄກະຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າໝອງຂອງກາມທັ້ງຫຼາຍ ແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະຜູ້ມີພຣະພາຄທຣົງຮູ້ວ່າ ພວກເຂົາມີຈິຕສງົບ ມີຈິຕອ່ອນ ມີຈິຕປຼອດຈາກນິວຣຓ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະທັມມ໌ເທສນາທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຘ ມັຄຄ໌. ດວງຕາເຫັນທັມມ໌

ປຸາສຈາກສຸລີ ປຸາສຈາກມົລທິນ ວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລ ມີຄວາມດັບເປັນສັມມດາ ໄດ້ເກີດແກ່ພວກເຂົາ ໓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດປຸາສຈາກມົລທິນ ຄວຣ ໄດ້ຮັບນ້ຳຍ້ອມເປັນຢ່າງດີ ດັ່ງນັ້ນ. ພວກເຂົາໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຸາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄ ວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພວກຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີ ພຣະກາຄ.ພຣະຜູ້ມີພຣະກາຄຕຣັສວ່າ ພວກທ່ານຈົ່ງເປັນກິກຂຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນ ເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

ຕໍ່ມາ ພຣະຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນກິກຂຸເຫຼົ່ານັ້ນດ້ວຍສັມມີກຖາ. ເມື່ອພຣະ ຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນກິກຂຸເຫຼົ່ານັ້ນດ້ວຍສັມມີກຖາ ຈິຕຂອງກິກຂຸເຫຼົ່ານັ້ນ ພົ້ນແລ້ວ ຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ.

ສມັຍນັ້ນ ມີພຣະອຣຫັນຕ໌ເກີດຂຶ້ນໃນໂລກ ໑໑ ອົງຄ໌.

ສຫາຍຄຣິຫັສຖ໌ ໔ ຄົນ ຂອງພຣະຍສອອກບັຣພຊາ ຈົບ.

ສຫາຍຄຣິຫັສຖ໌ ໕໐ ຄົນ ຂອງພຣະຍສອອກບັຣພຊາ

[໓໑] ສຫາຍຄຣິຫັສຖ໌ຂອງທ່ານພຣະຍສ ເປັນຊາວຊົນບົທຈຳນວນ ໕໐ ຄົນ ເປັນບຸຕຣ໌ຂອງ ສກຸລເກົ່າສືບໆ ກັນມາ ໄດ້ຮູ້ຂ່າວວ່າ ຍສກຸລບຸຕຣ໌ ແຖຜົມແລະໜວດ ນຸ່ງຫົ່ມຜ້າກາສາຍະ ອອກ ຈາກເຮືອນບວຊເປັນບັຣພຊິຕແລ້ວ. ຄັ້ນຮູ້ດັ່ງນັ້ນແລ້ວໄດ້ດຳຣິວ່າ ສັມມ໌ວິນັຍແລະບັຣພຊາທີ່ ຍສກຸລບຸຕຣ໌ແຖຜົມແລະໜວດ ນຸ່ງຫົ່ມຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕແລ້ວນັ້ນ ຄົງບໍ່ ຕ່ຳຊາມແນ່ນອນ ດັ່ງນີ້ ຈຶ່ງພາກັນເຂົ້າໄປຫາທ່ານພຣະຍສ ອກິວາທແລ້ວໄດ້ຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ຈຶ່ງທ່ານພຣະຍສພາສຫາຍຄຣິຫັສຖ໌ຈຳນວນ ໕໐ ຄົນນັ້ນເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວນັ່ງ ໓

ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ສຫາຍຄຣືຫັສຖ໌ຂອງຂ້າພຣະອົງຄ໌ເຫຼົ່ານີ້ເປັນຊາວຊົນບົທ ເປັນບຸຕຣ໌ຂອງສກຸລເກົ່າສືບໆ ກັນມາ ຂໍພຣະຜູ້ມີພຣະກາຄໂປຼດປະທານໂອວາທສັ່ງສອນສຫາຍຂອງຂ້າພຣະອົງຄ໌ເຫຼົ່ານີ້.

ພຣະຜູ້ມີພຣະກາຄທຣົງສແດງອນຸປຸພພິກຖາແກ່ພວກເຂົາ ຄື ທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າໝອງຂອງກາມທັ້ງຫຼາຍ ແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະຜູ້ມີພຣະກາຄທຣົງຮູ້ວ່າ ພວກເຂົາມີຈິຕສງົບ ມີຈິຕອ່ອນ ມີຈິຕປຼອດຈາກນິວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະທັມມ໌ເທສນາ ທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຣ ມັຄຄ໌. ດວງຕາເຫັນທັມມ໌ ປຼາສຈາກທຸລີ ປຼາສຈາກມົລທິນ ວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນທັມມດາ ໄດ້ເກີດແກ່ພວກເຂົາ ໓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດປຼາສຈາກມົລທິນ ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີດັ່ງນັ້ນ. ພວກເຂົາໄດ້ເຫັນທັມມ໌ແລ້ວ ໄດ້ບັຣລຸທັມມ໌ແລ້ວ ໄດ້ຮູ້ທັມມ໌ແຈ່ມແຈ້ງແລ້ວ ມີທັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຼາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພວກຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າພວກທ່ານຈົ່ງເປັນກິກຂຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ທັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

ຕໍ່ມາພຣະຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນກິກຂຸເຫຼົ່ານັ້ນ ດ້ວຍທັມມີກຖາ. ເມື່ອພຣະຜູ້ມີພຣະກາຄທຣົງປະທານໂອວາທສັ່ງສອນກິກຂຸເຫຼົ່ານັ້ນດ້ວຍທັມມີກຖາ ຈິຕຂອງກິກຂຸເຫຼົ່ານັ້ນພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ.

ສມັຍນັ້ນ ມີພຣະອຣຫັນຕ໌ເກີດຂຶ້ນໃນໂລກ ໖໑ ອົງຄ໌.

ສຫາຍຄຣືຫັສຖ໌ ໕໐ ຄົນ ຂອງພຣະຍສອອກບັຣພຊາ ຈົບ.

ເຣື່ອງພົ້ນຈາກບ່ວງ

[໓໔] ຄັ້ງນັ້ນ ພຣະຜູ້ມີພຣະພາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຣົາພົ້ນແລ້ວຈາກບ່ວງທັ້ງປວງ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸษຍ໌ ແມ້ພວກທ່ານກໍພົ້ນແລ້ວຈາກບ່ວງທັ້ງປວງ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸษຍ໌ ພວກທ່ານຈົ່ງທ່ຽວຈາຣິກ ເພື່ອປະໂຍຊນ໌ແລະຄວາມສຸຂແກ່ຊົນໝູ່ຫຼາຍ ເພື່ອອນຸເຄາະຫ໌ໂລກ ເພື່ອປະໂຍຊນ໌ເກື້ອກູລແລະຄວາມສຸຂແກ່ທວຍເທພແລະມນຸษຍ໌ ພວກທ່ານຢ່າໄດ້ໄປຣວມທາງດຽວກັນສອງອົງຄ໌ ຈົ່ງສແດງສັມມ໌ງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ຈົ່ງປະກາສພຣົຫ໌ມຈັຣຍ໌ພ້ອມທັ້ງອັຖທັ້ງພຍັຍຊນະຄົບບໍຣິບູຣຄ໌ບໍຣິສຸທສິ໌ ສັຕວ໌ທັ້ງຫຼາຍຈຳພວກທີ່ມີທຸລີຄືກິເລສໃນຈັກຂຸນ້ອຍ ມີຢູ່ ເພາະບໍ່ໄດ້ຟັງສັມມ໌ຍ່ອມເສື່ອມ ຜູ້ຮູ້ທົ່ວເຖິງສັມມ໌ ຈັກມີ ດູຣາພິກຂຸທັ້ງຫຼາຍ ແມ້ເຣົາກໍຈັກໄປຍັງຕາແສງອຸຣຸເວລາເສນານິຄົມ ເພື່ອສແດງສັມມ໌.

ເຣື່ອງພົ້ນຈາກບ່ວງ ຈົບ.

ເຣື່ອງມາຣ

[໓໕] ຄັ້ງນັ້ນ ມາຣຜູ້ມີໃຈບາປເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຄັ້ນແລ້ວໄດ້ທູລພຣະຜູ້ມີພຣະພາຄດ້ວຍຄາຖາວ່າ

ທ່ານເປັນຜູ້ອັນບ່ວງທັ້ງປວງ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸษຍ໌ ຜູກພັນໄວ້ແລ້ວ ທ່ານເປັນຜູ້ອັນເຄື່ອງຜູກໃຫຍ່ຣັດຕຶງແລ້ວ ແນ່ະສມຕະ ທ່ານຈະບໍ່ພົ້ນເຣົາ.

ພຣະຜູ້ມີພຣະພາຄຕຣັສຕອບວ່າ ເຣົາເປັນຜູ້ພົ້ນແລ້ວຈາກບ່ວງທັ້ງປວງ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸษຍ໌ ເຣົາເປັນຜູ້ພົ້ນແລ້ວຈາກເຄື່ອງຜູກໃຫຍ່ ດູຣາມາຣ ທ່ານຖືກເຣົາກຳຈັດເສັຽແລ້ວ.

ມາຣຂາບທູລວ່າ ບ່ວງນີ້ທ່ຽວໄປໄດ້ໃນອາກາສ ເປັນຂອງມີໃນຈິຕ ສັຄຈຣຢູ່ ເຣົາຈັກຜູກຣັດທ່ານດ້ວຍບ່ວງນັ້ນ ແນ່ະສມຕະ ທ່ານຈະບໍ່ພົ້ນເຣົາ.

ພຣະຜູ້ມີພຣະພາຄຕຣັສຕອບວ່າ ເຣົາປູາສຈາກຄວາມພໍໃຈໃນອາຣົມມ໌ເຫຼົ່ານີ້ ຄື ຣູປ ສຽງ ກິ່ນ ຣົສ ໂຜຕັພພະ ອັນເປັນທີ່ຣື່ນຣົມຍ໌ໃຈ ດູຣາມາຣ ທ່ານຖືກເຣົາກຳຈັດເສັຽແລ້ວ.

ຄັ້ງນັ້ນ ມາຣຜູ້ມີໃຈບາປຮູ້ວ່າ ພຣະຜູ້ມີພຣະພາຄທຣົງຮູ້ຈັກເຣົາ ພຣະສຸຄົຕທຣົງຮູ້ຈັກເຣົາ ດັ່ງນີ້ແລ້ວມີທຸກຂ໌ ເສັຽໃຈ ຫາຍໄປໃນທີ່ນັ້ນເອງ.

ເຣື່ອງມາຣ ຈົບ.

ທຣົງອນຸຍາຕບັຣພຊາແລະອຸປສົມບົທດ້ວຍໄຕຣສຣຕຄົມນ໌

[໑໔] ກໍໂດຍສມັຍນັ້ນ ກິກຍຸທັ້ງຫຼາຍພາກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະຜູ້ມຸ່ງອຸປສົມບົທ ມາຈາກ ທິສຕ່າງໆ ຈາກຊົນບົທຕ່າງໆ ດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະກາຄຈັກໃຫ້ພວກເຂົາບັຣພຊາອຸປສົມບົທ. ໃນ ເພາະເຫຕຸນັ້ນ ທັ້ງພວກກິກຍຸ ທັ້ງກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະກຸລບຸຕຣ໌ຜູ້ມຸ່ງອຸປສົມບົທ ຍ່ອມລຳບາກ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບໃນທີ່ສງັດ ຫລີກເຣັ້ນຢູ່ ມີພຣະທັຍປຣິວິຕົກເກີດຂຶ້ນຢ່າງນີ້ວ່າ ບັດນີ້ ກິກຍຸທັ້ງຫຼາຍພາກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະຜູ້ມຸ່ງອຸປສົມບົທມາຈາກທິສຕ່າງໆ ຈາກຊົນບົທຕ່າງໆ ດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະກາຄຈັກໃຫ້ພວກເຂົາບັຣພຊາ ອຸປສົມບົທ ໃນເພາະເຫຕຸນັ້ນ ທັ້ງພວກກິກຍຸ ທັ້ງກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະກຸລບຸຕຣ໌ຜູ້ມຸ່ງອຸປສົມບົທ ຍ່ອມລຳບາກ ບໍ່ດັ່ງນັ້ນ ເຮົາຄວຣອນຸຍາຕແກ່ກິກຍຸ ທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ບັດນີ້ ພວກທ່ານນັ່ນແຫຼະຈົ່ງໃຫ້ກຸລບຸຕຣ໌ທັ້ງຫຼາຍບັຣພຊາອຸປສົມບົທ ໃນທິສນັ້ນໆ ໃນຊົນບົທນັ້ນໆ ເຖີດ. ຄັ້ນເວລາເຢັນ ສເດັຈອອກຈາກທີ່ເຣັ້ນ ຮັບສັ່ງໃຫ້ປະຊຸມກິກຍຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ທຣົງທຳທັມມີກຖາແລ້ວ ຮັບສັ່ງກັບກິກຍຸ ທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເຮົາໄປໃນທີ່ສງັດ ຫລີກເຣັ້ນຢູ່ ໓ ທີ່ນີ້ ໄດ້ມີໃຈປຣິວິຕົກເກີດຂຶ້ນຢ່າງນີ້ ວ່າ ບັດນີ້ ກິກຍຸທັ້ງຫຼາຍພາກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະຜູ້ມຸ່ງອຸປສົມບົທ ມາຈາກທິສຕ່າງໆ ຈາກຊົນບົທ ຕ່າງໆ ດ້ວຍຕັ້ງໃຈວ່າ ພຣະຜູ້ມີພຣະກາຄຈັກໃຫ້ພວກເຂົາບັຣພຊາອຸປສົມບົທ ໃນເພາະເຫຕຸນັ້ນ ທັ້ງພວກ ກິກຍຸ ທັ້ງກຸລບຸຕຣ໌ຜູ້ມຸ່ງບັຣພຊາ ແລະກຸລບຸຕຣ໌ຜູ້ມຸ່ງອຸປສົມບົທ ຍ່ອມລຳບາກ ບໍ່ດັ່ງນັ້ນ ເຮົາຄວຣອນຸຍາຕ ແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ບັດນີ້ ພວກທ່ານນັ່ນແຫຼະຈົ່ງໃຫ້ກຸລບຸຕຣ໌ທັ້ງຫຼາຍບັຣພຊາ ອຸປສົມບົທໃນທິສນັ້ນໆ ໃນຊົນບົທນັ້ນໆ ເຖີດ. ດູຣາກິກຍຸທັ້ງຫຼາຍ ບັດນີ້ ເຮົາອນຸຍາຕ ພວກທ່ານ ນັ່ນແຫຼະຈົ່ງໃຫ້ກຸລບຸຕຣ໌ທັ້ງຫຼາຍບັຣພຊາອຸປສົມບົທ ໃນທິສນັ້ນໆ ໃນຊົນບົທນັ້ນໆ ເຖີດ.

ດູຣາກິກຍຸທັ້ງຫຼາຍ ກໍແລພວກທ່ານຄວຣໃຫ້ກຸລບຸຕຣ໌ບັຣພຊາອຸປສົມບົທຢ່າງນີ້:-

ຊັ້ນແຮກ ພວກທ່ານຄວຣໃຫ້ກຸລບຸຕຣ໌ຜູ້ມຸ່ງບັຣພຊາແລະຜູ້ມຸ່ງອຸປສົມບົທ ແຖຜົມແລະຫນວດ ແລ້ວ ໃຫ້ນຸ່ງຜ້າກາສາຍະ ໃຫ້ທຳຜ້າອຸຕຣາສົງຄ໌ພາດບ່າ ໃຫ້ຂາບຕີນກິກຍຸທັ້ງຫຼາຍແລ້ວ ໃຫ້ນັ່ງຫຢອງຫຢ້ ປະຄອງອັຍຊລີສັ່ງວ່າ ທ່ານຈົ່ງວ່າຢ່າງນີ້ ແລ້ວໃຫ້ວ່າສຣຕຄົມນ໌ ດັ່ງນີ້:-

ຂ້າພເຈົ້າເຖິງພຣະພຸທສເຈົ້າເປັນທີ່ເພິ່ງ

ຂ້າພເຈົ້າເຖິງພຣະທັມມ໌ເປັນທີ່ເພິ່ງ

ຂ້າພເຈົ້າເຖິງພຣະສົງຄ໌ເປັນທີ່ເພິ່ງ

ແມ້ວາຣະທີ່ ໔ ຂ້າພເຈົ້າເຖິງພຣະພຸທສເຈົ້າເປັນທີ່ເພິ່ງ

ແມ້ວາຣະທີ່ ໔ ຂ້າພເຈົ້າເຖິງພຣະສັມມ໌ເປັນທີ່ເພິ່ງ

ແມ້ວາຣະທີ່ ໔ ຂ້າພເຈົ້າເຖິງພຣະສົງໝ໌ເປັນທີ່ເພິ່ງ

ແມ້ວາຣະທີ່ ໓ ຂ້າພເຈົ້າເຖິງພຣະພຸທສເຈົ້າເປັນທີ່ເພິ່ງ

ແມ້ວາຣະທີ່ ໓ ຂ້າພເຈົ້າເຖິງພຣະສັມມ໌ເປັນທີ່ເພິ່ງ

ແມ້ວາຣະທີ່ ໓ ຂ້າພເຈົ້າເຖິງພຣະສົງໝ໌ເປັນທີ່ເພິ່ງ

ດູຣາພິກສຸທັ້ງຫຼາຍ ເຮົາອນຸຍາຕບັຣພຊາອຸປສົມບົທ ດ້ວຍໄຕຣສຣຕຄົມນ໌ນີ້.

ກຖາວ່າດ້ວຍອຸປສົມບົທດ້ວຍໄຕຣສຣຕຄົມນ໌ ຈົບ.

ທຣົງປະທານໂອວາທແກ່ກິກສຸສົງໝ໌

[໓໕] ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງຈຳພັຣສາແລ້ວ ຮັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ເພາະທຳໃນໃຈໂດຍແຍບຄາຍ ເພາະຕັ້ງຄວາມພຽຣຊອບໂດຍແຍບຄາຍ ເຮົາຈຶ່ງໄດ້ບັຣລຸອນຸຕຕຣວິມຸຕິ ຈຶ່ງໄດ້ທຳອນຸຕຕຣວິມຸຕິໃຫ້ແຈ້ງ ແມ້ພວກທ່ານກໍໄດ້ບັຣລຸອນຸຕຕຣວິມຸຕິ ທຳອນຸຕຕຣວິມຸຕິໃຫ້ແຈ້ງ ເພາະທຳໃນໃຈໂດຍແຍບຄາຍ ເພາະຕັ້ງຄວາມພຽຣຊອບໂດຍແຍບຄາຍ.

ຄັ້ງນັ້ນ ມາຣຜູ້ມີໃຈບາປເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນແລ້ວໄດ້ທູລພຣະຜູ້ມີພຣະກາຄດ້ວຍຄາຖາວ່າ

ທ່ານເປັນຜູ້ອັນບ່ວງມາຣ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸສຍ໌ຜູກພັນໄວ້ແລ້ວ ທ່ານເປັນຜູ້ອັນເຄື່ອງຜູກແຫ່ງມາຣຣັດຕຶງແລ້ວ ແນ່ະສມຕະ ທ່ານຈະບໍ່ພົ້ນເຮົາ.

ພຣະຜູ້ມີພຣະກາຄຕຣັສຕອບວ່າ ເຮົາເປັນຜູ້ພົ້ນແລ້ວຈາກບ່ວງມາຣ ທັ້ງທີ່ເປັນຂອງທິພຍ໌ ທັ້ງທີ່ເປັນຂອງມນຸສຍ໌ ເຮົາເປັນຜູ້ພົ້ນແລ້ວຈາກເຄື່ອງຜູກແຫ່ງມາຣ ດູຣາມາຣ ທ່ານຖືກເຮົາກຳຈັດເສັຽແລ້ວ.

ຄັ້ງນັ້ນ ມາຣຜູ້ມີໃຈບາປຮູ້ວ່າ ພຣະຜູ້ມີພຣະກາຄທຣົງຮູ້ຈັກເຮົາ ພຣະສຸຄົຕທຣົງຮູ້ຈັກເຮົາ ດັ່ງນີ້ແລ້ວມີທຸກຂ໌ ເສັຽໃຈ ຫາຍໄປໃນທີ່ນັ້ນເອງ.

ເຣື່ອງສຫາຍກັທທວັຄຄີຍ໌

[໓໖] ຄັ້ນພຣະຜູ້ມີພຣະກາຄປະທັບຢູ່ທີ່ພຣະນຄຣພາຣາຓສີຕາມພຣະພຸທສາພິຣົມຍ໌ ແລ້ວສເດັຈຈາຣິກໄປໂດຍມັຄຄາອັນຈະໄປສູ່ຕາແສງອຸຣຸເວລາ ແລະທຣົງແວະຈາກທາງ ແລ້ວສເດັຈເຂົ້າໄປຍັງໄພຣສົຓທ໌ແຫ່ງນຶ່ງ ຄັ້ນເຖິງໄພຣສົຓທ໌ນັ້ນແລ້ວ ປະທັບນັ່ງ ຓ ໂຄນໄມ້ຕົ້ນນຶ່ງ.

ກໍໂດຍສມັຍນັ້ນແລ ສຫາຍກັທທວັຄຄີຍ໌ຈຳນວນ ໓໐ ຄົນ ພ້ອມດ້ວຍປຊາບໍດີບຳເຣີກັນຢູ່ ໓ ໄພຣສົຕບ໌ແຫ່ງນັ້ນ. ສຫາຍຄົນນຶ່ງບໍ່ມີປຊາບໍດີ. ສຫາຍທັ້ງຫຼາຍຈຶ່ງໄດ້ນຳຍິງແພສຍາມາເພື່ອ ປະໂຍຊນ໌ແກ່ເຂົາ. ຕໍ່ມາຍິງແພສຍານັ້ນ ເມື່ອພວກສຫາຍນັ້ນເຜີຕົວມົວບຳເຣີກັນຢູ່ ໄດ້ລັກ ເຄື່ອງປະດັບຫນີໄປ. ຈຶ່ງພວກສຫາຍນັ້ນ ເມື່ອຈະທຳການຊ່ອຍເຫລືອສຫາຍ ທ່ຽວຕາມຫາຍິງແພສຍາ ນັ້ນ ໄປເຖິງໄພຣສົຕບ໌ແຫ່ງນັ້ນ ໄດ້ເຫັນພຣະຜູ້ມີພຣະກາຄປະທັບນັ່ງຢູ່ ໓ ໂຄນໄມ້ຕົ້ນນຶ່ງ ຄັ້ນແລ້ວ ຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ແລ້ວໄດ້ທູລຖາມພຣະຜູ້ມີພຣະກາຄວ່າ ພຣະຜູ້ມີພຣະກາຄເຫັນຍິງແດ່ບໍ່ ເຈົ້າຂ້າ?

ພຣະຜູ້ມີພຣະກາຄທຣົງຍ້ອນຖາມວ່າ ດູຣາກຸມາຣທັ້ງຫຼາຍ ພວກທ່ານຈະຕ້ອງການຫຍັງນຳ ຍິງລະ?

ກັທ. ຂ້ານ້ອຍ ພວກຂ້າພເຈົ້າເປັນສຫາຍກັທທວັຄຄີຍ໌ຈຳນວນ ໓໐ ຄົນ ໃນຕາແສງນີ້ ພ້ອມດ້ວຍ ປຊາບໍດີ ບຳເຣີກັນຢູ່ໃນໄພຣສົຕບ໌ແຫ່ງນີ້ ສຫາຍຄົນນຶ່ງບໍ່ມີປຊາບໍດີ ພວກຂ້າພເຈົ້າຈຶ່ງໄດ້ນຳຍິງ ແພສຍາມາເພື່ອປະໂຍຊນ໌ແກ່ເຂົາ ຕໍ່ມາ ຍິງແພສຍານັ້ນ ເມື່ອພວກຂ້າພເຈົ້າເຜີຕົວມົວບຳເຣີກັນຢູ່ ໄດ້ລັກເຄື່ອງປະດັບຫນີໄປ ເພາະເຫຕຸນັ້ນ ພວກຂ້າພຣະອົງຄ໌ຜູ້ເປັນສຫາຍກັນ ເມື່ອຈະທຳການຊ່ອຍເຫລືອ ສຫາຍ ຈຶ່ງທ່ຽວຕາມຫາຍິງນັ້ນມາເຖິງໄພຣສົຕບ໌ແຫ່ງນີ້ ເຈົ້າຂ້າ.

ກ. ດູຣາກຸມາຣທັ້ງຫຼາຍ ພວກທ່ານສຳຄັນຄວາມຂໍ້ນັ້ນເປັນແນວໃດ ຂໍ້ທີ່ພວກທ່ານສແວງຫາຍິງ ຫຼືສແວງຫາຕົນນັ້ນ ຢ່າງໃດເປັນຄວາມດີຂອງພວກທ່ານລະ?

ກັທ. ຂໍ້ທີ່ພວກຂ້າພຣະອົງຄ໌ສແວງຫາຕົນນັ້ນແລ ເປັນຄວາມດີຂອງພວກຂ້າພເຈົ້າ ເຈົ້າຂ້າ.

ກ. ດູຣາກຸມາຣທັ້ງຫຼາຍ ຖ້າຢ່າງນັ້ນພວກທ່ານນັ່ງລົງເຖີດ ເຮົາຈັກສແດງສັມມ໌ແກ່ພວກທ່ານ.

ພວກສຫາຍກັທທວັຄຄີຍ໌ເຫຼົ່ານັ້ນ ຮັບພຣະພຸທສາຕັຕິພົຈນ໌ວ່າ ຢ່າງນັ້ນ ຂ້ານ້ອຍ ຖວາຍບັງຄົມ ພຣະຜູ້ມີພຣະກາຄແລ້ວ ນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ. ພຣະຜູ້ມີພຣະກາຄທຣົງສແດງອນຸປຸພພິກຖາ ແກ່ພວກເຂົາ ຄືທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າຫມອງຂອງ ກາມທັ້ງຫຼາຍ ແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະອົງຄ໌ທຣົງຮູ້ວ່າ ພວກເຂົາມີຈິຕສງົບ ມີຈິຕອ່ອນ ມີຈິຕປຼອດຈາກນິວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະສັມມ໌ເທສນາ ທີ່ພຣະພຸທເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຄ ມັຄຄ໌. ດວງຕາ ເຫັນສັມມ໌ ປາສຈາກທຸລີ ປາສຈາກມົລທິນວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນ ທັ້ງມວລມີຄວາມດັບເປັນສັມມດາ ໄດ້ເກີດແກ່ພວກເຂົາ ໓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດ ປາສຈາກມົລທິນ

ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີ ດັ່ງນັ້ນ. ພວກເຂົາໄດ້ເຫັນສັມມ໌ແລ້ວ ໄດ້ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປາສຈາກຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ພຣະຂ້ານ້ອຍ ພວກຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຕຣັສວ່າ ພວກທ່ານຈົ່ງເປັນພິກຂຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະອາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

ເຣື່ອງສຫາຍພັທທວັຄຄີຍ໌ ຈົບ

ທຸຕິຍພານວາຣ ຈົບ.

ເຣື່ອງຊຝິລ ໓ ອ້າຍນ້ອງ

[໑໗] ຄັ້ງນັ້ນ ພຣະຜູ້ມີພຣະພາຄສເດັຈຈາຣິກໂດຍລຳດັບ ເຖິງຕາແສງອຸຣຸເວລາແລ້ວ. ກໍໂດຍສມັຍນັ້ນແລ ຊຝິລ ໓ ຄົນ ຄື ອຸຣຸເວລກັສສປ ໑ ນທີກັສສປ ໑ ຄຍາກັສສປ ໑ ອາສັຍຢູ່ໃນຕາແສງອຸຣຸເວລາ. ບັຣດາຊຝິລ ໓ ຄົນນັ້ນ ຊຝິລຊື່ອຸຣຸເວລກັສສປ ເປັນຜູ້ນຳ ເປັນຜູ້ຝຶກສອນ ເປັນຜູ້ເລີສ ເປັນຫົວຫນ້າ ເປັນປະຊານ ຂອງຊຝິລ ໕໐໐ ຄົນ. ຊຝິລຊື່ນທີກັສສປ ເປັນຜູ້ນຳ ເປັນຜູ້ຝຶກສອນ ເປັນຜູ້ເລີສ ເປັນຫົວຫນ້າ ເປັນປະຊານ ຂອງຊຝິລ ໓໐໐ ຄົນ. ຊຝິລຊື່ຄຍາກັສສປ ເປັນຜູ້ນຳ ເປັນຜູ້ຝຶກສອນ ເປັນຜູ້ເລີສ ເປັນຫົວຫນ້າ ເປັນປະຊານ ຂອງຊຝິລ ໒໐໐ ຄົນ. ຄັ້ງນັ້ນ ພຣະຜູ້ມີພຣະພາຄໄດ້ສເດັຈເຂົ້າໄປສູ່ອາສົມຂອງຊຝິລຊື່ອຸຣຸເວລກັສສປ ແລ້ວໄດ້ຕຣັສກະຊຝິລຊື່ອຸຣຸເວລກັສສປວ່າ ດູຣາກັສສປ ຖ້າທ່ານບໍ່ຫນັກໃຈ ເຮົາຂໍອາສັຍຢູ່ໃນໂຮງບູຊາເພີງຈັກຄືນນຶ່ງ.

ອຸຣຸ. ຂ້າແຕ່ມຫາສມຓະ ຂ້າພເຈົ້າບໍ່ຫນັກໃຈເລີຍ ແຕ່ໃນໂຮງບູຊາເພີງນັ້ນມີພຍານາຄດຸຮ້າຍ ມີຣິທທິ໌ ເປັນອສຣພິษ ມີພິษຮ້າຍແຮງ ຢ່າເລີຍ ມັນຈະທຳໃຫ້ທ່ານລຳບາກ.

ແມ້ຄັ້ງທີ່ສອງ ພຣະຜູ້ມີພຣະພາຄໄດ້ຕຣັສແກ່ຊຝິລຊື່ອຸຣຸເວລກັສສປວ່າ ດູຣາກັສສປ ຖ້າທ່ານບໍ່ຫນັກໃຈ ເຮົາຂໍອາສັຍຢູ່ໃນໂຮງບູຊາເພີງຈັກຄືນນຶ່ງ.

ອຸຣຸ. ຂ້າແຕ່ມຫາສມຕະ ຂ້າພເຈົ້າບໍ່ຫນັກໃຈເລີຍ ແຕ່ໃນໂຮງບູຊາເພີງນັ້ນມີພຍານາຄດຸຮ້າຍ ມີຣິທສີ້ ເປັນອສຣພິษ ມີພິษຮ້າຍແຮງ ຢ່າເລີຍ ມັນຈະທຳໃຫ້ທ່ານລຳບາກ.

ແມ້ຄັ້ງທີ່ສາມ ພຣະຜູ້ມີພຣະກາຄໄດ້ຕຣັສແກ່ຊຝິລຊື່ອຸຣຸເວລກັສສປວ່າ ດູຣາກັສສປ ຖ້າທ່ານບໍ່ຫນັກໃຈ ເຣົາຂໍອາສັຍຢູ່ໃນໂຮງບູຊາເພີງຈັກຄືນນຶ່ງ.

ອຸຣຸ. ຂ້າແຕ່ມຫາສມຕະ ຂ້າພເຈົ້າບໍ່ຫນັກໃຈເລີຍ ແຕ່ໃນໂຮງບູຊາເພີງນັ້ນມີພຍານາຄດຸຮ້າຍ ມີຣິທສີ້ ເປັນອສຣພິษ ມີພິษຮ້າຍແຮງ ຢ່າເລີຍ ມັນຈະທຳໃຫ້ທ່ານລຳບາກ.

ກ. ບາງເທື່ອ ພຍານາຄຈະບໍ່ທຳໃຫ້ເຣົາລຳບາກ ດູຣາກັສສປ ເອົາເຖີດ ຂໍທ່ານຈົງອນຸຍາຕໂຮງບູຊາເພີງ.

ອຸຣຸ. ຂ້າແຕ່ມຫາສມຕະ ເຊີນທ່ານຢູ່ຕາມສບາຍເຖີດ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈເຂົ້າໄປສູ່ໂຮງບູຊາເພີງ ແລ້ວທຣົງປູຫຍ້າ ເຄື່ອງລາດ ປະທັບນັ່ງຄູ້ບັລລັງກ໌ ຕັ້ງພຣະກາຍຕົງ ດຳຣົງພຣະສຕິມັ່ນ.

ປາຕິຫາຣິຍ໌ທີ່ ໑

[໓໗] ຄັ້ງນັ້ນ ພຍານາຄນັ້ນໄດ້ເຫັນພຣະຜູ້ມີພຣະກາຄສເດັຈເຂົ້າໄປດັ່ງນັ້ນ ຄັ້ນແລ້ວ ມີຄວາມຕຶ້ງຄຽດບໍ່ພໍໃຈ ຈຶ່ງບັງຫວນຄວັນຂຶ້ນ. ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງດຳຣິວ່າ ແນວໃດນໍເຣົາຄວຣຄອບງຳເດຊຂອງພຍານາຄນີ້ດ້ວຍເດຊຂອງຕົນ ບໍ່ກະທົບກະທັ່ງຜິວຫນັງ ຊີ້ນ ເອັນ ກະດູກ ແລະເຍື່ອໃນກະດູກ ດັ່ງນີ້ ແລ້ວທຣົງບັນດາລອິທສາພິສັງຂາຣເຊັ່ນນັ້ນ ທຣົງບັງຫວນຄວັນແລ້ວ. ພຍານາຄນັ້ນທົນຄວາມລົບຫລູ່ບໍ່ໄດ້ ຈຶ່ງພົ່ນໄຟສູ້ໃນທັນທີ. ແມ້ພຣະຜູ້ມີພຣະກາຄກໍທຣົງເຂົ້າກສິຕສມາບັຕິມີເຕໂຊຊາຕຸເປັນອາຣົມຕ໌ບັນດາລໄຟຕ້ານທານໄວ້. ເມື່ອທັ້ງສອງຝ່າຍຮຸ່ງໄຟຂຶ້ນ ໂຮງບູຊາເພີງຮຸ່ງໂຮຈນ໌ເປັນແປວເພີງຄືໄຟລຸກໄຫມ້ທົ່ວໄປ. ຈຶ່ງຊຝິລພວກນັ້ນພາກັນລ້ອມໂຮງບູຊາເພີງ ແລ້ວກ່າວຢ່າງນີ້ວ່າ ຊາວເຣົາພຣະມຫາສມຕະຮູປງາມຄົງຖືກພຍານາຄບຽດບຽນແນ່. ຕໍ່ມາ ພຣະຜູ້ມີພຣະກາຄໄດ້ທຣົງຄອບງຳເດຊຂອງພຍານາຄນັ້ນ ດ້ວຍເດຊຂອງພຣະອົງຄ໌ ບໍ່ກະທົບກະທັ່ງຜິວຫນັງ ຊີ້ນ ເອັນ ກະດູກ ແລະເຍື່ອໃນກະດູກ ທຣົງຂົດພຍານາຄໄວ້ໃນບາຕຣ໌ ໂດຍຜ່ານຣາຕຣີນັ້ນ ແລ້ວທຣົງສແດງແກ່ຊຝິລອຸຣຸເວລກັສສປດ້ວຍພຣະພຸທສດຳຣັສວ່າ ດູຣາກັສສປ ນີ້ພຍານາຄຂອງທ່ານ ເຣົາຄອບງຳເດຊຂອງມັນດ້ວຍເດຊຂອງເຣົາແລ້ວ ຈຶ່ງຊຝິລອຸຣຸເວລກັສສປໄດ້ດຳຣິວ່າ ພຣະມຫາສມຕະມີຣິທສີ້ຫຼາຍ ມີອານຸກາພຫຼາຍແທ້ ຈຶ່ງຄອບງຳເດຊ

ຂອງພຄານາຄທີ່ດຸຮ້າຍ ມີຣິທສີ້ ເປັນອສຣພິษ ມີພິษຮ້າຍແຮງ ດ້ວຍເດຊຂອງຕົນໄດ້ ແຕ່ພຣະມຫາສມຕະນີ້ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

[໓໙] ທີ່ແມ່ນ້ຳເນຣັຄຊຣາ ພຣະຜູ້ມີພຣະກາຄໄດ້ຕຣັສກະຊຝິລອຸຣຸເວລກັສສປ ວ່າດັ່ງນີ້:-

ດູຣາກັສສປ ຖ້າທ່ານບໍ່ຫນັກໃຈ ເຮົາຂໍອາສັຍຢູ່ໃນໂຮງບູຊາເຜີງສັກມື້ນຶ່ງ.

ອຸຣຸ. ຂ້າແຕ່ມຫາສມຕະ ຂ້າພເຈົ້າບໍ່ຫນັກໃຈເລີຍ ແຕ່ຂ້າພເຈົ້າຫວັງຄວາມສຳຣາຄຈຶ່ງຫ້າມທ່ານວ່າໃນໂຮງບູຊາເຜີງນັ້ນມີພຄານາຄດຸຮ້າຍ ມີຣິທສີ້ ເປັນອສຣພິษ ມີພິษຮ້າຍແຮງ ຢ່າເລີຍ ມັນຈະທຳໃຫ້ທ່ານລຳບາກ.

ກ. ບາງເທື່ອ ພຄານາຄນັ້ນຈະບໍ່ທຳໃຫ້ເຮົາລຳບາກ ດູຣາກັສສປ ເອົາເຖີດ ທ່ານຈົ່ງອນຸຍາຕໂຮງບູຊາເຜີງ.

ພຣະຜູ້ມີພຣະກາຄທຣົງຮູ້ອຸຣຸເວລກັສສປນັ້ນວ່າ ອນຸຍາຕໃຫ້ແລ້ວ ບໍ່ທຣົງເກີ້ເຂີນ ປຼາສຈາກຄວາມຢ້ານກົວ ສເດັຈເຂົ້າໄປ.

ພຄານາຄເຫັນພຣະຜູ້ມີພຣະກາຄຜູ້ສແວງຄຸຕຄວາມດີ ສເດັຈເຂົ້າໄປແລ້ວ ບໍ່ພໍໃຈ ຈຶ່ງບັງຫວນຄວັນຂຶ້ນ.

ສ່ວນພຣະພຸທສເຈົ້າຜູ້ເປັນມນຸษຍ໌ປະເສີກ ມີພຣະທັຍດີ ມີພຣະທັຍບໍ່ຂັດເຄືອງ ທຣົງບັງຫວນຄວັນຂຶ້ນໃນທີ່ນັ້ນ.

ແຕ່ພຄານາຄທົນຄວາມລົບຫລູ່ບໍ່ໄດ້ ຈຶ່ງພົ່ນໄຟສູ້.

ສ່ວນພຣະພຸທສເຈົ້າຜູ້ເປັນມນຸษຍ໌ປະເສີກ ທຣົງຈລາດໃນກສີຕສມາບັຕິມີເຕໂຊສາຕຸເປັນອາຣົມຕ໌ໄດ້ທຣົງບັນດາລໄຟຕ້ານທານໄວ້ໃນທີ່ນັ້ນ.

ເມື່ອທັ້ງສອງຝ່າຍຮຸ່ງໄຟຂຶ້ນແລ້ວ ໂຮງບູຊາເຜີງຮຸ່ງໂຣຈນ໌ເປັນແປວເຜີງ. ພວກຊຝິລກ່າວກັນວ່າ ຊາວເຮົາ ພຣະສມຕະຮູປງາມຄົງຖືກພຄານາຄບຽດບຽນແນ່.

ຄັ້ນຣາຕຣີຜ່ານໄປ ແປວໄຟຂອງພຄານາຄບໍ່ປຼາກົຕ. ແຕ່ແປວໄຟສີຕ່າງໆ ຂອງພຣະຜູ້ມີພຣະກາຄຜູ້ທຣົງຣິທສີ້ຍັງສຖິຕຢູ່.

ພຣະຣັສມີສີຕ່າງໆ ຄືສີຂຽວ ສີແດງ ສີທັງສບາທ ສີເຫລືອງ ສີແກ້ວຜລຶກ ປຼາກົຕທີ່ພຣະກາຍພຣະອັງຄີຣສ.

ພຣະພຸທສອົງຄ໌ທຣົງຂົດພຄານາຄໄວ້ໃນບາຕຣ໌ແລ້ວ ທຣົງສແດງແກ່ພຣາຫ໌ມຕ໌ວ່າ ດູຣາກັສສປນີ້ພຄານາຄຂອງທ່ານ ເຮົາຄອບງຳເດຊຂອງມັນດ້ວຍເດຊຂອງເຮົາແລ້ວ.

ຄັ້ງນັ້ນ ຊຜິລອຸຣຸເວລກັສສປ ເລື່ອມໃສຍິ່ງນັກ ເພາະອິທຣິປາຕິຫາຣຍ໌ນີ້ຂອງພຣະຜູ້ມີພຣະພາຄ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ຂ້າແຕ່ມຫາສມຕະ ນິມົນຕ໌ຢູ່ໃນທີ່ນີ້ແຫຼະ ຂ້າພເຈົ້າຈັກບຳຣຸງທ່ານດ້ວຍກັຕຕາຫາຣປະຈຳ.

ປາຕິຫາຣິຍ໌ທີ່ ໑ ຈົບ

ປາຕິຫາຣິຍ໌ທີ່ ໔

[໔໐] ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ ຓ ໄພຣສົຕນ໌ແຫ່ງນຶ່ງ ບໍ່ໄກລຈາກອາສົມຂອງຊຜິລອຸຣຸເວລກັສສປ. ຄັ້ງນັ້ນ ທ້າວມຫາຣາຊທັ້ງ ໔ ເມື່ອຣາຕຣີປົກຖມຍາມຜ່ານໄປແລ້ວ ເປັ່ງຣັສມີງາມຍັງໄພຣສົຕນ໌ທັ້ງສິ້ນໃຫ້ສວ່າງສໄວ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຄັ້ນເຖິງແລ້ວຈຶ່ງຖວາຍບັງຄົມພຣະຜູ້ມີພຣະພາຄ ໄດ້ຢືນເຝົ້າຢູ່ທັ້ງ ໔ ທິສ ຄືກອງໄຟໃຫຍ່ດັ່ງນັ້ນ. ຕໍ່ມາຊຜິລອຸຣຸເວລກັສສປ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄໂດຍຜ່ານຣາຕຣີນັ້ນ ຄັ້ນເຖິງແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ເຖິງເວລາແລ້ວມຫາສມຕະ ກັຕຕາຫາຣແລ້ວໆ ພວກນັ້ນຄືໃຜກັນນໍ ເມື່ອຣາຕຣີປົກຖມຍາມຜ່ານໄປແລ້ວ ມີຣັສມີງາມຍັງໄພຣສົຕນ໌ທັ້ງສິ້ນໃຫ້ສວ່າງສໄວ ເຂົ້າໄປຫາທ່ານ ຄັ້ນເຖິງແລ້ວອກິວາທທ່ານ ໄດ້ຢືນຢູ່ທັ້ງ ໔ ທິສຄືກອງໄຟໃຫຍ່ດັ່ງນັ້ນ?

ພຣະຜູ້ມີພຣະພາຄຕຣັສຕອບວ່າ ດູຣາກັສສປ ພວກນັ້ນຄືທ້າວມຫາຣາຊທັ້ງ ໔ ເຂົ້າມາຫາເຮົາເພື່ອຟັງສັມມ໌.

ຄັ້ງນັ້ນ ຊຜິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທຣິ໌ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບທ້າວມຫາຣາຊທັ້ງ ໔ ເຂົ້າມາຫາເພື່ອຟັງສັມມ໌ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະພາຄສເວີຍກັຕຕາຫາຣຂອງຊຜິລອຸຣຸເວລກັສສປ ແລ້ວປະທັບຢູ່ໃນໄພຣສົຕນ໌ຕາແສງນັ້ນແລ.

ປາຕິຫາຣິຍ໌ທີ່ ໔ ຈົບ

ປາຕິຫາຣິຍ໌ທີ່ ໓

[໔໑] ຄັ້ງນັ້ນ ທ້າວສັກກະຈອມທວຍເທພ ເມື່ອຣາຕຣີປຖົມຍາມລ່ວງໄປແລ້ວ ເປັ່ງຣັສມີງາມ ຍັງໄພຣສົດທ໌ທັ້ງສິ້ນໃຫ້ສວ່າງສໄວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຄັ້ນເຖິງແລ້ວຈຶ່ງຖວາຍບັງຄົມພຣະຜູ້ມີພຣະພາຄ ໄດ້ປະທັບຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄືກອງໄຟໃຫຍ່ ງາມແລະປະນີຕກວ່າຣັສມີແຕ່ກ່ອນ. ຕໍ່ມາຊຸຝີລອຸຣຸເວລກັສສປເຂົ້າໄປເຝົ້າພຣະຜູ້ມີພຣະພາຄໂດຍຜ່ານຣາຕຣີນັ້ນ ຄັ້ນເຖິງແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ເຖິງເວລາແລ້ວ ມຫາສມຓະ ກັຕຕາຫາຣແລ້ວໆ ຜູ້ນັ້ນຄືໃຜກັນນໍ ເມື່ອຣາຕຣີປຖົມຍາມຜ່ານໄປແລ້ວ ເປັ່ງຣັສມີງາມ ຍັງໄພຣສົດທ໌ທັ້ງສິ້ນໃຫ້ສວ່າງສໄວ ເຂົ້າມາຫາທ່ານ ຄັ້ນເຖິງແລ້ວອພິວາທທ່ານ ໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄືກອງໄຟໃຫຍ່ ງາມແລະປະນີຕກວ່າຣັສມີແຕ່ກ່ອນ?

ພຣະຜູ້ມີພຣະພາຄຕຣັສຕອບວ່າ ດູຣາກັສສປ ຜູ້ນັ້ນ ຄື ທ້າວສັກກະຈອມທວຍເທພເຂົ້າມາຫາເຮົາເພື່ອຟັງທັມມ໌.

ຄັ້ງນັ້ນ ຊຸຝີລອຸຣຸກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຓະມີຣິທສິ່ຫຼາຍ ມີອານຸພາພຫຼາຍແທ້ເຖິງກັບທ້າວສັກກະຈອມທວຍເທພເຂົ້າມາຫາເພື່ອຟັງທັມມ໌ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເໝືອນເຮົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະພາຄສເວີຍກັຕຕາຫາຣຂອງຊຸຝີລອຸຣຸເວລກັສສປ ແລ້ວປະທັບຢູ່ໃນໄພຣສົດທ໌ຕາແສງນັ້ນແລ.

ປາຕິຫາຣິຍ໌ທີ່ ໓ ຈົບ

ປາຕິຫາຣິຍ໌ທີ່ ໔

[໔໒] ຄັ້ງນັ້ນ ທ້າວສຫັມບໍດີພຣົຫ໌ມ ເມື່ອຣາຕຣີປຖົມຍາມລ່ວງໄປແລ້ວ ເປັ່ງຣັສມີງາມ ຍັງໄພຣສົດທ໌ທັ້ງສິ້ນໃຫ້ສວ່າງສໄວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຄັ້ນເຖິງແລ້ວຈຶ່ງຖວາຍບັງຄົມພຣະຜູ້ມີພຣະພາຄໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄືກອງໄຟໃຫຍ່ ງາມແລະປະນີຕກວ່າຣັສມີແຕ່ກ່ອນ. ຄັ້ນລ່ວງຣາຕຣີນັ້ນ ຊຸຝີລອຸຣຸເວລກັສສປ ໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຄັ້ນເຖິງແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ເຖິງເວລາແລ້ວ ມຫາສມຓະ ກັຕຕາຫາຣແລ້ວໆ ຜູ້ນັ້ນຄືໃຜກັນນໍ ເມື່ອຣາຕຣີປຖົມຍາມຜ່ານໄປແລ້ວ ເປັ່ງຣັສມີງາມ ຍັງໄພຣສົດທ໌ທັ້ງສິ້ນໃຫ້ສວ່າງສໄວ ເຂົ້າມາຫາທ່ານ ຄັ້ນເຖິງແລ້ວອພິວາທທ່ານ ໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄືກອງໄຟໃຫຍ່ ງາມແລະປະນີຕກວ່າຣັສມີແຕ່ກ່ອນ?

ພຣະຜູ້ມີພຣະກາຄຕຣັສຕອບວ່າ ດູຣາກັສສປ ຜູ້ນັ້ນ ຄື ທ້າວສຫັມບໍດີພຣົຫ໌ມເຂົ້າມາຫາເຮົາ ເພື່ອຟັງສັມມ໌.

ຄັ້ງນັ້ນ ຊຟິລອຸຣຸເວລກັສສປໄດ້ດຳຣິວ່າ ພຣະມຫາສມຕະມີຣິທຮິ໌ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບທ້າວສຫັມບໍດີພຣົຫ໌ມເຂົ້າມາຫາເພື່ອຟັງສັມມ໌ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເວີຍກັຕຕາຫາຣຂອງຊຟິລອຸຣຸເວລກັສສປ ແລ້ວປະທັບຢູ່ໃນໄພຣສົດບ໌ຕາແສງນັ້ນແລ.

ປາຕິຫາຣິຍ໌ທີ່ ໔ ຈົບ

ປາຕິຫາຣິຍ໌ທີ່ ໕

[໔໓] ກໍໂດຍສມັຍນັ້ນແລ ຊຟິລອຸຣຸເວລກັສສປໄດ້ຕຽມກາຣບູຊາຍັລເປັນກາຣໃຫລ່. ແລະປະຊາຊົນຊາວອັງຄະແລະມຄົສທັ້ງສິ້ນ ຖືຂອງຄ້ຽວຂອງບໍຣິໂກຄເປັນອັນຫຼາຍ ບ່າຍຫນ້າມຸ່ງໄປຫາ. ຈຶ່ງຊຟິລອຸຣຸເວລກັສສປໄດ້ດຳຣິວ່າ ບັດນີ້ ເຮົາໄດ້ຕຽມກາຣບູຊາຍັລເປັນກາຣໃຫລ່ ແລະປະຊາຊົນຊາວອັງຄະແລະມຄົສທັ້ງສິ້ນ ໄດ້ນຳຂອງຄ້ຽວຂອງບໍຣິໂກຄເປັນອັນມາກບ່າຍຫນ້າມຸ່ງມາຫາ ຖ້າພຣະມຫາສມຕະຈະທຳອິທຣິປາຕິຫາຣິຍ໌ໃນຫມູ່ມຫາຊົນ ລາກສັກກາຣະຈັກຈເຣີລຍິ່ງແກ່ພຣະມຫາສມຕະ ລາກສັກກາຣະຂອງເຮົາຈັກເສື່ອມ ໂອ ເຮັດແນວໃດ ມື້ອື່ນນີ້ ພຣະມຫາສມຕະຈຶ່ງຈະບໍ່ມາລົນ. ຄັ້ງນັ້ນ ພຣະຜູ້ມີພຣະກາຄຫຣົງຮູ້ຄວາມປຣິວິຕົກແຫ່ງຈິຕຂອງຊຟິລອຸຣຸເວລກັສສປດ້ວຍພຣະຫັຍແລ້ວ ສເດັຈໄປອຸຕຕຣກຸຣຸທວີປ ຫຣົງນຳບິຕທບາຕມາຈາກອຸຕຕຣກຸຣຸທວີປນັ້ນ ແລ້ວສເວີຍທີ່ຣິມສະອໂນດາຕ ປະທັບກາງເວັນຢູ່ ໓ ທີ່ນັ້ນແຫຼະ. ຄັ້ນລ່ວງຣາຕຣີນັ້ນ ຊຟິລອຸຣຸເວລກັສສປໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນເຖິງແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ມຫາສມຕະ ກັຕຕາຫາຣແລ້ວໆ ເພາະເຫຕຸໃດນໍ ວານນີ້ທ່ານຈຶ່ງບໍ່ມາ ເປັນຄວາມຈິງ ພວກຂ້າພເຈົ້າຣະລຶກເຖິງທ່ານວ່າ ເພາະເຫຕຸໃດນໍ ພຣະມຫາສມຕະຈຶ່ງບໍ່ມາ ແຕ່ສ່ວນແຫ່ງຂາຫນີຍາຫາຣ ຂ້າພເຈົ້າໄດ້ຈັດໄວ້ເພື່ອທ່ານ

ພຣະຜູ້ມີພຣະກາຄຕຣັສຍ້ອນຖາມວ່າ ດູຣາກັສສປ ທ່ານໄດ້ດຳຣິຢ່າງນີ້ບໍ່ແມ່ນຫຼືວ່າ ບັດນີ້ ເຮົາໄດ້ຕຽມກາຣບູຊາຍັລເປັນກາຣໃຫລ່ ແລະປະຊາຊົນຊາວອັງຄະແລະມຄົສທັ້ງສິ້ນໄດ້ນຳຂອງຄ້ຽວແລະ

ຂອງບໍຣິໂភຄເປັນອັນມາກບ່າຍຫນ້າມຸ່ງມາຫາ ຖ້າພຣະມຫາສມຓະຈະທຳອິທຣິປາຕິຫາຣິຍ໌ ໃນຫມູ່ມຫາຊົນ ລາກສັກກາຣະຈັກຈເຣີຍຍິ່ງແກ່ພຣະມຫາສມຓະ ລາກສັກກາຣະຂອງເຮົາຈັກເສື່ອມ ໂອ ເຮັດແນວໃດ ມື້ອື່ນ ນີ້ພຣະມຫາສມຓະຈຶ່ງຈະບໍ່ມາລົ້ນ ດູຣາກັສສປ ເຮົານັ້ນແລຮູ້ຄວາມປຣິວິຕົກແຫ່ງຈິຕຂອງທ່ານດ້ວຍໃຈ ຂອງເຮົາ ຈຶ່ງໄປອຸຕຕຣກຸຣຸທວີປ ນຳບິຓຫບາຕມາຈາກອຸຕຕຣກຸຣຸທວີປນັ້ນ ມາລັ້ນທີ່ຣິມສະອໂນດາຕແລ້ວ ໄດ້ພັກກາງເວັນຢູ່ ໓ ທີ່ນັ້ນແຫຼະ.

ບ່ອນນັ້ນ ຊຝິລອຸຣຸເວລກັສສປໄດ້ດຳຣິວ່າ ພຣະມຫາສມຓະມີຣິທຣິ໌ຫຼາຍ ມີອານຸກາພຫຼາຍແທ້ ຈຶ່ງໄດ້ຮູ້ຄວາມຄິດນຶກແມ້ດ້ວຍໃຈໄດ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເວີຍກັຕຕາຫາຣຂອງຊຝິລອຸຣຸເວລກັສສປ ແລ້ວປະທັບຢູ່ ໓ ໄພຣສົຓຫ໌ຕາແສງນັ້ນແລ.

ປາຕິຫາຣິຍ໌ທີ່ ໔ ຈົບ

ຜ້າບັງສຸກຸລ

[໔໔] ກໍໂດຍສມັຍນັ້ນ ຜ້າບັງສຸກຸລບັງເກີດແກ່ພຣະຜູ້ມີພຣະກາຄ. ຈຶ່ງພຣະອົງຄ໌ໄດ້ທຣົງພຣະດຳຣິວ່າ ເຮົາອາຈຈະຊັກຜ້າບັງສຸກຸລ ໓ ທີ່ໃດນໍ. ລຳດັບນັ້ນ ທ້າວສັກກະຈອມທວຍເທພ ທຣົງຮູ້ພຣະດຳຣິ ໃນພຣະຫັຍຂອງພຣະຜູ້ມີພຣະກາຄດ້ວຍພຣະຫັຍຂອງພຣະອົງຄ໌ ຈຶ່ງຂຸດສະໂບກຂຣຕີດ້ວຍພຣະຫັຕຖ໌ ແລ້ວ ໄດ້ທູລພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະກາຄໂປຼດຊັກຜ້າບັງສຸກຸລໃນສະນີ້. ທີ່ນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ເຮົາອາຈຈະຊັກຜ້າບັງສຸກຸລ ໓ ທີ່ໃດນໍ. ລຳດັບນັ້ນ ທ້າວສັກກະ ຈອມທວຍເທພ ທຣົງຮູ້ພຣະດຳຣິໃນພຣະຫັຍຂອງພຣະຜູ້ມີພຣະກາຄດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ໄດ້ ຍົກສິລາແຜ່ນໃຫຍ່ມາວາງພ້ອມທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະກາຄໂປຼດທຣົງຊັກຜ້າບັງສຸກຸລ ເທິງສິລາແຜ່ນນີ້. ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ເຮົາອາຈຈະພາດຜ້າບັງສຸກຸລໄວ້ ໓ ທີ່ໃດນໍ. ຄັ້ງນັ້ນ ເທພຍດາທີ່ສິງສຖິຕຢູ່ທີ່ຕົ້ນກຸ່ມບົກ ຮູ້ພຣະດຳຣິໃນພຣະຫທັຍຂອງພຣະຜູ້ມີພຣະກາຄດ້ວຍ ໃຈຂອງຕົນ ຈຶ່ງນ້ອມກິ່ງກຸ່ມລົງມາ ພ້ອມຂາບທູລວ່າ ພຣະພຸທສເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະກາຄໂປຼດທຣົງ ພາດຜ້າບັງສຸກຸລໄວ້ທີ່ກິ່ງກຸ່ມນີ້. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ເຮົາຈະຜຶ່ງຜ້າ ບັງສຸກຸລ ໓ ທີ່ໃດນໍ. ຄັ້ງນັ້ນ ທ້າວສັກກະຈອມທວຍເທພ ທຣົງຮູ້ພຣະດຳຣິໃນພຣະຫທັຍຂອງ

ພຣະຜູ້ມີພຣະພາຄດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ໄດ້ຍົກແຜ່ນສິລາໃຫຍ່ມາວາງໄວ້ ພ້ອມຂາບທູລວ່າ ພຣະພຸທຮເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະພາຄໂປຼດທຮົງຊື່ງຜ້າບັງສຸກຸລເທິງສິລາແຜ່ນນີ້.

ຫລັງຈາກນັ້ນ ຊຝິລອຸຣຸເວລກັສສປເຂົ້າໄປເຝົ້າພຣະຜູ້ມີພຣະພາຄໂດຍລ່ວງຣາຕຣີນັ້ນ ຄັ້ນເຖິງແລ້ວ ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະພາຄວ່າ ເຖິງເວລາແລ້ວ ມຫາສມຕະ ກັຕຕາຫາຣແລ້ວໆ ເພາະເຫຕຸໃດນໍ ມຫາສມຕະ ເມື່ອກ່ອນສະນີ້ບໍ່ມີທີ່ນີ້ ດຽວນີ້ມີສະຢູ່ທີ່ນີ້ ເມື່ອກ່ອນສິລາເຫຼົ່ານີ້ບໍ່ມີວາງຢູ່ ໃຜຍົກສິລາເຫຼົ່ານີ້ ມາວາງໄວ້ ເມື່ອກ່ອນກິ່ງກຸ່ມບົກຕົ້ນນີ້ບໍ່ນ້ອມລົງ ດຽວນີ້ກິ່ງນັ້ນນ້ອມລົງ?

ພຣະຜູ້ມີພຣະພາຄຕຣັສຕອບວ່າ ດູຣາກັສສປ ຜ້າບັງສຸກຸລບັງເກີດແກ່ເຣົາ ໓ ທີ່ນີ້ ເຣົານັ້ນໄດ້ ດຳຣິວ່າ ອາຈຈະຊັກຜ້າບັງສຸກຸລ ໓ ທີ່ໃດນໍ ຄັ້ງນັ້ນ ທ້າວສັກກະຈອມທວຍເທພ ທຮົງຮູ້ຄວາມດຳຣິ ໃນຈິຕຂອງເຣົາດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ຈຶ່ງຂຸດສະໂບກຂຣຕີດ້ວຍພຣະຫັຕຖ໌ ແລ້ວຕຣັສບອກແກ່ ເຣົາວ່າ ພຣະພຸທຮເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະພາຄໂປຼດທຮົງຊັກຜ້າບັງສຸກຸລໃນສະນີ້ ສະນີ້ອັນຜູ້ບໍ່ແມ່ນມນຸຍ໌ ໄດ້ຂຸດແລ້ວດ້ວຍມື ດູຣາກັສສປ ເຣົານັ້ນໄດ້ດຳຣິວ່າ ອາຈຈະຊັກຜ້າບັງສຸກຸລ ໓ ທີ່ໃດນໍ ຄັ້ງນັ້ນ ທ້າວສັກກະຈອມທວຍເທພ ຮູ້ຄວາມດຳຣິໃນຈິຕຂອງເຣົາດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ໄດ້ທຮົງຍົກ ສິລາແຜ່ນໃຫຍ່ມາວາງໄວ້ ໂດຍທູລວ່າ ພຣະພຸທຮເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະພາຄໂປຼດທຮົງຊັກຜ້າບັງສຸ ກຸລເທິງສິລາແຜ່ນນີ້ ສິລາແຜ່ນນີ້ອັນຜູ້ບໍ່ແມ່ນມນຸຍ໌ໄດ້ຍົກມາວາງໄວ້ ດູຣາກັສສປ ເຣົານັ້ນໄດ້ດຳຣິວ່າ ອາຈ ຈະພາດຜ້າບັງສຸກຸລ ໓ ທີ່ໃດນໍ ຄັ້ງນັ້ນ ເທພດາທີ່ສິງສຖິຕຢູ່ທີ່ຕົ້ນກຸ່ມບົກ ຮູ້ຄວາມດຳຣິໃນຈິຕຂອງເຣົາດ້ວຍ ໃຈຂອງຕົນແລ້ວ ຈຶ່ງນ້ອມກິ່ງກຸ່ມລົງມາໂດຍທູລວ່າ ພຣະພຸທຮເຈົ້າຂ້ານ້ອຍ ຂໍພຣະຜູ້ມີພຣະພາຄ ໂປຼດທຮົງພາດຜ້າບັງສຸກຸລໄວ້ເທິງກິ່ງກຸ່ມນີ້ ຕົ້ນກຸ່ມບົກນີ້ນັ້ນປະນົ່ງຈະຂາບທູລວ່າ ຂໍພຣະອົງຄ໌ຈົ່ງ ທຮົງນຳພຣະຫັຕຖ໌ມາແລ້ວນ້ອມລົງ ດູຣາກັສສປ ເຣົານັ້ນໄດ້ດຳຣິວ່າ ອາຈຈະຊື່ງຜ້າບັງສຸກຸລ ໓ ທີ່ໃດນໍ ຄັ້ງນັ້ນ ທ້າວສັກກະຈອມທວຍເທພ ທຮົງຮູ້ຄວາມດຳຣິແຫ່ງຈິຕຂອງເຣົາດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ໄດ້ຍົກສິລາແຜ່ນໃຫຍ່ມາວາງໄວ້ ໂດຍທູລວ່າ ພຣະພຸທຮເຈົ້າ ຂໍພຣະຜູ້ມີພຣະພາຄໂປຼດທຮົງຊື່ງຜ້າບັງສຸກຸລ ເທິງສິລາແຜ່ນນີ້ ສິລາແຜ່ນນີ້ອັນຜູ້ບໍ່ແມ່ນມນຸຍ໌ໄດ້ຍົກມາວາງໄວ້.

ຄັ້ງນັ້ນ ຊຝິລອຸຣຸເວລກັສສປໄດ້ດຳຣິວ່າ ພຣະມຫາສມຕະມີຣິທຮິ໌ຫຼາຍ ມີອານຸພາພຫຼາຍແທ້ ເຖິງກັບທ້າວສັກກະຈອມທວຍເທພໄດ້ທຳການຊ່ວຍເຫລືອ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຣົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະພາຄສເວີຍກັຕຕາຫາຣຂອງຊຝິລອຸຣຸເວລກັສສປ ແລ້ວປະທັບຢູ່ໃນ ໄພຣສົຕບ໌ຕາແສງນັ້ນແລ.

ຜ້າບັງສຸກຸລ ຈົບ.

ປາຕິຫາຣິຍ໌ເກັບໝາກຫວ້າເປັນຕົ້ນ

[໔໕] ຄັ້ນລ່ວງຣາຕຣີນັ້ນໄປ ຊະຝິລອຸຣຸເວລກັສສປເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນແລ້ວຈຶ່ງຂາບທູລກັຕຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ມຫາສມຕະ ກັຕຕາຫາຣແລ້ວໆ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັສສປ ທ່ານໄປເຖີດ ເຮົາຈະຕາມໄປ. ພຣະຜູ້ມີພຣະກາຄທຣົງສົ່ງຊະຝິລອຸຣຸເວລກັສສປໄປແລ້ວ ທຣົງເກັບໝາກຫວ້າຈາກຕົ້ນຫວ້າປະຈຳຊົມພູທວີປ ແລ້ວສເດັຈມາປະທັບນັ່ງໃນໂຮງບູຊາເພີ້ງກ່ອນ. ຊະຝິລອຸຣຸເວລກັສສປໄດ້ເຫັນພຣະຜູ້ມີພຣະກາຄປະທັບນັ່ງໃນໂຮງບູຊາເພີ້ງແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂ້າແດ່ມຫາສມຕະ ທ່ານມາທາງໃດ ຂ້າພເຈົ້າກັບມາກ່ອນທ່ານ ແຕ່ທ່ານຍັງມານັ່ງໃນໂຮງບູຊາເພີ້ງກ່ອນ?

ກ. ດູຣາກັສສປ ເຮົາສົ່ງທ່ານໄປແລ້ວ ໄດ້ເກັບໝາກຫວ້າຈາກຕົ້ນຫວ້າປະຈຳຊົມພູທວີປ ແລ້ວມານັ່ງໃນໂຮງບູຊາເພີ້ງນີ້ກ່ອນ ດູຣາກັສສປ ໝາກຫວ້ານີ້ແລ ສົມບູຣນ໌ດ້ວຍສີ ກິ່ນ ຣົສ ຖ້າທ່ານຕ້ອງການເຊີນບໍຣິໂກຄເຖີດ.

ອຸຣຸ. ຢ່າເລີຍ ມຫາສມຕະ ທ່ານນັ້ນແຫຼະເກັບໝາກໄມ້ນີ້ມາ ທ່ານນັ້ນແຫຼະ ຈົ່ງຈັນໝາກໄມ້ນີ້ເຖີດ.

ລຳດັບນັ້ນ ຊະຝິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທສິ່ຫຼາຍ ມີອານຸກາພຫຼາຍແທ້ເພາະສົ່ງເຮົາມາກ່ອນແລ້ວ ຍັງເກັບໝາກຫວ້າຈາກຕົ້ນຫວ້າປະຈຳຊົມພູທວີປແລ້ວມານັ່ງໃນໂຮງບູຊາເພີ້ງກ່ອນແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ຄັ້ງນັ້ນ ພຣະຜູ້ມີພຣະກາຄສເວີຍກັຕຕາຫາຣຂອງຊະຝິລອຸຣຸເວລກັສສປແລ້ວ ປະທັບຢູ່ໃນໄພຣສົຕບ໌ຕາແສງນັ້ນແລ.

ຄັ້ນລ່ວງຣາຕຣີນັ້ນໄປ ຊະຝິລອຸຣຸເວລກັສສປໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນແລ້ວ ຈຶ່ງທູລກັຕຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ມຫາສມຕະ ກັຕຕາຫາຣແລ້ວໆ.

ພຣະຜູ້ມີພຣະກາຄທຣົງສົ່ງຊະຝິລອຸຣຸເວລກັສສປໄປດ້ວຍພຣະດຳຣັສວ່າ ດູຣາກັສສປ ທ່ານໄປເຖີດເຮົາຈັກຕາມໄປ ແລ້ວທຣົງເກັບໝາກມ່ວງ ... ໝາກຂາມປ້ອມ ... ໝາກສມໍ ໃນທີ່ບໍ່ໄກລຕົ້ນຫວ້າປະຈຳຊົມພູທວີປນັ້ນ ... ສເດັຈໄປສູ່ກົພດາວດຶງສ໌ ທຣົງເກັບດອກປາຣິຈັຕຕກັບແລ້ວມາປະທັບນັ່ງໃນໂຮງບູຊາເພີ້ງກ່ອນ. ຊະຝິລອຸຣຸເວລກັສສປໄດ້ເຫັນພຣະຜູ້ມີພຣະກາຄປະທັບນັ່ງໃນໂຮງບູຊາເພີ້ງ ຄັ້ນແລ້ວໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂ້າແດ່ມຫາສມຕະ ທ່ານມາທາງໃດ ຂ້າພເຈົ້າກັບມາກ່ອນທ່ານ ແຕ່ທ່ານຍັງມານັ່ງໃນໂຮງບູຊາເພີ້ງກ່ອນ?.

ພຣະຜູ້ມີພຣະກາຄຕຣັສຕອບວ່າ ດູຣາກັສສປ ເຮົາສົ່ງທ່ານແລ້ວໄດ້ໄປສູ່ກົພດາວດຶງສ໌ ເກັບດອກປາຣິຈັຕຕກະແລ້ວ ມານັ່ງໃນໂຮງບູຊາເພີ້ງກ່ອນ ດູຣາກັສສປ ດອກປາຣິຈັຕຕກະນີ້ແລ ສົມບູຣຕ໌ດ້ວຍສີແລະກິ່ນ.

ຄັ້ງນັ້ນ ຊຜິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທທິ໌ຫຼາຍ ມີອານຸກາພຫຼາຍແທ້ ເພາະສົ່ງເຮົາມາກ່ອນແລ້ວຍັງໄປສູ່ກົພດາວດຶງສ໌ ເກັບດອກປາຣິຈັຕຕກະແລ້ວ ມານັ່ງໃນໂຮງບູຊາ-ເພີ້ງກ່ອນ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ປາຕິຫາຣິຍ໌ຜ່າຟືນ

[໔ຜ] ກໍໂດຍສມັຍນັ້ນແລ ຊຜິລເຫຼົ່ານັ້ນປັຕຖນາຈະບຳເຣີໄຟ ແຕ່ບໍ່ອາຈຈະຜ່າຟືນໄດ້. ຈຶ່ງຊຜິລເຫຼົ່ານັ້ນໄດ້ມີຄວາມດຳຣິຕ້ອງກັນວ່າ ຂໍ້ທີ່ພວກເຮົາບໍ່ອາຈຜ່າຟືນໄດ້ນັ້ນ ຄົງເປັນອິທສານຸກາພຂອງພຣະມຫາສມຕະ ບໍ່ຕ້ອງສົງສັຍເລີຍ. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຕຣັສກະຊຜິລອຸຣຸເວລກັສສປວ່າ ດູຣາກັສສປ ພວກຊຜິລຈົ່ງຜ່າຟືນເຖີດ.

ຊຜິລອຸຣຸເວລກັສສປ ຮັບພຣະພຸທສດຳຣັສວ່າ ຂ້າແຕ່ມຫາສມຕະ ພວກຊຜິລຈົ່ງຜ່າຟືນກັນ.

ຊຜິລທັ້ງຫຼາຍໄດ້ຜ່າຟືນ ໕໐໐ ທ່ອນຄາວດຽວເທົ່ານັ້ນ. ຄັ້ງນັ້ນແລ ຊຜິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທທິ໌ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບໃຫ້ພວກຊຜິລຜ່າຟືນໄດ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ປາຕິຫາຣິຍ໌ກໍ່ໄຟ

[໔ກ] ກໍໂດຍສມັຍນັ້ນແລ ຊຜິລເຫຼົ່ານັ້ນປັຕຖນາຈະບຳເຣີໄຟ ແຕ່ບໍ່ອາຈຈະກໍ່ໄຟໃຫ້ລຸກໄດ້. ຈຶ່ງຊຜິລເຫຼົ່ານັ້ນໄດ້ມີຄວາມດຳຣິຕ້ອງກັນວ່າ ຂໍ້ທີ່ພວກເຮົາບໍ່ອາຈຈະກໍ່ໄຟໃຫ້ລຸກຂຶ້ນໄດ້ນັ້ນ ຄົງເປັນອິທສານຸກາພຂອງພຣະມຫາສມຕະ ບໍ່ຕ້ອງສົງສັຍເລີຍ. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຕຣັສກະຊຜິລອຸຣຸເວລກັສສປວ່າ ດູຣາກັສສປ ພວກຊຜິລຈົ່ງກໍ່ໄຟໃຫ້ລຸກເຖີດ.

ຊຜິລອຸຣຸເວລກັສສປ ຮັບພຣະພຸທສດຳຣັສວ່າ ຂ້າແຕ່ມຫາສມຕະ ພວກຊຜິລຈົ່ງກໍ່ໄຟໃຫ້ລຸກ. ໄຟທັ້ງ ໕໐໐ ກອງ ໄດ້ລຸກຂຶ້ນຄາວດຽວບາດດຽວ. ລຳດັບນັ້ນ ຊຜິລອຸຣຸເວລກັສສປ ໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທທິ໌ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບໃຫ້ໄຟລຸກຂຶ້ນໄດ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ປາຕິຫາຣິຍ໌ດັບໄຟ

[໔໗] ກໍໂດຍສມັຍນັ້ນແລ ຊຊິລເຫຼົ່ານັ້ນບຳເຣີໄຟກັນແລ້ວບໍ່ອາຈດັບໄຟໄດ້. ຈຶ່ງໄດ້ຄິດຕ້ອງກັນວ່າ ຂໍ້ທີ່ພວກເຮົາບໍ່ອາຈດັບໄຟໄດ້ນັ້ນ ຄົງເປັນອິທສານຸກາພຂອງພຣະສມຕະ ບໍ່ຕ້ອງສົງສັຍເລີຍ. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຕຣັສກະຊຊິລອຸຣຸເວລກັສສປວ່າ ດູຣາກັສສປ ພວກຊຊິລຈົ່ງດັບໄຟເຖີດ.

ຊຊິລອຸຣຸເວລກັສສປ ຮັບພຣະພຸທສດຳຣັສວ່າ ຂ້າແຕ່ມຫາສມຕະ ພວກຊຊິລຈົ່ງດັບໄຟກັນ.

ໄຟທັ້ງ ໕໐໐ ກອງ ໄດ້ດັບຊາວດຽວບາດດຽວ.

ຄັ້ງນັ້ນແລ ຊຊິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທສິ່ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບໃຫ້ພວກຊຊິລດັບໄຟໄດ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ປາຕິຫາຣິຍ໌ກອງໄຟ

[໔໘] ກໍໂດຍສມັຍນັ້ນແລ ຊຊິລເຫຼົ່ານັ້ນ ພາກັນມຸດລົງແດ່ ຜຸດຂຶ້ນແດ່ ທັ້ງມຸດທັ້ງຜຸດແດ່ໃນແມ່ນ້ຳເນຣັຊຊຣາ ໃນຣາຕຣີໜາວເຫມັນຕ໌ຣະດູ ຣະຫວ່າງທ້າຍເດືອນ ໓ ຕົ້ນເດືອນ ໔ ໃນສມັຍນ້ຳຄ້າງຕົກ. ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງນິຣມິຕກອງໄຟໄວ້ ໕໐໐ ກອງ ສຳຫຼັບໃຫ້ຊຊິລເຫຼົ່ານັ້ນຂຶ້ນຈາກນ້ຳແລ້ວຈະໄດ້ຜີງ. ຈຶ່ງຊຊິລເຫຼົ່ານັ້ນໄດ້ມີຄວາມດຳຣິຕ້ອງກັນວ່າ ຂໍ້ທີ່ກອງໄຟເຫຼົ່ານີ້ຖືກນິຣມິຕໄວ້ນັ້ນ ຄົງຕ້ອງເປັນອິທສານຸກາພຂອງພຣະມຫາສມຕະ ບໍ່ຕ້ອງສົງສັຍເລີຍ. ຄັ້ງນັ້ນ ຊຊິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຕະມີຣິທສິ່ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບນິຣມິຕກອງໄຟໄດ້ຫຼວງຫຼາຍເຖິງພຽງນັ້ນ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ປາຕິຫາຣິຍ໌ນ້ຳຖ້ວມ

[໕໐] ກໍໂດຍສມັຍນັ້ນແລ ເມຄໃຫຍ່ໃນສມັຍທີ່ບໍ່ແມ່ນຣະດູກາລຍັງຝົນໃຫ້ຕົກແລ້ວ ຫ້ວງນ້ຳໃຫຍ່ໄດ້ໄຫລນອງໄປ. ປະເທສທີ່ພຣະຜູ້ມີພຣະກາຄປະທັບຢູ່ນັ້ນຖືກນ້ຳຖ້ວມ. ຂຕະນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ແນວໃດນໍ ເຮົາຄວຣບັນດາລໃຫ້ນ້ຳຫ່າງອອກໄປໂດຍຮອບ ແລ້ວຈົ່ງກົມຢູ່ເທິງກາຄພື້ນອັນມີຝຸ່ນຟຸ້ງຂຶ້ນຕອນກາງ. ຄັ້ນແລ້ວຈຶ່ງທຣົງບັນດາລໃຫ້ນ້ຳຫ່າງອອກໄປໂດຍຮອບແລ້ວສເດັຈຈົ່ງກົມຢູ່ເທິງກາຄພື້ນ ອັນມີຝຸ່ນຟຸ້ງຂຶ້ນຕອນກາງ. ຕໍ່ມາ ຊຊິລອຸຣຸເວລກັສສປກ່າວວ່າ ພຣະມຫາສມຕະຢ່າໄດ້ຖືກນ້ຳພັດໄປເສັຽເລີຍ ດັ່ງນີ້ ແລ້ວພ້ອມດ້ວຍຊຊິລຈຳນວນຫຼາຍ ໄດ້ເອົາເຮືອໄປສູ່ປະເທສທີ່ພຣະຜູ້ມີພຣະກາຄປະທັບຢູ່. ໄດ້ເຫັນພຣະຜູ້ມີພຣະກາຄຜູ້ທຣົງບັນດາລໃຫ້ນ້ຳຫ່າງອອກໄປໂດຍຮອບແລ້ວ ສເດັຈຈົ່ງກົມຢູ່ເທິງກາຄພື້ນອັນມີຝຸ່ນຟຸ້ງຂຶ້ນຕອນກາງ ແລ້ວໄດ້ທູລພຣະຜູ້ມີພຣະກາຄວ່າ ຂ້າແຕ່ມຫາສມຕະທ່ານຍັງຢູ່ທີ່ນີ້ຢູ່ບໍ່? ພຣະຜູ້ມີພຣະກາຄຕຣັສຕອບວ່າຖືກລະ ກັສສປ ເຮົາຍັງຢູ່ທີ່ນີ້ ດັ່ງນີ້ແລ້ວ

ສເດັຈຂຶ້ນສູ່ເວຫາສປາກົຕຢູ່ທີ່ເຮືອ. ຈຶ່ງຊຸຜິລອຸຣຸເວລກັສສປໄດ້ມີຄວາມດຳຣິວ່າ ພຣະມຫາສມຜະມີຣິທສໍ່ຫຼາຍ ມີອານຸກາພຫຼາຍແທ້ ເຖິງກັບບັນດາລບໍ່ໃຫ້ນ້ຳໄຫລໄປໄດ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່.

ທູລຂໍບັຣພຊາແລະອຸປສົມບົທ

[໕໑] ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ໂມຄບຸຣຸຊນີ້ ໄດ້ມີຄວາມຄິດຢ່າງນີ້ມານານແລ້ວວ່າ ພຣະມຫາສມຜະມີຣິທສໍ່ຫຼາຍ ມີອານຸກາພຫຼາຍແທ້ ແຕ່ກໍບໍ່ເປັນພຣະອຣຫັນຕ໌ເຫມືອນເຮົາແນ່ ຖ້າຈັ່ງໃດ ເຮົາຄວຣໃຫ້ຊຸຜິລນີ້ສລົດໃຈ ແລ້ວຈຶ່ງຕຣັສກະຊຸຜິລອຸຣຸເວລກັສສປວ່າ ດູຣາກັສສປ ທ່ານບໍ່ແມ່ນພຣະອຣຫັນຕ໌ແນ່ ທັ້ງຍັງບໍ່ພົບທາງແຫ່ງຄວາມເປັນພຣະອຣຫັນຕ໌ ແມ້ປຕິທາຂອງທ່ານທີ່ຈະເປັນເຫຕຸໃຫ້ເປັນພຣະອຣຫັນຕ໌ ຫຼືພົບທາງແຫ່ງຄວາມເປັນພຣະອຣຫັນຕ໌ ກໍບໍ່ມີ. ບ່ອນນັ້ນ ຊຸຜິລອຸຣຸເວລກັສສປໄດ້ມອບຫົວລົງທີ່ພຣະບາທຂອງພຣະຜູ້ມີພຣະກາຄ ແລ້ວທູລຂໍບັຣພຊາອຸປສົມບົທຕໍ່ພຣະຜູ້ມີພຣະກາຄວ່າ ຂໍຂ້າພຣະພຸທສເຈົ້າຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັສສປ ທ່ານເປັນຜູ້ນຳ ເປັນຜູ້ຝຶກສອນ ເປັນຜູ້ເລີສ ເປັນຫົວຫນ້າເປັນປະຣານຂອງຊຸຜິລ ໕໐໐ ຄົນ ທ່ານຈົ່ງບອກກ່າວພວກນັ້ນກ່ອນ ພວກນັ້ນຈະທຳຕາມທີ່ເຂົ້າໃຈ.

ລຳດັບນັ້ນ ຊຸຜິລອຸຣຸເວລກັສສປເຂົ້າໄປຫາຊຸຜິລເຫຼົ່ານັ້ນ ຄັ້ນແລ້ວໄດ້ແຈ້ງຄວາມປະສົງຄ໌ຕໍ່ຊຸຜິລເຫຼົ່ານັ້ນວ່າ ຜູ້ຈເຣີຍທັ້ງຫຼາຍ ເຮົາປັຕຖນາຈະປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຜະ ທ່ານຜູ້ຈເຣີຍທັ້ງຫຼາຍ ຈົ່ງທຳຕາມທີ່ເຂົ້າໃຈ.

ຊຸຜິລພວກນັ້ນຂາບຮຽນວ່າ ພວກຂ້າພເຈົ້າເລື່ອມໃສຍິ່ງໃນພຣະມຫາສມຜະມານານແລ້ວ ໂດຍຂ້ານ້ອຍ ຖ້າທ່ານອາຈາຣຍ໌ຈັກປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຜະ ພວກຂ້າພເຈົ້າທັ້ງຫມົດກໍຈັກປະພຶຕ-ພຣົຫ໌ມຈັຣຍ໌ໃນພຣະມຫາສມຜະເຫມືອນກັນ.

ຕໍ່ມາ ຊຸຜິລເຫຼົ່ານັ້ນໄດ້ລອຍຜົມ ຊຜາ ເຄື່ອງບໍຣິຂາຣ ແລະເຄື່ອງບູຊາເພີງໃນນ້ຳ ແລ້ວພາກັນເຂົ້າເຝົ້າພຣະຜູ້ມີພຣະກາຄ ມອບຫົວລົງແທບພຣະບາທຂອງພຣະຜູ້ມີພຣະກາຄ ແລ້ວໄດ້ທູລຂໍບັຣພຊາອຸປສົມບົທຕໍ່ພຣະຜູ້ມີພຣະກາຄວ່າ ຂໍພວກຂ້າພຣະອົງຄ໌ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ພວກທ່ານຈົ່ງເປັນກິກຂຸມາເຖີດ ດັ່ງນີ້ແລ້ວ ໄດ້ຕຣັສຕໍ່ໄປວ່າ ຣັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

[໕໘] ຊຸຜິລນທີກັສສປໄດ້ເຫັນຜົມ ຊຜາ ເຄື່ອງບໍຣິຂາຣ ແລະເຄື່ອງບູຊາເພີງລອຍນ້ຳມາ ຄັ້ນແລ້ວໄດ້ມີຄວາມດຳຣິວ່າ ອຸປສັຄຢ່າໄດ້ມີແກ່ອ້າຍເຮົາເລີຍ ຈຶ່ງສົ່ງຊຸຜິລໄປດ້ວຍຄຳສັ່ງວ່າ ພວກທ່ານ

ຈົ່ງໄປ ຈົ່ງຮູ້ອ້າຍຂອງເຮົາ ດັ່ງນີ້ແລ້ວ ທັ້ງຕົນເອງກັບຊະຜິລ ໓໐໐ ໄດ້ເຂົ້າໄປຫາທ່ານພຣະອຸຣຸເວລກັສສປ ແລ້ວຮຽນຖາມວ່າ ຂ້າແຕ່ອ້າຍກັສສປ ພຣົຫ໌ມຈັຣຍ໌ນີ້ປະເສີຖແນ່ບໍ່?

ພຣະອຸຣຸເວລກັສສປຕອບວ່າ ແນ່ລະທ່ານ ພຣົຫ໌ມຈັຣຍ໌ນີ້ປະເສີຖ.

ຫລັງຈາກນັ້ນ ຊະຜິລເຫຼົ່ານັ້ນລອຍຜົມ ຊະຜາ ເຄື່ອງບໍຣິຂາຣແລະເຄື່ອງບູຊາເພີງໃນນ້ຳ ແລ້ວພາກັນເຂົ້າເຝົ້າພຣະຜູ້ມີພຣະກາຄ ມອບຫົວລົງແທບພຣະບາທຂອງພຣະຜູ້ມີພຣະກາຄ ແລ້ວໄດ້ທູລຂໍບັຣພຊາອຸປສົມບົທຕໍ່ພຣະຜູ້ມີພຣະກາຄວ່າ ຂໍພວກຂ້າພຣະພຸທສເຈົ້າຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ພວກທ່ານຈົ່ງເປັນກິກຊຸມາເຖີດ ດັ່ງນີ້ແລ້ວ ໄດ້ຕຣັສຕໍ່ໄປວ່າ ທັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

[໕໓] ຊະຜິລຄຍາກັສສປໄດ້ເຫັນຜົມ ຊະຜາ ເຄື່ອງບໍຣິຂາຣ ແລະເຄື່ອງບູຊາເພີງ ລອຍນ້ຳມາ. ຄັ້ນແລ້ວ ໄດ້ມີຄວາມດຳຣິວ່າ ອຸປສັຄຢ່າໄດ້ມີແກ່ອ້າຍທັ້ງສອງຂອງເຮົາເລີຍ ແລ້ວສົ່ງຊະຜິລໄປດ້ວຍຄຳສັ່ງວ່າ ພວກທ່ານຈົ່ງໄປ ຈົ່ງຮູ້ອ້າຍທັ້ງສອງຂອງເຮົາ ດັ່ງນີ້ແລ້ວ ທັ້ງຕົນເອງກັບຊະຜິລ ໒໐໐ ຄົນ ໄດ້ເຂົ້າໄປຫາທ່ານພຣະອຸຣຸເວລກັສສປ ແລ້ວຮຽນຖາມວ່າ ຂ້າແຕ່ອ້າຍກັສສປ ພຣົຫ໌ມຈັຣຍ໌ນີ້ປະເສີຖແນ່ບໍ່?

ພຣະອຸຣຸເວລກັສສປຕອບວ່າ ແນ່ລະທ່ານ ພຣົຫ໌ມຈັຣຍ໌ນີ້ປະເສີຖ.

ຫລັງຈາກນັ້ນ ຊະຜິລເຫຼົ່ານັ້ນລອຍຜົມ ຊະຜາ ເຄື່ອງບໍຣິຂາຣ ແລະເຄື່ອງບູຊາເພີງໃນນ້ຳ ແລ້ວພາກັນເຂົ້າເຝົ້າພຣະຜູ້ມີພຣະກາຄ ມອບຫົວລົງແທບພຣະບາທຂອງພຣະຜູ້ມີພຣະກາຄແລ້ວ ໄດ້ທູລຂໍບັຣພຊາອຸປສົມບົທຕໍ່ພຣະຜູ້ມີພຣະກາຄວ່າ ຂໍພວກຂ້າພຣະພຸທສເຈົ້າຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ພວກທ່ານຈົ່ງເປັນກິກຊຸມາເຖີດ ດັ່ງນີ້ແລ້ວ ໄດ້ຕຣັສຕໍ່ໄປວ່າ ທັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

[໕໔] ພວກຊະຜິລນັ້ນ ຜ່າຟືນ ໕໐໐ ທ່ອນບໍ່ໄດ້ ແລ້ວຜ່າໄດ້ ກໍ່ໄຟບໍ່ຕິດ ແລ້ວກໍ່ໄຟຕິດຂຶ້ນໄດ້ ດັບໄຟບໍ່ດັບ ແລ້ວດັບໄດ້ ດ້ວຍການເພັ່ງອຣິທຖານຂອງພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຫຣົງນິຣມິຕກອງໄຟໄວ້ ໕໐໐ ກອງ. ປາຕິຫາຣິຍ໌ ໓໕໐໐ ວິທີ ຍ່ອມມີໂດຍນັຍນີ້.

ອາທິຕຕປຣິຍາຍສູຕຣ໌

[໕໔] ຄັ້ນພຣະຜູ້ມີພຣະກາຄປະທັບຢູ່ ຓ ຕາແສງອຸຣຸເວລາ ຕາມພຣະພຸທສາທິຣົມຍ໌ແລ້ວ ສເດັຈຈາຣິກໄປໂດຍມັຄຄາອັນຈະໄປສູ່ຕາແສງຄຍາສີສະ ພ້ອມດ້ວຍກິກຂຸສົງຂ໌ຫມູ່ໃຫລ່ ໑໐໐໐ ອົງຄ໌ ລ້ວນເປັນປຸຣາຓຊະຝິລ. ໄດ້ຍິນວ່າ ພຣະອົງຄ໌ປະທັບຢູ່ທີ່ຕາແສງຄຍາສີສະ ໃກ້ແມ່ນ້ຳຄຍານັ້ນ ພ້ອມດ້ວຍກິກຂຸ ໑໐໐໐ ອົງຄ໌.

ຓ ທີ່ນັ້ນ ພຣະຜູ້ມີພຣະກາຄຣັບສັ່ງກັບກິກຂຸທັ້ງຫຼາຍ ວ່າດັ່ງນີ້:-

ດູຣາກິກຂຸທັ້ງຫຼາຍ ສິ່ງທັ້ງປວງເປັນຂອງຮ້ອນ ແມ່ນຫຍັງລະຊື່ວ່າສິ່ງທັ້ງປວງເປັນຂອງຮ້ອນ? ດູຣາກິກຂຸທັ້ງຫຼາຍ ຈັກຂຸເປັນຂອງຮ້ອນ ຮູປທັ້ງຫຼາຍເປັນຂອງຮ້ອນ ວິຄຸລາຓອາສັຍຈັກຂຸເປັນຂອງຮ້ອນ ສັມຜັສອາສັຍຈັກຂຸເປັນຂອງຮ້ອນ ຄວາມສເວີຍອາຣົມຓ໌ ເປັນສຸຂເປັນທຸກຂ໌ ຫຼືບໍ່ແມ່ນສຸຂບໍ່ແມ່ນທຸກຂ໌ ທີ່ເກີດຂຶ້ນເພາະຈັກຂຸສັມຜັສເປັນປັຈຈັຍ ແມ້ນັ້ນກໍເປັນຂອງຮ້ອນ ຮ້ອນເພາະຫຍັງ? ເຮົາກ່າວວ່າ ຮ້ອນເພາະໄຟຄືຣາຄະ ເພາະໄຟຄືໂທສະ ເພາະໄຟຄືໂມຫະ ຮ້ອນເພາະຄວາມເກີດ ເພາະຄວາມແກ່ແລະຄວາມຕາຍ ຮ້ອນເພາະຄວາມໂສກ ເພາະຄວາມຣຳພັນ ເພາະທຸກຂ໌ກາຍ ເພາະທຸກຂ໌ໃຈ ເພາະຄວາມຄັບແຄ້ນ.

ໂສຕເປັນຂອງຮ້ອນ ສຽງທັ້ງຫຼາຍເປັນຂອງຮ້ອນ ...

ຆານະເປັນຂອງຮ້ອນ ກິ່ນທັ້ງຫຼາຍເປັນຂອງຮ້ອນ ...

ຊິວຫາເປັນຂອງຮ້ອນ ຣົສທັ້ງຫຼາຍເປັນຂອງຮ້ອນ ...

ກາຍເປັນຂອງຮ້ອນ ໂຜຕຖັພພະທັ້ງຫຼາຍເປັນຂອງຮ້ອນ ...

ມນະເປັນຂອງຮ້ອນ ທັມມ໌ທັ້ງຫຼາຍເປັນຂອງຮ້ອນ ວິຄຸລາຓອາສັຍມນະເປັນຂອງຮ້ອນ ສັມຜັສອາສັຍມນະເປັນຂອງຮ້ອນ ຄວາມສເວີຍອາຣົມນ໌ເປັນສຸຂ ເປັນທຸກຂ໌ຫຼືບໍ່ແມ່ນທຸກຂ໌ບໍ່ແມ່ນສຸຂ ທີ່ເກີດຂຶ້ນເພາະມໂນສັມຜັສເປັນປັຈຈັຍ ແມ້ນັ້ນກໍເປັນຂອງຮ້ອນ ຮ້ອນເພາະຫຍັງ? ເຮົາກ່າວວ່າ ຮ້ອນເພາະໄຟຄືຣາຄະ ເພາະໄຟຄືໂທສະ ເພາະໄຟຄືໂມຫະ ຮ້ອນເພາະຄວາມເກີດ ເພາະຄວາມແກ່ແລະຄວາມຕາຍ ຮ້ອນເພາະຄວາມໂສກ ເພາະຄວາມຣຳພັນ ເພາະທຸກຂ໌ກາຍ ເພາະທຸກຂ໌ໃຈ ເພາະຄວາມຄັບແຄ້ນ.

ດູຣາທິກາບຸທັ້ງຫຼາຍ ອຣິຍສາວົກຜູ້ໄດ້ຟັງແລ້ວເຫັນຢູ່ຢ່າງນີ້ ຍ່ອມເບື່ອໜ່າຍແມ້ໃນຈັກບຸ ຍ່ອມເບື່ອໜ່າຍແມ້ໃນຣູປທັ້ງຫຼາຍ ຍ່ອມເບື່ອໜ່າຍແມ້ໃນວິລຍານອາສັຍຈັກບຸ ຍ່ອມເບື່ອໜ່າຍແມ້ໃນສັມຜັສອາສັຍຈັກບຸ ຍ່ອມເບື່ອໜ່າຍແມ້ໃນຄວາມສເວີຍອາຣົມຕ໌ ທີ່ເປັນສຸຂ ເປັນທຸກຂ໌ ຫຼືບໍ່ແມ່ນທຸກຂ໌ບໍ່ແມ່ນສຸຂ ທີ່ເກີດຂຶ້ນເພາະຈັກບຸສັມຜັສເປັນປັຈຈັຍ

ຍ່ອມເບື່ອໜ່າຍແມ້ໃນໂສຕ ຍ່ອມເບື່ອໜ່າຍແມ້ໃນສຽງທັ້ງຫຼາຍ ...

ຍ່ອມເບື່ອໜ່າຍແມ້ໃນຆານະ ຍ່ອມເບື່ອໜ່າຍແມ້ໃນກິ່ນທັ້ງຫຼາຍ ...

ຍ່ອມເບື່ອໜ່າຍແມ້ໃນຊິວຫາ ຍ່ອມເບື່ອໜ່າຍແມ້ໃນຣົສທັ້ງຫຼາຍ ...

ຍ່ອມເບື່ອໜ່າຍແມ້ໃນກາຍ ຍ່ອມເບື່ອໜ່າຍແມ້ໃນໂຜຕັພພະທັ້ງຫຼາຍ ...

ຍ່ອມເບື່ອໜ່າຍແມ້ໃນມນະ ຍ່ອມເບື່ອໜ່າຍແມ້ໃນທັມມ໌ທັ້ງຫຼາຍ ຍ່ອມເບື່ອໜ່າຍແມ້ໃນວິລຍານອາສັຍມນະ ຍ່ອມເບື່ອໜ່າຍແມ້ໃນສັມຜັສອາສັຍມນະ ຍ່ອມເບື່ອໜ່າຍແມ້ໃນຄວາມສເວີຍອາຣົມຕ໌ທີ່ເປັນສຸຂ ເປັນທຸກຂ໌ ຫຼືບໍ່ແມ່ນທຸກຂ໌ບໍ່ແມ່ນສຸຂ ທີ່ເກີດຂຶ້ນເພາະມໂນສັມຜັສເປັນປັຈຈັຍ.

ເມື່ອເບື່ອໜ່າຍ ຍ່ອມສິ້ນກຳໜັດ ເພາະສິ້ນກຳໜັດ ຈິຕກໍພົ້ນ ເມື່ອຈິຕພົ້ນແລ້ວ ກໍຮູ້ວ່າພົ້ນແລ້ວ ອຣິຍສາວົກນັ້ນຮູ້ຊັດວ່າ ຊາຕິສິ້ນແລ້ວ ພຣົຫ໌ມຈັຣຍ໌ໄດ້ຢູ່ຈົບແລ້ວ ກິຈທີ່ຄວຣທຳໄດ້ທຳແລ້ວແລ້ວ ກິຈອື່ນອີກເພື່ອຄວາມເປັນຢ່າງນີ້ບໍ່ມີ. ກໍແລ ເມື່ອພຣະຜູ້ມີພຣະກາຄຕຣັສໄວຍາກຣນພາສິຕນີ້ຢູ່ ຈິຕຂອງກິກບຸ ໑໐໐໐ ອົງຄ໌ນັ້ນ ພົ້ນແລ້ວຈາກອາສວະທັ້ງຫຼາຍ ເພາະບໍ່ຖືມັ່ນ.

ອາທິຕຕປຣິຍາຍສູຕຣ໌ ຈົບ

ອຸຣຸເວລປາຕິຫາຣິຍ໌ ຕຕິຍກາຓວາຣ ຈົບ.

ທຣົງເທສນາໂປຣດພຣະເຈົ້າພິມພິສາຣ
ສເດັຈພຣະນຄຣຣາຊຄຣຶຫ໌ຄັ້ງແຣກ

[໔໖] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ຓ ຕາແສງຄຍາສີສະຕາມພຣະພຸທສາທິຣົມຍ໌ແລ້ວ ສເດັຈຈາຣິກໄປ ໂດຍມັຄຄາອັນຈະໄປສູ່ພຣະນຄຣຣາຊຄຣຶຫ໌ ພ້ອມດ້ວຍກິກບຸສົງຆ໌ໝູ່ໃຫຍ່ຈຳນວນ ໑໐໐໐ ອົງຄ໌ ລ້ວນເປັນປຸຣາຓຊຜິລ. ສເດັຈຈາຣິກໂດຍລຳດັບເຖິງພຣະນຄຣຣາຊຄຣຶຫ໌ແລ້ວ. ຮູ້ວ່າ ພຣະອົງຄ໌ປະທັບຢູ່ໃຕ້ຕົ້ນໄຊຊີ່ສຸປະດິບກເຈດີຍ໌ ໃນສວນຕາລໜຸ່ມ ເຂຕພຣະນຄຣຣາຊຄຣຶຫ໌ນັ້ນ.

[໕໗] ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ໄດ້ທຮົງສດັບຂ່າວຖນັດແນ່ວ່າ ພຣະສມຕາໂຄດົມ ສາກຍບຸຕຣ໌ທຮົງຜນວຊຈາກສາກຍຕະກູລ ສເດັຈພຣະນຄຣຣາຊຄຣຶຫ໌ໂດຍລຳດັບ ປະທັບຢູ່ໃຕ້ຕົ້ນໄຊ ຊື່ສຸປະດິຫຖເຈດີຍ໌ ໃນສວນຕາລຫນຸ່ມ ເຂຕພຣະນຄຣຣາຊຄຣຶຫ໌ ກໍແລພຣະກິຕຕິສັພຍ໌ອັນງາມຂອງທ່ານ ພຣະໂຄດົມພຣະອົງຄ໌ນັ້ນ ຂຈຣໄປແລ້ວຢ່າງນີ້ວ່າ ແມ້ເພາະເຫຕຸນີ້ໆ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນທຮົງ ເປັນພຣະອຣຫັນຕ໌ ຕຣັສຮູ້ເອງໂດຍຊອບ ສົມບູຣນ໌ດ້ວຍວິຊຊາແລະຈຣຕະ ສເດັຈໄປດີ ທຮົງຮູ້ໂລກ ທຮົງເປັນສາຣຖີຝຶກບຸຣຸຫທີ່ຄວຣຝຶກ ບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງເທພແລະມນຸຫຍ໌ທັ້ງຫຼາຍ ເປັນຜູ້ ເບີກບານແລ້ວ ເປັນຜູ້ຈຳແນກທັມມ໌ ພຣະອົງຄ໌ທຮົງທຳໂລກນີ້ ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ໃຫ້ແຈ້ງຊັດ ດ້ວຍພຣະປັນຍາອັນຍິ່ງຂອງພຣະອົງຄ໌ເອງ ແລ້ວທຮົງສອນຫມູ່ສັຕວ໌ພ້ອມທັ້ງສມຕະ ພຣາຫ໌ມຕ໌ ເທພ ແລະມນຸຫຍ໌ ໃຫ້ຮູ້ ທຮົງສແດງທັມມ໌ງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ທຮົງ ປະກາສພຣົຫ໌ມຈັຣຍ໌ ພ້ອມທັ້ງອັຖທັ້ງພຍັນຊນະບໍຣິບູຣນ໌ບໍຣິສຸທທິ໌ ອີກຢ່າງນຶ່ງ ກາຣເຫັນພຣະອຣຫັນຕ໌ທັ້ງຫຼາຍ ເຫັນປານນັ້ນ ເປັນຄວາມດີ.

ຫລັງຈາກນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ທຮົງແວດລ້ອມດ້ວຍພຣາຫ໌ມຕ໌ຄຫບໍດີຊາວ ມຄົສ ໑໘ ນຫຸຕ ສເດັຈເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນເຖິງຈຶ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ແລ້ວ ປະທັບນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ. ສ່ວນພຣາຫ໌ມຕ໌ຄຫບໍດີຊາວມຄົສ ໑໘ ນຫຸຕ ນັ້ນແລ ບາງພວກ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ບາງພວກໄດ້ທູລປຣາສຣັຍກັບພຣະຜູ້ມີ ພຣະກາຄ ຄັ້ນຜ່ານກາຣທູລປຣາສຣັຍພໍໃຫ້ເປັນທີ່ບັນເທີງ ເປັນທີ່ຣະລຶກເຖິງກັນໄປແລ້ວ ຈຶ່ງນັ່ງ ຓ ທີ່ຄວຣ ສ່ວນຂ້າງນຶ່ງ ບາງພວກປະຄອງອັນຊລີໄປທາງທີ່ພຣະຜູ້ມີພຣະກາຄປະທັບ ແລ້ວນັ່ງ ຓ ທີ່ຄວຣສ່ວນ ຂ້າງນຶ່ງ ບາງພວກປະກາສນາມແລະໂຄຕຣ໌ໃນສຳນັກພຣະຜູ້ມີພຣະກາຄ ແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ບາງພວກນັ່ງນິ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ. ຄັ້ງນັ້ນ ພຣາຫ໌ມຕ໌ຄຫບໍດີຊາວມຄົສ ໑໘ ນຫຸຕນັ້ນໄດ້ມີ ຄວາມດຳຣິວ່າ ພຣະມຫາສມຕະປະພຶຕພຣົຫ໌ມຈັຣຍ໌ໃນທ່ານອຸຣຸເວລກັສສປ ຫຼືວ່າທ່ານອຸຣຸເວລກັສສປ ປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຕະ. ລຳດັບນັ້ນ ພຣະຜູ້ມີພຣະກາຄທຮົງຮູ້ຄວາມດຳຣິໃນໃຈຂອງ ພຣາຫ໌ມຕ໌ຄຫບໍດີຊາວມຄົສ ໑໘ ນຫຸຕນັ້ນ ດ້ວຍພຣະຫັຍຂອງພຣະອົງຄ໌ ໄດ້ຕຣັສກະທ່ານພຣະອຸຣຸເວລກັສສປ ດ້ວຍພຣະຄາຖາວ່າ ດັ່ງນີ້:-

ດູຣາທ່ານຜູ້ຢູ່ໃນອຸຣຸເວລາມານານ ເຄີຍເປັນອາຈາຣຍ໌ສັ່ງສອນຫມູ່ຊຸຜິລຜູ້ຜອມ ເພາະກຳລັງພຣົຕ ທ່ານເຫັນເຫຕຸໃດ ຈຶ່ງຍອມລະເພີງເສັຽລະ?

ດູຣາກັສສປ ເຮົາຖາມເນື້ອຄວາມນີ້ກະທ່ານ ທ່ານລະເພີງທີ່ບູຊາໄປເຮັດຫຍັງລະ?

ທ່ານພຣະອຸຣຸເວລກັສສປທູລຕອບວ່າ ຍັນທັ້ງຫຼາຍກ່າວຍົກຍ່ອງຮູປສຽງແລະຣົສທີ່ໜ້າປັຕຖນາ ແລະສຕຣີທັ້ງຫຼາຍ ຂ້າພຣະພຸທສເຈົ້າຮູ້ວ່ານັ່ນເປັນມົລທິນໃນອຸປຣິທັ້ງຫຼາຍແລ້ວ ເພາະເຫຕຸນັ້ນ ຈຶ່ງບໍ່ ຍິນດີ ໃນການບວງສວງ ໃນການບູຊາ.

ພຣະຜູ້ມີພຣະກາຄຕຣັສຖາມວ່າ ດູຣາກັສສປ ກໍໃຈຂອງທ່ານບໍ່ຍິນດີແລ້ວໃນອາຣົມຕ໌ຄືຮູປ ສຽງແລະຣົສເຫຼົ່ານັ້ນ ດູຣາກັສສປ ກໍເມື່ອເປັນເຊັ່ນນັ້ນ ໃຈຂອງທ່ານຍິນດີໃນສິ່ງໃດລະ ໃນເທວໂລກ ຫຼືມນຸษຍ໌ໂລກ ທ່ານຈົ່ງບອກຂໍ້ນັ້ນແກ່ເຮົາ?

ທ່ານພຣະອຸຣຸເວລກັສສປທູລຕອບວ່າ ຂ້າພຣະພຸທສເຈົ້າໄດ້ເຫັນທາງອັນສງົບ ບໍ່ມີອຸປຣິ ບໍ່ມີກັງວົລ ບໍ່ຕິດຢູ່ໃນກາມກົພ ບໍ່ມີກາວະເປັນຢ່າງອື່ນ ບໍ່ແມ່ນສັມມ໌ທີ່ຜູ້ອື່ນແນະໃຫ້ບັຣລຸ ເພາະດັ່ງນັ້ນ ຈຶ່ງບໍ່ ຍິນດີໃນການບວງສວງ ໃນການບູຊາ

[໕໗] ລຳດັບນັ້ນ ທ່ານພຣະອຸຣຸເວລກັສສປລຸກຈາກອາສນະ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ມອບຫົວລົງ ທີ່ພຣະບາທຂອງພຣະຜູ້ມີພຣະກາຄ ແລ້ວໄດ້ຂາບທູລພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍພຣະຜູ້ມີ- ພຣະກາຄເປັນພຣະສາສດາຂອງຂ້າພຣະພຸທສເຈົ້າ ຂ້າພຣະພຸທສເຈົ້າເປັນສາວົກ, ພຣະຜູ້ມີພຣະກາຄເປັນ ພຣະສາສດາຂອງຂ້າພຣະພຸທສເຈົ້າ ຂ້າພຣະພຸທສເຈົ້າເປັນສາວົກ ພຣະພຸທສເຈົ້າຂ້ານ້ອຍ.

ລຳດັບນັ້ນ ພຣາຫ໌ມຕ໌ຄຫບໍດີຊາວມຄົສ ທັ້ງ ໑໔ ນຫຸຕ ນັ້ນ ໄດ້ມີຄວາມເຂົ້າໃຈວ່າ ທ່ານພຣະ ອຸຣຸເວລກັສສປປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຕະ. ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມ ປຣິວິຕົກແຫ່ງຈິຕຂອງພຣາຫ໌ມຕ໌ຄຫບໍດີຊາວມຄົສທັ້ງ ໑໔ ນຫຸຕນັ້ນ ດ້ວຍພຣະຫັຍຂອງພຣະອົງຄ໌ແລ້ວ ທຣົງ ສແດງອນຸປຸພພີກຖາ ຄືທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທษ ຄວາມຕ່ຳຊາມ ຄວາມເສົ້າ ຫມອງຂອງກາມທັ້ງຫຼາຍແລະອານິສົງສ໌ໃນຄວາມອອກຈາກກາມ. ເມື່ອພຣະຜູ້ມີພຣະກາຄທຣົງຮູ້ວ່າ ພວກ ເຂົາມີຈິຕສງົບ ມີຈິຕອ່ອນ ມີຈິຕປຼອດຈາກນິວຣຕ໌ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສ ພຣະສັມມ໌ເທສນາທີ່ພຣະພຸທສເຈົ້າທັ້ງຫຼາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄືທຸກຂ໌ ສມຸທັຍ ນິໂຣສ ມັຄຄ໌. ດວງຕາເຫັນສັມມ໌ ປຼາສຈາກຣຸລີ ປຼາສຈາກມົລທິນ ວ່າສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງຫມົດມີຄວາມດັບເປັນສັມມດາ ໄດ້ເກີດແກ່ພຣາຫ໌ມຕ໌ຄຫບໍດີຊາວມຄົສ ໑໑ ນຫຸຕ ຊຶ່ງມີພຣະເຈົ້າ ພິມພິສາຣເປັນປະມຸຂ ຓ ທີ່ນັ່ງນັ້ນແລ ຄືຜ້າທີ່ສະອາດ ປຼາສຈາກມົລທິນ ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີ ດັ່ງນັ້ນ. ພຣາຫ໌ມຕ໌ຄຫບໍດີອີກ ໑ ນຫຸຕ ສແດງຕົນເປັນອຸບາສົກ.

[໕໘] ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ໄດ້ທຣົງເຫັນສັມມ໌ແລ້ວ ໄດ້ທຣົງບັຣລຸ ສັມມ໌ແລ້ວ ໄດ້ທຣົງຮູ້ສັມມ໌ແຈ່ມແຈ້ງແລ້ວ ທຣົງມີສັມມ໌ອັນຫຍັ່ງລົງແລ້ວ ທຣົງຂ້າມຄວາມສົງສັຍໄດ້ແລ້ວ

ປູາສຈາກຄຳສແດງຄວາມສົງສັຍ ທຣົງເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງທຣົງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ທູລພຣະວາຈານີ້ຕໍ່ພຣະຜູ້ມີພຣະກາຄວ່າ ຄັ້ງກ່ອນ ເມື່ອຂ້ານ້ອຍຍັງເປັນຣາຊກຸມາຣ ໄດ້ມີຄວາມປັຕຖນາ ໕ ຢ່າງ ບັດນີ້ ຄວາມປັຕຖນາ ໕ ຢ່າງນັ້ນ ຂອງຂ້ານ້ອຍສຳເຣັຈແລ້ວ.

ຄວາມປັຕຖນາ ໕ ຢ່າງ

໑. ຄັ້ງກ່ອນ ເມື່ອຂ້ານ້ອຍຍັງເປັນຣາຊກຸມາຣ ໄດ້ມີຄວາມປັຕຖນາວ່າ ແນວໃດນໍ ຊົນທັ້ງຫຼາຍຄວຣອພິເษກເຮົາໃນຣາຊສົມບັຕິດັ່ງນີ້ ນີ້ເປັນຄວາມປັຕຖນາຂອງຂ້ານ້ອຍປະກາຣທີ່ ໑ ບັດນີ້ຄວາມປັຕຖນານັ້ນຂອງຂ້ານ້ອຍສຳເຣັຈແລ້ວ ພຣະພຸທສເຈົ້າຂ້ານ້ອຍ

໒. ຂໍພຣະອຣຫັນຕສັມມາສັມພຸທສເຈົ້າ ຄວຣສເດັຈມາສູ່ແວ່ນແຄວ້ນຂອງຂ້ານ້ອຍນັ້ນ ນີ້ເປັນຄວາມປັຕຖນາຂອງຂ້ານ້ອຍປະກາຣທີ່ ໒ ບັດນີ້ ຄວາມປັຕຖນານັ້ນຂອງຂ້ານ້ອຍສຳເຣັຈແລ້ວ ພຣະພຸທສເຈົ້າຂ້ານ້ອຍ

໓. ຂໍຂ້ານ້ອຍຈົ່ງໄດ້ເຂົ້າເຝົ້າພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ນີ້ເປັນຄວາມປັຕຖນາຂອງຂ້ານ້ອຍປະກາຣທີ່ ໓ ບັດນີ້ ຄວາມປັຕຖນານັ້ນ ຂອງຂ້ານ້ອຍສຳເຣັຈແລ້ວ ພຣະພຸທສເຈົ້າຂ້ານ້ອຍ

໔. ຂໍພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນຄວຣສແດງທັມມ໌ແກ່ຂ້ານ້ອຍ ນີ້ເປັນຄວາມປັຕຖນາຂອງຂ້ານ້ອຍປະກາຣທີ່ ໔ ບັດນີ້ຄວາມປັຕຖນານັ້ນ ຂອງຂ້ານ້ອຍສຳເຣັຈແລ້ວ ພຣະພຸທສເຈົ້າຂ້ານ້ອຍ

໕. ຂໍຂ້ານ້ອຍຄວຣຮູ້ທົ່ວເຖິງທັມມ໌ຂອງພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ນີ້ເປັນຄວາມປັຕຖນາຂອງຂ້ານ້ອຍປະກາຣທີ່ ໕ ບັດນີ້ ຄວາມປັຕຖນານັ້ນ ຂອງຂ້ານ້ອຍສຳເຣັຈແລ້ວ ພຣະພຸທສເຈົ້າຂ້ານ້ອຍ

ພຣະພຸທສເຈົ້າຂ້ານ້ອຍ ຄັ້ງກ່ອນຂ້ານ້ອຍຍັງເປັນຣາຊກຸມາຣ ໄດ້ມີຄວາມປັຕຖນາ ໕ ຢ່າງນີ້ ບັດນີ້ຄວາມປັຕຖນາ ໕ ຢ່າງນັ້ນຂອງຂ້ານ້ອຍສຳເຣັຈແລ້ວ ກາษິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ກາษິຕຂອງພຣະອົງຄ໌ຄັກຫຼາຍ ພຣະພຸທສເຈົ້າຂ້ານ້ອຍ ພຣະອົງຄ໌ທຣົງປະກາສທັມມ໌ໂດຍອເນກປຣິຍາຍຢ່າງນີ້ ປຽບເໝືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດ ດ້ວຍຕັ້ງໃຈວ່າ ຄົນມີຈັກษຸຈັກເຫັນຮູປ ດັ່ງນີ້ ຂ້ານ້ອຍນີ້ ຂໍເຖິງພຣະຜູ້ມີພຣະກາຄ ພຣະທັມມ໌ ແລະພຣະກິກษຸສົງฆ໌ ວ່າເປັນສຣຓະ ຂໍພຣະອົງຄ໌ຈົ່ງທຣົງຈຳຂ້ານ້ອຍວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຓະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ ແລະຂໍພຣະຜູ້ມີພຣະກາຄພ້ອມດ້ວຍກິກษຸສົງฆ໌ຈົ່ງທຣົງຮັບກັຕຕາຫາຣຂອງຂ້ານ້ອຍ ໃນມື້ອື່ນນີ້.

ພຣະຜູ້ມີພຣະກາຄທຣົງຮັບດ້ວຍດຸษຓີກາພ. ຄັ້ນພຣະເຈົ້າພິມພິສາຣຈອມເສນາມາຄົຣາຊທຣົງຮູ້ການຮັບນິມົນຕ໌ຂອງພຣະຜູ້ມີພຣະກາຄແລ້ວ ສເດັຈລຸກຈາກທີ່ປະທັບຖວາຍບັງຄົມພຣະຜູ້ມີພຣະກາຄ ທຣົງທຳປະທັກษິຓແລ້ວສເດັຈກັບໄປ.

[໖໐] ຫລັງຈາກນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົຮຣາຊ ຮັບສັ່ງໃຫ້ຕົກແຕ່ງຂອງຄ້ຽວ ຂອງລົ້ນອັນປະຕີຕໂດຍຜ່ານຣາຕຣີນັ້ນ ແລ້ວໃຫ້ເຈົ້າພນັກງານໄປຂາບທູລກັຕຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ພຣະພຸທສເຈົ້າຂ້ານ້ອຍ ກັຕຕາຫາຣແລ້ວໆ. ຂຕະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄທຮົງ ອັນຕຣວາສົກແລ້ວ ທຮົງຖືບາຕຮ໌ຈີວຣ ສເດັຈພຣະພຸທສດຳເນີນສູ່ພຣະນຄຣຣາຊຄຣຶຫ໌ ພ້ອມດ້ວຍກິກຂຸສົງໝ໌ ຫມູ່ໃຫຍ່ ຈຳນວນ ໑໐໐໐ ອົງຄ໌ ລ້ວນປຸຣາຕຊຕິລ.

[໖໑] ກໍໂດຍສມັຍນັ້ນແລ ທ້າວສັກກະຈອມທວຍເທພທຮົງນິຣມິຕເພສເປັນມາຕົພ ສເດັຈພຣະ ດຳເນີນນຳຫນ້າກິກຂຸສົງໝ໌ມີພຣະພຸທສເຈົ້າເປັນປະມຸຂ ພ້ອມຈົ່ມຄາຖາເຫຼົ່ານີ້ ວ່າດັ່ງນີ້:-

ຄາຖາສດຸດີພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄ ມີພຣະວັຣນະດັ່ງທອງສິງຄີ ທຮົງຝຶກ
ອິນທຣີຍ໌ແລ້ວ ທຮົງພົ້ນວິເສສແລ້ວ ສເດັຈປະເວສສູ່ພຣະນຄຣ
ຣາຊຄຣຶຫ໌ພ້ອມດ້ວຍພຣະປຸຣາຕຊຕິລທັ້ງຫຼາຍ ຜູ້ຝຶກອິນທຣີຍ໌
ແລ້ວ ຜູ້ພົ້ນວິເສສແລ້ວ.
ພຣະຜູ້ມີພຣະກາຄ ມີພຣະວັຣນະດັ່ງທອງສິງຄີ ທຮົງພົ້ນ
ແລ້ວ ທຮົງພົ້ນວິເສສແລ້ວ ສເດັຈປະເວສສູ່ພຣະນຄຣຣາຊຄຣຶຫ໌
ພ້ອມດ້ວຍພຣະປຸຣາຕຊຕິລທັ້ງຫຼາຍ ຜູ້ພົ້ນແລ້ວ ຜູ້ພົ້ນວິເສສ
ແລ້ວ. ພຣະຜູ້ມີພຣະກາຄມີພຣະວັຣນະດັ່ງທອງສິງຄີ
ທຮົງຂ້າມແລ້ວ ທຮົງພົ້ນວິເສສແລ້ວ ສເດັຈປະເວສສູ່ພຣະນຄຣ
ຣາຊຄຣຶຫ໌ ພ້ອມດ້ວຍພຣະປຸຣາຕຊຕິລທັ້ງຫຼາຍ ຜູ້ພົ້ນແລ້ວ
ຜູ້ພົ້ນວິເສສແລ້ວ.
ພຣະຜູ້ມີພຣະກາຄ ມີພຣະວັຣນະດັ່ງທອງສິງຄີ ທຮົງສງົບ
ແລ້ວ ທຮົງພົ້ນວິເສສແລ້ວ ສເດັຈປະເວສສູ່ພຣະນຄຣຣາຊຄຣຶຫ໌
ພ້ອມດ້ວຍພຣະປຸຣາຕຊຕິລທັ້ງຫຼາຍ ຜູ້ສງົບແລ້ວ ຜູ້ພົ້ນວິເສສແລ້ວ.
ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນທຮົງມີອຣິຍວາສັຣມມ໌ ໑໐ ປະການ
ເປັນເຄື່ອງຢູ່ ທຮົງປະກອບດ້ວຍພຣະກຳລັງ ໑໐ ທຮົງຮູ້
ສັຣມມ໌ ຄື ກັມມບົຖ ໑໐ ແລະທຮົງປະກອບດ້ວຍສັຣມມ໌ອັນເປັນ

ອົງຄ໌ຂອງພຣະອເສຂະ ໑໐ ມີກິກຂຸບໍຣິວາຣພັນນຶ່ງ ສເດັຈ
ປະເວສສູ່ພຣະນຄຣຣາຊຄຣືຫ໌

[໖໘] ປະຊາຊົນໄດ້ເຫັນທ້າວສັກກະຈອມທວຍເທພແລ້ວພາກັນກ່າວຢ່າງນີ້ວ່າ ພໍ່ຫນຸ່ມນີ້ມີຮູປງາມຍິ່ງນັກ ເປັນຕາແງງ ເປັນຕາຊົມ ພໍ່ຫນຸ່ມນີ້ຂອງໃຜນໍ. ເມື່ອປະຊາຊົນກ່າວຢ່າງນີ້ແລ້ວທ້າວສັກກະຈອມທວຍເທພໄດ້ກ່າວຕອບປະຊາຊົນພວກນັ້ນດ້ວຍຄາຖາ ວ່າດັ່ງນີ້:-

ພຣະຜູ້ມີພຣະກາຄພຣະອົງຄ໌ໃດເປັນນັກປາຊຍ໌ຫຣົງຝຶກອິນທຣີຍ໌
ທັ້ງປວງແລ້ວ ເປັນຜູ້ຜ່ອງແຜ້ວຫາບຸຄຄົລປຽບບໍ່ໄດ້ ໄກລຈາກ
ກິເລສ ສເດັຈໄປດີແລ້ວໃນໂລກ ຂ້າພເຈົ້າເປັນຜູ້ຮັບໃຊ້ຂອງ
ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ.

ທຣົງຮັບພຣະເວຣຸວັນເປັນສັງຄິກາວາສ

[໖໙] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນໄປສູ່ພຣະຣາຊນິເວສນ໌ຂອງພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ຄັ້ນເຖິງແລ້ວ ປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍພ້ອມດ້ວຍກິກຂຸສົງຄ໌. ຈຶ່ງພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ທຣົງອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂດ້ວຍຂາທນີຍໂກຊນີຍາຫາຣອັນປະຓີຕດ້ວຍພຣະຫັຕຖ໌ຂອງພຣະອົງຄ໌ ຈົນໃຫ້ພຣະຜູ້ມີພຣະກາຄສເວີຍແລ້ວທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ ຫ້າມກັຕແລ້ວ ຈຶ່ງປະທັບນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ. ທ້າວລາວໄດ້ທຣົງພຣະຣາຊດຳຣິວ່າ ພຣະຜູ້ມີພຣະກາຄຄວຣປະທັບຢູ່ ໓ ທີ່ໃດດີນໍ ຊຶ່ງຈະເປັນສຖານທີ່ບໍ່ໄກລ ບໍ່ໃກ້ຈາກບ້ານນັກ ສະດວກດ້ວຍການຄມນາຄົມ ຄວຣທີ່ປະຊາຊົນຜູ້ຕ້ອງປະສົງຄ໌ຈະເຂົ້າໄປເຝົ້າໄດ້ ກາງເວັນບໍ່ສາຣະວົນ ກາງຄືນງຽບສງັດ ສຽງບໍ່ກຶກກ້ອງ ປາສຈາກລົມແຕ່ຊົນທີ່ຍ່າງເຂົ້າອອກ ຄວຣເປັນທີ່ປະກອບກິຈຂອງຜູ້ຕ້ອງການທີ່ສງັດ ແລະຄວຣເປັນທີ່ຫລີກເຮັ້ນຢູ່ຕາມສມຕວິສັຍ. ແລ້ວໄດ້ທຣົງພຣະຣາຊດຳຣິຕໍ່ໄປວ່າ ສວນເວຣຸວັນຂອງເຮົານີ້ແລ ບໍ່ໄກລບໍ່ໃກ້ຈາກບ້ານນັກ ສະດວກດ້ວຍການຄມນາຄົມ ຄວຣທີ່ປະຊາຊົນຜູ້ຕ້ອງປະສົງຄ໌ອາຈຈະເຂົ້າໄປເຝົ້າໄດ້ ກາງເວັນບໍ່ສາຣະວົນ ກາງຄືນງຽບສງັດ ສຽງບໍ່ກຶກກ້ອງ ປາສຈາກລົມແຕ່ຊົນທີ່ເຂົ້າອອກ ຄວຣເປັນທີ່ປະກອບກິຈຂອງຜູ້ຕ້ອງການທີ່ສງັດ ແລະຄວຣເປັນທີ່ຫລີກເຮັ້ນຢູ່ຕາມສມຕວິສັຍ ບໍ່ດັ່ງນັ້ນ ເຮົາຄວຣຖວາຍສວນເວຣຸວັນແກ່ກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດັ່ງນີ້. ລຳດັບນັ້ນ ຈຶ່ງທຣົງຈັບພຣະສຸວັຓກິງຄາຣ ທຣົງຫລັ່ງນ້ຳນ້ອມຖວາຍແດ່ພຣະຜູ້ມີພຣະກາຄດ້ວຍພຣະຣາຊດຳຣັສວ່າ ຂ້ານ້ອຍຖວາຍສວນເວຣຸວັນນັ້ນແກ່ກິກຂຸສົງຄ໌ ມີພຣະພຸທສເຈົ້າເປັນປະມຸຂພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄທຮົງຮັບອາຣາມແລ້ວ. ແລະທຮົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມເສນາມາຄົຮ ຣາຊທຮົງເຫັນແຈ້ງ ສມາທານ ອາຈຫາລ ຣ່າເຣີງ ດ້ວຍທັມມີກຖາ ແລ້ວສເດັຈລຸກຈາກທີ່ປະທັບສເດັຈກັບ. ຕໍ່ມາ ພຣະອົງຄ໌ທຮົງທໍາທັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາ ກິກຂຸທັ້ງຫຼາຍ ເຮົາອນຸຍາຕອາຣາມ.

ທຮົງເທສນາໂປຼດພຣະເຈົ້າພິມພິສາຣ ຈົບ.

ພຣະສາຣີບຸຕຣ໌ແລະພຣະໂມຄຄັລລານະບັຣພຊາ

ພຣະອັສສຊິເຖຣະ

[໖໔] ກໍໂດຍສມັຍນັ້ນແລ ສັຍຊັຍປຣິພາຊົກອາສັຍຢູ່ໃນພຣະນຄຣຣາຊຄຣຶຫ໌ ພ້ອມດ້ວຍ ປຣິພາຊົກບໍຣິຫັຫຫມູ່ໃຫຍ່ ຈໍານວນ ໒໕໐ ຄົນ. ກໍຄັ້ງນັ້ນ ພຣະສາຣີບຸຕຣ໌ພຣະໂມຄຄັລລານະປະພຶຕ ພຣົຫ໌ມຈັຣຍ໌ຢູ່ໃນສໍານັກສັຍຊັຍປຣິພາຊົກ. ທ່ານທັ້ງສອງໄດ້ທໍາກຕິກາກັນໄວ້ວ່າ ຜູ້ໃດບັຣລຸອມຕທັມມ໌ກ່ອນ ຜູ້ນັ້ນຈົ່ງບອກແກ່ອີກຄົນນຶ່ງ. ຂຕະນັ້ນເປັນເວລາເຊົ້າ ທ່ານພຣະອັສສຊິນຸ່ງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣ ເຂົ້າໄປບິຓທບາຕຍັງພຣະນຄຣຣາຊຄຣຶຫ໌ ມີມັຣຍາທກ້າວໄປ ຖອຍກັບ ແລຫຼຽວ ຄູ້ແຂນ ຢຽດແຂນ ໜ້າເລື່ອມໃສ ມີນັຍນ໌ຕາທອດລົງ ເຖິງພ້ອມດ້ວຍອິຣິຍາບົຖ. ສາຣີບຸຕຣ໌ປາຣິພາຊົກໄດ້ເຫັນທ່ານພຣະອັສສຊິ ກໍາລັງທ່ຽວບິຓທບາຕໃນພຣະນຄຣຣາຊຄຣຶຫ໌ ມີມັຣຍາທກ້າວໄປ ຖອຍກັບ ແລຫຼຽວ ຄູ້ແຂນ ຢຽດແຂນ ໜ້າເລື່ອມໃສ ມີນັຍນ໌ຕາທອດລົງ ເຖິງພ້ອມດ້ວຍອິຣິຍາບົຖ ຄັ້ນແລ້ວໄດ້ມີຄວາມດໍາຣິວ່າ ບັຣດາພຣະອຣຫັນຕ໌ ຫຼືທ່ານຜູ້ໄດ້ບັຣລຸພຣະອຣຫັຕມັຄຄ໌ໃນໂລກ ກິກຂຸອົງຄ໌ນີ້ຄົງເປັນຜູ້ໃດຜູ້ນຶ່ງແນ່ ຖ້າຈັ່ງໃດ ເຮົາຄວຣເຂົ້າໄປຫາກິກຂຸອົງຄ໌ນີ້ ແລ້ວຖາມວ່າ ທ່ານບວຊ ຈເພາະໃຜ ໃຜເປັນສາສດາຂອງທ່ານ ຫຼືທ່ານມັກໃຈທັມມ໌ຂອງໃຜ? ແລ້ວໄດ້ດໍາຣິຕໍ່ໄປວ່າ ຍັງເປັນກາລບໍ່ສົມຄວຣຈະຖາມກິກຂຸອົງຄ໌ນີ້ ເພາະ ທ່ານກໍາລັງເຂົ້າລະແວກບ້ານທ່ຽວບິຓທບາຕ ບໍ່ດັ່ງນັ້ນ ເຮົາຄວຣຕິດຕາມກິກຂຸອົງຄ໌ນີ້ໄປຂ້າງຫລັງໆ ເພາະເປັນ ທາງອັນຜູ້ມຸ່ງປະໂຍຊນ໌ທັ້ງຫຼາຍຈະຕ້ອງສົນໃຈ. ຄັ້ງນັ້ນ ທ່ານພຣະອັສສຊິທ່ຽວບິຓທບາຕໃນພຣະນຄຣ ຣາຊຄຣຶຫ໌ ຖືບິຓທບາຕກັບໄປ. ຈຶ່ງສາຣີບຸຕຣ໌ປຣິພາຊົກເຂົ້າໄປຫາທ່ານພຣະອັສສຊິ ເຖິງແລ້ວໄດ້ເວົ້າ ປຼາສຣັຍກັບທ່ານພຣະອັສສຊິ ຄັ້ນຜ່ານກາຣເວົ້າປຼາສຣັຍພໍໃຫ້ເປັນທີ່ບັນເທີງ ເປັນທີ່ຣະລຶກເຖິງກັນໄປແລ້ວ ໄດ້ຢືນຢູ່ ໓ ທີ່ຄວຣສ່ວນນຶ່ງ. ສາຣີບຸຕຣ໌ປຣິພາຊົກຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ກ່າວຄໍານີ້ ກະທ່ານພຣະອັສສຊິວ່າ ອິນທຣີຍ໌ຂອງທ່ານຜ່ອງໃສ ຜິວພັຣຓ໌ຂອງທ່ານບໍຣິສຸທຂໍ້ຜຸດຜ່ອງ ທ່ານບວຊ ຈເພາະໃຜ ໃຜເປັນສາສດາຂອງທ່ານ ຫຼືທ່ານມັກໃຈທັມມ໌ຂອງໃຜ ໂດຍຂ້ານອັຍ?

ອ. ມີຢູ່ ທ່ານ ພຣະມຫາສມຕະສາກຍບຸຕຣ໌ ສເດັຈອອກທຣົງຜນວຊຈາກສາກຍຕະກູລ ເຮົາບວຊລເພາະພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນເປັນສາສດາຂອງເຮົາ ແລະເຮົາຊອບໃຈສັມມ໌ຂອງພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ.

ສາ. ກໍພຣະສາສດາຂອງທ່ານສອນຢ່າງໃດ ແນະນຳຢ່າງໃດ?

ອ. ເຮົາເປັນຄົນໃຫມ່ ບວຊຍັງບໍ່ນານ ເພິ່ງມາສູ່ພຣະສັມມ໌ວິນັຍນີ້ ບໍ່ອາຈສແດງສັມມ໌ແກ່ທ່ານໄດ້ກວ້າງຂວາງ ແຕ່ຈັກກ່າວໃຈຄວາມແກ່ທ່ານໂດຍຫຍໍ້.

ສາ. ນ້ອຍຫຼືຫຼາຍ ນິມົນຕ໌ກ່າວເຖີດ ທ່ານຈົ່ງກ່າວແຕ່ໃຈຄວາມແກ່ຂ້າພເຈົ້າ ຂ້າພເຈົ້າຕ້ອງການໃຈຄວາມຢ່າງດຽວ ທ່ານຈະທຳພຍັຄຊນະໃຫ້ຫຼາຍເຮັດຫຍັງ.

ພຣະອັສສຊິເຖຣະສແດງສັມມ໌

[໖໔] ລຳດັບນັ້ນ ທ່ານພຣະອັສສຊິ ໄດ້ກ່າວສັມມ໌ປຣິຍາຍນີ້ແກ່ສາຣີບຸຕຣ໌ປຣິພາຊົກ ວ່າດັ່ງນີ້:-

ສັມມ໌ເຫຼົ່າໃດເກີດແຕ່ເຫຕຸ ພຣະຕຖາຄົຕທຣົງສແດງເຫຕຸແຫ່ງສັມມ໌
ເຫຼົ່ານັ້ນ ແລະຄວາມດັບແຫ່ງສັມມ໌ເຫຼົ່ານັ້ນ ພຣະມຫາສມຕະມີປົກຕິ
ທຣົງສັ່ງສອນຢ່າງນີ້.

ສາຣີບຸຕຣ໌ປຣິພາຊົກໄດ້ດວງຕາເຫັນສັມມ໌

[໖໕] ຄັ້ນໄດ້ຟັງສັມມ໌ປຣິຍາຍນີ້ ດວງຕາເຫັນສັມມ໌ ປາສຈາກທຸລີ ປາສຈາກມົລທິນວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບໄປເປັນສັມມດາ ໄດ້ເກີດຂຶ້ນແກ່ສາຣີບຸຕຣ໌ປຣິພາຊົກ

ສັມມ໌ນີ້ແຫຼະຖ້າມີກໍພຽງນີ້ເທົ່ານັ້ນ ທ່ານທັ້ງຫຼາຍຈົ່ງແທງ
ຕລອດບົທອັນຫາຄວາມໂສກບໍ່ໄດ້ ບົທອັນຫາຄວາມໂສກບໍ່ໄດ້ນີ້
ພວກເຮົາຍັງບໍ່ເຫັນ ລ່ວງເລີຍມາແລ້ວຫຼາຍຫມື່ນກັລປ໌.

ສາຣີບຸຕຣ໌ປຣິພາຊົກເປລື້ອງຄຳປຕິຍານາ

[໖໗] ເວລາຕໍ່ມາ ສາຣີບຸຕຣ໌ປຣິພາຊົກເຂົ້າໄປຫາໂມຄຄັລລານປຣິພາຊົກ. ໂມຄຄັລລານປຣິພາຊົກໄດ້ເຫັນສາຣີບຸຕຣ໌ປຣິພາຊົກຍ່າງມາແຕ່ໄກລ ຄັ້ນແລ້ວໄດ້ຖາມສາຣີບຸຕຣ໌ປຣິພາຊົກວ່າ ຜູ້ມີອາຍຸ ອິນທຣີຍ໌ຂອງທ່ານຜ່ອງໃສ ຜິວພັຣຕ໌ຂອງທ່ານບໍຣິສຸທສິ໌ຜຸດຜ່ອງ ທ່ານໄດ້ບັຣລຸອມຕສັມມ໌ແລ້ວແທ້ໆ ນີ້?

ສາ. ຖືກລະ ຜູ້ມີອາຍຸ ເຮົາໄດ້ບັຣລຸອມຕສັມມ໌ແລ້ວ.

ໂມຄ. ທ່ານບັຣລຸອມຕສັມມ໌ໄດ້ຢ່າງໃດ ດ້ວຍວິທີໃດ?

ສາ. ຜູ້ມີອາຍຸ ວັນນີ້ເຮົາໄດ້ເຫັນພຣະອັສສຊິກຳລັງທ່ຽວບິຓຫບາຕໃນພຣະນຄຣຣາຊຄຣິຫ໌ ມີມັຣຍາທກ້າວໄປ ຖອຍກັບ ແລຫຼຽວ ຢຽດແຂນ ຄູ້ແຂນ ໜ້າເລື່ອມໃສ ມີນັຍນ໌ຕາທອດລົງ ເຖິງພ້ອມດ້ວຍອິຣິຍາບົຖ ຄັ້ນແລ້ວເຮົາໄດ້ມີຄວາມດຳຣິວ່າ ບັຣດາພຣະອຣຫັນຕ໌ຫຼືທ່ານຜູ້ໄດ້ບັຣລຸອຣຫັຕມັຄຄ໌ໃນໂລກ ກິກຂຸອົງຄ໌ນີ້ຄົງເປັນຜູ້ໃດຜູ້ນຶ່ງແນ່ ຖ້າຈັ່ງໃດ ເຮົາຄວຣເຂົ້າໄປຫາກິກຂຸອົງຄ໌ນີ້ ແລ້ວຖາມວ່າ ທ່ານບວຊຊເພາະໃຜ ໃຜເປັນສາສດາຂອງທ່ານ ຫຼືທ່ານມັກໃຈສັມມ໌ຂອງໃຜ ເຮົານັ້ນໄດ້ຍັ້ງຄິດວ່າ ຍັງເປັນກາລບໍ່ສົມຄວຣຈະຖາມກິກຂຸອົງຄ໌ນີ້ ເພາະທ່ານຍັງກຳລັງເຂົ້າລະແວກບ້ານທ່ຽວບິຓຫບາຕ ບໍ່ດັ່ງນັ້ນເຮົາຄວຣຕິດຕາມກິກຂຸອົງຄ໌ນີ້ໄປຂ້າງຫລັງໆ ເພາະເປັນທາງອັນຜູ້ມຸ່ງປະໂຍຊນ໌ທັ້ງຫຼາຍຈະຕ້ອງສົນໃຈ ລຳດັບນັ້ນ ພຣະອັສສຊິທ່ຽວບິຓຫບາຕໃນພຣະນຄຣຣາຊຄຣິຫ໌ ຖືບິຓຫບາຕກັບໄປແລ້ວ ຕໍ່ມາ ເຮົາໄດ້ເຂົ້າໄປຫາພຣະອັສສຊິ ຄັ້ນເຖິງແລ້ວ ໄດ້ເວົ້າປູາສຣັຍກັບພຣະອັສສຊິ ຄັ້ນຜ່ານການເວົ້າປູາສຣັຍພໍໃຫ້ເປັນທີ່ບັນເທິງ ເປັນທີ່ຣະລຶກເຖິງກັນໄປແລ້ວ ໄດ້ຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ເຮົາຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ກ່າວຄຳນີ້ຕໍ່ພຣະອັສສຊິວ່າ ອິນທຣີຍ໌ຂອງທ່ານຜ່ອງໃສ ຜິວພັຣຓ໌ຂອງທ່ານບໍຣິສຸທທິ໌ຜຸດຜ່ອງ ທ່ານບວຊຊເພາະໃຜ ໃຜເປັນສາສດາຂອງທ່ານ ຫຼືທ່ານມັກໃຈສັມມ໌ຂອງໃຜ ໂດຍຂ້ານອ້ຍ? ພຣະອັສສຊິຕອບວ່າ ມີຢູ່ ທ່ານ ພຣະມຫາສມຓະສາກຍບຸຕຣ໌ສເດັຈອອກທຣົງຜນວຊຈາກສາກຍຕະກູລ ເຮົາບວຊຊເພາະພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ເຮົາໄດ້ຖາມພຣະອັສສຊິຕໍ່ໄປວ່າ ກໍພຣະສາສດາຂອງຊອບໃຈສັມມ໌ຂອງພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ເຮົາໄດ້ຖາມພຣະອັສສຊິຕໍ່ໄປວ່າ ກໍພຣະສາສດາຂອງທ່ານສອນຢ່າງໃດ ແນະນຳຢ່າງໃດ? ພຣະອັສສຊິຕອບວ່າ ເຮົາເປັນຄົນໃຫມ່ ບວຊຍັງບໍ່ນານ ເພິ່ງມາສູ່ພຣະສັມມ໌ວິນັຍນີ້ ບໍ່ອາຈສແດງສັມມ໌ແກ່ທ່ານໄດ້ກວ້າງຂວາງ ແຕ່ຈັກກ່າວໃຈຄວາມແກ່ທ່ານໂດຍຫຍໍ້ ເຮົາໄດ້ຮຽນວ່າ ນ້ອຍຫຼືຫຼາຍ ນິມົນຕ໌ກ່າວເຖີດ ທ່ານຈົງກ່າວແຕ່ໃຈຄວາມແກ່ຂ້າພເຈົ້າ ຂ້າພເຈົ້າຕ້ອງການໃຈຄວາມຢ່າງດຽວ ທ່ານຈະທຳພຍັຍຊນະໃຫ້ຫຼາຍເຮັດຫຍັງ.

[໖໗] ຜູ້ມີອາຍຸ ຄັ້ງນັ້ນ ພຣະອັສສຊິໄດ້ກ່າວສັມມ໌ປຣິຍາຍນີ້ ວ່າດັ່ງນີ້:-

ສັມມ໌ເຫຼົ່າໃດເກີດແຕ່ເຫຕຸ ພຣະຕຖາຄົຕທຣົງສແດງເຫຕຸ
ແຫ່ງສັມມ໌ເຫຼົ່ານັ້ນ ແລະຄວາມດັບແຫ່ງສັມມ໌ເຫຼົ່ານັ້ນ
ພຣະມຫາສມຓະມີປົກຕິທຣົງສັ່ງສອນຢ່າງນີ້.

ໂມຄຄັລລານປຣິພາຊົກໄດ້ດວງຕາເຫັນສັມມ໌

[໖໙] ຄັ້ນໄດ້ຟັງສັມມ໌ປຣິຍາຍນີ້ ດວງຕາເຫັນສັມມ໌ ປຼາສຈາກຣຸລີ ປຼາສຈາກມົລທິນວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບໄປເປັນສັມມດາ ໄດ້ເກີດຂຶ້ນແກ່ ໂມຄຄັລລານປຣິພາຊົກ

ສັມມ໌ນີ້ແຫຼະຖ້າມີກໍພຽງນີ້ເທົ່ານັ້ນ ທ່ານທັ້ງຫຼາຍຈຶ່ງແທງຕລອດບົທອັນຫາຄວາມໂສກບໍ່ໄດ້ ບົທອັນຫາຄວາມໂສກບໍ່ໄດ້ນີ້ ພວກເຮົາຍັງບໍ່ເຫັນ ລ່ວງເລີຍມາແລ້ວຫຼາຍຫມື່ນກັລປ໌.

ສອງສຫາຍອຳລາອາຈາຣຍ໌

[໗໐] ຄັ້ງນັ້ນ ໂມຄຄັລລານປຣິພາຊົກໄດ້ກ່າວຊັກຊວນສາຣີບຸຕຣ໌ປຣິພາຊົກວ່າ ຜູ້ມີອາຍຸ ເຮົາພາກັນໄປສຳນັກພຣະຜູ້ມີພຣະພາຄເຖີດ ເພາະພຣະຜູ້ມີພຣະພາຄນັ້ນເປັນພຣະສາສດາຂອງເຮົາ.

ສາຣີບຸຕຣ໌ປຣິພາຊົກກ່າວວ່າ ຜູ້ມີອາຍຸ ປຣິພາຊົກ ໒໕໐ ຄົນນີ້ອາສັຍເຮົາ ເຫັນແກ່ເຮົາ ຈຶ່ງຢູ່ໃນສຳນັກນີ້ ເຮົາຈັ່ງບອກກ່າວພວກນັ້ນກ່ອນ ພວກນັ້ນຈະທຳຕາມທີ່ເຂົ້າໃຈ.

ລຳດັບນັ້ນ ສາຣີບຸຕຣ໌ໂມຄຄັລລານະພາກັນເຂົ້າໄປຫາປຣິພາຊົກເຫຼົ່ານັ້ນ ຄັ້ນເຖິງແລ້ວໄດ້ກ່າວຄຳນີ້ຕໍ່ພວກປຣິພາຊົກນັ້ນວ່າ ທ່ານທັ້ງຫຼາຍ ເຮົາຈະໄປໃນສຳນັກພຣະຜູ້ມີພຣະພາຄ ເພາະພຣະຜູ້ມີພຣະພາຄນັ້ນເປັນພຣະສາສດາຂອງເຮົາ.

ພວກປຣິພາຊົກຕອບວ່າ ພວກຂ້າພເຈົ້າອາສັຍທ່ານ ເຫັນແກ່ທ່ານຈຶ່ງຢູ່ໃນສຳນັກນີ້ ຖ້າທ່ານຈັກປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຕະ ພວກຂ້າພເຈົ້າທັ້ງຫມົດ ກໍຈັກປະພຶຕພຣົຫ໌ມຈັຣຍ໌ໃນພຣະມຫາສມຕະດ້ວຍ.

ຕໍ່ມາ ສາຣີບຸຕຣ໌ໂມຄຄັລລານະໄດ້ພາກັນເຂົ້າໄປຫາທ່ານສັຍຊັຍປຣິພາຊົກ ຄັ້ນເຖິງແລ້ວໄດ້ຮຽນວ່າ ທ່ານໂດຍຂ້ານ້ອຍ ພວກຂ້ານ້ອຍຈະໄປໃນສຳນັກພຣະຜູ້ມີພຣະພາຄ ເພາະພຣະຜູ້ມີພຣະພາຄນັ້ນເປັນພຣະສາສດາຂອງພວກຂ້ານ້ອຍ

ສັຍຊັຍປຣິພາຊົກເວົ້າຫ້າມວ່າ ຢ່າເລີຍ ທ່ານທັ້ງຫຼາຍ ຢ່າໄປເລີຍ ເຮົາທັ້ງຫມົດ ໓ ຄົນ ຈັກຊ່ອຍກັນບໍຣິຫາຣຄຕະນີ້.

ແມ້ຄັ້ງທີ່ ໒ ...

ແມ້ຄັ້ງທີ່ສາມ ສາຣີບຸຕຣ໌ໂມຄຄັລລານະໄດ້ກ່າວຄຳນີ້ຕໍ່ສັຍຊັຍປຣິພາຊົກວ່າ ທ່ານໂດຍຂ້ານ້ອຍ ພວກຂ້ານ້ອຍຈະໄປໃນສຳນັກພຣະຜູ້ມີພຣະພາຄ ເພາະພຣະຜູ້ມີພຣະພາຄນັ້ນເປັນພຣະສາສດາຂອງພວກຂ້ານ້ອຍ.

ສັຍຊັຍປຣິພາຊົກເວົ້າຫ້າມວ່າ ຢ່າເລີຍ ທ່ານທັ້ງຫຼາຍ ຢ່າໄປເລີຍ ເຮົາທັ້ງຫມົດ ໓ ຄົນ ຈັກຊ່ອຍກັນບໍຣິຫາຣຄຓະນີ້.

ຄັ້ງນັ້ນ ສາຣີບຸຕຣ໌ໂມຄຄັລລານະພາປຣິພາຊົກ ໒໕໐ ຄົນນັ້ນ ມຸ່ງໄປທາງທີ່ຈະໄປພຣະວິຫາຣ ເວລຸວັນ. ກໍໂລຫິຕຮ້ອນໄດ້ທົ່ງອອກຈາກປາກສັຍຊັຍປຣິພາຊົກໃນທີ່ນັ້ນເອງ.

ທຣົງພຍາກຣນ໌ພຣະອັຄຣສາວົກ

[໗໑] ພຣະຜູ້ມີພຣະກາຄໄດ້ທອດພຣະເນຕຣ໌ເຫັນສາຣີບຸຕຣ໌ໂມຄຄັລລານະມາແຕ່ໄກ ຄັ້ນແລ້ວຮັບສັ່ງກັບກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ສຫາຍສອງຄົນນັ້ນ ຄືໂກລິຕະ ແລະອຸປຕິສສະ ກຳລັງມານັ່ນ ຈະເປັນຄູ່ສາວົກຂອງເຮົາ ຈະເປັນຄູ່ອັນຈເຣີຍຊັ້ນຍ່ຽມຂອງເຮົາ

ກໍສຫາຍສອງຄົນນັ້ນພົ້ນວິເສສແລ້ວ ໃນສັມມ໌ອັນເປັນ
ທີ່ສິ້ນອຸປທິ ອັນຍອດຍ່ຽມ ມີຍາຓວິສັຍອັນເລີກຊຶ້ງ
ຍັງມາບໍ່ທັນເຖິງພຣະວິຫາຣເວລຸວັນ ພຣະສາສດາ
ທຣົງພຍາກຣຕ໌ວ່າດັ່ງນີ້
ສຫາຍສອງຄົນນີ້ຄື ໂກລິຕະແລະອຸປຕິສສະກຳລັງ
ມານັ່ນ ຈະເປັນຄູ່ສາວົກຂອງເຮົາ ຈະເປັນຄູ່ອັນຈເຣີຍ
ຊັ້ນຍ່ຽມຂອງເຮົາ.

ເຂົ້າເຝົ້າທູລຂໍບັຣພຊາອຸປສົມບົທ

[໗໔] ຄັ້ງນັ້ນ ສາຣີບຸຕຣ໌ໂມຄຄັລລານະໄດ້ພາກັນເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນເຖິງແລ້ວ ໄດ້ມອບຫົວລົງທີ່ພຣະບາທຂອງຜູ້ມີພຣະກາຄ ແລ້ວທູລຂໍບັຣພຊາອຸປສົມບົທຕໍ່ພຣະຜູ້ມີພຣະກາຄວ່າ ຂໍພວກຂ້າພຣະພຸທສເຈົ້າ ຄວຣໄດ້ບັຣພຊາ ຄວຣໄດ້ອຸປສົມບົທໃນສຳນັກພຣະຜູ້ມີພຣະກາຄ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ພວກທ່ານຈົ່ງເປັນກິກຍຸມາເຖີດ ດັ່ງນີ້ ແລ້ວໄດ້ຕຣັສຕໍ່ໄປວ່າ ສັມມ໌ອັນເຮົາກ່າວດີແລ້ວ ພວກທ່ານຈົ່ງປະພຶຕພຣົຫ໌ມຈັຣຍ໌ເພື່ອທຳທີ່ສຸດທຸກຂ໌ໂດຍຊອບເຖີດ.

ພຣະວາຈານັ້ນແລ ໄດ້ເປັນອຸປສົມບົທຂອງທ່ານຜູ້ມີອາຍຸເຫຼົ່ານັ້ນ.

ສຽງຕິຕຽນ

[໗໖] ກໍໂດຍສມັຍນັ້ນແລ ພວກກຸລບຸຕຣ໌ຊາວມຄົສທີ່ມີຊື່ສຽງໆ ພາກັນປະພຶຕພຣົຫ໌ມຈັຣຍ໌ໃນພຣະຜູ້ມີພຣະກາຄ. ປະຊາຊົນພາກັນເພັ່ງໂທສ ຕິຕຽນ ໂພນທະນາວ່າ ພຣະສມຓະໂຄດົມປຕິບັຕິເພື່ອ

ໃຫ້ຊາຍບໍ່ມີບຸຕຣ໌ ພຣະສມຕາໂຄດົມປຕິບັຕິເພື່ອໃຫ້ລົງເປັນຫມ້າຍ ພຣະສມຕາໂຄດົມປຕິບັຕິເພື່ອຕັດຕກຸລ ບັດນີ້ ພຣະສມຕາໂຄດົມໃຫ້ຊຜິລພັນອົງຄ໌ບວຊແລ້ວ ແລະໃຫ້ປຣິພາຊົກສິษຍ໌ຂອງທ່ານສັລຊັຍ ໒໕໐ ຄົນນີ້ ບວຊແລ້ວ ແລະກຸລບຸຕຣ໌ຊາວມຄົສທີ່ມີຊື່ສຽງໆ ພາກັນປະພຶຕພຣົຫ໌ມຈັຣຍ໌ໃນພຣະສມຕາໂຄດົມ. ອີກຢ່າງນຶ່ງ ປະຊາຊົນໄດ້ເຫັນກິກษຸທັ້ງຫຼາຍແລ້ວໄດ້ໂຈທຍ໌ດ້ວຍຄາຖານີ້ ວ່າດັ່ງນີ້:-

ພຣະມຫາສມຕະສເດັຈມາສູ່ພຣະນຄຣຄອກເຂົາຂອງ
ຊາວມຄົສແລ້ວ ໄດ້ທຣົງນຳປຣິພາຊົກພວກສັລຊັຍ
ທັ້ງປວງໄປແລ້ວ ບັດນີ້ ຈັກທຣົງນຳໃຜໄປອີກລະ.

[໗໔] ກິກษຸທັ້ງຫຼາຍໄດ້ຍິນປະຊາຊົນພວກນັ້ນເພັ່ງໂທษ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ສຽງນັ້ນຈັກຢູ່ບໍ່ໄດ້ນານ ຈັກຢູ່ໄດ້ພຽງ ໗ ວັນເທົ່ານັ້ນ ພົ້ນ ໗ ວັນກໍຈັກຫາຍໄປ ດູຣາກິກษຸທັ້ງຫຼາຍ ຖ້າຊົນເຫຼົ່າໃດກ່າວຫາຕໍ່ພວກທ່ານ ດ້ວຍຄາຖານີ້ ວ່າດັ່ງນີ້:-

ພຣະມຫາສມຕະສເດັຈມາສູ່ພຣະນຄຣຄອກເຂົາຂອງ
ຊາວມຄົສແລ້ວ ໄດ້ທຣົງນຳປຣິພາຊົກພວກສັລຊັຍ
ທັ້ງປວງໄປແລ້ວ ບັດນີ້ ຈັກທຣົງນຳໃຜໄປອີກລະ.

[໗໕] ພວກທ່ານຈຶ່ງກ່າວໂຕ້ຕອບຕໍ່ຊົນເຫຼົ່ານັ້ນ ດ້ວຍຄາຖານີ້ ວ່າດັ່ງນີ້:-

ພຣະຕຖາຄົຕທັ້ງຫຼາຍຜູ້ແກລ້ວກລ້າຫຼາຍ ຍ່ອມທຣົງ
ນຳຊົນທັ້ງຫຼາຍໄປດ້ວຍພຣະສັທธັມມ໌ ເມື່ອຊົນ
ທັ້ງຫຼາຍອັນພຣະອົງຄ໌ທຣົງນຳໄປຢູ່ໂດຍธັມມ໌ ຜູ້
ເຂົ້າໃຈຢ່າງນີ້ຈະຣິษຍາເຮັດຫຍັງ.

ກໍໂດຍສມັຍນັ້ນແລ ປະຊາຊົນທັ້ງຫຼາຍໄດ້ເຫັນກິກษຸທັ້ງຫຼາຍແລ້ວ ຍ່ອມກ່າວຫາດ້ວຍຄາຖານີ້ ວ່າດັ່ງນີ້:-

ພຣະມຫາສມຕະສເດັຈມາສູ່ພຣະນຄຣຄອກເຂົາຂອງ
ຊາວມຄົສແລ້ວ ໄດ້ທຣົງນຳປຣິພາຊົກພວກສັລຊັຍ
ທັ້ງປວງໄປແລ້ວ ບັດນີ້ ຈັກທຣົງນຳໃຜໄປອີກລະ.

ກິກາບຸທັ້ງຫຼາຍໄດ້ກ່າວໂຕ້ຕອບຕໍ່ປະຊາຊົນພວກນັ້ນ ດ້ວຍຄາຖານີ້ ວ່າດັ່ງນີ້:-

ພຣະຕຖາຄົຕທັ້ງຫຼາຍຜູ້ແກລ້ວກລ້າຫຼາຍ ຍ່ອມທຣົງ
ນຳຊົນທັ້ງຫຼາຍໄປດ້ວຍພຣະສັທທັມມ໌ ເມື່ອຊົນ
ທັ້ງຫຼາຍອັນພຣະອົງຄ໌ທຣົງນຳໄປຢູ່ໂດຍທັມມ໌ ຜູ້
ເຂົ້າໃຈຢ່າງນີ້ຈະຣິບຍາເຮັດຫຍັງ.

[໗໖] ປະຊາຊົນກ່າວຢ່າງນີ້ວ່າ ໄດ້ຍິນວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ທຣົງນຳຊົນທັ້ງຫຼາຍໄປໂດຍທັມມ໌ ບໍ່ທຣົງນຳໄປໂດຍອທັມມ໌.

ສຽງນັ້ນໄດ້ມີພຽງ ໗ ວັນເທົ່ານັ້ນ ພົ້ນ ໗ ວັນກໍຫາຍໄປ.

ພຣະສາຣີບຸຕຣ໌ພຣະໂມຄຄັລລານະບັຣພຊາ ຈົບ.

ຈຕຸຕຖາກາຕວາຣ ຈົບ

ຕົ້ນເຫຕຸອຸປັຊຊາຍວັຕຣ໌

[໗໗] ກໍໂດຍສມັຍນັ້ນແລ ກິກາບຸທັ້ງຫຼາຍບໍ່ມີອຸປັຊຊາຍ໌ ບໍ່ມີໃຜຕັກເຕືອນ ບໍ່ມີໃຜພຣ່ຳສອນ ຍ່ອມນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ທ່ຽວບິຕຫບາຕ ເມື່ອປະຊາຊົນກຳລັງບໍຣິໂກຄ ຍ່ອມນ້ອມບາຕຣ໌ສຳຫຼັບທ່ຽວບິຕຫບາຕເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາຈັນ ແມ້ໃນໂຮງອາຫາຣກໍເປັນຜູ້ມີສຽງອື້ອຶງ ມີສຽງດັງຢູ່.

ຄົນທັ້ງຫຼາຍຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ທ່ຽວບິຕຫບາຕ ເມື່ອປະຊາຊົນກຳລັງບໍຣິໂກຄ ໄດ້ນ້ອມບາຕຣ໌ສຳຫຼັບທ່ຽວບິຕຫບາຕເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາຈັນ ແມ້ໃນໂຮງອາຫາຣກໍໄດ້ເປັນຜູ້ມີສຽງອື້ອຶງ ມີສຽງດັງຢູ່ ເຫມືອນພວກພຣາຫ໌ມຕ໌ໃນສຖານທີ່ລ້ຽງພຣາຫ໌ມຕ໌ດັ່ງນັ້ນ.

[໗໘] ກິກຂຸທັ້ງຫຼາຍໄດ້ຍິນປະຊາຊົນພວກນັ້ນເພັ່ງໂທສ ຕິຕຽນ ໂພນທະນາຢູ່. ບັຣດາທີ່ເປັນຜູ້ມັກນ້ອຍ ສັນໂດສ ມີຄວາມລະອາຍ ມີຄວາມນ່າຍ ຜູ້ມັກຕໍ່ສິກຂາ ຕ່າງກໍເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດກິກຂຸທັ້ງຫຼາຍ ຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ທ່ຽວບິຓທບາຕ ເມື່ອປະຊາຊົນກຳລັງບໍຣິໂກຄ ໄດ້ນ້ອມບາຕຣ໌ສຳຫຼັບທ່ຽວບິຓທບາຕເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາຈັນ ແມ້ໃນໂຮງອາຫາຣກໍໄດ້ເປັນຜູ້ມີສຽງອື້ອອຶງ ມີສຽງດັງຢູ່ ດັ່ງນີ້ ແລ້ວຂາບທູລຄວາມນັ້ນແດ່ພຣະຜູ້ມີພຣະກາຄ.

ປະຊຸມກິກຂຸສົງຄ໌ທຣົງສອບຖາມ

[໗໙] ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນໃນເພາະເຫຕຸແຮກເກີດນັ້ນ ແລ້ວທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸທັ້ງຫຼາຍ ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣທ່ຽວບິຓທບາຕ ເມື່ອປະຊາຊົນກຳລັງບໍຣິໂກຄຍ່ອມນ້ອມບາຕຣ໌ສຳຫຼັບທ່ຽວບິຓທບາຕ ເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາຈັນ ແມ້ໃນໂຮງອາຫາຣກໍເປັນຜູ້ມີສຽງອື້ອອຶງ ມີສຽງດັງຢູ່ ແທ້ບໍ່?

ກິກຂຸທັ້ງຫຼາຍທູລຮັບວ່າ ຈິງ ພຣະພຸທຘເຈົ້າຂ້ານ້ອຍ.

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທຘເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ກາຣກະທຳຂອງໂມຄບຸຣຸສເຫຼົ່ານັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ແນວໃດໂມຄບຸຣຸສເຫຼົ່ານັ້ນ ຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣທ່ຽວບິຓທບາຕ ເມື່ອປະຊາຊົນກຳລັງບໍຣິໂກຄ ໄດ້ນ້ອມບາຕຣ໌ສຳຫຼັບທ່ຽວບິຓທບາຕເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາຈັນ ແມ້ໃນໂຮງອາຫາຣກໍໄດ້ເປັນຜູ້ມີສຽງອື້ອອຶງ ມີສຽງດັງຢູ່ ດູຣາກິກຂຸທັ້ງຫຼາຍ ກາຣກະທຳຂອງໂມຄບຸຣຸສເຫຼົ່ານັ້ນນັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ໂດຍທີ່ແທ້ ຍ່ອມເປັນໄປເພື່ອຄວາມບໍ່ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ແລະເພື່ອຄວາມເປັນຢ່າງອື່ນຂອງຊົນບາງພວກຜູ້ເລື່ອມໃສແລ້ວ.

ທຮົງອນຸຍາຕອຸປັຊຊາຍະ

[໗໐] ຄັ້ນພຣະຜູ້ມີພຣະພາຄທຮົງຕິຕຽນພິກຂຸເຫຼົ່ານັ້ນໂດຍອເນກປຣິຍາຍດັ່ງນີ້ແລ້ວ ຈຶ່ງຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຄວາມເປັນຄົນບໍາຣຸງຍາກ ຄວາມເປັນຄົນມັກຫຼາຍ ຄວາມເປັນຄົນບໍ່ສັນໂດສ ຄວາມຄລຸກຄລີ ຄວາມຂີ້ຄ້ານ ຕຣັສຄຸຕແຫ່ງຄວາມເປັນຄົນລ້ຽງງ່າຍ ຄວາມເປັນຄົນບໍາຣຸງງ່າຍ ຄວາມມັກນ້ອຍ ຄວາມສັນໂດສ ຄວາມກໍາຈັດ ຄວາມຂັດເກຼົາ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ທຮົງທໍາທັມມີກຖາທີ່ສົມຄວຣແກ່ເຣື່ອງນັ້ນ ທີ່ເໝາະສົມແກ່ເຣື່ອງນັ້ນແກ່ພິກຂຸທັ້ງຫຼາຍ ແລ້ວຮັບສັ່ງວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕອຸປັຊຊາຍະ ອຸປັຊຊາຍະຈັກຕັ້ງຈິຕສນິທສນົມໃນສັທຊີວິຫາຣິກວ່າລູກ ສັທຊີວິຫາຣິກຈັກຕັ້ງຈິຕສນິທສນົມໃນອຸປັຊຊາຍະວ່າພໍ່ ເມື່ອເປັນເຊັ່ນນີ້ ອຸປັຊຊາຍະແລະສັທຊີວິຫາຣິກນັ້ນ ຕ່າງຈັກມີຄວາມເຄົາຣົພ ຢໍາເກງ ປະພຶຕກົມກຽວກັນຢູ່ ຈັກເຖິງຄວາມຈເຣີນງອກງາມໄພບູລຍ໌ໃນທັມມ໌ວິນັຍນີ້.

ດູຣາພິກຂຸທັ້ງຫຼາຍ ກໍແລສັທຊີວິຫາຣິກຄວຣຖືອຸປັຊຊາຍະຢ່າງນີ້.

ວິທີຖືອຸປັຊຊາຍະ

ສັທຊີວິຫາຣິກນັ້ນ ຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ໄຫວ້ຕີນ ນັ່ງຫຍອງຫຍໍ້ ປະຄອງອັຍຊລີແລ້ວກ່າວຄໍາຢ່າງນີ້ ວ່າ ເທື່ອ

ທ່ານຂ້ານ້ອຍ ຂໍທ່ານຈົ່ງເປັນອຸປັຊຊາຍະຂອງຂ້າພເຈົ້າ, ທ່ານຂ້ານ້ອຍ ຂໍທ່ານຈົ່ງເປັນອຸປັຊຊາຍະຂອງຂ້າພເຈົ້າ, ທ່ານຂ້ານ້ອຍ ຂໍທ່ານຈົ່ງເປັນອຸປັຊຊາຍະຂອງຂ້າພເຈົ້າ.

ອຸປັຊຊາຍະຮັບວ່າ ດີລະ ເບົາໃຈລະ ຊອບແກ່ອຸບາຍລະ ສົມຄວຣລະ ຫຼືຮັບວ່າ ຈົ່ງຍັງຄວາມປຕິບັຕິໃຫ້ເຖິງພ້ອມດ້ວຍອາການອັນໜ້າເລື່ອມໃສເຖີດ ດັ່ງນີ້ກໍໄດ້

ຮັບດ້ວຍກາຍ ຮັບດ້ວຍວາຈາ ຮັບດ້ວຍກາຍດ້ວຍວາຈາກໍໄດ້ ເປັນອັນສັທຊີວິຫາຣິກຖືອຸປັຊຊາຍະແລ້ວ

ບໍ່ຮັບດ້ວຍກາຍ ບໍ່ຮັບດ້ວຍວາຈາ ບໍ່ຮັບດ້ວຍທັ້ງກາຍແລະວາຈາ ບໍ່ເປັນອັນສັທຊີວິຫາຣິກຖືອຸປັຊຊາຍະ.

ອຸປັຊຊາຍວັຕຣ໌

[໗໑] ດູຣາພິກຂຸທັ້ງຫຼາຍ ສັທຊີວິຫາຣິກຄວຣປະພຶຕຊອບໃນອຸປັຊຊາຍະ.

ວິທີປະພຶຕຊອບໃນອຸປັຊຊາຍະນັ້ນ ມີດັ່ງຕໍ່ໄປນີ້:-

สัทธิวิหาริกควรลุกแต่เຊົ້າມືດ ຖອດເກີບ ຫົ່ມຜ້າພາດບ່າ ແລ້ວຖວາຍໄມ້ສີແຂ້ວຖວາຍນ້ຳລ້າງໜ້າ ປູອາສນະໄວ້

ຖ້າຢາຄູມີ ຄວຣລ້າງກາຊນະແລ້ວນ້ອມຢາຄູເຂົ້າໄປຖວາຍ ເມື່ອອຸປັຊຊາຍະດື່ມຢາຄູແລ້ວ ຄວຣຖວາຍນ້ຳຮັບກາຊນະມາ ຖືຕ່ຳໆ ຢ່າໃຫ້ກະທົບກັນ ລ້າງໃຫ້ສະອາດແລ້ວເກັບໄວ້ ເມື່ອອຸປັຊຊາຍະລຸກແລ້ວ ຄວຣເກັບອາສນະ

ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າອຸປັຊຊາຍະປະສົງຄ໌ຈະເຂົ້າບ້ານ ຄວຣຖວາຍຜ້ານຸ່ງ ຄວຣຮັບຜ້ານຸ່ງປ່ຽນມາ ຄວຣຖວາຍປະຄົຕແອວຄວຣພັບຜ້າສັງຆາຕິເປັນຊັ້ນຖວາຍ ຄວຣລ້າງບາຕຣ໌ແລ້ວຖວາຍພ້ອມທັ້ງນ້ຳດ້ວຍ

ຖ້າອຸປັຊຊາຍະປັຕຖນາຈະໃຫ້ເປັນປັຈຉາສມຕະ ຄວຣປົກປິດມົຕຫົລ ໓ ນຸ່ງໃຫ້ເປັນປຣິມົຕຫົລ ແລ້ວຄາດປະຄົຕແອວ ຫົ່ມສັງຆາຕິ ທຳເປັນຊັ້ນ ໃສ່ດຸມ ລ້າງບາຕຣ໌ແລ້ວ ຖືໄປ ເປັນປັຈຉາສມຕະຂອງອຸປັຊຊາຍະ ບໍ່ຄວຣຍ່າງໃຫ້ຫ່າງຫຼາຍ ບໍ່ຄວຣຍ່າງໃຫ້ຕິດຫຼາຍ ຄວຣຮັບວັຕຖຸທີ່ເນື່ອງໃນບາຕຣ໌

ເມື່ອອຸປັຊຊາຍະກຳລັງເວົ້າ ບໍ່ຄວຣເວົ້າສອດຂຶ້ນໃນຣະຫວ່າງ ອຸປັຊຊາຍະກ່າວຄຳໃກ້ຕໍ່ອາບັຕິ ຄວຣຫ້າມເສັຽ

ເມື່ອກັບ ຄວຣມາກ່ອນ ແລ້ວປູອາສນະທີ່ນັ່ງຈັນໄວ້ ຄວຣຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣລຸກຂຶ້ນຮັບບາຕຣ໌ແລະຈີວຣ ຄວຣຖວາຍຜ້ານຸ່ງປ່ຽນ ຄວຣຮັບຜ້ານຸ່ງມາ.

ຖ້າຈີວຣຊຸ່ມເຫື່ອ ຄວຣຕາກແດດໄວ້ຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣພັບຈີວຣ ເມື່ອພັບຈີວຣ ຄວຣພັບໃຫ້ເຫລື່ອມມຸມກັນ ๔ ນິ້ວ ດ້ວຍຕັ້ງໃຈບໍ່ໃຫ້ມີຮອຍພັບຕົງກາງ ຄວຣເຮັດປະຄົຕແອວໄວ້ໃນຂົດອັນຕຣວາສົກ.

ຖ້າບິຕຫບາຕມີ ແລະອຸປັຊຊາຍະປະສົງຄ໌ຈະຈັນ ຄວຣຖວາຍນ້ຳ ແລ້ວນ້ອມບິຕຫບາຕເຂົ້າໄປຖວາຍ ຄວຣຖາມອຸປັຊຊາຍະດ້ວຍນ້ຳຈັນ ເມື່ອອຸປັຊຊາຍະຈັນແລ້ວ ຄວຣຖວາຍນ້ຳ ຮັບບາຕຣ໌ມາ ຖືຕ່ຳໆ ຢ່າໃຫ້ກະທົບ ລ້າງໃຫ້ສະອາດ ເຊັດໃຫ້ແຫ້ງແລ້ວ ຜຶ່ງໄວ້ທີ່ແດດຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳໃຕ້ຕຽງຫຼືໃຕ້ຕັ່ງ ແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣ໌ໄວ້ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຮາວຈີວຣຫຼືສາຍຣະດຽງ ແລ້ວທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວຈຶ່ງເກັບຈີວຣ

ເມື່ອອຸປັຊຊາຍະລຸກແລ້ວ ຄວຣເກັບອາສນະ ເກັບນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າອຸປັຊຊາຍະມັກຈະສົງນ້ຳ ຄວຣຈັດນ້ຳສົງຖວາຍ ຖ້າຕ້ອງການນ້ຳເຢັນ ຄວຣຈັດນ້ຳເຢັນຖວາຍ ຖ້າຕ້ອງການນ້ຳຮ້ອນ ຄວຣຈັດນ້ຳຮ້ອນຖວາຍ.

ຖ້າອຸປັຊຊາຍະປະສົງຄ໌ຈະເຂົ້າເຮືອນໄຟ ຄວຣບົດຈຸຓ ແຊ່ດິນ ຖືຕັ່ງສຳຫຼັບເຮືອນໄຟແລ້ວ ຍ່າງຕາມຫລັງອຸປັຊຊາຍະໄປ ຖວາຍຕັ່ງສຳຫຼັບເຮືອນໄຟແລ້ວ ຮັບຈີວຣມາວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຖວາຍຈຸຓ ຖວາຍດິນ

ຖ້າອຸຕສາຫະຢູ່ ຄວຣເຂົ້າເຮືອນໄຟ ເມື່ອເຂົ້າເຮືອນໄຟ ຄວຣເອົາດິນທາຫນ້າ ປິດທັ້ງຂ້າງຫນ້າ ຂ້າງຫລັງ ແລ້ວເຂົ້າເຮືອນໄຟ ບໍ່ຄວຣນັ່ງບຽດກິກຂຸຜູ້ເຖຣະ ບໍ່ຄວຣຫ້າມກັນອາສນະກິກຂຸໃຫມ່ ຄວຣເຮັດບໍຣິກັມມ໌ ແກ່ອຸປັຊຊາຍະໃນເຮືອນໄຟ

ເມື່ອອອກຈາກເຮືອນໄຟ ຄວຣຖືຕັ່ງສຳຫຼັບເຮືອນໄຟ ແລ້ວປິດທັ້ງຂ້າງຫນ້າທັ້ງຂ້າງຫລັງອອກຈາກເຮືອນໄຟ

ຄວຣເຮັດບໍຣິກັມມ໌ແກ່ອຸປັຊຊາຍະແມ້ໃນນ້ຳ ອາບແລ້ວໆ ຄວຣຂຶ້ນມາກ່ອນ ທຳຕົວຂອງຕົນໃຫ້ແຫ້ງນ້ຳ ນຸ່ງຜ້າແລ້ວ ຄວຣເຊັດນ້ຳຈາກຕົວຂອງອຸປັຊຊາຍະ ຄວຣຖວາຍຜ້ານຸ່ງ ຄວຣຖວາຍຜ້າສັງຄາຕິ ຖືຕັ່ງສຳຫຼັບເຮືອນໄຟມາກ່ອນ ແລ້ວປູອາສນະໄວ້ ຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣຖາມອຸປັຊຊາຍະດ້ວຍນ້ຳຈັນ.

ຖ້າປະສົງຄ໌ຈະຮຽນບາລີ ຄວຣຂໍໃຫ້ອຸປັຊຊາຍະສແດງບາລີຂຶ້ນ

ຖ້າປະສົງຄ໌ຈະສອບຖາມອັຖກຖາ ຄວຣສອບຖາມ.

ອຸປັຊຊາຍະຢູ່ໃນວິຫາຣແຫ່ງໃດ ຖ້າວິຫາຣແຫ່ງນັ້ນຮົກ ຖ້າອຸຕສາຫະຢູ່ ຄວຣປັດກວາດເສັຽ ເມື່ອປັດກວາດວິຫາຣ ຄວຣຂົນບາຕຣ໌ຈີວຣອອກກ່ອນ ແລ້ວວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຂົນຜ້າປູນັ່ງ ແລະຜ້າປູນອນ ຟູກ ຫມອນ ອອກວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ

ຕຽງຕັ່ງ ສັຫລີວິຫາຣິກຄວຣຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູ ຂົນອອກໃຫ້ຮຽບຮ້ອຍ ແລ້ວຕັ້ງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ຂາຽຮອງຕຽງ ກະໂຖນ ພນັກອີງ ຄວຣຂົນອອກຕັ້ງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ເຄື່ອງປູພື້ນ ຄວຣສັງເກຕທີ່ປູໄວ້ເດີມ ແລ້ວຂົນອອກວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ

ຖ້າໃນວິຫາຣມີໃຍແມງມຸມ ຄວຣກວາດແຕ່ເພດານລົງມາກ່ອນ ຂອບໜ້າຕ່າງແລະມຸມຫ້ອງຄວຣເຊັດເສັຽ ຖ້າຝາເຂົາທຳບໍຣິກັມມ໌ດ້ວຍນ້ຳມັນ ຫຼືພື້ນເຂົາທາສີດຳຂຶ້ນຣາ ຄວຣເອົາຜ້າຊຸບນ້ຳບິດແລ້ວເຊັດເສັຽ ຖ້າພື້ນເຂົາບໍ່ໄດ້ທຳ ຄວຣເອົານ້ຳປະພຣົມແລ້ວເຊັດເສັຽ ຣະວັງຢ່າໃຫ້ວິຫາຣຟຸ້ງດ້ວຍຝຸ່ນ ຄວຣກວາດໃຍແມງມຸມຖິ້ມເສັຽ ໓ ທີ່ຄວຣສ່ວນຂ້າງນຶ່ງ

ເຄື່ອງລາດພື້ນ ຄວຣຕາກແດດ ຊຳຣະ ເຄາະປັດ ແລ້ວຂົນກັບປູໄວ້ຕາມເດີມ ຊຽງຣອງຕຽງ ຄວຣຕາກແດດ ຂັດ ເຊັດ ແລ້ວຂົນກັບຕັ້ງໄວ້ທີ່ເດີມ ຕຽງຕັ່ງ ຄວຣຕາກແດດຂັດສີ ເຄາະເສັຽ ຍົກຕ່ຳໆ ຢ່າໃຫ້ຄູດສີ ກະທົບກະແທກບານແລະຂອບປະຕູ ຂົນກັບໄປໃຫ້ດີໆ ແລ້ວຕັ້ງໄວ້ຕາມເດີມ ຟູກ ໝອນ ຜ້າປູນັ່ງ ຜ້າປູນອນ ຄວຣຕາກແດດ ທຳໃຫ້ສະອາດ ຕົບແລ້ວ ແລ້ວນຳກັບວາງປູໄວ້ຕາມເດີມ ກະໂຖນ ພນັກອີງ ຄວຣຕາກແດດ ເຊັດຖູເສັຽແລ້ວຂົນກັບຕັ້ງໄວ້ຕາມເດີມ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳໃຕ້ຕຽງຫຼືໃຕ້ຕັ່ງແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣ໌ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຣາວຈີວຣຫຼືສາຍຣະດຽງ ແລ້ວແລ້ວທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວເກັບຈີວຣ.

ຖ້າລົມເຈືອດ້ວຍຝຸ່ນຄລີພັດມາແຕ່ທິສຕະວັນອອກ ຄວຣປິດໜ້າຕ່າງດ້ານຕະວັນອອກ ຖ້າພັດມາແຕ່ທິສຕະວັນຕົກ ຄວຣປິດໜ້າຕ່າງດ້ານຕະວັນຕົກ ຖ້າພັດມາແຕ່ທິສເໜືອ ຄວຣປິດໜ້າຕ່າງດ້ານເໜືອ ຖ້າພັດມາແຕ່ທິສໃຕ້ ຄວຣປິດໜ້າຕ່າງດ້ານໃຕ້ ຖ້າຣະດູໜາວຄວຣເປີດໜ້າຕ່າງກາງເວັນ ກາງຄືນຄວຣປິດ ຖ້າຣະດູຮ້ອນ ຄວຣປິດໜ້າຕ່າງກາງເວັນ ກາງຄືນຄວຣເປີດ.

ຖ້າບໍຣິເວຓ ຊຸ້ມນ້ຳ ໂຮງລັນ ໂຮງໄຟ ວັຈຈກຸຏີ ຮົກ ຄວຣປັດກວາດເສັຽ ຖ້ານ້ຳລັນນ້ຳໃຊ້ບໍ່ມີ ຄວຣຈັດຕັ້ງໄວ້ ຖ້ານ້ຳໃນໝໍ້ຊຳຣະບໍ່ມີ ຄວຣຕັກນ້ຳມາໄວ້ໃນໝໍ້ຊຳຣະ.

ຖ້າຄວາມກະສັນບັງເກີດແກ່ອຸປັຊຊາຍະ ສັທຘິວິຫາຣິກຄວຣຊ່ອຍຣະງັບ ຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍຣະງັບ ຫຼືຄວຣເຮັດທັມມ໌ກຖາແກ່ອຸປັຊຊາຍະນັ້ນ ຖ້າຄວາມຣຳຄາຍບັງເກີດແກ່ອຸປັຊຊາຍະ ສັທຘິວິຫາຣິກຄວຣຊ່ອຍບັຣເທົາ ຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍບັຣເທົາ ຫຼືຄວຣເຮັດທັມມ໌ກຖາແກ່ອຸປັຊຊາຍະນັ້ນ ຖ້າຄວາມເຫັນຜິດບັງເກີດແກ່ອຸປັຊຊາຍະ ສັທຘິວິຫາຣິກຄວຣໃຫ້ສລະເສັຽ ຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍ ຫຼືຄວຣເຮັດທັມມ໌ກຖາແກ່ອຸປັຊຊາຍະນັ້ນ. ຖ້າອຸປັຊຊາຍະຕ້ອງອາບັຕິໜັກຄວຣປຣິວາສ ສັທຘິວິຫາຣິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣໃຫ້ປຣິວາສແກ່ອຸປັຊຊາຍະ ຖ້າອຸປັຊຊາຍະຄວຣຊັກເຂົ້າຫາອາບັຕິເດີມ ສັທຘິວິຫາຣິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣຊັກອຸປັຊຊາຍະເຂົ້າຫາອາບັຕິເດີມ ຖ້າອຸປັຊຊາຍະຄວຣມານັດ ສັທຘິວິຫາຣິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດ

ນໍ ສົງຄ໌ຄວຣໃຫ້ມານັຕແກ່ອຸປັຊຊາຍະ ຖ້າອຸປັຊຊາຍະຄວຣອັພການ ສັທธິວິຫາຣິກຄວຣເຮັດຄວາມຂວນຂວາຍວ່າດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣອັພການອຸປັຊຊາຍະ.

ຖ້າສົງຄ໌ປັຕຖນາຈະທຳກັມມ໌ແກ່ອຸປັຊຊາຍະ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ສັທธິວິຫາຣິກ ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ບໍ່ຄວຣທຳກັມມ໌ແກ່ອຸປັຊຊາຍະ ຫຼືສົງຄ໌ຄວຣນ້ອມໄປເພື່ອກັມມ໌ສຖານເບົາ ຫຼືອຸປັຊຊາຍະນັ້ນຖືກສົງຄ໌ລົງຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ແລ້ວ ສັທธິວິຫາຣິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ອຸປັຊຊາຍະ ຄວຣປະພຶຕຊອບຄວຣຫາຍເຫຍິ່ຫຍິ່ງ ຄວຣປະພຶຕແກ້ຕົວ ສົງຄ໌ຄວຣຣະງັບກັມມ໌ນັ້ນເສັຽ.

ຖ້າຈີວຣຂອງອຸປັຊຊາຍະຈະຕ້ອງຊັກ ສັທธິວິຫາຣິກຄວຣຊັກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຊັກຈີວຣຂອງອຸປັຊຊາຍະ ຖ້າຈີວຣຂອງອຸປັຊຊາຍະຈະຕ້ອງທຳ ສັທธິວິຫາຣິກຄວຣເຮັດ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣເຮັດຈີວຣຂອງອຸປັຊຊາຍະ ຖ້ານ້ຳຍ້ອມຂອງອຸປັຊຊາຍະຈະຕ້ອງຕົ້ມ ສັທธິວິຫາຣິກຄວຣຕົ້ມ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຕົ້ມນ້ຳຍ້ອມຂອງອຸປັຊຊາຍະ ຖ້າຈີວຣຂອງອຸປັຊຊາຍະຈະຕ້ອງຍ້ອມ ສັທธິວິຫາຣິກຄວຣຍ້ອມ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຍ້ອມຈີວຣຂອງອຸປັຊຊາຍະເມື່ອຍ້ອມຈີວຣ ຄວຣຍ້ອມປີ້ນກັບໄປກັບມາໃຫ້ດີໆ ເມື່ອຫຍາດນ້ຳຍ້ອມຍັງຫຍົດບໍ່ຂາດສາຍ ບໍ່ຄວຣຫລີກໄປເສັຽ.

ສັທธິວິຫາຣິກບໍ່ບອກອຸປັຊຊາຍະກ່ອນ ບໍ່ຄວຣໃຫ້ບາຕຣ໌ແກ່ກິກຂຸບາງອົງຄ໌ ບໍ່ຄວຣຮັບບາຕຣ໌ຂອງກິກຂຸບາງອົງຄ໌ ບໍ່ຄວຣໃຫ້ຈີວຣແກ່ກິກຂຸບາງອົງຄ໌ ບໍ່ຄວຣຮັບຈີວຣຂອງກິກຂຸບາງອົງຄ໌ ບໍ່ຄວຣໃຫ້ບໍຣິຂາຣແກ່ກິກຂຸບາງອົງຄ໌ ບໍ່ຄວຣຮັບບໍຣິຂາຣຂອງກິກຂຸບາງອົງຄ໌ ບໍ່ຄວຣແຖຜົມໃຫ້ກິກຂຸບາງອົງຄ໌ ບໍ່ຄວຣໃຫ້ກິກຂຸບາງອົງຄ໌ແຖຜົມໃຫ້ ບໍ່ຄວຣທຳບໍຣິກັມມ໌ ບໍ່ຄວຣໃຫ້ກິກຂຸບາງອົງຄ໌ທຳບໍຣິກັມມ໌ໃຫ້ ບໍ່ຄວຣທຳຄວາມຂວນຂວາຍແກ່ກິກຂຸບາງອົງຄ໌ບໍ່ຄວຣສັ່ງໃຫ້ກິກຂຸບາງອົງຄ໌ທຳຄວາມຂວນຂວາຍ ບໍ່ຄວຣເປັນປັຈฉາສມຕະຂອງກິກຂຸບາງອົງຄ໌ ບໍ່ຄວຣພາກິກຂຸບາງອົງຄ໌ໄປເປັນປັຈฉາສມຕະ ບໍ່ຄວຣນຳບິຕທບາຕໄປໃຫ້ກິກຂຸບາງອົງຄ໌ ບໍ່ຄວຣໃຫ້ກິກຂຸບາງອົງຄ໌ນຳບິຕທບາຕມາໃຫ້ ບໍ່ລາອຸປັຊຊາຍະກ່ອນ ບໍ່ຄວຣເຂົ້າບ້ານ ບໍ່ຄວຣໄປປ່າຊ້າ ບໍ່ຄວຣຫລີກໄປສູ່ທິສ ຖ້າອຸປັຊຊາຍະອາພາธ ຄວຣພຍາບາຫຈົນຕລອດຊີວິຕ ຄວຣຖ້າຈົນກວ່າຈະຫາຍ.

ອຸປັຊຊາຍວັຕຣ໌ ຈົບ

ສັທຸສິວິຫາຣິກວັຕຣ໌

[໗໔] ດູຣາພິກຂຸທັ້ງຫຼາຍ ອຸປັຊຊາຍະຄວຣປະພຶຕຊອບໃນສັທຸສິວິຫາຣິກ.

ວິທີປະພຶຕຊອບໃນສັທຸສິວິຫາຣິກນັ້ນ ມີດັ່ງຕໍ່ໄປນີ້:-

ດູຣາພິກຂຸທັ້ງຫຼາຍ ອຸປັຊຊາຍະຄວຣສົງເຄາະຫ໌ ອນຸເຄາະຫ໌ ສັທຸສິວິຫາຣິກ ດ້ວຍສອນບາລີ ແລະອັຖກຖາ ດ້ວຍໃຫ້ໂອວາທແລະອນຸສາສນີ.

ຖ້າອຸປັຊຊາຍະມີບາຕຣ໌ ສັທຸສິວິຫາຣິກບໍ່ມີບາຕຣ໌ ອຸປັຊຊາຍະຄວຣໃຫ້ບາຕຣ໌ແກ່ສັທຸສິວິຫາຣິກ ຫຼື ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດໜໍ ບາຕຣ໌ຄວຣບັງເກີດແກ່ສັທຸສິວິຫາຣິກ

ຖ້າອຸປັຊຊາຍະມີຈີວຣ ສັທຸສິວິຫາຣິກບໍ່ມີຈີວຣ ອຸປັຊຊາຍະຄວຣໃຫ້ຈີວຣແກ່ສັທຸສິວິຫາຣິກ ຫຼື ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດໜໍ ຈີວຣຄວຣບັງເກີດແກ່ສັທຸສິວິຫາຣິກ

ຖ້າອຸປັຊຊາຍະມີບໍຣິຂາຣ ສັທຸສິວິຫາຣິກບໍ່ມີບໍຣິຂາຣ ອຸປັຊຊາຍະ ຄວຣໃຫ້ບໍຣິຂາຣແກ່ສັທຸສິວິຫາຣິກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດໜໍ ບໍຣິຂາຣຄວຣບັງເກີດແກ່ສັທຸສິວິຫາຣິກ.

ຖ້າສັທຸສິວິຫາຣິກອາພາຣ ອຸປັຊຊາຍະຄວຣລຸກແຕ່ເຊົ້າມືດ ແລ້ວໃຫ້ໄມ້ສີແຂ້ວ ໃຫ້ນ້ຳລ້າງໜ້າ ປູອາສນະໄວ້

ຖ້າຢາຄູມີ ຄວຣລ້າງພາຊນະແລ້ວ ນຳຢາຄູເຂົ້າໄປໃຫ້ ເມື່ອສັທຸສິວິຫາຣິກດື່ມຢາຄູແລ້ວ ຄວຣໃຫ້ນ້ຳ ຮັບພາຊນະມາ ຖືຕ່ຳໆ ຢ່າໃຫ້ກະທົບກັນ ລ້າງໃຫ້ສະອາດແລ້ວເກັບໄວ້ ເມື່ອສັທຸສິຫາຣິກລຸກແລ້ວ ຄວຣເກັບອາສນະ ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າສັທຸສິວິຫາຣິກປະສົງຄ໌ຈະເຂົ້າບ້ານ ຄວຣໃຫ້ຜ້ານຸ່ງ ຄວຣຮັບຜ້ານຸ່ງປ່ຽນມາ ຄວຣໃຫ້ປະຄົຕແອວ ຄວຣພັບສັງຄາຕິເປັນຊັ້ນໃຫ້ ຄວຣລ້າງບາຕຣ໌ແລ້ວໃຫ້ພ້ອມທັ້ງນ້ຳດ້ວຍ ຄວຣປູອາສນະທີ່ນັ່ງຈັນໄວ້ ດ້ວຍກຳໜົດ ໃນໃຈວ່າພຽງເວລາເທົ່ານີ້ ສັທຸສິວິຫາຣິກຈັກກັບມາ ນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຄວຣຕຽມຕັ້ງໄວ້ ຄວຣລຸກຂຶ້ນຮັບບາຕຣ໌ແລະຈີວຣ ຄວຣໃຫ້ຜ້ານຸ່ງປ່ຽນ ຄວຣຮັບຜ້ານຸ່ງມາ.

ຖ້າຈີວຣຊຸ່ມເຫື່ອ ຄວຣຕາກແດດໄວ້ຄູ່ນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣພັບຈີວຣ ເມື່ອພັບຈີວຣ ຄວຣພັບໃຫ້ເຫລື່ອມມຸມກັນ ໔ ນິ້ວ ດ້ວຍຕັ້ງໃຈບໍ່ໃຫ້ມີຮອຍພັບ ຕົງກາງ ຄວຣເຮັດປະຄົຕແອວໄວ້ໃນຂົດອັນຕຣວາສົກ.

ຖ້າບິຕທບາຕມີ ແລະສັທຸສິວິຫາຣິກປະສົງຄ໌ຈະຈັນ ຄວຣໃຫ້ນ້ຳແລ້ວນຳບິຕທບາຕເຂົ້າໄປໃຫ້ ຄວຣຖາມສັທຸສິວິຫາຣິກດ້ວຍນ້ຳຈັນ ເມື່ອສັທຸສິວິຫາຣິກຈັນແລ້ວ ຄວຣໃຫ້ນ້ຳ ຮັບບາຕຣ໌ມາ ຖືຕ່ຳໆ ຢ່າໃຫ້ ກະທົບ ລ້າງໃຫ້ສະອາດ ເຊັດໃຫ້ແຫ້ງ ແລ້ວຄວຣຕາກໄວ້ທີ່ແດດຄູ່ນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳ ໃຕ້ຕຽງຫຼືໃຕ້ຕັ່ງແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣໄວ້ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຮາວຈີວຣ ຫຼືສາຍຣະດຽງ ແລ້ວທຳຊາຍໄວ້ຂ້າງນອກ ຂົດໄວ້ຂ້າງໃນແລ້ວຈຶ່ງເກັບຈີວຣ

ເມື່ອສັທສິວິຫາຣິກລຸກແລ້ວ ຄວຣເກັບອາສນະ ເກັບນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າສັທສິວິຫາຣິກມັກຈະສົງນ້ຳ ຄວຣຈັດນ້ຳສົງໃຫ້ ຖ້າຕ້ອງການນ້ຳເຢັນ ຄວຣຈັດນ້ຳເຢັນໃຫ້ ຖ້າຕ້ອງການນ້ຳຮ້ອນ ຄວຣຈັດນ້ຳຮ້ອນໃຫ້.

ຖ້າສັທສິວິຫາຣິກປະສົງຄ໌ຈະເຂົ້າເຮືອນໄຟ ຄວຣບົດຈຸຓ ແຊ່ດິນ ຖືຕັ່ງສຳຫຼັບເຮືອນໄຟໄປ ແລ້ວໃຫ້ຕັ່ງສຳຫຼັບເຮືອນໄຟ ແລ້ວຮັບຈີວຣມາວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣໃຫ້ຈຸຓ ໃຫ້ດິນ

ຖ້າອຸຕສາຫະຢູ່ ຄວຣເຂົ້າເຮືອນໄຟ ເມື່ອເຂົ້າເຮືອນໄຟ ຄວຣເອົາດິນທາຫນ້າ ປົດທັ້ງຂ້າງຫນ້າ ທັ້ງຂ້າງຫລັງ ແລ້ວເຂົ້າເຮືອນໄຟ ບໍ່ຄວຣນັ່ງບຽດກິກຂຸຜູ້ເຖຣະ ບໍ່ຄວຣຫ້າມກັນອາສນະກິກຂຸໃຫມ່ ຄວຣເຮັດບໍຣິກັມມ໌ແກ່ສັທສິວິຫາຣິກໃນເຮືອນໄຟ

ເມື່ອອອກຈາກເຮືອນໄຟ ຄວຣຖືຕັ່ງສຳຫຼັບເຮືອນໄຟ ແລ້ວປົດທັ້ງຂ້າງຫນ້າທັ້ງຂ້າງຫລັງ ອອກຈາກເຮືອນໄຟ

ຄວຣເຮັດບໍຣິກັມມ໌ແກ່ສັທສິວິຫາຣິກ ແມ້ໃນນ້ຳ ອາບແລ້ວໆຄວຣຂຶ້ນມາກ່ອນ ທຳຕົວຂອງຕົນໃຫ້ແຫ້ງນ້ຳ ນຸ່ງຜ້າແລ້ວຄວຣເຊັດນ້ຳຈາກຕົວຂອງສັທສິວິຫາຣິກ ຄວຣໃຫ້ຜ້ານຸ່ງ ຄວຣໃຫ້ຜ້າສັງຄາຕິ ຄວຣຖືຕັ່ງສຳຫຼັບເຮືອນໄຟມາກ່ອນ ແລ້ວປູອາສນະໄວ້ ຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣຖາມສັທສິວິຫາຣິກດ້ວຍນ້ຳຈັນ.

ສັທສິວິຫາຣິກຢູ່ໃນວິຫາຣແຫ່ງໃດ ຖ້າວິຫາຣແຫ່ງນັ້ນຮົກ ຖ້າອຸຕສາຫະຢູ່ ຄວຣປັດກວາດເສັຽ ເມື່ອປັດກວາດວິຫາຣ ຄວຣຂົນບາຕຣ໌ຈີວຣອອກກ່ອນແລ້ວວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຂົນຜ້າປູນັ່ງ ແລະຜ້າປູນອນ ຟູກ ຫມອນ ອອກວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ

ຕຽງຕັ່ງ ອຸປັຊຊາຍະຄວຣຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູ ຂົນອອກໃຫ້ຮຽບຮ້ອຍ ແລ້ວຕັ້ງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຊຽງຮອງຕຽງ ກະໂຖນ ພນັກອີງ

ຄວຣຂົນອອກວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ເຄື່ອງປູພື້ນ ຄວຣສັງເກຕທີ່ປູໄວ້ທີ່ເດີມ ແລ້ວຂົນອອກວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ

ຖ້າໃນວິຫາຣມີໃຍແມງມຸມ ຄວຣກວາດແຕ່ເພດານລົງມາກ່ອນ ຂອບຫນ້າຕ່າງແລະມຸມຫ້ອງ ຄວຣເຊັດເສັຽ ຖ້າຝາເຂົາທຳບໍຣິກັມມ໌ດ້ວຍນ້ຳມັນ ຫຼືພື້ນເຂົາທາສີດຳຂຶ້ນຣາ ຄວຣເອົາຜ້າຊຸບນ້ຳບິດແລ້ວເຊັດເສັຽ ຖ້າພື້ນເຂົາບໍ່ໄດ້ທຳ ຄວຣເອົານ້ຳປະພຣົມແລ້ວເຊັດເສັຽ ຣະວັງຢ່າໃຫ້ວິຫາຣຟຸ້ງດ້ວຍຂຸລີ ຄວຣກວາດໃຍແມງມຸມຖິ້ມເສັຽ ຓ ທີ່ຄວຣສ່ວນຂ້າງນຶ່ງ

ເຄື່ອງລາດພື້ນ ຄວຣຕາກແດດ ຊຳຣະ ເຄາະ ປັດແລ້ວ ຂົນກັບປູໄວ້ຕາມເດີມ ຊຽງຮອງຕຽງ ຄວຣຜຶ່ງແດດ ຂັດ ເຊັດແລ້ວ ຂົນກັບໄວ້ໃນທີ່ເດີມ ຕຽງຕັ່ງ ຄວຣຕາກແດດ ຂັດສີ ເຄາະເສັຽ ຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູ ຂົນກັບໄປໃຫ້ດີໆ ແລ້ວຕັ້ງໄວ້ຕາມເດີມ ຟູກ ຫມອນ ຜ້າປູນັ່ງ ຜ້າປູນອນ ຄວຣຕາກແດດ ທຳໃຫ້ສະອາດ ຕົບແລ້ວ ແລ້ວນຳກັບວາງປູໄວ້ຕາມເດີມ ກະໂຖນ ພນັກອີງ ຄວຣຕາກແດດ ເຊັດ ຖູເສັຽ ແລ້ວຂົນກັບຕັ້ງໄວ້ຕາມເດີມ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳໃຕ້ຕຽງຫຼືໃຕ້ຕັ່ງ ແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣວາງບາຕຣ໌ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຣາວຈີວຣຫຼືສາຍຣະດຽງແລ້ວທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນແລ້ວຈຶ່ງເກັບຈີວຣ.

ຖ້າລົມເຈືອດ້ວຍຝຸ່ນພັດມາແຕ່ທິສຕະວັນອອກ ຄວຣປິດຫນ້າຕ່າງດ້ານຕະວັນອອກ ຖ້າພັດມາແຕ່ທິສຕະວັນຕົກ ຄວຣປິດຫນ້າຕ່າງດ້ານຕະວັນຕົກ ຖ້າພັດມາແຕ່ທິສເຫນືອ ຄວຣປິດຫນ້າຕ່າງດ້ານເຫນືອ ຖ້າພັດມາແຕ່ທິສໃຕ້ ຄວຣປິດຫນ້າຕ່າງດ້ານໃຕ້ ຖ້າຣະດູໜາວ ຄວຣເປີດຫນ້າຕ່າງກາງເວັນ ຄວຣປິດກາງຄືນ ຖ້າຣະດູຮ້ອນ ຄວຣປິດຫນ້າຕ່າງກາງເວັນ ຄວຣເປີດກາງຄືນ.

ຖ້າບໍຣິເວຓ ຊຸ້ມນ້ຳ ໂຮງລັນ ໂຮງໄຟ ວັຈຈກຸຜີ ຮົກ ຄວຣປັດກວາດເສັຽ ຖ້ານ້ຳລັນນ້ຳໃຊ້ບໍ່ມີ ຄວຣຈັດຕັ້ງໄວ້ ຖ້ານ້ຳໃນໝໍ້ຊຳຣະບໍ່ມີ ຄວຣຕັກນ້ຳມາໄວ້ໃນໝໍ້ຊຳຣະ.

ຖ້າຄວາມກະສັນບັງເກີດແກ່ສັທຸລິວິຫາຣິກ ອຸປັຊຊາຍະຄວຣຊ່ອຍຣະງັບຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍຣະງັບ ຫຼືຄວຣເຮັດສັມມ໌ກາຖາແກ່ສັທຸລິວິຫາຣິກນັ້ນ ຖ້າຄວາມຣຳຄາຍບັງເກີດແກ່ສັທຸລິວິຫາຣິກ ອຸປັຊຊາຍະຄວຣບັຣເທົາ ຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍບັຣເທົາ ຫຼືຄວຣເຮັດສັມມ໌ກາຖາແກ່ສັທຸລິວິຫາຣິກນັ້ນ ຖ້າຄວາມເຫັນຜິດບັງເກີດແກ່ສັທຸລິວິຫາຣິກ ອຸປັຊຊາຍະຄວຣໃຫ້ສລະເສັຽ ຫຼືຄວຣວານພິກຂຸອື່ນໃຫ້ຊ່ອຍ ຫຼືຄວຣເຮັດ

ສັມມ໌ກຖາແກ່ສັທຘິວິຫາຣິກນັ້ນ. ຖ້າສັທຘິວິຫາຣິກຕ້ອງອາບັຕິຫນັກ ຄວຣປຣິວາສ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣໃຫ້ປຣິວາສແກ່ສັທຘິວິຫາຣິກ ຖ້າສັທຘິວິຫາຣິກຄວຣຊັກເຂົ້າຫາອາບັຕິເດີມ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣຊັກສັທຘິວິຫາຣິກເຂົ້າຫາອາບັຕິເດີມ ຖ້າສັທຘິວິຫາຣິກຄວຣມານັຕ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣໃຫ້ມານັຕແກ່ສັທຘິວິຫາຣິກ ຖ້າສັທຘິວິຫາຣິກຄວຣອັພການ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣອັພການສັທຘິວິຫາຣິກ.

ຖ້າສົງຄ໌ປັຕຖນາຈະທຳກັມມ໌ແກ່ສັທຘິວິຫາຣິກ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ບໍ່ຄວຣທຳກັມມ໌ແກ່ສັທຘິວິຫາຣິກ ຫຼືສົງຄ໌ຄວຣນ້ອມໄປເພື່ອກັມມ໌ສຖານເບົາ ຫຼືສັທຘິວິຫາຣິກນັ້ນຖືກສົງຄ໌ລົງຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ແລ້ວ ອຸປັຊຊາຍະຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສັທຘິວິຫາຣິກຄວຣປະພຶຕຊອບ ຄວຣຫາຍເຫຍີ່ຫຍິ່ງ ຄວຣປະພຶຕແກ້ຕົວ ສົງຄ໌ຄວຣຣະງັບກັມມ໌ນັ້ນເສັຽ.

ຖ້າຈີວຣຂອງສັທຘິວິຫາຣິກຈະຕ້ອງຊັກ ອຸປັຊຊາຍະຄວຣບອກວ່າ ທ່ານຄວຣຊັກຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຊັກຈີວຣຂອງສັທຘິວິຫາຣິກ ຖ້າຈີວຣຂອງສັທຘິວິຫາຣິກຈະຕ້ອງທຳ ອຸປັຊຊາຍະຄວຣບອກວ່າ ທ່ານຄວຣເຮັດຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣເຮັດຈີວຣຂອງສັທຘິວິຫາຣິກ ຖ້ານ້ຳຍ້ອມຂອງສັທຘິວິຫາຣິກຈະຕ້ອງຕົ້ມ ອຸປັຊຊາຍະຄວຣບອກວ່າ ທ່ານຄວຣຕົ້ມຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຕົ້ມນ້ຳຍ້ອມຂອງສັທຘິວິຫາຣິກ ຖ້າຈີວຣຂອງສັທຘິວິຫາຣິກຈະຕ້ອງຍ້ອມ ອຸປັຊຊາຍະຄວຣບອກວ່າ ທ່ານຄວຣຍ້ອມຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຍ້ອມຈີວຣຂອງສັທຘິວິຫາຣິກ ເມື່ອຍ້ອມຈີວຣ ຄວຣຍ້ອມປີ້ນກັບໄປມາໃຫ້ດີໆ ເມື່ອຫຍາດນ້ຳຍ້ອມຍັງບໍ່ຂາດສາຍ ບໍ່ຄວຣຫລີກໄປເສັຽ. ຖ້າສັທຘິວິຫາຣິກອາພາຘ ຄວຣພຍາບາລຈົນຕລອດຊີວິຕ ຄວຣຖ້າຈົນກວ່າຈະຫາຍ.

ສັທຘິວິຫາຣິກວັຕຣ໌ ຈົບ

ການປະຕານມແລະການໃຫ້ຂມາ

[໗໘] ກໍໂດຍສມັຍນັ້ນແລ ສັທສິວິຫາຣິກທັ້ງຫຼາຍບໍ່ປະພຶຕຊອບໃນອຸປັຊຊາຍະທັ້ງຫຼາຍ. ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດສັທສິວິຫາຣິກທັ້ງຫຼາຍ ຈຶ່ງບໍ່ປະພຶຕຊອບໃນອຸປັຊຊາຍະທັ້ງຫຼາຍລະ ແລ້ວໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ສັທສິວິຫາຣິກທັ້ງຫຼາຍບໍ່ປະພຶຕຊອບໃນອຸປັຊຊາຍະທັ້ງຫຼາຍ ແທ້ບໍ່?

ກິກຂຸທັ້ງຫຼາຍທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ແນວໃດສັທສິວິຫາຣິກທັ້ງຫຼາຍຈຶ່ງບໍ່ປະພຶຕຊອບໃນອຸປັຊຊາຍະທັ້ງຫຼາຍລະ ຄັ້ນແລ້ວທຣົງທຳທັມມີກະຖາ ຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ສັທສິວິຫາຣິກຈະບໍ່ປະພຶຕຊອບໃນອຸປັຊຊາຍະບໍ່ໄດ້ ອົງຄ໌ໃດບໍ່ປະພຶຕຊອບ ຕ້ອງອາບັຕິທຸກກົຝ.

ສັທສິວິຫາຣິກທັ້ງຫຼາຍຍັງບໍ່ປະພຶຕຊອບຢ່າງເດີມ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປະຕານມສັທສິວິຫາຣິກຜູ້ບໍ່ປະພຶຕຊອບ

ວິທີປະຕານມ

ດູຣາກິກຂຸທັ້ງຫຼາຍ ກໍແລ ອຸປັຊຊາຍະຄວຣປະຕານມສັທສິວິຫາຣິກຢ່າງນີ້ວ່າ ຈັນປະຕານມທ່ານ ທ່ານຢ່າເຂົ້າມາ ຓ ທີ່ນີ້ ທ່ານຈົ່ງຂົນບາຕຣ໌ຈີວຣຂອງທ່ານອອກໄປເສັຽ, ຄວຣປະຕານມວ່າ ທ່ານບໍ່ຕ້ອງອຸປຖາກຂ້ານ້ອຍດັ່ງນີ້ກໍໄດ້

ອຸປັຊຊາຍະຍ່ອມຍັງສັທສິວິຫາຣິກໃຫ້ຮູ້ດ້ວຍກາຍກໍໄດ້ ໃຫ້ຮູ້ດ້ວຍວາຈາກໍໄດ້ ໃຫ້ຮູ້ດ້ວຍທັ້ງກາຍແລະວາຈາກໍໄດ້ ເປັນອັນປະຕານມແລ້ວ ຖ້າຍັງບໍ່ໄດ້ສແດງອາການກາຍໃຫ້ຮູ້ ຍັງບໍ່ບອກໃຫ້ຮູ້ດ້ວຍວາຈາ ຍັງບໍ່ໄດ້ສແດງອາການກາຍແລະວາຈາໃຫ້ຮູ້ ສັທສິວິຫາຣິກບໍ່ຊື່ວ່າຖືກປະຕານມ.

ສມັຍຕໍ່ມາ ສັທສິວິຫາຣິກທັ້ງຫຼາຍຖືກປະຕາມແລ້ວ ບໍ່ຂໍໃຫ້ອຸປັຊຊາຍະອົດໂທษ. ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສັທສິວິຫາຣິກຂໍໃຫ້ອຸປັຊຊາຍະອົດໂທษ.

ສັທສິວິຫາຣິກທັ້ງຫຼາຍບໍ່ຍອມຂໍໃຫ້ອຸປັຊຊາຍະອົດໂທษຢ່າງເດີມ. ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ສັທສິວິຫາຣິກຖືກປະຕາມແລ້ວ ຈະບໍ່ຂໍໃຫ້ອຸປັຊຊາຍະອົດໂທษບໍ່ໄດ້ ອົງຄ໌ໃດບໍ່ຂໍໃຫ້ອຸປັຊຊາຍະອົດໂທษ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ອຸປັຊຊາຍະທັ້ງຫຼາຍອັນພວກສັທສິວິຫາຣິກຂໍໃຫ້ອົດໂທษຢູ່ ກໍບໍ່ຍອມອົດໂທษ. ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸຍາຕໃຫ້ອຸປັຊຊາຍະອົດໂທษ.

ອຸປັຊຊາຍະທັ້ງຫຼາຍຍັງບໍ່ຍອມອົດໂທษຢ່າງເດີມ. ພວກສັທສິວິຫາຣິກຫລີກໄປເສັຽແດ່ ສຶກໄປເສັຽແດ່ ໄປເຂົ້າຮີດເດັຽຣຖີຍ໌ເສັຽແດ່. ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ອຸປັຊຊາຍະອັນພວກສັທສິວິຫາຣິກຂໍໃຫ້ອົດໂທษຢູ່ ຈະບໍ່ຍອມອົດໂທษບໍ່ໄດ້ ອົງຄ໌ໃດບໍ່ຍອມອົດໂທษ ຕ້ອງອາບັຕິທຸກກົຜ.

[໗໔] ກໍໂດຍສມັຍນັ້ນແລ ອຸປັຊຊາຍະປະຕາມສັທສິວິຫາຣິກຜູ້ປະພຶຕຊອບ ບໍ່ປະຕາມສັທສິວິຫາຣິກຜູ້ປະພຶຕບໍ່ດີ. ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກษຸທັ້ງຫຼາຍ ສັທສິວິຫາຣິກຜູ້ປະພຶຕຊອບ ອຸປັຊຊາຍະບໍ່ຄວຣປະຕາມ ອົງຄ໌ໃດປະຕາມຕ້ອງອາບັຕິທຸກກົຜ. ດູຣາກິກษຸທັ້ງຫຼາຍ ອີກຢ່າງນຶ່ງ ສັທສິວິຫາຣິກຜູ້ປະພຶຕບໍ່ດີ ອຸປັຊຊາຍະຈະບໍ່ປະຕາມບໍ່ໄດ້ ອົງຄ໌ໃດບໍ່ປະຕາມຕ້ອງອາບັຕິທຸກກົຜ.

ອົງຄ໌ແຫ່ງການປະຕາມ

ດູຣາກິກษຸທັ້ງຫຼາຍ ອຸປັຊຊາຍະຄວຣປະຕາມສັທສິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ຄື:-

໑. ຫາຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະບໍ່ໄດ້

໒. ຫາຄວາມເລື່ອມໃສຢ່າງຍິ່ງບໍ່ໄດ້

໓. ຫາຄວາມລະອາຍຢ່າງຍິ່ງບໍ່ໄດ້

໔. ຫາຄວາມເຄົາຣົພຢ່າງຍິ່ງບໍ່ໄດ້ ແລະ

໕. ຫາຄວາມຫວັງດີຕໍ່ຢ່າງຍິ່ງບໍ່ໄດ້

ດູຣາຈິກາບຸທັ້ງຫຼາຍ ອຸປັຊຊາຍະຄວຣປະຕາມສັທຣິວິຫາຣິກ ຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ.

ດູຣາຈິກາບຸທັ້ງຫຼາຍ ອຸປັຊຊາຍະບໍ່ຄວຣປະຕາມສັທຣິວິຫາຣິກ ຜູ້ປະກອບດ້ວຍອົງຄ໌ ໕ ຄື

໑. ມີຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະ

໒. ມີຄວາມເລື່ອມໃສຢ່າງຍິ່ງ

໓. ມີຄວາມລະອາຍຢ່າງຍິ່ງ

໔. ມີຄວາມເຄົາຣົພຢ່າງຍິ່ງ ແລະ

໕. ມີຄວາມຫວັງດີຕໍ່ຢ່າງຍິ່ງ

ດູຣາຈິກາບຸທັ້ງຫຼາຍ ອຸປັຊຊາຍະບໍ່ຄວຣປະຕາມສັທຣິວິຫາຣິກ ຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ.

ດູຣາຈິກາບຸທັ້ງຫຼາຍ ສັທຣິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ຄວຣປະຕາມ ຄື

໑. ຫາຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະບໍ່ໄດ້

໒. ຫາຄວາມເລື່ອມໃສຢ່າງຍິ່ງບໍ່ໄດ້

໓. ຫາຄວາມລະອາຍຢ່າງຍິ່ງບໍ່ໄດ້

໔. ຫາຄວາມເຄົາຣົພຢ່າງຍິ່ງບໍ່ໄດ້ ແລະ

໕. ຫາຄວາມຫວັງດີຕໍ່ຢ່າງຍິ່ງບໍ່ໄດ້

ດູຣາຈິກາບຸທັ້ງຫຼາຍ ສັທຣິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ຄວຣປະຕາມ.

ດູຣາຈິກາບຸທັ້ງຫຼາຍ ສັທຣິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ບໍ່ຄວຣປະຕາມ ຄື

໑. ມີຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະ

໒. ມີຄວາມເລື່ອມໃສຢ່າງຍິ່ງ

໓. ມີຄວາມລະອາຍຢ່າງຍິ່ງ

໔. ມີຄວາມເຄົາຣົພຢ່າງຍິ່ງ ແລະ

໕. ມີຄວາມຫວັງດີຕໍ່ຢ່າງ

ດູຣາຈິກາບຸທັ້ງຫຼາຍ ສັທຣິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ບໍ່ຄວຣປະຕາມ.

ດູຣາຈິກາບຸທັ້ງຫຼາຍ ສັທຣິວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ອຸປັຊຊາຍະເມື່ອບໍ່ປະຕາມ ມີໂທษ ເມື່ອປະຕາມ ບໍ່ມີໂທษ ຄື

໑. ຫາຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະບໍ່ໄດ້

໒. ຫາຄວາມເລື່ອມໃສຢ່າງຍິ່ງບໍ່ໄດ້

໓. ຫາຄວາມລະອາຍຢ່າງຍິ່ງບໍ່ໄດ້

໔. ຫາຄວາມເຄົາຣົພຢ່າງຍິ່ງບໍ່ໄດ້ ແລະ

໕. ຫາຄວາມຫວັງດີຕໍ່ຢ່າງຍິ່ງບໍ່ໄດ້

ດູຣາກິກຸທັ້ງຫຼາຍ ສັທຸລີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ອຸປັຊຊາຍະ ເມື່ອບໍ່ປະຕານ ມີໂທษ ເມື່ອປະຕານ ບໍ່ມີໂທษ.

ດູຣາກິກຸທັ້ງຫຼາຍ ສັທຸລີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ອຸປັຊຊາຍະ ເມື່ອປະຕານ ມີໂທษ ເມື່ອບໍ່ປະຕານບໍ່ມີໂທษ ຄື

໑. ມີຄວາມຮັກແພງຢ່າງຍິ່ງໃນອຸປັຊຊາຍະ

໒. ມີຄວາມເລື່ອມໃສຢ່າງຍິ່ງ

໓. ມີຄວາມລະອາຍຢ່າງຍິ່ງ

໔. ມີຄວາມເຄົາຣົພຢ່າງຍິ່ງ ແລະ

໕. ມີຄວາມຫວັງດີຕໍ່ຢ່າງຍິ່ງ

ດູຣາກິກຸທັ້ງຫຼາຍ ສັທຸລີວິຫາຣິກຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ອຸປັຊຊາຍະ ເມື່ອປະຕານ ມີໂທษ ເມື່ອບໍ່ປະຕານ ບໍ່ມີໂທษ

ມູລເຫຕຸອຸປສົມບົທດ້ວຍລັຕຕິຈຕຸຕຖກັມມ໌
ເຣື່ອງພຣາຫ໌ມຕ໌ຄົນນຶ່ງ

[໗໕] ກໍໂດຍສມັຍນັ້ນແລ ພຣາຫ໌ມຕ໌ຄົນນຶ່ງເຂົ້າໄປຫາກິກຂຸທັ້ງຫຼາຍ ແລ້ວຂໍບັຣພຊາ. ກິກຂຸທັ້ງຫຼາຍບໍ່ປັຕຖນາຈະໃຫ້ທ່ານບັຣພຊາ. ເມື່ອທ່ານບໍ່ໄດ້ບັຣພຊາໃນສຳນັກກິກຂຸ ຈຶ່ງໄດ້ຈ່ອຍຜອມ ເສົ້າຫມອງ ມີຜິວພັຣຕ໌ດຳ ມີຜິວເຫລືອງໆ ຂຶ້ນ ມີເນື້ອຫນັງສະພັ່ງດ້ວຍເອັນ. ພຣະຜູ້ມີພຣະກາຄທອດພຣະເນຕຣ໌ເຫັນພຣາຫ໌ມຕ໌ນັ້ນຈ່ອຍຜອມ ເສົ້າຫມອງ ມີຜິວພັຣຕ໌ດຳ ມີຜິວເຫລືອງຂຶ້ນໆ ມີເນື້ອຫນັງສະພັ່ງດ້ວຍເອັນ ຄັ້ນແລ້ວຮັບສັ່ງຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຫຕຸແນວໃດພຣາຫ໌ມຕ໌ນັ້ນຈຶ່ງໄດ້ຈ່ອຍຜອມ ເສົ້າຫມອງ ມີຜິວພັຣຕ໌ດຳ ມີຜິວເຫລືອງຂຶ້ນໆ ມີເນື້ອຫນັງສະພັ່ງດ້ວຍເອັນລະ?

ກິກຂຸທັ້ງຫຼາຍທູລວ່າ ເພາະພຣາຫ໌ມຕ໌ນັ້ນເຂົ້າໄປຫາກິກຂຸທັ້ງຫຼາຍ ແລ້ວຂໍບັຣພຊາ ກິກຂຸທັ້ງຫຼາຍບໍ່ປັຕຖນາຈະໃຫ້ທ່ານບັຣພຊາ ເມື່ອທ່ານບໍ່ໄດ້ບັຣພຊາໃນສຳນັກກິກຂຸ ຈຶ່ງໄດ້ຈ່ອຍຜອມ ເສົ້າຫມອງ ມີຜິວພັຣຕ໌ດຳ ມີຜິວເຫລືອງຂຶ້ນໆ ມີເນື້ອຫນັງສະພັ່ງດ້ວຍເອັນ ພຣະພຸທສເຈົ້າຂ້ານ້ອຍ.

ບ່ອນນັ້ນ ພຣະຜູ້ມີພຣະກາຄຮັບສັ່ງຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ໃຜຣະລຶກເຖິງບຸ`ຄຸຕຂອງພຣາຫ໌ມຕ໌ນັ້ນໄດ້ແດ່? ເມື່ອຕຣັສຖາມຢ່າງນີ້ແລ້ວ ທ່ານພຣະສາຣີບຸຕຣ໌ໄດ້ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂ້າພຣະພຸທສເຈົ້າຣະລຶກເຖິງບຸ`ຄຸຕຂອງພຣາຫ໌ມຕ໌ນັ້ນໄດ້ຢູ່ ພຣະພຸທສເຈົ້າຂ້ານ້ອຍ.

ກ. ດູຣາສາຣີບຸຕຣ໌ ກໍທ່ານຣະລຶກເຖິງບຸ`ຄຸຕຂອງພຣາຫ໌ມຕ໌ນັ້ນໄດ້ຢ່າງໃດແດ່?

ສາ. ພຣະພຸທສເຈົ້າຂ້ານ້ອຍ ເມື່ອຂ້າພຣະພຸທສເຈົ້າທ່ຽວບິຕຫບາຕຢູ່ ຕ ພຣະນຄຣຣາຊຄຣຶຫ໌ນີ້ ພຣາຫ໌ມຕ໌ຜູ້ນັ້ນໄດ້ສັ່ງໃຫ້ຖວາຍກິກຂາ ໑ ທັພພີ ຂ້າພຣະພຸທສເຈົ້າຣະລຶກເຖິງບຸ`ຄຸຕຂອງພຣາຫ໌ມຕ໌ນັ້ນໄດ້ເທົ່ານີ້ແລ ພຣະພຸທສເຈົ້າຂ້ານ້ອຍ.

ກ. ດີລະໆ ສາຣີບຸຕຣ໌ ຄວາມຈິງສັຕບຸຣຸຂທັ້ງຫຼາຍ ເປັນຜູ້ກັຕັລຍູກຕເວທີ ສາຣີບຸຕຣ໌ ຖ້າເຊັ່ນນັ້ນ ທ່ານຈົ່ງໃຫ້ພຣາຫ໌ມຕ໌ນັ້ນບັຣພຊາອຸປສົມບົທເຖີດ.

ສາ. ຂ້າພຣະພຸທສເຈົ້າຈະໃຫ້ພຣາຫ໌ມຕ໌ນັ້ນບັຣພຊາອຸປສົມບົທຢ່າງໃດ ພຣະພຸທສເຈົ້າຂ້ານ້ອຍ?

ອຸປສົມບົທດ້ວຍລັຕຕິຈຕຸຕຖກັມມ໌

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳທັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຕັ້ງແຕ່ວັນນີ້ເປັນຕົ້ນໄປ ເຮົາຫ້າມການອຸປສົມບົທດ້ວຍໄຕຣສຣຕຄົມນ໌ ຊຶ່ງເຮົາໄດ້ອນຸຍາຕໄວ້ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕການອຸປສົມບົທດ້ວຍລັຕຕິຈຕຸຕຖກັມມ໌

ວິທີໃຫ້ອຸປສົມບົທ

ດູຣາກິກສຸທັ້ງຫຼາຍ ກໍແລ ພວກທ່ານຄວຣໃຫ້ອຸປສົມບົທຢ່າງນີ້ ກິກສຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຜ໌ຮູ້ ດ້ວຍລັຕຕິຈຕຸຕຖກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາໃຫ້ອຸປສົມບົທ

ທ່ານຂ້ານ້ອຍ ຂໍສົງຜ໌ຈົງຟັງຂ້າພເຈົ້າ ຜູ້ມີຊື່ນີ້ ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຖ້າຄວາມພ້ອມພັ່ງຂອງສົງຜ໌ເຖິງທີ່ແລ້ວ ສົງຜ໌ຄວຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຜ໌ຈົງຟັງຂ້າພເຈົ້າ ຜູ້ມີຊື່ນີ້ ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຜ໌ອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ກາຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສອງ ທ່ານຂ້ານ້ອຍ ຂໍສົງຜ໌ຈົງຟັງຂ້າພເຈົ້າ ຜູ້ມີຊື່ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຜ໌ອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ກາຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສາມ ທ່ານຂ້ານ້ອຍ ຂໍສົງຜ໌ຈົງຟັງຂ້າພເຈົ້າ ຜູ້ມີຊື່ນີ້ ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ສົງຜ໌ອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ກາຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຜູ້ມີຊື່ນີ້ ສົງຜ໌ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ສົງຜ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ດ້ວຍຢ່າງນີ້.

ກິກສຸປະພຶຕອນາຈາຣ

[໗໖] ກໍໂດຍສມັຍນັ້ນແລ ກິກສຸອົງຄ໌ນຶ່ງພໍອຸປສົມບົທແລ້ວ ໄດ້ປະພຶຕອນາຈາຣ. ກິກສຸທັ້ງຫຼາຍພາກັນກ່າວຫ້າມຢ່າງນີ້ວ່າ ອາວຸໂສ ຄຸຕຢ່າໄດ້ທຳຢ່າງນັ້ນ ເພາະນັ້ນບໍ່ຄວຣ. ທ່ານກ່າວຢ່າງນີ້ວ່າ ຂ້ານ້ອຍບໍ່ໄດ້ຂໍຮ້ອງທ່ານທັ້ງຫຼາຍວ່າ ຂໍຈົງໃຫ້ຂ້ານ້ອຍອຸປສົມບົທ ທ່ານທັ້ງຫຼາຍບໍ່ໄດ້ຖືກ

ຂໍຮ້ອງແລ້ວ ໃຫ້ຂ້ານ້ອຍອຸປສົມບົທເພື່ອຫຍັງ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ບໍ່ໄດ້ຮັບການຂໍຮ້ອງ ບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ. ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ຖືກຂໍຮ້ອງອຸປສົມບົທໃຫ້.

ວິທີຂໍອຸປສົມບົທ

ດູຣາກິກຂຸທັ້ງຫຼາຍ ກໍແລອຸປສັມປທາເປກຂະຄວຣຂໍຢ່າງນີ້

ອຸປສັມປທາເປກຂະນັ້ນ ຄວຣເຂົ້າໄປຫາສົງຄ໌ ຫົ່ມຜ້າພາດບ່າ ໄຫວ້ຕີນກິກຂຸທັ້ງຫຼາຍ ນັ່ງ ຫຍອງຫຍໍ້ ປະຄອງອັຌຊລີ ແລ້ວກ່າວຄຳຂໍອຸປສົມບົທຢ່າງນີ້ວ່າ

ຂ້າພເຈົ້າຂໍອຸປສົມບົທຕໍ່ສົງຄ໌ ຂ້ານ້ອຍ ຂໍສົງຄ໌ໂປຼດເອັນດູຍົກຂ້າພເຈົ້າຂຶ້ນເຖີດ ເຈົ້າຂ້າ. ຄວຣ ຂໍແມ້ຄັ້ງທີ່ສອງ ... ຄວຣຂໍແມ້ຄັ້ງທີ່ສາມ ...

ກິກຂຸຜູ້ຌລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິຈຕຸຕຖກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາໃຫ້ອຸປສົມບົທ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີ ຊື່ນີ້. ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງຄ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ. ຖ້າຄວາມພ້ອມພັ່ງຂອງ ສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ. ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີ ຊື່ນີ້ ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງຄ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ ສົງຄ໌ອຸປສົມບົທຜູ້ມີຊື່ນີ້ ມີ ທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ. ການອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ ຊອບແກ່ ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສາມ ...

ຜູ້ມີຊື່ນີ້ ສົງຄ໌ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຌາຍະ. ຊອບແກ່ສົງຄ໌ ເຫຕຸນັ້ນ ຈຶ່ງນິ່ງ ຂ້າພເຈົ້າຫຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ພຣາຫມ໌ນຕ໌ຂໍອຸປສົມບົທ

[໗໗] ກໍໂດຍສມັຍນັ້ນແລ ປະຊາຊົນທັ້ງຫຼາຍໄດ້ຈັດຕັ້ງລຳດັບກັຕຕາຫານອັນປະຌີຕໄວ້ທີ່ໃນ ພຣະນຄຣຣາຊຄຣຶຫ໌. ຄັ້ງນັ້ນ ພຣາຫ໌ມຕ໌ຄົນນຶ່ງໄດ້ມີຄວາມດຳຣິວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌

ເຫຼົ່ານີ້ ມີປົກຕິເປັນສຸຂ ມີຄວາມປະພຶຕສບາຍ ສັນໂກຊນະທີ່ດີ ນອນເທິງທີ່ນອນທີ່ງຽບສງັດ ຖ້າຈັ່ງໃດ ເຮົາຄວຣບວຊໃນພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຖີດ ດັ່ງນີ້ ແລ້ວໄດ້ເຂົ້າໄປຫາພິກຂຸທັ້ງຫຼາຍ ແລ້ວຂໍບັຣພຊາ. ພິກຂຸທັ້ງຫຼາຍໃຫ້ເຂົາບັຣພຊາອຸປສົມບົທແລ້ວ. ຄັ້ນເຂົາບວຊແລ້ວ ປະຊາຊົນໃຫ້ເລີກລຳດັບພັຕຕາຫາຣເສັຽ. ພິກຂຸທັ້ງຫຼາຍກ່າວຢ່າງນີ້ວ່າ ທ່ານຈົ່ງມາດຽວນີ້ ພວກເຮົາຈັກໄປບິຕຫບາຕຣ໌. ທ່ານເວົ້າຢ່າງນີ້ວ່າ ຂ້ານ້ອຍບໍ່ໄດ້ບວຊເພາະເຫຕຸນີ້ວ່າ ຈັກທ່ຽວບິຕຫບາຕ ຖ້າທ່ານທັ້ງຫຼາຍໃຫ້ຂ້ານ້ອຍ ຂ້ານ້ອຍຈັກສັນ ຖ້າບໍ່ໃຫ້ຂ້ານ້ອຍ ຂ້ານ້ອຍຈະສຶກ ໂດຍຂ້ານອັຍ.

ພວກພິກຂຸຖາມວ່າ ອາວຸໂສ ກໍຄຸຕບວຊເພາະເຫຕຸແຫ່ງທ້ອງບໍ່?

ທ່ານຕອບວ່າ ຢ່າງນັ້ນບໍ່ ໂດຍຂ້ານອັຍ.

ບັຣດາພິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດພິກຂຸຈຶ່ງໄດ້ບວຊໃນພຣະສັມມ໌ວິນັຍ ອັນພຣະຜູ້ມີພຣະກາຄຕຣັສດີແລ້ວຢ່າງນີ້ ເພາະເຫຕຸແຫ່ງທ້ອງລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມພິກຂຸນັ້ນວ່າ ແທ້ບໍ່ ພິກຂຸ ຂ່າວວ່າ ທ່ານບວຊເພາະເຫຕຸແຫ່ງທ້ອງ?

ພິກຂຸນັ້ນທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຮາໂມຄບຸຣຸສ ແນວໃດທ່ານຈຶ່ງໄດ້ບວຊໃນສັມມ໌ວິນັຍທີ່ເຮົາກ່າວດີແລ້ວຢ່າງນີ້ ເພາະເຫຕຸແຫ່ງທ້ອງລະ ດູຮາໂມຄບຸຣຸສ ກາຣກະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ... ຄັ້ນແລ້ວ ທຣົງທຳສັມມີກຖາ ຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຮາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິກຂຸຜູ້ໃຫ້ອຸປສົມບົທ ບອກນິສສັຍ ໔ ວ່າດັ່ງນີ້:-

ນິສສັຍ ໔

໑. ບັຣພຊາອາສັຍໂກຊນະຄືຄຳເຂົ້າອັນຫາໄດ້ດ້ວຍກຳລັງບີແຂ້ງ ທ່ານຄວຣເຮັດອຸຕສາຫະໃນສິ່ງນັ້ນຕລອດຊີວິຕ ອດິເຣກລາກ ຄື ພັຕຖວາຍສົງຄ໌ ພັຕຂເພາະສົງຄ໌ ກາຣນິມົນຕ໌ ພັຕຖວາຍຕາມສລາກ ພັຕຖວາຍໃນປັກຂ໌ ພັຕຖວາຍໃນວັນອຸໂບສຖ໌ ພັຕຖວາຍໃນວັນປາຕິບົທ.

໔. ບັຣພຊາອາສັຍບັງສຸກຸລຈີວຣ ທ່ານຄວຣເຮັດອຸຕສາຫະໃນສິ່ງນັ້ນຕລອດຊີວິຕ ອດິເຣກລາກ ຄື ຜ້າເປືອກໄມ້ ຜ້າຝ້າຍ ຜ້າໄຫມ ຜ້າຂົນສັຕວ໌ ຜ້າປ່ານ ຜ້າເຈືອກັນ. (ເຊັ່ນຜ້າດ້າຍແກມໄຫມ)

໓. ບັຣພຊາ ອາສັຍໂຄນໄມ້ເປັນເສນາສນະ ທ່ານຄວຣເຮັດອຸຕສາຫະໃນສິ່ງນັ້ນຕລອດຊີວິຕ ອດິເຣກລາກ ຄື ວິຫາຣ ເຮືອນມຸງແຖບດຽວ ເຮືອນຊັ້ນ ເຮືອນໂລ້ນ ຖ້ຳ.

໔. ບັຣພຊາອາສັຍມູຕຣ໌ເນົ່າເປັນຢາ ທ່ານຄວຣເຮັດອຸຕສາຫະໃນສິ່ງນັ້ນຕລອດຊີວິຕ ອດິເຣກລາກ ຄື ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ.

ອຸປັຊຊາຍວັຕຣ໌ກາຖວາຣ ຈົບ

ການບອກນິສສັຍ

[໗໗] ກໍໂດຍສມັຍນັ້ນແລ ມາຕົພຄົນນຶ່ງເຂົ້າໄປຫາກິກຸທັ້ງຫຼາຍ ແລ້ວຂໍບັຣພຊາ. ພວກກິກຸໄດ້ບອກນິສສັຍແກ່ທ່ານກ່ອນບວຊ. ທ່ານຈຶ່ງເວົ້າຢ່າງນີ້ວ່າ ຖ້າເມື່ອຂ້ານ້ອຍບວຊແລ້ວ ພຣະຄຸຕເຈົ້າທັ້ງຫຼາຍຄວຣບອກນິສສັຍແກ່ຂ້ານ້ອຍ ຂ້ານ້ອຍກໍຈະຍິນດີຍິ່ງ ບັດນີ້ ຂ້ານ້ອຍຈະບໍ່ບວຊລະ ເພາະນິສສັຍເປັນສິ່ງທີ່ບໍ່ດີ ເປັນປຕິກູລແກ່ຂ້ານ້ອຍ. ກິກຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຸທັ້ງຫຼາຍ ກິກຸບໍ່ຄວຣບອກນິສສັຍກ່ອນບວຊ ອົງຄ໌ໃດບອກ ຕ້ອງອາບັຕິທຸກກົຜ ດູຣາກິກຸທັ້ງຫຼາຍ ພໍອຸປສົມບົທແລ້ວ ເຮົາອນຸຍາຕໃຫ້ບອກນິສສັຍ.

ອຸປສົມບົທດ້ວຍຄຕະ

[໗໘] ກໍໂດຍສມັຍນັ້ນແລ ກິກຸທັ້ງຫຼາຍໃຫ້ອຸປສົມບົທດ້ວຍຄຕະມີພວກສອງແດ່ ມີພວກສາມແດ່ ມີພວກສີ່ແດ່. ກິກຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຸທັ້ງຫຼາຍ ກິກຸບໍ່ຄວຣໃຫ້ອຸປສົມບົທດ້ວຍຄຕະ ຊຶ່ງມີພວກຫຍ່ອນ ໑໐ ອົງຄ໌ໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກົຜ. ດູຣາກິກຸທັ້ງຫຼາຍ ເຮົາອນຸຍາຕໃຫ້ອຸປສົມບົທດ້ວຍຄຕະມີພວກ ໑໐ ຫຼືມີພວກເກີນ ໑໐.

ພຣະອຸປເສນວັງຄັນຕບຸຕຣ໌ອຸປສົມບົທສັທຸຶວິຫາຣິກ

[໘໐] ກໍໂດຍສມັຍນັ້ນແລ ກິກຸທັ້ງຫຼາຍມີພັຣຫານຶ່ງແດ່ ມີພັຣຫາສອງແດ່ ອຸປສົມບົທສັທຸຶວິຫາຣິກ. ແມ້ທ່ານພຣະອຸປເສນວັງຄັນຕບຸຕຣ໌ ມີພັຣຫາດຽວ ອຸປສົມບົທສັທຸຶວິຫາຣິກ. ທ່ານອອກ

ພັຣษາແລ້ວ ມີພັຣษາສອງ ໄດ້ພາສັທສິວິຫາຣິກມີພັຣษານຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນແລ້ວ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ກໍການທີ່ພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫຼາຍ ທຣົງປຼາສຣັຍກັບພຣະອາຄັນຕຸກະທັ້ງຫຼາຍ ນັ່ນເປັນພຸທສປະເພຕີ. ຄັ້ງນັ້ນ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣ໌ວ່າ ດູຣາກິກษຸທັ້ງຫຼາຍ ຣ່າງກາຍຂອງພວກທ່ານຍັງພໍທົນໄດ້ ຍັງພໍໃຫ້ເປັນໄປໄດ້ບໍ່ ພວກທ່ານເດີນທາງມາມີຄວາມລຳບາກນ້ອຍບໍ່?

ທ່ານພຣະອຸປເສນວັງຄັນຕບຸຕຣ໌ຂາບທູລວ່າ ຍັງພໍທົນໄດ້ ພຣະພຸທສເຈົ້າຂ້ານ້ອຍ ຍັງພໍໃຫ້ເປັນໄປໄດ້ ພຣະພຸທສເຈົ້າຂ້ານ້ອຍ ແລະພວກຂ້າພຣະພຸທສເຈົ້າເດີນທາງມາກໍມີຄວາມລຳບາກນ້ອຍ ພຣະພຸທສເຈົ້າຂ້ານ້ອຍ.

ພຸທສປະເພຕີ

ພຣະຕຖາຄົຕທັ້ງຫຼາຍ ທຣົງຮູ້ຢູ່ ຍ່ອມຕຣັສຖາມກໍມີ ທຣົງຮູ້ຢູ່ ຍ່ອມບໍ່ຕຣັສຖາມກໍມີ ທຣົງຮູ້ກາລແລ້ວຕຣັສຖາມ ທຣົງຮູ້ກາລແລ້ວບໍ່ຕຣັສຖາມ ພຣະຕຖາຄົຕທັ້ງຫຼາຍຍ່ອມຕຣັສຖາມສິ່ງທີ່ປະກອບດ້ວຍປະໂຍຊນ໌ ບໍ່ຕຣັສຖາມສິ່ງທີ່ບໍ່ປະກອບດ້ວຍປະໂຍຊນ໌ ໃນສິ່ງທີ່ບໍ່ປະກອບດ້ວຍປະໂຍຊນ໌ ພຣະອົງຄ໌ທຣົງກຳຈັດເສັຽດ້ວຍຂໍ້ປຕິບັຕິ. ພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫຼາຍຍ່ອມທຣົງສອບຖາມກິກษຸທັ້ງຫຼາຍດ້ວຍອາການ ໔ ຢ່າງ ຄືຈັກທຣົງສແດງຣັມມ໌ຢ່າງນຶ່ງ ຈັກທຣົງບັຌລັຕິສິກຂາບົທແກ່ພຣະສາວົກທັ້ງຫຼາຍຢ່າງນຶ່ງ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣ໌ວ່າ ທ່ານມີພັຣษາໄດ້ເທົ່າໃດກິກษຸ?

ອຸປ. ຂ້າພຣະພຸທສເຈົ້າມີພັຣษາໄດ້ສອງ ພຣະພຸທສເຈົ້າ.

ກ. ກິກษຸອົງຄ໌ນີ້ລະມີພັຣษາໄດ້ເທົ່າໃດ?

ອຸປ. ມີພັຣษາດຽວ ພຣະພຸທສເຈົ້າຂ້ານ້ອຍ.

ກ. ກິກษຸອົງຄ໌ນີ້ເປັນຫຍັງກັບທ່ານ?

ອຸປ. ເປັນສັທສິວິຫາຣິກຂອງຂ້າພຣະພຸທສເຈົ້າ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາໂມຄບຸຣຸษ ການກະທຳຂອງທ່ານນັ້ນ ບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ດູຣາໂມຄບຸຣຸษ ທ່ານຍັງເປັນຜູ້ອັນຜູ້ອື່ນຄວຣໂອວາທອນຸສາສນ໌ຢູ່ ແນວໃດຈຶ່ງສຳຄັນຕົນເພື່ອໂອວາທອນຸສາສນ໌ຜູ້ອື່ນລະ ທ່ານວຽນມາເພື່ອຄວາມເປັນ

ຜູ້ມັກຫຼາຍ ຊຶ່ງມີຄວາມພົວພັນດ້ວຍຫມູ່ໄວເກີນໄປ ກາຣກະທຳຂອງທ່ານນັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ... ຄັ້ນແລ້ວທຣົງທຳທັມມີກະຖາ ຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸມີພັຣຊາຫຍ່ອນ ໑໐ ບໍ່ຄວຣໃຫ້ອຸປສົມບົທ ອົງຄ໌ໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກົຏ. ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸມີພັຣຊາໄດ້ ໑໐ ຫຼືມີພັຣຊາເກີນ ໑໐ ໃຫ້ອຸປສົມບົທ.

ພຣະອຸປັຊຊາຍະມີກາຣສຶກຊານ້ອຍກວ່າສັທຘິວິຫາຣິກ

[໗໑] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍຄິດວ່າເຮົາມີພັຣຊາໄດ້ ໑໐ ແລ້ວ ເຮົາມີພັຣຊາໄດ້ ໑໐ ແລ້ວ ດັ່ງນີ້ ແຕ່ຍັງເປັນຜູ້ໂງ່ ບໍ່ຈຽບແຫລມ ຍ່ອມໃຫ້ອຸປສົມບົທ. ປາກົຕວ່າພຣະອຸປັຊຊາຍະເປັນຜູ້ໂງ່ ສັທຘິວິຫາຣິກເປັນຜູ້ຈລາດ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ບໍ່ຈຽບແຫລມ ສັທຘິວິຫາຣິກເປັນຜູ້ຈຽບແຫລມ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ມີສຸຕະນ້ອຍ ສັທຘິວິຫາຣິກເປັນຜູ້ມີສຸຕະຫຼາຍ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ມີປັຌຌາຊາມ ສັທຘິວິຫາຣິກເປັນຜູ້ມີປັຌຌາ. ແມ້ກິກຂຸອົງຄ໌ນຶ່ງເຄີຍເປັນອັຌຌເດັຽຣຖີຍ໌ ເມື່ອພຣະອຸປັຊຊາຍະວ່າກ່າວຢູ່ໂດຍຊອບທັມມ໌ ໄດ້ຍົກວາທະຂຶ້ນໂຕ້ຖຽງແກ່ພຣະອຸປັຊຊາຍະ ແລ້ວຫລີກໄປສູ່ລັທຘິເດັຽຣຖີຍ໌ນັ້ນຕາມເດີມ.

ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດກິກຂຸທັ້ງຫຼາຍຈຶ່ງໄດ້ອ້າງວ່າ ເຮົາມີພັຣຊາໄດ້ ໑໐ ແລ້ວ ເຮົາມີພັຣຊາໄດ້ ໑໐ ແລ້ວ ດັ່ງນີ້ ແຕ່ຍັງເປັນຜູ້ໂງ່ ບໍ່ຈຽບແຫລມ ໃຫ້ອຸປສົມບົທ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ໂງ່ ສັທຘິວິຫາຣິກເປັນຜູ້ຈລາດ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ບໍ່ຈຽບແຫລມ ສັທຘິວິຫາຣິກເປັນຜູ້ຈຽບແຫລມ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ມີສຸຕະນ້ອຍ ສັທຘິວິຫາຣິກເປັນຜູ້ມີສຸຕະຫຼາຍ ປາກົຕວ່າພຣະອຸປັຊຊາຍະເປັນຜູ້ມີປັຌຌາຊາມ ສັທຘິວິຫາຣິກເປັນຜູ້ມີປັຌຌາລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າກິກຂຸທັ້ງຫຼາຍອ້າງວ່າ ເຮົາມີພັຣຊາໄດ້ ໑໐ ແລ້ວ ເຮົາມີພັຣຊາໄດ້ ໑໐ ແລ້ວ ດັ່ງນີ້ ແຕ່ຍັງເປັນຜູ້ໂງ່ ບໍ່ຈຽບແຫລມ ໃຫ້ອຸປສົມບົທ ປາກົຕວ່າອຸປັຊຊາຍະເປັນຜູ້ໂງ່ ສັທຘິວິຫາຣິກເປັນຜູ້ຈລາດ ປາກົຕວ່າອຸປັຊຊາຍະເປັນຜູ້ບໍ່ຈຽບແຫລມ ສັທຘິວິຫາຣິກເປັນຜູ້ຈຽບແຫລມ ປາກົຕວ່າອຸປັຊຊາຍະເປັນຜູ້ມີສຸຕະນ້ອຍ ສັທຘິວິຫາຣິກເປັນຜູ້ມີສຸຕະຫຼາຍ ປາກົຕວ່າອຸປັຊຊາຍະເປັນຜູ້ມີປັຌຌາຊາມ ສັທຘິວິຫາຣິກເປັນຜູ້ມີປັຌຌາ ແທ້ບໍ່?

ກິກຂຸທັ້ງຫຼາຍທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທຂເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫຼາຍ ແນວໃດໂມຂບຸຣຸຂເຫຼົ່ານັ້ນຈຶ່ງໄດ້ອ້າງວ່າ ເຮົາມີພັຣຂາໄດ້ ໑໐ ແລ້ວ ເຮົາມີພັຣຂາໄດ້ ໑໐ ແລ້ວ ດັ່ງນີ້ ແຕ່ຍັງເປັນຜູ້ໂງ່ ບໍ່ສະຫລາດ ໃຫ້ອຸປສົມບົທ ປາກົຕວ່າອຸປັຊຊາຍະເປັນຜູ້ໂງ່ ສັທທິວິຫາຣິກເປັນຜູ້ສລາດ ປາກົຕວ່າອຸປັຊຊາຍະເປັນຜູ້ບໍ່ສະຫລາດ ສັທທິວິຫາຣິກເປັນຜູ້ສະຫລາດ ປາກົຕວ່າອຸປັຊຊາຍະເປັນຜູ້ມີສຸຕະນ້ອຍ ສັທທິວິຫາຣິກເປັນຜູ້ມີສຸຕະຫຼາຍ ປາກົຕວ່າອຸປັຊຊາຍະເປັນຜູ້ມີປັນຍາຊາມ ສັທທິວິຫາຣິກເປັນຜູ້ມີປັນຍາລະ ດູຣາກິກຂຸທັ້ງຫຼາຍ ການກະທຳຂອງພວກໂມຂບຸຣຸຂນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ຫຼືເພື່ອຄວາມເລື່ອມໃສຍິ່ງຂອງຊຸມຊົນທີ່ເລື່ອມໃສແລ້ວ ... ຄັ້ນແລ້ວທຣົງທຳທັມມີກະຖາ ຮັບສັ່ງກະກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ໂງ່ ບໍ່ສະຫລາດ ບໍ່ຄວຣໃຫ້ອຸປສົມບົທ ອົງຄ໌ໃດໃຫ້ອຸປສົມບົທ ຕ້ອງອາບັຕິທຸກກົຜ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸ ຜູ້ສລາດຜູ້ສາມາຖ ມີພັຣຂາໄດ້ ໑໐ ຫຼືມີພັຣຂາເກີນ ໑໐ ໃຫ້ອຸປສົມບົທ.

ທຣົງອນຸຍາຕອາຈາຣຍ໌

[໗໔] ກໍໂດຍສມັຍນັ້ນແລ ເມື່ອພຣະອຸປັຊຊາຍະທັ້ງຫຼາຍຫລີກໄປເສັຽກໍດີ ສຶກເສັຽກໍດີ ເຖິງມໍຣຕກາພກໍດີ ໄປເຂົ້າຮີດເດັຽຣຖີຍ໌ເສັຽກໍດີ ກິກຂຸທັ້ງຫຼາຍບໍ່ມີອາຈາຣຍ໌ ບໍ່ມີໃຜຕັກເຕືອນ ບໍ່ມີໃຜພຣ່ຳສອນ ຍ່ອມນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣທ່ຽວບິຕທບາຕ. ເມື່ອປະຊາຊົນກຳລັງບໍຣິໂກຄຍ່ອມນ້ອມບາຕຣ໌ສຳຫຼັບທ່ຽວບິຕທບາຕເຂົ້າໄປຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ແມ້ໃນໂຮງອາຫາຣກໍເປັນຜູ້ມີສຽງອື້ອຶງ ມີສຽງດັງຢູ່.

ປະຊາຊົນຈຶ່ງເພັ່ງໂທຂ ຕິຕຽນ ໂພນທະນາວ່າ ແນວໃດພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ທ່ຽວບິຕທບາຕລະ ເມື່ອປະຊາຊົນກຳລັງບໍຣິໂກຄໄດ້ນ້ອມບາຕຣ໌ສຳຫຼັບທ່ຽວບິຕທບາຕເຂົ້າໄປ ຂ້າງເທິງຂອງຄວຣບໍຣິໂກຄແດ່ ຂ້າງເທິງຂອງຄວຣຄ້ຽວແດ່ ຂ້າງເທິງຂອງຄວຣກິນແດ່ ຂ້າງເທິງຂອງຄວຣດື່ມແດ່ ຂໍແກງແດ່ ເຂົ້າສຸກແດ່ ດ້ວຍຕົນເອງມາສັນ ແມ້ໃນໂຮງອາຫາຣ ກໍເປັນຜູ້ມີສຽງອື້ອຶງ ມີສຽງດັງຢູ່ ເຫມືອນພວກພຣາຫ໌ມຕ໌ໃນສຖານທີ່ລ້ຽງພຣາຫ໌ມຕ໌ດັ່ງນັ້ນ.

ກິກຂຸທັ້ງຫຼາຍໄດ້ຍິນຄົນພວກນັ້ນເພັ່ງໂທຂ ຕິຕຽນ ໂພນທະນາຢູ່ ບັຣດາທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພັ່ງໂທຂ ຕິຕຽນ ໂພນທະນາວ່າ ແນວໃດກິກຂຸທັ້ງຫຼາຍ ຈຶ່ງໄດ້ນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ... ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ທຣົງສອບຖາມ

ຄັ້ງນັ້ນ ພຣະຜູ້ມີພຣະພາຄ ... ທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸທັ້ງຫຼາຍນຸ່ງຫົ່ມບໍ່ຮຽບຮ້ອຍ ມີມັຣຍາທບໍ່ສົມຄວຣ ... ແທ້ບໍ່?

ພິກຂຸທັ້ງຫຼາຍທູລຮັບວ່າ ຈິງ ພຣະພຸທສເຈົ້າຂ້ານ້ອຍ.

ທຣົງຕິຽນ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຽນ ... ຄັ້ນແລ້ວທຣົງທຳທັມມີກຖາ ຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕອາຈາຣຍ໌. ອາຈາຣຍ໌ຈັກຕັ້ງຈິຕສນິທສນົມໃນອັນເຕວາສິກວ່ານບຸຕຣ໌ ອັນເຕວາສິກຈັກຕັ້ງຈິຕສນິທສນົມໃນອາຈາຣຍ໌ວ່ານບິດາ ເມື່ອເປັນເຊັ່ນນີ້ ອາຈາຣຍ໌ແລະອັນເຕວາສິກນັ້ນ ຕ່າງຈັກມີຄວາມເຄົາຣົພ ຢຳເກງ ປະພຶຕກົມກຽວກັນຢູ່ ຈັກເຖິງຄວາມຈເຣີນງອກງາມໄພບູລຍ໌ໃນທັມມ໌ ວິນັຍນີ້ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ອາສັຍພິກຂຸມີພັຣຊາ ໑໐ ຢູ່ ອນຸຍາຕໃຫ້ພິກຂຸມີພັຣຊາໄດ້ ໑໐ ໃຫ້ນິສສັຍ.

ວິທີຖືນິສສັຍ

ດູຣາພິກຂຸທັ້ງຫຼາຍ ກໍແລອັນເຕວາສິກຄວຣຖືອາຈາຣຍ໌ຢ່າງນີ້

ອັນເຕວາສິກນັ້ນຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ໄຫວ້ຕີນ ນັ່ງຫຍອງຫຍ້ ປະຄອງອັນຊລີ ແລ້ວ ກ່າວຢ່າງນີ້ ໓ ເທື່ອ

ທ່ານຂ້ານ້ອຍ ຂໍທ່ານຈົ່ງເປັນອາຈາຣຍ໌ຂອງຂ້າພເຈົ້າ ຂ້າພເຈົ້າຈັກອາສັຍທ່ານຢູ່, ທ່ານເຈົ້າຂ້າ ຂໍທ່ານຈົ່ງເປັນອາຈາຣຍ໌ຂອງຂ້າພເຈົ້າ ຂ້າພເຈົ້າຈັກອາສັຍທ່ານຢູ່, ທ່ານຂ້ານ້ອຍ ຂໍທ່ານຈົ່ງເປັນອາຈາຣຍ໌ຂອງ ຂ້າພເຈົ້າ ຂ້າພເຈົ້າຈັກອາສັຍທ່ານຢູ່

ອາຈາຣຍ໌ຮັບວ່າ ດີລະ ເບົາໃຈລະ ຊອບແກ່ອຸບາຍລະ ສົມຄວຣລະ ຫຼືຮັບວ່າຈົ່ງຍັງຄວາມປຕິບັຕິ ໃຫ້ເຖິງພ້ອມດ້ວຍອາການອັນໜ້າເລື່ອມໃສເຖີດ ດັ່ງນີ້ກໍໄດ້ ຮັບດ້ວຍກາຍ ຮັບດ້ວຍວາຈາ ຮັບດ້ວຍທັ້ງກາຍ ແລະວາຈາກໍໄດ້ ເປັນອັນວ່າອັນເຕວາສິກຖືອາຈາຣຍ໌ແລ້ວ, ບໍ່ຮັບດ້ວຍກາຍ ບໍ່ຮັບດ້ວຍວາຈາ ບໍ່ຮັບດ້ວຍ ທັ້ງກາຍແລະວາຈາ ບໍ່ເປັນອັນວ່າອັນເຕວາສິກຖືອາຈາຣຍ໌ແລ້ວ.

ອາຈຣິຍວັຕຣ໌

[໙໓] ດູຣາພິກຂຸທັ້ງຫຼາຍ ອັນເຕວາສິກຄວຣປະພຶຕຊອບໃນອາຈາຣຍ໌.

ວິທີປະພຶຕຊອບໃນອາຈາຣຍ໌ນັ້ນ ດັ່ງຕໍ່ໄປນີ້

ອັນເຕວາສິກຄວຣລຸກແຕ່ເຊົ້າມືດ ຖອດເກີບ ຫົ່ມຜ້າພາດບ່າ ແລ້ວຖວາຍໄມ້ສີແຂ້ວ ຖວາຍນ້ຳລ້າງໜ້າ ປູອາສນະໄວ້

ຖ້າຢາຄູມີ ຄວຣລ້າງກາຊນະແລ້ວນ້ອມຢາຄູເຂົ້າໄປຖວາຍ ເມື່ອອາຈາຣຍ໌ດື່ມຢາຄູແລ້ວ ຄວຣຖວາຍນ້ຳ ຣັບກາຊນະມາ ຖືຕ່ຳໆ ຢ່າໃຫ້ກະທົບກັນ ລ້າງໃຫ້ສະອາດແລ້ວເກັບໄວ້ ເມື່ອອາຈາຣຍ໌ລຸກແລ້ວ ຄວຣເກັບ ຜ້າອາສນະ

ຖ້າທີ່ນັ້ນຣົກ ຄວຣກວາດເສັຽ.

ຖ້າອາຈາຣຍ໌ປະສົງຄ໌ຈະເຂົ້າບ້ານ ຄວຣຖວາຍຜ້ານຸ່ງ ຄວຣຣັບຜ້ານຸ່ງປ່ຽນມາ ຄວຣຖວາຍປະຄົຕແອວ ຄວຣພັບຜ້າສັງຆຕິໃຫ້ເປັນຊັ້ນຖວາຍ ຄວຣລ້າງບາຕຣ໌ແລ້ວຖວາຍພ້ອມທັ້ງນ້ຳດ້ວຍ

ຖ້າອາຈາຣຍ໌ປັຕຖນາໃຫ້ເປັນປັຈຉາສມຓະ ຄວຣປົກປິດມົຓฑົລສາມ ນຸ່ງໃຫ້ເປັນປຣິມົຓฑົລ ແລ້ວຄາດປະຄົຕແອວ ຫົ່ມສັງຆາຕິທຳເປັນຊັ້ນ ໃສ່ດຸມ ລ້າງບາຕຣ໌ແລ້ວຖືໄປ ເປັນປັຈຉາສມຓະຂອງ ອາຈາຣຍ໌ ບໍ່ຄວຣຢ່າງໃຫ້ຫ່າງຫຼາຍ ບໍ່ຄວຣຢ່າງໃຫ້ຕິດຫຼາຍ ຄວຣຣັບວັຕຖຸທີ່ເນື່ອງໃນບາຕຣ໌

ເມື່ອອາຈາຣຍ໌ກຳລັງເວົ້າ ບໍ່ຄວຣເວົ້າສອດຂຶ້ນໃນຣະຫວ່າງ ອາຈາຣຍ໌ກ່າວຄຳໃກ້ຕໍ່ອາບັຕິ ຄວຣຫ້າມເສັຽ

ເມື່ອກັບ ຄວຣມາກ່ອນແລ້ວປູອາສນະທີ່ນັ່ງຈັນໄວ້ ຄວຣຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣລຸກຂຶ້ນຣັບບາຕຣ໌ແລະຈີວຣ ຄວຣຖວາຍຜ້ານຸ່ງປ່ຽນ ຄວຣຣັບຜ້ານຸ່ງມາ.

ຖ້າຈີວຣຊຸ່ມເຫື່ອ ຄວຣຕາກແດດໄວ້ຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣພັບຈີວຣ ເມື່ອພັບຈີວຣ ຄວຣພັບຈີວຣໃຫ້ເຫລື່ອມມຸມກັນ ໔ ນີ້ວ ດ້ວຍຕັ້ງໃຈບໍ່ໃຫ້ມີຮອຍພັບ ຕົງກາງ ຄວຣເຮັດປະຄົຕແອວໄວ້ໃນຂົດອັນຕຣວາສົກ.

ຖ້າບິຓฑບາຕມີ ແລະອາຈາຣຍ໌ປະສົງຄ໌ຈະຈັນ ຄວຣຖວາຍນ້ຳແລ້ວນ້ອມບິຓฑບາຕເຂົ້າໄປຖວາຍ ຄວຣຖາມອາຈາຣຍ໌ດ້ວຍນ້ຳຈັນ ເມື່ອອາຈາຣຍ໌ຈັນແລ້ວ ຄວຣຖວາຍນ້ຳ ຣັບບາຕຣ໌ມາ ຖືຕ່ຳໆ ຢ່າໃຫ້ກະທົບ ລ້າງໃຫ້ສະອາດ ເຊັດໃຫ້ແຫ້ງ ແລ້ວຜຶ່ງໄວ້ທີ່ແດດຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳ ໃຕ້ຕຽງຫຼືໃຕ້ຕັ່ງ ແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣ໌ໄວ້ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຣາວຈີວຣ ຫຼືສາຍຣະດຽງ ແລ້ວທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວຈຶ່ງເກັບຈີວຣ

ເມື່ອອາຈາຣຍ໌ລຸກແລ້ວ ຄວຣເກັບອາສນະ ເກັບນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຣົກ ຄວຣກວາດທີ່ນັ້ນເສັຽ.

ຖ້າອາຈາຣຍ໌ມັກຈະສົງນ້ຳ ຄວຣຈັດນ້ຳສົງຖວາຍ ຖ້າຕ້ອງການນ້ຳເຢັນ ຄວຣຈັດນ້ຳເຢັນຖວາຍ ຖ້າຕ້ອງການນ້ຳຮ້ອນ ຄວຣຈັດນ້ຳຮ້ອນຖວາຍ.

ຖ້າອາຈາຣຍ໌ປະສົງຄ໌ຈະເຂົ້າເຮືອນໄຟ ຄວຣບົດຈຸຓ ແຊ່ດິນ ຫຼືຖືຕັ່ງສຳຫຼັບເຮືອນໄຟ ແລ້ວຍ່າງຕາມຫລັງອາຈາຣຍ໌ໄປ ຖວາຍຕັ່ງສຳຫຼັບເຮືອນໄຟແລ້ວ ຮັບຈີວຣມາວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຖວາຍຈຸຓ ຖວາຍດິນ

ຖ້າອຸຕສາຫະຢູ່ ຄວຣເຂົ້າເຮືອນໄຟ ເມື່ອເຂົ້າເຮືອນໄຟ ຄວຣເອົາດິນທາຫນ້າ ປິດທັ້ງຂ້າງຫນ້າຂ້າງຫລັງ ແລ້ວເຂົ້າເຮືອນໄຟ ບໍ່ຄວຣນັ່ງບຽດພິກຂຸຜູ້ເຖຣະ ບໍ່ຄວຣຫ້າມກັນອາສນະພິກຂຸໃຫມ່ ຄວຣເຮັດບໍຣິກັມມ໌ແກ່ອາຈາຣຍ໌ໃນເຮືອນໄຟ

ເມື່ອອອກຈາກເຮືອນໄຟ ຄວຣຖືຕັ່ງສຳຫຼັບເຮືອນໄຟ ແລ້ວປິດທັ້ງຂ້າງຫນ້າທັ້ງຂ້າງຫລັງອອກຈາກເຮືອນໄຟ

ຄວຣເຮັດບໍຣິກັມມ໌ແກ່ອາຈາຣຍ໌ແມ້ໃນນ້ຳ ອາບແລ້ວໆ ຄວຣຂຶ້ນມາກ່ອນ ທຳຕົວຂອງຕົນໃຫ້ແຫ້ງນ້ຳນຸ່ງຜ້າແລ້ວ ຄວຣເຊັດນ້ຳຈາກຕົວຂອງອາຈາຣຍ໌ ຄວຣຖວາຍຜ້ານຸ່ງ ຄວຣຖວາຍຜ້າສັງຆາຕິ ຖືເອົາຕັ່ງສຳຫຼັບເຮືອນໄຟມາກ່ອນ ແລ້ວປູອາສນະໄວ້ ຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣຖາມອາຈາຣຍ໌ດ້ວຍນ້ຳລັນ.

ຖ້າປະສົງຄ໌ຈະຮຽນບາລີ ຄວຣຂໍໃຫ້ອາຈາຣຍ໌ສແດງບາລີຂຶ້ນ ຖ້າປະສົງຄ໌ຈະສອບຖາມອັຖກຖາຄວຣສອບຖາມ.

ອາຈາຣຍ໌ຢູ່ໃນວິຫາຣແຫ່ງໃດ ຖ້າວິຫາຣແຫ່ງນັ້ນຮົກ ຖ້າອຸຕສາຫະຢູ່ ຄວຣປັດກວາດເສັຽເມື່ອປັດກວາດວິຫາຣ ຄວຣຂົນບາຕຣ໌ຈີວຣອອກກ່ອນແລ້ວວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຂົນຜ້າປູນັ່ງແລະຜ້າປູນອນ ຟູກ ຫມອນ ອອກວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ

ຕຽງຕັ່ງ ອັນເຕວາສິກຄວຣຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູຂົນອອກໃຫ້ຮຽບຮ້ອຍ ແລ້ວຕັ້ງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ. ຂຽງຮອງຕຽງ ກະໂຖນ ພນັກອີງຄວຣຂົນອອກຕັ້ງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ ເຄື່ອງປູພື້ນ ຄວຣສັງເກຕທີ່ປູໄວ້ເດີມ ແລ້ວຂົນອອກວາງໄວ້ ໓ ທີ່ຄວຣສ່ວນຂ້າງນຶ່ງ.

ຖ້າໃນວິຫາຣມີໃຍແມງມຸມ ຄວຣກວາດແຕ່ເພດານລົງມາກ່ອນ ຂອບຫນ້າຕ່າງແລະມຸມຫ້ອງຄວຣເຊັດເສັຽ ຖ້າຝາເຂົາທຳບໍຣິກັມມ໌ດ້ວຍນ້ຳມັນ ຫຼືພື້ນເຂົາທາສີດຳຂຶ້ນຮາ ຄວຣເອົາຜ້າເຊັດນ້ຳບິດແລ້ວເຊັດເສັຽ ຖ້າພື້ນເຂົາບໍ່ໄດ້ທຳ ຄວຣເອົານ້ຳປະພຣົມແລ້ວເຊັດເສັຽ ຣະວັງຢ່າໃຫ້ວິຫາຣຟຸ້ງດ້ວຍສຸລີ ຄວຣກວາດໃຍແມງມຸມຖິ້ມເສັຽ ໓ ທີ່ຄວຣສ່ວນຂ້າງນຶ່ງ

ເຄື່ອງລາດພື້ນ ຄວຣຕາກແດດ ຊຳຣະ ເຄາະ ປັດ ແລ້ວຂົນກັບປູໄວ້ຕາມເດີມ ຂາງຮອງຕຽງ ຄວຣຕາກແດດ ຂັດ ເຊັດ ແລ້ວຂົນກັບຕັ້ງໄວ້ທີ່ເດີມ ຕຽງຕັ່ງຄວຣຕາກແດດຂັດສີ ເຄາະເສັ່ງ ຍົກຕ່ຳໆ ຢ່າໃຫ້ ຄູດສີ ກະທົບກະແທກບານແລະຂອບປະຕູ ຂົນກັບໄປໃຫ້ດີໆ ແລ້ວຕັ້ງໄວ້ຕາມເດີມ ຟູກ ໝອນ ຜ້າປູນັ່ງ ຜ້າປູນອນ ຄວຣຕາກແດດທຳໃຫ້ສະອາດ ຕົບແລ້ວ ແລ້ວນຳກັບວາງປູໄວ້ຕາມເດີມ ກະໂຖນ ພນັກອີງ ຄວຣຕາກແດດ ເຊັດ ຖູເສັ່ງ ແລ້ວຂົນກັບຕັ້ງໄວ້ຕາມເດີມ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳ ໃຕ້ຕຽງຫຼືໃຕ້ຕັ່ງ ແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣ໌ ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຮາວຈີວຣຫຼືສາຍຣະດຽງແລ້ວ ທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວເກັບຈີວຣ.

ຖ້າລົມເຈືອດ້ວຍຝຸ່ນຄລີ ພັດມາແຕ່ທິສຕະວັນອອກ ຄວຣປິດໜ້າຕ່າງດ້ານຕະວັນອອກ ຖ້າພັດມາ ແຕ່ທິສຕະວັນຕົກ ຄວຣປິດໜ້າຕ່າງດ້ານຕະວັນຕົກ ຖ້າພັດມາແຕ່ທິສເໜືອ ຄວຣປິດໜ້າຕ່າງດ້ານເໜືອ ຖ້າພັດມາແຕ່ທິສໃຕ້ ຄວຣປິດໜ້າຕ່າງດ້ານໃຕ້ ຖ້າຣະດູໜາວຄວຣເປີດໜ້າຕ່າງກາງເວັນ ປິດກາງຄືນ ຖ້າຣະດູຮ້ອນ ຄວຣປິດໜ້າຕ່າງກາງເວັນ ເປີດກາງຄືນ

ຖ້າບໍຣິເວຓ ຊຸ້ມນ້ຳ ໂຮງຈັນ ໂຮງໄຟ ວັຈຈກຸຝີ ຮົກ ຄວຣປັດກວາດເສັ່ງ ຖ້ານ້ຳຈັນ ນ້ຳໃຊ້ບໍ່ມີ ຄວຣຈັດຕັ້ງໄວ້ ຖ້ານ້ຳໃນໝໍ້ຊຳຣະບໍ່ມີ ຄວຣຕັກນ້ຳມາໄວ້ໃນໝໍ້ຊຳຣະ

ຖ້າຄວາມກະສັນບັງເກີດແກ່ອາຈາຣຍ໌ ອັນເຕວາສິກຄວຣຊ່ອຍຣະງັບ ຫຼືຄວຣວານກິກຸອື່ນໃຫ້ຊ່ອຍ ຣະງັບ ຫຼືຄວຣເຮັດສັມມີກຖາແກ່ອາຈາຣຍ໌ນັ້ນ ຖ້າຄວາມຣຳຄາຍບັງເກີດແກ່ອາຈາຣຍ໌ ອັນເຕວາສິກຄວຣຊ່ອຍ ບັຣເທົາ ຫຼືຄວຣວານກິກຸອື່ນໃຫ້ຊ່ອຍບັຣເທົາ ຫຼືຄວຣເຮັດສັມມີກຖາແກ່ອາຈາຣຍ໌ນັ້ນ ຖ້າຄວາມເຫັນຜິດ ບັງເກີດແກ່ອາຈາຣຍ໌ ອັນເຕວາສິກຄວຣໃຫ້ສລະເສັ່ງ ຫຼືຄວຣວານກິກຸອື່ນໃຫ້ຊ່ອຍ ຫຼືຄວຣເຮັດສັມມີກຖາ ແກ່ອາຈາຣຍ໌ນັ້ນ. ຖ້າອາຈາຣຍ໌ຕ້ອງອາບັຕິໜັກ ຄວຣປຣິວາສ ອັນເຕວາສິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຜ໌ຄວຣໃຫ້ປຣິວາສແກ່ອາຈາຣຍ໌ ຖ້າອາຈາຣຍ໌ຄວຣຊັກເຂົ້າຫາອາບັຕິເດີມ ອັນເຕວາສິກ ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຜ໌ຄວຣຊັກອາຈາຣຍ໌ເຂົ້າຫາອາບັຕິເດີມ ຖ້າອາຈາຣຍ໌ ຄວຣມານັຕ ອັນເຕວາສິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຜ໌ຄວຣໃຫ້ມານັຕແກ່ ອາຈາຣຍ໌ ຖ້າອາຈາຣຍ໌ຄວຣອັພການ ອັນເຕວາສິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຜ໌ຄວຣອັພການອາຈາຣຍ໌.

ຖ້າສົງຄ໌ປັຕຖນາຈະທຳກັມມ໌ແກ່ອາຈາຣຍ໌ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ອັນເຕວາສິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ບໍ່ຄວຣທຳກັມມ໌ແກ່ອາຈາຣຍ໌ ຫຼືສົງຄ໌ຄວຣນ້ອມໄປເພື່ອກັມມ໌ສຖານເບົາ ຫຼືອາຈາຣຍ໌ນັ້ນຖືກສົງຄ໌ ລົງຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ແລ້ວ ອັນເຕວາສິກຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ອາຈາຣຍ໌ຄວຣປະພຶຕຊອບ ຄວຣຫາຍ ເຫຍີ່ຫຍິ່ງ ຄວຣປະພຶຕແກ້ຕົວ ສົງຄ໌ຄວຣຣະງັບກັມມ໌ນັ້ນເສັຽ.

ຖ້າຈີວຣຂອງອາຈາຣຍ໌ຈະຕ້ອງຊັກ ອັນເຕວາສິກຄວຣຊັກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍ ອຸບາຍ

ຢ່າງໃດນໍ ໃຜໆ ຄວຣຊັກຈີວຣຂອງອາຈາຣຍ໌ ຖ້າຈີວຣຂອງອາຈາຣຍ໌ຈະຕ້ອງທຳ ອັນເຕວາສິກຄວຣເຮັດ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣເຮັດຈີວຣຂອງອາຈາຣຍ໌ ຖ້ານ້ຳຍ້ອມ ຂອງອາຈາຣຍ໌ຈະຕ້ອງຕົ້ມ ອັນເຕວາສິກຄວຣຕົ້ມ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຕົ້ມນ້ຳຍ້ອມຂອງອາຈາຣຍ໌ ຖ້າຈີວຣຂອງອາຈາຣຍ໌ຈະຕ້ອງຍ້ອມ ອັນເຕວາສິກຄວຣຍ້ອມ ຫຼືຄວຣ ທຳຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຍ້ອມຈີວຣຂອງອາຈາຣຍ໌ ເມື່ອຍ້ອມຈີວຣ ຄວຣຍ້ອມປີ້ນກັບໄປກັບມາໃຫ້ດີໆ ເມື່ອຫຍາດນ້ຳຍ້ອມຍັງຫຍົດບໍ່ຂາດສາຍ ບໍ່ຄວຣຫລີກໄປເສັຽ.

ອັນເຕວາສິກບໍ່ບອກອາຈາຣຍ໌ກ່ອນ ບໍ່ຄວຣໃຫ້ບາຕຣ໌ແກ່ກິກຂຸບາງອົງຄ໌ ບໍ່ຄວຣຮັບບາຕຣ໌ຂອງກິກຂຸ ບາງອົງຄ໌ ບໍ່ຄວຣໃຫ້ຈີວຣແກ່ກິກຂຸບາງອົງຄ໌ ບໍ່ຄວຣຮັບຈີວຣຂອງກິກຂຸບາງອົງຄ໌ ບໍ່ຄວຣໃຫ້ບໍຣິຂາຣແກ່ກິກຂຸບາງ ອົງຄ໌ບໍ່ຄວຣຮັບບໍຣິຂາຣຂອງກິກຂຸບາງອົງຄ໌ ບໍ່ຄວຣແຖຜົມໃຫ້ກິກຂຸບາງອົງຄ໌ ບໍ່ຄວຣໃຫ້ກິກຂຸບາງອົງຄ໌ແຖຜົມໃຫ້ ບໍ່ຄວຣທຳບໍຣິກັມມ໌ແກ່ກິກຂຸບາງອົງຄ໌ ບໍ່ຄວຣໃຫ້ກິກຂຸບາງອົງຄ໌ທຳບໍຣິກັມມ໌ໃຫ້ ບໍ່ຄວຣທຳຄວາມຂວນຂວາຍ ແກ່ກິກຂຸບາງອົງຄ໌ ບໍ່ຄວຣສັ່ງໃຫ້ກິກຂຸບາງອົງຄ໌ທຳຄວາມຂວນຂວາຍ ບໍ່ຄວຣເປັນປັຈຈາສມຓະຂອງກິກຂຸບາງ ອົງຄ໌ບໍ່ຄວຣພາກິກຂຸບາງອົງຄ໌ໄປເປັນປັຈຈາສມຓະ ບໍ່ຄວຣນຳບິຓຫບາຕໄປໃຫ້ກິກຂຸບາງອົງຄ໌ ບໍ່ຄວຣໃຫ້ກິກຂຸ ບາງອົງຄ໌ນຳບິຓຫບາຕມາໃຫ້ ບໍ່ບອກລາອາຈາຣຍ໌ກ່ອນ ບໍ່ຄວຣເຂົ້າບ້ານ ບໍ່ຄວຣໄປປ່າຊ້າ ບໍ່ຄວຣຫລີກໄປສູ່ທິສ ຖ້າອາຈາຣຍ໌ອາພາຣ ຄວຣພຍາບາລ ຈົນຕລອດຊີວິຕ ຄວຣຖ້າຈົນກວ່າຈະຫາຍ.

ອາຈຣິຍວັຕຣ໌ ຈົບ

ອັນເຕວາສິກວັຕຣ໌

[໗໔] ດູຣາພິກບຸທັ້ງຫຼາຍ ອາຈາຣຍ໌ຄວຣປະພຶຕຊອບໃນອັນເຕວາສິກ

ວິທີປະພຶຕຊອບໃນອັນເຕວາສິກນັ້ນ ດັ່ງຕໍ່ໄປນີ້:-

ດູຣາພິກບຸທັ້ງຫຼາຍ ອາຈາຣຍ໌ຄວຣສົງເຄາະຫ໌ ອນຸເຄາະຫ໌ອັນເຕວາສິກ ດ້ວຍສອນບາລີແລະອັຖກຖາ ດ້ວຍໃຫ້ໂອວາທແລະອນຸສາສນ໌.

ຖ້າອາຈາຣຍ໌ມີບາຕຣ໌ ອັນເຕວາສິກບໍ່ມີບາຕຣ໌ ອາຈາຣຍ໌ຄວຣໃຫ້ບາຕຣ໌ແກ່ອັນເຕວາສິກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ບາຕຣ໌ຄວຣບັງເກີດແກ່ອັນເຕວາສິກ

ຖ້າອາຈາຣຍ໌ມີຈີວຣ ອັນເຕວາສິກບໍ່ມີຈີວຣ ອາຈາຣຍ໌ຄວຣໃຫ້ຈີວຣແກ່ອັນເຕວາສິກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ຈີວຣຄວຣບັງເກີດແກ່ອັນເຕວາສິກ

ຖ້າອາຈາຣຍ໌ມີບໍຣິຂາຣ ອັນເຕວາສິກບໍ່ມີບໍຣິຂາຣ ອາຈາຣຍ໌ຄວຣໃຫ້ບໍຣິຂາຣແກ່ອັນເຕວາສິກ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ບໍຣິຂາຣຄວຣບັງເກີດແກ່ອັນເຕວາສິກ.

ຖ້າອັນເຕວາສິກອາພາສ ອາຈາຣຍ໌ລຸກແຕ່ເຊົ້າມືດ ແລ້ວຄວຣໃຫ້ໄມ້ສີແຂ້ວ ໃຫ້ນ້ຳລ້າງໜ້າ ປູອາສນະໄວ້

ຖ້າຢາຄູມີ ຄວຣລ້າງກາຊນະ ແລ້ວນຳຢາຄູເຂົ້າໄປໃຫ້ ເມື່ອອັນເຕວາສິກດື່ມຢາຄູແລ້ວ ຄວຣໃຫ້ນ້ຳຮັບກາຊນະມາ ຖືຕ່ຳໆ ຢ່າໃຫ້ກະທົບກັນ ລ້າງໃຫ້ສະອາດແລ້ວເກັບໄວ້ ເມື່ອອັນເຕວາສິກລຸກແລ້ວ ຄວຣເກັບອາສນະ ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າອັນເຕວາສິກປະສົງຄ໌ຈະເຂົ້າບ້ານ ຄວຣໃຫ້ຜ້ານຸ່ງ ຄວຣຮັບຜ້ານຸ່ງປ່ຽນມາ ຄວຣໃຫ້ປະຄົຕແອວ ຄວຣພັບຜ້າສັງຄາຕິເປັນຊັ້ນໃຫ້ ຄວຣລ້າງບາຕຣ໌ແລ້ວໃຫ້ພ້ອມທັ້ງນ້ຳດ້ວຍ ຄວຣປູຜ້າອາສນະທີ່ນັ່ງຈັນໄວ້ ດ້ວຍກຳໜົດໃນໃຈວ່າ ພຽງເວລາເທົ່ານີ້ ອັນເຕວາສິກຈັກກັບມາ ນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຄວຣຕຽມຕັ້ງໄວ້ ຄວຣລຸກຂຶ້ນຮັບບາຕຣ໌ແລະຈີວຣ ຄວຣໃຫ້ຜ້ານຸ່ງປ່ຽນ ຄວຣຮັບຜ້ານຸ່ງມາ.

ຖ້າຈີວຣຊຸ່ມເຫື່ອ ຄວຣຕາກແດດໄວ້ຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣພັບຈີວຣ ເມື່ອພັບຈີວຣ ຄວຣພັບໃຫ້ເຫລື່ອມມຸມກັນ ໔ ນີ້ວ ດ້ວຍຕັ້ງໃຈບໍ່ໃຫ້ມີຮອຍພັບຕົງກາງ ຄວຣເຮັດປະຄົຕແອວໄວ້ໃນຂົດອັນຕຣວາສົກ.

ຖ້າບິຒຫບາຕມີ ແລະອັນເຕວາສິກປະສົງຄ໌ຈະຈັນ ຄວຣໃຫ້ນ້ຳແລ້ວນຳບິຒຫບາຕເຂົ້າໄປໃຫ້ ຄວຣຖາມອັນເຕວາສິກດ້ວຍນ້ຳຈັນ ເມື່ອອັນເຕວາສິກຈັນແລ້ວ ຄວຣໃຫ້ນ້ຳ ຮັບບາຕຣ໌ມາ ຖືຕ່ຳໆ ຢ່າໃຫ້ກະທົບ ລ້າງໃຫ້ສະອາດ ເຊັດໃຫ້ແຫ້ງ ແລ້ວຜຶ່ງໄວ້ທີ່ແດດຄູາວນຶ່ງ ແຕ່ບໍ່ຄວຣຕາກຖິ້ມໄວ້ທີ່ແດດ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳໃຕ້ຕຽງ ຫຼືໃຕ້ຕັ່ງ ແລ້ວເກັບບາຕຣ໌ ແຕ່ບໍ່ຄວຣເກັບບາຕຣໄວ້ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຣາວຈີວຣຫຼືສາຍຣະດຽງ ແລ້ວ ທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວຈຶ່ງເກັບຈີວຣ

ເມື່ອອັນເຕວາສິກລຸກແລ້ວ ຄວຣເກັບອາສນະ ເກັບນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ຖ້າທີ່ນັ້ນຮົກ ຄວຣກວາດທີ່ນັ້ນເສັຽ.

ຖ້າອັນເຕວາສິກມັກຈະສົງນ້ຳ ຄວຣຈັດນ້ຳສົງໃຫ້ ຖ້າຕ້ອງການນ້ຳເຢັນ ຄວຣຈັດນ້ຳເຢັນໃຫ້ ຖ້າຕ້ອງການນ້ຳຮ້ອນ ຄວຣຈັດນ້ຳຮ້ອນໃຫ້.

ຖ້າອັນເຕວາສິກປະສົງຄ໌ຈະເຂົ້າເຮືອນໄຟ ຄວຣບົດຈຸຕ ແຊ່ດິນ ຖືຕັ່ງສຳຫຼັບເຮືອນໄຟໄປ ໃຫ້ຕັ່ງສຳຫຼັບເຮືອນໄຟ ແລ້ວຮັບຈີວຣມາວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣໃຫ້ຈຸຕ ໃຫ້ດິນ

ຖ້າອຸຕສາຫະຢູ່ ຄວຣເຂົ້າເຮືອນໄຟ ເມື່ອເຂົ້າເຮືອນໄຟ ຄວຣເອົາດິນທາຫນ້າ ປິດທັ້ງຂ້າງຫນ້າ ທັ້ງຂ້າງຫລັງ ແລ້ວເຂົ້າເຮືອນໄຟ ບໍ່ຄວຣນັ່ງບຽດພິກຂຸຜູ້ເຖຣະ ບໍ່ຄວຣຫ້າມກັນອາສນະພິກຂຸໃຫມ່ ຄວຣ ທຳບໍຣິກັມມ໌ແກ່ອັນເຕວາສິກໃນເຮືອນໄຟ

ເມື່ອອອກຈາກເຮືອນໄຟ ຄວຣຖືຕັ່ງສຳຫຼັບເຮືອນໄຟ ແລ້ວປິດທັ້ງຂ້າງຫນ້າທັ້ງຂ້າງຫລັງ ອອກຈາກ ເຮືອນໄຟ

ຄວຣເຮັດບໍຣິກັມມ໌ແກ່ອັນເຕວາສິກແມ້ໃນນ້ຳ ອາບແລ້ວໆຄວຣຂຶ້ນມາກ່ອນ ທຳຕົວຂອງຕົນໃຫ້ ແຫ້ງນ້ຳ ນຸ່ງຜ້າແລ້ວຄວຣເຊັດນ້ຳຈາກຕົວຂອງອັນເຕວາສິກ ຄວຣໃຫ້ຜ້ານຸ່ງ ຄວຣໃຫ້ຜ້າສັງຄາຕິ ຄວຣຖືຕັ່ງ ສຳຫຼັບເຮືອນໄຟມາກ່ອນ ແລ້ວປູອາສນະໄວ້ ຕຽມນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ຄວຣຖາມອັນເຕວາສິກດ້ວຍນ້ຳຈັນ.

ອັນເຕວາສິກຢູ່ໃນວິຫາຣແຫ່ງໃດ ຖ້າວິຫາຣແຫ່ງນັ້ນຮົກ ຖ້າອຸຕສາຫະຢູ່ ຄວຣປັດກວາດເສັຽ ເມື່ອປັດກວາດວິຫາຣ ຄວຣຂົນບາຕຣ໌ຈີວຣອອກກ່ອນ ແລ້ວວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄວຣຂົນຜ້າປູນັ່ງ ແລະຜ້າປູນອນ ຟູກ ຫມອນ ອອກວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ

ຕຽງຕັ່ງອາຈາຣຍ໌ຄວຣຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູ ຂົນອອກໃຫ້ຮຽບຮ້ອຍ ແລ້ວຕັ້ງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ຊຽງຮອງຕຽງ ກະໂຖນ ພນັກອີງ ຄວຣຂົນອອກວາງໄວ້ ຓ ທີ່ຄວຣສ່ວນຂ້າງນຶ່ງ ເຄື່ອງປູພື້ນຄວຣສັງເກຕທີ່ປູໄວ້ເດີມ ແລ້ວຂົນອອກວາງໄວ້ ຓ ທີ່ ຄວຣສ່ວນຂ້າງນຶ່ງ.

ຖ້າໃນວິຫາຣມີໃຍແມງມຸມ ຄວຣກວາດແຕ່ເພດານລົງມາກ່ອນ ຂອບໜ້າຕ່າງແລະມຸມຫ້ອງ ຄວຣເຊັດເສັຽ ຖ້າຝາເຂົາທຳບໍຣິກັມມ໌ດ້ວຍນ້ຳມັນ ພື້ນເຂົາທາສີດຳຂຶ້ນຣາ ຄວຣເອົາຜ້າຊຸບນ້ຳບິດແລ້ວເຊັດເສັຽ ຖ້າພື້ນເຂົາບໍ່ໄດ້ທຳ ຄວຣເອົານ້ຳປະພຣົມແລ້ວເຊັດເສັຽ ຣະວັງຢ່າໃຫ້ວິຫາຣຟຸ້ງດ້ວຍຊຸລີ ຄວຣກວາດໃຍແມງມຸມຖິ້ມເສັຽ ໓ ທີ່ຄວຣສ່ວນຂ້າງນຶ່ງ ເຄື່ອງລາດພື້ນ ຄວຣຕາກແດດ ຊຳຣະ ເຄາະ ປັດເສັຽ ຂົນກັບປູໄວ້ຕາມເດີມ ຊຽງຮອງຕຽງ ຄວຣຕາກແດດ ຂັດ ເຊັດ ເສັຽ ຂົນກັບຕັ້ງໄວ້ທີ່ເດີມ ຕຽງຕັ່ງຄວຣຕາກແດດ ຂັດສີ ເຄາະເສັຽ ຍົກຕ່ຳໆ ຢ່າໃຫ້ຄູດສີ ຢ່າໃຫ້ກະທົບກະແທກບານແລະຂອບປະຕູ ຂົນກັບໄປໃຫ້ດີໆ ແລ້ວຕັ້ງໄວ້ຕາມເດີມ ຟູກ ໝອນ ຜ້າປູນັ່ງ ຜ້າປູນອນ ຄວຣຕາກແດດ ທຳໃຫ້ສະອາດ ຕົບແລ້ວ ແລ້ວນຳກັບວາງປູໄວ້ຕາມເດີມກະໂຖນ ພນັກອີງ ຄວຣຕາກແດດ ເຊັດ ຖູເສັຽ ແລ້ວຂົນກັບຕັ້ງໄວ້ຕາມເດີມ

ຄວຣເກັບບາຕຣ໌ຈີວຣ ເມື່ອເກັບບາຕຣ໌ ຄວຣເອົາມືຂ້າງນຶ່ງຈັບບາຕຣ໌ ເອົາມືຂ້າງນຶ່ງລູບຄລຳໃຕ້ຕຽງຫຼືໃຕ້ຕັ່ງ ແລ້ວຈຶ່ງເກັບບາຕຣ໌ ແຕ່ບໍ່ຄວຣວາງບາຕຣ໌ເທິງພື້ນທີ່ບໍ່ມີສິ່ງໃດຮອງ

ເມື່ອເກັບຈີວຣ ຄວຣເອົາມືຂ້າງນຶ່ງຖືຈີວຣ ເອົາມືຂ້າງນຶ່ງລູບຣາວຈີວຣ ຫຼືສາຍຣະດຽງແລ້ວທຳຊາຍໄວ້ຂ້າງນອກ ທຳຂົດໄວ້ຂ້າງໃນ ແລ້ວຈຶ່ງເກັບຈີວຣ.

ຖ້າລົມເຈືອດ້ວຍຝຸ່ງຄລີພັດມາແຕ່ທິສຕະວັນອອກ ຄວຣປິດໜ້າຕ່າງດ້ານຕະວັນອອກ ຖ້າພັດມາແຕ່ທິສຕະວັນຕົກ ຄວຣປິດໜ້າຕ່າງດ້ານຕະວັນຕົກ ຖ້າພັດມາແຕ່ທິສເໜືອ ຄວຣປິດໜ້າຕ່າງດ້ານເໜືອ ຖ້າພັດມາແຕ່ທິສໃຕ້ ຄວຣປິດໜ້າຕ່າງດ້ານໃຕ້ ຖ້າຣະດູໜາວຄວຣເປີດໜ້າຕ່າງກາງເວັນ ປິດກາງຄືນ ຖ້າຣະດູຮ້ອນ ຄວຣປິດໜ້າຕ່າງກາງເວັນ ເປີດກາງຄືນ.

ຖ້າບໍຣິເວຓ ຊຸ້ມນ້ຳ ໂຮງຈັນ ໂຮງໄຟ ວັຈຈກຸຜີ ຮົກ ຄວຣປັດກວາດເສັຽ ຖ້ານ້ຳຈັນ ນ້ຳໃຊ້ບໍ່ມີ ຄວຣຈັດຕັ້ງໄວ້ ຖ້ານ້ຳໃນໝໍ້ຊຳຣະບໍ່ມີ ຄວຣຕັກນ້ຳໄວ້ໃນໝໍ້ຊຳຣະ.

ຖ້າຄວາມກະສັນບັງເກີດແກ່ອັນເຕວາສິກ ອາຈາຣຍ໌ຄວຣຊ່ອຍຣະງັບ ຫຼືຄວຣວານກິກຂຸອື່ນໃຫ້ຊ່ອຍຣະງັບ ຫຼືຄວຣເຮັດສັມມິກຖາແກ່ອັນເຕວາສິກນັ້ນ ຖ້າຄວາມຣຳຄາຍບັງເກີດແກ່ອັນເຕວາສິກ ອາຈາຣຍ໌ຄວຣບັຣເທົາ ຫຼືຄວຣວານກິກຂຸອື່ນໃຫ້ຊ່ອຍບັຣເທົາ ຫຼືຄວຣເຮັດສັມມິກຖາແກ່ອັນເຕວາສິກນັ້ນ ຖ້າຄວາມເຫັນຜິດບັງເກີດແກ່ອັນເຕວາສິກ ອາຈາຣຍ໌ຄວຣໃຫ້ສລະເສັຽ ຫຼືຄວຣວານກິກຂຸອື່ນໃຫ້ຊ່ອຍ ຫຼືຄວຣເຮັດສັມມິກຖາແກ່ອັນເຕວາສິກນັ້ນ. ຖ້າອັນເຕວາສິກຕ້ອງອາບັຕິໜັກ ຄວຣປຣິວາສ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣໃຫ້ປຣິວາສແກ່ອັນເຕວາສິກ ຖ້າອັນເຕວາສິກຄວຣຊັກເຂົ້າຫາອາບັຕິເດີມ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣຊັກອັນເຕວາສິກເຂົ້າຫາອາບັຕິເດີມ ຖ້າອັນເຕວາສິກຄວຣມານັຕ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ

ສົງຄ໌ຄວຣໃຫ້ມານັຕແກ່ອັນເຕວາສິກ ຖ້າອັນເຕວາສິກຄວຣອັພການ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ຄວຣອັພການອັນເຕວາສິກ.

ຖ້າສົງຄ໌ປັຕຖນາຈະທຳກັມມ໌ແກ່ອັນເຕວາສິກ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ສົງຄ໌ບໍ່ຄວຣທຳກັມມ໌ແກ່ອັນເຕວາສິກ ຫຼືສົງຄ໌ຄວຣນ້ອມໄປເພື່ອກັມມ໌ສຖານເບົາ ຫຼືອັນເຕວາສິກນັ້ນ ຖືກສົງຄ໌ລົງຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ແລ້ວ ອາຈາຣຍ໌ຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ອັນເຕວາສິກຄວຣປະພຶຕຊອບ ຄວຣຫາຍເຫຍີ່ຫຍິ່ງ ຄວຣປະພຶຕແກ້ຕົວ ສົງຄ໌ຄວຣຣະງັບກັມມ໌ນັ້ນເສັຽ.

ຖ້າຈີວຣຂອງອັນເຕວາສິກຈະຕ້ອງຊັກ ອາຈາຣຍ໌ຄວຣບອກວ່າ ທ່ານຄວຣຊັກຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຊັກຈີວຣຂອງອັນເຕວາສິກ ຖ້າຈີວຣຂອງອັນເຕວາສິກຈະຕ້ອງທຳ ອາຈາຣຍ໌ຄວຣບອກວ່າ ທ່ານຄວຣເຮັດຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍໃຜໆ ຄວຣເຮັດຈີວຣຂອງອັນເຕວາສິກ ຖ້ານ້ຳຍ້ອມຂອງອັນເຕວາສິກຈະຕ້ອງຕົ້ມ ອາຈາຣຍ໌ຄວຣບອກວ່າ ທ່ານຄວຣຕົ້ມຢ່າງນີ້ ຫຼືຄວຣເຮັດຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຕົ້ມນ້ຳຍ້ອມຂອງອັນເຕວາສິກ ຖ້າຈີວຣຂອງອັນເຕວາສິກຈະຕ້ອງຍ້ອມ ອາຈາຣຍ໌ຄວຣບອກວ່າ ທ່ານຄວຣຍ້ອມຢ່າງນີ້ ຫຼືຄວຣທຳຄວາມຂວນຂວາຍວ່າ ດ້ວຍອຸບາຍຢ່າງໃດນໍ ໃຜໆ ຄວຣຍ້ອມຈີວຣຂອງອັນເຕວາສິກ ເມື່ອຍ້ອມຈີວຣຄວຣຍ້ອມປີ້ນກັບໄປກັບມາໃຫ້ດີໆ ເມື່ອຫຍາດນ້ຳຍ້ອມຍັງຫຍົດບໍ່ຂາດສາຍ ບໍ່ຄວຣຫລີກໄປເສັຽ. ຖ້າອັນເຕວາສິກອາພາຜ ຄວຣພຍາບາລຈົນຕລອດຊີວິຕ ຄວຣຖ້າຈົນກວ່າຈະຫາຍ.

ອັນເຕວາສິກວັຕຣ໌ ຈົບ

ວ່າດ້ວຍການປະຕາມ

[໗໕] ກໍໂດຍສມັຍນັ້ນແລ ອັນເຕວາສິກທັ້ງຫຼາຍບໍ່ປະພຶຕຊອບໃນອາຈາຣຍ໌ທັ້ງຫຼາຍ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ອັນເຕວາສິກຈະບໍ່ປະພຶຕຊອບໃນອາຈາຣຍ໌ບໍ່ໄດ້ ອົງຄ໌ໃດບໍ່ປະພຶຕຊອບ ຕ້ອງອາບັຕິທຸກກົຝ.

ພວກອັນເຕວາສິກຍັງບໍ່ປະພຶຕຊອບຕາມເດີມ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປະຕາມອັນເຕວາສິກຜູ້ບໍ່ປະພຶຕຊອບ.

ວິຣີປະຕາມ

ອົງຄ໌ ໕ ແຫ່ງພິກາຍຸຜູ້ຕ້ອງຖືນິສສັຍ

ດູຣາພິກາຍຸທັ້ງຫຼາຍ ພິກາຍຸຜູ້ປະກອບດ້ວຍອົງຄ໌ ໕ ແມ້ອື່ນອີກ ຈະບໍ່ຖືນິສສັຍຢູ່ບໍ່ໄດ້ ຄື

໑. ບໍ່ຮູ້ຈັກອາບັຕິ

໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ

໔. ບໍ່ຮູ້ຈັກອາບັຕິຫນັກ ແລະ

໕. ມີພັຣຊາຫຍ່ອນ ໕

ດູຣາພິກາຍຸທັ້ງຫຼາຍ ພິກາຍຸຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ຈະບໍ່ຖືນິສສັຍຢູ່ບໍ່ໄດ້.

ອົງຄ໌ ໕ ແຫ່ງກິກຸຊຸຜູ້ບໍ່ຕ້ອງຖືນິສສັຍ

ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໕ ບໍ່ຕ້ອງຖືນິສສັຍຢູ່ ຄື

໑. ຮູ້ຈັກອາບັຕິ

໒. ຮູ້ຈັກອນາບັຕິ

໓. ຮູ້ຈັກອາບັຕິເບົາ

໔. ຮູ້ຈັກອາບັຕິຫນັກ ແລະ

໕. ມີພັຮຊາໄດ້ ໕ ຫຼືມີພັຮຊາເກີນ ໕

ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ ບໍ່ຕ້ອງຖືນິສສັຍຢູ່.

ອົງຄ໌ ໖ ແຫ່ງກິກຸຊຸຜູ້ຕ້ອງຖືນິສສັຍ

[໑໑໗] ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໖ ຈະບໍ່ຖືນິສສັຍຢູ່ບໍ່ໄດ້ ຄື

໑. ບໍ່ປະກອບດ້ວຍກອງສີລ ອັນເປັນຂອງພຣະອເສຂະ

໒. ບໍ່ປະກອບດ້ວຍກອງສມາຘິ ອັນເປັນຂອງພຣະອເສຂະ

໓. ບໍ່ປະກອບດ້ວຍກອງປັຌຌາ ອັນເປັນຂອງພຣະອເສຂະ

໔. ບໍ່ປະກອບດ້ວຍກອງວິມຸຕິ ອັນເປັນຂອງພຣະອເສຂະ

໕. ບໍ່ປະກອບດ້ວຍກອງວິມຸຕຕິຌາຓທັສສນະ ອັນເປັນຂອງພຣະອເສຂະ ແລະ

໖. ມີພັຮຊາຫຍ່ອນ ໕

ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ຈະບໍ່ຖືນິສສັຍຢູ່ບໍ່ໄດ້.

ອົງຄ໌ ໖ ແຫ່ງກິກຸຊຸຜູ້ບໍ່ຕ້ອງຖືນິສສັຍ

ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໖ ບໍ່ຕ້ອງຖືນິສສັຍຢູ່ ຄື

໑. ປະກອບດ້ວຍກອງສີລ ອັນເປັນຂອງພຣະອເສຂະ

໒. ປະກອບດ້ວຍກອງສມາຘິ ອັນເປັນຂອງພຣະອເສຂະ

໓. ປະກອບດ້ວຍກອງປັຌຌາ ອັນເປັນຂອງພຣະອເສຂະ

໔. ປະກອບດ້ວຍກອງວິມຸຕິ ອັນເປັນຂອງພຣະອເສຂະ

໕. ປະກອບດ້ວຍກອງວິມຸຕຕິຌາຓທັສສນະ ອັນເປັນຂອງພຣະອເສຂະ ແລະ

໖. ມີພັຮຊາໄດ້ ໕ ຫຼືມີພັຮຊາເກີນ ໕

ດູຮາກິກຸຊຸທັ້ງຫຼາຍ ກິກຸຊຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ບໍ່ຕ້ອງຖືນິສສັຍຢູ່.

ອົງຄ໌ ໖ ແຫ່ງກິກຂຸຜູ້ຕ້ອງຖືນິສສັຍ

ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ປະກອບດ້ວຍອົງຄ໌ ໖ ແມ້ອື່ນອີກ ຈະບໍ່ຖືນິສສັຍຢູ່ບໍ່ໄດ້ ຄື

໑. ເປັນຜູ້ບໍ່ມີສັຣັທສາ

໒. ເປັນຜູ້ບໍ່ມີຫິຣິ

໓. ເປັນຜູ້ບໍ່ມີໂອຕຕັປປະ

໔. ເປັນຜູ້ຂີ້ຄ້ານ

໕. ເປັນຜູ້ມີສຕິຟັ່ນເຟືອນ ແລະ

໖. ມີພັຣຍາຫຍ່ອນ ໕

ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ຈະບໍ່ຖືນິສສັຍຢູ່ບໍ່ໄດ້.

ອົງຄ໌ ໖ ແຫ່ງກິກຂຸຜູ້ບໍ່ຕ້ອງຖືນິສສັຍ

ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ປະກອບດ້ວຍອົງຄ໌ ໖ ບໍ່ຕ້ອງຖືນິສສັຍຢູ່ ຄື

໑. ເປັນຜູ້ມີສັຣັທສາ

໒. ເປັນຜູ້ມີຫິຣິ

໓. ເປັນຜູ້ມີໂອຕຕັປປະ

໔. ເປັນຜູ້ປຣາຣົກຄວາມພຽຣ

໕. ເປັນຜູ້ມີສຕິຕັ້ງມັ່ນ ແລະ

໖. ມີພັຣຍາໄດ້ ໕ ຫຼືມີພັຣຍາເກີນ ໕

ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ບໍ່ຕ້ອງຖືນິສສັຍຢູ່.

ອົງຄ໌ ໖ ແຫ່ງກິກຂຸຜູ້ຕ້ອງຖືນິສສັຍ

ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ປະກອບດ້ວຍອົງຄ໌ ໖ ແມ້ອື່ນອີກ ຈະບໍ່ຖືນິສສັຍຢູ່ບໍ່ໄດ້ ຄື

໑. ເປັນຜູ້ວິບັຕິດ້ວຍສີລ ໃນອະທິສີລ

໒. ເປັນຜູ້ວິບັຕິດ້ວຍອາຈາຣະ ໃນອັຊຍາຈາຣ

໓. ເປັນຜູ້ວິບັຕິດ້ວຍທິຕກີ ໃນທິຕກີຍິ່ງ

໔. ເປັນຜູ້ໄດ້ຍິນໄດ້ຟັງນ້ອຍ

໕. ເປັນຜູ້ມີປັນຍາຊາມ ແລະ

໖. ມີພັຣຊາຫຍ່ອນ ໕

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ຈະບໍ່ຖືນິສສັຍຢູ່ບໍ່ໄດ້.

ອົງຄ໌ ໖ ແຫ່ງພິກສຸຜູ້ບໍ່ຕ້ອງຖືນິສສັຍ

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ບໍ່ຕ້ອງຖືນິສສັຍຢູ່ ຄື

໑. ເປັນຜູ້ໄປບໍ່ວິບັຕິດ້ວຍສີລ ໃນອະທິສີລ

໒. ເປັນຜູ້ບໍ່ວິບັຕິດ້ວຍອາຈາຣະ ໃນອັຊຍາຈາຣ

໓. ເປັນຜູ້ບໍ່ວິບັຕິດ້ວຍທິຕຖິ ໃນທິຕຖິຍິ່ງ

໔. ເປັນຜູ້ໄດ້ຍິນໄດ້ຟັງຫຼາຍ

໕. ເປັນຜູ້ມີປັນຍາ ແລະ

໖. ມີພັຣຊາໄດ້ ໕ ຫຼືມີພັຣຊາເກີນ ໕

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ບໍ່ຕ້ອງຖືນິສສັຍຢູ່.

ອົງຄ໌ ໖ ແຫ່ງພິກສຸຜູ້ຕ້ອງຖືນິສສັຍ

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ແມ້ອື່ນອີກ ຈະບໍ່ຖືນິສສັຍຢູ່ບໍ່ໄດ້ ຄື

໑. ບໍ່ຮູ້ຈັກອາບັຕິ

໒. ບໍ່ຮູ້ຈັກອນາບັຕິ

໓. ບໍ່ຮູ້ຈັກອາບັຕິເບົາ

໔. ບໍ່ຮູ້ຈັກອາບັຕິໜັກ

໕. ທ່ານຈໍາປາຕິໂມກຂ໌ທັ້ງສອງບໍ່ໄດ້ດີໂດຍພິສດາຣ ຈໍາແນກບໍ່ໄດ້ດ້ວຍດີ ບໍ່ຄລ່ອງແຄລ່ວດີ ວິນິຈສັຍບໍ່ຮຽບຮ້ອຍໂດຍສຸຕຕະ ໂດຍອນຸພຍັຍຊນະ ແລະ

໖. ມີພັຣຊາຫຍ່ອນ ໕

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ຈະບໍ່ຖືນິສສັຍຢູ່ບໍ່ໄດ້.

ອົງຄ໌ ໖ ແຫ່ງພິກສຸຜູ້ບໍ່ຕ້ອງຖືນິສສັຍ

ດູຣາພິກສຸທັ້ງຫຼາຍ ພິກສຸຜູ້ປະກອບດ້ວຍອົງຄ໌ ໖ ບໍ່ຕ້ອງຖືນິສສັຍຢູ່ ຄື

໑. ຮູ້ຈັກອາບັຕິ

໒. ຮູ້ຈັກອນາບັຕິ

໓. ຮູ້ຈັກອາບັຕິເບົາ

໔. ຮູ້ຈັກອາບັຕິໜັກ

໕. ທ່ານຈຳປາຕິໂມກຂ໌ທັ້ງສອງໄດ້ດີໂດຍພິສດານ ຈຳແນກດີ ຄລ່ອງແຄລ່ວດີ ວິນິຈສັຍຮຽບ
ຮ້ອຍ

ໂດຍສຸຕຕະ ໂດຍອນຸພຍັນຊນະ ແລະ

໖. ມີພັຣษາໄດ້ ໕ ຫຼືມີພັຣษາເກີນ ໕

ດູຣາภิກษุທັ້ງຫຼາຍ ภิກษุຜູ້ປະກອບດ້ວຍອົງຄ໌ ໖ ນີ້ແລ ບໍ່ຕ້ອງຖືນິສສັຍຢູ່.

ເຣື່ອງຖືນິສສັຍ ຈົບ

ອາຢູວຣກາຄວາຣ ຈົບ.

ທາຢັຊຊກາຄວາຣ

ພຣະຣາຫຸລກຸມາຣທຣົງຜນວຊເປັນສາມເณຣ

[໑໑໗] ຄັ້ງນັ້ນ ພຣະຜູ້ມີພຣະภาคປະທັບຢູ່ໃນພຣະນຄຣຣາຊຄຣິຫ໌ ຕາມພຣະພຸທธาภิຣົມຍ໌ ແລ້ວ ສເດັຈຈາຣິກໄປທາງພຣະນຄຣກບິລພັສດ໌ ສເດັຈທ່ຽວຈາຣິກໂດຍລຳດັບເຖິງພຣະນຄຣກບິລພັສດ໌ ແລ້ວ. ຮູ້ວ່າ ພຣະອົງຄ໌ປະທັບຢູ່ ໓ ນິໂຄຣธาຣາມ ເຂຕພຣະນຄຣກບິລພັສດ໌ ສັກກຊົນບົທນັ້ນ. ຄັ້ນ ເວລາເຊົ້າ ພຣະຜູ້ມີພຣະภาคທຣົງອັນຕຣວາສົກແລ້ວ ທຣົງຖືບາຕຣ໌ຈີວຣ ສເດັຈພຣະພຸທธດຳເນີນໄປສູ່ ພຣະຣາຊນິເວສນ໌ຂອງພຣະເຈົ້າສຸທໂธທນສາກຍະ ຄັ້ນແລ້ວປະທັບນັ່ງເໜືອພຣະພຸທธອາສນ໌ທີ່ເຂົາປູລາດ ຖວາຍ. ຄັ້ງນັ້ນພຣະເທວີຣາຫຸລມາຣດາ ໄດ້ມີພຣະເສົາວນີແກ່ຣາຫຸລກຸມາຣວ່າ ດູຣາຣາຫຸລ ພຣະສມณະນັ້ນ ເປັນບິດາຂອງເຈົ້າ ເຈົ້າຈົ່ງໄປທູລຂໍຊັພຍ໌ມໍຣດົກຕໍ່ພຣະອົງຄ໌ ຈຶ່ງຣາຫຸລກຸມາຣເຂົ້າໄປເຝົ້າພຣະຜູ້ມີພຣະภาค ຄັ້ນເຖິງແລ້ວໄດ້ປະທັບຢືນເບື້ອງພຣະພັກຕຣ໌ພຣະຜູ້ມີພຣະภาค ພ້ອມຂາບທູລວ່າ ຂ້າແຕ່ພຣະສມณະ ພຣະฉາຍາຂອງພຣະອົງຄ໌ເປັນສຸຂ. ທັນໃດນັ້ນ ພຣະຜູ້ມີພຣະภาคສເດັຈອຸຕຖານາກາຣຈາກພຣະພຸທธອາສນ໌ແລ້ວ ກັບໄປ ຈຶ່ງຣາຫຸລກຸມາຣໄດ້ຕາມສເດັຈພຣະຜູ້ມີພຣະภาคໄປເບື້ອງຫລັງໆ ພ້ອມທູລຂໍວ່າ ຂ້າແຕ່ພຣະສມณะ ຂໍໄດ້ໂປຣດປະທານຊັພຍ໌ມໍຣດົກແກ່ຂ້ານ້ອຍ ຂ້າແຕ່ພຣະສມณะ ຂໍໄດ້ໂປຣດປະທານຊັພຍ໌ມໍຣດົກ ແກ່ຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄຕຣັສເອີ້ນທ່ານພຣະສາຣີບຸຕຣ໌ມາຣັບສັ່ງວ່າ ດູຣາສາຣີບຸຕຣ໌ ຖ້າເຊັ່ນນັ້ນ ທ່ານຈົ່ງໃຫ້ຣາຫຸລກຸມາຣບວຊ.

ທ່ານພຣະສາຣີບຸຕຣ໌ທູລຖາມວ່າ ຂ້າພຣະພຸທສເຈົ້າຈະໃຫ້ຣາຫຸລກຸມາຣທຣົງຜນວຊຢ່າງໃດ ພຣະພຸທສ-ເຈົ້າຂ້າ?

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຣັບສັ່ງກັບກິກຊຸທັ້ງຫຼາຍວ່າ ດູຣາກິກຊຸທັ້ງຫຼາຍ ເຮົາອນຸຍາຕການບວຊກຸລບຸຕຣ໌ ເປັນສາມເຕຣດ້ວຍໄຕຣສຣຕຄົມນ໌.

ວິຘີໃຫ້ບັຣພຊາ

ດູຣາກິກຊຸທັ້ງຫຼາຍ ກໍແລກິກຊຸຄວຣໃຫ້ກຸລບຸຕຣ໌ບວຊຢ່າງນີ້:-

ຊັ້ນຕົ້ນ ຄວຣໃຫ້ໂກນຜົມແລະໜນວດ ແລ້ວໃຫ້ນຸ່ງຜ້າຍ້ອມຝາດ ໃຫ້ຫົ່ມຜ້າພາດບ່າ ໃຫ້ຂາບຕີນກິກຊຸທັ້ງຫຼາຍ ໃຫ້ນັ່ງຫຢອງຫຢໍ້ ໃຫ້ປະຄອງອັຝຊລີ ແລ້ວສັ່ງວ່າ ຈົ່ງວ່າຢ່າງນີ້ ແລ້ວສອນໃຫ້ວ່າສຣຕຄົມນ໌ດັ່ງນີ້:-

ໄຕຣສຣຕຄົມນ໌

ພຸທ຺ສ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະພຸທສເຈົ້າ ເປັນທີ່ເພິ່ງ
ຘມ຺ມ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະຘັມມ໌ ເປັນທີ່ເພິ່ງ
ສງ຺ຆ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະສົງຆ໌ ເປັນທີ່ເພິ່ງ
ທຸຕິຍມ຺ປິ ພຸທ຺ສ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະພຸທສເຈົ້າ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໒
ທຸຕິຍມ຺ປິ ຘມ຺ມ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະຘັມມ໌ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໒
ທຸຕິຍມ຺ປິ ສງ຺ຆ ສຣຕ ຄຈ຺ຊາມີ
ຂ້າພເຈົ້າເຖິງພຣະສົງຆ໌ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໒

ຕຕິຍມ຺ປິ ພຸທ຺ສ ສຣຓ ຄຈ຺ຉາມິ

ຂ້າພເຈົ້າເຖິງພຣະພຸທສເຈົ້າ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໓

ຕຕິຍມ຺ປິ ຘມ຺ມ ສຣຓ ຄຈ຺ຉາມິ

ຂ້າພເຈົ້າເຖິງພຣະຘັມມ໌ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໓

ຕຕິຍມ຺ປິ ສງ຺ຆ ສຣຓ ຄຈ຺ຉາມິ

ຂ້າພເຈົ້າເຖິງພຣະສົງຆ໌ ເປັນທີ່ເພິ່ງ ແມ້ຄັ້ງທີ່ ໓

ດູຣາກິກຸຟທັ້ງຫຼາຍ ເຮົາອນຸຌາຕການບວຊກຸລບຸຕຣ໌ເປັນສາມເຓຣດ້ວຍໄຕຣສຣຓຄົມນ໌ນີ້.

ຄາວນັ້ນ ທ່ານພຣະສາຣີບຸຕຣ໌ ໃຫ້ຣາຫຸລກຸມາຣບັຣພຊາແລ້ວ.

ພຣະເຈົ້າສຸທໂຘທນໝາກຍະທູລຂໍພຣະພຣ

ຕໍ່ມາ ພຣະເຈົ້າສຸທໂຘທນສາກຍະເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຄັ້ນເຖິງແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວປະທັບນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄັ້ນທ້າວທ່ານປະທັບນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວໄດ້ຂາບທູລຂໍພຣະພອຣຕໍ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍຂໍປະທານພອຣຕໍ່ພຣະຜູ້ມີພຣະກາຄສັກຢ່າງນຶ່ງ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຖວາຍພຣະພອຣວ່າ ດູຣາພຣະອົງຄ໌ຜູ້ໂຄຕມະ ຕຖາຄົຕທັ້ງຫຼາຍ ມີພອຣລ່ວງເລີຍເສັຽແລ້ວ

ສຸທ. ຂ້ານ້ອຍທູລຂໍພອຣທີ່ສົມຄວຣແລະບໍ່ມີໂທຟ ພຣະພຸທສເຈົ້າຂ້ານ້ອຍ.

ກ. ພຣະອົງຄ໌ໂປຼດຕຣັສບອກພອຣນັ້ນເຖີດ ໂຄຕມະ.

ສຸທ. ເມື່ອພຣະຜູ້ມີພຣະກາຄທຣົງຜນວຊແລ້ວ ຄວາມທຸກຂ໌ລົ້ນພົ້ນໄດ້ບັງເກີດແກ່ຂ້ານ້ອຍ ເມື່ອພໍ່ນັນທະບວຊກໍເຊັ່ນດຽວກັນ ເມື່ອພໍ່ຣາຫຸລບັຣພຊາ ທຸກຂ໌ຍິ່ງເຫຼືອລົ້ນ ພຣະພຸທສເຈົ້າຂ້ານ້ອຍ ຄວາມຮັກບຸຕຣ໌ຍ່ອມຕັດຜິວ ຄັ້ນແລ້ວ ຕັດຫນັງ ຕັດເນື້ອ ຕັດເອັນ ຕັດກະດູກ ແລ້ວຕັ້ງຢູ່ເຖິງເຍື່ອໃນກະດູກ ຂ້ານ້ອຍຂໍປະທານພອຣະວໂຣກາສ ພຣະຄຸຓເຈົ້າທັ້ງຫຼາຍ ບໍ່ຄວຣບວຊບຸຕຣ໌ທີ່ບິດາມາຣດາຍັງບໍ່ໄດ້ອນຸຌາຕ ພຣະພຸທສເຈົ້າຂ້ານ້ອຍ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ພຣະເຈົ້າສຸທໂຘທນສາກຍະທຣົງເຫັນແຈ້ງ ທຣົງສມາທານທຣົງອາຈຫານ ທຣົງຣ່າເຣີງ ດ້ວຍຘັມມີກຖາ. ເມື່ອພຣະເຈົ້າສຸທໂຘທນສາກຍະ ອັນພຣະຜູ້ມີພຣະກາຄທຣົງ

ຊີ້ແຈ້ງໃຫ້ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣິງດ້ວຍສັມມີກຖາແລ້ວ ສເດັຈລຸກຈາກພຣະທີ່ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຣົງທຳປະທັກษິຕ ແລ້ວສເດັຈກັບ.

ລຳດັບນັ້ນພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ບຸຕຣ໌ທີ່ມາຣດາບິດາບໍ່ອນຸญາຕ ກິກษຸບໍ່ຄວຣໃຫ້ບວຊ ອົງຄ໌ໃດໃຫ້ບວຊ ຕ້ອງອາບັຕິທຸກກົฎ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣກບິລພັສດ໌ ຕາມພຣະພຸທສາກີຣົມຍ໌ແລ້ວ ສເດັຈຈາຣິກໄປທາງພຣະນຄຣສາວັຕຖີ ສເດັຈທ່ຽວຈາຣິກໂດຍລຳດັບ ເຖິງພຣະນຄຣສາວັຕຖີແລ້ວ. ຮູ້ວ່າພຣະອົງຄ໌ປະທັບຢູ່ໃນພຣະວິຫາຣເຊຕວັນ ອາຣາມຂອງອນາຖບິຕฑິກຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ

ເຣື່ອງທຣົງອນຸญາຕໃຫ້ກິກษຸຜູ້ฉລາດມີສາມເณຣຫຼາຍອົງຄ໌ໄດ້

[໑໑໙] ກໍໂດຍສມັຍນັ້ນແລ ຕະກູລອຸປຖາກຂອງທ່ານພຣະສາຣີບຸຕຣ໌ ສົ່ງເດັກຊາຍໄປໃນສຳນັກທ່ານພຣະສາຣີບຸຕຣ໌ ດ້ວຍມອບຫມາຍວ່າ ຂໍພຣະເຖຣະໂປຼດບັຣພຊາເດັກຄົນນີ້. ບ່ອນນັ້ນ ທ່ານພຣະສາຣີບຸຕຣ໌ໄດ້ມີຄວາມດຳຣິວ່າ ພຣະຜູ້ມີພຣະກາຄທຣົງບັญญັຕິບໍ່ໃຫ້ກິກษຸອົງຄ໌ດຽວຮັບສາມເณຣ ໒ ອົງຄ໌ໄວ້ອຸປັຕຖາກ ກໍເຮົາມີສາມເณຣຣາຫຸລນີ້ຢູ່ແລ້ວ ທີນີ້ເຮົາຈະປຕິບັຕິຢ່າງໃດ ດັ່ງນີ້ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸญາຕໃຫ້ກິກษຸຜູ້ฉລາດຜູ້ສາມາຖອົງຄ໌ດຽວ ຮັບສາມເณຣສອງອົງຄ໌ໄວ້ອຸປັຕຖາກໄດ້ ກໍເພາະທ່ານອາຈຈະໂອວາທ ອນຸສາສນ໌ສາມເณຣມີຈຳນວນເທົ່າໃດກໍໃຫ້ຮັບໄວ້ອຸປັຕຖາກ ມີຈຳນວນເທົ່ານັ້ນ.

ສິກຂາບົທຂອງສາມເณຣ

[໑໒໐] ຄັ້ງນັ້ນ ສາມເณຣທັ້ງຫຼາຍ ໄດ້ມີຄວາມດຳຣິວ່າ ສິກຂາບົທຂອງພວກເຮົາມີເທົ່າໃດແທ້ນໍ ແລະພວກເຮົາຈະຕ້ອງສຶກษາຫຍັງ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸญາຕສິກຂາບົທ ໑໐ ແກ່ສາມເณຣທັ້ງຫຼາຍ ແລະໃຫ້ສາມເณຣທັ້ງຫຼາຍສຶກษາໃນສິກຂາບົທ ໑໐ ນັ້ນ ຄື

໑. ເວັ້ນຈາກການທຳສັຕວ໌ທີ່ມີຊີວິຕໃຫ້ຕົກລ່ວງໄປ
໒. ເວັ້ນຈາກຖືເອົາພັສດຸອັນເຈົ້າຂອງບໍ່ໄດ້ໃຫ້
໓. ເວັ້ນຈາກກັມມ໌ອັນເປັນຂ້າເສິກແກ່ພຣົຫ໌ມຈັຣຍ໌
໔. ເວັ້ນຈາກການກ່າວເທັຈ

໕. ເວັ້ນຈາກການດື່ມນ້ຳເມົາ ຄື ສຸຣາແລະເມຣັຍ ອັນເປັນທີ່ຕັ້ງແຫ່ງຄວາມປະມາທ

໖. ເວັ້ນຈາກບໍຣິໂພຄອາຫາຣໃນເວລາວິກາລ

໗. ເວັ້ນຈາກຟ້ອນຣຳ ຂັບຮ້ອງ ປະໂຄມດົນຕຣີ ແລະດູການຫຼິ້ນທີ່ເປັນຂ້າເສິກ

໘. ເວັ້ນຈາກການທັດທຮົງຕົກແຕ່ງດ້ວຍດອກໄມ້ຂອງຫອມ ແລະເຄື່ອງລູບໄລ້ອັນເປັນຖານແຫ່ງການແຕ່ງຕົວ

໙. ເວັ້ນຈາກທີ່ນັ່ງແລະທີ່ນອນອັນສູງແລະໃຫຍ່

໑໐. ເວັ້ນຈາກການຮັບທອງແລະເງິນ

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕສິກຂາບົທ ໑໐ ນີ້ ແກ່ສາມເຕຣທັ້ງຫຼາຍ ແລະໃຫ້ສາມເຕຣທັ້ງຫຼາຍສຶກສາໃນສິກຂາບົທ ໑໐ ນີ້.

ເຣື່ອງລງທັຕຫກັມມ໌ແກ່ສາມເຕຣ

[໑໘໑] ກໍໂດຍສມັຍນັ້ນແລ ພວກສາມເຕຣບໍ່ມີຄວາມເຄົາຣົພ ບໍ່ມີຄວາມຢຳເກງ ມີຄວາມປະພຶຕບໍ່ເຫມາະສົມ ໃນພິກຂຸທັ້ງຫຼາຍຢູ່. ພິກຂຸທັ້ງຫຼາຍຈຶ່ງເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດພວກສາມເຕຣຈຶ່ງໄດ້ບໍ່ມີຄວາມເຄົາຣົພ ບໍ່ມີຄວາມຢຳເກງ ມີຄວາມປະພຶຕບໍ່ເຫມາະສົມໃນພິກຂຸທັ້ງຫຼາຍຢູ່ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ລງທັຕຫກັມມ໌ແກ່ສາມເຕຣຜູ້ປະກອບດ້ວຍອົງຄ໌ ໕ ຄື

໑. ພຍາຍາມເພື່ອຄວາມເສື່ອມລາກແຫ່ງພິກຂຸທັ້ງຫຼາຍ

໒. ພຍາຍາມເພື່ອຄວາມພິນາສແຫ່ງພິກຂຸທັ້ງຫຼາຍ

໓. ພຍາຍາມເພື່ອຄວາມຢູ່ບໍ່ໄດ້ແຫ່ງພິກຂຸທັ້ງຫຼາຍ

໔. ດ່າ ບໍຣິກາສ ພິກຂຸທັ້ງຫຼາຍ

໕. ຍຸຍົງພິກຂຸຕໍ່ພິກຂຸໃຫ້ແຕກກັນ

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ລງທັຕຫກັມມ໌ແກ່ສາມເຕຣຜູ້ປະກອບດ້ວຍອົງຄ໌ ໕ ນີ້ແລ.

ຄັ້ງນັ້ນ ພິກຂຸທັ້ງຫຼາຍໄດ້ມີຄວາມດຳຣິວ່າ ອາຈຈະລງທັຕຫກັມມ໌ຢ່າງໃດນໍແລ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ລງທັຕຫກັມມ໌ ຄື ຫ້າມປາມ.

ກໍໂດຍສມັຍນັ້ນແລ ກິກษຸທັ້ງຫຼາຍລງທັຕฑກັມມ໌ຄືຫ້າມສັງฆາຣາມທຸກແຫ່ງແກ່ພວກສາມເຕຣ. ສາມເຕຣເຂົ້າອາຣາມບໍ່ໄດ້ ຈຶ່ງຫລີກໄປເສັຽແດ່ ສິກເສັຽແດ່ ໄປເຂົ້າຮີດເດັຽຣຖີຍ໌ແດ່. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣລງທັຕฑກັມມ໌ຄືຫ້າມສັງฆາຣາມທຸກແຫ່ງ ອົງຄ໌ໃດລົງຕ້ອງອາບັຕິທຸກກັฎ ດູຣາກິກษຸທັ້ງຫຼາຍ ເຮົາອນຸຍາຕໃຫ້ລງທັຕฑກັມມ໌ຄື ຫ້າມຈເພາະສຖານທີ່ທີ່ສາມເຕຣຈະຢູ່ຫຼືຈະເຂົ້າໄປໄດ້.

ກໍໂດຍສມັຍນັ້ນແລ ກິກษຸທັ້ງຫຼາຍລງທັຕฑກັມມ໌ຄືຫ້າມອາຫາຣຊຶ່ງຈະກລືນເຂົ້າໄປທາງຊ່ອງປາກແກ່ພວກສາມເຕຣ. ຄົນທັ້ງຫຼາຍທຳປານະຄືຢາຄູແດ່ ສັງฆກັຕຣ໌ແດ່ ຈຶ່ງກ່າວນິມົນຕ໌ພວກສາມເຕຣຢ່າງນີ້ວ່າ ນິມົນຕ໌ທ່ານທັ້ງຫຼາຍມາດື່ມຢາຄູ ນິມົນຕ໌ທ່ານທັ້ງຫຼາຍມາຈັນກັຕຕາຫາຣ. ພວກສາມເຕຣຈຶ່ງກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພວກອາຕມາທຳຢ່າງນັ້ນບໍ່ໄດ້ ເພາະກິກษຸທັ້ງຫຼາຍລງທັຕฑກັມມ໌ຄືຫ້າມໄວ້.

ປະຊາຊົນຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດພຣະຜູ້ເປັນເຈົ້າຜູ້ຈເຣີญທັ້ງຫຼາຍ ຈຶ່ງໄດ້ຫ້າມອາຫາຣ ຊຶ່ງຈະກລືນເຂົ້າໄປທາງຊ່ອງປາກແກ່ພວກສາມເຕຣລະ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣລົງທັຕฑກັມມ໌ຄືຫ້າມອາຫາຣທີ່ຈະກລືນເຂົ້າໄປທາງຊ່ອງປາກ ອົງຄ໌ໃດລົງ ຕ້ອງອາບັຕິທຸກກັฎ.

ເຣື່ອງລງທັຕฑກັມມ໌ແກ່ສາມເຕຣ ຈົບ.

ເຣື່ອງກັກກັນສາມເຕຣຕ້ອງຂໍອນຸญາຕກ່ອນ

[໑໘໘] ກໍໂດຍສມັຍນັ້ນແລ ພຣະฉັພພັຄຄີຍ໌ບໍ່ອາປຸຈฉາພຣະອຸປັຊฌາຍ໌ກ່ອນ ແລ້ວທຳການກັກກັນສາມເຕຣທັ້ງຫຼາຍໄວ້. ພຣະອຸປັຊฌາຍ໌ທັ້ງຫຼາຍທ່ຽວຕາມຫາດ້ວຍຄຶດສົງສັຍວ່າ ເຮັດຫຍັງນໍ ສາມເຕຣຂອງພວກເຮົາຈຶ່ງຫາຍໄປ.

ກິກษຸທັ້ງຫຼາຍໄດ້ແຈ້ງໃຫ້ຮູ້ຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພຣະฉັພພັຄຄີຍ໌ໄດ້ກັກກັນໄວ້.

ພຣະອຸປັຊฌາຍ໌ທັ້ງຫຼາຍ ຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດພຣະฉັພພັຄຄີຍ໌ຈຶ່ງບໍ່ອາປຸຈฉາພວກເຮົາກ່ອນ ແລ້ວທຳການກັກກັນສາມເຕຣຂອງພວກເຮົາລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ກິກษຸຜູ້ບໍ່ອາປຸຈฉາອຸປັຊฌາຍ໌ກ່ອນແລ້ວ ບໍ່ຄວຣທຳການກັກກັນສາມເຕຣໄວ້ ອົງຄ໌ໃດທຳ ຕ້ອງອາບັຕິທຸກກັฎ.

ເຣື່ອງຫຣົງຫ້າມເກັ້ງກ່ອມສາມເຕຣ

[໑໔໓] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ພາກັນເກັ້ງກ່ອມພວກສາມເຕຣຂອງພຣະເຖຣະທັ້ງຫຼາຍ. ພຣະເຖຣະທັ້ງຫຼາຍຕ້ອງຫຍິບໄມ້ສີແຂ້ວແດ່ ຕັກນ້ຳລ້າງຫນ້າແດ່ ດ້ວຍຕົນເອງ ຍ່ອມລຳບາກ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ບໍຣິບັຫຂອງກິກษຸອື່ນ ກິກษຸບໍ່ຄວຣເກັ້ງກ່ອມ ອົງຄ໌ໃດເກັ້ງກ່ອມ ຕ້ອງອາບັຕິທຸກກົຝ.

ອົງຄ໌ແຫ່ງນາສນະ ໑໐ ຂອງສາມເຕຣ

[໑໔໔] ກໍໂດຍສມັຍນັ້ນແລ ສາມເຕຣຂອງທ່ານພຣະອຸປນັນຫສາກຍບຸຕຣ໌ຊື່ ກັຓຕກັບໄດ້ປະທຸษຮ້າຍກິກษຸຕີກັຓຕກີ. ກິກษຸທັ້ງຫຼາຍຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດສາມເຕຣຈຶ່ງໄດ້ປະພຶຕອນາຈາຣເຫັນປານນີ້ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຣັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸຍາຕໃຫ້ນາສນະສາມເຕຣຜູ້ປະກອບດ້ວຍອົງຄ໌ ໑໐ ຄື

໑. ທຳສັຕວ໌ທີ່ມີຊີວິຕໃຫ້ຕົກລ່ວງໄປ

໒. ຖືເອົາພັສດຸອັນເຈົ້າຂອງບໍ່ໄດ້ໃຫ້

໓. ປະພຶຕກັມມ໌ອັນເປັນຂ້າເສິກແກ່ພຣົຫ໌ມຈັຣຍ໌

໔. ກ່າວວາຈາເທັຈ

໕. ດື່ມນ້ຳເມົາ

໖. ກ່າວຕິພຣະພຸທສເຈົ້າ

໗. ກ່າວຕິພຣະທັມມ໌

໘. ກ່າວຕິພຣະສົງฆ໌

໙. ມີຄວາມເຫັນຜິດ

໑໐. ປະທຸษຮ້າຍກິກษຸຕີ

ດູຣາກິກษຸທັ້ງຫຼາຍ ເຮົາອນຸຍາຕໃຫ້ນາສນະສາມເຕຣຜູ້ປະກອບດ້ວຍອົງຄ໌ ໑໐ ນີ້.

ເຣື່ອງຫ້າມບັຓເฑາະກ໌ບໍ່ໃຫ້ອຸປສົມບົທ

[໑໔໕] ກໍໂດຍສມັຍນັ້ນແລ ບັຓເฑາະກ໌ຄົນນຶ່ງບວຊໃນສຳນັກກິກษຸ. ທ່ານເຂົ້າໄປຫາກິກษຸຫນຸ່ມໆ ແລ້ວເວົ້າຊວນຍ່າງນີ້ວ່າ ມາເຖີດທ່ານທັ້ງຫຼາຍ ຈົ່ງປະທຸษຮ້າຍຂ້າພເຈົ້າ. ກິກษຸທັ້ງຫຼາຍເວົ້າ

ຮຸກຮານວ່າ ເຈົ້າບັຕເຫາະກ໌ຈົ່ງຈິບຫາຍ ເຈົ້າບັຕເຫາະກ໌ຈົ່ງພິນາສ ຈະປະໂຍຊນ໌ຫຍັງນໍາເຈົ້າ. ທ່ານຖືກພວກພິກษຸເວົ້າຮຸກຮານ ຈຶ່ງເຂົ້າໄປຫາພວກສາມເណຣໂຄ່ງຜູ້ມີຮ່າງລໍ່າສັນ ແລ້ວເວົ້າຊວນຢ່າງນີ້ວ່າ ມາເຖີດທ່ານທັ້ງຫຼາຍ ຈົ່ງປະທຸษຮ້າຍຂ້າພເຈົ້າ. ພວກສາມເណຣເວົ້າຮຸກຮານວ່າ ເຈົ້າບັຕເຫາະກ໌ຈົ່ງຈິບຫາຍ ເຈົ້າບັຕເຫາະກ໌ຈົ່ງພິນາສ ຈະປະໂຍຊນ໌ຫຍັງນໍາເຈົ້າ. ທ່ານຖືກພວກສາມເណຣເວົ້າຮຸກຮານ ຈຶ່ງເຂົ້າໄປຫາພວກຄົນລ້ຽງຊ້າງຄົນລ້ຽງມ້າ ແລ້ວເວົ້າຢ່າງນີ້ວ່າ ມາເຖີດ ທ່ານທັ້ງຫຼາຍ ຈົ່ງປະທຸษຮ້າຍຂ້າພເຈົ້າ. ພວກຄົນລ້ຽງຊ້າງພວກຄົນລ້ຽງມ້າ ປະທຸษຮ້າຍແລ້ວຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ພຣະສມណະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ເປັນບັຕເຫາະກ໌ ບັຣດາພວກສມណະເຫຼົ່ານີ້ ແມ້ພວກໃດທີ່ບໍ່ແມ່ນບັຕເຫາະກ໌ ແມ້ພວກນັ້ນກໍປະທຸษຮ້າຍບັຕເຫາະກ໌ ເມື່ອເປັນເຊັ່ນນີ້ ພຣະສມណະເຫຼົ່ານີ້ກໍລ້ວນແຕ່ບໍ່ແມ່ນເປັນຜູ້ປະພຶຕພຣົຫ໌ມຈັຣຍ໌. ພິກษຸທັ້ງຫຼາຍໄດ້ຍິນພວກຄົນລ້ຽງຊ້າງ ພວກຄົນລ້ຽງມ້າ ພາກັນເພັ່ງໂທษ ຕິຕຽນໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຮັບສັ່ງກັບພິກษຸທັ້ງຫຼາຍວ່າ ດູຣາພິກษຸທັ້ງຫຼາຍ ອນຸປສັມບັນ ຄື ບັຕເຫາະກ໌ພິກษຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

ເຣື່ອງຫ້າມຄົນລັກເພຫນ ແລະຄົນເຂົ້າຮີດບໍ່ໃຫ້ອຸປສົມບົທ

[໑໔໖] ກໍໂດຍສມັຍນັ້ນແລ ບຸຕຣ໌ຂອງຕະກູລເກົ່າແກ່ຄົນນຶ່ງ ເປັນສຸຂຸມາລຊາຕິ ມີຫມູ່ญາຕິທີ່ຮູ້ຈັກກັນໃນຕະກູລຫມົດສິ້ນໄປ. ດັ່ງນັ້ນ ເຂົາໄດ້ມີຄວາມດໍາຣິວ່າ ເຮົາເປັນຜູ້ດີ ບໍ່ສາມາຖຈະຫາໂພຄຊັພຍ໌ທີ່ຍັງຫາບໍ່ໄດ້ ຫຼືບໍ່ສາມາຖຈະທໍາໂພຄຊັພຍ໌ທີ່ຫາໄດ້ແລ້ວໃຫ້ຈເຣີນງອກງາມ ດ້ວຍວິທີຫຍັງນໍ ເຮົາຈຶ່ງຈະຢູ່ເປັນສຸຂ ແລະບໍ່ຕ້ອງລໍາບາກ ແລ້ວຄິດໄດ້ໃນທັນໃດນັ້ນວ່າ ພວກສມណະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ແລ ມີປົກກະຕິເປັນສຸຂ ມີຄວາມປະພຶຕຮຽບຮ້ອຍ ฉັນອາຫາຣທີ່ດີ ນອນໃນຫ້ອງນອນອັນປົດປິດດີ ຖ້າຈັ່ງໃດ ເຮົາຄວຣຈັດແຈງບາຕຣ໌ຈີວຣ ໂກນຜົມແລະຫນວດ ນຸ່ງຜ້າຍ້ອມຝາດເສັຽເອງແລ້ວໄປອາຮາມຢູ່ຮ່ວມກັບພິກษຸທັ້ງຫຼາຍ. ຕໍ່ມາ ເຂົາໄດ້ຈັດແຈງບາຕຣ໌ຈີວຣ ໂກນຜົມແລະຫນວດ ນຸ່ງຜ້າຍ້ອມຝາດເອງ ແລ້ວໄປອາຮາມຂາບໄຫວ້ພິກษຸທັ້ງຫຼາຍ.

ພິກษຸທັ້ງຫຼາຍຖາມວ່າ ຄຸຕມີພັຣษາໄດ້ເທົ່າໃດ?

ເຂົາຍ້ອນຖາມວ່າ ທີ່ຊື່ວ່າມີພັຣษາໄດ້ເທົ່າໃດ ນັ້ນແມ່ນຫຍັງກັນ ໂດຍຂ້ານອັຍ?

ພິກษຸທັ້ງຫຼາຍຖາມວ່າ ອາວຸໂສ ໃຜເປັນພຣະອຸປັຊฌາຍ໌ຂອງຄຸຕ?

ເຂົາຍ້ອນຖາມວ່າ ທີ່ຊື່ວ່າພຣະອຸປັຊฌາຍ໌ ນັ້ນແມ່ນຫຍັງກັນ ໂດຍຂ້ານອັຍ?

ພິກຂຸທັ້ງຫຼາຍໄດ້ແຈ້ງເຣື່ອງນັ້ນຕໍ່ທ່ານພຣະອຸບາລີວ່າ ອາວຸໂສອຸບາລີ ຂໍນິມົນຕ໌ທ່ານສອບສວນບັຣພຊິຕຣູປນີ້.

ຄັ້ນເຂົາຖືກທ່ານພຣະອຸບາລີສອບສວນ ຈຶ່ງແຈ້ງເຣື່ອງນັ້ນໃຫ້ຮູ້. ທ່ານພຣະອຸບາລີໄດ້ແຈ້ງໃຫ້ພິກຂຸທັ້ງຫຼາຍຮູ້ແລ້ວ. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ອນຸປສັມບັນ ຄື ຄົນລັກເພສ ພິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

ດູຣາພິກຂຸທັ້ງຫຼາຍ ອນຸປສັມບັນ ຄື ຜູ້ໄປເຂົ້າຣີດເດັຽຣຖີຍ໌ ພິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຕ້ອງໃຫ້ສຶກເສັຽ.

ເຣື່ອງນາຄແປງກາຍເປັນມນຸສຍ໌ມາຂໍບວຊ

[໑໘໗] ກໍໂດຍສມັຍນັ້ນແລ ນາຄໂຕນຶ່ງອຶດອັດ ຣະອາ ບໍ່ມັກກຳເນີດນາຄ ຈຶ່ງນາຄນັ້ນໄດ້ມີຄວາມດຳຣິວ່າ ດ້ວຍວິທີຫຍັງນໍ ເຮົາຈຶ່ງຈະພົ້ນຈາກກຳເນີດນາຄ ແລະກັບໄດ້ອັຕກາພເປັນມນຸສຍ໌ຢ່າງໄວ. ຄັ້ນແລ້ວໄດ້ດຳຣິຕໍ່ໄປວ່າ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ແລ ເປັນຜູ້ປະພຶຕ-ສັມມ໌ ປະພຶຕສງົບ ປະພຶຕພຣົຫ໌ມຈັຣຍ໌ ກ່າວແຕ່ຄຳສັຕຍ໌ ມີສີລ ມີກັລຍາຓສັມມ໌ ຫາກເຮົາອາຈຈະບວຊໃນສຳນັກພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ ດ້ວຍວິທີເຊັ່ນນີ້ ເຮົາກໍຈະພົ້ນຈາກກຳເນີດນາຄແລະກັບໄດ້ອັຕກາພເປັນມນຸສຍ໌ຢ່າງໄວ ຄັ້ນແລ້ວນາຄນັ້ນຈຶ່ງແປງກາຍເປັນຊາຍຫນຸ່ມ ແລ້ວເຂົ້າໄປຫາພິກຂຸທັ້ງຫຼາຍຂໍບັຣພຊາ. ພິກຂຸທັ້ງຫຼາຍຈຶ່ງໃຫ້ເຂົາບັຣພຊາອຸປສົມບົທ. ສມັຍຕໍ່ມາ ພຣະນາຄນັ້ນອາສັຍຢູ່ໃນວິຫາຣສຸດເຂຕກັບພິກຂຸອົງຄ໌ນຶ່ງ. ຄັ້ນປັຈຈຸສສມັຍແຫ່ງຣາຕຣີ ພິກຂຸອົງຄ໌ນັ້ນ ຕື່ນນອນແລ້ວອອກໄປຍ່າງຈົງກົມຢູ່ໃນທີ່ແຈ້ງ. ຄັ້ນພິກຂຸອົງຄ໌ນັ້ນອອກໄປແລ້ວ. ພຣະນາຄນັ້ນກໍວາງໃຈຈຳວັດ. ວິຫາຣທັ້ງຫລັງເຕັມໄປດ້ວຍງູ. ຂົດຍື່ນອອກໄປທາງຫນ້າຕ່າງ. ຄັ້ນພິກຂຸອົງຄ໌ນັ້ນເປີດບານປະຕູດ້ວຍຕັ້ງໃຈຈັກເຂົ້າວິຫາຣ ໄດ້ເຫັນວິຫາຣທັ້ງຫລັງເຕັມໄປດ້ວຍງູ ເຫັນຂົດຍື່ນອອກໄປທາງຫນ້າຕ່າງ ກໍຕົກໃຈ ຈຶ່ງຮ້ອງໂວຍວາຍຂຶ້ນ.

ພິກຂຸທັ້ງຫຼາຍພາກັນແລ່ນເຂົ້າໄປແລ້ວໄດ້ຖາມພິກຂຸອົງຄ໌ນັ້ນວ່າ ອາວຸໂສ ທ່ານຮ້ອງໂວຍວາຍໄປເຮັດຫຍັງ?

ພິກຂຸອົງຄ໌ນັ້ນບອກວ່າ ອາວຸໂສທັ້ງຫຼາຍ ວິຫາຣນີ້ທັ້ງຫລັງເຕັມໄປດ້ວຍງູ ຂົດຍື່ນອອກໄປທາງຫນ້າຕ່າງ.

ຂຓະນັ້ນ ພຣະນາຄນັ້ນ ໄດ້ຕື່ນຂຶ້ນເພາະສຽງນັ້ນ ແລ້ວນັ່ງຢູ່ເທິງອາສນະຂອງຕົນ.

ກິກຂຸທັ້ງຫຼາຍຖາມວ່າ ອາວຸໂສ ທ່ານເປັນໃຜ?

ນ. ຂ້ານ້ອຍເປັນນາຄ ໂດຍຂ້ານອັຍ.

ກິ. ອາວຸໂສ ທ່ານໄດ້ທຳເຊັ່ນນີ້ເພື່ອປະສົງຄ໌ຫຍັງ?

ພຣະນາຄນັ້ນຈຶ່ງແຈ້ງເນື້ອຄວາມນັ້ນແກ່ກິກຂຸທັ້ງຫຼາຍ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວໄດ້ທຣົງປະທານພອຣະພຸທສໂຮວາທນີ້ແກ່ນາຄນັ້ນວ່າ ພວກເຈົ້າເປັນນາຄມີຄວາມບໍ່ງອກງາມໃນສັມມ໌ວິນັຍນີ້ເປັນສັມມດາ ໄປເຖີດເຈົ້ານາຄ ຈົ່ງໄປຮັກສາອຸໂບສົຖໃນວັນທີ່ ໑໔ ທີ່ ໑໕ ແລະທີ່ ໘ ແຫ່ງປັກຂ໌ນັ້ນແຫຼະ ດ້ວຍວິຣີນີ້ເຈົ້າຈັກພົ້ນຈາກກຳເນີດນາຄ ແລະຈັກກັບໄດ້ອັຕກາພເປັນມນຸສຍ໌ຢ່າງໄວ. ຄັ້ນນາຄນັ້ນໄດ້ຮູ້ວ່າ ຕົນມີຄວາມບໍ່ງອກງາມໃນພຣະສັມມ໌ວິນັຍນີ້ເປັນສັມມດາ ກໍເສັຽໃຈຫລັ່ງນ້ຳຕາ ສົ່ງສຽງດັງແລ້ວຫລີກໄປ.

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຫຕຸແຫ່ງຄວາມປາກົຕຕາມສກາພຂອງນາຄ ມີສອງປະການນີ້ ຄື ເວລາເສພເມຖຸນສັມມ໌ກັບນາງນາຄ ຜູ້ມີຊາຕິສເນີກັນ ໑ ເວລາວາງໃຈນອນຫລັບ ໑ ດູຣາກິກຂຸທັ້ງຫຼາຍ ເຫຕຸແຫ່ງຄວາມປາກົຕຕາມສກາພຂອງນາຄ ໔ ປະການນີ້ແລ

ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄື ສັຕວ໌ດິຣັຈສານ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຕ້ອງໃຫ້ສິກເສັຽ.

ເຣື່ອງຫ້າມຄົນຂ້າມາຣດາບໍ່ໃຫ້ອຸປສົມບົທ

[໑໔໘] ກໍໂດຍສມັຍນັ້ນແລ ມານົພຜູ້ນຶ່ງປົງຊີວິຕມາຣດາເສັຽ. ເຂົາອຶດອັດ ຣະອາ ນ່າຍບາປກັມມ໌ອັນນັ້ນ ແລະໄດ້ມີຄວາມດຳຣິວ່າ ດ້ວຍວິຣີຫຍັງນໍ ເຮົາຈຶ່ງຈະທຳການອອກຈາກບາປກັມມ໌ອັນນີ້ໄດ້ ຈຶ່ງຫວນຣະລຶກຄຶດຂຶ້ນໄດ້ວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ ເປັນຜູ້ປະພຶຕສັມມ໌ປະພຶຕສງົບ ປະພຶຕພຣົຫ໌ມຈັຣຍ໌ ກ່າວແຕ່ຄຳສັຕຍ໌ ມີສີລ ມີກັລຍາຕສັມມ໌ ຖ້າເຮົາອາຈຈະບວຊໃນສຳນັກພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ ດ້ວຍວິຣີເຊັ່ນນີ້ ເຮົາກໍຈະທຳການອອກຈາກບາປກັມມ໌ອັນນີ້ໄດ້. ຕໍ່ມາ ເຂົາເຂົ້າໄປຫາກິກຂຸທັ້ງຫຼາຍຂໍບັຣພຊາ. ກິກຂຸທັ້ງຫຼາຍໄດ້ແຈ້ງຄວາມນີ້ຕໍ່ທ່ານພຣະອຸບາລີວ່າ ອາວຸໂສ ອຸບາລີ ເມື່ອຄັ້ງກ່ອນແລ ນາຄແປງກາຍເປັນຊາຍຫນຸ່ມເຂົ້າມາບວຊໃນສຳນັກກິກຂຸ ອາວຸໂສ

ອຸບາລີ ນິມົນຕ໌ທ່ານໄຕ່ສວນມາຕົພຄົນນີ້. ຄັ້ນມາຕົພນັ້ນ ຖືກທ່ານພຣະອຸບາລີໄຕ່ສວນຢູ່ ຈຶ່ງແຈ້ງເຣື່ອງນັ້ນ. ທ່ານພຣະອຸບາລີໄດ້ແຈ້ງໃຫ້ພວກກິກຂຸຮູ້ແລ້ວ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄື ຄົນຜ່າມາຣດາ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສິກເສັຽ.

ເຣື່ອງຫ້າມຄົນຜ່າບິດາບໍ່ໃຫ້ອຸປສົມບົທ

[໑໘໙] ກໍໂດຍສມັຍນັ້ນແລ ມາຕົພຜູ້ນຶ່ງປົງຊີວິຕບິດາເສັຽ. ເຂົາອຶດອັດ ຣະອາ ນ່າຍບາປກັມມ໌ອັນນັ້ນ ແລະໄດ້ມີຄວາມດຳຣິວ່າ ດ້ວຍວິທີຫຍັງນໍ ເຮົາຈຶ່ງຈະທຳການອອກຈາກບາປກັມມ໌ອັນນີ້ໄດ້ ຈຶ່ງຫວນຣະລຶກຄຶດຂຶ້ນໄດ້ວ່າ ພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ ເປັນຜູ້ປະພຶຕສັມມ໌ປະພຶຕສງົບ ປະພຶຕພຣົຫ໌ມຈັຣຍ໌ ກ່າວແຕ່ຄຳສັຕຍ໌ ມີສີລ ມີກັລຍາຕສັມມ໌ ຖ້າເຮົາອາຈຈະບວຊໃນສຳນັກພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ ດ້ວຍວິທີເຊັ່ນນີ້ ເຮົາກໍຈະທຳການອອກຈາກບາປກັມມ໌ອັນນີ້ໄດ້. ຕໍ່ມາ ເຂົາເຂົ້າໄປຫາກິກຂຸທັ້ງຫຼາຍແລ້ວຂໍບັຣພຊາ. ກິກຂຸທັ້ງຫຼາຍໄດ້ແຈ້ງຄວາມນີ້ຕໍ່ທ່ານພຣະອຸບາລີວ່າ ອາວຸໂສອຸບາລີ ເມື່ອຄັ້ງກ່ອນແລ ນາຄແປງກາຍເປັນຊາຍຫນຸ່ມເຂົ້າມາບວຊໃນສຳນັກກິກຂຸ ອາວຸໂສອຸບາລີ ນິມົນຕ໌ທ່ານໄຕ່ສວນມາຕົພຄົນນີ້. ຄັ້ນມາຕົພນັ້ນ ຖືກທ່ານພຣະອຸບາລີໄຕ່ສວນຢູ່ ຈຶ່ງແຈ້ງເຣື່ອງນັ້ນ. ທ່ານພຣະອຸບາລີໄດ້ແຈ້ງໃຫ້ພວກກິກຂຸຮູ້ແລ້ວ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄື ຄົນຜ່າບິດາ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສິກເສັຽ.

ເຣື່ອງຫ້າມຄົນຜ່າພຣະອຣຫັນຕ໌ບໍ່ໃຫ້ອຸປສົມບົທ

[໑໙໐] ກໍໂດຍສມັຍນັ້ນແລ ກິກຂຸຫຼາຍອົງຄ໌ດ້ວຍກັນ ເດີນທາງໄກລ ຈາກເມືອງສາເກຕໄປພຣະນຄຣສາວັຕຖີ. ໃນຣະຫວ່າງທາງ ພວກໂຈຣພາກັນຍົກພວກອອກມາ ແຍ່ງຊີງກິກຂຸບາງພວກ ຜ່າກິກຂຸບາງພວກ. ເຈົ້າຫນ້າທີ່ຍົກອອກໄປຈາກພຣະນຄຣສາວັຕຖີ ແລ້ວຈັບໂຈຣໄດ້ເປັນບາງພວກ. ບາງພວກຫລົບຫນີໄປໄດ້. ພວກທີ່ຫລົບຫນີໄປ ໄດ້ບວຊໃນສຳນັກກິກຂຸ. ພວກທີ່ຖືກຈັບໄດ້ ເຈົ້າຫນ້າທີ່ກຳລັງນຳໄປຜ່າ. ພວກໂຈຣທີ່ບວຊແລ້ວເຫຼົ່ານັ້ນໄດ້ເຫັນໂຈຣພວກນັ້ນກຳລັງຖືກນຳໄປຜ່າ ຄັ້ນແລ້ວຈຶ່ງເວົ້າຢ່າງນີ້ວ່າ ເຄາະຫ໌ດີ

ພວກເຮົາພາກັນຫນີຣອດມາໄດ້ ຖ້າວັນນັ້ນຖືກຈັບ ຈະຕ້ອງຖືກເຂົາຂ້າເຊັ່ນນີ້ເຫມືອນກັນ. ກິກຂຸທັ້ງຫຼາຍພາກັນຖາມວ່າ ອາວຸໂສທັ້ງຫຼາຍ ກໍພວກທ່ານໄດ້ເຮັດຫຍັງໄວ້? ຈຶ່ງບັຣພຊິຕເຫຼົ່ານັ້ນໄດ້ແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫຼາຍ. ກິກຂຸທັ້ງຫຼາຍໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກະກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸພວກນັ້ນເປັນອຣຫັນຕ໌ ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນຄືຄົນຂ້າພຣະອຣຫັນຕ໌ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

ເຣື່ອງຫ້າມອຸປສົມບົທຄົນປະທຸຮ້າຍກິກຂຸຕີ ເປັນຕົ້ນ

[໑໓໑] ກໍໂດຍສມັຍນັ້ນແລ ກິກຂຸຕີຫຼາຍອົງຄ໌ ເດີນທາງໄກລຈາກເມືອງສາເກຕໄປພຣະນຄຣສາວັຕຖີ. ໃນຣະຫວ່າງທາງ ພວກໂຈຣພາກັນຍົກອອກມາ ແຍ່ງຊີງກິກຂຸຕີບາງພວກ ທຳຮ້າຍກິກຂຸຕີບາງພວກ. ເຈົ້າຫນ້າທີ່ຍົກອອກໄປຈາກພຣະນຄຣສາວັຕຖີ ແລ້ວຈັບໂຈຣໄດ້ເປັນບາງພວກ. ບາງພວກຫລົບຫນີໄປໄດ້. ພວກທີ່ຫລົບຫນີໄປ ໄດ້ບວຊໃນສຳນັກກິກຂຸ. ພວກທີ່ຖືກຈັບໄດ້ເຈົ້າຫນ້າທີ່ກຳລັງນຳໄປຂ້າ. ພວກໂຈຣທີ່ບວຊແລ້ວເຫຼົ່ານັ້ນ ໄດ້ເຫັນໂຈຣພວກນັ້ນກຳລັງຖືກນຳໄປຂ້າ ຄັ້ນແລ້ວຈຶ່ງເວົ້າຢ່າງນີ້ວ່າ ເຄາະຫ໌ດີ ພວກເຮົາພາກັນຫນີຣອດມາໄດ້ ຖ້າວັນນັ້ນຖືກຈັບ ຈະຕ້ອງຖືກເຂົາຂ້າເຊັ່ນນີ້ເຫມືອນກັນ. ກິກຂຸທັ້ງຫຼາຍພາກັນຖາມວ່າ ອາວຸໂສທັ້ງຫຼາຍ ກໍພວກທ່ານໄດ້ເຮັດຫຍັງໄວ້. ຈຶ່ງບັຣພຊິຕເຫຼົ່ານັ້ນໄດ້ແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫຼາຍ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄືຄົນປະທຸຮ້າຍກິກຂຸຕີ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄືຄົນຜູ້ທຳສັງຆເພທ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄືຄົນທຳຮ້າຍພຣະພຸທຣເຈົ້າຈົນເຖິງຫໍ້ພຣະໂລຫິຕ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວ ຕ້ອງໃຫ້ສຶກເສັຽ.

ເຣື່ອງຫ້າມອຸປສົມບົທອຸກໂຕພຍັລຊນກ

[໑໓໘] ກໍໂດຍສມັຍນັ້ນແລ **ອຸກໂຕພຍັລຊນກ**[1]ຄົນນຶ່ງໄດ້ບວຊໃນສຳນັກກິກຂຸ. ທ່ານເສພເມຖຸນສັມມ໌ໃນສຕຣີທັ້ງຫຼາຍ ດ້ວຍປຸຣິສນິມິຕຂອງຕົນແດ່ ໃຫ້ບຸຣຸຮອື່ນເສພເມຖຸນສັມມ໌ໃນອິຕຖີນິມິຕຂອງຕົນແດ່. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ອນຸປສັມບັນ ຄື ອຸກໂຕພຍັລຊນກ ກິກຂຸບໍ່ຄວຣໃຫ້ອຸປສົມບົທ ທີ່ອຸປສົມບົທແລ້ວຕ້ອງໃຫ້ສຶກເສັຽ.

---

[໑] **ອຸກໂຕພຍັລຊນກ** ຄົນມີທັ້ງ ໒ ເພສ

ບຸຄຄົລບໍ່ຄວຣໃຫ້ອຸປສົມບົທ ໒໐ ຈຳພວກ

[໑໓໓] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫຼາຍອຸປສົມບົທກຸລບຸຕຣ໌ຜູ້ບໍ່ມີອຸປັຊຊາຍ໌. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກຸລບຸຕຣ໌ຜູ້ບໍ່ມີອຸປັຊຊາຍ໌ ພິກຂຸບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຖ.

ສມັຍຕໍ່ມາ ພິກຂຸທັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີສົງຄ໌ເປັນອຸປັຊຊາຍ໌. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກຸລບຸຕຣ໌ມີສົງຄ໌ເປັນອຸປັຊຊາຍ໌ ພິກຂຸບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຖ.

ສມັຍຕໍ່ມາ ພິກຂຸທັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີຄຓະເປັນອຸປັຊຊາຍ໌. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກຸລບຸຕຣ໌ມີຄຓະເປັນອຸປັຊຊາຍ໌ ພິກຂຸບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຖ.

ສມັຍຕໍ່ມາ ພິກຂຸທັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີບັຓເທາະກ໌ເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີບຸຄຄົລລັກເພສເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີພິກຂຸໄປເຂົ້າຣີດເດັຽຣຖີຍ໌ເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີສັຕວ໌ດິຣັຈສານເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີຄົນຂ່າມາຣດາເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີຄົນຂ່າບິດາເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີຄົນຂ່າພຣະອຣຫັນຕ໌ເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີຄົນປະທຸຊຮ້າຍພິກຂຸຓີເປັນອຸປັຊຊາຍ໌.

... ອຸປສົມບົທກຸລບຸຕຣ໌ມີຄົນທຳສັງຄເພທເປັນອຸປັຊຊາຍ໌

... ອຸປສົມບົທກຸລບຸຕຣ໌ມີຄົນທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕເປັນອຸປັຊຊາຍ໌

... ອຸປສົມບົທກຸລບຸຕຣ໌ມີອຸກໂຕພຍັລຊນກເປັນອຸປັຊຊາຍ໌.

ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກຸລບຸຕຣ໌ມີບັຓເທາະກ໌ເປັນອຸປັຊຊາຍ໌ ພິກຂຸບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີບຸຄຄົລລັກເພສເປັນອຸປັຊຊາຍ໌ ພິກຂຸບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີກິກຸ່ຍໄປເຂົ້າຮີດເດັ່ງຣຖີຍ໌ເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີສັຕວ໌ດິຣັຈຉານເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນຂ້າມາຣດາເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນຂ້າບິດາເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນຂ້າພຣະອຣຫັນຕ໌ເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນປະທຸຍຮ້າຍກິກຸ່ຍຓີເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນທຳສັງຄເພທເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີຄົນທຳຮ້າຍພຣະສາສດາຈົນຫໍ້ພຣະໂລຫິຕເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ...

ກຸລບຸຕຣ໌ມີອຸກໂຕພຍັລຊນກເປັນອຸປັຊຊາຍ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

[໑໖໔] ກໍໂດຍສມັຍນັ້ນແລ ກິກຸ່ຍທັ້ງຫຼາຍອຸປສົມບົທກຸລບຸຕຣ໌ຜູ້ບໍ່ມີບາຕຣ໌. ພວກທ່ານທ່ຽວຮັບບິຓທບາຕດ້ວຍມື. ຄົນທັ້ງຫຼາຍຈຶ່ງເພັ່ງໂທຍ ຕິຕຽນ ໂພນທະນາວ່າ ທ່ຽວຮັບບິຓທບາຕເຫມືອນພວກເດັ່ງຣຖີຍ໌. ກິກຸ່ຍທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸ່ຍທັ້ງຫຼາຍວ່າ ດູຣາກິກຸ່ຍທັ້ງຫຼາຍ ກຸລບຸຕຣ໌ບໍ່ມີບາຕຣ໌ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຸ່ຍທັ້ງຫຼາຍອຸປສົມບົທກຸລບຸຕຣ໌ຜູ້ບໍ່ມີຈີວຣ. ພວກທ່ານເປືອຍກາຍທ່ຽວຮັບບິຓທບາຕ. ຄົນທັ້ງຫຼາຍຈຶ່ງເພັ່ງໂທຍ ຕິຕຽນ ໂພນທະນາວ່າ ທ່ຽວຮັບບິຓທບາຕເຫມືອນພວກເດັ່ງຣຖີຍ໌. ກິກຸ່ຍທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸ່ຍທັ້ງຫຼາຍວ່າ ດູຣາກິກຸ່ຍທັ້ງຫຼາຍ ກຸລບຸຕຣ໌ບໍ່ມີຈີວຣ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຸ່ຍທັ້ງຫຼາຍອຸປສົມບົທກຸລບຸຕຣ໌ຜູ້ບໍ່ມີທັ້ງບາຕຣ໌ທັ້ງຈີວຣ ພວກທ່ານເປືອຍກາຍທ່ຽວຮັບບິຓທບາຕດ້ວຍມື ຄົນທັ້ງຫຼາຍຈຶ່ງເພັ່ງໂທຍ ຕິຕຽນ ໂພນທະນາວ່າ ທ່ຽວຮັບບິຓທບາຕເຫມືອນພວກເດັ່ງຣຖີຍ໌. ກິກຸ່ຍທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກະກິກຸ່ຍທັ້ງຫຼາຍວ່າ ດູຣາກິກຸ່ຍທັ້ງຫຼາຍ ກຸລບຸຕຣ໌ບໍ່ມີທັ້ງບາຕຣ໌ທັ້ງຈີວຣ ກິກຸ່ຍບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຸ່ຫັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີບາຕຣ໌ທີ່ຢືມເຂົາມາ. ເມື່ອອຸປສົມບົທແລ້ວ ເຈົ້າຂອງກໍນໍາບາຕຣ໌ຄືນໄປ. ພວກທ່ານທຸ່ງວຣັບບິຕຫບາຕດ້ວຍມື. ຄົນທັ້ງຫຼາຍຈຶ່ງເພັ່ງໂທຫ ຕິຕຽນ ໂພນທະນາວ່າ ທຸ່ງວຣັບບິຕຫບາຕເໝືອນພວກເດັ່ຽຣຖີຍ໌. ກິກຸ່ຫັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຣັບສັ່ງກັບກິກຸ່ຫັ້ງຫຼາຍວ່າ ດູຣາກິກຸ່ຫັ້ງຫຼາຍກຸລບຸຕຣ໌ມີບາຕຣ໌ທີ່ຢືມເຂົາມາ ກິກຸ່ບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຸ່ຫັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີຈີວຣທີ່ຢືມເຂົາມາ. ເມື່ອອຸປສົມບົທແລ້ວ ເຈົ້າຂອງກໍນໍາຈີວຣຄືນໄປ. ພວກທ່ານເປືອຍກາຍທຸ່ງວຣັບບິຕຫບາຕ. ຄົນທັ້ງຫຼາຍຈຶ່ງເພັ່ງໂທຫ ຕິຕຽນ ໂພນທະນາວ່າ ທຸ່ງວຣັບບິຕຫບາຕເໝືອນພວກເດັ່ຽຣຖີຍ໌. ກິກຸ່ຫັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຣັບສັ່ງກັບກິກຸ່ຫັ້ງຫຼາຍວ່າ ດູຣາກິກຸ່ຫັ້ງຫຼາຍ ກຸລບຸຕຣ໌ມີຈີວຣທີ່ຢືມເຂົາມາ ກິກຸ່ບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຸ່ຫັ້ງຫຼາຍອຸປສົມບົທກຸລບຸຕຣ໌ມີບາຕຣ໌ແລະຈີວຣທີ່ຢືມເຂົາມາ. ເມື່ອອຸປສົມບົທແລ້ວ ເຈົ້າຂອງກໍນໍາບາຕຣ໌ແລະຈີວຣຄືນໄປ. ພວກທ່ານເປືອຍກາຍທຸ່ງວຣັບບິຕຫບາຕດ້ວຍມື. ຄົນທັ້ງຫຼາຍຈຶ່ງເພັ່ງໂທຫ ຕິຕຽນ ໂພນທະນາວ່າ ທຸ່ງວຣັບບິຕຫບາຕເໝືອນພວກເດັ່ຽຣຖີຍ໌. ກິກຸ່ຫັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຣັບສັ່ງກັບກິກຸ່ຫັ້ງຫຼາຍວ່າ ດູຣາກິກຸ່ຫັ້ງຫຼາຍກຸລບຸຕຣ໌ມີບາຕຣ໌ແລະຈີວຣທີ່ຢືມເຂົາມາ ກິກຸ່ບໍ່ຄວຣອຸປສົມບົທໃຫ້ ອົງຄ໌ໃດອຸປສົມບົທໃຫ້ ຕ້ອງອາບັຕິທຸກກົຜ.

ບຸຄຄົລບໍ່ຄວຣໃຫ້ອຸປສົມບົທ ໒໐ ຈໍາພວກ ຈົບ.

ບຸຄຄົລບໍ່ຄວຣໃຫ້ບັຣພຊາ ໓໒ ຈໍາພວກ

[໑໓໕] ກໍໂດຍສມັຍນັ້ນແລ ກິກຸ່ຫັ້ງຫຼາຍບັຣພຊາຄົນມືດ້ວນ ... ບັຣພຊາຄົນຕີນດ້ວນ ... ບັຣພຊາຄົນທັ້ງມືແລະຕີນດ້ວນ ... ບັຣພຊາຄົນຫູຂາດ ... ບັຣພຊາຄົນດັງຫວິກ ... ບັຣພຊາຄົນທັ້ງຫູຂາດແລະດັງຫວິກ ... ບັຣພຊາຄົນນິ້ວມືນິ້ວຕີນຂາດ ... ບັຣພຊາຄົນມີງ່າມມືງ່າມຕີນຂາດ ... ບັຣພຊາຄົນເອັນຂາດ ... ບັຣພຊາຄົນມືເປັນແຜ່ນ ... ບັຣພຊາຄົນຄ່ອມ ... ບັຣພຊາຄົນເຕັ້ຍ ... ບັຣພຊາຄົນຄໍພອກ ...

ບັຣພຊາຄົນຖືກສັກຫມາຍໂທษ ... ບັຣພຊາຄົນມີຮອຍຄ່ຽນດ້ວຍຫວາຍ ... ບັຣພຊາຄົນຖືກອອກຫມາຍສັ່ງຈັບ ... ບັຣພຊາຄົນຕີນປຸກ ... ບັຣພຊາຄົນມີໂຣຄເຮື້ອຮັງ ... ບັຣພຊາຄົນມີຮູປຮ່າງບໍ່ສົມປະກອບ ... ບັຣພຊາຄົນຕາບອດຂ້າງດຽວ ... ບັຣພຊາຄົນງ່ອຍ ... ບັຣພຊາຄົນກະຈອກ ... ບັຣພຊາຄົນເປັນໂຣຄອັມພາຕ ... ບັຣພຊາຄົນມີອິຣິຍາບົຖຂາດ ... ບັຣພຊາຄົນຊຣາທຸພພົລກາພ ... ບັຣພຊາຄົນຕາບອດສອງຂ້າງ ... ບັຣພຊາຄົນໃບ້ ... ບັຣພຊາຄົນຫູຫນວກ ... ບັຣພຊາຄົນທັ້ງບອດແລະໃບ້ ... ບັຣພຊາຄົນທັ້ງບອດແລະຫນວກ ... ບັຣພຊາຄົນທັ້ງໃບ້ແລະຫນວກ ... ບັຣພຊາຄົນທັ້ງບອດໃບ້ແລະຫນວກ.

ກິກษຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣບັຣພຊາຄົນມືດ້ວນ ... ບໍ່ຄວຣບັຣພຊາຄົນຕີນດ້ວນ ... ບໍ່ຄວຣບັຣພຊາຄົນທັ້ງມືແລະຕີນດ້ວນ ... ບໍ່ຄວຣບັຣພຊາຄົນຫູຂາດ ... ບໍ່ຄວຣບັຣພຊາຄົນດັງຫວິກ ... ບໍ່ຄວຣບັຣພຊາຄົນທັ້ງຫູຂາດທັ້ງດັງຫວິກ ... ບໍ່ຄວຣບັຣພຊາຄົນນິ້ວມືນິ້ວຕີນຂາດ ... ບໍ່ຄວຣບັຣພຊາຄົນງ່າມມືງ່າມຕີນຂາດ ... ບໍ່ຄວຣບັຣພຊາຄົນເອັນຂາດ ... ບໍ່ຄວຣບັຣພຊາຄົນມືເປັນແຜ່ນ ... ບໍ່ຄວຣບັຣພຊາຄົນຄ່ອມ ... ບໍ່ຄວຣບັຣພຊາຄົນເຕັ້ຍ ... ບໍ່ຄວຣບັຣພຊາຄົນຄໍພອກ ... ບໍ່ຄວຣບັຣພຊາຄົນຖືກສັກຫມາຍໂທษ ... ບໍ່ຄວຣບັຣພຊາຄົນມີຮອຍຄ່ຽນດ້ວຍຫວາຍ ... ບໍ່ຄວຣບັຣພຊາຄົນຖືກອອກຫມາຍສັ່ງຈັບ ... ບໍ່ຄວຣບັຣພຊາຄົນຕີນປຸກ ... ບໍ່ຄວຣບັຣພຊາຄົນມີໂຣຄເຮື້ອຮັງ ... ບໍ່ຄວຣບັຣພຊາຄົນມີຮູປຮ່າງບໍ່ສົມປະກອບ ... ບໍ່ຄວຣບັຣພຊາຄົນຕາບອດຂ້າງດຽວ ... ບໍ່ຄວຣບັຣພຊາຄົນງ່ອຍ ... ບໍ່ຄວຣບັຣພຊາຄົນກະຈອກ ... ບໍ່ຄວຣບັຣພຊາຄົນເປັນໂຣຄອັມພາຕ ... ບໍ່ຄວຣບັຣພຊາຄົນມີອິຣິຍາບົຖຂາດ ... ບໍ່ຄວຣບັຣພຊາຄົນຊຣາທຸພພົລກາພ ... ບໍ່ຄວຣບັຣພຊາຄົນຕາບອດສອງຂ້າງ... ບໍ່ຄວຣບັຣພຊາຄົນໃບ້... ບໍ່ຄວຣບັຣພຊາຄົນຫູຫນວກ... ບໍ່ຄວຣບັຣພຊາຄົນທັ້ງບອດແລະໃບ້ ... ບໍ່ຄວຣບັຣພຊາຄົນທັ້ງບອດແລະຫນວກ ... ບໍ່ຄວຣບັຣພຊາຄົນທັ້ງໃບ້ແລະຫນວກ ... ບໍ່ຄວຣບັຣພຊາຄົນທັ້ງບອດໃບ້ແລະຫນວກ ອົງຄ໌ໃດບັຣພຊາໃຫ້ ຕ້ອງອາບັຕິທຸກກົຜ.

ບຸຄຄົລບໍ່ຄວຣໃຫ້ບັຣພຊາ ๓໘ ຈຳພວກ ຈົບ.

ທາຢັຊຊກາຓວາຣທີ່ ໗ ຈົບ.

ຫຣົງຫ້າມໃຫ້ນິສສັຍແກ່ອລັຊຊີ

[໑໑໖] ກໍໂດຍສມັຍນັ້ນແລ ພຣະວັພພັຄຄີຍ໌ໃຫ້ນິສສັຍແກ່ກິກຂຸພວກອລັຊຊີ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣໃຫ້ນິສສັຍແກ່ກິກຂຸພວກອລັຊຊີ ອົງຄ໌ໃດໃຫ້ຕ້ອງອາບັຕິທຸກກົຜ.

ສມັຍຕໍ່ມາ ກິກຂຸທັ້ງຫຼາຍຢູ່ອາສັຍກິກຂຸພວກອລັຊຊີ. ບໍ່ຊ້າບໍ່ນານເທົ່າໃດນັກ ແມ້ພວກທ່ານກໍກຼາຍເປັນພວກອລັຊຊີ ເປັນກິກຂຸຊົ່ວຊາມ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣຢູ່ອາສັຍກິກຂຸພວກອລັຊຊີ ອົງຄ໌ໃດຢູ່ ຕ້ອງອາບັຕິທຸກກົຜ.

ຄັ້ງນັ້ນ ກິກຂຸທັ້ງຫຼາຍໄດ້ມີຄວາມດຳຣິວ່າ ພຣະຜູ້ມີພຣະກາຄຫຣົງບັຄລັຕິໄວ້ວ່າ ບໍ່ຄວຣໃຫ້ນິສສັຍແກ່ກິກຂຸພວກອລັຊຊີ ແລະບໍ່ຄວຣຢູ່ອາສັຍກິກຂຸພວກອລັຊຊີ ທຳຢ່າງໃດນໍພວກເຣົາຈຶ່ງຈະຮູ້ວ່າ ເປັນກິກຂຸລັຊຊີ ຫຼືອລັຊຊີ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຄາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຣົາອນຸຄາຕໃຫ້ຖ້າ ໔-໕ ມື້ ພໍຈະສືບສວນຮູ້ວ່າ ກິກຂຸຜູ້ໃຫ້ນິສສັຍເປັນ**ສກາຄ**[2]ກັນ.

ກິກຂຸຜູ້ບໍ່ຕ້ອງຖືນິສສັຍ

[໑໑໗] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເດີນທາງໄກລໄປໂກສົລຊົນບົທ. ຄາວນັ້ນລາວໄດ້ມີຄວາມດຳຣິວ່າ ພຣະຜູ້ມີພຣະກາຄຫຣົງບັຄລັຕິໄວ້ວ່າ ກິກຂຸຈະບໍ່ຖືນິສສັຍຢູ່ບໍ່ໄດ້ ດັ່ງນີ້ ກໍເຣົາມີຫນ້າທີ່ຕ້ອງຖືນິສສັຍແຕ່ຈຳຕ້ອງເດີນທາງໄກລ ອາຈຈະປຕິບັຕິຢ່າງໃດນໍແລ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຄາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຣົາອນຸຄາຕໃຫ້ກິກຂຸຜູ້ເດີນທາງໄກລ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ບໍ່ຕ້ອງຖືນິສສັຍຢູ່.

[໑໑໘] ກໍໂດຍສມັຍນັ້ນແລ ກິກຂຸ ໒ ອົງຄ໌ເດີນທາງໄກລໄປໂກສົລຊົນບົທ. ທ່ານທັ້ງສອງພັກຢູ່ ໓ ອາວາສແຫ່ງນຶ່ງ. ໃນກິກຂຸ ໒ ອົງຄ໌ນັ້ນ ອົງຄ໌ນຶ່ງອາພາຣ ຈຶ່ງອົງຄ໌ທີ່ອາພາຣນັ້ນໄດ້ມີຄວາມດຳຣິວ່າ ພຣະຜູ້ມີພຣະກາຄຫຣົງບັຄລັຕິໄວ້ວ່າ ກິກຂຸຈະບໍ່ຖືນິສສັຍຢູ່ບໍ່ໄດ້ ກໍເຣົາມີຫນ້າທີ່ຕ້ອງຖືນິສັຍ ແຕ່ກຳລັງ

---

[2] **ສກາຄ** ມີສ່ວນສເມີກັນ, ເທົ່າກັນ, ຖືກກັນ, ເຂົ້າກັນໄດ້, ພວກດຽວກັນ

ອາພາຣ ອາຈຈະປຕິບັຕິຢ່າງໃດນໍແລ. ກິກຍຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເຣົາອນຸຍາຕໃຫ້ກິກຍຸອາພາຣ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ບໍ່ຕ້ອງຖືນິສສັຍຢູ່.

ຄັ້ງນັ້ນ ກິກຍຸຜູ້ພຍາບາລໄຂ້ນັ້ນໄດ້ມີຄວາມດໍາຣິວ່າ ພຣະຜູ້ມີພຣະກາຄທຣົງບັນລັຕິໄວ້ວ່າ ກິກຍຸຈະບໍ່ຖືນິສສັຍຢູ່ບໍ່ໄດ້ ກໍເຣົາມີຫນ້າທີ່ຕ້ອງຖືນິສສັຍ ແຕ່ກິກຍຸອົງຄ໌ນີ້ຍັງອາພາຣ ເຣົາອາຈຈະປຕິບັຕິຢ່າງໃດນໍແລ. ກິກຍຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເຣົາອນຸຍາຕໃຫ້ກິກຍຸຜູ້ພຍາບາລໄຂ້ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍຖືກກິກຍຸອາພາຣຂໍຮ້ອງ ບໍ່ຕ້ອງຖືນິສສັຍຢູ່.

ກໍໂດຍສມັຍນັ້ນແລ ກິກຍຸອົງຄ໌ນຶ່ງຢູ່ວັດປ່າ ແລະທ່ານກໍມີຄວາມຜາສຸກໃນເສນາສນະນັ້ນ. ຄາວນັ້ນລາວໄດ້ມີຄວາມດໍາຣິວ່າ ພຣະຜູ້ມີພຣະກາຄທຣົງບັນລັຕິໄວ້ວ່າ ກິກຍຸຈະບໍ່ຖືນິສສັຍຢູ່ບໍ່ໄດ້ ກໍເຣົາມີຫນ້າທີ່ຕ້ອງຖືນິສສັຍ ແຕ່ຍັງຢູ່ວັດປ່າ ແລະເຣົາກໍມີຄວາມຜາສຸກໃນເສນາສນະນີ້ ອາຈຈະປຕິບັຕິຢ່າງໃດນໍແລ. ກິກຍຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເຣົາອນຸຍາຕໃຫ້ກິກຍຸຜູ້ຖືຢູ່ປ່າເປັນວັຕຣ໌ ກໍາຫນົດການຢູ່ເປັນຜາສຸກ ເມື່ອບໍ່ໄດ້ຜູ້ໃຫ້ນິສສັຍ ບໍ່ຕ້ອງຖືນິສສັຍ ດ້ວຍຜູກໃຈວ່າ ເມື່ອໃດມີກິກຍຸຜູ້ໃຫ້ນິສສັຍທີ່ສົມຄວຣມາຢູ່ ຈັກອາສັຍກິກຍຸນັ້ນຢູ່.

ອຸປສົມບົທກັມມ໌

ສູຕອຸປສັມປທາເປກຂະຣະບຸໂຄຕຣ໌

[໑໖໙] ກໍໂດຍສມັຍນັ້ນແລ ທ່ານພຣະມຫາກັສສປມີອຸປສັມປທາເປກຂະ ແລະທ່ານສົ່ງທູຕໄປໃນສໍານັກທ່ານພຣະອານົນທ໌ວ່າ ທ່ານອານົນທ໌ຈົ່ງມາສູຕອຸປສັມປທາເປກຂະນີ້. ທ່ານພຣະອານົນທ໌ຕອບໄປຢ່າງນີ້ວ່າ ເກລົ້າຂ້ານ້ອຍ ບໍ່ສາມາຖຈະຣະບຸນາມຂອງພຣະເຖຣະໄດ້ ເພາະພຣະເຖຣະເປັນທີ່ເຄົາຣົພຂອງເກລົ້າຂ້ານ້ອຍ. ກິກຍຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເຣົາອນຸຍາຕໃຫ້ສູຕຣະບຸໂຄຕຣໄດ້.

ອຸປສົມບົທຄູ່

[໑໔໐] ກໍໂດຍສມັຍນັ້ນແລ ທ່ານພຣະມຫາກັສສປມີອຸປສັມປທາເປກຂະຢູ່ ໒ ຄົນ. ທ່ານທັງສອງແກ່ງແຍ່ງກັນວ່າ ເຮົາຈັກອຸປສົມບົທກ່ອນ ເຮົາຈັກອຸປສົມບົທກ່ອນ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍເຮົາອນຸຍາຕໃຫ້ທຳອຸປສັມປທາເປກຂະ ໒ ອົງຄ໌ໃນອນຸສາວນາດຽວກັນ.

ອຸປສົມບົທຄາວລະ ໓ ຄົນ

ສມັຍຕໍ່ມາ ພຣະເຖຣະຫຼາຍອົງຄ໌ຕ່າງມີອຸປສັມປທາເປກຂະຫຼາຍຄົນດ້ວຍກັນ. ພວກທ່ານຕ່າງແກ່ງແຍ່ງກັນວ່າ ເຮົາຈັກອຸປສົມບົທກ່ອນ ເຮົາຈັກອຸປສົມບົທກ່ອນ. ພຣະເຖຣະທັ້ງຫຼາຍຈຶ່ງຕັດສິນວ່າ ເອົາເຖາະພວກເຮົາຈະທຳອຸປສັມປທາເປກຂະທຸກຄົນໃນອນຸສາວນາດຽວກັນ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ທຳອຸປສັມປທາເປກຂະ ໃນອນຸສາວນາດຽວກັນຄາວລະ ໒ ອົງຄ໌ ໓ ອົງຄ໌ ແຕ່ກາຣສູຕນັ້ນແລ ຕ້ອງມີອຸປັຊຊາຍ໌ອົງຄ໌ດຽວກັນ ຈະມີອຸປັຊຊາຍ໌ຕ່າງກັນບໍ່ໄດ້ເປັນອັນຂາດ.

ນັບອາຍຸ ໒໐ ປີທັ້ງຢູ່ໃນຄັຣກ໌
ພຣະກຸມາຣກັສສປເປັນຕົວຢ່າງ

[໑໔໑] ກໍໂດຍສມັຍນັ້ນແລ ທ່ານພຣະກຸມາຣກັສສປມີອາຍຸຄົບ ໒໐ ປີທັ້ງຢູ່ໃນ**ຄັຣກ໌**[3]ຈຶ່ງໄດ້ອຸປສົມບົທ. ຕໍ່ມາທ່ານໄດ້ມີຄວາມດຳຣິວ່າ ພຣະຜູ້ມີພຣະກາຄທຣົງບັນຍັຕິໄວ້ວ່າ ບຸຄຄົລມີອາຍຸຫຍ່ອນ ໒໐ ປີ ກິກຂຸບໍ່ຄວຣອຸປສົມບົທໃຫ້ ກໍເຮົາມີອາຍຸຄົບ ໒໐ ທັ້ງຢູ່ໃນຄັຣກ໌ຈຶ່ງໄດ້ອຸປສົມບົທ ຈະເປັນອັນອຸປສົມບົທຫຼືບໍ່ນໍ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຈິຕດວງແຣກໃດເກີດແລ້ວໃນອຸທອຣມາຣດາ ວິญญາຓດວງແຣກປາກົຕແລ້ວ ອາສັຍຈິຕດວງແຣກ ວິญญາຓດວງແຣກນັ້ນນັ່ນແຫຼະເປັນຄວາມເກີດຂອງສັຕວ໌ນັ້ນ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ອຸປສົມບົທກຸລບຸຕຣ໌ມີອາຍຸຄົບ ໒໐ ປີ ທັ້ງຢູ່ໃນຄັຣກ໌.

---

[3] **ຄັຣກ໌** ທ້ອງ, ລູກໃນທ້ອງ, ທ້ອງ

ສູຕຖາມອັນຕຣາຍິກັສັມມ໌ ໑໓ ຂໍ້

[໑໔໔] ກໍໂດຍສມັຍນັ້ນແລ ພວກກຸລບຸຕຣ໌ທີ່ອຸປສົມບົທແລ້ວປາກົຕເປັນໂຣຄຂີ້ເຮື້ອນກໍມີ ເປັນຝີກໍມີ ເປັນໂຣຄກາກກໍມີ ເປັນໂຣຄມອງຄູ່ກໍມີ ເປັນໂຣຄລົມບ້າຫມູກໍມີ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍເຮົາອນຸຍາຕໃຫ້ກິກຂຸຜູ້ໃຫ້ອຸປສົມບົທ ຖາມອັນຕຣາຍິກັສັມມ໌ ໑໓ ຂໍ້.

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣຖາມອຸປສັມປທາເປກຂະຢ່າງນີ້:-

ອັນຕຣາຍິກັສັມມ໌

ອາພາຂເຫັນປານນີ້ຂອງເຈົ້າມີບໍ່? ຄື ໂຣຄຂີ້ເຮື້ອນ ຝີ ໂຣຄກາກ ໂຣຄມອງຄູ່ ລົມບ້າຫມູ? ເຈົ້າເປັນມນຸษຍ໌ບໍ່ ເປັນຊາຍບໍ່ ເປັນ**ໄທ**[4]ບໍ່ ບໍ່ມີຫນີ້ສິນບໍ່ ບໍ່ແມ່ນຣາຊກັຕບໍ່ ມາຣດາບິດາອນຸຍາຕແລ້ວບໍ່ ມີປີຄົບ ໒໐ ແລ້ວບໍ່ ບາຕຣ໌ຈີວຣຂອງເຈົ້າມີຄົບແລ້ວບໍ່ ເຈົ້າຊື່ຫຍັງອຸປັຊຊາຍ໌ຂອງເຈົ້າຊື່ຫຍັງ?

ສອນຊ້ອມກ່ອນຖາມອັນຕຣາຍິກັສັມມ໌

ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍຖາມອັນຕຣາຍິກັສັມມ໌ກະພວກອຸປສັມປທາເປກຂະ ທີ່ຍັງບໍ່ໄດ້ສອນຊ້ອມ. ພວກອຸປສັມປທາເປກຂະຍ່ອມສະທົກສະທ້ານ ເກີ້ເຂີນ ບໍ່ອາຈຈະຕອບໄດ້. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສອນຊ້ອມກ່ອນ ແລ້ວຈຶ່ງຖາມອັນຕຣາຍິກັສັມມ໌ທີຫລັງ.

ກິກຂຸທັ້ງຫຼາຍສອນຊ້ອມໃນທ່າມກາງສົງฆ໌ນັ້ນນັ່ນແຫຼະ. ພວກອຸປສັມປທາເປກຂະຍ່ອມສະທົກສະທ້ານ ເກີ້ເຂີນ ບໍ່ອາຈຕອບໄດ້ເຫມືອນຢ່າງເດີມ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສອນຊ້ອມ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວຈຶ່ງຖາມອັນຕຣາຍິກັສັມມ໌ໃນທ່າມກາງສົງฆ໌.

ດູຣາກິກຂຸທັ້ງຫຼາຍ ກໍແລຄວຣສອນຊ້ອມອຸປສັມປທາເປກຂະຢ່າງນີ້:-

ຄຳບອກບາຕຣ໌ຈີວຣ

ຄວຣໃຫ້ອຸປສັມປທາເປກຂະຖືອຸປັຊຊາຍ໌ກ່ອນ ຄັ້ນແລ້ວຄວຣບອກບາຕຣ໌ຈີວຣວ່າ ນີ້ບາຕຣ໌ຂອງເຈົ້ານີ້ຜ້າທາບຂອງເຈົ້າ ນີ້ຜ້າຫົ່ມຂອງເຈົ້າ ນີ້ຜ້ານຸ່ງຂອງເຈົ້າ ເຈົ້າຈົ່ງໄປຢືນ ໓ ຢູ່ພຸ້ນ.

---

[4] **ໄທ** ອິສຣະ, ຄວາມເປັນອິສຣະ

ກິກຂຸທັ້ງຫຼາຍທີ່ໂງ່ ບໍ່ສລາດ ຍ່ອມສອນຊ້ອມ ເຫຼົ່າອຸປສັມປທາເປກຂະທີ່ຖືກສອນຊ້ອມບໍ່ດີ ຍ່ອມສະທົກສະທ້ານ ເກີ້ເຂີນ ບໍ່ອາຈຕອບໄດ້. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸຜູ້ໂງ່ ບໍ່ສລາດ ບໍ່ຄວຣສອນຊ້ອມ ອົງຄ໌ໃດສອນຊ້ອມ ຕ້ອງອາບັຕິທຸກກົຏ. ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ສລາດ ຜູ້ສາມາຖ ສອນຊ້ອມ.

ບັຣດາກິກຂຸຜູ້ທີ່ຍັງບໍ່ໄດ້ຮັບສົມມຸຕິ ຍ່ອມສອນຊ້ອມ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸທີ່ຍັງບໍ່ໄດ້ຮັບສົມມຸຕິ ບໍ່ຄວຣສອນຊ້ອມ ອົງຄ໌ໃດສອນຊ້ອມ ຕ້ອງອາບັຕິທຸກກົຏ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸທີ່ໄດ້ຮັບສົມມຸຕິແລ້ວສອນຊ້ອມ.

ດູຣາກິກຂຸທັ້ງຫຼາຍ ກໍແລຄວຣສົມມຸຕິ ດັ່ງຕໍ່ໄປນີ້:-

ວິຣີສົມມຸຕິກິກຂຸເປັນຜູ້ສອນຊ້ອມ

ຕົນເອງຄວຣສົມມຸຕິຕົນກໍໄດ້ ຫຼືກິກຂຸອົງຄ໌ອື່ນ ຄວຣສົມມຸຕິກິກຂຸອື່ນກໍໄດ້.

ຢ່າງໃດລະ ຕົນເອງຄວຣສົມມຸຕິຕົນເອງ? ຄື ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້. ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ຂ້າພເຈົ້າຄວຣສອນຊ້ອມຜູ້ມີຊື່ນີ້.

ຢ່າງນີ້ ຊື່ວ່າຕົນເອງສົມມຸຕິຕົນເອງ.

ຢ່າງໃດລະ ກິກຂຸອົງຄ໌ອື່ນ ຄວຣສົມມຸຕິກິກຂຸອົງຄ໌ອື່ນ? ຄື ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ທ່ານຜູ້ມີຊື່ນີ້ຄວຣສອນຊ້ອມຜູ້ມີຊື່ນີ້.

ຢ່າງນີ້ ຊື່ວ່າກິກຂຸອົງຄ໌ອື່ນສົມມຸຕິກິກຂຸອົງຄ໌ອື່ນ.

ກິກຂຸຜູ້ໄດ້ຮັບສົມມຸຕິແລ້ວນັ້ນ ຄວຣເຂົ້າໄປຫາອຸປສັມປທາເປກຂະ ແລ້ວກ່າວຢ່າງນີ້ ວ່າດັ່ງນີ້:-

ຄໍາສອນຊ້ອມອັນຕຣາຢິກັສັມມ໌

ແນ່ະຜູ້ມີຊື່ນີ້ ເຈົ້າຟັງນະ ນີ້ເປັນກາລສັຕຍ໌ ກາລຈິງຂອງເຈົ້າ ເມື່ອທ່ານຖາມໃນທ່າມກາງສົງฆ໌ເຖິງສິ່ງອັນເກີດແລ້ວ ມີຢູ່ ຄວຣບອກວ່າ ບໍ່ມີ ຄວຣບອກວ່າບໍ່ມີ ເຈົ້າຢ່າສະທົກສະທ້ານແລ້ວແລ ເຈົ້າຢ່າ

ໄດ້ເປັນຜູ້ເກົ້າແລ້ວແລ ກິກຂຸທັງຫຼາຍຈັກຖາມເຈົ້າຢ່າງນີ້ ອາພາສເຫັນປານນີ້ຂອງເຈົ້າມີບໍ່? ຄື ໂຣຄຂີ້ເຮື້ອນ ຝີ ໂຣຄກູາກ ໂຣຄມອງຄູ່ ລົມບ້າຫມູ? ເຈົ້າເປັນມນຸษย์ບໍ່ ເປັນຊາຍບໍ່ ເປັນໄທບໍ່ ບໍ່ມີຫນີ້ສິນບໍ່ ບໍ່ແມ່ນຣາຊກັຕບໍ່ ມາຣດາບິດາອນຸຍາຕແລ້ວບໍ່ ມີປີຄົບ ໒໐ ແລ້ວບໍ່ ບາຕຣ໌ ຈີວຣຂອງເຈົ້າມີຄົບແລ້ວບໍ່ ເຈົ້າຊື່ຫຍັງ ອຸປັຊຊາຍ໌ຂອງເຈົ້າຊື່ຫຍັງ?

ກິກຂຸຜູ້ສອນຊ້ອມກັບອຸປສັມປທາເປກຂະຢ່າງມາດ້ວຍກັນ ແຕ່ທັງສອງບໍ່ຄວຣຢ່າງມາພ້ອມກັນ ຄື ກິກຂຸຜູ້ສອນຊ້ອມຕ້ອງມາກ່ອນ ແລ້ວປະກາສໃຫ້ສົງฆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ຄຳເອີ້ນອຸປສັມປທາເປກຂະເຂົ້າມາ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້. ຂ້າພເຈົ້າສອນຊ້ອມເຂົາແລ້ວ. ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ. ຂໍຜູ້ມີຊື່ນີ້ຄວຣມາ.

ຄວຣເອີ້ນອຸປສັມປທາເປກຂະວ່າ ເຈົ້າຈົ່ງມາ.

ຄວຣໃຫ້ອຸປສັມປທາເປກຂະນັ້ນຫົ່ມຜ້າພາດບ່າ ໃຫ້ຂາບຕີນກິກຂຸທັງຫຼາຍ ໃຫ້ນັ່ງຫຢອງຫຢໍ້ ໃຫ້ປະຄອງອັຍຊລີແລ້ວ ຄວຣໃຫ້ຂໍອຸປສົມບົທດັ່ງນີ້:-

ຄຳຂໍອຸປສົມບົທ

ຂ້າພເຈົ້າຂໍອຸປສົມບົທຕໍ່ສົງฆ໌ ຂ້ານ້ອຍ ຂໍສົງฆ໌ໂປຼດຍົກຂ້າພເຈົ້າຂຶ້ນເຖີດ ເຈົ້າຂ້າ.

ຂ້າພເຈົ້າຂໍອຸປສົມບົທຕໍ່ສົງฆ໌ ເປັນຄັ້ງທີ່ສອງ ຂ້ານ້ອຍ ຂໍສົງฆ໌ໂປຼດຍົກຂ້າພເຈົ້າຂຶ້ນເຖີດ ເຈົ້າຂ້າ.

ຂ້າພເຈົ້າຂໍອຸປສົມບົທຕໍ່ສົງฆ໌ ເປັນຄັ້ງທີ່ສາມ ຂ້ານ້ອຍ ຂໍສົງฆ໌ໂປຼດຍົກຂ້າພເຈົ້າຂຶ້ນເຖີດ ເຈົ້າຂ້າ.

ຄຳສົມມຸຕິຕົນເພື່ອຖາມອັນຕຣາຍິກັສມມ໌

ກິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້. ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ. ຂ້າພເຈົ້າອາຈຈະຖາມອັນຕຣາຍິກັສມມ໌ຕໍ່ຜູ້ມີຊື່ນີ້ ດັ່ງນີ້:-

ຄຳຖາມອັນຕຣາຍິກັສມມ໌

ແນ່ະ ຜູ້ມີຊື່ນີ້ ເຈົ້າຟັງນະ ນີ້ເປັນກາລສັຕຍ໌ ກາລຈິງຂອງເຈົ້າ ເຮົາຈະຖາມສິ່ງທີ່ເກີດແລ້ວ ມີຢູ່ ຄວຣບອກວ່າມີ ບໍ່ມີ ຄວຣບອກວ່າບໍ່ມີ ອາພາສເຫັນປານນີ້ຂອງເຈົ້າມີບໍ່? ຄື ໂຣຄຂີ້ເຮື້ອນ ຝີ ໂຣຄກູາກ

ໂຣຄມອງຄູ່ ລົມບ້າໝູ? ເຈົ້າເປັນມນຸษຍ໌ບໍ່ ເປັນຊາຍບໍ່ ເປັນໄທບໍ່ ບໍ່ມີໜີ້ສິນບໍ່ ບໍ່ແມ່ນຣາຊະພັຕບໍ່ ມາຣດາບິດາອນຸຍາຕແລ້ວບໍ່ ມີປີຄົບ ໒໐ ແລ້ວບໍ່ ບາຕຣ໌ຈີວຣຂອງເຈົ້າມີຄົບແລ້ວບໍ່ ເຈົ້າຊື່ຫຍັງ ອຸປັຊຊາຍ໌ຂອງເຈົ້າຊື່ຫຍັງ?

ກັມມ໌ວາຈາອຸປສົມບົທ

ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍລັຕຕິຈຕຸຕຖກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸທທິ໌ແລ້ວຈາກອັນຕຣາຍິກັສມມ໌ທັ້ງຫຼາຍ. ບາຕຣ໌ຈີວຣຂອງເຂົາຄົບແລ້ວ. ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງฆ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ. ສົງฆ໌ຄວຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸທທິ໌ແລ້ວຈາກອັນຕຣາຍິກັສມມ໌ທັ້ງຫຼາຍ. ບາຕຣ໌ຈີວຣຂອງເຂົາຄົບແລ້ວ. ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງฆ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ສົງฆ໌ອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ກາຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສອງ. ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸທທິ໌ແລ້ວຈາກອັນຕຣາຍິກັສມມ໌ທັ້ງຫຼາຍ. ບາຕຣ໌ຈີວຣຂອງເຂົາຄົບແລ້ວ. ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງฆ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ສົງฆ໌ອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ກາຣອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ຂ້າພເຈົ້າກ່າວຄວາມນີ້ເປັນຄັ້ງທີ່ສາມ. ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜູ້ມີຊື່ນີ້ຜູ້ນີ້ ເປັນອຸປສັມປທາເປກຂະຂອງທ່ານຜູ້ມີຊື່ນີ້ ບໍຣິສຸທທິ໌ແລ້ວຈາກອັນຕຣາຍິກັສມມ໌ທັ້ງຫຼາຍ. ບາຕຣ໌ຈີວຣຂອງເຂົາຄົບແລ້ວ. ຜູ້ມີຊື່ນີ້ຂໍອຸປສົມບົທຕໍ່ສົງฆ໌ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ສົງฆ໌ອຸປສົມບົທ

ຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ. ການອຸປສົມບົທຜູ້ມີຊື່ນີ້ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວນເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວນເວົ້າ.

ຜູ້ມີຊື່ນີ້ສົງຄ໌ອຸປສົມບົທແລ້ວ ມີທ່ານຜູ້ມີຊື່ນີ້ເປັນອຸປັຊຊາຍະ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ດ້ວຍຢ່າງນີ້.

ອຸປສົມບົທກັມມ໌ ຈົບ.

ພຣະພຸທສານຸຍາຕໃຫ້ບອກນິສສັຍ ໔

[໑໔໓] ທັນໃດນັ້ນແຫຼະ ຄວນວັດເງົາ ຄວນບອກປະມານແຫ່ງຣະດູ ຄວນບອກສ່ວນແຫ່ງວັນ ຄວນບອກສັງຄີຕິ ຄວນບອກນິສສັຍ ໔ ວ່າດັ່ງນີ້:-

໑. ບັຣພຊາອາສັຍໂກຊນະ ຄືຄຳເຂົ້າອັນຫາໄດ້ດ້ວຍກຳລັງປີແຂ້ງ ທ່ານຄວນເຮັດອຸຕສາຫະໃນຂໍ້ນັ້ນຈົນຕລອດຊີວິຕ. **ອຕິເຣກລາກ**[5] ຄືກັຕຖວາຍສົງຄ໌ ກັຕຂເພາະສົງຄ໌ ການນິມົນຕ໌ ກັຕຖວາຍຕາມສລາກ ກັຕຖວາຍໃນປັກຂ໌ ກັຕຖວາຍໃນວັນອຸໂບສົຖ ກັຕຖວາຍໃນວັນປາຕິບົທ.

໒. ບັຣພຊາອາສັຍບັງສຸກຸລຈີວຣ ທ່ານຄວນເຮັດອຸຕສາຫະໃນຂໍ້ນັ້ນຈົນຕລອດຊີວິຕ. ອຕິເຣກລາກ ຄື ຜ້າເປືອກໄມ້ ຜ້າຝ້າຍ ຜ້າໄຫມ ຜ້າຂົນສັຕວ໌ ຜ້າປ່ານ ຜ້າແກມກັນ.

໓. ບັຣພຊາອາສັຍໂຄນຕົ້ນໄມ້ເປັນເສນາສນະ ທ່ານຄວນອຸຕສາຫະໃນຂໍ້ນັ້ນຈົນຕລອດຊີວິຕ. ອຕິເຣກລາກ ຄືວິຫານ ເຮືອນມຸງແຖບດຽວ ເຮືອນຊັ້ນ ເຮືອນໂລ້ນ ຖ້ຳ.

໔. ບັຣພຊາອາສັຍມູຕຣ໌ເນົ່າເປັນຢາ ທ່ານຄວນເຮັດອຸຕສາຫະໃນຂໍ້ນັ້ນຈົນຕລອດຊີວິຕ. ອຕິເຣກລາກ ຄືເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ.

ນິສສັຍ ໔ ຈົບ.

ອກຣຕິຍກິຈ ໔

[໑໔໔] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍອຸປສົມບົທກິກຂຸອົງຄ໌ນຶ່ງແລ້ວ ຖິ້ມໄວ້ແຕ່ລຳພັງແລ້ວຫລີກໄປ. ທ່ານຍ່າງມາທີຫລັງແຕ່ອົງຄ໌ດຽວ ໄດ້ພົບກັຣຍາເກົ່າເຂົ້າ ຓ ຣະຫວ່າງທາງ. ນາງໄດ້ຖາມວ່າ ເວລານີ້ທ່ານບວຊແລ້ວບໍ່?

---

[5] **ອຕິເຣກລາກ** ລາກເຫລືອເຟືອ, ລາກສ່ວນພິເສຫ, ລາກເກີນປົກກະຕິ

ກິກຂຸນັ້ນຕອບວ່າ ຂ້ານ້ອຍ ລົບບວຊແລ້ວ.

ນາງຈຶ່ງເວົ້າຊວນວ່າ ເມຖຸນສັມມ໌ພວກບັຣພຊິຕຫາໄດ້ຍາກ ນິມົນຕ໌ທ່ານມາເສພເມຖຸນສັມມ໌.

ກິກຂຸນັ້ນໄດ້ເສພເມຖຸນສັມມ໌ໃນນາງແລ້ວ ໄດ້ໄປເຖິງທີຫລັງຊ້າໄປ. ກິກຂຸທັ້ງຫຼາຍຖາມວ່າ ອາວຸໂສ ທ່ານມົວເຮັດຫຍັງຊັກຊ້າເຊັ່ນນີ້.? ລາວໄດ້ແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫຼາຍ. ກິກຂຸທັ້ງຫຼາຍຈຶ່ງ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະພຸທສານຸຍາຕໃຫ້ບອກອກຣະນີຍກິຈ ໔

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະ ເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ໃຫ້ ອຸປສົມບົທແລ້ວໃຫ້ກິກຂຸຢູ່ເປັນເພື່ອນ ແລະໃຫ້ບອກອກຣະນີຍກິຈ ໔ ດັ່ງຕໍ່ໄປນີ້:-

໑. ອັນກິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວຣເສພເມຖຸນສັມມ໌ ໂດຍທີ່ສຸດແມ້ໃນສັຕວ໌ດິຣັຈສານໂຕແມ່. ກິກຂຸໃດເສພເມຖຸນສັມມ໌ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ປຽບເຫມືອນບຸຣຸษ ຖືກຕັດຫົວແລ້ວ ບໍ່ອາຈຈະມີສຣີຣະຄຸມກັນນັ້ນເປັນຢູ່ ກິກຂຸກໍເຫມືອນກັນ ເສພເມຖຸນສັມມ໌ແລ້ວ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ການນັ້ນ ທ່ານບໍ່ຄວຣທຳຕລອດຊີວິຕ.

໒. ອັນກິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວຣຖືເອົາຂອງອັນເຂົາບໍ່ໄດ້ໃຫ້ ເປັນສ່ວນຂໂມຍ ໂດຍທີ່ ສຸດໝາຍເອົາເຖິງເສັ້ນຫຍ້າ. ກິກຂຸໃດຖືເອົາຂອງອັນເຂົາບໍ່ໄດ້ໃຫ້ ເປັນສ່ວນຂໂມຍ ໄດ້ຣາຄາກີບນຶ່ງກໍດີ ຄວຣແກ່ຣາຄາກີບນຶ່ງກໍດີ ເກີດກີບນຶ່ງກໍດີ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ປຽບເຫມືອນໃບໄມ້ເຫລືອງຫລົ່ນຈາກຂົ້ວແລ້ວບໍ່ອາຈຈະເປັນຂອງຂຽວສົດ. ກິກຂຸກໍເຫມືອນກັນ ຖືເອົາ ຂອງອັນເຂົາບໍ່ໄດ້ໃຫ້ ເປັນສ່ວນຂໂມຍ ໄດ້ຣາຄາກີບນຶ່ງກໍດີ ຄວຣແກ່ຣາຄາກີບນຶ່ງກໍດີ ເກີນກີບນຶ່ງ ກໍດີ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ການນັ້ນ ທ່ານບໍ່ຄວຣທຳຕລອດຊີວິຕ.

໓. ອັນກິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວຣທຳຮ້າຍສັຕວ໌ຈາກຊີວິຕ ໂດຍທີ່ສຸດໝາຍເອົາເຖິງ ມົດດຳມົດແດງ. ກິກຂຸໃດທຳຮ້າຍກາຍມນຸษຍ໌ຈາກຊີວິຕ ໂດຍທີ່ສຸດໝາຍເອົາເຖິງຍັງຄັຣກ໌ໃຫ້ຕົກ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ປຽບເຫມືອນສິລາໜາແຕກສອງປ່ຽງແລ້ວ ເປັນຂອງກັບຕໍ່ກັນບໍ່ໄດ້. ກິກຂຸກໍເຫມືອນກັນ ທຳຮ້າຍກາຍມນຸษຍ໌ຈາກຊີວິຕແລ້ວ ບໍ່ເປັນສມຓະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ການນັ້ນ ທ່ານບໍ່ຄວຣທຳຕລອດຊີວິຕ.

໔. ອັນກິກຂຸຜູ້ອຸປສົມບົທແລ້ວ ບໍ່ຄວຣເວົ້າອວດອຸຕຕຣິມນຸສສັມມ໌ ໂດຍທີ່ສຸດວ່າ ເຮົາຍິນດີຍິ່ງ ໃນເຮືອນວ່າງເປົ່າ. ກິກຂຸໃດມີຄວາມປັຕຖນາລາມົກ ອັນຄວາມປັຕຖນາລາມົກຄອບງຳແລ້ວ ເວົ້າອວດ

ອຸຕຕຣິມນຸສສທັມມ໌ ອັນບໍ່ມີຢູ່ ອັນບໍ່ຈິງ ຄືຊານກໍດີ ວິໂມກຂ໌ກໍດີ ສມາທິກໍດີ ສມາບັຕິກໍດີ ມັຄຄ໌ກໍດີ ຜົລກໍດີ ບໍ່ເປັນສມຕະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ປຽບເຫມືອນຕົ້ນຕາລມີຍອດດ້ວນແລ້ວ ບໍ່ອາຈຈະງອກອີກ ກິກຂຸກໍເຫມືອນກັນ ມີຄວາມປັຕຖນາລາມົກ ອັນຄວາມປັຕຖນາລາມົກຄອບງໍາແລ້ວ ເວົ້າອວດອຸຕຕຣິມນຸສສທັມມ໌ ອັນບໍ່ມີຢູ່ ອັນບໍ່ເປັນຈິງ ບໍ່ເປັນສມຕະ ບໍ່ເປັນເຊື້ອສາຍພຣະສາກຍບຸຕຣ໌. ກາຣນັ້ນ ທ່ານບໍ່ຄວຣທໍາຕລອດຊີວິຕ.

ອກຣຕິຍກິຈ ໔ ຈົບ.

ເຣື່ອງກິກຂຸຜູ້ຖືກສົງຄ໌ຍົກເສັຽເປັນຕົ້ນ

[໑໔໕] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຖືກສົງຄ໌ຍົກເສັຽ ການບໍ່ເຫັນອາບັຕິ ໄດ້ສິກແລ້ວ. ເຂົາກັບມາຂໍອຸປສົມບົທຕໍ່ກິກຂຸທັ້ງຫຼາຍອີກ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງສແດງວິທີປຕິບັຕິ ດັ່ງນີ້:-

ວິທີປຕິບັຕິໃນກິກຂຸຜູ້ຖືກຍົກເສັຽ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນທັມມ໌ວິນັຍນີ້ ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິ ສິກໄປ. ທ່ານກັບມາຂໍອຸປສົມບົທຕໍ່ກິກຂຸທັ້ງຫຼາຍອີກ. ຄວຣສອບຖາມເຂົາເຊັ່ນນີ້ວ່າ ເຈົ້າຈັກເຫັນອາບັຕິນັ້ນບໍ່? ຖ້າເຂົາຕອບວ່າ ຂ້ານ້ອຍຈັກເຫັນໂດຍຂ້ານ້ອຍ ຄວຣໃຫ້ບັຣພຊາ ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ເຫັນໂດຍຂ້ານ້ອຍບໍ່ຄວຣໃຫ້ບັຣພຊາ. ຄັ້ນໃຫ້ບັຣພຊາແລ້ວ ຄວຣຖາມວ່າ ເຈົ້າຈັກເຫັນອາບັຕິນັ້ນບໍ່? ຖ້າເຂົາຕອບວ່າ ຂ້ານ້ອຍຈັກເຫັນໂດຍຂ້ານ້ອຍ ຄວຣໃຫ້ອຸປສົມບົທ, ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ເຫັນໂດຍຂ້ານ້ອຍ ບໍ່ຄວຣໃຫ້ອຸປສົມບົທ. ຄັ້ນໃຫ້ອຸປສົມບົທແລ້ວ ຄວຣຖາມວ່າ ທ່ານຈັກເຫັນອາບັຕິນັ້ນບໍ່? ຖ້າທ່ານຕອບວ່າ ຂ້ານ້ອຍຈັກເຫັນໂດຍຂ້ານ້ອຍ ຄວຣເອີ້ນເຂົ້າຫມູ່ ຖ້າທ່ານຕອບວ່າ ຂ້ານ້ອຍຈະບໍ່ເຫັນໂດຍຂ້ານ້ອຍ ບໍ່ຄວຣເອີ້ນເຂົ້າຫມູ່. ຄັ້ນເອີ້ນເຂົ້າຫມູ່ແລ້ວ ຄວຣຖາມວ່າ ທ່ານເຫັນອາບັຕິນັ້ນບໍ່? ຖ້າເຫັນ ກາຣເຫັນໄດ້ຢ່າງນີ້ ນັ່ນເປັນກາຣດີ ຫາກບໍ່ເຫັນ ເມື່ອໄດ້ສາມັຄຄີ ຄວຣຍົກເສັຽອີກ ເມື່ອບໍ່ໄດ້ສາມັຄຄີ ບໍ່ເປັນອາບັຕິໃນເພາະສົມໂກຄ ແລະຢູ່ຮ່ວມກັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນທັມມ໌ວິນັຍນີ້ ຖືກສົງຄ໌ຍົກເສັຽການບໍ່ຍອມທໍາຄືນອາບັຕິ ສິກໄປ. ທ່ານກັບມາຂໍອຸປສົມບົທຕໍ່ກິກຂຸທັ້ງຫຼາຍອີກ. ຄວຣສອບຖາມເຂົາເຊັ່ນນີ້ວ່າ ເຈົ້າຈະທໍາຄືນອາບັຕິນັ້ນບໍ່? ຖ້າເຂົາຕອບວ່າ ຂ້ານ້ອຍຈະທໍາຄືນໂດຍຂ້ານ້ອຍ ຄວຣໃຫ້ບັຣພຊາ, ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ທໍາຄືນ ບໍ່ຄວຣໃຫ້ບັຣພຊາ. ຄັ້ນໃຫ້ບັຣພຊາແລ້ວ ຄວຣຖາມວ່າ ເຈົ້າຈະທໍາຄືນອາບັຕິນັ້ນບໍ່?

ຖ້າເຂົາຕອບວ່າ ຂ້ານ້ອຍຈະທຳຄືນໂດຍຂ້ານອັຍ ຄວຣໃຫ້ອຸປສົມບົທ, ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ທຳຄືນໂດຍຂ້ານອັຍບໍ່ຄວຣໃຫ້ອຸປສົມບົທ. ຄັ້ນໃຫ້ອຸປສົມບົທແລ້ວ ຄວຣຖາມວ່າທ່ານຈະທຳຄືນອາບັຕິນັ້ນບໍ່? ຖ້າທ່ານຕອບວ່າຂ້ານ້ອຍຈະທຳຄືນໂດຍຂ້ານອັຍ ຄວຣເອີ້ນເຂົ້າຫມູ່, ຖ້າທ່ານຕອບວ່າ ຂ້ານ້ອຍຈະບໍ່ທຳຄືນໂດຍຂ້ານອັຍບໍ່ຄວຣເອີ້ນເຂົ້າຫມູ່. ຄັ້ນເອີ້ນເຂົ້າຫມູ່ແລ້ວ ຄວຣກ່າວວ່າ ຈົ່ງຍອມທຳຄືນອາບັຕິນັ້ນເສັຽ ຖ້າທ່ານຍອມທຳຄືນ ການທຳຄືນໄດ້ຢ່າງນີ້ ນັ່ນເປັນການດີ ຫາກບໍ່ຍອມທຳຄືນ ເມື່ອໄດ້ສາມັຄຄີ ຄວຣຍົກເສັຽອີກ ເມື່ອບໍ່ໄດ້ສາມັຄຄີບໍ່ເປັນອາບັຕິໃນເພາະສົມໂພຄແລະຢູ່ຮ່ວມກັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກໍພິກຂຸໃນສັມມ໌ວິນັຍນີ້ ຖືກສົງຄ໌ຍົກເສັຽການບໍ່ຍອມສລະທິຕຖິບາປສິກໄປ. ທ່ານກັບມາຂໍອຸປສົມບົທຕໍ່ພິກຂຸທັ້ງຫຼາຍອີກ. ຄວຣສອບຖາມເຂົາເຊັ່ນນີ້ວ່າ ເຈົ້າຈັກຍອມສລະຄືນທິຕຖິບາປນັ້ນບໍ່? ຖ້າເຂົາຕອບວ່າ ຂ້ານ້ອຍຈັກຍອມສລະຄືນໂດຍຂ້ານອັຍ ຄວຣໃຫ້ບັຣພຊາ, ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ຍອມສລະຄືນໂດຍຂ້ານອັຍ ບໍ່ຄວຣໃຫ້ບັຣພຊາ. ຄັ້ນໃຫ້ບັຣພຊາແລ້ວ ຄວຣຖາມວ່າເຈົ້າຈັກຍອມສລະຄືນທິຕຖິບາປນັ້ນບໍ່? ຖ້າເຂົາຕອບວ່າ ຂ້ານ້ອຍຈັກຍອມສລະຄືນໂດຍຂ້ານອັຍ ຄວຣໃຫ້ອຸປສົມບົທ, ຖ້າເຂົາຕອບວ່າ ຂ້ານ້ອຍຈະບໍ່ຍອມສລະຄືນໂດຍຂ້ານອັຍ ບໍ່ຄວຣໃຫ້ອຸປສົມບົທ. ຄັ້ນໃຫ້ອຸປສົມບົທແລ້ວຄວຣຖາມວ່າ ທ່ານຍອມສລະຄືນທິຕຖິບາປນັ້ນບໍ່? ຖ້າທ່ານຕອບວ່າ ຂ້ານ້ອຍຈັກຍອມສລະຄືນໂດຍຂ້ານອັຍຄວຣເອີ້ນເຂົ້າຫມູ່, ຖ້າທ່ານຕອບວ່າ ຂ້ານ້ອຍຈະບໍ່ຍອມສລະຄືນໂດຍຂ້ານອັຍ ບໍ່ຄວຣເອີ້ນເຂົ້າຫມູ່. ຄັ້ນເອີ້ນເຂົ້າຫມູ່ແລ້ວ ຄວຣກ່າວວ່າ ຈົ່ງຍອມສລະຄືນທິຕຖິບາປນັ້ນ. ຖ້າທ່ານຍອມສລະຄືນ ການຍອມສລະຄືນໄດ້ຢ່າງນີ້ ນັ່ນເປັນການດີ ຖ້າບໍ່ຍອມສລະຄືນ ເມື່ອໄດ້ສາມັຄຄີ ຄວຣຍົກເສັຽອີກ ເມື່ອບໍ່ໄດ້ສາມັຄຄີບໍ່ເປັນອາບັຕິໃນເພາະສົມໂພຄແລະຢູ່ຮ່ວມກັນ.

ວິທີປຕິບັຕິໃນພິກຂຸຜູ້ຖືກສົງຄ໌ຍົກເສັຽ ຈົບ.

ມຫາຂັນຣກະທີ່ ໑ ຈົບ.

ອຸທານຄາຖາ

[໑໘໖] ພຣະວິນັຍມີປະໂຍຊນ໌ຫຼາຍ ຄືນຳມາຊຶ່ງຄວາມສຸຂແກ່ພວກກິກຊຸ
ຜູ້ມີສີລເປັນທີ່ຮັກ ຂົ່ມພວກທີ່ມີຄວາມປັຕຖນາລາມົກ ຍົກຍ່ອງ
ພວກທີ່ມີຄວາມລະອາຍແລະທຣົງໄວ້ຊຶ່ງພຣະສາສນາ ເປັນອາຣົມຕ໌
ຂອງພຣະສັພພັລລຊິນເຈົ້າ ບໍ່ເປັນວິສັຍຂອງພວກອື່ນ ເປັນແດນ
ເກສມ ອັນພຣະຜູ້ມີພຣະກາຄທຣົງບັລລັຕິໄວ້ດີແລ້ວ ບໍ່ມີຂໍ້ທີ່ໜ້າ
ສົງສັຍ ກິກຊຸຜູ້ລລາດໃນຂັນສກັບວິນັຍ ບໍຣິວາຣ ແລະມາຕິກາ
ປຕິບັຕິດ້ວຍປັລລາອັນຫລັກແຫລມ ຊື່ວ່າຜູ້ທຳປະໂຍຊນ໌ອັນຄວຣ.
ຊົນໃດບໍ່ຮູ້ຈັກງົວ ຊົນນັ້ນຍ່ອມຮັກສາຝູງງົວບໍ່ໄດ້ລັນໃດ ກິກຊຸກໍ
ລັນນັ້ນ ເມື່ອບໍ່ຮູ້ຈັກສີລ ແນວໃດທ່ານອາຈຈະຮັກສາສັງວຣໄວ້ໄດ້.
ເມື່ອພຣະສຸຕຕັນຕະ ແລະພຣະອກິສັມມ໌ເລີະເລືອນໄປກ່ອນ
ແຕ່ພຣະວິນັຍຍັງບໍ່ເສື່ອມສູລ ພຣະສາສນາຊື່ວ່າ ຍັງຕັ້ງຢູ່ຕໍ່ໄປ.
ເພາະເຫຕຸແຫ່ງການສັງຄາຍນານັ້ນ ຂ້າພເຈົ້າຈັກປະມວລກ່າວ
ໂດຍລຳດັບຕາມຄວາມຮູ້ ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າກ່າວເພື່ອ
ຈະບໍ່ໃຫ້ຂໍ້ທີ່ທຳໄດ້ຍາກ ຄືວັຕຖຸ ນິທານ ອາບັຕິ ນັຍແລະເປຍຍາລ (ອ່ານວ່າ ເປີຍຍາລ)
ເຫລືອລົງ ຂໍທ່ານທັ້ງຫຼາຍ ຈົ່ງຮູ້ຂໍ້ນັ້ນໂດຍນັຍເຖີດ
ເຣື່ອງປະທັບຢູ່ ໓ ຄາວໄມ້ໂພຣິ໌ ເຣື່ອງປະທັບຢູ່ ໓ ຄາວໄມ້
ອຊປາລນິໂຄຣສ ເຣື່ອງປະທັບຢູ່ ໓ ຄາວໄມ້ຣາຊາຍຕນພຶກສ໌
ເຣື່ອງທ້າວສຫັມບໍດີພຣົຫ໌ມ ເຣື່ອງຣືສີອາລາຣະ ເຣື່ອງຣືສີອຸທທກະ
ເຣື່ອງອຸປກາຊີວົກ ເຣື່ອງກິກຊຸປັລຈວັຄຄີຍ໌ ຄື ໂກຕລັລລະ ວັປປະ
ກັທທິຍະ ມຫານາມະ ອັສສຊິ ເຣື່ອງຍສກຸລບຸຕຣ໌ ເຣື່ອງສຫາຍ
໔ ຄົນ ເຣື່ອງສຫາຍ ໕໐ ຄົນ ເຣື່ອງສົ່ງພຣະອຣຫັນຕ໌ທັ້ງຫມົດໄປ
ໃນທິສຕ່າງໆ ເຣື່ອງມາຣ ໔ ເຣື່ອງ ເຣື່ອງກັທທວັຄຄີຍ໌ກຸມາຣ ໓໐
ເຣື່ອງຊຟິລ ໓ ອ້າຍນ້ອງ ມີອຸຣຸເວລກັສສປເປັນຕົ້ນ ເຣື່ອງ
ໂຮງບູຊາໄຟ ເຣື່ອງທ້າວມຫາຣາຊ ເຣື່ອງທ້າວສັກກັບເຣື່ອງທ້າວ

ມຫາພຣົຫ໌ມ ເຣື່ອງປະຊາຊົນຊາວອັງຄະ ມຄົສທັ້ງຫມົດ ເຣື່ອງ
ທຮົງຊັກຜ້າບັງສຸກຸລ ເຣື່ອງສະໂບກຂຣຓີ ເຣື່ອງສີລາ ເຣື່ອງ
ຕົ້ນກຸ່ມ ເຣື່ອງຜຶ່ງຜ້າບັງສຸກຸລທີ່ແຜ່ນສີລາ ເຣື່ອງໄມ້ຫວ້າ ເຣື່ອງ
ໄມ້ໝາກມ່ວງ ເຣື່ອງໄມ້ໝາກຂາມປ້ອມ ເຣື່ອງທຮົງເກັບດອກໄມ້
ປາຣິຈັຕຕກັບເຣື່ອງຊຝິລພວກອຸຣຸເວລກັສສປຜ່າຟືນ ເຣື່ອງຕິດໄຟ
ເຣື່ອງດັບໄຟ ເຣື່ອງດຳນ້ຳ ເຣື່ອງກອງໄຟ ເຣື່ອງຝົນຕົກ ເຣື່ອງ
ແມ່ນ້ຳຄຍາ ເຣື່ອງສວນຕາລຫນຸ່ມ ເຣື່ອງພຣະເຈົ້າແຜ່ນດິນມຄົສ
ເຣື່ອງອຸປຕິສສະແລະໂກລິຕະ ເຣື່ອງກຸລບຸຕຣ໌ທີ່ມີຊື່ສຽງບວຊ
ເຣື່ອງກິກບຸນຸ່ງຫົ່ມບໍ່ຮຽບຮ້ອຍ ເຣື່ອງປະຓາມ ເຣື່ອງພຣາຫ໌ມຓ໌
ຈ່ອຍຜອມຫມົ່ນຫມອງ ເຣື່ອງປະພຶຕອນາຈາຣ ເຣື່ອງບວຊເຫັນ
ແກ່ທ້ອງ ເຣື່ອງມາຓົພ ເຣື່ອງໃຫ້ອຸປສົມບົທດ້ວຍຄຓະ ເຣື່ອງ
ອຸປັຊຊາຍະມີພັຣຍາດຽວໃຫ້ກຸລບຸຕຣ໌ບວຊ ເຣື່ອງອຸປັຊຊາຍະ
ໂງ່ ເຣື່ອງອຸປັຊຊາຍະຫລີກໄປ ເຣື່ອງຖືນິສສັຍກະອາຈາຣຍ໌
ມີພັຣຍາ ໑໐ ເຣື່ອງອັນເຕວາສິກບໍ່ປະພຶຕຊອບ ເຣື່ອງທຮົງ
ອນຸຍາຕໃຫ້ປະຓາມ ເຣື່ອງອາຈາຣຍ໌ໂງ່ໃຫ້ນິສສັຍ ເຣື່ອງນິສສັຍ
ຣະງັບ ເຣື່ອງກິກບຸປະກອບດ້ວຍອົງຄ໌ ໕ ເຣື່ອງກິກບຸປະກອບ
ດ້ວຍອົງຄ໌ ໖ ເຣື່ອງກິກບຸເຄີຍເປັນອັຍຍເດັຽຣຖີຍ໌ ເຣື່ອງຊີເປືອຍ
ເຣື່ອງບໍ່ໂກນຜົມ ເຣື່ອງຊຝິລບູຊາໄຟ ເຣື່ອງອັຍຍເດັຽຣຖີຍ໌ທີ່ເປັນ
ສາກຍະບວຊ ເຣື່ອງອາພາສ ໕ ຢ່າງ ໃນມຄົສຣັຖ ເຣື່ອງຣາຊກັຕ-
ບວຊ ເຣື່ອງອົງຄຸລິມາລໂຈຣ ເຣື່ອງພຣະເຈົ້າແຜ່ນດິນມຄົສມີພຣະ
ບໍຣົມຣາຊານຸຍາຕໄວ້ ເຣື່ອງຫ້າມບວຊນັກໂທສຫນີເຮືອນຈຳ ເຣື່ອງ
ຫ້າມບວຊນັກໂທສທີ່ອອກຫມາຍສັ່ງຈັບ ເຣື່ອງຫ້າມບວຊຄົນຖືກ
ຄ່ຽນມີຮອຍຫວາຍຕິດໂຕ ເຣື່ອງຫ້າມບວຊຄົນຖືກອາຍາສັກຫມາຍ
ໂທສ ເຣື່ອງຫ້າມບວຊຄົນມີຫນີ້ສິນ ເຣື່ອງຫ້າມບວຊທາສ ເຣື່ອງບຸຕຣ໌
ຊາຍຊ່າງທອງ ເຣື່ອງເດັກຊາຍອຸບາລີ ເຣື່ອງອຫິວາຕກໂຣຄ ເຣື່ອງ

ຕະກູລມີສຣັທສາ ເຣື່ອງສາມເຕຣກັຕຕກັບເຣື່ອງທິສຄັບແຄບ ເຣື່ອງ
ຖືນິສສັຍ ເຣື່ອງເດັກບັຣພຊາ ເຣື່ອງສິກຂາບົທຂອງສາມເຕຣ ເຣື່ອງ
ສາມເຕຣບໍ່ເຄົາຣົພກິກສຸ ເຣື່ອງຄຳນຶງວ່າຈະລງທັຕຫກັມມ໌ຢ່າງໃດ
ນໍ ເຣື່ອງລງທັຕຫກັມມ໌ ຄືຫ້າມສັງໝາຣາມທຸກແຫ່ງ ເຣື່ອງ
ຫ້າມປາກ ເຣື່ອງບໍ່ບອກພຣະອຸປັຊຊາຍະ ເຣື່ອງເກັ້ຽກ່ອມ
ສາມເຕຣໄວ້ໃຊ້ ເຣື່ອງສາມເຕຣກັຕຕກັບເຣື່ອງຫ້າມອຸປສົມບົທ
ບັຕເຫາະກ໌ ຄົນລັກເພສ ເຣື່ອງຫ້າມອຸປສົມບົທຄົນເຂົ້າຮີດເດັຽຣຖີຍ໌
ເຣື່ອງຫ້າມອຸປສົມບົທນາຄ ຄົນຂ້າມາຣດາ ຄົນຂ້າບິດາ ຄົນຂ້າ
ພຣະອຣຫັນຕ໌ ຄົນທຳຮ້າຍກິກສຸຕີ ກິກສຸຜູ້ທຳສັງໝເພທ ຄົນທຳຮ້າຍ
ພຣະພຸທສເຈົ້າຈົນເຖິງຫໍ້ພຣະໂລຫິຕ ອຸກໂຕພຍັລຊນກ ເຣື່ອງ
ຫ້າມອຸປສົມບົທຄົນບໍ່ມີອຸປັຊຊາຍະ ຄົນມີສົງໝ໌ເປັນອຸປັຊຊາຍະ
ຄົນມີຄຕະເປັນອຸປັຊຊາຍະ ຄົນມີບັຕເຫາະກ໌ເປັນອຸປັຊຊາຍະ
ເຣື່ອງຫ້າມອຸປສົມບົທຄົນບໍ່ມີບາຕຣ໌ ຄົນບໍ່ມີຈີວຣ ຄົນບໍ່ມີບາຕຣ໌
ຈີວຣທັ້ງສອງຢ່າງ ເຣື່ອງຫ້າມອຸປສົມບົທຄົນຢືມບາຕຣ໌ຢືມຈີວຣ
ຢືມທັ້ງບາຕຣ໌ຈີວຣ ຮວມ ໓ ເຣື່ອງ ເຣື່ອງຫ້າມບັຣພຊາຄົນມືດ້ວນ
ຫ້າມບັຣພຊາຄົນຕີນດ້ວນ ຫ້າມບັຣພຊາຄົນມືຕີນດ້ວນ ຫ້າມ
ບັຣພຊາຄົນຫູຂາດ ຫ້າມບັຣພຊາຄົນດັງຂາດ ຫ້າມບັຣພຊາ
ຄົນທັ້ງຫູແລະດັງຂາດ ຫ້າມບັຣພຊາຄົນນິ້ວມືນິ້ວຕີນຂາດ
ຫ້າມບັຣພຊາຄົນງ່າມມືງ່າມຕີນຂາດ ຫ້າມບັຣພຊາຄົນເອັນຂາດ
ຫ້າມບັຣພຊາຄົນມືເປັນແຜ່ນ ຫ້າມບັຣພຊາຄົນຄ່ອມ ຫ້າມ
ບັຣພຊາຄົນເຕັ້ຍ ຫ້າມບັຣພຊາຄົນຄໍພອກ ຫ້າມບັຣພຊາຄົນຖືກ
ລົງອາຓຍາສັກໝາຍໂທສ ຫ້າມບັຣພຊາຄົນຖືກຄ່ຽນມີຮອຍຫວາຍ
ຕິດໂຕ ຫ້າມບັຣພຊາຄົນມີໝາຍປະກາສຈັບ ຫ້າມບັຣພຊາຄົນ
ຕີນປຸກ ຫ້າມບັຣພຊາຄົນມີໂຣຄເຮື້ອຮັງ ຫ້າມບັຣພຊາຄົນມີຮູປຮ່າງ
ບໍ່ສົມປະກອບ ຫ້າມບັຣພຊາຄົນຕາບອດຂ້າງດຽວ ຫ້າມ
ບັຣພຊາຄົນງ່ອຍ ຫ້າມບັຣພຊາຄົນກະຈອກ ຫ້າມບັຣພຊາຄົນ

ເປັນໂຣຄອັມພາຕ ຫ້າມບັຣພຊາຄົນມີອິຣິຍາບົຖຂາດ ຫ້າມບັຣພຊາ
ຄົນແກ່ ຫ້າມບັຣພຊາຄົນຕາບອດ ໘ ຂ້າງ ຫ້າມບັຣພຊາຄົນໃບ້
ຫ້າມບັຣພຊາຄົນຫູຫນວກ ຫ້າມບັຣພຊາຄົນທັ້ງບອດແລະໃບ້
ຫ້າມບັຣພຊາຄົນທັ້ງບອດແລະຫນວກ ຫ້າມບັຣພຊາຄົນທັ້ງໃບ້
ແລະຫນວກ ຫ້າມບັຣພຊາຄົນທັ້ງບອດໃບ້ແລະຫນວກ ເຣື່ອງ
ໃຫ້ນິສສັຍແກ່ອລັຊຊີ ເຣື່ອງຖືນິສສັຍຕໍ່ອລັຊຊີ ເຣື່ອງເດີນທາງ
ໄກລ ເຣື່ອງຂໍຮ້ອງ ເຣື່ອງພິຈາຣຓາ ເຣື່ອງຈິງມາສູຕ ເຣື່ອງແຍ່ງກັນ
ອຸປສົມບົທກ່ອນ ເຣື່ອງອຸປສົມບົທມີອຸປັຊຊາຍະອົງຄ໌ດຽວ ເຣື່ອງ
ພຣະກຸມາຣກັສສປ ເຣື່ອງອຸປສັມບັນປູາກົຕຖືກໂຣຄບຽດບຽນ
ເຣື່ອງອຸປສັມປທາເປກຂະຍັງບໍ່ໄດ້ສອນຊ້ອມສະທົກສະທ້ານ ເຣື່ອງ
ສອນຊ້ອມໃນທ່າມກາງສົງຄ໌ນັ້ນແຫຼະ ເຣື່ອງຫ້າມກິກຂຸໂງ່
ສອນຊ້ອມ ເຣື່ອງຫ້າມກິກຂຸຍັງບໍ່ໄດ້ຮັບສົມມຸຕິສອນຊ້ອມ
ເຣື່ອງຜູ້ສອນຊ້ອມກັບອຸປສັມປທາເປກຂະມາພ້ອມກັນ ເຣື່ອງ
ຂໍຈິງຍົກຂຶ້ນ ເຣື່ອງຌັຕຕິຈຕຸຕຖກັມມ໌ອຸປສັມປທາ ເຣື່ອງບອກ
ນິສສັຍ ເຣື່ອງລະອຸປສັມບັນໄວ້ແຕ່ລຳພັງ ເຣື່ອງກິກຂຸຖືກສົງຄ໌ຍົກ
ເສັຽ ໑ ເຣື່ອງ.

ຮວມເຣື່ອງໃນຂັນສກະນີ້ ໑໗໔ ເຣື່ອງ.

ຫົວຂໍ້ເຣື່ອງໃນມຫາຂັນສກັບຈົບ.

ອຸໂບສົຖຂັນສກະ

ເຣື່ອງປຣິພາຊົກອັຌຌເດັຽຣຖີຍ໌

[໑໘໗] ກໍໂດຍສມັຍນັ້ນແລ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ພູເຂົາຄິຊຌກູຕ ເຂຕ ພຣະນຄຣຣາຊຄຣຶຫ໌. ຄັ້ງນັ້ນ ພວກປຣິພາຊົກອັຌຌເດັຽຣຖີຍ໌ ເຖິງວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ ຍ່ອມປະຊຸມກັນກ່າວສັມມ໌. ຄົນທັ້ງຫຼາຍເຂົ້າໄປຫາປຣິພາຊົກອັຌຌເດັຽຣຖີຍ໌ເຫຼົ່ານັ້ນເພື່ອ ຟັງສັມມ໌. ພວກເຂົາໄດ້ຄວາມຮັກ ໄດ້ຄວາມເລື່ອມໃສ ໃນພວກປຣິພາຊົກອັຌຌເດັຽຣຖີຍ໌ ປຣິພາຊົກອັຌຌເດັຽຣຖີຍ໌ຍ່ອມໄດ້ພັຄພວກ. ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົຘຣາຊ ສເດັຈໄປໃນທີ່ສງັດ ຫລີກ ເຮັ້ນຢູ່ ໄດ້ມີພຣະຣາຊປຣິວິຕົກແຫ່ງພຣະຣາຊຫຣືທັຍເກີດຂຶ້ນ ຢ່າງນີ້ວ່າ ດຽວນີ້ເຖິງວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ ພວກປຣິພາຊົກອັຌຌເດັຽຣຖີຍ໌ຍ່ອມປະຊຸມກັນກ່າວສັມມ໌ ຄົນທັ້ງຫຼາຍເຂົ້າໄປ ຫາປຣິພາຊົກອັຌຌເດັຽຣຖີຍ໌ເຫຼົ່ານັ້ນເພື່ອຟັງສັມມ໌ ພວກເຂົາໄດ້ຄວາມຮັກ ໄດ້ຄວາມເລື່ອມໃສ ໃນພວກ ປຣິພາຊົກອັຌຌເດັຽຣຖີຍ໌ ປຣິພາຊົກອັຌຌເດັຽຣຖີຍ໌ຍ່ອມໄດ້ພັຄພວກ ແນວໃດນໍພຣະຄຸຓເຈົ້າທັ້ງຫຼາຍ ຄວຣປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ແດ່ ຈຶ່ງທ້າວທ່ານເຂົ້າໄປເຝົ້າພຣະຜູ້ມີ ພຣະກາຄ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວ ປະທັບນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ. ທ້າວທ່ານປະທັບ ນັ່ງຮຽບຮ້ອຍແລ້ວ ໄດ້ທູລຂໍ້ປຣິວິຕົກນັ້ນຕໍ່ພຣະຜູ້ມີພຣະກາຄວ່າ ພຣະພຸທສເຈົ້າຂ້ານ້ອຍ ຂ້ານ້ອຍໄປໃນທີ່ ສງັດ ຫລີກເຮັ້ນຢູ່ ຓ ຕາແສງນີ້ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ດຽວນີ້ພວກປຣິພາຊົກ ອັຌຌເດັຽຣຖີຍ໌ ເຖິງວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ຍ່ອມປະຊຸມກັນກ່າວສັມມ໌ ຄົນ ທັ້ງຫຼາຍເຂົ້າໄປຫາປຣິພາຊົກອັຌຌເດັຽຣຖີຍ໌ເຫຼົ່ານັ້ນເພື່ອຟັງສັມມ໌ ພວກເຂົາໄດ້ຄວາມຮັກ ໄດ້ຄວາມ ເລື່ອມໃສ ໃນພວກປຣິພາຊົກອັຌຌເດັຽຣຖີຍ໌ ປຣິພາຊົກອັຌຌເດັຽຣຖີຍ໌ຍ່ອມໄດ້ພັຄພວກ ແນວໃດນໍ ພຣະຄຸຓເຈົ້າທັ້ງຫຼາຍ ຄວຣປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ແດ່ ຂ້ານ້ອຍ ຂໍປະທານພອຣະວໂຣກາສ ຂໍພຣະຄຸຓເຈົ້າທັ້ງຫຼາຍຄວຣປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຫ໌ແດ່ເຖີດ ພຣະພຸທສເຈົ້າຂ້ານ້ອຍ.

ຫຣົງສແດງສັມມີກະຖາ

ລຳດັບນັ້ນ ພຣະຜູ້ມີພຣະກາຄຫຣົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມເສນາມາຄົຘຣາຊຫຣົງເຫັນແຈ້ງ ສມາທານ ອາຈຫາຌ ຣ່າເຣີງດ້ວຍສັມມີກະຖາແລ້ວ. ຄັ້ນທ້າວທ່ານອັນພຣະຜູ້ມີພຣະກາຄຫຣົງຊີ້ແຈງ ໃຫ້ເຫັນແຈ້ງ

ສມາຫານ ອາຈຫານ ຣ່າເຣິງດ້ວຍສັມມີກຖາແລ້ວ ສເດັຈລຸກຈາກທີ່ປະທັບ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຣົງທຳປະທັກບິຕສເດັຈກັບໄປ.

ພຣະພຸທສານຸຍາຕວັນປະຊຸມ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປະຊຸມກັນ ໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຂ໌.

ປະຊຸມນັ່ງນິດ

[໑໔໗] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍເວົ້າກັນວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕໃຫ້ປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຂ໌. ກິກຂຸເຫຼົ່ານັ້ນຈຶ່ງປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຂ໌ ແລ້ວນັ່ງນິດເສັ່ງ. ຄົນທັ້ງຫຼາຍເຂົ້າໄປຫາກິກຂຸເຫຼົ່ານັ້ນເພື່ອຟັງສັມມ໌. ພວກເຂົາຕ່າງກໍເພັ່ງໂທສ ຕິຕຽນ ໂພນທະນາວ່າ ແນວໃດພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ປະຊຸມກັນໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຂ໌ ຈຶ່ງໄດ້ນັ່ງນິດເສັ່ງເຫມືອນສຸກຣອ້ວນລະ ສັມມ໌ນຽມກິກຂຸຜູ້ປະຊຸມກັນ ຄວຣກ່າວສັມມ໌ບໍ່ແມ່ນບໍ່? ກິກຂຸທັ້ງຫຼາຍໄດ້ຍິນພວກນັ້ນເພັ່ງໂທສ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະພຸທສານຸຍາຕໃຫ້ກ່າວສັມມ໌

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປະຊຸມກັນກ່າວສັມມ໌ ໃນວັນ ໑໔ ຄ່ຳ ໑໕ ຄ່ຳ ແລະ ໘ ຄ່ຳ ແຫ່ງປັກຂ໌.

ພຣະພຸທສານຸຍາຕປາຕິໂມກຂຸເທສ

[໑໔໘] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈໄປ ໓ ທີ່ສງັດ ຫລີກເຣັ້ນຢູ່ ໄດ້ມີພຣະປຣິວິຕົກແຫ່ງພຣະທັຍເກີດຂຶ້ນຢ່າງນີ້ວ່າ ແນວໃດນໍເຮົາຄວຣອນຸຍາຕສິກຂາບົທທີ່ເຮົາບັນຍັຕິແລ້ວແກ່ກິກຂຸທັ້ງຫຼາຍ ໃຫ້ເປັນປາຕິໂມກຂຸເທສຂອງພວກທ່ານ ປາຕິໂມກຂຸເທສນັ້ນຈະເປັນອຸໂບສົຖກັມມ໌ຂອງພວກທ່ານ. ຄັ້ນເວລາສາຍັຕຫ໌ ພຣະອົງຄ໌ສເດັຈອອກຈາກທີ່ເຣັ້ນແລ້ວ ທຣົງທຳສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາໄປໃນທີ່ສງັດ ຫລີກເຣັ້ນຢູ່ ໓

ຕາແສງນີ້ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ແນວໃດນໍເຮົາຄວຣອນຸຍາຕສິກຂາບົທທີ່ເຮົາບັນຍັຕິແລ້ວແກ່ກິກຂຸທັ້ງຫຼາຍ ໃຫ້ເປັນປາຕິໂມກຂຸເທສຂອງພວກທ່ານ ປາຕິໂມກຂຸເທສນັ້ນຈະເປັນອຸໂບສົຖກັມມ໌ຂອງພວກທ່ານ ດັ່ງນີ້ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສູຕປາຕິໂມກຂ໌.

ດູຣາກິກຂຸທັ້ງຫຼາຍ ກໍແລ ກິກຂຸສູຕສູຕຢ່າງນີ້:-

ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣເຮັດອຸໂບສົຖສູຕສູຕປາຕິໂມກຂ໌. ແມ່ນຫຍັງບຸພພກິຈຂອງສົງຄ໌? ທ່ານທັ້ງຫຼາຍຄວຣບອກຄວາມບໍຣິສຸທທິ໌. ຂ້າພເຈົ້າຈັກສູຕປາຕິໂມກຂ໌. ພວກເຮົາບັຣດາທີ່ມີຢູ່ທັ້ງໝົດຈົ່ງຟັງ ຈົ່ງໃສ່ໃຈຊຶ່ງປາຕິໂມກຂ໌ນັ້ນໃຫ້ສຳເຣັຈປະໂຍຊນ໌. ທ່ານຜູ້ໃດມີອາບັຕິ ທ່ານຜູ້ນັ້ນຄວຣເປີດເຜີຍ ເມື່ອອາບັຕິບໍ່ມີ ຄວຣນິ່ງຢູ່. ກໍດ້ວຍຄວາມເປັນຜູ້ນິ່ງແລຂ້າພເຈົ້າຈັກຮູ້ທ່ານທັ້ງຫຼາຍວ່າເປັນຜູ້ບໍຣິສຸທທິ໌. ການສູຕປະກາສກວ່າຈະຄົບ ៣ ຈົບ ໃນບໍຣິສັທເຫັນປານນີ້ຍ່ອມເປັນເໝືອນການກ່າວແກ້ລເພາະອົງຄ໌ ທີ່ຖືກຖາມຜູ້ດຽວດັ່ງນັ້ນ. ກໍກິກຂຸອົງຄ໌ໃດ ເມື່ອສູຕປະກາສກວ່າຈະຄົບ ៣ ຈົບ ຣະລຶກໄດ້ ບໍ່ຍອມເປີດເຜີຍອາບັຕິທີ່ມີຢູ່ ສັມປຊານມຸສາວາທຍ່ອມມີແກ່ກິກຂຸອົງຄ໌ນັ້ນ. ທ່ານທັ້ງຫຼາຍ ກໍສັມປຊານມຸສາວາທ ພຣະຜູ້ມີພຣະກາຄຕຣັສວ່າ ເປັນສັມມ໌ທຳອັນຕຣາຍເພາະດັ່ງນັ້ນ ກິກຂຸຕ້ອງອາບັຕິແລ້ວຣະລຶກໄດ້ ຫວັງຄວາມບໍຣິສຸທທິ໌ ຄວຣເປີດເຜີຍອາບັຕິທີ່ມີຢູ່. ເພາະເປີດເຜີຍອາບັຕິແລ້ວ ຄວາມຜາສຸກຍ່ອມມີແກ່ທ່ານ.

ນິທານຸເທສວິກັງຄ໌

[໑໕໐] ຄຳວ່າ ປາຕິໂມກຂ໌ ນີ້ ເປັນເບື້ອງຕົ້ນ ເປັນປະธານ ເປັນປະມຸຂແຫ່ງກຸສົລສັມມ໌ທັ້ງຫຼາຍ ເພາະເຫຕຸນັ້ນ ຈຶ່ງຕຣັສເອີ້ນວ່າ ປາຕິໂມກຂ໌

ຄຳວ່າ ທ່ານທັ້ງຫຼາຍ ນີ້ ເປັນຄຳກ່າວທີ່ອ່ອນຫວານ ເປັນຄຳສແດງຄວາມເຄົາຣົພ.

ຄຳວ່າ ທ່ານທັ້ງຫຼາຍ ນີ້ ເປັນຊື່ຂອງຄຳທີ່ປະກອບດ້ວຍຄວາມເຄົາຣົພແລະປະກອບດ້ວຍຄວາມຢຳເກງ.

ຄຳວ່າ ຈັກສູຕ ຄືຈັກບອກ ຈັກສແດງ ຈະທຳໃຫ້ປຣາກົຕ ຈະຣິເຣີ່ມ ຈັກເປີດເຜີຍ ຈັກຈຳແນກຈະທຳໃຫ້ຕື້ນ ຈັກປະກາສ.

ບົທວ່າ ນັ້ນ ຕຣັສເອີ້ນປາຕິໂມກຂ໌.

ຄຳວ່າ ທີ່ມີຢູ່ທັ້ງໝົດ ຄວາມວ່າ ກິກຂຸໃນບໍຣິສັທນັ້ນມີຈຳນວນເທົ່າໃດ ເປັນເຖຣະກໍຕາມ ນວກະກໍຕາມ ມັຊຊິມະກໍຕາມ ເຫຼົ່ານີ້ເອີ້ນວ່າ ທີ່ມີຢູ່ທັ້ງໝົດ.

ຄຳວ່າ ຈົ່ງຟັງໃຫ້ສຳເຣັຈປະໂຍຊນ໌ ຄວາມວ່າ ຈົ່ງຕັ້ງໃຈ ມນສິກາຣ ປະມວລເຣື່ອງທັ້ງໝົດດ້ວຍໃຈ.

ຄຳວ່າ ຈົ່ງໃສ່ໃຈ ຄວາມວ່າ ຈົ່ງເປັນຜູ້ມີຈິຕແນ່ວແນ່ ມີຈິຕບໍ່ຟຸ້ງຊ່ານ ມີຈິຕບໍ່ຊັດສ່າຍຕັ້ງໃຈຟັງ.

ຄຳວ່າ ທ່ານຜູ້ໃດມີອາບັຕິ ຄວາມວ່າ ກິກຂຸເຖຣະກໍຕາມ ນວກະກໍຕາມ ມັຊຊິມະກໍຕາມ ມີອາບັຕິ ໕ ກອງ ໂຕໃດໂຕນຶ່ງ ມີອາບັຕິ ໗ ກອງ ໂຕໃດໂຕນຶ່ງ.

ຄຳວ່າ ທ່ານຜູ້ນັ້ນຄວຣເປີດເຜີຍ ຄວາມວ່າ ກິກຂຸນັ້ນຄວຣສແດງ ຄວຣເປີດເຜີຍ ຄວຣເຣັດໃຫ້ຕື້ນ ຄວຣປະກາສໃນທ່າມກາງສົງຄ໌ ທ່າມກາງຄຒະ ຫຼືໃນບຸຄຄົລຜູ້ນຶ່ງ.

ອາບັຕິຊື່ວ່າ ບໍ່ມີ ຄື ກິກຂຸບໍ່ຕ້ອງອາບັຕິ ຫຼືວ່າຕ້ອງ ແຕ່ອອກແລ້ວ.

ຄຳວ່າ ຄວຣນິ່ງຢູ່ ຄືຄວຣນິ່ງ ບໍ່ຕ້ອງເວົ້າ.

ຄຳວ່າ ຂ້າພເຈົ້າຈັກຮູ້ວ່າເປັນຜູ້ບໍຣິສຸທຸ໌ ຄືຈັກຮູ້ ຈັກທຣົງຈຳໄວ້.

ຄຳວ່າ ຍ່ອມເປັນເໝືອນກາຣກ່າວແກ້ ຉເພາະອົງຄ໌ທີ່ຖືກຖາມຜູ້ດຽວ ຄວາມວ່າ ຄວຣຮູ້ໃນບໍຣິບັທນັ້ນວ່າ ຖາມເຮົາ ດັ່ງນີ້ ເໝືອນກິກຂຸອົງຄ໌ນຶ່ງຖືກກິກຂຸອີກອົງຄ໌ນຶ່ງຖາມ ຄວຣແກ້ດັ່ງນັ້ນ.

ບໍຣິບັທທີ່ຊື່ວ່າ ເຫັນປານນີ້ ຕຣັສເອີ້ນກິກຂຸບໍຣິບັທ.

ຄຳວ່າ ກາຣສູຕປະກາສກວ່າຈະຄົບ ໓ ຈົບ ຄວາມວ່າ ສູຕປະກາສແມ້ຄັ້ງທີ່ນຶ່ງ ສູຕປະກາສແມ້ຄັ້ງທີ່ສອງ ສູຕປະກາສແມ້ຄັ້ງທີ່ສາມ.

ບົທວ່າ ຣະລຶກໄດ້ ຄືຮູ້ ຈຳໄດ້.

ອາບັຕິທີ່ຊື່ວ່າ ມີຢູ່ ຄືກິກຂຸຕ້ອງອາບັຕິແລ້ວ ຫຼືຕ້ອງແລ້ວຍັງບໍ່ໄດ້ອອກ.

ຄຳວ່າ ບໍ່ຍອມເປີດເຜີຍ ຄວາມວ່າ ບໍ່ຍອມສແດງ ບໍ່ຍອມເປີດເຜີຍ ບໍ່ຍອມທຳໃຫ້ຕື້ນ ບໍ່ຍອມປະກາສໃນທ່າມກາງສົງຄ໌ ທ່າມກາງຄຒະ ຫຼືໃນບຸຄຄົລຜູ້ນຶ່ງ.

ຄຳວ່າ ສັມປຊານມຸສາວາທ ຍ່ອມມີແກ່ກິກຂຸອົງຄ໌ນັ້ນ ຄື ສັມປຊານມຸສາວາທ ເປັນຫຍັງ? ເປັນອາບັຕິທຸກກົຜ.

ຄຳວ່າ ພຣະຜູ້ມີພຣະກາຄຕຣັສວ່າ ເປັນສັມມ໌ອັນຕຣາຍ ຄວາມວ່າເປັນສັມມ໌ທຳອັນຕຣາຍແກ່ ຫຍັງ? ເປັນສັມມ໌ທຳອັນຕຣາຍແກ່ການບັຣລຸປຖົມຊານ ເປັນສັມມ໌ທຳອັນຕຣາຍແກ່ການບັຣລຸທຸຕິຍຊານ ເປັນ ສັມມ໌ທຳອັນຕຣາຍແກ່ການບັຣລຸຕຕິຍຊານ ເປັນສັມມ໌ທຳອັນຕຣາຍແກ່ການບັຣລຸຈຕຸຕຖຊານ ເປັນສັມມ໌ ທຳອັນຕຣາຍແກ່ການບັຣລຸຊານ ວິໂມກຂ໌ ສມາທິ ສມາບັຕິ ເນກຂັມມະ ນິສສຣຕະ ປວິເວກ ກຸສົລສັມມ໌.

ບົທວ່າ ເພາະດັ່ງນັ້ນ ຄື ເພາະເຫຕຸດັ່ງນັ້ນ.

ບົທວ່າ ຣະລຶກໄດ້ ຄືຮູ້ ຈຳໄດ້.

ບົທວ່າ ຫວັງຄວາມບໍຣິສຸທທິ໌ ຄືປະສົງຄ໌ເພື່ອອອກຈາກອາບັຕິ ປະສົງຄ໌ເພື່ອຄວາມຫມົດຈົດ.

ອາບັຕິທີ່ຊື່ວ່າ ມີຢູ່ ຄືກິກຂຸຕ້ອງອາບັຕິແລ້ວ ຫຼືຕ້ອງແລ້ວຍັງບໍ່ໄດ້ອອກ.

ຄຳວ່າ ຄວຣເປີດເຜີຍ ຄວາມວ່າ ຄວຣເຮັດໃຫ້ແຈ້ງໃນທ່າມກາງສົງຆ໌ ທ່າມກາງຄຕະ ຫຼືໃນ ບຸຄຄົລຜູ້ນຶ່ງ.

ຄຳວ່າ ເພາະເປີດເຜີຍອາບັຕິແລ້ວ ຄວາມຜາສຸກຍ່ອມມີແກ່ທ່ານ ຄວາມວ່າ ຄວາມຜາສຸກມີ ເພື່ອຫຍັງ? ຄວາມຜາສຸກມີເພື່ອບັຣລຸປຖົມຊານ ຄວາມຜາສຸກມີເພື່ອບັຣລຸທຸຕິຍຊານ ຄວາມຜາສຸກມີເພື່ອ ບັຣລຸຕຕິຍຊານ ຄວາມຜາສຸກມີເພື່ອບັຣລຸຈຕຸຕຖຊານ ຄວາມຜາສຸກມີເພື່ອບັຣລຸຊານ ວິໂມກຂ໌ ສມາທິ ສມາບັຕິ ເນກຂັມມະ ນິສສຣຕະ ປວິເວກ ກຸສົລສັມມ໌.

ສູຕປາຕິໂມກຂ໌ໃນວັນອຸໂບສົຖ

[໑໕໑] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕການສູຕ ປາຕິໂມກຂ໌ແລ້ວ ຈຶ່ງສູຕປາຕິໂມກຂ໌ທຸກມື້. ກິກຂຸທັ້ງຫຼາຍພາກັນຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສູຕປາຕິໂມກຂ໌ທຸກມື້ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຄ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສູຕປາຕິໂມກຂ໌ໃນວັນອຸໂບສົຖ.

ສມັຍຕໍ່ມາ ກິກຂຸທັ້ງຫຼາຍຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕການສູຕປາຕິໂມກຂ໌ໃນວັນ ອຸໂບສົຖແລ້ວ ຈຶ່ງສູຕປາຕິໂມກຂ໌ປັກຫ໌ລະ ໓ ຄັ້ງ ຄື ໃນວັນ ໑໔ ຄ່ຳ ມື້ ໑໕ ຄ່ຳ ແລະວັນ ໘ ຄ່ຳ ກິກຂຸ ທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸ ທັ້ງຫຼາຍ ກິກຂຸບໍ່ຄວຣສູຕປາຕິໂມກຂ໌ປັກຫ໌ລະ ໓ ຄັ້ງ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຄ.

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສູຕປາຕິໂມກຂ໌ ປັກຂ໌ລະ ໑ ຄັ້ງ ຄື ໃນວັນ ໑໔ ຄ່ຳ ຫຼື ວັນ ໑໕ ຄ່ຳ

ເຣື່ອງພຣະຈັພພັຄຄີຍ໌ສູຕປາຕິໂມກຂ໌

[໑໕໘] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ສູຕປາຕິໂມກຂ໌ແກ່ບໍຣິສັທເທົ່າທີ່ມີຢູ່ ຄືຈເພາະບໍຣິສັທຂອງຕົນໆ ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພິກຂຸບໍ່ຄວຣສູຕປາຕິໂມກຂ໌ແກ່ບໍຣິສັທເທົ່າທີ່ມີຢູ່ ຄືຈເພາະບໍຣິສັທຂອງຕົນໆ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຎ.

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕອຸໂບສົຖກັມມ໌ແກ່ພິກຂຸທັ້ງຫຼາຍ ຜູ້ພ້ອມພຽງກັນ.

ຄັ້ງນັ້ນ ພິກຂຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງບັນລັຕິອຸໂບສົຖກັມມ໌ແກ່ພິກຂຸທັ້ງຫຼາຍຜູ້ພ້ອມພຽງກັນ ດັ່ງນີ້ ແລ້ວມີຄວາມດຳຣິຕໍ່ໄປວ່າ ຄວາມພ້ອມພຽງມີພຽງເທົ່າໃດແທ້ນໍ ມີພຽງອາວາສນຶ່ງ ຫຼືທົ່ວທັ້ງແຜ່ນດິນ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕຄວາມພ້ອມພຽງ ພຽງຊົ່ວອາວາສດຽວເທົ່ານັ້ນ.

ເຣື່ອງພຣະມຫາກັປປິນເຖຣະດຳຣິຈະບໍ່ທຳອຸໂບສົຖ

[໑໕໙] ກໍໂດຍສມັຍນັ້ນແລ ທ່ານພຣະມຫາກັປປິນະພັກຢູ່ ຓ ມັທທກຸຈຈິມຣິຄທາຍວັນ ເຂຕພຣະນຄຣຣາຊຄຣິຫ໌. ຄາວນຶ່ງ ທ່ານໄປໃນທີ່ສງັດ ຫລີກເຣັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ເຮົາຄວຣໄປທຳອຸໂບສົຖ ຫຼືບໍ່ຄວຣໄປ ຄວຣໄປທຳສັງຆກັມມ໌ ຫຼືບໍ່ຄວຣໄປ ໂດຍທີ່ແທ້ເຮົາເປັນຜູ້ຫມົດຈົດແລ້ວດ້ວຍຄວາມຫມົດຈົດຢ່າງຍິ່ງ. ບ່ອນນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມປຣິວິຕົກແຫ່ງຈິຕຂອງທ່ານພຣະມຫາກັປປິນະດ້ວຍພຣະທັຍຂອງພຣະອົງຄ໌ ແລ້ວໄດ້ທຣົງຫາຍພຣະອົງຄ໌ໄປໃນຄິຊຊກູຕບັຣພົຕມາປາກົຕຢູ່ຕົງຫນ້າທ່ານພຣະມຫາກັປປິນະ ຓ ມັທທກຸຈຈິມຣິຄທາຍວັນ ປຽບເຫມືອນບຸຣຸຜມີກຳລັງຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດດັ່ງນັ້ນ ແລ້ວພຣະອົງຄ໌ປະທັບນັ່ງເຫນືອພຸທສອາສນະທີ່ເຂົາຈັດຖວາຍ. ຝ່າຍທ່ານພຣະມຫາກັປປິນະຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ພຣະຜູ້ມີພຣະກາຄຈຶ່ງໄດ້ຕຣັສຄຳນີ້ກະທ່ານພຣະມຫາກັປປິນະຜູ້ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງວ່າ ດູຣາກັປປິນະ ທ່ານໄປໃນທີ່ສງັດ ຫລີກເຣັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ເຮົາຄວຣໄປທຳອຸໂບສົຖ ຫຼືບໍ່ຄວຣໄປ ຄວຣໄປທຳສັງຆກັມມ໌ ຫຼືບໍ່ຄວຣໄປ ໂດຍທີ່ແທ້ ເຮົາເປັນຜູ້ຫມົດຈົດແລ້ວດ້ວຍຄວາມຫມົດຈົດຢ່າງຍິ່ງ ດັ່ງນີ້ບໍ່ແມ່ນບໍ່?

ທ່ານພຣະມຫາກັປປິນະທູລຮັບວ່າ ເປັນຢ່າງນັ້ນ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາພຣາຫ໌ມຕ໌ທັ້ງຫຼາຍ ຖ້າພວກທ່ານບໍ່ສັກກາຣະ ບໍ່ເຄົາຣົພ ບໍ່ນັບຖື ບໍ່ບູຊາ ຊຶ່ງອຸໂບສົຖ ເມື່ອເປັນເຊັ່ນນີ້ ໃຜລະຈັກສັກກາຣະ ເຄົາຣົພ ນັບຖື ບູຊາ ຊຶ່ງອຸໂບສົຖ ດູຣາພຣາຫ໌ມຕ໌ທ່ານຈົ່ງໄປທຳອຸໂບສົຖ ຈະບໍ່ໄປບໍ່ໄດ້ ຈົ່ງໄປທຳສັງຄກັມມ໌ ຈະບໍ່ໄປບໍ່ໄດ້.

ທ່ານພຣະມຫາກັປປິນະຮັບສນອງພຣະພຸທສພົຈນ໌ວ່າ ຢ່າງນັ້ນ ພຣະພຸທສເຈົ້າຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ທ່ານພຣະມຫາກັປປິນະເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍທັມມີກະຖາ ແລ້ວໄດ້ທຣົງຫາຍພຣະອົງຄ໌ໄປໃນທີ່ຕົງໜ້າທ່ານພຣະມຫາກັປປິນະ ໓ ມັທທກຸຈລີ-ນຮິຄຫາຍວັນ ມາປາກົຕ ໓ ຄິຊຊກູຕບັຣພົຕ ໂດຍວ່ອງໄວ ປຽບເຫມືອນບຸຣຸຫມີກຳລັງ ຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ດັ່ງນັ້ນ.

ສົມມຸຕິສີມາແລະນິມິຕແຫ່ງສີມາ

[໑໕໔] ຄັ້ງນັ້ນ ກິກສຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງບັດລັຕິວ່າ ຄວາມພ້ອມພຽງມີພຽງຊົ່ວອາວາສດຽວເທົ່ານັ້ນ ແລ້ວໄດ້ມີຄວາມປຣິວິຕົກຕໍ່ໄປວ່າ ອາວາສນຶ່ງກຳຫນົດພຽງເທົ່າໃດ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກສຸທັ້ງຫຼາຍວ່າ ດູຣາກິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສົມມຸຕິສີມາ.

ດູຣາກິກສຸທັ້ງຫຼາຍ ກໍແລຄວຣສົມມຸຕິສີມາຢ່າງນີ້:-

ວິທີສົມມຸຕິສີມາ

ຊັ້ນຕົ້ນຄວຣທັກນິມິຕ ຄື ປັພພຕນິມິຕ ປາສາຕນິມິຕ ວນນິມິຕ ຣຸກຂນິມິຕ ມັຄຄນິມິຕ ວັມມີກນິມິຕ ນທີນິມິຕ ອຸທກນິມິຕ ຄັ້ນທັກນິມິຕແລ້ວ ກິກສຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິສີມາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ນິມິຕະບຸໄວ້ໂດຍຮອບແລ້ວພຽງໃດ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິສີມາໃຫ້ມີສັງວາສເສມີກັນ ມີອຸໂບສົຖດຽວກັນ ດ້ວຍນິມິຕເຫຼົ່ານັ້ນ. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ນິມິຕະບຸໄວ້ໂດຍຮອບແລ້ວພຽງໃດ ສົງຆ໌ສົມມຸຕິ ຢູ່ບັດນີ້ຊຶ່ງສີມາ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ດ້ວຍນິມິຕເຫຼົ່ານັ້ນ. ການສົມມຸຕິສີມາ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ດ້ວຍນິມິຕເຫຼົ່ານັ້ນ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນ ຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສີມາອັນສົງຆ໌ສົມມຸຕິໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນແລ້ວ ດ້ວຍນິມິຕເຫຼົ່ານັ້ນ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ. ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ເຣື່ອງສົມມຸຕິສີມາໃຫຍ່ເກີນຂນາດ

[໑໔໔] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ຄິດວ່າ ພຣະຜູ້ມີພຣະກາຄທຮົງອນຸຍາຕການສົມມຸຕິ ສີມາແລ້ວ ຈຶ່ງສົມມຸຕິສີມາໃຫຍ່ເກີນເຖິງ ໔ ໂຍຊນ໌ແດ່ ໕ ໂຍຊນ໌ແດ່ ໖ ໂຍຊນ໌ແດ່. ກິກຂຸທັ້ງຫຼາຍ ຈະມາທຳອຸໂບສົຖ ຍ່ອມມາເຖິງຕໍ່ເມື່ອກຳລັງສູຕປາຕິໂມກຂ໌ແດ່. ມາເຖິງຕໍ່ເມື່ອສູຕຈົບແດ່ ແຮມຄືນ ຢູ່ໃນຣະຫວ່າງທາງແດ່ ຈຶ່ງພາກັນຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງ ກະກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສົມມຸຕິສີມາໃຫຍ່ເກີນເຖິງ ໔ ໂຍຊນ໌ ໕ ໂຍຊນ໌ ຫຼື ໖ ໂຍຊນ໌ ອົງຄ໌ໃດສົມມຸຕິ ຕ້ອງອາບັຕິທຸກກົຎ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສົມມຸຕິສີມາມີປະມາຓ ໓ ໂຍຊນ໌ເປັນຢ່າງຍິ່ງ.

ເຣື່ອງສົມມຸຕິສີມາຄຣ່ອມແມ່ນ້ຳ

[໑໔໖] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ສົມມຸຕິສີມາ**ຄຣ່ອມ**[6]ແມ່ນ້ຳ. ກິກຂຸທັ້ງຫຼາຍຈະມາທຳ ອຸໂບສົຖ ຖືກນ້ຳພັດໄປກໍມີ ບາຕຣ໌ຖືກນ້ຳພັດໄປກໍມີ ຈີວຣຖືກນ້ຳພັດໄປກໍມີ ຈຶ່ງພາກັນຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣ ສົມມຸຕິສີມາຄຣ່ອມແມ່ນ້ຳ ອົງຄ໌ໃດສົມມຸຕິ ຕ້ອງອາບັຕິທຸກກົຎ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສົມມຸຕິສີມາຄຣ່ອມແມ່ນ້ຳທີ່ມີເຮືອຈອດປະຈຳຫຼືມີສະພານ ຖາວອຣ.

ເຣື່ອງສົມມຸຕິໂຮງອຸໂບສົຖ

[໑໔໗] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫຼາຍສູຕປາຕິໂມກຂ໌ຕາມບໍຣິເວຓວິຫາຣ ໂດຍບໍ່ໄດ້ ກຳຫນົດທີ່. ພຣະອາຄັນຕຸກະທັ້ງຫຼາຍບໍ່ຮູ້ວ່າ ວັນນີ້ພຣະສົງຆ໌ຈະທຳອຸໂບສົຖທີ່ໃດ ຈຶ່ງພາກັນຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸ ບໍ່ຄວຣສູຕປາຕິໂມກຂ໌ຕາມບໍຣິເວຓວິຫາຣ ໂດຍບໍ່ໄດ້ກຳຫນົດທີ່ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຎ.

---

[6] **ຄຣ່ອມ** ຢືນຫຼືນັ່ງແຍກຂາໃຫ້ຂອງ (ອວັຍວະເພສ) ຢູ່ໃຕ້ຫວ່າງຂາມ ຍົງໂຍ່ໃຫ້ຂອງຢູ່ໃຕ້ຕົວ

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສົມມຸຕິວິຫາຣ ເຮືອນມຸງແຖບດຽວ ເຮືອນຊັ້ນ ເຮືອນໂລ້ນ ຫຼືຖ້ຳ ທີ່ສົງຄ໌ຈຳນົງໃຫ້ເປັນໂຮງອຸໂບສົຖແລ້ວທຳອຸໂບສົຖ.

ວິທີສົມມຸຕິໂຮງອຸໂບສົຖ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣສົມມຸຕິໂຮງອຸໂບສົຖຢ່າງນີ້.

ກິກຂຸຜູ້ຂລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິໂຮງອຸໂບສົຖ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣ ສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນໂຮງອຸໂບສົຖ. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ສົມມຸຕິຢູ່ບັດນີ້ ຊຶ່ງວິຫາຣມີຊື່ນີ້ ໃຫ້ເປັນ ໂຮງອຸໂບສົຖ. ກາຣສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນໂຮງອຸໂບສົຖ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນ ຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ວິຫາຣມີຊື່ນີ້ອັນສົງຄ໌ສົມມຸຕິໃຫ້ເປັນໂຮງອຸໂບສົຖແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ກັມມ໌ວາຈາສົມມຸຕິໂຮງອຸໂບສົຖ ຈົບ.

ເຣື່ອງສົມມຸຕິໂຮງອຸໂບສົຖ ໘ ແຫ່ງໃນອາວາສດຽວກັນ

[໑໕໗] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ສົງຄ໌ສົມມຸຕິໂຮງອຸໂບສົຖ ໘ ແຫ່ງ. ກິກຂຸ ທັ້ງຫຼາຍປະຊຸມກັນໃນໂຮງອຸໂບສົຖທັ້ງສອງດ້ວຍຕັ້ງໃຈວ່າ ສົງຄ໌ຈະທຳອຸໂບສົຖທີ່ນີ້ ສົງຄ໌ຈະທຳອຸໂບສົຖ ໓ ທີ່ນີ້ ຈຶ່ງພາກັນຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສຫ້າມແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ໃນອາວາສແຫ່ງນຶ່ງ ສົງຄ໌ບໍ່ຄວຣສົມມຸຕິໂຮງອຸໂບສົຖ ໘ ແຫ່ງ ອົງຄ໌ໃດສົມມຸຕິ ຕ້ອງອາບັຕິທຸກກົຝ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ຖອນໂຮງອຸໂບສົຖແຫ່ງນຶ່ງແລ້ວທຳອຸໂບສົຖ ໃນໂຮງອຸໂບສົຖ ແຫ່ງນຶ່ງ.

ວິທີຖອນໂຮງອຸໂບສົຖ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣຖອນໂຮງອຸໂບສົຖຢ່າງນີ້.

ກິກຂຸຜູ້ລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຢກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາຖອນໂຮງອຸໂບສົຖ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣຖອນໂຮງອຸໂບສົຖມີຊື່ນີ້. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ຖອນຢູ່ບັດນີ້ ຊຶ່ງໂຮງອຸໂບສົຖມີຊື່ນີ້. ກາຣຖອນໂຮງອຸໂບສົຖມີຊື່ນີ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນ ຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ໂຮງອຸໂບສົຖມີຊື່ນີ້ອັນສົງຄ໌ຖອນແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ສົມມຸຕິໂຮງອຸໂບສົຖເລັກເກີນຂນາດ

[໑໕໗] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ສົງຄ໌ສົມມຸຕິໂຮງອຸໂບສົຖເລັກເກີນຂນາດ. ເຖິງວັນອຸໂບສົຖ ກິກຂຸສົງຄ໌ລົງປະຊຸມກັນຫຼາຍ. ກິກຂຸທັ້ງຫຼາຍຕ້ອງນັ່ງຟັງປາຕິໂມກຂ໌ໃນພື້ນທີ່ຊຶ່ງບໍ່ໄດ້ສົມມຸຕິ ກິກຂຸເຫຼົ່ານັ້ນຈຶ່ງໄດ້ຫາຣືກັນວ່າ ພຣະຜູ້ມີພຣະກາຄທຣົງບັຄລັຕິໄວ້ວ່າ ຄວຣສົມມຸຕິໂຮງອຸໂບສົຖແລ້ວຈຶ່ງທຳອຸໂບສົຖ ດັ່ງນີ້ ກໍພວກເຮົານັ່ງຟັງປາຕິໂມກຂ໌ໃນພື້ນທີ່ຊຶ່ງບໍ່ໄດ້ສົມມຸຕິ ອຸໂບສົຖເປັນອັນພວກເຮົາທຳແລ້ວ ຫຼືບໍ່ເປັນອັນທຳນໍ ຈຶ່ງພາກັນຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸນັ່ງໃນພື້ນທີ່ຊຶ່ງສົມມຸຕິແລ້ວກໍຕາມ ບໍ່ໄດ້ສົມມຸຕິກໍຕາມ ເພາະໄດ້ຟັງປາຕິໂມກຂ໌ ດັ່ງນັ້ນອຸໂບສົຖຍ່ອມເປັນອັນລາວໄດ້ທຳແລ້ວເໝືອນກັນ ດູຣາກິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແລ ສົງຄ໌ຈົ່ງສົມມຸຕິພື້ນທີ່ດ້ານໜ້າໂຮງອຸໂບສົຖໃຫ້ໃຫຍ່ເທົ່າທີ່ຈຳນົງ.

ວິທີສົມມຸຕິພື້ນທີ່ດ້ານໜ້າໂຮງອຸໂບສົຖ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣສົມມຸຕິພື້ນທີ່ດ້ານໜ້າໂຮງອຸໂບສົຖຢ່າງນີ້.

ຄວຣທັກນິມິຕກ່ອນ ຄັ້ນທັກນິມິຕແລ້ວ ກິກຂຸຜູ້ລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຢກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິພື້ນທີ່ດ້ານຫນ້າໂຮງອຸໂບສົຖ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ນິມິຕະບຸໄວ້ແລ້ວໂດຍຮອບພຽງໃດ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິພື້ນທີ່ດ້ານຫນ້າໂຮງອຸໂບສົຖ ດ້ວຍນິມິຕເຫຼົ່ານັ້ນ. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ນິມິຕະບຸໄວ້ແລ້ວໂດຍຮອບພຽງໃດ ສົງຄ໌ສົມມຸຕິຢູ່ບັດນີ້ ຊຶ່ງພື້ນທີ່ດ້ານຫນ້າໂຮງອຸໂບສົຖ ດ້ວຍນິມິຕເຫຼົ່ານັ້ນ. ກາຣສົມມຸຕິພື້ນທີ່ດ້ານຫນ້າໂຮງອຸໂບສົຖດ້ວຍນິມິຕເຫຼົ່ານັ້ນ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ພື້ນທີ່ດ້ານຫນ້າໂຮງອຸໂບສົຖອັນສົງຄ໌ສົມມຸຕິແລ້ວ ດ້ວຍນິມິຕເຫຼົ່ານັ້ນ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ພຣະເຖຣະລົງປະຊຸມກ່ອນ

[໑໗໐] ກໍໂດຍສມັຍນັ້ນແລ ໃນວັນອຸໂບສົຖ **ນວກ**[7]ພິກສຸທັ້ງຫຼາຍໃນອາວາສແຫ່ງນຶ່ງລົງປະຊຸມກັນກ່ອນແລ້ວຫລີກໄປ ດ້ວຍຄິດວ່າພຣະເຖຣະທັ້ງຫຼາຍຍັງບໍ່ມາກ່ອນ. ໃນເວລາໃກ້ສິຄ່ຳຈຶ່ງທຳອຸໂບສົຖໄດ້. ພິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ໃນວັນອຸໂບສົຖ ເຮົາອນຸຍາຕໃຫ້ພິກສຸຜູ້ເຖຣະທັ້ງຫຼາຍລົງປະຊຸມກ່ອນ.

ພິກສຸຫຼາຍວັດທຳອຸໂບສົຖຮ່ວມກັນ

[໑໗໑] ກໍໂດຍສມັຍນັ້ນແລ ອາວາສໃນພຣະນຄຣຣາຊຄຣຶຫ໌ຫຼາຍແຫ່ງ ມີສີມາອັນດຽວກັນ. ພິກສຸທັ້ງຫຼາຍໃນອາວາສເຫຼົ່ານັ້ນ ວິວາທກັນວ່າ ຂໍສົງຄ໌ຈົ່ງທຳອຸໂບສົຖໃນອາວາສຂອງພວກເຮົາ ຂໍສົງຄ໌ຈົ່ງທຳອຸໂບສົຖໃນອາວາສຂອງພວກເຮົາ. ພິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຮັບສັ່ງກັບພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ອາວາສໃນພຣະນຄຣຣາຊຄຣຶຫ໌ນີ້ກໍຫຼາຍແຫ່ງມີສີມາອັນດຽວກັນ ພິກສຸທັ້ງຫຼາຍໃນອາວາສເຫຼົ່ານັ້ນວິວາທກັນວ່າ ຂໍສົງຄ໌ຈົ່ງທຳອຸໂບສົຖໃນອາວາສຂອງພວກເຮົາ ຂໍສົງຄ໌ຈົ່ງທຳອຸໂບສົຖໃນອາວາສຂອງພວກເຮົາ ດູຣາພິກສຸທັ້ງຫຼາຍ ພິກສຸເຫຼົ່ານັ້ນທຸກໆ ອົງຄ໌ຄວຣປະຊຸມທຳອຸໂບສົຖແຫ່ງດຽວກັນ ກໍເພາະພິກສຸຜູ້ເຖຣະຢູ່ໃນອາວາສໃດ ຄວຣປະຊຸມທຳອຸໂບສົຖໃນອາວາສນັ້ນ ແຕ່ສົງຄ໌ເປັນວັຄຄ໌ບໍ່ຄວຣທຳອຸໂບສົຖ ອົງຄ໌ໃດທຳ ຕ້ອງອາບັຕິທຸກກົຄ.

---

[7] **ນວກ** ໑. ຫມວດ ໙ ໒. ພິກຂຸໃຫມ່ນ ພິກຂຸມີພັຣຍາຍັງບໍ່ຄົບ ໕

ພຣະມຫາກັສສປເຖຣະເດີນທາງໄປທຳອຸໂບສົຖ

[໑໖໔] ກໍໂດຍສມັຍນັ້ນແລ ທ່ານພຣະມຫາກັສສປມາຈາກອັນຮກວິນທວິຫາຣ ສູ່ພຣະນຄຣຣາຊຄຣິຫ໌ ເພື່ອທຳອຸໂບສົຖ ໃນຣະຫວ່າງທາງຂ້າມແມ່ນ້ຳ ເກືອບຖືກນ້ຳພັດໄປ ຈີວຣຂອງທ່ານປຽກ. ກິກຂຸທັ້ງຫຼາຍໄດ້ຖາມທ່ານພຣະມຫາກັສສປວ່າ ອາວຸໂສ ເພາະເຫຕຸໃດ ຈີວຣຂອງທ່ານຈຶ່ງປຽກ? ທ່ານຕອບວ່າ ອາວຸໂສທັ້ງຫຼາຍ ຂ້ານ້ອຍມາຈາກອັນຮກວິນທວິຫາຣສູ່ພຣະນຄຣຣາຊຄຣິຫ໌ ເພື່ອທຳອຸໂບສົຖ ໓ ທີ່ນີ້ ໄດ້ຂ້າມແມ່ນ້ຳ ໃນຣະຫວ່າງທາງ ເກືອບຖືກນ້ຳພັດໄປ ເພາະເຫຕຸນັ້ນ ຈີວຣຂອງຂ້ານ້ອຍຈຶ່ງປຽກ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ສົງຄ໌ຈຶ່ງສົມມຸຕິສີມານັ້ນໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣ.

ວິທີສົມມຸຕິຕິຈີວຣາວິປປວາສ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣສົມມຸ**ຕິຕິຈີວຣາວິປປວາສ**[8]ສີມາຢ່າງນີ້.

ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຕິຈີວຣາວິປປວາສ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ. ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິສີມານັ້ນ ໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣ. ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ສົງຄ໌ສົມມຸຕິຢູ່ບັດນີ້ຊຶ່ງສີມານັ້ນ ໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣ. ການສົມມຸຕິສີມານີ້ໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສີມານັ້ນສົງຄ໌ສົມມຸຕິໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້.

---

[8] **ຕິຈີວຣາວິປປວາສ** ການບໍ່ຢູ່ປຣາສຈາກໄຕຣຈີວຣ ຄື ກິກຂຸຢູ່ໃນແດນທີ່ສົມມຸຕິເປັນ ຕິຈີວຣາວິປປວາສແລ້ວ ຢູ່ຫ່າງຈາກໄຕຣຈີວຣ ກໍບໍ່ເປັນອັນຢູ່ປຣາສ ບໍ່ຕ້ອງອາບັຕິດ້ວຍນິສສັຄຄິຍປາຈິຕຕິຍ໌ ສິກຂາບົທທີ່ ໑

ສມັຍຕໍ່ມາ ກິກຂຸທັ້ງຫຼາຍຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕການສົມມຸຕິຕິຈີວຣາວິປປວາສ ແລ້ວ ຈຶ່ງເກັບຈີວຣໄວ້ໃນລະແວກບ້ານ. ຈີວຣເຫຼົ່ານັ້ນຫາຍແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່. ກິກຂຸທັ້ງຫຼາຍມີແຕ່ຜ້າບໍ່ດີ ມີຈີວຣເສົ້າຫມອງ.

ກິກຂຸທັ້ງຫຼາຍຈຶ່ງຖາມກັນຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເພາະເຫຕຸໃດ ພວກທ່ານຈຶ່ງມີແຕ່ຜ້າບໍ່ດີ ມີຈີວຣເສົ້າຫມອງລະ?

ກິກຂຸເຫຼົ່ານັ້ນຕອບວ່າ ອາວຸໂສທັ້ງຫຼາຍ ພວກຂ້ານ້ອຍຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕການສົມມຸຕິຕິຈີວຣາວິປປວາສແລ້ວ ຈຶ່ງເກັບຈີວຣໄວ້ໃນລະແວກບ້ານ ໓ ຕາແສງນີ້ ຈີວຣເຫຼົ່ານັ້ນຫາຍເສັຽແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່ ເພາະເຫຕຸນັ້ນ ພວກຂ້ານ້ອຍຈຶ່ງມີແຕ່ຜ້າບໍ່ດີ ມີຈີວຣເສົ້າຫມອງ.

ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ສົງຄ໌ຈຶ່ງສົມມຸຕິສີມານັ້ນໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣຈີວຣ ເວັ້ນບ້ານແລະອຸປຈາຣແຫ່ງບ້ານ.

ວິຣີສົມມຸຕິຕິຈີວຣາວິປປວາສ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣສົມມຸຕິຕິຈີວຣາວິປປວາສສີມາຢ່າງນີ້.

ກິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຕິຈີວຣາວິປປວາສ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິສີມານັ້ນໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣຈີວຣ ເວັ້ນບ້ານແລະອຸປຈາຣແຫ່ງບ້ານ. ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ສົງຄ໌ສົມມຸຕິຢູ່ບັດນີ້ຊຶ່ງສີມານັ້ນ ໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣຈີວຣ ເວັ້ນບ້ານແລະອຸປຈາຣແຫ່ງບ້ານ. ການສົມມຸຕິສີມານີ້ໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣ-ຈີວຣ ເວັ້ນບ້ານແລະອຸປຈາຣແຫ່ງບ້ານ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສີມານັ້ນສົງຆ໌ສົມມຸຕິໃຫ້ເປັນແດນບໍ່ຢູ່ປາສຈາກໄຕຣຈີວຣ ເວັ້ນບ້ານແລະອຸປຈາຣແຫ່ງບ້ານ ແລ້ວ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້.

[໑໗໓] ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸຈະສົມມຸຕິສີມາ ຄວຣສົມມຸຕິ**ສມານສັງວາສສີມາ**[9]ກ່ອນ ກາຍຫລັງຈຶ່ງສົມມຸຕິຕິຈີວຣາວິປປວາສ. ເມື່ອຈະຖອນສີມາ ຄວຣຖອນຕິຈີວຣາວິປປວາສກ່ອນ ກາຍຫລັງຈຶ່ງຖອນສມານສັງວາສສີມາ.

ວິທີຖອນຕິຈີວຣາວິປປວາສ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣຖອນຕິຈີວຣາວິປປວາສຢ່າງນີ້.

ກິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາຖອນຕິຈີວຣາວິປປວາສ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນໃດ ອັນສົງຆ໌ສົມມຸຕິໄວ້ແລ້ວ ຖ້າຄວາມພ້ອມພັ່ງຂອງສົງຆ໌ເຖິງທີ່ແລ້ວ ສົງຆ໌ຄວຣຖອນແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນ. ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນໃດ ອັນສົງຆ໌ສົມມຸຕິໄວ້ແລ້ວ ສົງຆ໌ຖອນຢູ່ບັດນີ້ຊຶ່ງແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນ ການຖອນແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ແດນບໍ່ຢູ່ປາສຈາກໄຕຣຈີວຣນັ້ນ ສົງຆ໌ຖອນແລ້ວ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ວິທີຖອນສມານສັງວາສສີມາ

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣຖອນສມານສັງວາສສີມາຢ່າງນີ້.

ກິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາຖອນສມານສັງວາສສີມາ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຆ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສສເມີກັນ ໃຫ້ມີອຸໂບສົຖດຽວກັນ ຖ້າຄວາມພ້ອມພັ່ງຂອງສົງຆ໌ເຖິງທີ່ແລ້ວ ສົງຆ໌ຄວຣຖອນສີມານັ້ນ. ນີ້ເປັນຍັຕຕິ.

---

[9] **ສມານສັງວາສສີມາ** ແດນມີສັງວາສສເມີກັນ, ເຂຕທີ່ກຳຫນົດຄວາມພ້ອມພຽງແລະສິທธิໃນການເຂົ້າອຸໂບສົຖ ປວາຣຕາ ແລະສັງฆກັມມ໌ດ້ວຍກັນ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ສີມານັ້ນໃດອັນສົງຄ໌ສົມມຸຕິໄວ້ແລ້ວ ໃຫ້ມີສັງວາສ ສເມີກັນ ໃຫ້ມີອຸໂບສົຖດຽວກັນ ສົງຄ໌ຖອນຢູ່ບັດນີ້ຊຶ່ງສີມານັ້ນ ການຖອນສີມາມີສັງວາສສເມີກັນ ມີອຸໂບສົຖດຽວກັນນີ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນ ຄວຣເວົ້າ.

ສີມາມີສັງວາສສເມີກັນ ມີອຸໂບສົຖດຽວກັນນັ້ນ ອັນສົງຄ໌ຖອນແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນ ຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ອພັທສສີມາ

[໑໗໔] ດູຣາພິກສຸທັ້ງຫຼາຍ ເມື່ອສົງຄ໌ຍັງບໍ່ໄດ້ສົມມຸຕິ ຍັງບໍ່ໄດ້ກຳຫນົດສີມາ ພິກສຸເຂົ້າອາສັຍ ບ້ານຫຼືນິຄົມໃດຢູ່ ເຂຕຂອງບ້ານນັ້ນ ເປັນຄາມສີມາແດ່ ເຂຕຂອງນິຄົມນັ້ນ ເປັນນິຄົມສີມາແດ່ ສີມານີ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ໃນບ້ານຫຼືນິຄົມນັ້ນ.

ດູຣາພິກສຸທັ້ງຫຼາຍ ຖ້າໃນປ່າຫາຄົນຕັ້ງບ້ານເຮືອນບໍ່ໄດ້ ຊົ່ວ ໗ **ອັພພັນດຣ**[10]ໂດຍຮອບ ເປັນ ສັຕຕັພພັນດຣສີມາ ສີມານີ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນໃນປ່ານັ້ນ.

ດູຣາພິກສຸທັ້ງຫຼາຍ ແມ່ນ້ຳທັ້ງຫມົດ ສົມມຸຕິເປັນສີມາບໍ່ໄດ້ ສມຸທຣ໌ທັ້ງຫມົດ ສົມມຸຕິເປັນ ສີມາບໍ່ໄດ້ ຊາຕສະທັ້ງຫມົດ ສົມມຸຕິເປັນສີມາບໍ່ໄດ້.

ດູຣາພິກສຸທັ້ງຫຼາຍ ໃນແມ່ນ້ຳ ໃນສມຸທຣ໌ ຫຼືໃນຊາຕສະ ຊົ່ວວັກນ້ຳສາດ ໂດຍຮອບແຫ່ງ ມັຊຊິມບຸຣຸษ ເປັນອຸທກຸກເຂປສີມາ ສີມານີ້ມີສັງວາສສເມີກັນ ມີອຸໂບສົຖດຽວກັນ ໃນນ່ານນ້ຳນັ້ນ.

ສີມາສັງກະ

[໑໗໕] ກໍໂດຍສມັຍນັ້ນແລ ພຣະວັພພັຄຄີຍ໌ສົມມຸຕິສີມາຄາບກ່ຽວສີມາ. ພິກສຸທັ້ງຫຼາຍຂາບ ທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ສີມາອັນພິກສຸເຫຼົ່າໃດສົມມຸຕິໄວ້ກ່ອນແລ້ວ ກັມມ໌ນັ້ນຂອງພິກສຸເຫຼົ່ານັ້ນເປັນທັມມ໌ ບໍ່ກຳເຣິບ ຄວຣແກ່ ຖານະ ສີມາອັນພິກສຸເຫຼົ່າໃດສົມມຸຕິແລ້ວໃນພາຍຫລັງ ກັມມ໌ນັ້ນຂອງພິກສຸເຫຼົ່ານັ້ນບໍ່ເປັນທັມມ໌ ກຳເຣິບ ບໍ່ຄວຣແກ່ຖານະ

ດູຣາພິກສຸທັ້ງຫຼາຍ ພິກສຸບໍ່ຄວຣສົມມຸຕິສີມາຄາບກ່ຽວສີມາ ອົງຄ໌ໃດສົມມຸຕິຄາບກ່ຽວ ຕ້ອງ ອາບັຕິທຸກກົฏ.

---

[10] **ອັພພັນດຣ** ມາຕຣາວັດໃນພາษາມຄົທຽບລາວໄດ້ ໔໗ ສອກ ຫຼື ໗ ວາ

ສີມາທັບສີມາ

ສມັຍຕໍ່ມາ ພຣະວັພພັຄຄີຍ໌ສົມມຸຕິສີມາທັບສີມາ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຮາກິກษຸທັ້ງຫຼາຍ ສີມາອັນກິກษຸເຫຼົ່າໃດສົມມຸຕິໄວ້ກ່ອນແລ້ວ ກັມມ໌ນັ້ນຂອງກິກษຸເຫຼົ່ານັ້ນເປັນສັມມ໌ ບໍ່ກຳເຣີບ ຄວຣແກ່ຖານະ ສີມາອັນກິກษຸເຫຼົ່າໃດສົມມຸຕິແລ້ວໃນກາຍຫລັງ ກັມມ໌ນັ້ນຂອງກິກษຸເຫຼົ່ານັ້ນບໍ່ເປັນສັມມ໌ ກຳເຣີບ ບໍ່ຄວຣແກ່ຖານະ

ດູຮາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣສົມມຸຕິສີມາທັບສີມາ ອົງຄ໌ໃດສົມມຸຕິທັບ ຕ້ອງອາບັຕິທຸກກົฏ.

ດູຮາກິກษຸທັ້ງຫຼາຍ ເຮົາອນຸญາຕໃຫ້ກິກษຸຜູ້ຈະສົມມຸຕິສີມາ ເວັ້ນສີມັນຕຣິກໄວ້ ແລ້ວສົມມຸຕິສີມາ.

ວັນອຸໂບສົຖ ໔

[໑໕໘] ຄັ້ງນັ້ນ ກິກษຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ວັນອຸໂບສົຖມີເທົ່າໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຮາກິກษຸທັ້ງຫຼາຍ ວັນອຸໂບສົຖນີ້ມີ ໔ ຄື ອຸໂບສົຖມີໃນວັນ ໑໔ ຄ່ຳ ອຸໂບສົຖມີໃນວັນ ໑໕ ຄ່ຳ ດູຮາກິກษຸທັ້ງຫຼາຍ ວັນອຸໂບສົຖ ໔ ນີ້ແລ.

ກາຣທຳອຸໂບສົຖ ໔ ຢ່າງ

ຄັ້ງນັ້ນ ກິກษຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກາຣທຳອຸໂບສົຖມີເທົ່າໃດນໍແລ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກษຸທັ້ງຫຼາຍວ່າ ດູຮາກິກษຸທັ້ງຫຼາຍ ກາຣທຳອຸໂບສົຖນີ້ມີ ໔ ຄື ກາຣທຳອຸໂບສົຖເປັນວັຄຄ໌ໂດຍບໍ່ເປັນສັມມ໌ ໑ ກາຣທຳອຸໂບສົຖພ້ອມພຽງໂດຍບໍ່ເປັນສັມມ໌ ໑ ກາຣທຳອຸໂບສົຖເປັນວັຄຄ໌ໂດຍສັມມ໌ ໑ ກາຣທຳອຸໂບສົຖພ້ອມພຽງໂດຍສັມມ໌ ໑.

ດູຮາກິກษຸທັ້ງຫຼາຍ ໃນກາຣທຳອຸໂບສົຖ ໔ ຢ່າງນັ້ນ ກາຣທຳອຸໂບສົຖນີ້ໃດເປັນວັຄຄ໌ໂດຍບໍ່ເປັນສັມມ໌ ກາຣທຳອຸໂບສົຖເຫັນປານນັ້ນ ບໍ່ຄວຣທຳ ແລະເຮົາກໍບໍ່ອນຸญາຕ.

ໃນກາຣທຳອຸໂບສົຖ ໔ ຢ່າງນັ້ນ ກາຣທຳອຸໂບສົຖນີ້ໃດ ທີ່ພ້ອມພຽງໂດຍບໍ່ເປັນສັມມ໌ ກາຣທຳອຸໂບສົຖເຫັນປານນັ້ນບໍ່ຄວຣທຳ ແລະເຮົາກໍບໍ່ອນຸญາຕ.

ໃນກາຣທຳອຸໂບສົຖ ໔ ຢ່າງນັ້ນ ກາຣທຳອຸໂບສົຖນີ້ໃດ ເປັນວັຄຄ໌ໂດຍສັມມ໌ ກາຣທຳອຸໂບສົຖເຫັນປານນັ້ນບໍ່ຄວຣທຳ ແລະເຮົາກໍບໍ່ອນຸญາຕ.

ໃນກາຣທຳອຸໂບສົຖ ໔ ຢ່າງນັ້ນ ກາຣທຳອຸໂບສົຖນີ້ໃດທີ່ພ້ອມພຽງໂດຍສັມມ໌ ກາຣທຳອຸໂບສົຖເຫັນປານນັ້ນຄວຣທຳ ແລະເຮົາກໍອນຸญາຕ.

ດູຣາພິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແຫຼະພວກທ່ານຄວຣເຮັດໃນໃຈວ່າ ຈະທຳອຸໂບສົຖກັມມ໌ຊນິດທີ່ພ້ອມພຽງໂດຍສັມມ໌ ດັ່ງນີ້ ດູຣາພິກຂຸທັ້ງຫຼາຍ ພວກທ່ານຄວຣສຶກສາຢ່າງນີ້ແລ.

ປາຕິໂມກຂຸເທສ ໕

[໑໙໗] ຄັ້ງນັ້ນ ພິກຂຸທັ້ງຫຼາຍ ໄດ້ມີຄວາມປຣິວິຕົກວ່າ ປາຕິໂມກຂຸເທສມີເທົ່າໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ປາຕິໂມກຂຸເທສນີ້ມີ ໕ ຄື ພິກຂຸສູຕນິທານຈົບແລ້ວ ສູຕສູຕອຸເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນປາຕິໂມກຂຸເທສທີ່ ໑.

ສູຕນິທານ ສູຕປາຣາຊິກ ໔ ຈົບແລ້ວ ສູຕສູຕອຸເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນປາຕິໂມກຂຸເທສທີ່ ໒.

ສູຕນິທານ ສູຕປາຣາຊິກ ໔ ສູຕສັງຄາທິເສສ ໑໓ ຈົບແລ້ວສູຕສູຕອຸເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນປາຕິໂມກຂຸເທສທີ່ ໓.

ສູຕນິທານ ສູຕປາຣາຊິກ ໔ ສູຕສັງຄາທິເສສ ໑໓ ສູຕອນິຍຕ ໒ ຈົບແລ້ວ ສູຕສູຕອຸເທສທີ່ເຫລືອດ້ວຍສຸຕບົທ ນີ້ເປັນປາຕິໂມກຂຸເທສທີ່ ໔.

ສູຕໂດຍພິສດາຣຫມົດ ເປັນປາຕິໂມກຂຸເທສທີ່ ໕.

ດູຣາພິກຂຸທັ້ງຫຼາຍ ປາຕິໂມກຂຸເທສ ໕ ນີ້ແລ.

ທຣົງຫ້າມສູຕປາຕິໂມກຂ໌ຫຍໍ້

ສມັຍຕໍ່ມາ ພິກຂຸທັ້ງຫຼາຍຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕການສູຕປາຕິໂມກຂ໌ຫຍໍ້ ດັ່ງນີ້ ຈຶ່ງສູຕປາຕິໂມກຂ໌ຫຍໍ້ທຸກຄັ້ງ. ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງຫ້າມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພິກຂຸບໍ່ຄວຣສູຕປາຕິໂມກຂ໌ຫຍໍ້ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຏ.

ທຣົງອນຸຍາຕໃຫ້ສູຕປາຕິໂມກຂ໌ຫຍໍ້ເມື່ອມີອັນຕຣາຍ

ສມັຍຕໍ່ມາ ໓ ອາວາສແຫ່ງນຶ່ງໃນໂກສົລຊົນບົທ ຄົນຊາວດົງໄດ້ມາສາຣະວົນໃນວັນອຸໂບສົຖ. ພິກຂຸທັ້ງຫຼາຍບໍ່ອາຈສູຕປາຕິໂມກຂ໌ໂດຍພິສດາຣ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງອນຸຍາຕແກ່ພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເມື່ອມີອັນຕຣາຍ ເຮົາອນຸຍາຕໃຫ້ສູຕປາຕິໂມກຂ໌ຫຍໍ້.

ອັນຕຣາຍ ໑໐ ປະການ

ສມັຍຕໍ່ມາ ພຣະລັພພັຄຄີຍ໌ ແມ້ເມື່ອອັນຕຣາຍບໍ່ມີ ກໍສູດປາຕິໂມກຂ໌ຫຍໍ້. ພິກສຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງຫ້າມພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ເມື່ອບໍ່ມີອັນຕຣາຍ ພິກສຸບໍ່ຄວຣສູດປາຕິໂມກຂ໌ຫຍໍ້ ອົງຄ໌ໃດສູດ ຕ້ອງອາບັຕິທຸກກົຝ.

ເມື່ອມີອັນຕຣາຍ ເຮົາອນຸຍາຕໃຫ້ສູດປາຕິໂມກຂ໌ຫຍໍ້.

ອັນຕຣາຍໃນເຣື່ອງນັ້ນເຫຼົ່ານີ້ ຄື

໑. ພຣະຣາຊາສເດັຈມາ

໒. ໂຈຣມາປລົ້ນ

໓. ໄຟໄຫມ້

໔. ນ້ຳຫລາກມາ

໕. ຄົນມາຫຼາຍ

໖. ຜີເຂົ້າພິກສຸ

໗. ສັຕວ໌ຮ້າຍເຂົ້າມາ

໘. ງູຮ້າຍເລື້ອຍເຂົ້າມາ

໙. ພິກສຸອາພາສຫນັກຈະເຖິງເສັ່ງຊີວິຕ

໑໐. ມີອັນຕຣາຍແກ່ພຣົຫ໌ມຈັຣຍ໌

ດູຣາພິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສູດປາຕິໂມກຂ໌ຫຍໍ້ໃນເພາະອັນຕຣາຍເຫັນປານນີ້ ເມື່ອບໍ່ມີອັນຕຣາຍ ໃຫ້ສູດໂດຍພິສດາຣ.

ຈະສແດງສັມມ໌ທ່າມກາງສົງຄ໌ຕ້ອງໄດ້ຮັບອາຣາສນາກ່ອນ

[໑໖໘] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ບໍ່ໄດ້ຮັບອາຣາສນາ ສແດງສັມມ໌ໃນທ່າມກາງສົງຄ໌. ພິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງຫ້າມພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ພິກສຸບໍ່ໄດ້ຮັບອາຣາສນາ ບໍ່ຄວຣສແດງສັມມ໌ໃນທ່າມກາງສົງຄ໌ ອົງຄ໌ໃດສແດງ ຕ້ອງອາບັຕິທຸກກົຝ.

ດູຣາພິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເຖຣະສແດງສັມມ໌ເອງ ຫຼືໃຫ້ອາຣາສນາຜູ້ອື່ນສແດງ.

ຖາມພຣະວິນັຍທ່າມກາງສົງຄ໌ຕ້ອງໄດ້ຮັບສົມມຸຕິກ່ອນ

[໑໗໙] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ຍັງບໍ່ໄດ້ຮັບສົມມຸຕິ ຖາມພຣະວິນັຍໃນທ່າມກາງສົງຄ໌. ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພິກຂຸຍັງບໍ່ໄດ້ຮັບສົມມຸຕິ ບໍ່ຄວຣຖາມວິນັຍໃນທ່າມກາງສົງຄ໌ ອົງຄ໌ໃດຖາມ ຕ້ອງອາບັຕິທຸກກົຎ.

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຎາຕໃຫ້ພິກຂຸຜູ້ໄດ້ຮັບສົມມຸຕິແລ້ວ ຖາມວິນັຍໃນທ່າມກາງສົງຄ໌ໄດ້.

ວິທີສົມມຸຕິເປັນຜູ້ຖາມ

ດູຣາພິກຂຸທັ້ງຫຼາຍ ກໍແລພິກຂຸຄວຣສົມມຸຕິຢ່າງນີ້. ຕົນເອງສົມມຸຕິຕົນກໍໄດ້ ພິກຂຸອື່ນສົມມຸຕິພິກຂຸອື່ນກໍໄດ້.

ຢ່າງໃດລະ ຊື່ວ່າຕົນເອງສົມມຸຕິຕົນ?

ພິກຂຸຜູ້ຈລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຕົນ

ພຣະສົງຄ໌ຂ້ານ້ອຍ ຂໍຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ຂ້າພເຈົ້າຂໍຖາມພຣະວິນັຍຕໍ່ຜູ້ມີຊື່ນີ້.

ຢ່າງນີ້ ຊື່ວ່າຕົນເອງສົມມຸຕິຕົນ.

ຢ່າງໃດລະ ຊື່ວ່າພິກຂຸອື່ນສົມມຸຕິພິກຂຸອື່ນ?

ພິກຂຸຜູ້ຈລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຜູ້ອື່ນ

ພຣະສົງຄ໌ຂ້ານ້ອຍ ຂໍຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ຂໍຜູ້ມີຊື່ນີ້ຖາມພຣະວິນັຍຕໍ່ຜູ້ມີຊື່ນີ້.

ຢ່າງນີ້ ຊື່ວ່າພິກຂຸອື່ນສົມມຸຕິພິກຂຸອື່ນ.

ຖາມພຣະວິນັຍຕ້ອງກວດເບິ່ງບໍຣິສັທກ່ອນ

ສມັຍຕໍ່ມາ ພິກຂຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ໄດ້ຮັບສົມມຸຕິແລ້ວ ຖາມພຣະວິນັຍໃນທ່າມກາງສົງຄ໌. ພຣະຈັພພັຄຄີຍ໌ໄດ້ອາຄາຕ ເຄືອງແຄ້ນ ຄຸກຄາມຈະຂ້າເສັຽ. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່

ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາດໃຫ້ພິກຂຸແມ້ທີ່ໄດ້ຮັບສົມມຸຕິແລ້ວ ກວດເບິ່ງບໍຣິษັທ ພິຈາຣະນາເບິ່ງບຸຄຄົລແລ້ວຈຶ່ງຖາມວິນັຍໃນທ່າມກາງສົງฆ໌.

ສມັຍຕໍ່ມາ ພຣະฉັພພັຄຄີຍ໌ຍັງບໍ່ໄດ້ຮັບສົມມຸຕິ ວິສັຊນາພຣະວິນັຍໃນທ່າມກາງສົງฆ໌. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພິກຂຸຜູ້ຍັງບໍ່ໄດ້ຮັບສົມມຸຕິ ບໍ່ຄວຣວິສັຊນາວິນັຍໃນທ່າມກາງສົງฆ໌ ອົງຄ໌ໃດວິສັຊນາ ຕ້ອງອາບັຕິທຸກກົฏ.

ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາດໃຫ້ພິກຂຸທີ່ໄດ້ຮັບສົມມຸຕິແລ້ວ ວິສັຊນາວິນັຍໃນທ່າມກາງສົງฆ໌.

ວິທີສົມມຸຕິເປັນຜູ້ວິສັຊນາ

ດູຣາພິກຂຸທັ້ງຫຼາຍ ກໍແລ ພິກຂຸຄວຣສົມມຸຕິຢ່າງນີ້. ຕົນເອງສົມມຸຕິຕົນກໍໄດ້ ພິກຂຸອື່ນສົມມຸຕິພິກຂຸອື່ນກໍໄດ້.

ຢ່າງໃດລະ ຊື່ວ່າຕົນເອງສົມມຸຕິຕົນ?

ພິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍญັตຕິກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຕົນ

ພຣະສົງฆ໌ຂ້ານ້ອຍ ຂໍຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ຂ້າພເຈົ້າອັນຜູ້ມີຊື່ນີ້ຖາມເຖິງພຣະວິນັຍແລ້ວ ຂໍວິສັຊນາ.

ຢ່າງນີ້ ຊື່ວ່າຕົນເອງສົມມຸຕິຕົນ.

ຢ່າງໃດລະ ຊື່ວ່າພິກຂຸອື່ນສົມມຸຕິພິກຂຸອື່ນ?

ພິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍญັตຕິກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິຜູ້ອື່ນ

ພຣະສົງฆ໌ຂ້ານ້ອຍ ຂໍຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ຜູ້ມີຊື່ນີ້ອັນຜູ້ມີຊື່ນີ້ຖາມເຖິງພຣະວິນັຍແລ້ວ ຂໍວິສັຊນາ.

ຢ່າງນີ້ ຊື່ວ່າພິກຂຸອື່ນສົມມຸຕິພິກຂຸອື່ນ.

ວິສັຊນາພຣະວິນັຍຕ້ອງກວດເບິ່ງບໍຣິບັທກ່ອນ

ສມັຍຕໍ່ມາ ກິກສຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ໄດ້ຮັບສົມມຸຕິແລ້ວ ວິສັຊນາພຣະວິນັຍໃນທ່າມກາງສົງໝ໌. ພຣະສັພພັຄຄີຍ໌ໄດ້ອາຄາຕ ເຄືອງແຄ້ນ ຄຸກຄາມຈະຂ້າເສັຽ. ກິກສຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາກິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກສຸແມ້ທີ່ໄດ້ຮັບສົມມຸຕິແລ້ວ ກວດເບິ່ງບໍຣິບັທ ພິຈາຣະນາເບິ່ງບຸຄຄົລກ່ອນ ຈຶ່ງວິສັຊນາວິນັຍໃນທ່າມກາງສົງໝ໌.

ໂຈທກ໌ຕ້ອງຂໍໂອກາສຕໍ່ຈຳເລີຍ

[໑໗໐] ກໍໂດຍສມັຍນັ້ນແລ ພຣະສັພພັຄຄີຍ໌ໂຈທກິກສຸຜູ້ບໍ່ໄດ້ທຳໂອກາສດ້ວຍອາບັຕິ. ກິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາກິກສຸທັ້ງຫຼາຍ ກິກສຸບໍ່ຄວຣໂຈທກິກສຸຜູ້ບໍ່ໄດ້ທຳໂອກາສດ້ວຍອາບັຕິ ອົງຄ໌ໃດໂຈທ ຕ້ອງອາບັຕິທຸກກົຽ.

ດູຣາກິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ໂຈທກ໌ຂໍໃຫ້ຈຳເລີຍທຳໂອກາສ ດ້ວຍຄຳວ່າ ຂໍທ່ານຈົ່ງທຳໂອກາສ ຂ້ານ້ອຍມັກຈະກ່າວກະທ່ານ ດັ່ງນີ້ ແລ້ວຈຶ່ງໂຈທດ້ວຍອາບັຕິ.

ກ່ອນໂຈທຕ້ອງພິຈາຣະນາເບິ່ງບຸຄຄົລ

ສມັຍຕໍ່ມາ ກິກສຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ຂໍໃຫ້ພຣະສັພພັຄຄີຍ໌ທຳໂອກາສແລ້ວ ໂຈທດ້ວຍອາບັຕິ. ພຣະສັພພັຄຄີຍ໌ໄດ້ອາຄາຕ ເຄືອງແຄ້ນ ຄຸກຄາມຈະຂ້າເສັຽ. ກິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາກິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ໂຈທແມ້ເມື່ອຈຳເລີຍທຳໂອກາສແລ້ວ ພິຈາຣະນາເບິ່ງບຸຄຄົລກ່ອນ ຈຶ່ງໂຈທດ້ວຍອາບັຕິ.

ກ່ອນຂໍໂອກາສຕ້ອງພິຈາຣະນາເບິ່ງບຸຄຄົລ

ສມັຍຕໍ່ມາ ພຣະສັພພັຄຄີຍ໌ຄິດວ່າ ກິກສຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ຂໍໃຫ້ພວກເຮົາທຳໂອກາສກ່ອນດັ່ງນີ້ ຈຶ່ງຟ້າວຂໍໃຫ້ກິກສຸທັ້ງຫຼາຍທີ່ບໍຣິສຸທທິ໌ບໍ່ມີອາບັຕິ ທຳໂອກາສໃນອທິກຣນ໌ທີ່ບໍ່ເປັນເຣື່ອງບໍ່ມີເຫຕຸ. ກິກສຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາກິກສຸທັ້ງຫຼາຍ ກິກສຸບໍ່ຄວຣຂໍໃຫ້ກິກສຸທັ້ງຫຼາຍຜູ້ບໍຣິສຸທທິ໌ ບໍ່ມີອາບັຕິ ທຳໂອກາສໃນອທິກຣນ໌ທີ່ບໍ່ເປັນເຣື່ອງ ບໍ່ມີເຫຕຸ ອົງຄ໌ໃດຂໍໃຫ້ທຳ ຕ້ອງອາບັຕິທຸກກົຽ.

ດູຣາກິກສຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິຈາຣະນາເບິ່ງບຸຄຄົລກ່ອນ ຈຶ່ງຂໍໃຫ້ທຳໂອກາສ.

ເຣື່ອງຫ້າມທຳກັມມ໌ບໍ່ເປັນສັມມ໌

[໑໗໑] ກໍໂດຍສມັຍນັ້ນແລ ພຣະຉັພພັຄຄີຍ໌ທຳກັມມ໌ບໍ່ເປັນສັມມ໌ໃນທ່າມກາງສົງฆ໌. ກິກຸ-ທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກຸທັ້ງຫຼາຍ ກິກຸບໍ່ຄວຣທຳກັມມ໌ບໍ່ເປັນສັມມ໌ໃນທ່າມກາງສົງฆ໌ ອົງຄ໌ໃດທຳຕ້ອງອາບັຕິທຸກກົฎ.

ພຣະຉັພພັຄຄີຍ໌ຍັງຂືນທຳກັມມ໌ບໍ່ເປັນສັມມ໌ຢູ່ຕາມເດີມ. ກິກຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸທັ້ງຫຼາຍວ່າ ດູຣາກິກຸທັ້ງຫຼາຍ ເຮົາອນຸຌາຕໃຫ້ຄັດຄ້ານ ໃນເມື່ອກິກຸທຳກັມມ໌ບໍ່ເປັນສັມມ໌.

ສມັຍຕໍ່ມາ ກິກຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ພາກັນຄັດຄ້ານ ໃນເມື່ອພຣະຉັພພັຄຄີຍ໌ທຳກັມມ໌ບໍ່ເປັນສັມມ໌. ພຣະຉັພພັຄຄີຍ໌ໄດ້ອາฆາຕ ເຄືອງແຄ້ນ ຄຸກຄາມຈະฆ່າເສັຽ. ກິກຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸທັ້ງຫຼາຍວ່າ ດູຣາກິກຸທັ້ງຫຼາຍ ເຮົາອນຸຌາຕໃຫ້ທຳຄວາມເຫັນແຍ້ງໄດ້.

ກິກຸທັ້ງຫຼາຍທຳຄວາມເຫັນແຍ້ງໃນສຳນັກພຣະຉັພພັຄຄີຍ໌ເຫຼົ່ານັ້ນນັ່ນແຫຼະ. ພຣະຉັພພັຄຄີຍ໌ໄດ້ອາฆາຕ ເຄືອງແຄ້ນ ຄຸກຄາມຈະฆ່າເສັຽ. ກິກຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸທັ້ງຫຼາຍວ່າ ດູຣາກິກຸທັ້ງຫຼາຍ ເຮົາອນຸຌາຕໃຫ້ກິກຸ ໔-໕ ອົງຄ໌ຄັດຄ້ານ ໃຫ້ກິກຸ ໒-໓ ອົງຄ໌ ທຳຄວາມເຫັນແຍ້ງ ໃຫ້ກິກຸອົງຄ໌ດຽວຄຶດໃນໃຈວ່າ ກັມມ໌ນັ້ນບໍ່ຄວຣແກ່ເຮົາ.

ແກ຺້ງສູຕປາຕິໂມກຂ໌ບໍ່ໃຫ້ໄດ້ຍິນ

[໑໗໔] ກໍໂດຍສມັຍນັ້ນແລ ພຣະຉັພພັຄຄີຍ໌ແກ຺້ງສູຕປາຕິໂມກຂ໌ໃນທ່າມກາງສົງฆ໌ບໍ່ໃຫ້ໄດ້ຍິນ. ກິກຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງຫ້າມກິກຸທັ້ງຫຼາຍວ່າ ດູຣາກິກຸທັ້ງຫຼາຍ ອັນກິກຸຜູ້ສູຕປາຕິໂມກຂ໌ບໍ່ຄວຣແກ຺້ງສູຕບໍ່ໃຫ້ໄດ້ຍິນ ອົງຄ໌ໃດສູຕບໍ່ໃຫ້ໄດ້ຍິນ ຕ້ອງອາບັຕິທຸກກົฎ.

ສມັຍຕໍ່ມາ ທ່ານພຣະອຸທາຍີເປັນຜູ້ສູຕປາຕິໂມກຂ໌ແກ່ສົງฆ໌ ແຕ່ມີສຽງຟ່າຄືສຽງກາ. ຄັ້ງນັ້ນ ທ່ານພຣະອຸທາຍີໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງບັญญັຕິໄວ້ແລ້ວວ່າ ກິກຸສູຕປາຕິໂມກຂ໌ຕ້ອງສູຕໃຫ້ໄດ້ຍິນທົ່ວກັນ ກໍອາຕມາມີສຽງຟ່າຄືສຽງກາ ອາຕມາອາຈຈະປຕິບັຕິຢ່າງໃດນໍ ຈຶ່ງແຈ້ງເຣື່ອງນັ້ນແກ່ກິກຸທັ້ງຫຼາຍໆ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຸທັ້ງຫຼາຍວ່າ ດູຣາກິກຸທັ້ງຫຼາຍ ເຮົາອນຸຌາຕໃຫ້ກິກຸທີ່ສູຕປາຕິໂມກຂ໌ ພຍາຍາມສູຕດ້ວຍຕັ້ງໃຈວ່າຈະສູຕໃຫ້ໄດ້ຍິນຄຳທົ່ວກັນ ເມື່ອພຍາຍາມ ບໍ່ຕ້ອງອາບັຕິ.

ຫ້າມສູຕປາຕິໂມກຂ໌ໃນບໍຣິບັທທີ່ມີຄຣືຫັສຖ໌

[໑໗໓] ກໍໂດຍສມັຍນັ້ນແລ ພຣະເທວທັຕຕ໌ສູຕປາຕິໂມກຂ໌ໃນບໍຣິບັທທີ່ມີຄຣືຫັສຖ໌ປົນຢູ່ດ້ວຍ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສູຕປາຕິໂມກຂ໌ໃນບໍຣິບັທທີ່ມີຄຣືຫັສຖ໌ປົນຢູ່ດ້ວຍ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຜ.

ຕ້ອງໄດ້ຮັບອາຣາຮນາຈຶ່ງສູຕປາຕິໂມກຂ໌ໄດ້

[໑໗໔] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ບໍ່ໄດ້ຮັບອາຣາຮນາສູຕປາຕິໂມກຂ໌ໃນທ່າມກາງສົງຄ໌. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ໄດ້ຮັບອາຣາຮນາ ບໍ່ຄວຣສູຕປາຕິໂມກຂ໌ໃນທ່າມກາງສົງຄ໌ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຜ.

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕປາຕິໂມກຂ໌ໃຫ້ເປັນໜ້າທີ່ຂອງພຣະເຖຣະ.

ອັຜຜຕິຕຖີຍກາຕວາຣທີ່ ໑໑ ຈົບ.

ໜ້າທີ່ສູຕປາຕິໂມກຂ໌

[໑໗໕] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ໓ ພຣະນຄຣຣາຊຄຣືຫ໌ຕາມພຣະພຸທຮາກິຣົມຍ໌ແລ້ວ ສເດັຈຈາຣິກໂດຍມັຄຄາອັນຈະໄປເມືອງໂຈທນາວັຕຖຸ ສເດັຈຈາຣິກໂດຍລຳດັບ ລຸເຖິງເມືອງໂຈທນາວັຕຖຸແລ້ວ. ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ມີກິກຂຸຢູ່ດ້ວຍກັນຫຼາຍອົງຄ໌. ບັຣດາກິກຂຸເຫຼົ່ານັ້ນພຣະເຖຣະເປັນຜູ້ໂງ່ ບໍ່ສລາດ. ທ່ານບໍ່ຮູ້ອຸໂບສົຖ ຫຼືວິຊີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິຊີສູຕປາຕິໂມກຂ໌ ຈຶ່ງກິກຂຸເຫຼົ່ານັ້ນຄິດກັນວ່າ ພຣະຜູ້ມີພຣະກາຄທຮົງບັຜຜັຕິໄວ້ແລ້ວວ່າ ປາຕິໂມກຂ໌ເປັນໜ້າທີ່ຂອງພຣະເຖຣະ ກໍພຣະເຖຣະຂອງພວກເຮົາຮູປນີ້ເປັນຜູ້ໂງ່ ບໍ່ສລາດ ບໍ່ຮູ້ອຸໂບສົຖ ຫຼືວິຊີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ຫຼືວິຊີສູຕປາຕິໂມກຂ໌ ພວກເຮົາອາຈຈະປຕິບັຕິຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຣັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ບັຣດາກິກຂຸເຫຼົ່ານັ້ນ ກິກຂຸອົງຄ໌ໃດເປັນຜູ້ສລາດ ສາມາຖ ເຮົາອນຸຍາຕປາຕິໂມກຂ໌ໃຫ້ເປັນໜ້າທີ່ຂອງກິກຂຸຮູປນັ້ນ.

ທຮົງໃຫ້ສົ່ງພິກຂຸໄປສຶກສາປາຕິໂມກຂ໌

[໑໗໙] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸຢູ່ດ້ວຍກັນຫຼາຍອົງຄ໌ ລ້ວນເປັນຜູ້ໂງ່ ບໍ່ສລາດ. ພວກທ່ານບໍ່ຮູ້ອຸໂບສົຖ ຫຼືວິທີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌. ພວກທ່ານຈຶ່ງອາຣາທນາພຣະເຖຣະວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ທ່ານຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພິກຂຸທັ້ງຫຼາຍຈຶ່ງອາຣາທນາພຣະເຖຣະອົງຄ໌ທີ່ ໔ ວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ແມ້ທ່ານກໍຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພິກຂຸທັ້ງຫຼາຍຈຶ່ງອາຣາທນາພຣະເຖຣະອົງຄ໌ທີ່ ໓ ວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ແມ້ທ່ານກໍຕອບ ຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພິກຂຸເຫຼົ່ານັ້ນໄດ້ອາຣາທນາຈົນເຖິງພຣະສັງຄນວກະໂດຍວິທີນີ້ແຫຼະວ່າ ຂໍທ່ານຈົ່ງສູຕປາຕິໂມກຂ໌. ແມ້ທ່ານກໍຕອບຢ່າງນີ້ວ່າ ຂ້ານ້ອຍສູຕປາຕິໂມກຂ໌ບໍ່ໄດ້ ໂດຍຂ້ານ້ອຍ. ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງເຖິງວັນອຸໂບສົຖ ພິກຂຸໃນສາສນານີ້ຢູ່ດ້ວຍກັນຫຼາຍ ລ້ວນເປັນຜູ້ໂງ່ ບໍ່ສລາດ. ພວກທ່ານບໍ່ຮູ້ອຸໂບສົຖ ຫຼືວິທີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌. ພວກທ່ານຈຶ່ງອາຣາທນາພຣະເຖຣະວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ທ່ານຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພວກທ່ານຈຶ່ງອາຣາທນາພຣະເຖຣະອົງຄ໌ທີ່ ໔ ວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ແມ້ທ່ານກໍຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພວກທ່ານຈຶ່ງອາຣາທນາພຣະເຖຣະອົງຄ໌ທີ່ ໓ ວ່າ ຂໍພຣະເຖຣະຈົ່ງສູຕປາຕິໂມກຂ໌ ໂດຍຂ້ານ້ອຍ. ແມ້ທ່ານກໍຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ເຮົາສູຕປາຕິໂມກຂ໌ບໍ່ໄດ້. ພວກລາວໄດ້ອາຣາທນາຈົນເຖິງພຣະສັງຄນວກະໂດຍວິທີນີ້ແຫຼະວ່າ ຂໍທ່ານຈົ່ງສູຕປາຕິໂມກຂ໌. ແມ້ທ່ານຮູບນັ້ນກໍຕອບຢ່າງນີ້ວ່າ ຂ້ານ້ອຍສູຕປາຕິໂມກຂ໌ບໍ່ໄດ້ ໂດຍຂ້ານ້ອຍ.

ດູຣາພິກຂຸທັ້ງຫຼາຍ ພິກຂຸເຫຼົ່ານັ້ນຄວຣສົ່ງພິກຂຸອົງຄ໌ນຶ່ງໄປສູ່ອາວາສໃກ້ຄຽງ ພໍຈະກັບມາທັນໃນວັນນັ້ນ ດ້ວຍສັ່ງວ່າ ດູຣາອາວຸໂສ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫຼືໂດຍພິສດາຣມາ.

ຄັ້ງນັ້ນ ພິກຂຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ອາຈຈະສົ່ງພິກຂຸອົງຄ໌ໃດນໍໄປ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິກຂຸຜູ້ເຖຣະບັນຊາພິກຂຸຜູ້ນວກະໄປ.

ພິກຂຸນວກະທັ້ງຫຼາຍອັນພຣະເຖຣະບັນຊາແລ້ວບໍ່ຍອມໄປ. ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພິກຂຸບໍ່ອາພາສອັນພຣະເຖຣະບັນຊາແລ້ວຈະບໍ່ຍອມໄປບໍ່ໄດ້ ອົງຄ໌ໃດບໍ່ຍອມໄປ ຕ້ອງອາບັຕິທຸກກົຕ.

ພຣະພຸທສານຸຌາຕໃຫ້ຮຽນປັກຂຄຓນາ

[໑໗໗] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ທີ່ເມືອງໂຈທນາວັຕຖຸຕາມພຣະພຸທສາທິຣົມຍ໌ແລ້ວ ສເດັຈກັບມາຍັງພຣະນຄຣຣາຊຄຣິຫ໌ອີກ. ກໍໂດຍສມັຍນັ້ນແລ ຊາວບ້ານຖາມກິກษุທັ້ງຫຼາຍທີ່ກຳລັງທ່ຽວບິຓฑບາຕວ່າ ດິຖີທີ່ເທົ່າໃດແຫ່ງປັກษ໌ ເຈົ້າຂ້າ? ກິກษุທັ້ງຫຼາຍຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພວກອາຕມາບໍ່ຮູ້ເລີຍ. ຊາວບ້ານຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແມ້ພຽງນັບປັກษ໌ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ກໍຍັງບໍ່ຮູ້ ແນວໃດຈະຮູ້ຄຸຓຄວາມດີຫຍັງຢ່າງອື່ນລະ. ກິກษุທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກษุທັ້ງຫຼາຍວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸຌາຕໃຫ້ຮຽນປັກຂຄຓນາ.

ຄັ້ງນັ້ນ ກິກษุທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກິກษุອົງຄ໌ໃດນໍຄວຣຮຽນ**ປັກຂຄຓນາ**[11] ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກษุທັ້ງຫຼາຍວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸຌາຕໃຫ້ກິກษุທຸກໆ ອົງຄ໌ຮຽນປັກຂຄຓນາ.

ກໍໂດຍສມັຍນັ້ນແລ ຊາວບ້ານຖາມກິກษุທັ້ງຫຼາຍທີ່ກຳລັງທ່ຽວບິຓฑບາຕວ່າ ກິກษุມີຈຳນວນເທົ່າໃດ ເຈົ້າຂ້າ? ກິກษุທັ້ງຫຼາຍຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພວກອາຕມາບໍ່ຮູ້ເລີຍ. ຊາວບ້ານຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແມ້ພວກກັນເອງ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ກໍຍັງບໍ່ຮູ້ ແນວໃດຈັກຮູ້ຄວາມດີຫຍັງຢ່າງອື່ນລະ. ກິກษุທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກษุທັ້ງຫຼາຍວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸຌາຕໃຫ້ນັບກິກษุ.

ຄັ້ງນັ້ນ ກິກษุທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ເມື່ອໃດນໍເຮົາຄວຣນັບກິກษุ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກษุທັ້ງຫຼາຍວ່າ ເຮົາອນຸຌາຕໃຫ້ນັບກິກษุດ້ວຍເອີ້ນຊື່ຫຼືໃຫ້ຈັບສລາກໃນວັນອຸໂບສົຖ.

---

[11] **ປັກຂຄຓນາ, ປັກษຄຓນາ** "ການນັບປັກษ໌" ວິຊີຄຳນວຓດິຖີຕາມປັກษ໌ ຄື ຄຳນວຓຫາວັນຂຶ້ນທຳອິດຈັກຄ່ຳໆ ໃຫ້ແມ່ນຍຳຕົງຕາມກາຣໂຄຈຣຂອງດວງຈັນທຣ໌ຢ່າງແທ້ຈິງ ສະເພາະຢ່າງຍິ່ງມຸ່ງໃຫ້ໄດ້ວັນພຣະຈັນທຣ໌ເຕັມດວງຫຼືວັນເພັງ (ຂຶ້ນ ໑໔ - ໑໕ ຄ່ຳ) ວັນພຣະຈັນທຣ໌ດັບ ຫຼືວັນດັບ (ແຮມ ໑໔ - ໑໕ ຄ່ຳ) ແລະວັນພຣະຈັນທຣ໌ເຄິ່ງດວງ (ຂຶ້ນ ໘ ຄ່ຳ ແລະແຮມ ໘ ຄຳ) ຕົງກັບວັນທີ່ດວງຈັນທຣ໌ເປັນຈັ່ງສັ້ນແທ້ໆ ຊຶ່ງບາງເດືອນຂ້າງຂຶ້ນອາຈມີພຽງ ໑໔ ວັນ (ວັນເພັງ ເມື່ອຂຶ້ນ ໑໔ ຄ່ຳ) ກໍມີຂ້າງແຮມອາຈມີເຕັມ ໑໕ ວັນຕິດຕໍ່ກັນຫຼາຍເດືອນກໍມີ ຕ້ອງກວຈເບິ່ງເປັນປັກษ໌ໆ ໄປ ຈຶ່ງໃຊ້ຄຳປັກษ໌ຖ້ວນ ປັກษ໌ຂາດບໍ່ແມ່ນພຽງເດືອນເຕັມ ເດືອນຂາດ ເປັນວິຊີຄຳນວຓທີ່ສລັບຊັບຊ້ອນ ຕ່າງຈາກປຝິທິນຫລວງ ຫຼືປຝິທິນຂອງຣາຊກາຣທີ່ໃຊ້ວິຊີຄຳນວຓຂເລັ່ງໃຫ້ຂ້າງຂຶ້ນເຕັມ ໑໕ ວັນສເມີໄປ ສ່ວນຂ້າງແຮມ ເດືອນຄູ່ມີ ໑໕ ວັນ ເດືອນຄີ່ເອີ້ນວ່າເດືອນຂາດມີ + ໔ ວັນ ເດືອນຄີ່ເອີ້ນວ່າເດືອນຂາດມີ ໑໔ ວັນ ສລັບກັນໄປ (ແມ້ຈະຄຳນວຓດ້ວຍວິຊີທີ່ພິເສษອອກໄປ ແຕ່ວັນເດືອນເພັງເດືອນດັບທີ່ຕົງກັນກໍຫຼາຍ ທີ່ຄລາດກັນກໍພຽງວັນດຽວ)

ພຣະພຸທສານຸຍາຕໃຫ້ບອກວັນອຸໂບສົຖ

[໑໗໘] ກໍໂດຍສມັຍນັ້ນແລ ກິກບຸທັ້ງຫຼາຍບໍ່ຮູ້ວ່າວັນນີ້ເປັນວັນອຸໂບສົຖ ໄປບິຕຫບາຕ ໓ ຫມູ່ບ້ານທີ່ໄກລ. ພວກທ່ານມາເຖິງເມື່ອກຳລັງສູຕປາຕິໂມກຂ໌ກໍມີ ມາເຖິງເມື່ອສູຕຈົບແລ້ວກໍມີ. ກິກບຸ-ທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ບອກວ່າ ວັນນີ້ເປັນວັນອຸໂບສົຖ.

ຄັ້ງນັ້ນ ກິກບຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກິກບຸອົງຄ໌ໃດນໍຄວຣບອກ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກບຸເຖຣະບອກແຕ່ເຊົ້າມືດ.

ສມັຍຕໍ່ມາ ພຣະເຖຣະອົງຄ໌ນຶ່ງ ເວລາເຊົ້າມືດຣະລຶກບໍ່ໄດ້. ກິກບຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ບອກ ແມ້ໃນເວລາກັຕຕກາລ. ແມ້ໃນເວລາກັຕຕກາລ ພຣະເຖຣະນັ້ນກໍຣະລຶກບໍ່ໄດ້. ກິກບຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ບອກໃນກາລທີ່ຕົນຣະລຶກໄດ້.

ບຸພພກຣຓ໌ແລະບຸພພກິຈໃນໂຮງອຸໂບສົຖ

[໑໗໙] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ໂຮງອຸໂບສົຖຮົກ. ພວກພຣະອາຄັນຕຸກະພາກັນເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດກິກບຸທັ້ງຫຼາຍຈຶ່ງບໍ່ກວາດໂຮງອຸໂບສົຖລະ. ກິກບຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກວາດໂຮງອຸໂບສົຖ.

ຄັ້ງນັ້ນ ກິກບຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກິກບຸອົງຄ໌ໃດນໍຄວຣກວາດໂຮງອຸໂບສົຖ ແລ້ວຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກບຸເຖຣະບັຍຊາກິກບຸນວກະ.

ກິກບຸນວກະທັ້ງຫຼາຍອັນພຣະເຖຣະບັຍຊາແລ້ວບໍ່ຍອມກວາດ. ກິກບຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ກິກບຸບໍ່ອາພາธ ອັນພຣະເຖຣະບັຍຊາແລ້ວ ຈະບໍ່ກວາດບໍ່ໄດ້ ອົງຄ໌ໃດບໍ່ກວາດ ຕ້ອງອາບັຕິທຸກກົฏ.

ສມັຍຕໍ່ມາ ໃນໂຮງອຸໂບສົຖ ບໍ່ມີໃຜປູອາສນະໄວ້. ກິກບຸທັ້ງຫຼາຍນັ່ງທີ່ພື້ນດິນ. ທັ້ງໂຕທັ້ງຈີວຣ ເປື້ອນຝຸ່ນ. ກິກບຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປູອາສນະໃນໂຮງອຸໂບສົຖ.

ຄັ້ງນັ້ນ ກິກບຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກິກບຸອົງຄ໌ໃດນໍ ຄວຣປູອາສນະໃນໂຮງອຸໂບສົຖ

ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາ ກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ເຖຣະບັຍຊາກິກຂຸນວກະ.

ກິກຂຸນວກະທັ້ງຫຼາຍອັນພຣະເຖຣະບັຍຊາແລ້ວບໍ່ປູອາສນະ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ອາພາສ ອັນພຣະເຖຣະບັຍຊາແລ້ວ ຈະບໍ່ປູອາສນະບໍ່ໄດ້ ອົງຄ໌ໃດບໍ່ປູ ຕ້ອງອາບັຕິທຸກກົຍ.

ສມັຍຕໍ່ມາ ໃນໂຮງອຸໂບສົຖ ບໍ່ໄດ້ຕາມປະທີປໄວ້. ເວລາຄ່ຳຄືນກິກຂຸທັ້ງຫຼາຍຫຍຽບກາຍ ກັນແດ່ ຫຍຽບຈີວຣກັນແດ່ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕ ແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ຕາມປະທີປໃນໂຮງອຸໂບສົຖ.

ຄັ້ງນັ້ນ ກິກຂຸທັ້ງຫຼາຍໄດ້ມີຄວາມປຣິວິຕົກວ່າ ກິກຂຸອົງຄ໌ໃດນໍຄວຣຕາມປະທີປໃນໂຮງອຸໂບສົຖ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາ ກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ເຖຣະບັຍຊາກິກຂຸນວກະ.

ກິກຂຸນວກະທັ້ງຫຼາຍ ອັນພຣະເຖຣະບັຍຊາແລ້ວບໍ່ຍອມຕາມປະທີປ. ກິກຂຸທັ້ງຫຼາຍຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸ ບໍ່ອາພາສອັນພຣະເຖຣະບັຍຊາແລ້ວ ຈະບໍ່ຕາມປະທີປບໍ່ໄດ້ ອົງຄ໌ໃດບໍ່ຕາມປະທີປ ຕ້ອງອາບັຕິທຸກກົຍ.

ຈະໄປໃສຕ້ອງອາປຸຈຊາກ່ອນ

[໑໗໐] ກໍໂດຍສມັຍນັ້ນແລ ກິກຂຸຫຼາຍອົງຄ໌ດ້ວຍກັນເປັນຜູ້ໂງ່ ບໍ່ສລາດ ໄປສູ່ທິສ ບໍ່ອຳລາ ພຣະອຸປັຊຊາຍ໌ ອາຈາຣຍ໌. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສາສນານີ້ຫຼາຍອົງຄ໌ດ້ວຍກັນເປັນຜູ້ໂງ່ ບໍ່ສລາດ ໄປສູ່ທິສ ບໍ່ອຳລາພຣະອຸປັຊຊາຍ໌ ອາຈາຣຍ໌. ພວກທ່ານອັນພຣະອຸປັຊຊາຍ໌ ອາຈາຣຍ໌ຄວຣຖາມວ່າ ທ່ານທັ້ງຫຼາຍຈັກໄປໃສ? ຈັກໄປກັບໃຜ? ຖ້າພວກທ່ານເປັນຜູ້ໂງ່ ບໍ່ສລາດ ເວົ້າອ້າງເຖິງກິກຂຸ ເຫຼົ່າອື່ນທີ່ເປັນຜູ້ໂງ່ ບໍ່ສລາດດ້ວຍກັນ ພຣະອຸປັຊຊາຍ໌ ອາຈາຣຍ໌ ບໍ່ຄວຣອນຸຍາຕ ຖ້າອນຸຍາຕ ຕ້ອງອາບັຕິທຸກກົຍ.

ດູຣາກິກຂຸທັ້ງຫຼາຍ ຖ້າພວກທ່ານເປັນຜູ້ໂງ່ ບໍ່ສລາດ ອັນພຣະອຸປັຊຊາຍ໌ ອາຈາຣຍ໌ ບໍ່ອນຸຍາຕ ຖ້າຍັງຂືນໄປ ຕ້ອງອາບັຕິທຸກກົຍ.

ຄວຣສົງເຄາະຫ໌ພຣະພຫູສູຕ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສາສນານີ້ຢູ່ໃນອາວາສແຫ່ງນຶ່ງຫຼາຍອົງຄ໌ດ້ວຍກັນ ລ້ວນເປັນ ຜູ້ໂງ່ ບໍ່ສລາດ. ພວກທ່ານບໍ່ຮູ້ອຸໂບສົຖຫຼືວິທີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌.

ພິກຂຸອົງຄ໌ອື່ນມາໃນອາວາສນັ້ນ ເປັນຜູ້ຄົງແກ່ຮຽນ ຊຳນານໃນຄັມພີຣ໌ ທຣົງສັມມ໌ ທຣົງວິນັຍ ທຣົງມາຕິກາ ເປັນບັຕພິຕ ສລາດ ມີປັນຍາ ມີຄວາມລະອາຍ ນ່າຍ ມັກຕໍ່ສິກຂາ. ດູຣາພິກຂຸທັ້ງຫຼາຍ ພິກຂຸເຫຼົ່ານັ້ນຄວຣສົງເຄາະຫ໌ ອນຸເຄາະຫ໌ ປູາສຣັຍ ບຳຣຸງທ່ານດ້ວຍຈຸຕດິນ ໄມ້ສີແຂ້ວ ນ້ຳບ້ວນປາກ ຖ້າບໍ່ສົງເຄາະຫ໌ ອນຸເຄາະຫ໌ ປູາສຣັຍ ບຳຣຸງດ້ວຍຈຸຕດິນ ໄມ້ສີແຂ້ວ ນ້ຳບ້ວນປາກ ຕ້ອງອາບັຕິທຸກກົຏ.

ທຣົງໃຫ້ສົ່ງພຣະໄປຮຽນປາຕິໂມກຂ໌

ດູຣາພິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ພິກຂຸໃນສາສດານີ້ຢູ່ດ້ວຍກັນຫຼາຍອົງຄ໌ ລ້ວນເປັນຜູ້ໂງ່ ບໍ່ສລາດ. ພວກທ່ານບໍ່ຮູ້ອຸໂບສົຖ ຫຼືວິທີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌. ດູຣາພິກຂຸທັ້ງຫຼາຍ ພິກຂຸເຫຼົ່ານັ້ນຄວຣສົ່ງພິກຂຸອົງຄ໌ນຶ່ງໄປສູ່ອາວາສໃກ້ຄຽງ ພໍຈະກັບມາທັນໃນວັນນັ້ນ ດ້ວຍສັ່ງວ່າ ດູຣາອາວຸໂສ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ ຫຼືໂດຍພິສດາຣມາ. ຖ້າໄດ້ພິກຂຸເຊັ່ນນັ້ນຢ່າງນີ້ ນັ່ນເປັນກາຣດີ ຖ້າບໍ່ໄດ້ ພິກຂຸເຫຼົ່ານັ້ນທຸກໆ ອົງຄ໌ຄວຣພາກັນໄປສູ່ອາວາສທີ່ມີພິກຂຸຮູ້ອຸໂບສົຖ ຫຼືວິທີທຳອຸໂບສົຖ ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌ ຖ້າບໍ່ພາກັນໄປ ຕ້ອງອາບັຕິທຸກກົຏ.

ທຣົງອນຸຍາຕໃຫ້ຈຳພັຣສາໃນອາວາສທີ່ມີຜູ້ສູຕປາຕິໂມກຂ໌ໄດ້

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸໃນສາສນານີ້ ຢູ່ຈຳພັຣສາໃນອາວາສແຫ່ງນຶ່ງຫຼາຍອົງຄ໌ດ້ວຍກັນ ລ້ວນເປັນຜູ້ໂງ່ ບໍ່ສລາດ. ພວກທ່ານບໍ່ຮູ້ອຸໂບສົຖ ຫຼືວິທີທຳອຸໂບສົຖ ບໍ່ຮູ້ປາຕິໂມກຂ໌ ຫຼືວິທີສູຕປາຕິໂມກຂ໌. ດູຣາພິກຂຸທັ້ງຫຼາຍ ພິກຂຸເຫຼົ່ານັ້ນຄວຣສົ່ງພິກຂຸອົງຄ໌ນຶ່ງໄປສູ່ອາວາສໃກ້ຄຽງ ພໍຈະຈະກັບມາທັນໃນວັນນັ້ນ ດ້ວຍສັ່ງວ່າ ດູຣາອາວຸໂສ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫຼືໂດຍພິສດາຣມາ. ຖ້າໄດ້ພິກຂຸເຊັ່ນນັ້ນຢ່າງນີ້ ນັ່ນເປັນກາຣດີ ຖ້າບໍ່ໄດ້ ຄວຣສົ່ງພິກຂຸອົງຄ໌ນຶ່ງໄປຊົ່ວຣະຍະກາລ ໗ ວັນ ດ້ວຍສັ່ງວ່າ ດູຣາອາວຸໂສ ທ່ານຈົ່ງໄປຮຽນປາຕິໂມກຂ໌ໂດຍຫຍໍ້ຫຼືໂດຍພິສດາຣມາ. ຖ້າໄດ້ພິກຂຸເຊັ່ນນັ້ນຢ່າງນີ້ ນັ່ນເປັນກາຣດີ ຖ້າບໍ່ໄດ້ ພິກຂຸເຫຼົ່ານັ້ນບໍ່ຄວຣຢູ່ຈຳພັຣສາໃນອາວາສນັ້ນ ຖ້າຂືນຢູ່ ຕ້ອງອາບັຕິທຸກກົຏ.

ພຣະພຸທສານຸຍາຕໃຫ້ມອບປາຣິສຸທສິ

[໑໗໑] ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ພວກທ່ານຈົ່ງປະຊຸມກັນ ສົງຄ໌ຈະທຳອຸໂບສົຖ. ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພິກຂຸອົງຄ໌ນຶ່ງໄດ້ຂາບທູລພຣະຜູ້ມີພຣະພາຄວ່າ ຍັງມີພິກຂຸອາພາສ ທ່ານມາບໍ່ໄດ້ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະພາຄຮັບສັ່ງວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິກຂຸອາພາສມອບ**ປາຣິສຸທສິ**[12].

ວິທີມອບປາຣິສຸທສິ

ດູຣາພິກຂຸທັ້ງຫຼາຍ ກໍແລ ຄວຣມອບປາຣິສຸທສິ ຢ່າງນີ້:-

ພິກຂຸອາພາສນັ້ນຄວຣເຂົ້າໄປຫາພິກຂຸອົງຄ໌ນຶ່ງ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຍໍ້ ປະຄອງອັຍຊລີ ແລ້ວກ່າວຄຳມອບປາຣິສຸທສິຢ່າງນີ້ວ່າ ຂ້າພເຈົ້າຂໍມອບປາຣິສຸທສິ ຂໍທ່ານຈົ່ງນຳປາຣິສຸທສິຂອງຂ້າພເຈົ້າໄປ ຂໍທ່ານຈົ່ງບອກປາຣິສຸທສິຂອງຂ້າພເຈົ້າ.

ພິກຂຸຮັບດ້ວຍກາຍ ຮັບດ້ວຍວາຈາ ຮັບດ້ວຍທັ້ງກາຍແລະວາຈາກໍໄດ້ ເປັນອັນພິກຂຸອາພາສມອບປາຣິສຸທສິແລ້ວ. ບໍ່ຮັບດ້ວຍກາຍ ບໍ່ຮັບດ້ວຍວາຈາ ບໍ່ຮັບດ້ວຍທັ້ງກາຍແລະວາຈາ ບໍ່ເປັນອັນພິກຂຸອາພາສມອບປາຣິສຸທສິ. ຖ້າໄດ້ພິກຂຸເຊັ່ນນັ້ນຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ພິກຂຸທັ້ງຫຼາຍຄວຣໃຊ້ຕຽງຫຼືຕັ່ງ ຫາມພິກຂຸອາພາສນັ້ນມາໃນທ່າມກາງສົງຄ໌ ແລ້ວທຳອຸໂບສົຖ.

ດູຣາພິກຂຸທັ້ງຫຼາຍ ຖ້າພວກພິກຂຸຜູ້ພຍາບາລໄຂ້ຄິດຢ່າງນີ້ວ່າ ຖ້າພວກເຮົາຈະຍ້າຍພິກຂຸອາພາສ ອາພາສຈັກກຳເຣີບຫນັກ ຫຼືບໍ່ດັ່ງນັ້ນກໍຈັກເຖິງມໍຣຕພາພ ດັ່ງນີ້ ບໍ່ຄວຣຍ້າຍພິກຂຸອາພາສ ສົງຄ໌ຄວຣໄປທຳອຸໂບສົຖໃນສຳນັກພິກຂຸອາພາສນັ້ນ ແຕ່ສົງຄ໌ເປັນວັຄຄ໌ ບໍ່ຄວຣທຳອຸໂບສົຖເລີຍ ຖ້າຂືນທຳ ຕ້ອງອາບັຕິທຸກກົຏ.

ດູຣາພິກຂຸທັ້ງຫຼາຍ ເມື່ອພິກຂຸອາພາສມອບປາຣິສຸທສິແລ້ວ ຖ້າພິກຂຸຜູ້ນຳປາຣິສຸທສິ ຫລີບໄປຈາກທີ່ນັ້ນ ພິກຂຸອາພາສຄວຣມອບປາຣິສຸທສິແກ່ອົງຄ໌ອື່ນ.

ດູຣາພິກຂຸທັ້ງຫຼາຍ ເມື່ອພິກຂຸອາພາສມອບປາຣິສຸທສິແລ້ວ ຖ້າພິກຂຸຜູ້ນຳປາຣິສຸທສິສິກເສັຽໃນທີ່ນັ້ນແຫຼະ ເຖິງມໍຣຕພາພ ປຕິຍາຕເປັນສາມເຕຣ ປຕິຍາຕເປັນຜູ້ບອກລາສິກຂາ ປຕິຍາຕເປັນຜູ້ຕ້ອງອັນຕິມວັຕຖຸ ປຕິຍາຕເປັນຜູ້ວິກົລຈຣິຕ ປຕິຍາຕເປັນຜູ້ມີຈິຕຟຸ້ງຊ່ານ ປຕິຍາຕເປັນຜູ້ກະສັບກະສ່າຍເພາະເວທນາ ປຕິຍາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິ ປຕິຍາຕເປັນຜູ້ຖືກສົງຄ໌ຍົກເສັຽການ

---

[12] **ປາຣິສຸທສິ** ຄວາມບໍຣິສຸທສິ໌ຂອງພິກຂຸ, ເປັນສັມມັນຽມວ່າ ຖ້າມີພິກຂຸອາພາສຢູ່ໃນສີມາດຽວກັນ ເມື່ອເຖິງວັນອຸໂບສົຖບໍ່ສາມາຖໄປຮ່ວມປະຊຸມໄດ້ ພິກຂຸຜູ້ອາພາສຕ້ອງມອບປາຣິສຸທສິແກ່ພິກຂຸອົງຄ໌ນຶ່ງມາແຈ້ງແກ່ສົງຄ໌ ຄືໃຫ້ນຳຄວາມມາແຈ້ງແກ່ສົງຄ໌ວ່າຕົນມີຄວາມບໍຣິສຸທທ໌ທາງພຣະວິນັຍບໍ່ມີອາບັຕິຕິດຄ້າງ ຫຼືໃນມື້ອຸໂບສົຖ ມີພິກຂຸຢູ່ພຽງສອງຫຼືສາມອົງຄ໌ (ຄືເປັນພຽງຄຓະ) ບໍ່ຄົບອົງຄ໌ສົງຄ໌ທີ່ຈະສູຕປາຕິໂມກຂ໌ໄດ້ ກໍໃຫ້ພິກຂຸສອງຫຼືສາມອົງຄ໌ນັ້ນບອກຄວາມບໍຣິສຸທສິ໌ແກ່ກັນແທນການສູຕປາຕິໂມກຂ໌

ບໍ່ທຳຄືນອາບັຕິ ປຕິຍາຕເປັນຜູ້ຖືກສົງຜ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກ ປຕິຍາຕເປັນບັຕເຫາະກ໌ ປຕິຍາຕເປັນໄຖຍສັງວາສ ປຕິຍາຕເປັນຜູ້ເຂົ້າຮີດເດັຽຣຖີຍ໌ ປຕິຍາຕເປັນສັຕວ໌ດິຣັຈສານ ປຕິຍາຕເປັນຜູ້ຂ້າມາຣດາ ປຕິຍາຕເປັນຜູ້ຂ້າບິດາ ປຕິຍາຕເປັນຜູ້ຂ້າພຣະອຣຫັນຕ໌ ປຕິຍາຕເປັນຜູ້ປະທຸຍຮ້າຍກິກສຸຕີ ປຕິຍາຕເປັນຜູ້ທຳລາຍສົງຜ໌ ປຕິຍາຕເປັນຜູ້ທຳຮ້າຍພຣະສາສດາຈົນເຖິງຫໍ້ພຣະໂລຫິຕ ປຕິຍາຕເປັນອຸກໂຕ-ພຍັລຊນກ ກິກສຸອາພາສຄວຣມອບປາຣິສຸທສີແກ່ອົງຄ໌ອື່ນ.

ດູຣາກິກສຸທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີຫລົບໄປເສັຽໃນຣະຫວ່າງທາງ. ປາຣິສຸທສີບໍ່ເປັນອັນນຳມາ.

ດູຣາກິກສຸທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີສິກເສັຽໃນຣະຫວ່າງທາງ ເຖິງມໍຣຕກາພ ... ປຕິຍາຕເປັນອຸກໂຕພຍັລຊນກ ປາຣິສຸທສີບໍ່ເປັນອັນນຳມາ.

ດູຣາກິກສຸທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີເຂົ້າປະຊຸມສົງຜ໌ແລ້ວຫລົບໄປເສັຽ ປາຣິສຸທສີເປັນອັນນຳມາແລ້ວ.

ດູຣາກິກສຸທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີເຂົ້າປະຊຸມສົງຜ໌ແລ້ວ ສິກເສັຽ ເຖິງມໍຣຕກາພ ... ປຕິຍາຕເປັນອຸກໂຕພຍັລຊນກ ປາຣິສຸທສີເປັນອັນນຳມາແລ້ວ.

ດູຣາກິກສຸທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີເຂົ້າປະຊຸມສົງຜ໌ແລ້ວ ຫລັບເສັຽບໍ່ໄດ້ບອກ ເຜີໄປບໍ່ໄດ້ບອກ ເຂົ້າສມາບັຕິບໍ່ໄດ້ບອກ ປາຣິສຸທສີເປັນອັນນຳມາແລ້ວ. ກິກສຸຜູ້ນຳປາຣິສຸທສີບໍ່ຕ້ອງອາບັຕິ.

ດູຣາກຸມາຣທັ້ງຫຼາຍ ເມື່ອກິກສຸອາພາສມອບປາຣິສຸທສີແລ້ວ ຖ້າກິກສຸຜູ້ນຳປາຣິສຸທສີເຂົ້າປະຊຸມສົງຜ໌ແລ້ວ ແກ້ງບໍ່ບອກ ປາຣິສຸທສີເປັນອັນນຳມາແລ້ວ ແຕ່ກິກສຸຜູ້ນຳປາຣິສຸທສີ ຕ້ອງອາບັຕິທຸກກົຜ.

ພຣະພຸທສານຸຍາຕໃຫ້ມອບລັນທະ

[໑໘໔] ຄັ້ງນັ້ນ ພຣະຜູ້ມີພຣະກາຄຣັບສັ່ງກັບກິກສຸທັ້ງຫຼາຍວ່າ ດູຣາກຸມາຣທັ້ງຫຼາຍ ພວກທ່ານຈົ່ງປະຊຸມກັນ ສົງຜ໌ຈະທຳກັມມ໌. ເມື່ອພຣະຜູ້ມີພຣະກາຄຕຣັສຢ່າງນີ້ແລ້ວ ກິກສຸອົງຄ໌ນຶ່ງໄດ້ຂາບທູລພຣະຜູ້ມີພຣະກາຄວ່າ ຍັງມີກິກສຸອາພາສ ທ່ານມາບໍ່ໄດ້ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຣັບສັ່ງວ່າ ດູຣາກຸມາຣທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກສຸອາພາສມອບລັນທະ.

ວິສີມອບລັນທະ

ດູຣາກິກສຸທັ້ງຫຼາຍ ກໍແລ ຄວຣມອບລັນທະ ຢ່າງນີ້:-

ກິກສຸອາພາສນັ້ນຄວຣເຂົ້າໄປຫາກິກສຸອົງຄ໌ນຶ່ງ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັລຊລີ ແລ້ວກ່າວຄຳມອບລັນທະຢ່າງນີ້ວ່າ

ຂ້າພເຈົ້າຂໍມອບຉັນທະ ຂໍທ່ານຈົ່ງນຳຉັນທະຂອງຂ້າພເຈົ້າໄປ ຂໍທ່ານຈົ່ງບອກຉັນທະຂອງຂ້າພເຈົ້າ.

ກິກຂຸຮັບດ້ວຍກາຍ ຮັບດ້ວຍວາຈາ ຮັບດ້ວຍທັ້ງກາຍແລະວາຈາກໍໄດ້ ເປັນອັນກິກຂຸອາພາສມອບຉັນທະແລ້ວ. ບໍ່ຮັບດ້ວຍກາຍ ບໍ່ຮັບດ້ວຍວາຈາ ບໍ່ຮັບດ້ວຍທັ້ງກາຍແລະວາຈາ ບໍ່ເປັນອັນກິກຂຸອາພາສມອບຉັນທະ. ຖ້າໄດ້ກິກຂຸຜູ້ຮັບຢ່າງນີ້ ນັ່ນເປັນກາຣດີ ຖ້າບໍ່ໄດ້ ກິກຂຸທັ້ງຫຼາຍຄວຣໃຊ້ຕຽງຫຼືຕັ່ງຫາມກິກຂຸອາພາສນັ້ນມາໃນທ່າມກາງສົງຄ໌ແລ້ວທຳກັມມ໌.

ດູຣາກິກຂຸທັ້ງຫຼາຍ ຖ້າພວກກິກຂຸຜູ້ພຍາບາລໄຂ້ຄິດຢ່າງນີ້ວ່າ ຖ້າພວກເຮົາຈະຍ້າຍກິກຂຸອາພາສ ອາພາສຈັກກຳເຣີບຫນັກ ຫຼືບໍ່ດັ່ງນັ້ນກໍຈັກເຖິງມໍຣຕະກາພ ດັ່ງນີ້ ບໍ່ຄວຣຍ້າຍກິກຂຸອາພາສ ສົງຄ໌ຄວຣໄປທຳກັມມ໌ໃນສຳນັກກິກຂຸອາພາສນັ້ນ ແຕ່ສົງຄ໌ເປັນວັຄຄ໌ ບໍ່ຄວຣທຳກັມມ໌ເລີຍ ຖ້າຂືນທຳ ຕ້ອງອາບັຕິທຸກກົຏ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຉັນທະແລ້ວ ຖ້າກິກຂຸຜູ້ນຳຉັນທະຫລີກໄປເສັຽຈາກທີ່ນັ້ນ ກິກຂຸອາພາສຄວຣມອບຉັນທະແກ່ອົງຄ໌ອື່ນ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຉັນທະແລ້ວ ຖ້າກິກຂຸຜູ້ນຳຉັນທະສຶກເສັຽໃນທີ່ນັ້ນແຫຼະ ເຖິງມໍຣຕກາພເສັຽ ປຕິຍາຓເປັນສາມເຕຣ ປຕິຍາຓເປັນຜູ້ບອກລາສິກຂາ ປຕິຍາຓເປັນຜູ້ຕ້ອງອັນຕິມວັຕຖຸ ປຕິຍາຓເປັນຜູ້ວິກົລຈຣິຕ ປຕິຍາຓເປັນຜູ້ມີຈິຕຟຸ້ງຊ່ານ ປຕິຍາຓເປັນຜູ້ກະສັບກະສ່າຍເພາະເວທນາ ປຕິຍາຓເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິ ປຕິຍາຓເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ທຳຄືນອາບັຕິ ປຕິຍາຓເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກ ປຕິຍາຓເປັນບັຒເຫາະກ໌ ປຕິຍາຓເປັນໄຖຍສັງວາສ ປຕິຍາຓເປັນຜູ້ເຂົ້າຮີດເດັຽຣຖີຍ໌ ປຕິຍາຓເປັນສັຕວ໌ດິຣັຈສານ ປຕິຍາຓເປັນຜູ້ຂ່າມາຣດາ ປຕິຍາຓເປັນຜູ້ຂ່າບິດາ ປຕິຍາຓເປັນຜູ້ຂ່າພຣະອຣຫັນຕ໌ ປຕິຍາຓເປັນຜູ້ປະທຸຊຮ້າຍກິກຂຸຕີ ປຕິຍາຓເປັນຜູ້ທຳລາຍສົງຄ໌ ປຕິຍາຓເປັນຜູ້ທຳຮ້າຍພຣະສາສດາຈົນເຖິງຫໍ້ພຣະໂລຫິຕ ປຕິຍາຓເປັນອຸກໂຕພຍັລຊນກ ກິກຂຸອາພາສຄວຣມອບຉັນທະແກ່ອົງຄ໌ອື່ນ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຉັນທະແລ້ວ ຖ້າກິກຂຸຜູ້ນຳຉັນທະຫລີກໄປເສັຽໃນຣະຫວ່າງທາງ ຉັນທະບໍ່ເປັນອັນນຳມາ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຉັນທະແລ້ວ ຖ້າກິກຂຸຜູ້ນຳຉັນທະສຶກເສັຽໃນຣະຫວ່າງທາງ ເຖິງມໍຣຕະກາພ ... ປຕິຍາຓເປັນອຸກໂຕພຍັລຊນກ ຉັນທະບໍ່ເປັນອັນນຳມາ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຉັນທະແລ້ວ ຖ້າກິກຂຸຜູ້ນຳຉັນທະເຂົ້າປະຊຸມສົງຄ໌ແລ້ວຫລີກໄປເສັຽ ຉັນທະອັນເປັນນຳມາແລ້ວ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຈັນທະແລ້ວ ຖ້າກິກຂຸຜູ້ນຳຈັນທະເຂົ້າປະຊຸມສົງฆ์ ແລ້ວສຶກເສັຽ ເຖິງມໍຣຕກາພ ... ປຕິຄາຕເປັນອຸກໂຕພຍັຍຊນກ ຈັນທະເປັນອັນນຳມາແລ້ວ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຈັນທະແລ້ວ ຖ້າກິກຂຸຜູ້ນຳຈັນທະເຂົ້າປະຊຸມສົງฆ์ ແລ້ວຫລັບເສັຽບໍ່ໄດ້ບອກ ເຜີໄປບໍ່ໄດ້ບອກ ເຂົ້າສມາບັຕິບໍ່ໄດ້ບອກ ຈັນທະເປັນອັນນຳມາແລ້ວ. ກິກຂຸຜູ້ນຳຈັນທະບໍ່ຕ້ອງອາບັຕິ.

ດູຣາກິກຂຸທັ້ງຫຼາຍ ເມື່ອກິກຂຸອາພາສມອບຈັນທະແລ້ວ ຖ້າກິກຂຸຜູ້ນຳຈັນທະເຂົ້າປະຊຸມສົງฆ์ ແລ້ວແກ້ງບໍ່ບອກ ຈັນທະເປັນອັນນຳມາແລ້ວ. ແຕ່ກິກຂຸຜູ້ນຳຈັນທະ ຕ້ອງອາບັຕິທຸກກົຜ.

ດູຣາກິກຂຸທັ້ງຫຼາຍ ໃນວັນອຸໂບສົຖ ເຮົາອນຸຍາຕໃຫ້ກິກຂຸຜູ້ມອບປາຣິສຸທຣິມອບຈັນທະດ້ວຍ ເພື່ອສົງฆ์ຈະມີກຣະນີຍກິຈ.

ພວກຍາຕິເປັນຕົ້ນຈັບກິກຂຸ

[๑๗๘] ກໍໂດຍສມັຍນັ້ນແລ ເຖິງວັນອຸໂບສົຖ ຫມູ່ຍາຕິໄດ້ຈັບກິກຂຸອົງຄ໌ນຶ່ງໄວ້. ກິກຂຸທັ້ງຫຼາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກໍໃນວັນອຸໂບສົຖ ຫມູ່ຍາຕິຈັບກິກຂຸໃນສາສນານີ້ໄວ້. ຫມູ່ຍາຕິເຫຼົ່ານັ້ນອັນກິກຂຸທັ້ງຫຼາຍຄວຣວ່າກ່າວ ຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຕາປ່ອຍກິກຂຸອົງຄ໌ນີ້ສັກຄູາວນຶ່ງ ພໍກິກຂຸອົງຄ໌ນີ້ທຳອຸໂບສົຖແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ຫມູ່ຍາຕິເຫຼົ່ານັ້ນອັນກິກຂຸທັ້ງຫຼາຍຄວຣວ່າກ່າວ ຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຕາຖ້າ ๓ ທີ່ຄວຣສ່ວນຂ້າງນຶ່ງຈັກບຶດກ່ອນ ພໍກິກຂຸນີ້ມອບ ປາຣິສຸທຣິແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ຫມູ່ຍາຕິເຫຼົ່ານັ້ນ ອັນກິກຂຸ ທັ້ງຫຼາຍຄວຣວ່າກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຕານຳກິກຂຸນີ້ໄປນອກສີມາສັກຄູາວນຶ່ງ ພໍ ພຣະສົງฆ์ທຳອຸໂບສົຖແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ສົງฆ์ເປັນວັគ຺ ບໍ່ຄວຣທຳອຸໂບສົຖ ຖ້າຂືນທຳ ຕ້ອງອາບັຕິທຸກກົຜ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງໃນວັນອຸໂບສົຖ ພຣະຣາຊາທັ້ງຫຼາຍໄດ້ຈັບກິກຂຸໃນສາສນານີ້ໄວ້ ... ພວກໂຈຣໄດ້ຈັບ ... ພວກນັກເລງໄດ້ຈັບ ... ພວກກິກຂຸທີ່ເປັນຂ້າເສິກໄດ້ຈັບກິກຂຸໃນສາສນານີ້ໄວ້ ພວກນັ້ນ ອັນກິກຂຸທັ້ງຫຼາຍຄວຣວ່າກ່າວ ຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຕາປ່ອຍກິກຂຸອົງຄ໌ນີ້ສັກຄູາວນຶ່ງ ພໍກິກຂຸອົງຄ໌ນີ້ທຳອຸໂບສົຖແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ພວກນັ້ນອັນກິກຂຸ ທັ້ງຫຼາຍຄວຣວ່າກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຕາຖ້າ ๓ ທີ່ຄວຣສ່ວນຂ້າງນຶ່ງຈັກບຶດກ່ອນ

ພໍກິກບຸອົງຄ໌ນີ້ມອບປາຣິສຸທສິແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ພວກນັ້ນ ອັນກິກບຸທັ້ງຫຼາຍຄວຣວ່າກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂໍທ່ານກຣຸຓານຳກິກບຸອົງຄ໌ນີ້ໄປນອກສີມາຈັກບຶດ ນຶ່ງ ພໍພຣະສົງໝ໌ທຳອຸໂບສົຖແລ້ວ. ຖ້າໄດ້ຕາມຂໍຮ້ອງຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ສົງໝ໌ເປັນ ວັຄຄ໌ ບໍ່ຄວຣທຳອຸໂບສົຖເລີຍ ຖ້າຂືນທຳ ຕ້ອງອາບັຕິທຸກກົຏ.

ກິກບຸວິກົລຈຣິຕ

[໑໗໔] ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກັບກິກບຸທັ້ງຫຼາຍວ່າ ດູຣາກິກບຸທັ້ງຫຼາຍ ພວກທ່ານ ຈົງປະຊຸມກັນ ກຣຕີຍກິຈຂອງສົງໝ໌ມີຢູ່. ເມື່ອພຣະຜູ້ມີພຣະກາຄຕຣັສຢ່າງນີ້ແລ້ວ ກິກບຸອົງຄ໌ນຶ່ງໄດ້ ຂາບທູລພຣະຜູ້ມີພຣະກາຄວ່າ ຍັງມີກິກບຸຊື່ຄັຄຄະ ເປັນຜູ້ວິກົລຈຣິຕ ທ່ານບໍ່ມາ ພຣະພຸທສເຈົ້າຂ້ານ້ອຍ.

ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກບຸທັ້ງຫຼາຍ ກິກບຸວິກົລຈຣິຕນີ້ມີ ໔ ຈຳພວກ ຄື ກິກບຸທີ່ ວິກົລຈຣິຕະລຶກອຸໂບສົຖໄດ້ແດ່ ຣະລຶກບໍ່ໄດ້ແດ່ ຣະລຶກສັງໝກັມມ໌ໄດ້ແດ່ ຣະລຶກບໍ່ໄດ້ແດ່ ຣະລຶກ ບໍ່ໄດ້ເສັຽເລີຍທີດຽວກໍມີ ມາສູ່ອຸໂບສົຖແດ່ ບໍ່ມາແດ່ ມາສູ່ສັງໝກັມມ໌ແດ່ ບໍ່ມາແດ່ ບໍ່ມາ ເສັຽເລີຍທີດຽວກໍມີ.

ດູຣາກິກບຸທັ້ງຫຼາຍ ບັຣດາກິກບຸວິກົລຈຣິຕເຫຼົ່ານັ້ນ ອົງຄ໌ໃດທີ່ຍັງຣະລຶກອຸໂບສົຖໄດ້ແດ່ ຣະລຶກ ບໍ່ໄດ້ແດ່ ຣະລຶກສັງໝກັມມ໌ໄດ້ແດ່ ຣະລຶກບໍ່ໄດ້ແດ່ ມາສູ່ອຸໂບສົຖແດ່ ບໍ່ມາແດ່ ມາສູ່ສັງໝກັມມ໌ ແດ່ ບໍ່ມາແດ່. ເຮົາອນຸຍາຕໃຫ້ອຸມມັຕຕກາສົມມຸຕິແກ່ກິກບຸວິກົລຈຣິຕເຫັນປານນັ້ນ.

ວິສີໃຫ້ອຸມມັຕຕກາສົມມຸຕິ

ດູຣາກິກບຸທັ້ງຫຼາຍ ກໍແລຄວຣໃຫ້ອຸມມັຕຕກາສົມມຸຕິຢ່າງນີ້.

ກິກບຸຜູ້ຉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງໝ໌ຮູ້ດ້ວຍຌັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາໃຫ້ອຸມມັຕຕກາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງໝ໌ຈົງຟັງຂ້າພເຈົ້າ ກິກບຸຊື່ຄັຄຄະເປັນຜູ້ວິກົລຈຣິຕ ຣະລຶກອຸໂບສົຖໄດ້ແດ່ ຣະລຶກບໍ່ໄດ້ແດ່ ຣະລຶກສັງໝກັມມ໌ໄດ້ແດ່ ຣະລຶກບໍ່ໄດ້ແດ່ ມາສູ່ອຸໂບສົຖແດ່ ບໍ່ມາແດ່ ມາສູ່ສັງໝກັມມ໌ແດ່ ບໍ່ມາແດ່. ຖ້າຄວາມພ້ອມພັ່ງຂອງສົງໝ໌ເຖິງທີ່ແລ້ວ ສົງໝ໌ຄວຣໃຫ້ອຸມມັຕຕກາ ສົມມຸຕິ ແກ່ຄັຄຄະກິກບຸຜູ້ວິກົລຈຣິຕ ຄື ຄັຄຄະກິກບຸຣະລຶກອຸໂບສົຖໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ຣະລຶກສັງໝກັມມ໌ໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ມາສູ່ອຸໂບສົຖກໍຕາມ ບໍ່ມາກໍຕາມ ມາສູ່ສັງໝກັມມ໌

ກໍຕາມ ບໍ່ມາກໍຕາມ ສົງຄ໌ພ້ອມກັບຄັຄຄະພິກຂຸ ຫຼືເວັ້ນຈາກຄັຄຄະພິກຂຸ ຄວຣເຮັດອຸໂບສົຖໄດ້ ຄວຣເຮັດສັງຄກັມມ໌ໄດ້. ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພິກຂຸຊື່ຄັຄຄະເປັນຜູ້ວິກົລຈຣິຕ ຣະລຶກອຸໂບສົຖໄດ້ແດ່ ຣະລຶກບໍ່ໄດ້ແດ່ ຣະລຶກສັງຄກັມມ໌ໄດ້ແດ່ ຣະລຶກບໍ່ໄດ້ແດ່ ມາສູ່ອຸໂບສົຖແດ່ ບໍ່ມາແດ່ ມາສູ່ສັງຄກັມມ໌ແດ່ ບໍ່ມາແດ່. ສົງຄ໌ໃຫ້ຢູ່ບັດນີ້ຊຶ່ງອຸມມັຕຕກສົມມຸຕິແກ່ຄັຄຄະພິກຂຸຜູ້ວິກົລຈຣິຕ ຄືຄັຄຄະພິກຂຸຣະລຶກອຸໂບສົຖໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ຣະລຶກສັງຄກັມມ໌ໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ມາສູ່ອຸໂບສົຖກໍຕາມ ບໍ່ມາກໍຕາມ ມາສູ່ສັງຄກັມມ໌ກໍຕາມ ບໍ່ມາກໍຕາມ ສົງຄ໌ພ້ອມກັບຄັຄຄະພິກຂຸ ຫຼືເວັ້ນຈາກຄັຄຄະພິກຂຸ ຈະທຳອຸໂບສົຖກໍໄດ້ ຈະທຳສັງຄກັມມ໌ກໍໄດ້. ການໃຫ້ອຸມມັຕຕກສົມມຸຕິແກ່ຄັຄຄະພິກຂຸຜູ້ວິກົລຈຣິຕ ຄື ຄັຄຄະພິກຂຸຣະລຶກອຸໂບສົຖໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ຣະລຶກສັງຄກັມມ໌ໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ມາສູ່ອຸໂບສົຖກໍຕາມ ບໍ່ມາກໍຕາມ ມາສູ່ສັງຄກັມມ໌ກໍຕາມ ບໍ່ມາກໍຕາມ ສົງຄ໌ພ້ອມກັບຄັຄຄະພິກຂຸ ຫຼືເວັ້ນຈາກຄັຄຄະພິກຂຸ ຈະທຳອຸໂບສົຖກໍໄດ້ ຈະທຳສັງຄກັມມ໌ກໍໄດ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ອຸມມັຕຕກສົມມຸຕິອັນສົງຄ໌ໃຫ້ແລ້ວ ແກ່ຄັຄຄະພິກຂຸຜູ້ວິກົລຈຣິຕ ຄືຄັຄຄະພິກຂຸຣະລຶກອຸໂບສົຖໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ຣະລຶກສັງຄກັມມ໌ໄດ້ກໍຕາມ ຣະລຶກບໍ່ໄດ້ກໍຕາມ ມາສູ່ອຸໂບສົຖກໍຕາມ ບໍ່ມາກໍຕາມ ມາສູ່ສັງຄກັມມ໌ກໍຕາມ ບໍ່ມາກໍຕາມ ສົງຄ໌ພ້ອມກັບຄັຄຄະພິກຂຸ ຫຼືເວັ້ນຈາກຄັຄຄະພິກຂຸ ຈະທຳອຸໂບສົຖກໍໄດ້ ຈະທຳສັງຄກັມມ໌ກໍໄດ້ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຫຊົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ວິທີທຳອຸໂບສົຖ ๖ ຢ່າງ

໑. ສູຕປາຕິໂມກຂ໌

[໑໗໔] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງເຖິງວັນອຸໂບສົຖ ມີພິກຂຸຢູ່ດ້ວຍກັນ ໔ ອົງຄ໌ ຈຶ່ງພິກຂຸເຫຼົ່ານັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະພາຄຫຊົງບັນລັຕິໄວ້ວ່າ ພິກຂຸຕ້ອງທຳອຸໂບສົຖ ດັ່ງນີ້ ກໍພວກເຮົາມີຢູ່ພຽງ ໔ ອົງຄ໌ ອາຈຈະທຳອຸໂບສົຖຢ່າງໃດນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຣັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ພິກຂຸ ໔ ອົງຄ໌ ສູຕປາຕິໂມກຂ໌.

໔. ທຳປາຣິສຸທຮິອຸໂບສົຖ

ສມັຍຕໍ່ມາ ໃນອາວາສແຫ່ງນຶ່ງເຖິງວັນອຸໂບສົຖ ມີກິກຂຸຢູ່ດ້ວຍກັນ ໓ ອົງຄ໌ ຈຶ່ງກິກຂຸເຫຼົ່ານັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄຫຣົງອນຸຍາຕໃຫ້ກິກຂຸ ໔ ອົງຄ໌ ສູຕປາຕິໂມກຂ໌ ກໍພວກເຮົາມີຢູ່ພຽງ ໓ ອົງຄ໌ ອາຈຈະທຳອຸໂບສົຖຢ່າງໃດນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸ ໓ ອົງຄ໌ ທຳປາຣິສຸທຮິອຸໂບສົຖແກ່ກັນ.

ວິຣີທຳປາຣິສຸທຮິອຸໂບສົຖສຳຫຼັບກິກຂຸ ໓ ອົງຄ໌

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣເຮັດປາຣິສຸທຮິອຸໂບສົຖ ຢ່າງນີ້.

ກິກຂຸຜູ້ຂລາດ ຜູ້ສາມາຖ ຄວຣປະກາສໃຫ້ກິກຂຸເຫຼົ່ານັ້ນຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ຍັຕຕິກັມມ໌ວາຈາ

ທ່ານທັ້ງຫຼາຍຂ້ານ້ອຍ ຂໍຈົ່ງຟັງຂ້າພເຈົ້າ ອຸໂບສົຖວັນນີ້ທີ່ ໑໕ ຖ້າຄວາມພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ເຮົາທັ້ງຫຼາຍຄວຣທຳປາຣິສຸທຮິອຸໂບສົຖແກ່ກັນເຖີດ.

ກິກຂຸຜູ້ເຖຣະຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັນຊລີ ແລ້ວບອກຄວາມບໍຣິສຸທຮິ໌ຂອງຕົນ ຕໍ່ກິກຂຸເຫຼົ່ານັ້ນຢ່າງນີ້ວ່າ:-

ຄຳບອກຄວາມບໍຣິສຸທຮິ໌

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ.

ກິກຂຸຜູ້ນວກະຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັນຊລີແລ້ວບອກຄວາມບໍຣິສຸທຮິ໌ຂອງຕົນ ຕໍ່ກິກຂຸເຫຼົ່ານັ້ນຢ່າງນີ້ວ່າ:-

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານທັ້ງຫຼາຍຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານທັ້ງຫຼາຍຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ

ຂ້ານ້ອຍບໍຣິສຸທຮິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານທັ້ງຫຼາຍຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທຮິ໌ແລ້ວ.

ສມັຍຕໍ່ມາ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸຢູ່ດ້ວຍກັນ ໔ ອົງຄ໌ ຈຶ່ງກິກຂຸເຫຼົ່ານັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕໃຫ້ກິກຂຸ ໔ ອົງຄ໌ສູຕປາຕິໂມກຂ໌ ໃຫ້ກິກຂຸ ໓ ອົງຄ໌ທຳປາຣິສຸທທິອຸໂບສົຖແກ່ກັນ ກໍພວກເຮົາມີພຽງ ໔ ອົງຄ໌ ອາຈຈະທຳອຸໂບສົຖຢ່າງໃດນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ກິກຂຸ ໔ ອົງຄ໌ ທຳປາຣິສຸທທິອຸໂບສົຖ.

ວິທີທຳປາຣິສຸທທິອຸໂບສົຖສຳຫຼັບກິກຂຸ ໔ ອົງຄ໌

ດູຣາກິກຂຸທັ້ງຫຼາຍ ກໍແລ ຄວຣເຮັດປາຣິສຸທທິອຸໂບສົຖຢ່າງນີ້:-

ກິກຂຸຜູ້ເຖຣະຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັຍຊລີແລ້ວ ບອກຄວາມບໍຣິສຸທທິ໌ຂອງຕົນ ຕໍ່ກິກຂຸຜູ້ນວກະຢ່າງນີ້ວ່າ:-

ຄຳບອກຄວາມບໍຣິສຸທທິ໌

ຂ້ານ້ອຍບໍຣິສຸທທິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ

ຂ້ານ້ອຍບໍຣິສຸທທິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ

ຂ້ານ້ອຍບໍຣິສຸທທິ໌ແລ້ວ ທ່ານ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ.

ກິກຂຸຜູ້ນວກະຄວຣຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັຍຊລີແລ້ວ ບອກຄວາມບໍຣິສຸທທິ໌ຂອງຕົນ ຕໍ່ກິກຂຸຜູ້ເຖຣະຢ່າງນີ້ວ່າ:-

ຄຳບອກຄວາມບໍຣິສຸທທິ໌

ຂ້ານ້ອຍບໍຣິສຸທທິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ

ຂ້ານ້ອຍບໍຣິສຸທທິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ

ຂ້ານ້ອຍບໍຣິສຸທທິ໌ແລ້ວ ໂດຍຂ້ານອັຍ ຂໍທ່ານຈື່ຂ້ານ້ອຍວ່າ ເປັນຜູ້ບໍຣິສຸທທິ໌ແລ້ວ.

໓. ອທິບຖານອຸໂບສົຖ

ສມັຍຕໍ່ມາ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸຢູ່ອົງຄ໌ດຽວ ຈຶ່ງກິກຂຸນັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕໃຫ້ກິກຂຸ ໔ ອົງຄ໌ ສູຕປາຕິໂມກຂ໌ ໃຫ້ກິກຂຸ ໓ ອົງຄ໌ທຳປາຣິສຸທທິ-

ອຸໂບສົຖແກ່ກັນ ໃຫ້ກິກຍຸ ໔ ອົງຄ໌ ທຳປາຣິສຸທຮິອຸໂບສົຖ ກໍເຮົາມີຢູ່ພຽງອົງຄ໌ດຽວ ອາຈຈະທຳອຸໂບສົຖ ຢ່າງໃດນໍ. ກິກຍຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຍຸໃນສາສນານີ້ຢູ່ອົງຄ໌ດຽວ. ກິກຍຸນັ້ນຄວຣກວາດສຖານທີ່ເປັນທີ່ໄປມາແຫ່ງກິກຍຸທັ້ງຫຼາຍ ຄືຈະເປັນໂຮງຈັນ ມຓฑົປ ຫຼືໂຄນຕົ້ນໄມ້ກໍຕາມ ແລ້ວຕັ້ງນ້ຳຈັນ ນ້ຳໃຊ້ ປູອາສນະ ຕາມປະທີປໄວ້ ແລ້ວນັ່ງຖ້າ. ຖ້າມີກິກຍຸເຫຼົ່າອື່ນມາ ຄວຣເຮັດອຸໂບສົຖຮ່ວມກັບພວກທ່ານ ຖ້າບໍ່ມີມາ ຄວຣອະທິຖຖານວ່າ ວັນນີ້ເປັນວັນອຸໂບສົຖຂອງເຮົາ ຖ້າບໍ່ອະທິຖຖານ ຕ້ອງອາບັຕິທຸກກົຜ.

ດູຣາກິກຍຸທັ້ງຫຼາຍ ໃນອາວາສທີ່ມີກິກຍຸຢູ່ດ້ວຍກັນ ໔ ອົງຄ໌ ຈະນຳປາຣິສຸທຮິຂອງກິກຍຸອົງຄ໌ນຶ່ງມາ ແລ້ວ ໓ ອົງຄ໌ສູດປາຕິໂມກຂ໌ບໍ່ໄດ້ ຖ້າຂືນສູດ ຕ້ອງອາບັຕິທຸກກົຜ.

ດູຣາກິກຍຸທັ້ງຫຼາຍ ໃນອາວາສທີ່ມີກິກຍຸຢູ່ດ້ວຍກັນ ໓ ອົງຄ໌ ຈະນຳປາຣິສຸທຮິຂອງກິກຍຸອົງຄ໌ນຶ່ງມາ ແລ້ວ ໒ ອົງຄ໌ທຳປາຣິສຸທຮິອຸໂບສົຖບໍ່ໄດ້ ຖ້າຂືນທຳ ຕ້ອງອາບັຕິທຸກກົຜ.

ດູຣາກິກຍຸທັ້ງຫຼາຍ ໃນອາວາສທີ່ມີກິກຍຸຢູ່ດ້ວຍກັນ ໒ ອົງຄ໌ ຈະນຳປາຣິສຸທຮິຂອງກິກຍຸອົງຄ໌ນຶ່ງມາ ແລ້ວອີກອົງຄ໌ນຶ່ງອະທິຖຖານບໍ່ໄດ້ ຖ້າຂືນອະທິຖຖານ ຕ້ອງອາບັຕິທຸກກົຜ.

ສແດງອາບັຕິກ່ອນທຳອຸໂບສົຖ

[໑໗໓] ກໍໂດຍສມັຍນັ້ນແລ ກິກຍຸອົງຄ໌ນຶ່ງຕ້ອງອາບັຕິໃນວັນອຸໂບສົຖ. ລາວໄດ້ມີຄວາມປຣິວິຕົກໃນຂຓະນັ້ນວ່າ ພຣະຜູ້ມີພຣະກາຄຫຣົງບັນຍັຕິໄວ້ວ່າ ກິກຍຸມີອາບັຕິຕິດໂຕ ບໍ່ຄວຣທຳອຸໂບສົຖ ດັ່ງນີ້ ກໍເຮົາເປັນຜູ້ຕ້ອງອາບັຕິແລ້ວ ອາຈຈະປຕິບັຕິຢ່າງໃດນໍ ຈຶ່ງບອກເຣື່ອງນັ້ນແກ່ກິກຍຸທັ້ງຫຼາຍ ກິກຍຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ກໍກິກຍຸໃນສາສນານີ້ຕ້ອງອາບັຕິໃນວັນອຸໂບສົຖ. ກິກຍຸນັ້ນຄວຣເຂົ້າໄປຫາກິກຍຸອົງຄ໌ນຶ່ງ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຢ່ອງຢໍ້ ປະຄອງອັຍຊລີ ແລ້ວກ່າວຢ່າງນີ້ວ່າ ແນ່ທ່ານ ຂ້ານ້ອຍຕ້ອງອາບັຕິມີຊື່ນີ້ ຂ້ານ້ອຍສແດງຄືນອາບັຕິນັ້ນ.

ກິກຍຸຜູ້ຮັບຄວຣຖາມວ່າ ທ່ານເຫັນບໍ່?

ກິກຍຸຜູ້ສແດງຄວຣຕອບວ່າ ໂດຍ ຂ້ານ້ອຍເຫັນ.

ກິກຍຸຜູ້ຮັບຄວຣບອກວ່າ ທ່ານຄວຣສຳຮວມຕໍ່ໄປ.

ສົງສັຍໃນອາບັຕິ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສາສນານີ້ມີຄວາມສົງສັຍໃນອາບັຕິ ໃນວັນອຸໂບສົຖ. ກິກຂຸນັ້ນຄວຣເຂົ້າໄປຫາກິກຂຸອົງຄ໌ນຶ່ງ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຍ່ອງຍໍ້ ປະຄອງອັຄຊລີແລ້ວ ກ່າວຢ່າງນີ້ວ່າ ແນ່ະທ່ານ ຂ້ານ້ອຍມີຄວາມສົງສັຍໃນອາບັຕິມີຊື່ນີ້ ຈັກຫມົດສົງສັຍເມື່ອໃດ ຈະທຳຄືນອາບັຕິນັ້ນເມື່ອນັ້ນ ຄັ້ນແລ້ວຄວຣເຮັດອຸໂບສົຖ ຟັງປາຕິໂມກຂ໌ ແຕ່ບໍ່ຄວຣທຳອັນຕຣາຍແກ່ອຸໂບສົຖ ເພາະຂໍ້ທີ່ສົງສັຍນັ້ນເປັນປັຈຈັຍ.

ສແດງສກາຄາບັຕິບໍ່ຕົກ

[໑໗໗] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ສແດງສກາຄາບັຕິ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສແດງສກາຄາບັຕິ ອົງຄ໌ໃດສແດງ ຕ້ອງອາບັຕິທຸກກົຄ.

ສມັຍຕໍ່ມາ ກິກຂຸຈັພພັຄຄີຍ໌ຮັບສແດງສກາຄາບັຕິ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣຮັບສແດງສກາຄາບັຕິ ອົງຄ໌ໃດຮັບສແດງ ຕ້ອງອາບັຕິທຸກກົຄ.

ຣະລຶກອາບັຕິໄດ້ເມື່ອກຳລັງສູຕປາຕິໂມກຂ໌

[໑໗໗] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເມື່ອກຳລັງສູຕປາຕິໂມກຂ໌ ຣະລຶກອາບັຕິໄດ້ ຈຶ່ງກິກຂຸນັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງບັຄລັຕິໄວ້ວ່າ ກິກຂຸມີອາບັຕິຕິດໂຕບໍ່ຄວຣທຳອຸໂບສົຖກໍເຮົາເປັນຜູ້ຕ້ອງອາບັຕິແລ້ວ ອາຈຈະປຕິບັຕິຢ່າງໃດນໍ. ຈຶ່ງບອກເຣື່ອງນັ້ນແກ່ກິກຂຸທັ້ງຫຼາຍ ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເມື່ອກຳລັງສູຕປາຕິໂມກຂ໌ຢູ່ ກິກຂຸໃນສາສນານີ້ຣະລຶກອາບັຕິໄດ້. ກິກຂຸນັ້ນຄວຣບອກກິກຂຸໃກ້ຄຽງຢ່າງນີ້ວ່າ ອາວຸໂສ ຂ້ານ້ອຍຕ້ອງອາບັຕິມີຊື່ນີ້ ລຸກຈາກທີ່ນີ້ແລ້ວຈະທຳຄືນອາບັຕິນັ້ນ ຄັ້ນແລ້ວຄວຣທຳອຸໂບສົຖ ຟັງປາຕິໂມກຂ໌ ແຕ່ບໍ່ຄວຣທຳອັນຕຣາຍແກ່ອຸໂບສົຖ ເພາະຂໍ້ທີ່ຣະລຶກອາບັຕິໄດ້ນັ້ນເປັນປັຈຈັຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອກຳລັງສູຕປາຕິໂມກຂ໌ຢູ່ ກິກຂຸໃນສາສນານີ້ມີຄວາມສົງສັຍໃນອາບັຕິ. ກິກຂຸນັ້ນຄວຣບອກກະກິກຂຸໃກ້ຄຽງຢ່າງນີ້ວ່າ ແນ່ະທ່ານ ຂ້ານ້ອຍມີຄວາມສົງສັຍໃນອາບັຕິມີຊື່ນີ້ ຈັກຫມົດສົງສັຍເມື່ອໃດ ຈະທຳຄືນອາບັຕິນັ້ນ ເມື່ອນັ້ນ ຄັ້ນແລ້ວຄວຣເຮັດອຸໂບສົຖ ຟັງປາຕິໂມກຂ໌ ແຕ່ບໍ່ຄວຣທຳອັນຕຣາຍແກ່ອຸໂບສົຖ ເພາະຂໍ້ທີ່ສົງສັຍນັ້ນເປັນປັຈຈັຍ.

ສົງຆ໌ຕ້ອງສະພາຄາບັຕິ

[໑໗໙] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ສົງຆ໌ທັ້ງຫມົດຕ້ອງສະພາຄາບັຕິ ຈຶ່ງພິກສຸເຫຼົ່ານັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະພາຄທຣົງບັນຍັຕິໄວ້ວ່າ ພິກສຸຈະສແດງສະພາຄາບັຕິບໍ່ໄດ້ ຈະຮັບສແດງສະພາຄາບັຕິບໍ່ໄດ້ ດັ່ງນີ້ ກໍສົງຆ໌ຫມູ່ນີ້ ລ້ວນຕ້ອງສະພາຄາບັຕິແລ້ວ ພວກເຮົາອາຈຈະປຕິບັຕິຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັ້ງຫຼາຍວ່າ ດູຣາພິກສຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ສົງຆ໌ທັ້ງຫມົດໃນສາສນານີ້ຕ້ອງສະພາຄາບັຕິ. ພິກສຸເຫຼົ່ານັ້ນຄວຣສົ່ງພິກສຸອົງຄ໌ນຶ່ງໄປສູ່ອາວາສໃກ້ຄຽງ ພໍຈະກັບມາທັນໃນວັນນັ້ນ ດ້ວຍສັ່ງວ່າ ອາວຸໂສ ທ່ານຈົ່ງໄປທຳຄືນອາບັຕິນັ້ນແລ້ວມາ ພວກເຮົາຈະທຳຄືນອາບັຕິໃນສຳນັກທ່ານ ຖ້າໄດ້ພິກສຸເຊັ່ນນັ້ນຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ພິກສຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ຍັຕຕິກັມມ໌ວາຈາ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ສົງຆ໌ທັ້ງຫມົດນີ້ຕ້ອງສະພາຄາບັຕິ ເຫັນພິກສຸອົງຄ໌ອື່ນຜູ້ບໍຣິສຸທທິ໌ ບໍ່ມີອາບັຕິເມື່ອໃດ ຈະທຳຄືນອາບັຕິນັ້ນໃນສຳນັກທ່ານເມື່ອນັ້ນ ຄັ້ນແລ້ວຄວຣເຮັດອຸໂບສົຖ ສູດປາຕິໂມກຂ໌ ແຕ່ບໍ່ຄວຣທຳອັນຕຣາຍແກ່ອຸໂບສົຖ ເພາະຂໍ້ທີ່ຕ້ອງສະພາຄາບັຕິນັ້ນເປັນປັຈຈັຍ.

ດູຣາພິກສຸທັ້ງຫຼາຍ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ສົງຆ໌ທັ້ງຫມົດໃນສາສນານີ້ມີຄວາມສົງສັຍໃນສະພາຄາບັຕິ. ພິກສຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ຍັຕຕິກັມມ໌ວາຈາ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ສົງຆ໌ທັ້ງຫມົດນີ້ມີຄວາມສົງສັຍໃນສະພາຄາບັຕິ ຫມົດຄວາມສົງສັຍເມື່ອໃດ ຈະທຳຄືນອາບັຕິນັ້ນ ເມື່ອນັ້ນ ຄັ້ນແລ້ວຄວຣເຮັດອຸໂບສົຖ ສູດປາຕິໂມກຂ໌ ແຕ່ບໍ່ຄວຣທຳອັນຕຣາຍແກ່ອຸໂບສົຖ ເພາະຂໍ້ທີ່ມີຄວາມສົງສັຍນັ້ນເປັນປັຈຈັຍ.

ດູຣາພິກສຸທັ້ງຫຼາຍ ກໍສົງຆ໌ໃນສາສນານີ້ຈຳພັຣຍາຢູ່ໃນອາວາສແຫ່ງນຶ່ງ ເປັນຜູ້ຕ້ອງສະພາຄາບັຕິ. ພິກສຸເຫຼົ່ານັ້ນສົ່ງພິກສຸອົງຄ໌ນຶ່ງໄປສູ່ອາວາສໃກ້ຄຽງພໍຈະກັບມາທັນໃນວັນນັ້ນ ດ້ວຍສັ່ງວ່າ ອາວຸໂສ ທ່ານຈົ່ງໄປທຳຄືນອາບັຕິນັ້ນແລ້ວມາ ພວກເຮົາຈະທຳຄືນອາບັຕິນັ້ນໃນສຳນັກທ່ານ. ຖ້າໄດ້ພິກສຸ

ເຊັ່ນນັ້ນຢ່າງນີ້ ນັ່ນເປັນການດີ ຖ້າບໍ່ໄດ້ ຄວນສົ່ງພິກຂຸອົງຄ໌ນຶ່ງໄປຊົ່ວຣະຍະການ ໆ ນີ້ ດ້ວຍສັ່ງວ່າ ອາວຸໂສ ທ່ານຈົງໄປທຳຄືນອາບັຕິນັ້ນແລ້ວມາ ພວກເຮົາຈະທຳຄືນອາບັຕິນັ້ນ ໃນສຳນັກທ່ານ.

[໑໙໐] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ສົງຄ໌ທັ້ງໝົດ ຕ້ອງສກາຄາບັຕິ. ສົງຄ໌ໝູ່ນັ້ນບໍ່ຮູ້ຈັກຊື່ ບໍ່ຮູ້ຈັກວິບາກຂອງອາບັຕິນັ້ນ. ມີພິກຂຸອົງຄ໌ອື່ນມາໃນອາວາສນັ້ນ ທ່ານເປັນພຫູສູຕ ຊຳນານໃນຄັມພີຣ໌ ທຮົງທັມມ໌ ທຮົງວິນັຍ ທຮົງມາຕິກາ ເປັນບັຕຖິຕ ສລາດ ມີປັນຍາ ລະອາຍ ນ່າຍ ຜູ້ມັກຕໍ່ສິກຂາ. ພິກຂຸອົງຄ໌ນຶ່ງເຂົ້າໄປຫາພິກຂຸນັ້ນ ແລ້ວໄດ້ຮຽນຖາມຂໍ້ຄວາມນີ້ກະພິກຂຸນັ້ນວ່າ ພິກຂຸອົງຄ໌ໃດ ທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິຊື່ຫຍັງ ໂດຍຂ້ານອ້ຍ?

ພຣະພຫູສູຕຕອບຢ່າງນີ້ວ່າ ພິກຂຸອົງຄ໌ໃດ ທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິຊື່ນີ້ ໂດຍຂ້ານອ້ຍ ທ່ານຕ້ອງອາບັຕິຊື່ນີ້ແລ້ວ ຈົງທຳຄືນອາບັຕິນັ້ນເສັຽ.

ພິກຂຸອົງຄ໌ນັ້ນກ່າວຢ່າງນີ້ວ່າ ບໍ່ແມ່ນຂ້ານ້ອຍແຕ່ຜູ້ດຽວທີ່ຕ້ອງອາບັຕິນີ້ ໂດຍຂ້ານອ້ຍ ສົງຄ໌ໝູ່ນີ້ລ້ວນຕ້ອງອາບັຕິນີ້ທັ້ງນັ້ນ.

ພຣະພຫູສູຕກ່າວຢ່າງນີ້ວ່າ ພິກຂຸອົງຄ໌ອື່ນທີ່ຕ້ອງອາບັຕິແລ້ວ ຫຼືບໍ່ໄດ້ຕ້ອງ ຈັກຊ່ວຍຫຍັງທ່ານໄດ້ ໂດຍຂ້ານອ້ຍ ນິມົນຕ໌ທ່ານອອກຈາກອາບັຕິຂອງຕົນເສັຽເຖີດ ໂດຍຂ້ານອ້ຍ.

ຈຶ່ງພິກຂຸນັ້ນໄດ້ທຳຄືນອາບັຕິນັ້ນຕາມຄຳຂອງພຣະພຫູສູຕ ແລ້ວເຂົ້າໄປຫາພິກຂຸເຫຼົ່ານັ້ນ ຄັ້ນແລ້ວໄດ້ແຈ້ງຄວາມຂໍ້ນີ້ກະພິກຂຸເຫຼົ່ານັ້ນວ່າ ອາວຸໂສທັ້ງຫຼາຍ ໄດ້ຮູ້ມາວ່າ ພິກຂຸອົງຄ໌ໃດທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິຊື່ນີ້ ພວກທ່ານຕ້ອງອາບັຕິຊື່ນີ້ແລ້ວ ໂດຍຂ້ານອ້ຍ ຈົງທຳຄືນອາບັຕິນັ້ນເສັຽ. ແຕ່ພິກຂຸເຫຼົ່ານັ້ນບໍ່ປັຕຖນາຈະທຳຄືນອາບັຕິນັ້ນ ຕາມຄຳຂອງພຣະຜູ້ບອກ. ພິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ສົງຄ໌ທັ້ງໝົດໃນສາສນານີ້ຕ້ອງສກາຄາບັຕິ. ສົງຄ໌ໝູ່ນັ້ນບໍ່ຮູ້ຈັກຊື່ ບໍ່ຮູ້ຈັກວິບາກຂອງອາບັຕິນັ້ນ. ມີພິກຂຸອົງຄ໌ອື່ນມາໃນອາວາສນັ້ນ ທ່ານເປັນພຫູສູຕ ຊຳນານໃນຄັມພີຣ໌ ທຮົງທັມມ໌ ທຮົງວິນັຍ ທຮົງມາຕິກາ ເປັນບັຕຖິຕ ສລາດ ມີປັນຍາ ລະອາຍ ນ່າຍ ຜູ້ມັກຕໍ່ສິກຂາ. ພິກຂຸອົງຄ໌ນຶ່ງເຂົ້າໄປຫາພິກຂຸນັ້ນ ແລ້ວໄດ້ຮຽນຖາມພິກຂຸນັ້ນຢ່າງນີ້ວ່າ ພິກຂຸອົງຄ໌ໃດທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິຊື່ຫຍັງໂດຍຂ້ານອ້ຍ?

ພຣະພຫູສູຕຕອບຢ່າງນີ້ ວ່າພິກຂຸອົງຄ໌ໃດທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິຊື່ນີ້ ໂດຍຂ້ານອ້ຍ ທ່ານຕ້ອງອາບັຕິຊື່ນີ້ແລ້ວ ຈົງທຳຄືນອາບັຕິນັ້ນເສັຽ.

ກິກຊຸອົງຄ໌ນັ້ນກ່າວຢ່າງນີ້ວ່າ ບໍ່ແມ່ນຂ້ານ້ອຍແຕ່ຜູ້ດຽວທີ່ຕ້ອງອາບັຕິນີ້ ໂດຍຂ້ານອັຍ ສົງຄ໌ຫມູ່ນີ້ ລ້ວນຕ້ອງອາບັຕິນີ້ທັ້ງນັ້ນ.

ພຣະພຫູສູຕກ່າວຢ່າງນີ້ວ່າ ກິກຊຸອົງຄ໌ອື່ນທີ່ຕ້ອງອາບັຕິແລ້ວຫຼືບໍ່ໄດ້ຕ້ອງ ຈັກຊ່ອຍຫຍັງທ່ານໄດ້ ໂດຍຂ້ານອັຍ ນິມົນຕ໌ທ່ານອອກຈາກອາບັຕິຂອງຕົນເສັຽເຖີດ ໂດຍຂ້ານອັຍ.

ດູຣາກິກຊຸທັ້ງຫຼາຍ ຖ້າກິກຊຸນັ້ນທຳຄືນອາບັຕິນັ້ນ ຕາມຄຳຂອງພຣະພຫູສູຕ ແລ້ວເຂົ້າໄປຫາ ກິກຊຸເຫຼົ່ານັ້ນ ຄັ້ນແລ້ວບອກກິກຊຸເຫຼົ່ານັ້ນຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ໄດ້ຮູ້ມາວ່າ ກິກຊຸອົງຄ໌ໃດ ທຳຢ່າງນີ້ດ້ວຍ ຢ່າງນີ້ດ້ວຍ ກິກຊຸອົງຄ໌ນັ້ນຕ້ອງອາບັຕິຊື່ນີ້ ພວກທ່ານຕ້ອງອາບັຕິຊື່ນີ້ແລ້ວ ໂດຍຂ້ານອັຍ ຈົ່ງທຳຄືນອາບັຕິນັ້ນເສັຽ. ຖ້າກິກຊຸເຫຼົ່ານັ້ນ ອາຈຈະທຳຄືນອາບັຕິນັ້ນ ຕາມຄຳຂອງກິກຊຸຜູ້ບອກ ທຳໄດ້ຢ່າງນີ້ ນັ່ນເປັນການດີ ຖ້າຈະບໍ່ຄວຣທຳຄືນ ກິກຊຸນັ້ນບໍ່ປັຕຖນາ ກໍບໍ່ຄວຣວ່າກ່າວກິກຊຸ ເຫຼົ່ານັ້ນ.

ໂຈທນາວັຕຖຸກາຓວາຣ ຈົບ.

ທຳອຸໂບສົຖບໍ່ຕ້ອງອາບັຕິ ໑໕ ຂໍ້

[໑໗໑] ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນຫຼາຍອົງຄ໌ ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າຍັງມີກິກຊຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນສັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ໄດ້ທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌. ຂຓະນັ້ນ ມີກິກຊຸເຈົ້າຖິ່ນພວກອື່ນ ມາເຖິງມີຈຳນວນຫຼາຍກວ່າ. ກິກຊຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງກັບກິກຊຸທັ້ງຫຼາຍ ວ່າດັ່ງນີ້:-

໑. ດູຣາກິກຊຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນໃນສາສນານີ້ ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຊຸເຈົ້າຖິ່ນພວກອື່ນ ທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນສັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນ

ວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌. ຂພະນັ້ນ ມີກິກຊຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຊຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຊຸ ຜູ້ສູຕ ບໍ່ຕ້ອງອາບັຕິ.

໔. ດູຣາກິກຊຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນໃນ ສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຊຸ ເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂພະນັ້ນ ມີກິກຊຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ. ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຊຸຜູ້ມາທີຫລັງ ຄວຣຟັງສ່ວນທີ່ຍັງເຫລືອຕໍ່ໄປ. ພວກກິກຊຸຜູ້ສູຕ ບໍ່ຕ້ອງອາບັຕິ.

໖. ດູຣາກິກຊຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນໃນສາສນານີ້ ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຊຸເຈົ້າຖິ່ນພວກອື່ນ ທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນ ວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂພະນັ້ນມີກິກຊຸ ເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ. ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຊຸ ຜູ້ມາທີຫລັງ ຄວຣຟັງສູຕທີ່ຍັງເຫລືອຕໍ່ໄປ. ພວກກິກຊຸຜູ້ສູຕບໍ່ຕ້ອງອາບັຕິ.

໔. ດູຣາກິກຊຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນໃນ ສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຊຸ ເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ຂພະນັ້ນ ມີກິກຊຸເຈົ້າຖິ່ນພວກອື່ນມາ ເຖິງມີຈຳນວນຫຼາຍກວ່າ. ກິກຊຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຊຸ ຜູ້ສູຕ ບໍ່ຕ້ອງອາບັຕິ.

໕. ດູຣາກິກຊຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຊຸເຈົ້າຖິ່ນໃນ ສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຊຸເຈົ້າຖິ່ນ ພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມ ສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ຂພະນັ້ນ

ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ. ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຂຸ-ຜູ້ມາທີຫລັງ ຄວຣບອກປາຣິສຸທທິໃນສຳນັກພວກທ່ານ. ພວກກິກຂຸຜູ້ສູຕ ບໍ່ຕ້ອງອາບັຕິ.

໖. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີພວກກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັລວ່າເປັນສັມມ໌ ມີຄວາມສຳຄັລວ່າເປັນວິນັຍ ເປັນຫມູ່ມີຄວາມສຳຄັລວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພວກທ່ານສູຕປາຕິໂມກຂ໌ຈົບ ຂຓະນັ້ນມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ. ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຂຸຜູ້ມາທີຫລັງ ຄວຣບອກປາຣິສຸທທິໃນສຳນັກພວກທ່ານ. ພວກກິກຂຸຜູ້ສູຕບໍ່ຕ້ອງອາບັຕິ.

໗. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັລວ່າເປັນສັມມ໌ ມີຄວາມສຳຄັລວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັລວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ບໍຣິພັທຍັງບໍ່ທັນລຸກໄປ ຂຓະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຂຸຜູ້ສູຕບໍ່ຕ້ອງອາບັຕິ.

໘. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັລວ່າເປັນສັມມ໌ ມີຄວາມສຳຄັລວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັລວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ບໍຣິພັທຍັງບໍ່ທັນລຸກໄປ ຂຓະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງມີຈຳນວນເທົ່າກັນ ....

໙. ດູຣາກິກຂຸທັ້ງຫຼາຍ .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຂຸຜູ້ມາທີຫລັງ ຄວຣບອກປາຣິສຸທທິໃນສຳນັກພວກທ່ານ. ພວກກິກຂຸຜູ້ສູຕ ບໍ່ຕ້ອງອາບັຕິ.

໑໐. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັລວ່າເປັນສັມມ໌ ມີຄວາມສຳຄັລວ່າເປັນວິນັຍ ເປັນຫມູ່ມີຄວາມສຳຄັລວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ບໍຣິພັທບາງພວກລຸກໄປແລ້ວ ຂຓະນັ້ນມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່ ພວກກິກຂຸຜູ້ສູຕ ບໍ່ຕ້ອງອາບັຕິ.

໑໑. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນໝູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູດປາຕິໂມກຂ໌. ພໍພິກຂຸເຫຼົ່ານັ້ນສູດປາຕິໂມກຂ໌ຈົບ ບໍຣິບັທບາງພວກລຸກໄປແລ້ວ ຂຓະນັ້ນມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໒. ດູຣາພິກຂຸທັ້ງຫຼາຍ .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູດແລ້ວກໍເປັນອັນສູດດີແລ້ວ. ພວກພິກຂຸຜູ້ມາທີຫລັງ ຄວຣບອກປາຣິສຸທທິໃນສຳນັກພວກທ່ານ. ພວກພິກຂຸຜູ້ສູດ ບໍ່ຕ້ອງອາບັຕິ.

໑໓. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນໝູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູດປາຕິໂມກຂ໌. ພໍພວກທ່ານສູດປາຕິໂມກຂ໌ຈົບ ບໍຣິບັທລຸກໄປໝົດແລ້ວ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ພິກຂຸເຫຼົ່ານັ້ນຕ້ອງສູດປາຕິໂມກຂ໌ໃໝ່. ພວກພິກຂຸຜູ້ສູດ ບໍ່ຕ້ອງອາບັຕິ.

໑໔. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນທັມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນໝູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູດປາຕິໂມກຂ໌. ພໍພວກທ່ານສູດປາຕິໂມກຂ໌ຈົບ ບໍຣິບັທລຸກໄປໝົດແລ້ວ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. ດູຣາພິກຂຸທັ້ງຫຼາຍ .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູດແລ້ວກໍເປັນອັນສູດດີແລ້ວ. ພວກພິກຂຸຜູ້ມາທີຫລັງ ຄວຣບອກປາຣິສຸທທິໃນສຳນັກພວກທ່ານ. ພວກພິກຂຸຜູ້ສູດ ບໍ່ຕ້ອງອາບັຕິ.

ທຳອຸໂບສົຖບໍ່ຕ້ອງອາບັຕິ ໑໕ ຂໍ້ ຈົບ.

ທຳອຸໂບສົຖເປັນໝູ່ສຳຄັນວ່າພ້ອມກັນ ໑໕ ຂໍ້

[໑໗໘] ໑. ດູຣາພິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີພິກຂຸເຈົ້າຖິ່ນ

ພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນສົມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ພິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກພິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຕ.

໔. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງມີຈຳນວນເທົ່າກັນ ....

໓. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກພິກຂຸຜູ້ມາທີຫລັງຄວຣຟັງສ່ວນທີ່ເຫລືອຕໍ່ໄປ. ພວກພິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຕ.

໔. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນສົມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ພິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກພິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຕ.

໕. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໖. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ ພວກພິກຂຸຜູ້ມາທີຫລັງຄວຣບອກປາຣິສຸທສິໃນສຳນັກພວກທ່ານ. ພວກພິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຕ.

໗. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີພວກພິກຂຸເຈົ້າຖິ່ນອື່ນທີ່ຍັງບໍ່ມາ. ພວກທ່ານມີຄວາມສຳຄັນວ່າເປັນສົມມ໌ ມີຄວາມສຳຄັນວ່າເປັນວິນັຍ ເປັນຫມູ່ ມີຄວາມສຳຄັນວ່າພ້ອມກັນ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ບໍຣິສັທຍັງບໍ່ທັນລຸກໄປ .... ມີຈຳນວນຫຼາຍກວ່າ ....

໘. .... ມີຈຳນວນເທົ່າກັນ ....

໙. .... ມີຈຳນວນນ້ອຍກວ່າ ....

໑໐. .... ບໍຣິສັທບາງພວກລຸກໄປແລ້ວ .... ມີຈຳນວນຫຼາຍກວ່າ ....

໑໑. .... ມີຈຳນວນເທົ່າກັນ ....

໑໔. .... ມີຈຳນວນນ້ອຍກວ່າ ....

໑໓. .... ບໍຣິບັທລຸກໄປຫມົດແລ້ວ ຂຄະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຽ.

໑໔. .... ຂຄະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຂຸຜູ້ມາທີຫລັງ ຄວຣບອກປາຣິສຸທธิໃນສຳນັກພວກທ່ານ. ພວກກິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຽ.

ທຳອຸໂບສົຖເປັນຫມູ່ສຳຄັຍວ່າພ້ອມກັນ ໑໕ ຂໍ້ ຈົບ.

ມີຄວາມສົງສັຍທຳອຸໂບສົຖ ໑໕ ຂໍ້

[໑໗໓] ໑. ດູຣາກິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ ແລະມີຄວາມສົງສັຍວ່າ ພວກເຮົາຄວຣທຳອຸໂບສົຖຫຼືບໍ່ຄວຣນໍ ດັ່ງນີ້ ແລ້ວຍັງຂືນທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂຄະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງມີຈຳນວນຫຼາຍກວ່າ ກິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຽ.

໒. .... ຂຄະນັ້ນ ມີກິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໓. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ ພວກກິກຂຸຜູ້ມາທີຫລັງ ຄວຣຟັງສ່ວນທີ່ເຫລືອຕໍ່ໄປ. ພວກກິກຂຸຜູ້ສູຕ ຕ້ອງອາບັຕິທຸກກົຽ.

໔. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ ແລະມີຄວາມສົງສັຍວ່າ ພວກເຮົາຄວຣທຳອຸໂບສົຖຫຼືບໍ່ຄວຣນໍ ດັ່ງນີ້ ແລ້ວຍັງຂືນທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕປາຕິໂມກຂ໌ຈົບ ຂຄະນັ້ນມີກິກຂຸ .... ມີຈຳນວນຫຼາຍກວ່າ ....

໕. .... ມີຈຳນວນເທົ່າກັນ ....

໖. .... ມີຈຳນວນນ້ອຍກວ່າ ....

໗. .... ບໍຣິບັທຍັງບໍ່ທັນລຸກໄປ .... ມີຈຳນວນຫຼາຍກວ່າ ....

๗. .... ມີຈຳນວນເທົ່າກັນ ....

๘. .... ມີຈຳນວນນ້ອຍກວ່າ ....

໑໐. .... ບໍຣິສັທບາງພວກລຸກໄປແລ້ວ .... ມີຈຳນວນຫຼາຍກວ່າ ....

໑໑. .... ມີຈຳນວນເທົ່າກັນ ....

໑໒. .... ມີຈຳນວນນ້ອຍກວ່າ ....

໑໓. .... ບໍຣິສັທລຸກໄປຫມົດແລ້ວ ຂຓະນັ້ນ ມີກິກຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຸຜູ້ສູຕ ຕ້ອງອາບັຕິທຸກກົຎ.

໑໔. .... ຂຓະນັ້ນ ມີກິກຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກຸຜູ້ມາທີຫລັງ ຄວຣບອກປາຣິສຸທຘິໃນສຳນັກພວກທ່ານ. ພວກກິກຸຜູ້ສູຕ ຕ້ອງອາບັຕິທຸກກົຎ.

ມີຄວາມສົງສັຍທຳອຸໂບສົຖ ໑໕ ຂໍ້ ຈົບ.

ຝືນໃຈທຳອຸໂບສົຖ ໑໕ ຂໍ້

[໑໘໔] ໑. ດູຣາກິກຸທັ້ງຫຼາຍ ກໍອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຸເຈົ້າຖິ່ນຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ແຕ່ຝືນໃຈທຳອຸໂບສົຖ ສູຕປາຕິໂມກຂ໌ດ້ວຍເຂົ້າໃຈວ່າ ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣ. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂຓະນັ້ນ ມີກິກຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກຸຜູ້ສູຕ ຕ້ອງອາບັຕິທຸກກົຎ.

໒. .... ຂຓະນັ້ນ ມີກິກຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໓. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວ ກໍເປັນອັນສູຕດີແລ້ວ. ພວກກິກຸທີ່ມາທີຫລັງ ຄວຣຟັງສ່ວນທີ່ເຫລືອຕໍ່ໄປ. ພວກກິກຸຜູ້ສູຕ ຕ້ອງອາບັຕິທຸກກົຎ.

໔. ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ. ແຕ່ຝືນໃຈທຳອຸໂບສົຖ ສູຕປາຕິໂມກຂ໌ດ້ວຍເຂົ້າໃຈວ່າ ພວກເຮົາຄວຣທຳອຸໂບສົຖແທ້ ບໍ່ແມ່ນບໍ່ຄວຣ. ພໍພວກທ່ານສູຕປາຕິໂມກຂ໌ຈົບ ຂຓະນັ້ນມີກິກຸ .... ມີຈຳນວນຫຼາຍກວ່າ ....

໕. .... ມີຈຳນວນເທົ່າກັນ ....

໖. .... ມີຈຳນວນນ້ອຍກວ່າ ....

໗. .... ບໍຣິບັທຍັງບໍ່ທັນລຸກໄປ .... ມີຈຳນວນຫຼາຍກວ່າ ....

໘. .... ມີຈຳນວນເທົ່າກັນ ....

໙. .... ມີຈຳນວນນ້ອຍກວ່າ ....

໑໐. .... ບໍຣິບັທບາງພວກລຸກໄປແລ້ວ .... ມີຈຳນວນຫຼາຍກວ່າ ....

໑໑. .... ມີຈຳນວນເທົ່າກັນ ....

໑໒. .... ມີຈຳນວນນ້ອຍກວ່າ ....

໑໓. .... ບໍຣິບັທລຸກໄປຫມົດແລ້ວ ຂຓະນັ້ນ ມີກິກษຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ກິກษຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກษຸຜູ້ສູຕ ຕ້ອງອາບັຕິທຸກກົຜ.

໑໔. .... ຂຓະນັ້ນ ມີກິກษຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວກໍເປັນອັນສູຕດີແລ້ວ. ພວກກິກษຸຜູ້ມາທີຫລັງ ຄວຣບອກປາຣິສຸທธິໃນສຳນັກພວກທ່ານ. ພວກກິກษຸຜູ້ສູຕ ຕ້ອງອາບັຕິທຸກກົຜ.

ຝືນໃຈທຳອຸໂບສົຖ ໑໕ ຂໍ້ ຈົບ.

ມຸ່ງຄວາມແຕກຣ້າວທຳອຸໂບສົຖ ໑໕ ຂໍ້

[໑໙໕] ໑. ດູຣາກິກษຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກษຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກษຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາແລະມຸ່ງຄວາມແຕກຣ້າວວ່າ ຂໍກິກษຸເຫຼົ່ານັ້ນເສື່ອມສູນ ຂໍກິກษຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກษຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ເມື່ອພວກທ່ານກຳລັງສູຕປາຕິໂມກຂ໌ ຂຓະນັ້ນມີກິກษຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ ກິກษຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກກິກษຸຜູ້ສູຕ ຕ້ອງອາບັຕິ**ຖຸລລັຈຈັຍ**[13].

໒. .... ຂຓະນັ້ນ ມີກິກษຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໓. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວ ກໍເປັນອັນສູຕດີແລ້ວ. ພວກກິກษຸທີ່ມາທີຫລັງ ຄວຣຟັງສ່ວນທີ່ເຫລືອຕໍ່ໄປ. ພວກກິກษຸຜູ້ສູຕ ຕ້ອງອາບັຕິຖຸລລັຈຈັຍ.

໔. ດູຣາກິກษຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນອຸໂບສົຖ ມີກິກษຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີກິກษຸເຈົ້າຖິ່ນ

---

[13] **ຖຸລລັຈຈັຍ** ຄວາມລ່ວງລະເມີດທີ່ຍາບ, ຊື່ອາບັຕິຍາບຢ່າງນຶ່ງເປັນຄວາມຜິດຂັ້ນຖັດຮອງລົງມາຈາກອາບັຕິສັງฆາທິເສສ ເຊັ່ນ ກິກຂຸຊັກສື່ໃຫ້ຊາຍຍິງເປັນຜົວເມັຽກັນ ຕ້ອງອາບັຕິສັງฆາທິເສສ ກິກຂຸຊັກສື່ບັຓເທາະກ໌ (ກະເທີຍ) ຕ້ອງອາບັຕິຖຸລລັຈຈັຍ ກິກຂຸນຸ່ງຫົ່ມຫນັງເສືອຢ່າງເດັຽຣຖີຍ໌ ຕ້ອງອາບັຕິຖຸລລັຈຈັຍ ເບິ່ງ ອາບັຕິ

ພວກອື່ນທີ່ຍັງບໍ່ມາແລະມຸ່ງຄວາມແຕກຮ້າວວ່າ ຂໍພິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຂໍພິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳພິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ສູຕປາຕິໂມກຂ໌. ພໍພວກທ່ານສູຕ ປາຕິໂມກຂ໌ຈົບ ຂຓະນັ້ນ ມີພິກຂຸ .... ມີຈຳນວນຫຼາຍກວ່າ ....

໕. .... ມີຈຳນວນເທົ່າກັນ ....

໖. .... ມີຈຳນວນນ້ອຍກວ່າ ....

໗. .... ບໍຣິບັທຍັງບໍ່ທັນລຸກໄປ .... ມີຈຳນວນຫຼາຍກວ່າ ....

໘. .... ມີຈຳນວນເທົ່າກັນ ....

໙. .... ມີຈຳນວນນ້ອຍກວ່າ ....

໑໐. .... ບໍຣິບັທບາງພວກລຸກໄປແລ້ວ .... ມີຈຳນວນຫຼາຍກວ່າ ....

໑໑. .... ມີຈຳນວນເທົ່າກັນ ....

໑໒. .... ມີຈຳນວນນ້ອຍກວ່າ ....

໑໓. .... ບໍຣິບັທລຸກໄປຫມົດແລ້ວ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ພິກຂຸເຫຼົ່ານັ້ນຕ້ອງສູຕປາຕິໂມກຂ໌ໃຫມ່. ພວກພິກຂຸຜູ້ສູຕ ຕ້ອງອາບັຕິຖຸລລັຈຈັຍ.

໑໔. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ມີຈຳນວນນ້ອຍກວ່າ ປາຕິໂມກຂ໌ທີ່ສູຕແລ້ວ ກໍເປັນອັນສູຕດີແລ້ວ. ພວກພິກຂຸ ຜູ້ມາທີຫລັງ ຄວຣບອກປາຣິສຸທຘິໃນສຳນັກພວກທ່ານ. ພວກພິກຂຸຜູ້ສູຕ ຕ້ອງອາບັຕິຖຸລລັຈຈັຍ.

ມຸ່ງຄວາມແຕກຮ້າວທຳອຸໂບສົຖ ໑໕ ຂໍ້ ຈົບ.

ກາຣທຳອຸໂບສົຖ ໒໕ ຕິກັບຈົບ

ເປຍຍາລມຸຂ ກ໑໐໐ ຕິກະ

[໑໙໖] ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖີງວັນອຸໂບສົຖ ມີພິກຂຸເຈົ້າຖິ່ນ ໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໔ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ຍັງມີພິກຂຸເຈົ້າຖິ່ນ ພວກອື່ນກຳລັງເຂົ້າມາພາຍໃນສີມາ ....

.... ພວກທ່ານບໍ່ຮູ້ວ່າ ມີພິກຂຸເຈົ້າຖິ່ນພວກອື່ນເຂົ້າມາພາຍໃນສີມາແລ້ວ ....

.... ພວກທ່ານບໍ່ເຫັນພິກຂຸເຈົ້າຖິ່ນພວກອື່ນທີ່ກຳລັງເຂົ້າມາພາຍໃນສີມາ ....

.... ພວກທ່ານບໍ່ເຫັນພິກຂຸເຈົ້າຖິ່ນພວກອື່ນທີ່ເຂົ້າມາພາຍໃນສີມາແລ້ວ ....

.... ພວກທ່ານບໍ່ໄດ້ຍິນວ່າ ມີພິກຂຸເຈົ້າຖິ່ນພວກອື່ນກຳລັງເຂົ້າມາພາຍໃນສີມາ ....

.... ພວກທ່ານບໍ່ໄດ້ຍິນວ່າ ມີພິກຂຸເຈົ້າຖິ່ນພວກອື່ນເຂົ້າມາພາຍໃນສີມາແລ້ວ ....

ໂດຍນັຍ ໑໗໕ ຕິກັບ ພິກຂຸເຈົ້າຖິ່ນກັບພິກຂຸເຈົ້າຖິ່ນ ພິກຂຸອາຄັນຕຸກະກັບພິກຂຸເຈົ້າຖິ່ນ ພິກຂຸເຈົ້າຖິ່ນກັບພິກຂຸອາຄັນຕຸກັບພິກຂຸອາຄັນຕຸກະກັບພິກຂຸອາຄັນຕຸກັບຣວມເປັນ ກ໑໐໐ ຕິກັບໂດຍເປຍຍາລມຸຂ.

ວັນອຸໂບສົຖຕ່າງກັນ

[໑໙໗] ດູຣາພິກຂຸທັ້ງຫຼາຍ ກໍວັນອຸໂບສົຖຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ ເປັນວັນ ໑໔ ຄ່ຳ ຂອງພວກພິກຂຸອາຄັນຕຸກັບເປັນວັນ ໑໕ ຄ່ຳ. ຖ້າພວກພິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກພິກຂຸອາຄັນຕຸກະຄວຣອນຸວັຕຕາມພວກພິກຂຸເຈົ້າຖິ່ນ. ຖ້າມີຈຳນວນເທົ່າກັນ ພວກພິກຂຸອາຄັນຕຸກະຄວຣອນຸວັຕຕາມພວກພິກຂຸເຈົ້າຖິ່ນ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກພິກຂຸເຈົ້າຖິ່ນຄວຣອນຸວັຕຕາມພວກພິກຂຸອາຄັນຕຸກະ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ວັນອຸໂບສົຖຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ ເປັນວັນ ໑໕ ຄ່ຳ ຂອງພວກພິກຂຸອາຄັນຕຸກັບເປັນວັນ ໑໔ ຄ່ຳ. ຖ້າພວກພິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກພິກຂຸອາຄັນຕຸກະຄວຣອນຸວັຕຕາມພວກພິກຂຸເຈົ້າຖິ່ນ. ຖ້າມີຈຳນວນເທົ່າກັນ ພວກພິກຂຸອາຄັນຕຸກະຄວຣອນຸວັຕຕາມພວກພິກຂຸເຈົ້າຖິ່ນ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກພິກຂຸເຈົ້າຖິ່ນຄວຣອນຸວັຕຕາມພວກພິກຂຸອາຄັນຕຸກະ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ວັນອຸໂບສົຖຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ ເປັນວັນ ໑ ຄ່ຳ ຂອງພວກພິກຂຸອາຄັນຕຸກັບເປັນວັນ ໑໕ ຄ່ຳ. ຖ້າພວກພິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກພິກຂຸເຈົ້າຖິ່ນບໍ່ປັຕຖນາກໍບໍ່ຕ້ອງໃຫ້ຄວາມສາມັຄຄີແກ່ພວກພິກຂຸອາຄັນຕຸກັບ ພວກພິກຂຸອາຄັນຕຸກະຄວຣໄປນອກສີມາແລ້ວທຳອຸໂບສົຖເຖີດ. ຖ້າມີຈຳນວນເທົ່າກັນ ພວກພິກຂຸເຈົ້າຖິ່ນບໍ່ປັຕຖນາ ກໍບໍ່ຕ້ອງໃຫ້ຄວາມສາມັຄຄີ

ແກ່ພວກກິກຂຸອາຄັນຕຸກັບພວກກິກຂຸອາຄັນຕຸກະຄວຣໄປນອກສີມາ ແລ້ວທຳອຸໂບສົຖເຖີດ. ຖ້າພວກກິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກກິກຂຸເຈົ້າຖິ່ນຄວຣໃຫ້ຄວາມສາມັຄຄີແກ່ພວກກິກຂຸອາຄັນຕຸກັບຫຼືຄວຣໄປນອກສີມາ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ວັນອຸໂບສົຖຂອງພວກກິກຂຸເຈົ້າຖິ່ນໃນສາສນານີ້ ເປັນວັນ ໑໕ ຄ່ຳຂອງພວກກິກຂຸອາຄັນຕຸກະເປັນ ໑ ຄ່ຳ. ຖ້າພວກກິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກກິກຂຸອາຄັນຕຸກະຄວຣໃຫ້ຄວາມສາມັຄຄີແກ່ພວກກິກຂຸເຈົ້າຖິ່ນ ຫຼືໄປນອກສີມາ. ຖ້າມີຈຳນວນເທົ່າກັນ ພວກກິກຂຸອາຄັນຕຸກະຄວຣໃຫ້ຄວາມສາມັຄຄີແກ່ພວກກິກຂຸເຈົ້າຖິ່ນ ຫຼືຄວຣໄປນອກສີມາ. ຖ້າພວກກິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກກິກຂຸອາຄັນຕຸກະບໍ່ປັຕຖນາ ກໍບໍ່ຕ້ອງໃຫ້ຄວາມສາມັຄຄີແກ່ພວກກິກຂຸເຈົ້າຖິ່ນ ພວກກິກຂຸເຈົ້າຖິ່ນຄວຣໄປນອກສີມາແລ້ວ ທຳອຸໂບສົຖເຖີດ.

ມຸ່ງຄວາມແຕກຮ້າວ

[໑໙໗] ດູຣາກິກຂຸທັ້ງຫຼາຍ ກໍພວກກິກຂຸອາຄັນຕຸກະໃນພຣະສາສນານີ້ ໄດ້ເຫັນອາການເຈົ້າຖິ່ນລັກຂຕະເຈົ້າຖິ່ນ ເຄື່ອງຫມາຍເຈົ້າຖິ່ນ ສິ່ງທີ່ສແດງເຈົ້າຖິ່ນ ຂອງກິກຂຸເຈົ້າຖິ່ນ ຕຽງ ຕັ່ງ ຟູກ ຫມອນປູລາດ ຈັດໄວ້ຮຽບຮ້ອຍ ນ້ຳສັນ ນ້ຳໃຊ້ ແຕ່ງຕັ້ງໄວ້ເປັນຣະບຽບ ບໍຣິເວຕກວາດສະອາດສະອ້ານຄັ້ນແລ້ວມີຄວາມສົງສັຍວ່າ ພວກກິກຂຸເຈົ້າຖິ່ນຍັງມີຫຼືບໍ່ມີ. ພວກທ່ານມີຄວາມສົງສັຍແຕ່ບໍ່ທ່ຽວຄົ້ນຫາ ຄັ້ນແລ້ວຂືນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວ ແຕ່ບໍ່ພົບຈຶ່ງທຳອຸໂບສົຖ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບຈຶ່ງທຳອຸໂບສົຖຮ່ວມກັນບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບ ຄັ້ນແລ້ວແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບ ຄັ້ນແລ້ວມຸ່ງຄວາມແຕກຮ້າວວ່າ ຂໍກິກຂຸເຫຼົ່ານັ້ນຈົ່ງເສື່ອມສູນຂໍກິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ຕ້ອງອາບັຕິ-ຖຸລລັຈຈັຍ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກກິກຂຸອາຄັນຕຸກະໃນສາສນານີ້ ໄດ້ຍິນອາການເຈົ້າຖິ່ນລັກຂຕະເຈົ້າຖິ່ນ ເຄື່ອງຫມາຍເຈົ້າຖິ່ນ ສິ່ງທີ່ສແດງເຈົ້າຖິ່ນຂອງພວກກິກຂຸເຈົ້າຖິ່ນ ໄດ້ຍິນສຽງຕີນຂອງກິກຂຸເຈົ້າຖິ່ນກຳລັງຍ່າງຈົງກົມ ໄດ້ຍິນສາສຍາຍ ສຽງໄອ ສຽງຈາມ ຄັ້ນແລ້ວ ມີຄວາມສົງສັຍວ່າ ພວກກິກຂຸເຈົ້າຖິ່ນມີຫຼືບໍ່ມີ. ພວກທ່ານມີຄວາມສົງສັຍ ແຕ່ບໍ່ຄົ້ນຫາ ຄັ້ນແລ້ວຂືນທຳອຸໂບສົຖ ຕ້ອງອາບັຕິ-ທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາບໍ່ພົບ ຄັ້ນແລ້ວຈຶ່ງທຳອຸໂບສົຖ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງທຳອຸໂບສົຖຮ່ວມກັນ ບໍ່ຕ້ອງ-

ອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວມຸ່ງຄວາມແຕກຮ້າວວ່າ ຂໍກິກຂຸເຫຼົ່ານັ້ນ ຈົ່ງເສື່ອມສູນ ຂໍກິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກກິກຂຸເຈົ້າຖິ່ນໃນສາສນານີ້ ໄດ້ເຫັນອາການອາຄັນຕຸກັບ ລັກຂຓະອາຄັນຕຸກັບ ເຄື່ອງຫມາຍອາຄັນຕຸກັບສິ່ງທີ່ສແດງອາຄັນຕຸກະຂອງກິກຂຸອາຄັນຕຸກັບໄດ້ເຫັນບາຕຣ໌ ຈີວຣຜ້ານິສີທນະ ອັນເປັນຂອງກິກຂຸພວກອື່ນ ໄດ້ເຫັນຮອຍນ້ຳລ້າງຕີນ ຄັ້ນແລ້ວມີຄວາມສົງສັຍວ່າ ພວກກິກຂຸອາຄັນຕຸກະຍັງມີຫຼືບໍ່ມີນໍ. ພວກທ່ານມີຄວາມສົງສັຍ ແຕ່ບໍ່ຄົ້ນຫາ ຄັ້ນແລ້ວຂືນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍ ໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວບໍ່ພົບ ຄັ້ນແລ້ວທຳອຸໂບສົຖ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງທຳອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວໄດ້ແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວ ມຸ່ງຄວາມແຕກຮ້າວວ່າ ຂໍກິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຂໍກິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກກິກຂຸເຈົ້າຖິ່ນໃນສາສນານີ້ ໄດ້ຍິນອາການອາຄັນຕຸກັບ ລັກຂຓະອາຄັນຕຸກັບເຄື່ອງຫມາຍອາຄັນຕຸກັບສິ່ງທີ່ສແດງອາຄັນຕຸກັບຂອງພວກກິກຂຸອາຄັນຕຸກັບໄດ້ຍິນສຽງຕີນຂອງພວກກິກຂຸອາຄັນຕຸກະກຳລັງຍ່າງມາ ໄດ້ຍິນສຽງເກີບກະທົບພື້ນ ໄດ້ຍິນສຽງໄອ ສຽງຈາມ ຄັ້ນແລ້ວມີຄວາມສົງສັຍວ່າ ພວກກິກຂຸອາຄັນຕຸກະຍັງມີຫຼືບໍ່ມີນໍ. ພວກທ່ານມີຄວາມສົງສັຍ ແຕ່ບໍ່ຄົ້ນຫາ ຄັ້ນແລ້ວຂືນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວບໍ່ພົບ ຄັ້ນແລ້ວຈຶ່ງທຳອຸໂບສົຖ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງໄດ້ທຳອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວແຍກກັນທຳອຸໂບສົຖ ຕ້ອງອາບັຕິທຸກກົຜ. ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວມຸ່ງຄວາມແຕກຮ້າວວ່າ ຂໍກິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຂໍກິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງທຳອຸໂບສົຖ ຕ້ອງອາບັຕິຖຸລລັຈຈັຍ.

ພິກຂຸນານາສັງວາສແລະສມານສັງວາສ

[໑໙໙] ດູຣາພິກຂຸທັ້ງຫຼາຍ ກໍພວກພິກຂຸອາຄັນຕຸກະໃນສາສນານີ້ໄດ້ເຫັນພິກຂຸເຈົ້າຖິ່ນມີສັງວາສຕ່າງກັນ ພວກທ່ານກັບໄດ້ຄວາມເຫັນວ່າມີສັງວາສສເມີກັນ ຄັ້ນແລ້ວກໍບໍ່ໄຕ່ຖາມຈຶ່ງທໍາອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ທໍາອຸໂບສົຖຮ່ວມກັນ ຕ້ອງອາບັຕິທຸກກົຕ ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ແຍກກັນທໍາອຸໂບສົຖ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸອາຄັນຕຸກະໃນສາສນານີ້ ໄດ້ເຫັນພວກພິກຂຸເຈົ້າຖິ່ນມີສັງວາສສເມີກັນ ພວກທ່ານກັບໄດ້ຄວາມເຫັນວ່າມີສັງວາສຕ່າງກັນ ຄັ້ນແລ້ວກໍບໍ່ໄຕ່ຖາມ ທໍາອຸໂບສົຖຮ່ວມກັນ ຕ້ອງອາບັຕິທຸກກົຕ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ແຍກກັນທໍາອຸໂບສົຖຕ້ອງອາບັຕິທຸກກົຕ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ທໍາອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸເຈົ້າຖິ່ນໃນສາສນານີ້ ໄດ້ເຫັນພວກພິກຂຸອາຄັນຕຸກະມີສັງວາສຕ່າງກັນ ພວກທ່ານກັບໄດ້ຄວາມເຫັນວ່າມີສັງວາສສເມີກັນ ຄັ້ນແລ້ວກໍບໍ່ໄຕ່ຖາມ ຈຶ່ງທໍາອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍທໍາອຸໂບສົຖຮ່ວມກັນ ຕ້ອງອາບັຕິທຸກກົຕ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ແຍກກັນທໍາອຸໂບສົຖ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸເຈົ້າຖິ່ນໃນສາສນານີ້ ໄດ້ເຫັນພວກພິກຂຸອາຄັນຕຸກະມີສັງວາສສເມີກັນ ພວກທ່ານກັບໄດ້ຄວາມເຫັນວ່າມີສັງວາສຕ່າງກັນ ຄັ້ນແລ້ວກໍບໍ່ໄຕ່ຖາມ ທໍາອຸໂບສົຖຮ່ວມກັນ ຕ້ອງອາບັຕິທຸກກົຕ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ແຍກກັນທໍາອຸໂບສົຖຕ້ອງອາບັຕິທຸກກົຕ. ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ທໍາອຸໂບສົຖຮ່ວມກັນ ບໍ່ຕ້ອງອາບັຕິ.

ບໍ່ຄວຣໄປໃສໃນວັນອຸໂບສົຖ

[໔໐໐] ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈໍານວນສູ່ອາວາສທີ່ມີພິກຂຸບໍ່ຄົບຈໍານວນ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈໍານວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈໍານວນ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈໍານວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈໍານວນ ເວັ້ນແຕ່ໄປກັບສົງຂ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈໍານວນສູ່ອາວາສທີ່ມີພິກຂຸບໍ່ຄົບຈໍານວນ

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈຳນວນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈຳນວນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສທີ່ມີພິກຂຸບໍ່ຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸບໍ່ຄົບຈຳນວນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈຳນວນ ສູ່ອາວາສທີ່ມີພິກຂຸຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພວກພິກຂຸຜູ້ມີສັງວາສຕ່າງກັນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກພິກຂຸຜູ້ມີສັງວາສຕ່າງກັນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສທີ່ມີພິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກພິກຂຸຜູ້ມີສັງວາສຕ່າງກັນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສທີ່ມີພິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກພິກຂຸຜູ້ມີສັງວາສຕ່າງກັນ ເວັ້ນແຕ່ໄປກັບສົງຄ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສທີ່ມີພິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກກິກຂຸຜູ້ມີສັງວາສຕ່າງກັນ ເວັ້ນແຕ່ໄປກັບສົງฆ໌ ເວັ້ນແຕ່ມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ຄວຣໄປຈາກອາວາສທີ່ມີກິກຂຸຄົບຈຳນວນ ສູ່ອາວາສຊຶ່ງມີກິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກກິກຂຸທີ່ມີສັງວາສສເມີກັນ ທີ່ຮູ້ວ່າ ເຮົາສາມາຖຈະໄປເຖິງໃນວັນນີ້ທີດຽວ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ຄວຣໄປຈາກອາວາສທີ່ມີກິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກກິກຂຸຜູ້ມີສັງວາສສເມີກັນ ທີ່ຮູ້ວ່າ ເຮົາສາມາຖຈະໄປເຖິງໃນວັນນີ້ທີດຽວ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກກິກຂຸທີ່ມີສັງວາສສເມີກັນ ທີ່ຮູ້ວ່າ ເຮົາສາມາຖຈະໄປເຖິງໃນວັນນີ້ທີດຽວ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນອຸໂບສົຖ ຄວຣໄປຈາກອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ອັນເປັນທີ່ຢູ່ຂອງພວກກິກຂຸຜູ້ມີສັງວາສສເມີກັນ ທີ່ຮູ້ວ່າ ເຮົາສາມາຖຈະໄປເຖິງໃນວັນນີ້ທີດຽວ.

ວັຊຊນີຍບຸຄຄົລ ໃນອຸໂບສົຖ

[໔໐໑] ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສູຕປາຕິໂມກຂ໌ໃນບໍຣິษັທທີ່ມີກິກຂຸณີນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົฏ.

ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣສູຕປາຕິໂມກຂ໌ ໃນບໍຣິษັທທີ່ມີສິກຂມານານັ່ງຢູ່ດ້ວຍ ....

.... ທີ່ສາມເຕຣນັ່ງຢູ່ດ້ວຍ ....

.... ທີ່ສາມເຕຣີນັ່ງຢູ່ດ້ວຍ ....

.... ທີ່ກິກຂຸຜູ້ບອກລາສິກຂານັ່ງຢູ່ດ້ວຍ ....

ບໍ່ຄວຣສູຕປາຕິໂມກຂ໌ໃນບໍຣິບັທທີ່ກິກຂຸຜູ້ຕ້ອງອັນຕິມວັຕຖຸ ນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຎ.

ບໍ່ຄວຣສູຕປາຕິໂມກຂ໌ ໃນບໍຣິບັທທີ່ກິກຂຸຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຄວຣປັບອາບັຕິຕາມທັມມ໌.

.... ໃນບໍຣິບັທທີ່ກິກຂຸຜູ້ຖືກສົງຄ໌ຍົກເສັຽ ການບໍ່ກະທຳຄືນອາບັຕິ ນັ່ງຢູ່ດ້ວຍ ....

ບໍ່ຄວຣສູຕປາຕິໂມກຂ໌ ໃນບໍຣິບັທທີ່ກິກຂຸຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຄວຣປັບອາບັຕິຕາມທັມມ໌.

ບໍ່ຄວຣສູຕປາຕິໂມກຂ໌ໃນບໍຣິບັທທີ່ບັຒເທາະກ໌ນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຎ.

ບໍ່ຄວຣສູຕປາຕິໂມກຂ໌ ໃນບໍຣິບັທທີ່ຄົນລັກເພສນັ່ງຢູ່ດ້ວຍ ....

.... ທີ່ກິກຂຸເຂົ້າຮີດເດັຽຣຖີຍ໌ນັ່ງຢູ່ດ້ວຍ ....

.... ທີ່ຄົນຖ້າຍສັຕວ໌ດິຣັຈຈານນັ່ງຢູ່ດ້ວຍ ....

.... ທີ່ຄົນຂ້າມາຣດານັ່ງຢູ່ດ້ວຍ ....

.... ທີ່ຄົນຂ້າບິດານັ່ງຢູ່ດ້ວຍ ....

.... ທີ່ຄົນຂ້າພຣະອຣຫັນຕ໌ນັ່ງຢູ່ດ້ວຍ ....

.... ທີ່ຄົນປະທຸຍຮ້າຍກິກຂຸຕີນັ່ງຢູ່ດ້ວຍ ....

.... ກິກຂຸຜູ້ທຳລາຍສົງຄ໌ນັ່ງຢູ່ດ້ວຍ ....

.... ທີ່ຄົນຜູ້ທຳຮ້າຍພຣະສາສດາຈົນເຖິງຫໍ້ພຣະໂລຫິຕນັ່ງຢູ່ດ້ວຍ ....

ບໍ່ຄວຣສູຕປາຕິໂມກຂ໌ ໃນບໍຣິບັທທີ່ອຸກໂຕພຍັລຊນກນັ່ງຢູ່ດ້ວຍ ອົງຄ໌ໃດສູຕ ຕ້ອງອາບັຕິທຸກກົຎ.

[໔໐໔] ດູຣາກິກຂຸທັ້ງຫຼາຍ ບໍ່ຄວຣທຳອຸໂບສົຖ ດ້ວຍກາຣໃຫ້ປາຣິສຸທຂິຄ້າງຄາວ ເວັ້ນແຕ່ບໍຣິບັທຍັງບໍ່ລຸກໄປ.

[໔໐໕] ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ບໍ່ຄວຣທຳອຸໂບສົຖ ໃນກາລບໍ່ແມ່ນວັນອຸໂບສົຖ ເວັ້ນແຕ່ວັນສັງຄສາມັຄຄີ.

ອຸໂບສົຖຂັນສກັບຈົບ ກາຕວາຣທີ່ ໓ ຈົບ.

ເຣື່ອງໃນຂັນສກະນີ້ມີ ໗໖ ເຣື່ອງ

ຫົວຂໍ້ປະຈຳຂັນສກະ

[໔໐໔] ເຣື່ອງພວກເດັຽຣຖີຍ໌ ໒. ເຣື່ອງພຣະເຈົ້າພິມພິສາຣ ໓. ເຣື່ອງປະຊຸມກັນນັ່ງມິດ ໔. ເຣື່ອງປະຊຸມກ່າວທັມມ໌ ໕. ເຣື່ອງປະທັບໃນທີ່ສງັດ ໖. ເຣື່ອງສູຕປາຕິໂມກຂ໌ຄັ້ງນັ້ນທຸກມື້ ໗. ເຣື່ອງທຣົງອນຸຍາຕໃຫ້ສູຕປາຕິໂມກຂ໌ປັກຂ໌ລະຄັ້ງ ໘. ເຣື່ອງສູຕປາຕິໂມກຂ໌ໃນບໍຣິສັທເທົ່າທີ່ມີຢູ່ ໙. ເຣື່ອງສູຕປາຕິໂມກຂ໌ແກ່ພິກຂຸຜູ້ພ້ອມພຽງກັນ ໑໐. ເຣື່ອງທຣົງອນຸຍາຕສາມັຄຄີ ໑໑. ເຣື່ອງມັທທກຸຈຈິ-ມຣຶຄທາຍວັນ ໑໒. ເຣື່ອງສົມມຸຕິສີມາ ໑໓. ເຣື່ອງສົມມຸຕິສີມາໃຫຍ່ເກີນຂນາດ ໑໔. ເຣື່ອງສົມມຸຕິນທີປາຣສີມາ ໑໕. ເຣື່ອງສູຕປາຕິໂມກຂ໌ທີ່ອນຸບໍຣິເວຓ ໑໖. ເຣື່ອງສົມມຸຕິໂຮງອຸໂບສົຖ ໒ ໂຮງ ໑໗. ເຣື່ອງສົມມຸຕິໂຮງອຸໂບສົຖເລັກເກີນຂນາດ ໑໘. ເຣື່ອງພວກນວກະພິກຂຸ ໑໙. ເຣື່ອງພຣະມຫາກັສສະປະ... ໒໐. ເຣື່ອງສົມມຸຕິສີມາໃຫ້ເປັນແດນບໍ່ຢູ່ປຣາສຈາກໄຕຣຈີວຣ ໒໑. ເຣື່ອງສົມມຸຕິສມານສັງວາສສີມາກ່ອນ ໒໒. ເຣື່ອງຖອນສມານສັງວາສສີມາທີຫລັງ ໒໓. ເຣື່ອງຄາມສີມາທີ່ບໍ່ໄດ້ສົມມຸຕິ ໒໔. ເຣື່ອງ**ອຸທກຸກເຂປ**[14] ໃນແມ່ນ້ຳ ໒໕. ເຣື່ອງອຸທກຸກເຂປໃນສມຸທຣ໌ ໒໖. ເຣື່ອງອຸທກຸກເຂປໃນຊາຕສະ ໒໗. ເຣື່ອງສີມາຄາບກ່ຽວ ໒໘. ເຣື່ອງສົມມຸຕິສີມາທັບສີມາ ໒໙. ເຣື່ອງວັນອຸໂບສົຖມີເທົ່າໃດ ໓໐. ເຣື່ອງອາການທຳອຸໂບສົຖມີເທົ່າໃດ ໓໑. ເຣື່ອງປາຕິໂມກຂຸທເທສມີເທົ່າໃດ ໓໒. ເຣື່ອງຄົນຊາວດົງມາສາຣະວົນ ໓໓. ເຣື່ອງບໍ່ມີອັນຕຣາຍ ໓໔. ເຣື່ອງສແດງທັມມ໌ ໓໕. ເຣື່ອງຖາມວິນັຍ ໓໖. ເຣື່ອງກ່າວຕຸກຄາມ ໓໗. ເຣື່ອງວິສັຊນາວິນັຍ ໓໘. ເຣື່ອງກ່າວຕຸກຄາມອີກເຣື່ອງນຶ່ງ ໓໙. ເຣື່ອງໂຈທດ້ວຍອາບັຕິ ໔໐. ເຣື່ອງທຳໂອກາສ ໔໑. ເຣື່ອງຄ້ານກັມມ໌ທີ່ບໍ່ເປັນທັມມ໌ ໔໒. ເຣື່ອງພິກຂຸ ໔-໕ ອົງຄ໌ທຳຄວາມເຫັນແຍ້ງ ໔໓. ເຣື່ອງແກ້ງສູຕປາຕິໂມກຂ໌ບໍ່ໃຫ້ໄດ້ຍິນ ໔໔. ເຣື່ອງທຣົງອນຸຍາຕໃຫ້ພຍາຍາມສູຕ ໔໕. ເຣື່ອງສູຕປາຕິໂມກຂ໌ໃນບໍຣິສັທທີ່ມີຄຣືຫັສຖ໌ປົນຢູ່ດ້ວຍ ໔໖. ເຣື່ອງບໍ່ໄດ້ຮັບອາຣາທນາສູຕປາຕິໂມກຂ໌ ໔໗. ເຣື່ອງພິກຂຸບໍ່ຮູ້ໃນໂຈທນາວັຕຖຸນຄຣ ໔໘. ເຣື່ອງພິກຂຸຫຼາຍອົງຄ໌ດ້ວຍກັນບໍ່ຮູ້ຈັກອຸໂບສົຖເປັນຕົ້ນ ໔໙. ເຣື່ອງສົ່ງໄປພໍຈະກັບມາທັນໃນວັນນັ້ນ ໕໐. ເຣື່ອງບໍ່ຍອມໄປ ໕໑. ເຣື່ອງດິຖີທີ່ເທົ່າໃດແຫ່ງປັກຂ໌ ໕໒. ເຣື່ອງພິກຂຸມີເທົ່າໃດ ໕໓. ເຣື່ອງໄປບິນທບາຕບ້ານໄກລທຣົງອນຸຍາຕໃຫ້ບອກ ໕໔. ເຣື່ອງບໍ່ຣະລຶກບໍ່ໄດ້ ໕໕. ເຣື່ອງໂຮງອຸໂບສົຖຮົກ ໕໖. ເຣື່ອງອາສນະແລະປະທີປ ໕໗. ເຣື່ອງພິກຂຸໄປສູ່ທິສ ໕໘. ເຣື່ອງພິກຂຸອົງຄ໌ອື່ນເປັນພຫູສູຕ ໕໙. ເຣື່ອງສົ່ງພິກຂຸໄປພໍຈະກັບມາທັນໃນວັນນັ້ນ ໖໐. ເຣື່ອງຈຳ

---

[14] **ອຸທກຸກເຂປ** ເຂຕສາມັຄຄີຊົ່ວວັກນ້ຳສາດແຫ່ງຄົນມີອາຍຸແລະກຳລັງປານກາງ ຫມາຍເຖິງ ເຂຕຊຸມນຸມທຳສັງຄກັມມ໌ທີ່ກຳຫນົດລົງໃນແມ່ນ້ຳ ຫຼື ທະເລ ຊາຕສຣະ (ທີ່ຂັງນ້ຳເກີດເອງຕາມທັມມຊາຕິ ເຊັ່ນ ບຶງຫນອງ ທະເລສາປ) ໂດຍພຣະພິກຂຸປະຊຸມກັນເທິງເຮືອ ຫຼືເທິງແພ ຊຶ່ງຜູກກັບຫລັກໃນນ້ຳ ຫຼືທອດສມໍຢູ່ຫ່າງຈາກຝັ່ງກວ່າຊົ່ວວິດນ້ຳສາດ (ຫ້າມຜູກໂຍງເຮືອຫຼືແພນັ້ນ ກັບຫລັກຫຼືຕົ້ນໄມ້ເທິງຝັ່ງ ແລະຫ້າມທຳໃນເຮືອຫຼືແພທີ່ກຳລັງລອຍຫຼືຍ່າງ)ວ

ອຸທກຸກເຂປນີ້ ຈັດເປັນ ອພັທສີມາຢ່າງນຶ່ງ

ພັຣษາ ໗໑. ເຣື່ອງທຳອຸໂບສົຖ ໗໒. ເຣື່ອງໃຫ້ປາຣິສຸທສີ ໗໓. ເຣື່ອງທຳກັມມ໌ ໗໔. ເຣື່ອງພວກຍາຕິ ໗໕. ເຣື່ອງກິກษຸຊື່ຄັຄຄະ ໗໖. ເຣື່ອງກິກษຸ ໔ ອົງຄ໌ ໓ ອົງຄ໌ ໒ ອົງຄ໌ ແລະອົງຄ໌ດຽວ ໗໗. ເຣື່ອງຕ້ອງອາບັຕິ ໗໘. ເຣື່ອງສແດງສກາຄາບັຕິ ໗໙. ເຣື່ອງກິກษຸອົງຄ໌ນຶ່ງຣະລຶກອາບັຕິໄດ້ ໘໐. ເຣື່ອງສົງฆ໌ທັ້ງຫມົດຕ້ອງສກາຄາບັຕິແລະສົງສັຍ ໘໑. ເຣື່ອງບໍ່ຮູ້ຊື່ແລະໂຄຕຣ໌ອາບັຕິ ໘໒. ເຣື່ອງກິກษຸພຫູສູຕ ໘໓. ເຣື່ອງກິກษຸມາຫຼາຍກວ່າ ມາເທົ່າກັນ ແລະມານ້ອຍກວ່າ ໘໔. ເຣື່ອງບໍຣິษັທຍັງບໍ່ທັນລຸກໄປແລະບາງພວກລຸກໄປແລ້ວ ໘໕. ເຣື່ອງບໍຣິษັທລຸກໄປຫມົດແລ້ວ ໘໖. ເຣື່ອງກິກษຸຮູ້ ໘໗. ເຣື່ອງກິກษຸສົງສັຍ ໘໘. ເຣື່ອງກິກษຸຝືນໃຈທຳດ້ວຍເຂົ້າໃຈວ່າຄວຣ ໘໙. ເຣື່ອງກິກษຸຮູ້ ໄດ້ເຫັນແລະໄດ້ຍິນ ໙໐. ເຣື່ອງກິກษຸອາຄັນຕຸກະກັບກິກษຸເຈົ້າຖິ່ນ ໙໑. ເຣື່ອງວັນຈາຕຸທທສີ ວັນປັຓຓຣສີ ໙໒. ເຣື່ອງວັນປາຕິບົທກັບວັນປັຓຓຣສີ ໙໓. ເຣື່ອງລິງຄ໌ ໙໔. ເຣື່ອງສັງວາສ ໙໕. ເຣື່ອງໃຫ້ປາຣິສຸທສີຄ້າງຄາວ ໙໖. ເຣື່ອງທຳອຸໂບສົຖໃນກາລບໍ່ແມ່ນວັນອຸໂບສົຖ ນອກຈາກວັນສັງฆສາມັຄຄີ ອຸທານທີ່ຈຳແນກແລ້ວເຫຼົ່ານີ້ ເປັນຫົວຂໍ້ບອກເຣື່ອງ.

ຫົວຂໍ້ປະຈຳຂັນສກັບຈົບ.

ວັສສູປນາຢິກຂັນສກະ

ເຣື່ອງກິກษຸຫຼາຍອົງຄ໌

[໒໐໕] ໂດຍສມັຍນັ້ນແລ ພຣະຜູ້ມີພຣະກາຄເຈົ້າ ປະທັບຢູ່ ຓ ພຣະເວລຸວັນ ອັນເປັນສຖານທີ່ພຣະຣາຊທານເຫຍື່ອແກ່ກະແຕ ເຂຕພຣະນຄຣຣາຊຄຣິທ໌. ຄັ້ງນັ້ນ ພຣະຜູ້ມີພຣະກາຄຍັງບໍ່ໄດ້ທຣົງບັຍຍັຕິການຈຳພັຣษາແກ່ກິກษຸທັ້ງຫຼາຍ ກິກษຸເຫຼົ່ານັ້ນທ່ຽວຈາຣິກໄປຕລອດຣະດູໜາວ ຣະດູຮ້ອນ ແລະຣະດູຝົນ. ຄົນທັ້ງຫຼາຍຈຶ່ງເພັ່ງໂທษ ຕິຕຽນ ໂພນທະນາວ່າ ແນວໃດພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ ຈຶ່ງໄດ້ທ່ຽວຈາຣິກໄປຕລອດຣະດູໜາວ ຣະດູຮ້ອນ ແລະຣະດູຝົນ ຫຍຽບຍ່ຳຕິຓຊາຕິອັນຂຽວສົດ ບຽດບຽນອິນທຣີຍ໌ຢ່າງນຶ່ງຊຶ່ງມີຊີວະ ຍັງສັຕວ໌ເລັກໆ ຈຳນວນຫຼາຍໃຫ້ເຖິງຄວາມວອດວາຍລະ ກໍພວກປຣິພາຊົກອັນຍເດັຽຣຖີຍ໌ເຫຼົ່ານີ້ເປັນຜູ້ກ່າວຣັມມ໌ອັນຕ່ຳຊາມ ຍັງພັກ ຍັງອາສັຍຢູ່ປະຈຳຕລອດຣະດູຝົນ ອີກຢ່າງນຶ່ງ ຝູງນົກເຫຼົ່ານີ້ລະ ກໍຍັງທຳຮັງເທິງຍອດໄມ້ ແລະພັກອາສັຍຢູ່ປະຈຳຕລອດຣະດູຝົນ ສ່ວນພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ເຫຼົ່ານີ້ ທ່ຽວຈາຣິກໄປຕລອດຣະດູໜາວ ຣະດູຮ້ອນ ແລະຣະດູຝົນ ຫຍຽບຍ່ຳຕິຓຊາຕິອັນຂຽວສົດ

ບຽດບຽນອິນທຣີຍ໌ຢ່າງນຶ່ງຊຶ່ງມີຊີວະ ຍັງສັຕວ໌ເລັກໆ ຈຳນວນຫຼາຍໃຫ້ເຖິງຄວາມວອດວາຍ. ກິກຂຸທັ້ງຫຼາຍ ໄດ້ຍິນຄົນພວກນັ້ນເພັ່ງໂທສ ຕິຽນ ໂພນທະນາ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸ ແຣກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຮາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ຈຳພັຣຊາ.

ການຈຳພັຣຊາ ໒ ຢ່າງ

[໔໐໖] ຄັ້ງນັ້ນ ກິກຂຸທັ້ງຫຼາຍຄິດກັນວ່າ ພວກເຮົາຄວຣຈຳພັຣຊາເມື່ອໃດນໍ ແລ້ວຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຮາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ຈຳພັຣຊາ ໃນຣະດູຝົນ.

ຄັ້ງນັ້ນ ກິກຂຸທັ້ງຫຼາຍຄິດກັນວ່າ ວັນເຂົ້າພັຣຊາມີຈັກມື້ນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຮາກິກຂຸທັ້ງຫຼາຍ ວັນເຂົ້າພັຣຊານີ້ມີ ໒ ຄື ປຸຣິມິກາ ວັນເຂົ້າພັຣຊາຕົ້ນ ໑ ປັຈຈິມິກາ ວັນເຂົ້າພັຣຊາຫລັງ ໑ ເມື່ອພຣະຈັນທຣ໌ເພັນສເວີຍຣືກ໌ອາສາຄຫະລ່ວງ ໄປແລ້ວມື້ນຶ່ງ ຄວຣເຂົ້າພັຣຊາຕົ້ນ ເມື່ອພຣະຈັນທຣ໌ເພັນສເວີຍຣືກ໌ອາສາຄຫະລ່ວງໄປແລ້ວເດືອນນຶ່ງ ຄວຣເຂົ້າພັຣຊາຫລັງ ດູຮາກິກຂຸທັ້ງຫຼາຍ ວັນເຂົ້າພັຣຊາມີ ໒ ວັນເທົ່ານີ້ແລ.

ພຣະຈັພພັຄຄີຍ໌ທ່ຽວຈາຣິກທຸກເວລາ

[໔໐໗] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ຈຳພັຣຊາແລ້ວ ຍັງທ່ຽວຈາຣິກໃນຣະຫວ່າງພັຣຊາ. ຄົນທັງຫຼາຍຈຶ່ງເພັ່ງໂທສ ຕິຽນ ໂພນທະນາເຊັ່ນນັ້ນແຫຼະວ່າ ແນວໃດພຣະສມະນະເຊື້ອສາຍພຣະສາກຍບຸຕຣ໌ ຈຶ່ງໄດ້ທ່ຽວຈາຣິກຕລອດຣະດູໜາວ ຣະດູຮ້ອນ ແລະຣະດູຝົນ ຫຍຽບຍ່ຳຕິຓຊາຕິອັນຂຽວສົດ ບຽດບຽນ ອິນທຣີຍ໌ຢ່າງນຶ່ງຊຶ່ງມີຊີວະຍັງສັຕວ໌ເລັກໆ ມີຈຳນວນຫຼາຍໃຫ້ເຖິງຄວາມວອດວາຍລະ ກໍພວກອັນຍເດັຍຣຖີຍ໌ ເຫຼົ່ານີ້ ເປັນຜູ້ກ່າວສັມມ໌ອັນຕ່ຳຊາມ ຍັງພັກອາສັຍຢູ່ປະຈຳຕລອດຣະດູຝົນ ອີກຢ່າງນຶ່ງ ຝູງນົກເຫຼົ່ານີ້ລະ ກໍຍັງທຳຮັງເທິງຍອດໄມ້ແລ້ວພັກອາສັຍຢູ່ປະຈຳຕລອດຣະດູຝົນ ສ່ວນພຣະສມະນະເຊື້ອສາຍພຣະສາກຍບຸຕຣ໌ ເຫຼົ່ານີ້ ທ່ຽວຈາຣິກຕລອດຣະດູໜາວ ຣະດູຮ້ອນ ແລະຣະດູຝົນ ຫຍຽບຍ່ຳຕິຓຊາຕິອັນຂຽວສົດ ບຽດບຽນ ອິນທຣີຍ໌ຢ່າງນຶ່ງຊຶ່ງມີຊີວະ ຍັງສັຕວ໌ເລັກໆ ຊຶ່ງມີຈຳນວນຫຼາຍໃຫ້ເຖິງຄວາມວອດວາຍ. ກິກຂຸທັ້ງຫຼາຍ ໄດ້ຍິນຄົນພວກນັ້ນເພັ່ງໂທສ ຕິຽນ ໂພນທະນາ. ບັຣດາທີ່ເປັນຜູ້ມັກນ້ອຍຕ່າງກໍເພັ່ງໂທສ ຕິຽນ ໂພນທະນາວ່າ ແນວໃດພຣະຈັພພັຄຄີຍ໌ຈຳພັຣຊາແລ້ວ ຈຶ່ງໄດ້ທ່ຽວຈາຣິກະຫວ່າງພັຣຊາລະ ຈຶ່ງກິກຂຸເຫຼົ່ານັ້ນ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸຈຳພັຣຊາ ບໍ່ຢູ່ໃຫ້ຕລອດ ໓ ເດືອນຕົ້ນ ຫຼື ໓ ເດືອນຫລັງ ບໍ່ຄວຣຫລີກໄປສູ່ຈາຣິກ ອົງຄ໌ໃດຫລີກໄປ ຕ້ອງອາບັຕິທຸກກົຏ.

ພຣະຉັພພັຄຄີຍ໌ບໍ່ຈຳພັຣຊາ

[໔໐໗] ກໍໂດຍສມັຍນັ້ນແລ ພຣະຉັພພັຄຄີຍ໌ບໍ່ປະສົງຄ໌ຈະຈຳພັຣຊາ ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງຫ້າມວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸຈະບໍ່ຈຳພັຣຊາບໍ່ໄດ້ ອົງຄ໌ໃດບໍ່ຈຳພັຣຊາ ຕ້ອງອາບັຕິທຸກກົຏ.

ສມັຍຕໍ່ມາ ພຣະຉັພພັຄຄີຍ໌ ບໍ່ປະສົງຄ໌ຈະຈຳພັຣຊາໃນວັນເຂົ້າພັຣຊາ ແກ້ງລ່ວງເລີຍອາວາສໄປເສັຽ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງຫ້າມວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ປະສົງຄ໌ຈະຈຳພັຣຊາໃນວັນເຂົ້າພັຣຊາ ບໍ່ຄວຣແກ້ງລ່ວງເລີຍອາວາສໄປເສັຽ ອົງຄ໌ໃດລ່ວງເລີຍໄປເສັຽ ຕ້ອງອາບັຕິທຸກກົຏ.

ເລື່ອນກາລຝົນ

[໔໐໘] ກໍໂດຍສມັຍນັ້ນແລ ພຣະເຈົ້າພິມພິສາຣ ຈອມເສນາມາຄົຮຣາຊ ມີພຣະຣາຊປະສົງຄ໌ຈະທຣົງເລື່ອນກາລຝົນອອກໄປ ຈຶ່ງທຣົງສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຖ້າຈັ່ງໃດ ຂໍພຣະຄຸຓເຈົ້າທັ້ງຫຼາຍຄວຣຈຳພັຣຊາໃນຊຸຓຫປັກຂ໌ອັນຈະມາເຖິງ. ກິກຂຸທັ້ງຫຼາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຎາຕໃຫ້ຄ້ອຍຕາມພຣະເຈົ້າແຜ່ນດິນ.

ເຣື່ອງທຣົງອນຸຎາຕສັຕຕາຫກຣຓີຍະ

ທາຍົກສ້າງວິຫາຣເປັນຕົ້ນຖວາຍ

[໔໑໐] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣຣາຊຄຣຶຫ໌ ຕາມພຣະພຸທສາກິຣົມຍ໌ແລ້ວ ສເດັຈຈາຣິກໄປທາງພຣະນຄຣສາວັຕຖີ ສເດັຈຈາຣິກໄປໂດຍລຳດັບ ລຸເຖິງພຣະນຄຣສາວັຕຖີ. ຮູ້ວ່າພຣະອົງຄ໌ປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖບິຓຑິກຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ.

ກໍໂດຍສມັຍນັ້ນແລ ອຸບາສິກຊື່ອຸເທນໄດ້ໃຫ້ສ້າງວິຫາຣອຸທິສຕໍ່ສົງฆ໌ໄວ້ໃນໂກສົລຊົນບົທ. ເຂົາໄດ້ສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂໍອາຣາຘນາພຣະຄຸຓເຈົ້າທັ້ງຫຼາຍຈົ່ງມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງຘັມມ໌ ແລະພົບເຫັນກິກຂຸທັ້ງຫຼາຍ.

ກິກຂຸທັ້ງຫຼາຍຕອບໄປຢ່າງນີ້ວ່າ ທ່ານອຸບາສົກ ພຣະຜູ້ມີພຣະກາຄທຣົງບັນລັດຕິໄວ້ວ່າ ກິກຂຸຈຳພັຣຊາ ບໍ່ຢູ່ໃຫ້ຕລອດ ໓ ເດືອນຕົ້ນ ຫຼື ໓ ເດືອນຫລັງ ບໍ່ຄວຣຫລີກໄປສູ່ຈາຣິກ ຂໍອຸບາສົກອຸເທນຈົ່ງຣໍຊົ່ວຣະຍະເວລາທີ່ກິກຂຸທັ້ງຫຼາຍຈຳພັຣຊາ ອອກພັຣຊາແລ້ວຈຶ່ງຈັກໄປໄດ້ ແຕ່ຖ້າທ່ານຈະມີກຣຕີຍກິຈຣີບດ່ວນ ຈົ່ງໃຫ້ປະດິຊຖານວິຫາຣໄວ້ໃນສຳນັກກິກຂຸເຈົ້າຖິ່ນ ໃນໂກສົລຊົນບົທນັ້ນນັ່ນແຫຼະ.

ອຸບາສົກອຸເທນຈຶ່ງເພັ່ງໂທຊ ຕິຕຽນ ໂພນທະນາວ່າ ແນວໃດເມື່ອເຮົາສົ່ງທູຕໄປແລ້ວ ພຣະຄຸຕເຈົ້າທັ້ງຫຼາຍຈຶ່ງໄດ້ບໍ່ມາລະ ເຮົາກໍເປັນທາຍົກ ເປັນຜູ້ກໍ່ສ້າງ ເປັນຜູ້ບຳຣຸງສົງຂ໌.

ກິກຂຸທັ້ງຫຼາຍໄດ້ຍິນອຸບາສົກອຸເທນເພັ່ງໂທຊ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ແລ້ວຣັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເມື່ອບຸຄຄົລ ໗ ຈຳພວກສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕີຍະໄດ້ ແມ້ເມື່ອເຂົາບໍ່ສົ່ງມາ ເຮົາບໍ່ອນຸຍາຕ ບຸຄຄົລ ໗ ຈຳພວກ ຄື ກິກຂຸ ກິກຂຸຕີສິກຂມານາ ສາມເຕຣ ສາມເຕຣີ ອຸບາສົກ ອຸບາສິກາ ດູຣາກິກຂຸທັ້ງຫຼາຍ ເມື່ອບຸຄຄົລ ໗ ຈຳພວກນີ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາ ເຮົາບໍ່ອນຸຍາຕ ຄວຣກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ກໍອຸບາສົກໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສສົງຂ໌. ຖ້າເຂົາສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂໍອາຣາຊນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງສັມມ໌ແລະພົບເຫັນກິກຂຸທັ້ງຫຼາຍ. ເມື່ອເຂົາສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສົກໃນສາສນານີ້ໄດ້ໃຫ້ສ້າງເຮືອນມຸງແຖບດຽວອຸທິສສົງຂ໌ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຕ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງວັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຜີ ....

.... ໄດ້ໃຫ້ສ້າງວັຈຈກຸຜີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຕີ ....

.... ໄດ້ໃຫ້ສ້າງມົຕສົປ ....

.... ໄດ້ໃຫ້ສ້າງອາຮາມ ....

.... ໄດ້ໃຫ້ສ້າງອາຮາມວັຕຖຸ ....

ຖ້າເຂົາສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂໍອາຣາຊນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງສັມມ໌ ແລະພົບເຫັນກິກຂຸທັ້ງຫຼາຍ. ເມື່ອເຂົາສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສກິກຂຸຫຼາຍອົງຄ໌ດ້ວຍກັນ ....

.... ໄດ້ໃຫ້ສ້າງວິຫາຣອຸທິສກິກຂຸອົງຄ໌ນຶ່ງ ....

.... ໄດ້ໃຫ້ສ້າງເຮືອນມຸງແຖບດຽວ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຕ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງສັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຜີ ....

.... ໄດ້ໃຫ້ສ້າງວັຈຈກຸຕິ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຕີ ....

.... ໄດ້ໃຫ້ສ້າງມົຕທົປ ....

.... ໄດ້ໃຫ້ສ້າງອາຮາມ ....

.... ໄດ້ໃຫ້ສ້າງອາຮາມວັຕຖຸ ....

ຖ້າເຂົາສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂໍອາຣາທນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງທັມມ໌ ແລະພົບເຫັນພິກຂຸທັ້ງຫຼາຍ. ເມື່ອເຂົາສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໆ ວັນ.

ດູຣາພິກຂຸທັ້ງຫຼາຍ ກໍອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສພິກຂຸຕີສົງໝ໌ ....

.... ອຸທິສພິກຂຸຕີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສພິກຂຸຕີອົງຄ໌ນຶ່ງ ....

.... ອຸທິສສິກຂມານາຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສິກຂມານາອົງຄ໌ນຶ່ງ ....

.... ອຸທິສສາມເຕຣຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣອົງຄ໌ນຶ່ງ ....

.... ອຸທິສສາມເຕຣີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣີອົງຄ໌ນຶ່ງ ....

.... ໄດ້ໃຫ້ສ້າງເຮືອນມຸງແຖບດຽວ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງລັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຜີ ....

.... ໄດ້ໃຫ້ສ້າງວັຈຈກຸຜີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳສ້າງ ....

.... ໄດ້ໃຫ້ສ້າງສະໂບກຂຣຓີ ....

.... ໄດ້ໃຫ້ສ້າງມົຓຫົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ. ຖ້າເຂົາສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂໍອາຣາຮນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງຣັມມ໌ ແລະພົບກິກຂຸທັ້ງຫຼາຍ ເມື່ອເຂົາສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຓີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໆ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສົກໃນສາສນານີ້ໄດ້ໃຫ້ສ້າງນິເວສນ໌ເພື່ອປະໂຍຊນ໌ຕົນ ....

.... ໄດ້ໃຫ້ສ້າງເຮືອນນອນ ....

.... ໄດ້ໃຫ້ສ້າງໂຮງເກັບຂອງ ....

.... ໄດ້ໃຫ້ສ້າງຮ້ານ ....

.... ໄດ້ໃຫ້ສ້າງໂຮງກົມ ....

.... ໄດ້ໃຫ້ສ້າງຮ້ານຄ້າ ....

.... ໄດ້ໃຫ້ສ້າງໂຮງຮ້ານຄ້າ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງລັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງໂຮງຄົວ ....

.... ໄດ້ໃຫ້ສ້າງວັຈຈກຸຜີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງນໍ້າສ້າງ ....

.... ໄດ້ໃຫ້ສ້າງໂຮງນໍ້າສ້າງ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຕີ ....

.... ໄດ້ໃຫ້ສ້າງມົຓຫົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ ອີກຢ່າງນຶ່ງ ຈະມີການມຸງຄົລແກ່ບຸຕຣ໌ກໍດີ ຈະມີການມຸງຄົລແກ່ທິດາກໍດີ ເຂົາເຈັບໄຂ້ກໍດີ ຈະກ່າວພຣະສຸຕຕັນຕະທີ່ຮູ້ຈເພາະກໍດີ. ຖ້າເຂົາສົ່ງທູຕໄປໃນສຳນັກກິກສຸທັ້ງຫຼາຍວ່າ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຈັກໄດ້ຮຽນພຣະສຸຕຕັນຕະນີ້ໄວ້ ໂດຍວິທີທີ່ພຣະສຸຕຕັນຕະນີ້ ຈະບໍ່ເສື່ອມສູນໄປເສັຽ ຫຼືວ່າເຂົາມີກິຈຫຼືກຣຕີຍະ ຢ່າງໃດຢ່າງນຶ່ງກໍດີ. ຖ້າເຂົາສົ່ງທູຕໄປ ໃນສຳນັກກິກສຸທັ້ງຫຼາຍວ່າ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງຣັມມ໌ ແລະພົບເຫັນກິກສຸທັ້ງຫຼາຍ. ເມື່ອເຂົາສົ່ງທູຕມາ ຄວຣໄປດ້ວຍສັຕຕາຫະກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ

ດູຣາກິກສຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌. ຖ້າເຂົາສົ່ງທູຕໄປໃນສຳນັກກິກສຸທັ້ງຫຼາຍວ່າ ຂໍອາຣາຊນາພຣະຜູ້ເປັນເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາຈະຖວາຍທານ ຟັງຣັມມ໌ ແລະພົບເຫັນກິກສຸທັ້ງຫຼາຍ. ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອນາງບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາທິກາຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງເຮືອນມຸງແຖບດຽວອຸທິສສົງໝ໌ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖໍ້າ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງຈັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຜີ ....

.... ໄດ້ໃຫ້ສ້າງວັຈຈກຸຜີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນໍ້າສ້າງ ....

.... ໄດ້ໃຫ້ສ້າງໂຮງນໍ້າສ້າງ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຕີ ....

.... ໄດ້ໃຫ້ສ້າງມົຓທົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ. ຖ້າເຂົາສົ່ງທູຕໄປໃນສຳນັກກິກາຸທັ້ງຫຼາຍວ່າ ຂໍອາຣາທນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້າພເຈົ້າປັຕຖນາຈະຖວາຍທານ ຟັງສັມມ໌ ແລະພົບເຫັນກິກາຸທັ້ງຫຼາຍ. ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອນາງບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາທິກາຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສກິກາຸຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສກິກາຸອົງຄ໌ນຶ່ງ ....

.... ອຸທິສກິກາຸຕີສົງໝ໌ ....

.... ອຸທິສກິກາຸຕີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສພິກາບຸຕີອົງຄ໌ນຶ່ງ ....

.... ອຸທິສສິກຂມານາຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສິກຂມານາອົງຄ໌ນຶ່ງ ....

.... ອຸທິສສາມເຕຣຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣອົງຄ໌ນຶ່ງ ....

.... ອຸທິສສາມເຕຣີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣີອົງຄ໌ນຶ່ງ ....

.... ໄດ້ໃຫ້ສ້າງເຮືອນມຸງແຖບດຽວ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງຂັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຎີ ....

.... ໄດ້ໃຫ້ສ້າງວັຈຈກຸຎີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳສ້າງ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຓີ ....

.... ໄດ້ໃຫ້ສ້າງມົຓຑົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ. ຖ້ານາງສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂໍອາຣາທນາພຣະ-ຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາຈະຖວາຍທານ ຟັງທັມມ໌ ແລະພົບເຫັນພິກຂຸທັ້ງຫຼາຍ. ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ແຕ່ເມື່ອນາງບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ອຸບາສິກາໃນສາສນານີ້ໄດ້ໃຫ້ສ້າງນິເວສນ໌ ເພື່ອປະໂຍຊນ໌ຕົນ ....

.... ໄດ້ໃຫ້ສ້າງເຮືອນນອນ ....

.... ໄດ້ໃຫ້ສ້າງໂຮງເກັບຂອງ ....

.... ໄດ້ໃຫ້ສ້າງຮ້ານ ....

.... ໄດ້ໃຫ້ສ້າງໂຮງກູົມ ....

.... ໄດ້ໃຫ້ສ້າງຮ້ານຄ້າ ....

.... ໄດ້ໃຫ້ສ້າງໂຮງຮ້ານຄ້າ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງລັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຏີ ....

.... ໄດ້ໃຫ້ສ້າງວັຈຈກຸຏີ ....

.... ໄດ້ໃຫ້ສ້າງທີ່ຈົງກູົມ ....

.... ໄດ້ໃຫ້ສ້າງໂຮງຈົງກູົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳ ....

.... ໄດ້ໃຫ້ສ້າງເຮືອນໄຟ ....

.... ໄດ້ໃຫ້ສ້າງໂຮງເຮືອນໄຟ ....

.... ໄດ້ໃຫ້ສ້າງສະໂບກຂຣຓີ ....

.... ໄດ້ໃຫ້ສ້າງມົຓຑົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ ອີກຢ່າງນຶ່ງ ຈະມີການມຸງຄົລແກ່ບຸຕຣ໌ກໍດີ ຈະມີການມຸງຄົລແກ່ທິດາກໍດີ ເຂົາເຈັບໄຂ້ກໍດີ ຈະກ່າວພຣະສຸຕຕັນຕະທີ່ຮູ້ຈັກເພາະກໍດີ. ຖ້າເຂົາສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂໍອາຣາທນາພຣະຄຸຕເຈົ້າທັ້ງຫຼາຍມາ ຈັກໄດ້ຮຽນພຣະສຸຕຕັນຕະນີ້ໄວ້ ໂດຍວິທີທີ່ພຣະສຸຕຕັນຕະນີ້ຈະບໍ່ເສື່ອມສູນໄປເສັຽ ຫຼືວ່າ ເຂົາມີກິຈ ຫຼືກຣຕີຍະຢ່າງນຶ່ງຢ່າງໃດກໍດີ. ຖ້າເຂົາສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂໍອາຣາທນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາຈະຖວາຍທານ ຟັງທັມມ໌ ແລະພົບເຫັນພິກຂຸທັ້ງຫຼາຍ. ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອນາງບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸໃນສາສນານີ້ໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌ ....

.... ພິກຂຸຕີໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌ ....

.... ສິກຂມານາໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌ ....

.... ສາມເຕຣໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌ ....

.... ສາມເຕຣີໄດ້ໃຫ້ສ້າງວິຫາຣອຸທິສສົງຄ໌ ....

.... ອຸທິສພິກຂຸຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສພິກຂຸອົງຄ໌ນຶ່ງ ....

.... ອຸທິສພິກຂຸຕີສົງຄ໌ ....

.... ອຸທິສພິກຂຸຕີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສພິກຂຸຕີອົງຄ໌ນຶ່ງ ....

.... ອຸທິສສິກຂມານາຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສິກຂມານາອົງຄ໌ນຶ່ງ ....

.... ອຸທິສສາມເຕຣຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣອົງຄ໌ນຶ່ງ ....

.... ອຸທິສສາມເຕຣີຫຼາຍອົງຄ໌ດ້ວຍກັນ ....

.... ອຸທິສສາມເຕຣີອົງຄ໌ນຶ່ງ ....

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ສາມເຕຣີໃນສາສນານີ້ໄດ້ໃຫ້ສ້າງວິຫາຣເພື່ອປະໂຍຊນ໌ຕົນ ....

.... ໄດ້ໃຫ້ສ້າງເຮືອນມຸງແຖບດຽວ ....

.... ໄດ້ໃຫ້ສ້າງເຮືອນຊັ້ນ ....

.... ໄດ້ໃຫ້ສ້າງເຮືອນໂລ້ນ ....

.... ໄດ້ໃຫ້ສ້າງຖ້ຳ ....

.... ໄດ້ໃຫ້ສ້າງບໍຣິເວຓ ....

.... ໄດ້ໃຫ້ສ້າງຊຸ້ມ ....

.... ໄດ້ໃຫ້ສ້າງໂຮງສັນ ....

.... ໄດ້ໃຫ້ສ້າງໂຮງໄຟ ....

.... ໄດ້ໃຫ້ສ້າງກັປປິຍກຸຜີ ....

.... ໄດ້ໃຫ້ສ້າງວັຈຈກຸຜີ ....

.... ໄດ້ໃຫ້ສ້າງທີ່ຈົງກົມ ....

.... ໄດ້ໃຫ້ສ້າງໂຮງຈົງກົມ ....

.... ໄດ້ໃຫ້ສ້າງນ້ຳສ້າງ ....

.... ໄດ້ໃຫ້ສ້າງໂຮງນ້ຳສ້າງ ....

.... ໄດ້ໃຫ້ສ້າງສະໂບກຂຣຕີ ....

.... ໄດ້ໃຫ້ສ້າງມົຓທົປ ....

.... ໄດ້ໃຫ້ສ້າງອາຣາມ ....

.... ໄດ້ໃຫ້ສ້າງອາຣາມວັຕຖຸ. ຖ້ານາງສົ່ງທູຕໄປໃນສຳນັກກິກຍຸທັ້ງຫຼາຍວ່າ ຂໍອາຣາສນາພຣະ-ຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາຈະຖວາຍທານ ຟັງຣັມມ໌ ແລະພົບເຫັນກິກຍຸທັ້ງຫຼາຍ. ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອນາງບໍ່ສົ່ງມາ ກໍບໍ່ຄວຣໄປ ຄວຣກັບໃນ ໗ ວັນ.

ທຣົງອນຸຍາຕສັຕຕາຫກຣຕີຍະເພາະສຫຣັມມິກ ໕

[໔໑໑] ກໍໂດຍສມັຍນັ້ນແລ ກິກຍຸອົງຄ໌ນຶ່ງອາພາຮ. ລາວໄດ້ສົ່ງທູຕໄປໃນສຳນັກກິກຍຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາຮ ຂໍອາຣາສນາກິກຍຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາກາຣມາຂອງກິກຍຸທັ້ງຫຼາຍ. ກິກຍຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຍຸທັ້ງຫຼາຍວ່າ ດູຣາກິກຍຸທັ້ງຫຼາຍ ເມື່ອສຫຣັມມິກ ໕ ແມ້ບໍ່ໄດ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອເຂົາສົ່ງທູຕມາ ສຫຣັມມິກ ໕ ຄື ກິກຍຸ ກິກຍຸຕີ ສິກຂມານາ ສາມເຓຣ ສາມເຓຣີ ດູຣາກິກຍຸທັ້ງຫຼາຍ ເມື່ອສຫຣັມມິກ ໕ ນີ້ ແມ້ບໍ່ໄດ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອເຂົາສົ່ງທູຕມາ ແຕ່ຕ້ອງກັບໃນ ໗ ວັນ.

ສັຕຕາຫກຣຄີຍະເນື່ອງດ້ວຍກິກຸ

໑. ດູຮາກິກຸທັ້ງຫຼາຍ ກິກຸໃນສາສນານີ້ອາພາຣ ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາຣ ຂໍອາຮາຣນາກິກຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຸ. ດູຮາກິກຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຄີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັກຖາກກັຕ ຄິລານເກສັຊ ຈັກຖາມອາກາຣ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໗ ວັນ.

ດູຮາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມກະສັນບັງເກີດແກ່ກິກຸໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຸທັ້ງຫຼາຍວ່າ ຄວາມກະສັນບັງເກີດແກ່ຂ້ານ້ອຍແລ້ວ ຂໍອາຮາຣນາກິກຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຸທັ້ງຫຼາຍ. ດູຮາກິກຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຄີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກະງັບຄວາມກະສັນ ຫຼືຈັກວານກິກຸອື່ນໃຫ້ຊ່ອຍຣະງັບ ຫຼືຈະທຳສັມມ໌ກຖາແກ່ກິກຸນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຮາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມຮຳຄາຍບັງເກີດຂຶ້ນແກ່ກິກຸໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຸທັ້ງຫຼາຍວ່າ ຄວາມຮຳຄາຍບັງເກີດແກ່ຂ້ານ້ອຍ ຂໍອາຮາຣນາກິກຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຸທັ້ງຫຼາຍ. ດູຮາກິກຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຄີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກບັຣເທົາຄວາມຮຳຄາຍຫຼືຈັກວານກິກຸອື່ນໃຫ້ຊ່ອຍບັຣເທົາ ຫຼືຈະທຳສັມມ໌ກຖາແກ່ກິກຸນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຮາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມເຫັນຜິດບັງເກີດແກ່ກິກຸໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຸທັ້ງຫຼາຍວ່າ ຄວາມເຫັນຜິດບັງເກີດແກ່ຂ້ານ້ອຍ ຂໍອາຮາຣນາກິກຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຸທັ້ງຫຼາຍ. ດູຮາກິກຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຄີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກເປລື້ອງຄວາມເຫັນຜິດຈັກວານກິກຸອື່ນໃຫ້ຊ່ອຍເປລື້ອງ ຫຼືຈະທຳສັມມ໌ກຖາແກ່ກິກຸນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຮາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ເປັນຜູ້ຕ້ອງຄຣຸກາບັຕິຄວຣຢູ່ປຣິວາສ. ຖ້າທ່ານຄວຣສົ່ງທູຕໄປໃນສຳນັກກິກຸທັ້ງຫຼາຍວ່າ ຂ້ານ້ອຍເອງຕ້ອງຄຣຸກາບັຕິຄວຣຢູ່ປຣິວາສ ຂໍອາຮາຣນາກິກຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຸທັ້ງຫຼາຍ. ດູຮາກິກຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຄີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ປາຣິວາສ ຈະຊ່ອຍສູຕຫຼືຈະເປັນຄຓະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັງຫຼາຍວ່າ ຂ້ານ້ອຍເອງເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຂໍອາຣາທນາພິກຂຸທັງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພິກຂຸທັງຫຼາຍ. ດູຣາພິກຂຸທັງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍຊັກເຂົ້າຫາອາບັຕິເດີມ ຈະຊ່ອຍສູຕ ຫຼືຈະເປັນຄຕະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ເປັນຜູ້ຄວຣມານັຕ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັງຫຼາຍວ່າ ຂ້ານ້ອຍເອງເປັນຜູ້ຄວຣມານັຕ ຂໍອາຣາທນາພິກຂຸທັງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພິກຂຸທັງຫຼາຍ. ດູຣາພິກຂຸທັງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ມານັຕ ຈະຊ່ອຍສູຕຫຼືຈະເປັນຄຕະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ເປັນຜູ້ຄວຣອັພການ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັງຫຼາຍວ່າ ຂ້ານ້ອຍເອງເປັນຜູ້ຄວຣອັພການ ຂໍອາຣາທນາພິກຂຸທັງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພິກຂຸທັງຫຼາຍ. ດູຣາພິກຂຸທັງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ອັພການ ຈະຊ່ອຍສູຕຫຼືຈະເປັນຄຕະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັງຫຼາຍ ອີກຢ່າງນຶ່ງ ສົງຄ໌ເປັນຜູ້ມັກເພື່ອທຳກັມມ໌ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ແກ່ພິກຂຸໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັງຫຼາຍວ່າ ສົງຄ໌ເປັນຜູ້ມັກເພື່ອທຳກັມມ໌ແກ່ຂ້ານ້ອຍ ຂໍອາຣາທນາພິກຂຸທັງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພິກຂຸທັງຫຼາຍ. ດູຣາພິກຂຸທັງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ດ້ວຍວິຮີຢ່າງໃດນໍ ສົງຄ໌ຈຶ່ງຈະບໍ່ທຳກັມມ໌ ຫຼືຄວຣນ້ອມໄປເພື່ອກັມມ໌ສຖານເບົາ ແຕ່ຕ້ອງກັບໃນ ໗ ວັນ.
ອີກຢ່າງນຶ່ງ ພິກຂຸນັ້ນໄດ້ຖືກສົງຄ໌ທຳກັມມ໌ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ແລ້ວ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັງຫຼາຍວ່າ ສົງຄ໌ໄດ້ທຳກັມມ໌ແກ່ຂ້ານ້ອຍແລ້ວ ຂໍອາຣາທນາພິກຂຸທັງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພິກຂຸທັງຫຼາຍ. ດູຣາພິກຂຸທັງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ດ້ວຍວິຮີຢ່າງໃດນໍ ພິກຂຸນັ້ນຄວຣປະພຶຕຊອບ ຫາຍເຫຍີ່ຫຍິ່ງ ປະພຶຕແກ້ຕົວໄດ້ ສົງຄ໌ຈະໄດ້ຣະງັບກັມມ໌ນັ້ນເສັຽ ແຕ່ຕ້ອງກັບໃນ ໗ ວັນ.

ສັຕຕາຫກຣຕີຍະເນື່ອງດ້ວຍພິກຂຸນີ

໔. ດູຣາພິກຂຸທັ້ງຫຼາຍ ກໍພິກຂຸນີໃນສາສນານີ້ອາພາສ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາສ ຂໍອາຣາສນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ ດູຣາພິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານພັຕ ຄິລານຸປັຖາກພັຕ ຄິລານເພສັຊ ຈັກຖາມອາການ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມກະສັນບັງເກີດແກ່ພິກຂຸນີໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຄວາມກະສັນບັງເກີດແກ່ຂ້ານ້ອຍແລ້ວ ຂໍອາຣາສນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາພິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກລະງັບຄວາມກະສັນຫຼືຈັກວານພິກຂຸອື່ນໃຫ້ຊ່ອຍຣະງັບ ຫຼືຈະທຳສົນທນາກຖາ ແກ່ພິກຂຸນີນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມຣຳຄາຍບັງເກີດແກ່ພິກຂຸນີໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຄວາມຣຳຄາຍບັງເກີດແກ່ຂ້ານ້ອຍແລ້ວ ຂໍອາຣາສນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາພິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກບັຣເທົາຄວາມຣຳຄາຍຫຼືຈັກວານພິກຂຸອື່ນໃຫ້ຊ່ອຍບັຣເທົາ ຫຼືຈະທຳສົນທນາກຖາແກ່ພິກຂຸນີນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມເຫັນຜິດບັງເກີດແກ່ພິກຂຸນີໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຄວາມເຫັນຜິດບັງເກີດແກ່ຂ້ານ້ອຍ ຂໍອາຣາສນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາພິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກເປລື້ອງຄວາມເຫັນຜິດຈັກວານພິກຂຸອື່ນໃຫ້ຊ່ອຍເປລື້ອງ ຫຼືຈະທຳສົນທນາກຖາແກ່ພິກຂຸນັ້ນ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸນີໃນສາສນານີ້ເປັນຜູ້ຕ້ອງຄຣຸກາບັຕິ ຄວຣມານັຕ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກພິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງຕ້ອງຄຣຸກາບັຕິ ຄວຣມານັຕ ຂໍອາຣາສນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາພິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ມານັຕ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸຕີໃນສາສນານີ້ເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງເປັນຜູ້ຄວຣຊັກເຂົ້າຫາອາບັຕິເດີມ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍຊັກເຂົ້າຫາອາບັຕິເດີມ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸຕີໃນສາສນານີ້ເປັນຜູ້ຄວຣອັພການ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງເປັນຜູ້ຄວຣອັພການ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາກໍຄວຣໄປດ້ວຍສັຕຕາຫ-ກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ອັພການແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ສົງໝ໌ເປັນຜູ້ມັກເພື່ອທຳກັມມ໌ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ ແກ່ກິກຂຸຕີໃນສາສນານີ້. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ສົງໝ໌ເປັນຜູ້ມັກເພື່ອທຳກັມມ໌ແກ່ຂ້ານ້ອຍ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ດ້ວຍວິธີຢ່າງໃດນໍ ສົງໝ໌ຈຶ່ງຈະບໍ່ທຳກັມມ໌ ຫຼືຄວຣນ້ອມໄປເພື່ອກັມມ໌ສຖານເບົາ ແຕ່ຕ້ອງກັບໃນ ໗ ວັນ. ອີກຢ່າງນຶ່ງ ກິກຂຸຕີນັ້ນໄດ້ຖືກສົງໝ໌ທຳກັມມ໌ ຄື ຕັຊຊນີຍກັມມ໌ ນິຍສກັມມ໌ ປັພພາຊນີຍກັມມ໌ ປຕິສາຣຕີຍກັມມ໌ ຫຼືອຸກເຂປນີຍກັມມ໌ແລ້ວ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ສົງໝ໌ໄດ້ທຳກັມມ໌ແກ່ຂ້ານ້ອຍແລ້ວ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ດ້ວຍວິธີຢ່າງໃດນໍ ກິກຂຸຕີນັ້ນຄວຣປະພຶຕຊອບ ຫາຍເຫຍີ່ຫຍິ່ງ ປະພຶຕແກ້ຕົວໄດ້ ສົງໝ໌ຈະໄດ້ຣະງັບກັມມ໌ນັ້ນເສັຽ ແຕ່ຕ້ອງກັບໃນ ໗ ວັນ.

ສັຕຕາຫກຣຕີຍະເນື່ອງດ້ວຍສິກຂມານາ

໓. ດູຣາກິກຂຸທັ້ງຫຼາຍ ກໍສິກຂມານາໃນສາສນານີ້ອາພາຊ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາຊ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງ

ກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັກຖາກັຕ ຄິລານເພາສັຊ ຈັກຖາມອາການ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມກະສັນບັງເກີດແກ່ສິກຂມານາໃນສາສນານີ້ ....

.... ຄວາມຣໍາຄານບັງເກີດ ....

.... ຄວາມເຫັນຜິດບັງເກີດ ....

.... ສິກຂາຂອງສິກຂມານາໃນສາສນານີ້ກໍາເຣີບ. ຖ້າທ່ານອາຈຈະສົ່ງທູຕໄປໃນສໍານັກກິກຂຸທັ້ງຫຼາຍວ່າ ສິກຂາຂອງຂ້ານ້ອຍກໍາເຣີບແລ້ວ ຂໍອາຣາສນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຕເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທໍາການຂວນຂວາຍໃຫ້ສມາທານສິກຂາ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ສິກຂມານາໃນສາສນານີ້ເປັນຜູ້ມັກຈະອຸປສົມບົທ. ຖ້າທ່ານອາຈຈະສົ່ງທູຕໄປໃນສໍານັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງມັກຈະອຸປສົມບົທ ຂໍອາຣາສນາພຣະຄຸຕເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຕເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທໍາການຂວນຂວາຍໃຫ້ອຸປສົມບົທ ຈະຊ່ອຍສູຕຫຼືຈະເປັນຄຕະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ສັຕຕາຫກຣຕິຍະເນື່ອງດ້ວຍສາມເຕຣ

໔. ດູຣາກິກຂຸທັ້ງຫຼາຍ ກໍສາມເຕຣໃນສາສນານີ້ອາພາຣ. ຖ້າທ່ານອາຈຈະສົ່ງທູຕໄປໃນສໍານັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາຣ ຂໍອາຣາສນາກິກຂຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຂຸທັ້ງຫຼາຍ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັກຖາກັຕ ຄິລານເພາສັຊ ຈັກຖາມອາການ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມກະສັນບັງເກີດແກ່ສາມເຕຣໃນສາສນານີ້ ....

.... ຄວາມຣໍາຄານບັງເກີດ ....

.... ຄວາມເຫັນຜິດບັງເກີດ ....

ສາມເຕຣເປັນຜູ້ມັກຈະຖາມປີ. ຖ້າທ່ານອາຈຈະສົ່ງທູຕໄປໃນສໍານັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງມັກຈະຖາມປີ ຂໍອາຣາສນາກິກຂຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຂຸທັ້ງຫຼາຍ ດູຣາກິກຂຸທັ້ງຫຼາຍ

ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກຖາມ ຫຼືຈັກບອກ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ສາມເຕຣໃນສາສນານີ້ເປັນຜູ້ມັກຈະອຸປສົມບົທ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງມັກຈະອຸປສົມບົທ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຂຸທັ້ງຫຼາຍ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ອຸປສົມບົທ ຈະຊ່ວຍສູຕ ຫຼືຈະເປັນຄຓະປູຣກັບແຕ່ຕ້ອງກັບໃນ ໗ ວັນ.

ສັຕຕາຫກຣຕີຍະເນື່ອງດ້ວຍສາມເຕຣີ

໕. ດູຣາກິກຂຸທັ້ງຫຼາຍ ກໍສາມເຕຣີໃນສາສນານີ້ອາພາຊ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງອາພາຊ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັກຖາກັຕ ຄິລານເກສັຊ ຈັກຖາມອາການ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຄວາມກະສັນບັງເກີດແກ່ສາມເຕຣີໃນສາສນານີ້ ....

.... ຄວາມຣຳຄາຍບັງເກີດ ....

.... ຄວາມເຫັນຜິດບັງເກີດ ....

.... ສາມເຕຣີເປັນຜູ້ມັກຈະຖາມປີ ....

ສາມເຕຣີເປັນຜູ້ມັກຈະສມາທານສິກຂາ. ຖ້າທ່ານອາຈຈະສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຂ້ານ້ອຍເອງມັກຈະສມາທານສິກຂາ ຂໍອາຣາຊນາພຣະຄຸຓເຈົ້າທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງພຣະ-ຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອທ່ານບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອທ່ານສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈະທຳການຂວນຂວາຍໃຫ້ສມາທານສິກຂາ ແຕ່ຕ້ອງກັບໃນ ໗ ວັນ.

[໔໑໘] ກໍໂດຍສມັຍນັ້ນແລ ມາຣດາຂອງກິກຂຸອົງຄ໌ນຶ່ງໄດ້ປ່ວຍໄຂ້. ນາງສົ່ງທູຕໄປໃນສຳນັກກິກຂຸຜູ້ເປັນບຸຕຣ໌ວ່າ ຂ້ານ້ອຍເອງປ່ວຍໄຂ້ ຂ້ານ້ອຍປັຕຖນາການມາຂອງບຸຕຣ໌ ຈຶ່ງກິກຂຸນັ້ນໄດ້ດຳຣິວ່າ ພຣະຜູ້ມີ

ພຣະກາຄທຣົງບັນລັຕິໄວ້ວ່າ ເມື່ອບຸຄຄົລ ໆ ຈຳພວກສົ່ງທູຕມາ ໄປດ້ວຍສັຕຕາຫກຣຕິຍະໄດ້ ແຕ່ເມື່ອເຂົາ ບໍ່ສົ່ງທູຕມາ ຈະໄປບໍ່ໄດ້ ສຳຫຼັບສຫັມມິກ ໕ ແມ້ບໍ່ໄດ້ສົ່ງທູຕມາກໍໄປດ້ວຍສັຕຕາຫກຣຕິຍະໄດ້ ຈະ ຕ້ອງກ່າວໄປເຮັດຫຍັງເມື່ອເຂົາສົ່ງທູຕມາ ກໍນີ້ມາຣດາຂອງເຮົາກຳລັງປ່ວຍໄຂ້ ແລະທ່ານກໍບໍ່ແມ່ນອຸບາສິກາ ເຮົາ ຈະຄວຣປຕິບັຕິຢ່າງໃດນໍ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສ ອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເມື່ອບຸຄຄົລ ໆ ຈຳພວກ ແມ້ບໍ່ໄດ້ສົ່ງທູຕມາ ເຮົາ ອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອເຂົາສົ່ງທູຕມາ ບຸຄຄົລ ໆ ຈຳພວກ ຄື ກິກຂຸ ກິກຂຸຕີ ສິກຂມານາ ສາມເຕຣ ສາມເຕຣີ ມາຣດາແລະບິດາ ດູຣາກິກຂຸທັ້ງຫຼາຍ ເມື່ອບຸຄຄົລ ໆ ຈຳພວກນີ້ ແມ້ບໍ່ໄດ້ສົ່ງທູຕມາ ເຮົາອນຸຍາຕໃຫ້ໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງເມື່ອເຂົາ ສົ່ງທູຕມາ ແຕ່ຕ້ອງກັບໃນ ໆ ວັນ.

ດູຣາກິກຂຸທັ້ງຫຼາຍ ກໍມາຣດາຂອງກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງທູຕໄປໃນສຳນັກ ກິກຂຸຜູ້ເປັນບຸຕຣ໌ວ່າ ຂ້ານ້ອຍເອງປ່ວຍໄຂ້ ຂໍບຸຕຣ໌ຂອງຂ້ານ້ອຍຈົ່ງມາ ຂ້ານ້ອຍປັຕຖນາການມາຂອງບຸຕຣ໌. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອນາງບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງ ເມື່ອນາງສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັຖາກກັຕ ຄິລານເກສັຊ ຈະຖາມ ອາການຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໆ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ບິດາຂອງກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງທູຕໄປໃນ ສຳນັກກິກຂຸຜູ້ເປັນບຸຕຣ໌ວ່າ ລັນເອງປ່ວຍໄຂ້ ຂໍບຸຕຣ໌ຂອງລັນຈົ່ງມາ ລັນປັຕຖນາການມາຂອງບຸຕຣ໌. ດູຣາກິກຂຸທັ້ງຫຼາຍ ແມ້ເມື່ອເຂົາບໍ່ໄດ້ສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະໄດ້ ຈະຕ້ອງກ່າວໄປເຮັດຫຍັງ ເມື່ອ ເຂົາສົ່ງທູຕມາ ຄວຣໄປດ້ວຍຕັ້ງໃຈວ່າ ຈັກສແວງຫາຄິລານກັຕ ຄິລານຸປັຖາກກັຕ ຄິລານເກສັຊ ຈັກຖາມອາການ ຫຼືຈັກພຍາບາລ ແຕ່ຕ້ອງກັບໃນ ໆ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ອ້າຍນ້ອງຊາຍຂອງກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງ ທູຕໄປໃນສຳນັກກິກຂຸຜູ້ອ້າຍນ້ອງຊາຍວ່າ ຂ້ານ້ອຍເອງປ່ວຍໄຂ້ ຂໍອ້າຍນ້ອງຊາຍຂອງຂ້ານ້ອຍຈົ່ງມາ ຂ້ານ້ອຍ ປັຕຖນາການມາຂອງອ້າຍນ້ອງຊາຍ. ດູຣາກິກຂຸທັ້ງຫຼາຍ ເມື່ອເຂົາສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕິຍະ ໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ກໍບໍ່ຄວຣໄປ ແຕ່ຕ້ອງກັບໃນ ໆ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ເອື້ອຍນ້ອງລິງຂອງກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງ ທູຕໄປໃນສຳນັກກິກຂຸວ່າ ຂ້ານ້ອຍເອງປ່ວຍໄຂ້ ຂໍອ້າຍນ້ອງຊາຍຂອງຂ້ານ້ອຍຈົ່ງມາ ຂ້ານ້ອຍປັຕຖນາການມາ

ຂອງອ້າຍນ້ອງຊາຍ. ດູຣາກິກຂຸທັ້ງຫຼາຍ ເມື່ອເຂົາສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ກໍບໍ່ຄວຣໄປ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ຍາຕິຂອງກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງທູຕໄປສຳນັກກິກຂຸວ່າ ຂ້ານ້ອຍເອງປ່ວຍໄຂ້ ຂໍພຣະຄຸຓເຈົ້າຈົ່ງມາ ຂ້ານ້ອຍປັຕຖນາການມາຂອງພຣະຄຸຓເຈົ້າ. ດູຣາກິກຂຸທັ້ງຫຼາຍ ເມື່ອເຂົາສົ່ງທູຕມາ ກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ກໍບໍ່ຄວຣໄປ ແຕ່ຕ້ອງກັບໃນ ໗ ວັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ບຸຣຸຫຜູ້ກັກດີຕໍ່ກິກຂຸໃນສາສນານີ້ປ່ວຍໄຂ້. ຖ້າເຂົາອາຈຈະສົ່ງທູຕໄປໃນສຳນັກກິກຂຸວ່າ ຂ້ານ້ອຍເອງປ່ວຍໄຂ້ ຂໍອາຣາທນາກິກຂຸທັ້ງຫຼາຍມາ ຂ້ານ້ອຍປັຕຖນາການມາຂອງກິກຂຸທັ້ງຫຼາຍ. ດູຣາກິກຂຸທັ້ງຫຼາຍ ເມື່ອເຂົາສົ່ງທູຕມາກໍຄວຣໄປດ້ວຍສັຕຕາຫກຣຕີຍະໄດ້ ແຕ່ເມື່ອເຂົາບໍ່ສົ່ງທູຕມາ ກໍບໍ່ຄວຣໄປ ແຕ່ຕ້ອງກັບໃນ ໗ ວັນ.

ທຣົງອນຸຍາຕສັຕຕາຫກຣຕີຍະເພາະກິຈຂອງສົງຆ໌

[໔໑໕] ກໍໂດຍສມັຍນັ້ນແລ ມຫາວິຫາຣຂອງສົງຆ໌ເພພັງລົງ ອຸບາສົກຄົນນຶ່ງໄດ້ໃຫ້ຕັດເຄື່ອງທັພພສັມກາຣະໄວ້ໃນປ່າ. ເຂົາສົ່ງທູຕໄປໃນສຳນັກກິກຂຸທັ້ງຫຼາຍວ່າ ຖ້າພຣະຄຸຓເຈົ້າທັ້ງຫຼາຍ ອາຈຈະຂົນເຄື່ອງທັພພສັມກາຣະນັ້ນໄປໄດ້ ຂ້ານ້ອຍຂໍຖວາຍເຄື່ອງທັພພສັມກາຣະນັ້ນ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຣົາອນຸຍາຕໃຫ້ໄປໄດ້ເພາະກຣຕີຍະຂອງສົງຆ໌ ແຕ່ຕ້ອງກັບໃນ ໗ ວັນ.

ເຣື່ອງທຣົງອນຸຍາຕສັຕຕາຫກຣຕີຍະ ຈົບ.

ວັສສາວາສກາຓວາຣທີ່ ໑ ຈົບ

ອັນຕຣາຍຂອງພິກຂຸຜູ້ຈຳພັຣษາ
ຖືກສັຕວ໌ຮ້າຍບຽດບຽນເປັນຕົ້ນ

[໔໑໔] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫຼາຍຈຳພັຣษາໃນອາວາສແຫ່ງນຶ່ງໃນໂກສົລຊົນບົທ ຖືກເຫຼົ່າສັຕວ໌ຮ້າຍບຽດບຽນ ມັນຈັບເອົາໄປໄດ້ແດ່ ໜີມັນຮອດມາໄດ້ແດ່. ພິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບພິກຂຸທັ້ງຫຼາຍ ວ່າດັ່ງນີ້:-

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວຖືກສັຕວ໌ຮ້າຍບຽດບຽນ ມັນຈັບເອົາໄປໄດ້ແດ່ ໜີມັນຮອດມາໄດ້ແດ່. ພວກທ່ານຄວຣຫລີກໄປດ້ວຍຄວາມສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ຖືກງູບຽດບຽນ ມັນຂົບກັດເອົາແດ່ ໜີມັນຮອດມາໄດ້ແດ່. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ພວກໂຈຣບຽດບຽນ ມັນປລົ້ນແດ່ ຂຸມຕີແດ່. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ຖືກພວກປີສາຈຣົບກວນ ມັນເຂົ້າສິງແດ່ ພາເອົາໄປແດ່. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ໝູ່ບ້ານປະສົບອັຄຄີກັຍ. ພິກຂຸທັ້ງຫຼາຍລຳບາກດ້ວຍບິຓຑບາຕ. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ເສນາສນະຖືກໄຟໄໝ້.

ພິກຂຸທັ້ງຫຼາຍເດືອດຮ້ອນດ້ວຍເສນາສນະ. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອພິກຂຸທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ໝູ່ບ້ານປະສົບອຸທກກັຍ. ພິກຂຸທັ້ງຫຼາຍລຳບາກດ້ວຍບິຓຑບາຕ. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ່ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາກິກษุທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອກິກษุທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ເສນາສນະຖືກນ້ຳຖ້ວມ. ກິກษุທັ້ງຫຼາຍເດືອດຮ້ອນດ້ວຍເສນາສນະ. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ້ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

[໔໑໕] ກໍໂດຍສມັຍນັ້ນແລ ເມື່ອກິກษุທັ້ງຫຼາຍຈຳພັຣษາໃນອາວາສແຫ່ງນຶ່ງ ຊາວບ້ານອົພຍົພໄປເພາະພວກໂຈຣກັຍ. ກິກษุທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸญາຕໃຫ້ໄປຕາມຊາວບ້ານ. ຊາວບ້ານແຍກກັນເປັນສອງພວກ. ກິກษุທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸญາຕໃຫ້ໄປຕາມຊາວບ້ານທີ່ຫຼາຍກວ່າ. ຊາວບ້ານທີ່ຫຼາຍກວ່າເປັນຜູ້ບໍ່ມີສຮັທธา ບໍ່ເລື່ອມໃສ. ກິກษุທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະພຸທธເຈົ້າ. ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາກິກษุທັ້ງຫຼາຍ ເຮົາອນຸญາຕໃຫ້ໄປຕາມຊາວບ້ານທີ່ມີສຮັທธาເລື່ອມໃສ.

[໔໑໖] ກໍໂດຍສມັຍນັ້ນແລ ກິກษุທັ້ງຫຼາຍຈຳພັຣษາໃນອາວາສແຫ່ງນຶ່ງໃນໂກສົລຊົນບົທ ບໍ່ໄດ້ໂກຊນາຫາຣອັນເສົ້າຫມອງຫຼືປະณີต ບໍຣິບູຣນ໌ຕາມຕ້ອງການ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຮັບສັ່ງກັບກິກษุທັ້ງຫຼາຍ ວ່າດັ່ງນີ້:-

ດູຣາກິກษุທັ້ງຫຼາຍ ກໍກິກษุທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ບໍ່ໄດ້ໂກຊນາຫາຣອັນເສົ້າຫມອງຫຼືປະณີต ບໍຣິບູຣນ໌ຕາມຕ້ອງການ. ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ້ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາກິກษุທັ້ງຫຼາຍ ອີກຢ່າງນຶ່ງ ກິກษุທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ໄດ້ໂກຊນາຫາຣອັນເສົ້າຫມອງຫຼືປະณີต ບໍຣິບູຣນ໌ຕາມຕ້ອງການ ແຕ່ບໍ່ໄດ້ໂກຊນາຫາຣອັນເປັນທີ່ສບາຍ ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ້ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາກິກษุທັ້ງຫຼາຍ ອີກຢ່າງນຶ່ງ ກິກษุທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ໄດ້ໂກຊນາຫາຣອັນເສົ້າຫມອງຫຼືປະณີต ບໍຣິບູຣນ໌ຕາມຕ້ອງການ ແລະໄດ້ໂກຊນາຫາຣອັນເປັນທີ່ສບາຍ ແຕ່ບໍ່ໄດ້ເກສັຊອັນເປັນທີ່ສບາຍ ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ້ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາກິກษุທັ້ງຫຼາຍ ອີກຢ່າງນຶ່ງ ກິກษุທັ້ງຫຼາຍໃນສາສນານີ້ຈຳພັຣษາແລ້ວ ໄດ້ໂກຊນາຫາຣອັນເສົ້າຫມອງຫຼືປະณີต ບໍຣິບູຣນ໌ຕາມຕ້ອງການ ໄດ້ໂກຊນາຫາຣອັນເປັນທີ່ສບາຍ ໄດ້ເກສັຊອັນເປັນທີ່ສບາຍ ແຕ່ບໍ່ໄດ້ອຸປັຕฐากທີ່ສົມຄວຣ ພວກທ່ານຄວຣຫລີກໄປດ້ວຍສຳຄັນວ່າ ນັ້ນແລອັນຕຣາຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ຈຳພັຣษາແລ້ວ ສຕຣີນິມົນຕ໌ວ່າ ຂໍທ່ານຈົ່ງມາ ເຖີດຂ້ານ້ອຍ ຂ້ານ້ອຍຈະຖວາຍ ເງິນ ທອງ ນາ ສວນ ພ່ອງົວ ແມ່ງົວ ທາສ ທາສີ ແກ່ທ່ານ ຈະຍົກລູກສາວໃຫ້ ເປັນກັຣຍາຂອງທ່ານ ຂ້ານ້ອຍຈະຍອມເປັນກັຣຍາຂອງທ່ານ ຫຼືບໍ່ດັ່ງນັ້ນ ຈະນຳສຕຣີອື່ນມາໃຫ້ເປັນ ກັຣຍາຂອງທ່ານ. ໃນເຣື່ອງນັ້ນ ຖ້າກິກຸຈະຄິດຢ່າງນີ້ວ່າ ພຣະຜູ້ມີພຣະກາຄຕຣັສວ່າ ຈິຕເປັນສົມມ໌ຊາຕິ ກັບກູອກໄວແທ້ ສັກໜ່ອຍຈະເປັນອັນຕຣາຍແກ່ພຣົຫ໌ມຈັຣຍ໌ຂອງເຮົາກໍໄດ້ ຄວຣຫລີກໄປເສັຽ ບໍ່ຕ້ອງ ອາບັຕິ ແຕ່ພັຣษາຂາດ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ຈຳພັຣษາແລ້ວ ຍິງແພສຍານິມົນຕ໌ .... ຍິງສາວ ເທື້ອນິມົນຕ໌.... ບັຕເຫາະກ໌ນິມົນຕ໌.... ພວກຍາຕິນິມົນຕ໌.... ພຣະຣາຊາທັ້ງຫຼາຍນິມົນຕ໌.... ພວກໂຈຣນິມົນຕ໌.... ພວກນັກເລງນິມົນຕ໌ວ່າ ຂໍທ່ານມາເຖີດ ໂດຍຂ້ານອ້ຍ ພວກຂ້າພເຈົ້າຈັກຖວາຍ ເງິນ ທອງ ນາ ສວນ ພ່ອງົວ ແມ່ງົວ ທາສ ທາສີ ແກ່ທ່ານ ຈະຍົກລູກສາວໃຫ້ເປັນກັຣຍາທ່ານ ຫຼືຈະນຳສຕຣີອື່ນມາໃຫ້ເປັນກັຣຍາ ຂອງທ່ານ. ໃນເຣື່ອງນັ້ນ ຖ້າກິກຸຈະຄິດຢ່າງນີ້ວ່າ ພຣະຜູ້ມີພຣະກາຄຕຣັສວ່າ ຈິຕເປັນສົມມ໌ຊາຕິ ກັບກູອກໄວແທ້ ສັກໜ່ອຍຈະເປັນອັນຕຣາຍແກ່ພຣົຫ໌ມຈັຣຍ໌ຂອງເຮົາກໍໄດ້ ຄວຣຫລີກໄປເສັຽ ບໍ່ຕ້ອງ ອາບັຕິ ແຕ່ພັຣษາຂາດ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ຈຳພັຣษາແລ້ວ ພົບຊັພຍ໌ບໍ່ມີເຈົ້າຂອງ. ໃນເຣື່ອງນັ້ນ ຖ້າກິກຸຈະຄິດຢ່າງນີ້ວ່າ ພຣະຜູ້ມີພຣະກາຄຕຣັສວ່າ ຈິຕເປັນສົມມ໌ຊາຕິກັບກູອກໄວແທ້ ສັກໜ່ອຍຈະເປັນອັນຕຣາຍແກ່ພຣົຫ໌ມຈັຣຍ໌ຂອງເຮົາກໍໄດ້ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ຈຳພັຣษາແລ້ວ ເຫັນກິກຸຫຼາຍອົງຄ໌ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງຄ໌. ໃນເຣື່ອງນັ້ນ ຖ້າກິກຸຈະຄິດຢ່າງນີ້ວ່າ ພຣະຜູ້ມີພຣະກາຄຕຣັສວ່າ ການທຳລາຍສົງຄ໌ເປັນກັມມ໌ຫນັກນັກ ເມື່ອເຮົາຢູ່ພ້ອມຫນ້າ ສົງຄ໌ຢ່າແຕກກັນເລີຍ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຸໃນສາສນານີ້ຈຳພັຣษາແລ້ວ ໄດ້ສດັບຂ່າວວ່າ ກິກຸຫຼາຍອົງຄ໌ ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງຄ໌. ໃນເຣື່ອງນັ້ນ ຖ້າກິກຸຈະຄິດຢ່າງນີ້ວ່າ ພຣະຜູ້ມີພຣະກາຄ ຕຣັສວ່າ ການທຳລາຍສົງຄ໌ເປັນກັມມ໌ຫນັກນັກ ເມື່ອເຮົາຍັງຢູ່ພ້ອມຫນ້າ ສົງຄ໌ຢ່າແຕກກັນເລີຍຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษາຂາດ.

ດູຣາຫິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ຈຳພັຣษาแล้ว ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ກິກຂຸຫຼາຍອີງຄ໌ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງฆ໌. ໃນເຣື່ອງນັ້ນ ຖ້າຫິກຂຸຈະຄິດຢ່າງນີ້ວ່າ ກິກຂຸເຫຼົ່ານັ້ນລ້ວນເປັນມິຕຣ໌ຂອງເຮົາ ເຮົາຈັກວ່າກ່າວພວກທ່ານວ່າ ອາວຸໂສທັ້ງຫຼາຍ ພຣະຜູ້ມີພຣະກາຄ ຕຣັສວ່າ ກາຣທຳລາຍສົງฆ໌ເປັນກັມມ໌ຫນັກນັກ ພວກທ່ານຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກທ່ານ ຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຽໂສຕລົງສດັບ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษา ຂາດ.

ດູຣາຫິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ຈຳພັຣษาแล้ว ໄດ້ສດັບຂ່າວວ່າ ໃນອາວາສ ຊື່ນັ້ນ ກິກຂຸຫຼາຍອີງຄ໌ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງฆ໌. ໃນເຣື່ອງນັ້ນ ຖ້າຫິກຂຸຈະຄິດ ຢ່າງນີ້ວ່າ ກິກຂຸເຫຼົ່ານັ້ນບໍ່ແມ່ນມິຕຣ໌ຂອງເຮົາເລີຍ ແຕ່ກິກຂຸທີ່ເປັນມິຕຣ໌ຂອງກິກຂຸເຫຼົ່ານັ້ນ ເປັນມິຕຣ໌ ກັບເຮົາ ເຮົາຈັກບອກກັບກິກຂຸເຫຼົ່ານັ້ນ ກິກຂຸທີ່ເຮົາບອກແລ້ວນັ້ນ ຈັກວ່າກ່າວພວກທ່ານວ່າ ອາວຸໂສ ທັ້ງຫຼາຍ ພຣະຜູ້ມີພຣະກາຄຕຣັສວ່າ ກາຣທຳລາຍສົງฆ໌ເປັນກັມມ໌ຫນັກນັກ ພວກທ່ານຢ່າພໍໃຈທຳລາຍ ສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຽໂສຕລົງສດັບ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາຫິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ຈຳພັຣษาแล้ว ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ກິກຂຸຫຼາຍອີງຄ໌ດ້ວຍກັນ ໄດ້ທຳລາຍສົງฆ໌ແລ້ວ. ໃນເຣື່ອງນັ້ນ ຖ້າຫິກຂຸຈະຄິດຢ່າງນີ້ວ່າ ກິກຂຸເຫຼົ່ານັ້ນ ລ້ວນເປັນມິຕຣ໌ຂອງເຮົາ ເຮົາຈັກວ່າກ່າວພວກທ່ານວ່າ ອາວຸໂສທັ້ງຫຼາຍ ພຣະຜູ້ມີພຣະກາຄຕຣັສວ່າ ກາຣ ທຳລາຍສົງฆ໌ເປັນກັມມ໌ຫນັກນັກ ພວກທ່ານຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຽໂສຕລົງສດັບ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາຫິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ຈຳພັຣษาแล้ว ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ກິກຂຸຫຼາຍອີງຄ໌ດ້ວຍກັນ ໄດ້ທຳລາຍສົງฆ໌ແລ້ວ. ໃນເຣື່ອງນັ້ນ ຖ້າຫິກຂຸຈະຄິດຢ່າງນີ້ວ່າ ກິກຂຸເຫຼົ່ານັ້ນບໍ່ແມ່ນ ມິຕຣ໌ຂອງເຮົາເລີຍ ແຕ່ກິກຂຸທີ່ເປັນມິຕຣ໌ຂອງກິກຂຸເຫຼົ່ານັ້ນເປັນມິຕຣ໌ກັບເຮົາ ເຮົາຈັກບອກກິກຂຸເຫຼົ່ານັ້ນ ກິກຂຸທີ່ເຮົາບອກແລ້ວນັ້ນ ຈັກວ່າກ່າວພວກທ່ານວ່າ ອາວຸໂສທັ້ງຫຼາຍ ພຣະຜູ້ມີພຣະກາຄຕຣັສວ່າ ກາຣທຳລາຍ ສົງฆ໌ເປັນກັມມ໌ຫນັກນັກ ພວກທ່ານຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງ ຄຳຂອງເຮົາ ຈັກເງີ່ຽໂສຕລົງສດັບ ຄວຣຫລີກໄປເສັຽ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ຈຳພັຣษາແລ້ວ ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ພິກຂຸຕີຫຼາຍອົງຄ໌ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງฆ໌. ໃນເຣື່ອງນັ້ນ ຖ້າພິກຂຸຈະຄິດຢ່າງນີ້ວ່າ ພິກຂຸຕີເຫຼົ່ານັ້ນລ້ວນເປັນມິຕຣ໌ຂອງເຮົາ ເຮົາຈັກວ່າກ່າວພວກທ່ານວ່າ ດູຣານ້ອງຍິງທັ້ງຫຼາຍ ພຣະຜູ້ມີພຣະภาคตรัสว่า ການທຳລາຍສົງฆ໌ເປັນກັມມ໌ໜັກນັກ ພວກນ້ອງຍິງຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຍໂສຕລົງສດັບ ຄວຣຫລີກໄປເສັຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ຈຳພັຣษາແລ້ວ ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ພິກຂຸຕີຫຼາຍອົງຄ໌ດ້ວຍກັນ ກຳລັງພຍາຍາມຫາທາງເພື່ອທຳລາຍສົງฆ໌. ໃນເຣື່ອງນັ້ນ ຖ້າພິກຂຸຈະຄິດຢ່າງນີ້ວ່າ ພິກຂຸຕີເຫຼົ່ານັ້ນບໍ່ແມ່ນມິຕຣ໌ຂອງເຮົາເລີຍ ແຕ່ພິກຂຸຕີທີ່ເປັນມິຕຣ໌ຂອງພິກຂຸເຫຼົ່ານັ້ນ ເປັນມິຕຣ໌ກັບເຮົາ ເຮົາຈັກບອກພິກຂຸຕີເຫຼົ່ານັ້ນ ພິກຂຸຕີທີ່ເຮົາບອກແລ້ວນັ້ນ ຈັກວ່າກ່າວພວກທ່ານວ່າ ດູຣານ້ອງຍິງທັ້ງຫຼາຍ ພຣະຜູ້ມີພຣະภาคตรัสว่า ການທຳລາຍສົງฆ໌ເປັນກັມມ໌ໜັກນັກ ພວກນ້ອງຍິງຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຍໂສຕລົງສດັບ ຄວຣຫລີກໄປເສັຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ຈຳພັຣษາແລ້ວ ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ພິກຂຸຕີຫຼາຍອົງຄ໌ດ້ວຍກັນໄດ້ທຳລາຍສົງฆ໌ແລ້ວ. ໃນເຣື່ອງນັ້ນ ຖ້າພິກຂຸຈະຄິດຢ່າງນີ້ວ່າ ພິກຂຸຕີເຫຼົ່ານັ້ນລ້ວນເປັນມິຕຣ໌ຂອງເຮົາ ເຮົາຈັກວ່າກ່າວພວກທ່ານວ່າ ດູຣານ້ອງຍິງທັ້ງຫຼາຍ ພຣະຜູ້ມີພຣະภาคตรัสว่า ການທຳລາຍສົງฆ໌ເປັນກັມມ໌ໜັກນັກ ພວກນ້ອງຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຍໂສຕລົງສດັບ ຄວຣຫລີກໄປເສັຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ຈຳພັຣษາແລ້ວ ໄດ້ສດັບຂ່າວວ່າ ໃນອາວາສຊື່ນັ້ນ ພິກຂຸຕີຫຼາຍອົງຄ໌ດ້ວຍກັນ ໄດ້ທຳລາຍສົງฆ໌ແລ້ວ. ໃນເຣື່ອງນັ້ນ ຖ້າພິກຂຸຈະຄິດຢ່າງນີ້ວ່າ ພິກຂຸຕີເຫຼົ່ານັ້ນບໍ່ແມ່ນມິຕຣ໌ຂອງເຮົາເລີຍ ແຕ່ພິກຂຸຕີທີ່ເປັນມິຕຣ໌ຂອງພິກຂຸຕີເຫຼົ່ານັ້ນ ເປັນມິຕຣ໌ກັບເຮົາ ເຮົາຈັກບອກພິກຂຸຕີເຫຼົ່ານັ້ນ ພິກຂຸຕີທີ່ເຮົາບອກແລ້ວນັ້ນ ຈັກວ່າກ່າວພວກທ່ານວ່າ ດູຣານ້ອງຍິງທັ້ງຫຼາຍ ພຣະຜູ້ມີພຣະภาคตรัสว่า ການທຳລາຍສົງฆ໌ເປັນກັມມ໌ໜັກນັກ ພວກນ້ອງຍິງຢ່າພໍໃຈທຳລາຍສົງฆ໌ເລີຍ ດັ່ງນີ້ ພວກລາວຈະທຳຕາມ ຈັກເຊື່ອຟັງຄຳຂອງເຮົາ ຈັກເງີ່ຍໂສຕລົງສດັບ ຄວຣຫລີກໄປເສັຍ ບໍ່ຕ້ອງອາບັຕິ ແຕ່ພັຣษาຂາດ

ອັນຕຣາຍຂອງພິກຂຸຜູ້ຈຳພັຣษา ຈົບ.

ຈຳພັຣษາໃນສຖານທີ່ຕ່າງໆ

[໔໑໗] ກໍໂດຍສມັຍນັ້ນແລ ກິກษຸອົງຄ໌ນຶ່ງຢາກຈຳພັຣษາໃນຫມູ່ໂຄຕ່າງ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງວ່າ ດູຣາກິກษຸທັ້ງຫຼາຍ ເຣົາອນຸຌາຕໃຫ້ຈຳພັຣษາໃນຫມູ່ໂຄຕ່າງໄດ້. ຫມູ່ໂຄຕ່າງຍ້າຍໄປ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງວ່າ ດູຣາກິກษຸທັ້ງຫຼາຍ ເຣົາອນຸຌາຕໃຫ້ເດີນທາງໄປກັບຫມູ່ໂຄຕ່າງໄດ້.

ສມັຍຕໍ່ມາ ກິກษຸອົງຄ໌ນຶ່ງເມື່ອໃກ້ເຖິງວັນເຂົ້າພັຣษາ ມັກຈະເດີນທາງໄປກັບພວກກຽນ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງວ່າ ດູຣາກິກษຸທັ້ງຫຼາຍ ເຣົາອນຸຌາຕໃຫ້ຈຳພັຣษາໃນຫມູ່ພວກກຽນໄດ້.

ສມັຍຕໍ່ມາ ກິກษຸອົງຄ໌ນຶ່ງ ເມື່ອໃກ້ເຖິງວັນເຂົ້າພັຣษາ ມັກຈະເດີນທາງໄປກັບເຮືອ ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງວ່າ ດູຣາກິກษຸທັ້ງຫຼາຍ ເຣົາອນຸຌາຕໃຫ້ຈຳພັຣษາໃນເຮືອໄດ້.

ຈຳພັຣษາໃນສຖານທີ່ບໍ່ສົມຄວຣ

[໔໑໘] ກໍໂດຍສມັຍນັ້ນແລ ກິກษຸອົງຄ໌ນຶ່ງຈຳພັຣษາໃນໂກນໄມ້. ຄົນທັ້ງຫຼາຍພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນພວກປິສາຈ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣຈຳພັຣษາໃນໂກນໄມ້ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຏ.

ສມັຍຕໍ່ມາ ກິກษຸທັ້ງຫຼາຍຈຳພັຣษາເທິງງ່າໄມ້. ຄົນທັ້ງຫຼາຍພາກັນເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນນາຍພານ. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣຈຳພັຣษາເທິງງ່າໄມ້ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຏ.

[໔໑໙] ກໍໂດຍສມັຍນັ້ນແລ ກິກษຸທັ້ງຫຼາຍຈຳພັຣษາໃນທີ່ແຈ້ງ. ເມື່ອຝົນຕົກກໍພາກັນແລ່ນເຂົ້າໄປສູ່ໂກນໄມ້ແດ່ ສູ່ງ່າໄມ້ແດ່. ກິກษຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣຈຳພັຣษາໃນທີ່ແຈ້ງ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຏ.

ສມັຍຕໍ່ມາ ກິກษຸທັ້ງຫຼາຍຫາເສນາສນະບໍ່ໄດ້ ຈຳພັຣษາ ເດືອດຮ້ອນດ້ວຍຄວາມໜາວແດ່ດ້ວຍຄວາມຮ້ອນແດ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ມີເສນາສນະບໍ່ຄວຣຈຳພັຣษາ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຏ.

ສມັຍຕໍ່ມາ ກິກບຸທັ້ງຫຼາຍຈຳພັຣษາໃນກະໂລງຜີ. ຄົນທັ້ງຫຼາຍພາກັນເພັ່ງໂທษ ຕິຕຽນ ໂພນທະນາວ່າ ເໝືອນພວກສັປເທຣີ່. ກິກບຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກບຸທັ້ງຫຼາຍ ກິກບຸບໍ່ຄວຣຈຳພັຣษາໃນກະໂລງຜີ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຝ.

ສມັຍຕໍ່ມາ ກິກບຸທັ້ງຫຼາຍຈຳພັຣษາໃນຣົ່ມ. ຄົນທັ້ງຫຼາຍພາກັນເພັ່ງໂທษ ຕິຕຽນ ໂພນທະນາວ່າ ເໝືອນພວກຄົນລ້ຽງງົວ. ກິກບຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກບຸທັ້ງຫຼາຍ ກິກບຸບໍ່ຄວຣຈຳພັຣษາໃນຣົ່ມ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຝ.

ສມັຍຕໍ່ມາ ກິກບຸທັ້ງຫຼາຍຈຳພັຣษາໃນຕຸ່ມ. ຄົນທັ້ງຫຼາຍພາກັນເພັ່ງໂທษ ຕິຕຽນ ໂພນທະນາວ່າ ເໝືອນພວກເດັຽຣຖີຍ໌. ກິກບຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສຫ້າມວ່າ ດູຣາກິກບຸທັ້ງຫຼາຍ ກິກບຸບໍ່ຄວຣຈຳພັຣษາໃນຕຸ່ມ ອົງຄ໌ໃດຈຳ ຕ້ອງອາບັຕິທຸກກົຝ.

ຕັ້ງກຕິກາບໍ່ເປັນສັມມໃນຣະຫວ່າງພັຣษາ

[໔໔໐] ກໍໂດຍສມັຍນັ້ນແລ ພຣະສົງฆ໌ໃນພຣະນຄຣສາວັຕຖີໄດ້ຕັ້ງກຕິກາໄວ້ວ່າ ໃນຣະຫວ່າງພັຣษາ ຫ້າມບໍ່ໃຫ້ບັຣພຊາ.

ຫລານຊາຍຂອງນາງວິສາຂາ ມິຄາຣມາຕາ ໄດ້ເຂົ້າໄປຫາກິກບຸທັ້ງຫຼາຍແລ້ວຂໍບັຣພຊາ. ກິກບຸທັ້ງຫຼາຍບອກຢ່າງນີ້ວ່າ ຄຸຓ ພຣະສົງฆ໌ໄດ້ຕັ້ງກຕິກາໄວ້ແລ້ວວ່າ ໃນຣະຫວ່າງພັຣษາຫ້າມບໍ່ໃຫ້ບັຣພຊາ ຄຸຓ ຈົງຣໍຢູ່ຈົນກວ່າກິກບຸທັ້ງຫຼາຍຜູ້ຈຳພັຣษາແລ້ວໆ ຈຶ່ງຈະບວຊໃຫ້. ຄັ້ນກິກບຸເຫຼົ່ານັ້ນຈຳພັຣษາ ແລ້ວ ໄດ້ບອກຫລານຊາຍຂອງນາງວິສາຂາ ມິຄາຣມາຕາວ່າ ອາວຸໂສ ບັດນີ້ ທ່ານຈົງມາບວຊເຖີດ. ເຂົາຈຶ່ງຮຽນຢ່າງນີ້ວ່າ ທ່ານໂດຍຂ້ານອ້ຍ ຖ້າຂ້ານ້ອຍຈັກໄດ້ບວຊແລ້ວອີຫຼີ ອາຈຈະຍິນດີຍິ່ງ ແຕ່ດຽວນີ້ຂ້ານ້ອຍ ຍັງບໍ່ບວຊລະ

໑໓. .... ບໍຣິບັທລຸກໄປໝົດແລ້ວ ຂຕະນັ້ນ ມີກິກຍຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ ....

໑໔. .... ຂຕະນັ້ນ ມີກິກຍຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ຂຕະນັ້ນ ມີກິກຍຸເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ກິກຍຸພວກທີ່ປວາຣຕາແລ້ວ ເປັນອັນປວາຣຕາດີແລ້ວ. ພວກທີ່ມາທີຫລັງຄວຣປວາຣຕາໃນສຳນັກພວກທ່ານ. ພວກທີ່ປວາຣຕາແລ້ວ ຕ້ອງອາບັຕິທຸກກົຍ.

ຝືນໃຈທຳປວາຣຕາ ໑໕ ຂໍ້ ຈົບ.

ມູ່ງຄວາມແຕກຮ້າວປວາຣຓາ ໑໕ ຂໍ້

[໔໗໗] ໑. ດູຣາພິກຂຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນປວາຣຓາ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໕ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ ແລະມູ່ງຄວາມແຕກຮ້າວວ່າ ຂໍພິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຂໍພິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນໍາພິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງປວາຣຓາ. ເມື່ອພວກທ່ານກໍາລັງປວາຣຓາ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນຫຼາຍກວ່າ. ພິກຂຸເຫຼົ່ານັ້ນຕ້ອງປວາຣຓາໃໝ່. ພວກທີ່ປວາຣຓາແລ້ວ ຕ້ອງອາບັຕິຖຸລລັຈຈັຍ.

໒. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນຫຼາຍກວ່າ ....

໓. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ພິກຂຸພວກທີ່ປວາຣຓາແລ້ວເປັນອັນປວາຣຓາດີແລ້ວ. ພວກທີ່ເຫລືອຄວຣປວາຣຓາຕໍ່ໄປ. ພວກທີ່ປວາຣຓາແລ້ວ ຕ້ອງອາບັຕິຖຸລລັຈຈັຍ.

໔. ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນປວາຣຓາ ມີພິກຂຸເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໕ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານຮູ້ຢູ່ວ່າ ຍັງມີພິກຂຸເຈົ້າຖິ່ນພວກອື່ນທີ່ຍັງບໍ່ມາ ແລະມູ່ງຄວາມແຕກຮ້າວວ່າ ຂໍພິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຂໍພິກຂຸເຫຼົ່ານັ້ນຈົ່ງພິນາສ ຈະປະໂຍຊນ໌ຫຍັງນໍາພິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງປວາຣຓາ. ພວກທ່ານປວາຣຓາແລ້ວ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງມີຈໍານວນຫຼາຍກວ່າ ....

໕. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນເທົ່າກັນ ....

໖. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ....

໗. .... ບໍຣິສັທຍັງບໍ່ທັນລຸກໄປ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນຫຼາຍກວ່າ ....

໘. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນເທົ່າກັນ ....

໙. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ....

໑໐. .... ບໍຣິສັທບາງພວກລຸກໄປແລ້ວ ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນຫຼາຍກວ່າ ....

໑໑. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນເທົ່າກັນ ....

໑໒. .... ຂຓະນັ້ນ ມີພິກຂຸເຈົ້າຖິ່ນພວກອື່ນມາເຖິງ ມີຈໍານວນນ້ອຍກວ່າ ....

໑໓. .... ບໍຣິບັທລຸກໄປຫມົດແລ້ວ ຂຓະນັ້ນ ມີພິກษุເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນຫຼາຍກວ່າ. ພິກษุເຫຼົ່ານັ້ນຕ້ອງປວາຣຓາໃຫມ່. ພວກທີ່ປວາຣຓາແລ້ວ ຕ້ອງອາບັຕິຖຸລລັຈຈັຍ.

໑໔. .... ຂຓະນັ້ນ ມີພິກษุເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນເທົ່າກັນ ....

໑໕. .... ຂຓະນັ້ນ ມີພິກษุເຈົ້າຖິ່ນພວກອື່ນມາເຖິງ ມີຈຳນວນນ້ອຍກວ່າ ພິກษุພວກທີ່ປວາຣຓາແລ້ວເປັນອັນປວາຣຓາດີແລ້ວ. ພວກທີ່ມາທີຫລັງຄວຣປວາຣຓາໃນສຳນັກພວກທ່ານ. ພວກທີ່ປວາຣຓາແລ້ວຕ້ອງອາບັຕິຖຸລລັຈຈັຍ.

ມຸ່ງຄວາມແຕກຮ້າວປວາຣຓາ ໑໕ ຂໍ້ ຈົບ.

ເປຍຍາລມຸຂ ໗໐໐ ຕິກະ

[໔໓໗] ດູຣາພິກษุທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນປວາຣຓາ ມີພິກษุເຈົ້າຖິ່ນໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ແຕ່ປະຊຸມກັນ ໕ ອົງຄ໌ແດ່ ເກີນກວ່າແດ່. ພວກທ່ານບໍ່ຮູ້ວ່າ ມີພິກษุເຈົ້າຖິ່ນພວກອື່ນກຳລັງເຂົ້າມາພາຍໃນສີມາ ....

.... ພວກທ່ານບໍ່ຮູ້ວ່າ ມີພິກษุເຈົ້າຖິ່ນພວກອື່ນເຂົ້າມາໃນສີມາແລ້ວ ....

.... ພວກທ່ານບໍ່ເຫັນພິກษุເຈົ້າຖິ່ນພວກອື່ນທີ່ກຳລັງເຂົ້າມາໃນສີມາ ....

.... ພວກທ່ານບໍ່ເຫັນພິກษุເຈົ້າຖິ່ນພວກອື່ນ ເຂົ້າມາພາຍໃນສີມາແລ້ວ ....

.... ພວກທ່ານບໍ່ໄດ້ຍິນວ່າ ມີພິກษุເຈົ້າຖິ່ນພວກອື່ນກຳລັງເຂົ້າມາພາຍໃນສີມາ ....

.... ພວກທ່ານບໍ່ໄດ້ຍິນວ່າ ມີພິກษุເຈົ້າຖິ່ນພວກອື່ນເຂົ້າມາພາຍໃນສີມາແລ້ວ ....

ໂດຍນັຍ ໑໗໕ ຕິກັບພິກษุເຈົ້າຖິ່ນກັບພິກษุເຈົ້າຖິ່ນ ພິກษุອາຄັນຕຸກະກັບພິກษุເຈົ້າຖິ່ນ ພິກษุເຈົ້າຖິ່ນກັບພິກษุອາຄັນຕຸກັບພິກษุອາຄັນຕຸກະກັບພິກษุອາຄັນຕຸກັບຮວມເປັນ ໗໐໐ ຕິກັບໂດຍເປຍຍາລມຸຂ.

ເປຍຍາລມຸຂ ໗໐໐ ຕິກັບຈົບ.

ພິກษุເຈົ້າຖິ່ນກັບພິກษุອາຄັນຕຸກະນັບວັນປວາຣຓາຕ່າງກັນ

[໔໓໘] ດູຣາພິກษุທັ້ງຫຼາຍ ກໍວັນປວາຣຓາຂອງພວກພິກษุເຈົ້າຖິ່ນໃນສາສນານີ້ເປັນ ໑໔ ຄ່ຳຂອງພວກພິກษุອາຄັນຕຸກະເປັນ ໑໕ ຄ່ຳ. ຖ້າພວກເຈົ້າຖິ່ນມີຈຳນວນຫຼາຍກວ່າພວກພິກษุອາຄັນຕຸກະຄວຣອນຸວັຕຣ໌

ພວກພິກຂຸເຈົ້າຖິ່ນ. ຖ້າມີຈຳນວນເທົ່າກັນ ພວກພິກຂຸອາຄັນຕຸກະຄວຣອນຸວັຕຣ໌ພວກພິກຂຸເຈົ້າຖິ່ນ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ. ພວກພິກຂຸເຈົ້າຖິ່ນຄວຣອນຸວັຕຣ໌ພວກພິກຂຸອາຄັນຕຸກະ.

ດູຣາພິກຂຸທັ້ງຫຼາຍ ກໍວັນປວາຣຕາຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ເປັນ ໑໕ ຄ່ຳ ຂອງພວກພິກຂຸອາຄັນຕຸກະເປັນ ໑໔ ຄ່ຳ. ຖ້າພວກເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກພິກຂຸອາຄັນຕຸກະຄວຣອນຸວັຕຣ໌ພວກພິກຂຸເຈົ້າຖິ່ນ. ຖ້າມີຈຳນວນເທົ່າກັນ ພວກພິກຂຸອາຄັນຕຸກະຄວຣອນຸວັຕຣ໌ພວກພິກຂຸເຈົ້າຖິ່ນ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ. ພວກພິກຂຸເຈົ້າຖິ່ນຄວຣອນຸວັຕຣ໌ພວກພິກຂຸອາຄັນຕຸກະ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ວັນປວາຣຕາຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ເປັນວັນ ໑ ຄ່ຳຂອງພວກພິກຂຸອາຄັນຕຸກະເປັນ ໑໕ ຄ່ຳ. ຖ້າພວກພິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ. ພວກພິກຂຸເຈົ້າຖິ່ນບໍ່ປັຕຖນາກໍບໍ່ໃຫ້ຄວາມສາມັຄຄີແກ່ພວກພິກຂຸອາຄັນຕຸກະ. ພວກພິກຂຸອາຄັນຕຸກະຄວຣໄປປວາຣຕານອກສີມາເຖີດ. ຖ້າມີຈຳນວນເທົ່າກັນ ພວກພິກຂຸເຈົ້າຖິ່ນບໍ່ປັຕຖນາກໍບໍ່ຕ້ອງໃຫ້ຄວາມສາມັຄຄີແກ່ພວກພິກຂຸອາຄັນຕຸກະ ພວກພິກຂຸອາຄັນຕຸກະຄວຣໄປປວາຣຕານອກສີມາເຖີດ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກພິກຂຸເຈົ້າຖິ່ນຄວຣໃຫ້ຄວາມສາມັຄຄີແກ່ພວກພິກຂຸອາຄັນຕຸກັບຫຼືຄວຣໄປເສັ່ງນອກສີມາ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ວັນປວາຣຕາຂອງພວກພິກຂຸເຈົ້າຖິ່ນໃນສາສນານີ້ເປັນ ໑໕ ຄ່ຳ ຂອງພວກພິກຂຸອາຄັນຕຸກະເປັນ ໑ ຄ່ຳ. ຖ້າພວກພິກຂຸເຈົ້າຖິ່ນມີຈຳນວນຫຼາຍກວ່າ ພວກພິກຂຸອາຄັນຕຸກະຄວຣໃຫ້ຄວາມສາມັຄຄີແກ່ພວກພິກຂຸເຈົ້າຖິ່ນ ຫຼືຄວຣໄປເສັ່ງນອກສີມາ. ຖ້າມີຈຳນວນເທົ່າກັນ. ພວກພິກຂຸອາຄັນຕຸກະຄວຣໃຫ້ຄວາມສາມັຄຄີແກ່ພວກພິກຂຸເຈົ້າຖິ່ນ ຫຼືຄວຣໄປເສັ່ງນອກສີມາ. ຖ້າພວກພິກຂຸອາຄັນຕຸກະມີຈຳນວນຫຼາຍກວ່າ ພວກພິກຂຸອາຄັນຕຸກະບໍ່ປັຕຖນາກໍບໍ່ຕ້ອງໃຫ້ຄວາມສາມັຄຄີແກ່ພວກພິກຂຸເຈົ້າຖິ່ນ ພວກພິກຂຸເຈົ້າຖິ່ນຄວຣໄປປວາຣຕານອກສີມາເຖີດ.

ປວາຣຕາຂອງພິກຂຸທີ່ສົງສັຍເປັນຕົ້ນ

[໔໔໐] ດູຣາພິກຂຸທັ້ງຫຼາຍ ກໍພວກພິກຂຸອາຄັນຕຸກະໃນສາສນານີ້ໄດ້ເຫັນອາການເຈົ້າຖິ່ນ ລັກຂຕະເຈົ້າຖິ່ນ ເຄື່ອງຫມາຍເຈົ້າຖິ່ນ ສິ່ງທີ່ສແດງເຈົ້າຖິ່ນ ຂອງພວກພິກຂຸເຈົ້າຖິ່ນ ຕຽງ ຕັ່ງ ຟູກ ຫມອນຈັດໄວ້ໄດ້ຣະບຽບ ນ້ຳສັນ ນ້ຳໃຊ້ ຈັດຫາໄວ້ເປັນອັນດີ ບໍຣິເວຕກວາດສະອາດສະອ້ານ ຄັ້ນແລ້ວ ມີຄວາມສົງສັຍວ່າ ພວກພິກຂຸເຈົ້າຖິ່ນມີຫຼືບໍ່ມີນໍ? ພວກທ່ານມີຄວາມສົງສັຍແຕ່ບໍ່ທ່ຽວຄົ້ນຫາ ຄັ້ນແລ້ວຂືນປວາຣຕາ ຕ້ອງອາບັຕິທຸກກົຍ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວແຕ່ບໍ່ພົບ ຈຶ່ງປວາຣຕາ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບ ຈຶ່ງປວາຣຕາຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບ ຄັ້ນແລ້ວແຍກກັນປວາຣຕາ ຕ້ອງອາບັຕິທຸກກົຜ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາແລ້ວພົບ ຄັ້ນແລ້ວມຸ່ງຄວາມແຕກຮ້າວວ່າ ຂໍພິກຂຸພວກນັ້ນຈົ່ງເສື່ອມສູນ ຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳພິກຂຸພວກນັ້ນ ດັ່ງນີ້ຈຶ່ງປວາຣຕາ ຕ້ອງອາບັຕິຖຸລລັຈຈັຍ.

ດູຮາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸອາຄັນຕຸກະໃນສາສນານີ້ໄດ້ຍິນອາການເຈົ້າຖິ່ນ ລັກຂຕະເຈົ້າຖິ່ນ ເຄື່ອງຫມາຍເຈົ້າຖິ່ນ ສິ່ງທີ່ສແດງເຈົ້າຖິ່ນ ຂອງພວກພິກຂຸເຈົ້າຖິ່ນ ໄດ້ຍິນສຽງຕີນຂອງພວກພິກຂຸເຈົ້າຖິ່ນກຳລັງຍ່າງຈົງກົມ ໄດ້ຍິນສຽງທ່ອງສາຮຍາຍ ສຽງໄອ ສຽງຈາມ ຄັ້ນແລ້ວມີຄວາມສົງສັຍວ່າພວກພິກຂຸເຈົ້າຖິ່ນຍັງມີຫຼືບໍ່ມີນໍ? ພວກທ່ານມີຄວາມສົງສັຍແຕ່ບໍ່ຄົ້ນຫາ ຄັ້ນແລ້ວຂືນປວາຣຕາຕ້ອງອາບັຕິທຸກກົຜ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວບໍ່ພົບ ຄັ້ນແລ້ວຈຶ່ງປວາຣຕາ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງປວາຣຕາຮ່ວມກັນບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວຈຶ່ງແຍກກັນປວາຣຕາຕ້ອງອາບັຕິທຸກກົຜ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວມຸ່ງຄວາມແຕກຮ້າວວ່າ ຂໍພິກຂຸເຫຼົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳພິກຂຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງປວາຣຕາຕ້ອງອາບັຕິຖຸລລັຈຈັຍ.

ດູຮາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸເຈົ້າຖິ່ນໃນສາສນານີ້ໄດ້ເຫັນອາການອາຄັນຕຸກັບລັກຂຕະອາຄັນຕຸກັບເຄື່ອງຫມາຍອາຄັນຕຸກັບສິ່ງທີ່ສແດງອາຄັນຕຸກັບຂອງພວກພິກຂຸອາຄັນຕຸກັບໄດ້ເຫັນ ບາຕຣ໌ຈີວຣ ຜ້ານິສີທນະ ອັນເປັນຂອງພິກຂຸພວກອື່ນ ໄດ້ເຫັນຮອຍນ້ຳລ້າງຕີນ ຄັ້ນແລ້ວມີຄວາມສົງສັຍວ່າພວກພິກຂຸອາຄັນຕຸກະຍັງມີຫຼືບໍ່ນໍ?

.... ພວກທ່ານມີຄວາມສົງສັຍແຕ່ບໍ່ຄົ້ນຫາ ຄັ້ນແລ້ວຂືນປວາຣຕາ ຕ້ອງອາບັຕິທຸກກົຜ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ບໍ່ພົບ ຄັ້ນແລ້ວຈຶ່ງປວາຣຕາ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ຈຶ່ງພົບ ຄັ້ນພົບແລ້ວ ຈຶ່ງປວາຣຕາ ຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ຈຶ່ງພົບ ຄັ້ນພົບແລ້ວ ໄດ້ແຍກກັນ ປວາຣຕາ ຕ້ອງອາບັຕິທຸກກົຕ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວ ມຸ່ງຄວາມແຕກຮ້າວ ວ່າ ຂໍກິກຸເຫຼົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງປວາຣຕາ ຕ້ອງອາບັຕິຖຸລລັຈຈັຍ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ພວກກິກຸເຈົ້າຖິ່ນໃນສາສນານີ້ໄດ້ຍິນອາການອາຄັນຕຸກັບລັກຫຕະ ອາຄັນຕຸກັບເຄື່ອງຫມາຍອາຄັນຕຸກັບສິ່ງທີ່ສແດງອາຄັນຕຸກັບຂອງພວກກິກຸອາຄັນຕຸກັບໄດ້ຍິນ ສຽງຕີນຂອງພວກກິກຸອາຄັນຕຸກະກຳລັງຍ່າງມາ ໄດ້ຍິນສຽງເກີບກະທົບ ໄດ້ຍິນສຽງໄອ ສຽງຈາມ ຄັ້ນແລ້ວມີຄວາມສົງສັຍວ່າ ພວກກິກຸອາຄັນຕຸກະຍັງມີຫຼືບໍ່ນໍ? ພວກທ່ານມີຄວາມສົງສັຍແຕ່ບໍ່ ຄົ້ນຫາ ຄັ້ນແລ້ວຂືນປວາຣຕາ ຕ້ອງອາບັຕິທຸກກົຕ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ບໍ່ພົບ ຄັ້ນແລ້ວຈຶ່ງປວາຣຕາ ບໍ່ ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ຈຶ່ງພົບ ຄັ້ນພົບແລ້ວ ໄດ້ປວາຣຕາ ຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວ ຈຶ່ງພົບ ຄັ້ນພົບແລ້ວ ໄດ້ແຍກກັນ ປວາຣຕາ ຕ້ອງອາບັຕິທຸກກົຕ.

.... ພວກທ່ານມີຄວາມສົງສັຍໄດ້ຄົ້ນຫາ ຄັ້ນຄົ້ນຫາແລ້ວຈຶ່ງພົບ ຄັ້ນພົບແລ້ວ ມຸ່ງຄວາມ ແຕກຮ້າວວ່າ ຂໍກິກຸເຫຼົ່ານັ້ນຈົ່ງເສື່ອມສູນ ຈົ່ງພິນາສ ຈະປະໂຍຊນ໌ຫຍັງນຳກິກຸເຫຼົ່ານັ້ນ ດັ່ງນີ້ ຈຶ່ງປວາຣຕາ ຕ້ອງອາບັຕິຖຸລລັຈຈັຍ.

ກິກຸສມານສັງວາສເປັນຕົ້ນປວາຣຕາ

[໔໔໑] ດູຣາກິກຸທັ້ງຫຼາຍ ກໍພວກກິກຸອາຄັນຕຸກະໃນສາສນານີ້ໄດ້ເຫັນພວກກິກຸເຈົ້າຖິ່ນຊຶ່ງ ເປັນນານາສັງວາສ. ພວກທ່ານກັບໄດ້ຄວາມເຫັນວ່າເປັນສມານສັງວາສ ຄັ້ນແລ້ວກໍບໍ່ໄຕ່ຖາມ ຄັ້ນ ແລ້ວຈຶ່ງປວາຣຕາຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ຄັ້ນແລ້ວປວາຣຕາຮ່ວມກັນ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ຄັ້ນແລ້ວແຍກກັນປວາຣຕາ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸອາຄັນຕຸກະໃນສາສນານີ້ໄດ້ເຫັນພວກພິກຂຸເຈົ້າຖິ່ນຊຶ່ງເປັນສມານສັງວາສ. ພວກທ່ານກັບໄດ້ຄວາມເຫັນວ່າເປັນນານາສັງວາສ ຄັ້ນແລ້ວກໍບໍ່ໄຕ່ຖາມ ຄັ້ນແລ້ວປວາຣຕາຮ່ວມກັນ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ຄັ້ນແລ້ວແຍກກັນປວາຣຕາ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ຄັ້ນແລ້ວປວາຣຕາຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ຄັ້ນແລ້ວແຍກກັນປວາຣຕາ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸເຈົ້າຖິ່ນໃນສາສນານີ້ໄດ້ເຫັນພວກພິກຂຸອາຄັນຕຸກະຊຶ່ງເປັນນານາສັງວາສ. ພວກທ່ານກັບໄດ້ຄວາມເຫັນວ່າເປັນສມານສັງວາສ ຄັ້ນແລ້ວກໍບໍ່ໄຕ່ຖາມ ຄັ້ນແລ້ວປວາຣຕາຮ່ວມກັນ ບໍ່ຕ້ອງອາບັຕິ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວ ບໍ່ນ່າຍ ຄັ້ນແລ້ວປວາຣຕາຮ່ວມກັນ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວບໍ່ນ່າຍ ຄັ້ນແລ້ວແຍກກັນປວາຣຕາ ບໍ່ຕ້ອງອາບັຕິ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພວກພິກຂຸເຈົ້າຖິ່ນໃນສາສນານີ້ເຫັນພວກພິກຂຸອາຄັນຕຸກະຊຶ່ງເປັນສມານສັງວາສ. ພວກທ່ານກັບໄດ້ຄວາມເຫັນວ່າເປັນນານາສັງວາສ ຄັ້ນແລ້ວກໍບໍ່ໄຕ່ຖາມ ຄັ້ນແລ້ວປວາຣຕາຮ່ວມກັນ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ຄັ້ນແລ້ວແຍກກັນປວາຣຕາ ຕ້ອງອາບັຕິທຸກກົຜ.

.... ພວກລາວໄດ້ໄຕ່ຖາມ ຄັ້ນໄຕ່ຖາມແລ້ວນ່າຍ ຄັ້ນແລ້ວປວາຣຕາຮ່ວມກັນ ບໍ່ຕ້ອງອາບັຕິ.

ບໍ່ຄວຣໄປໃສໃນວັນປວາຣຓາ

[໔໔໔] ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ກິກຂຸບໍ່ຄວຣໄປຈາກອາວາສທີ່ມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສທີ່ມີກິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສທີ່ມີກິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນບໍ່ແມ່ນອາວາສ ຊຶ່ງມີກິກຂຸບໍ່ຄົບຈຳນວນ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຓາ ບໍ່ຄວຣໄປຈາກອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສມີກິກຂຸຊຶ່ງຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພວກກິກຂຸຜູ້ເປັນນານາສັງວາສ ນອກຈາກໄປເປັນຄຓະສົງຆ໌ ນອກຈາກມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພວກພິກຂຸຜູ້ເປັນນານາສັງວາສ ນອກຈາກໄປເປັນຄຕະສົງຄ໌ ນອກຈາກມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພວກພິກຂຸຜູ້ເປັນນານາສັງວາສ ນອກຈາກໄປເປັນຄຕະສົງຄ໌ ນອກຈາກມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສຊຶ່ງມີພິກຂຸຄົບຈຳນວນ ....

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ....

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພວກພິກຂຸຜູ້ເປັນນານາສັງວາສ ນອກຈາກໄປເປັນຄຕະສົງຄ໌ ນອກຈາກມີອັນຕຣາຍ.

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສຊຶ່ງມີພິກຂຸຄົບຈຳນວນ ....

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ....

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ບໍ່ຄວຣໄປຈາກອາວາສ ຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີພິກຂຸຄົບຈຳນວນ ຊຶ່ງເປັນທີ່ຢູ່ຂອງພິກຂຸຜູ້ເປັນນານາສັງວາສ ນອກຈາກໄປເປັນຄຕະສົງຄ໌ ນອກຈາກມີອັນຕຣາຍ.

ສຖານທີ່ຄວຣໄປໃນວັນປວາຣຕາ

ດູຣາພິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ພິກຂຸຄວຣໄປຈາກອາວາສທີ່ມີພິກຂຸຄົບຈຳນວນ ສູ່ອາວາສທີ່ມີພິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງເປັນທີ່ຢູ່ຂອງພວກພິກຂຸຜູ້ເປັນສມານສັງວາສ ທີ່ຮູ້ວ່າເຮົາສາມາຖຈະໄປເຖິງໃນວັນນີ້ແຫຼະ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ຄວຣໄປຈາກຖິ່ນທີ່ບໍ່ແມ່ນອາວາສທີ່ມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ອັນເປັນທີ່ຢູ່ຂອງພວກກິກຂຸຜູ້ເປັນສມານສັງວາສ ທີ່ຮູ້ວ່າເຮົາສາມາຖຈະໄປເຖິງໃນວັນນີ້ແຫຼະ.

ດູຣາກິກຂຸທັ້ງຫຼາຍ ເມື່ອເຖິງວັນປວາຣຕາ ຄວຣໄປຈາກອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ຊຶ່ງມີກິກຂຸຄົບຈຳນວນ ສູ່ອາວາສທີ່ມີກິກຂຸຄົບຈຳນວນ ....

.... ສູ່ຖິ່ນທີ່ບໍ່ແມ່ນອາວາສ ....

.... ສູ່ອາວາສຫຼືຖິ່ນທີ່ບໍ່ແມ່ນອາວາສ ອັນເປັນທີ່ຢູ່ຂອງພວກກິກຂຸຜູ້ເປັນສມານສັງວາສ ທີ່ຮູ້ວ່າຈະສາມາຖໄປເຖິງໃນວັນນີ້ແຫຼະ.

ບຸຄຄົລທີ່ຄວຣເວັ້ນໃນປວາຣຕາ

[໔໘] ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຕີນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາ ຕ້ອງອາບັຕິທຸກກົຝ.

ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣປວາຣຕາໃນບໍຣິນັທທີ່ມີສິກຂມານານັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີສາມເຕຣນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີສາມເຕຣີນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ບອກລາສິກຂາແລ້ວນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ຕ້ອງອັນຕິມວັຕຖຸນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາຕ້ອງອາບັຕິທຸກກົຝ.

ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາ ຄວຣປັບອາບັຕິຕາມທັມມ໌.

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ຖືກສົງຄ໌ຍົກເສັຽການບໍ່ທຳຄືນອາບັຕິນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາ ຄວຣປັບອາບັຕິຕາມທັມມ໌.

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີບັຕເທາະກ໌ນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາ ຕ້ອງອາບັຕິທຸກກົຝ.

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີຄົນລັກເພສນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິນັທທີ່ມີກິກຂຸຜູ້ເຂົ້າຮີດເດັຽຣຖີຍ໌ນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນຖ້າຍດີຣັຈฉານນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນฆ่າມາຣດານັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນฆ่າບິດານັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນฆ่າພຣະອຣຫັນຕ໌ນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນປະທຸษຮ້າຍກິກษຸณີນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີກິກษຸທຳລາຍສົງฆ໌ນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີຄົນທຳຮ້າຍພຣະສາສດາເຖິງທໍ້ພຣະໂລຫິຕນັ່ງຢູ່ດ້ວຍ ....

ບໍ່ຄວຣປວາຣຕາໃນບໍຣິບັທທີ່ມີອຸກໂຕພຍັณຊນກນັ່ງຢູ່ດ້ວຍ ອົງຄ໌ໃດປວາຣຕາ ຕ້ອງອາບັຕິທຸກກົฏ.

ດູຣາກິກษຸທັ້ງຫຼາຍ ກິກษຸບໍ່ຄວຣປວາຣຕາ ດ້ວຍການໃຫ້ປວາຣຕາຄ້າງຄູາວ ນອກຈາກບໍຣິບັທຍັງບໍ່ລຸກໄປ.

ດູຣາກິກษຸທັ້ງຫຼາຍ ອີກຢ່າງນຶ່ງ ກິກษຸບໍ່ຄວຣປວາຣຕາໃນດິຖີບໍ່ແມ່ນວັນປວາຣຕາ ນອກຈາກວັນສັງฆສາມັຄຄີ.

ກາຕວາຣທີ່ ๔ ຈົບ.

พระพุทธานุญาตเตวาจิกาปวารณา

สัญจรภัยในปวารณา

[๘๔๔] ກໍໂດຍສມັຍນັ້ນແລ ๓ ອາວາສແຫ່ງນຶ່ງໃນໂກສົລຊົນບົທ ຄົນຊາວດົງໄດ້ມາສາຣະວົນໃນວັນປວາຣຕາ. ກິກษຸທັ້ງຫຼາຍບໍ່ອາຈປວາຣຕາ ๑ ເທື່ອ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸญາຕແກ່ກິກษຸທັ້ງຫຼາຍວ່າ ດູຣາກິກษຸທັ້ງຫຼາຍ ເຮົາອນຸญາຕໃຫ້ປວາຣຕາ ๔ ເທື່ອ. ຄົນຊາວດົງໄດ້ມາສາຣະວົນຫຼາຍຂຶ້ນ ກິກษຸທັ້ງຫຼາຍບໍ່ອາຈປວາຣຕາ ๔ ເທື່ອ ຈຶ່ງຂາບທູລເຣື່ອງນັ້ນ

ແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕ ໃຫ້ປວາຣຕາເທື່ອດຽວ. ຊນຊາວດົງໄດ້ມາສາຣະວົນໜັກຂຶ້ນອີກ. ກິກຂຸທັ້ງຫຼາຍບໍ່ອາຈປວາຣຕາເທື່ອດຽວ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ປວາຣຕາມີພັຣຍາເທົ່າກັນ.

ຣາຕຣີໃກ້ສວ່າງ

ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງ ເຖິງວັນປວາຣຕາ ຊາວບ້ານມົວໃຫ້ທານຢູ່ຈົນຣາຕຣີໃກ້ສວ່າງ ຈຶ່ງກິກຂຸເຫຼົ່ານັ້ນໄດ້ປຶກສາກັນວ່າ ຄົນເຫຼົ່ານີ້ມົວໃຫ້ທານຢູ່ຈົນຣາຕຣີໃກ້ສວ່າງ ຖ້າສົງຄ໌ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຣາຕຣີນີ້ກໍຈັກສວ່າງເສັຽກ່ອນ ພວກເຮົາອາຈຈະປຕິບັຕິຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສກະກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ໃນອາວາສແຫ່ງນຶ່ງເຖິງວັນປວາຣຕາ ຊາວບ້ານໃນຕາແສງນີ້ມົວໃຫ້ທານຢູ່ ຈົນຣາຕຣີໃກ້ສວ່າງ ຫາກກິກຂຸທັ້ງຫຼາຍໃນອາວາສນັ້ນ ມີຄວາມຄິດເຫັນຢ່າງນີ້ວ່າ ຊາວບ້ານພາກັນໃຫ້ທານຢູ່ຈົນຣາຕຣີໃກ້ສວ່າງ ຖ້າສົງຄ໌ຈະປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຣາຕຣີນີ້ກໍຈັກສວ່າງເສັຽກ່ອນ ດັ່ງນີ້. ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ ດ້ວຍຍັຕຕິກັມມ໌ວາຈາວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຊາວບ້ານມົວໃຫ້ທານຢູ່ຈົນຣາຕຣີໃກ້ສວ່າງ ຖ້າສົງຄ໌ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຣາຕຣີຈັກສວ່າງເສັຽກ່ອນ. ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣປວາຣຕາ ໒ ເທື່ອ .... ເທື່ອດຽວ .... ມີພັຣຍາເທົ່າກັນ.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງ ເຖິງວັນປວາຣຕາ ກິກຂຸທັ້ງຫຼາຍກ່າວສັມມ໌ກັນ ....

ກິກຂຸທີ່ຊ່ຽວຊານໃນພຣະສູຕຣ໌ ສັງຄາຍນາພຣະສູຕຣ໌ກັນ .... ພຣະວິນັຍສຣຕັດສິນພຣະວິນັຍກັນ .... ພຣະທັມມກຖຶກສົນທນາທັມມ໌ກັນ .... ກິກຂຸທັ້ງຫຼາຍຜິດກັນຈົນຣາຕຣີໃກ້ສວ່າງ. ຫາກກິກຂຸທັ້ງຫຼາຍໃນອາວາສນັ້ນມີຄວາມຄິດເຫັນຢ່າງນີ້ວ່າ ກິກຂຸທັ້ງຫຼາຍຜິດກັນຈົນຣາຕຣີຈວນສວ່າງ ຖ້າສົງຄ໌ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຣາຕຣີຈັກສວ່າງເສັຽກ່ອນ ດັ່ງນີ້. ກິກຂຸຜູ້ສລາດສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸທັ້ງຫຼາຍມົວຜິດກັນຈົນຣາຕຣີຈວນສວ່າງ ຖ້າສົງຄ໌ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນປວາຣຕາທົ່ວກັນ ຣາຕຣີຈັກສວ່າງເສັຽກ່ອນ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣປວາຣຕາ ໒ ເທື່ອ .... ເທື່ອດຽວ .... ມີພັຣຍາເທົ່າກັນ.

ຝົນກຳລັງຕັ້ງເຄົ້າ

ກໍໂດຍສມັຍນັ້ນແລ ໃນອາວາສແຫ່ງນຶ່ງໃນໂກສົລຊົນບົທ ເຖິງວັນປວາຣຕາຫີກາຍຸສົງຆ໌ມາປະຊຸມກັນຫຼາຍ. ສຖານທີ່ປະຊຸມຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກຳລັງຕັ້ງເຄົ້າມາໃຫລ່ ຈຶ່ງຫີກາຍຸເຫຼົ່ານັ້ນໄດ້ປຶກສາກັນວ່າ ຫີກາຍຸສົງຆ໌ນີ້ມາປະຊຸມກັນຫຼາຍ ສຖານທີ່ປະຊຸມຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍກຳລັງຕັ້ງເຄົ້າມາໃຫລ່ ຖ້າສົງຆ໌ຈັກປວາຣຕາ ໓ ເທື່ອ ສົງຆ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຝົນນີ້ກໍຈະຕົກເສັຽກ່ອນ ພວກເຮົາອາຈຈະປຕິບັຕິສຖານໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຮັບສັ່ງກະຫີກາຍຸທັ້ງຫຼາຍວ່າ ດູຣາຫີກາຍຸທັ້ງຫຼາຍ ກໍໃນອາວາສແຫ່ງນຶ່ງ ເຖິງວັນປວາຣຕາ ຫີກາຍຸໃນສາສນານີ້ມາປະຊຸມກັນຫຼາຍ. ສຖານທີ່ປະຊຸມຄັບແຄບຄຸ້ມຝົນບໍ່ໄດ້ ແລະຝົນກໍກຳລັງຕັ້ງເຄົ້າມາໃຫລ່ ຖ້າຫີກາຍຸທັ້ງຫຼາຍໃນອາວາສນັ້ນມີຄວາມຄິດເຫັນຢ່າງນີ້ວ່າ ຫີກາຍຸສົງຆ໌ມາປະຊຸມກັນຫຼາຍ ສຖານທີ່ປະຊຸມຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍກຳລັງຕັ້ງເຄົ້າມາໃຫລ່ ຖ້າສົງຆ໌ຈັກປວາຣຕາ ໓ ເທື່ອ ສົງຆ໌ຈະບໍ່ທັນໄດ້ປວາຣຕາທົ່ວກັນ ຝົນນີ້ກໍຈະຕົກຫນັກເສັຽກ່ອນ. ຫີກາຍຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ຫີກາຍຸສົງຆ໌ນີ້ປະຊຸມກັນຫຼາຍ ສຖານທີ່ປະຊຸມຄັບແຄບ ຄຸ້ມຝົນບໍ່ໄດ້ ແລະຝົນກໍກຳລັງຕັ້ງເຄົ້າມາໃຫລ່ ຖ້າສົງຆ໌ຈັກປວາຣຕາ ໓ ເທື່ອ ສົງຆ໌ຈັກບໍ່ທັນໄດ້ປວາຣຕາທົ່ວກັນ ຝົນນີ້ກໍຈັກຕົກເສັຽກ່ອນ. ຖ້າຄວາມພ້ອມພັ່ງຂອງສົງຆ໌ເຖິງທີ່ແລ້ວ ສົງຆ໌ຄວຣປວາຣຕາ ໒ ເທື່ອ .... ເທື່ອດຽວ .... ມີພັຣຍາເທົ່າກັນ.

ອັນຕຣາຍ ໑໐ ປະການ

ດູຣາຫີກາຍຸທັ້ງຫຼາຍ ອີກຢ່າງນຶ່ງ ໃນອາວາສແຫ່ງນຶ່ງໃນຕາແສງນີ້ ເຖິງວັນປວາຣຕາ ມີອັນຕຣາຍເກີດຂຶ້ນ ຄື

໑. ພຣະຣາຊາສເດັຈມາ ....

໒. ໂຈຣປລົ້ນ ....

໓. ໄຟໄຫມ້ ....

໔. ນ້ຳຫລາກມາ ....

໕. ຄົນມາຫຼາຍ ....

໖. ຜີເຂົ້າສິງຫີກາຍຸ ....

໗. ສັຕວ໌ຮ້າຍເຂົ້າມາ ....

໗. ງູຮ້າຍເລື້ອຍເຂົ້າມາ ....

໘. ກິກຂຸຈະເຖິງເສັຽຊີວິຕ ....

໑໐. ມີອັນຕຣາຍແກ່ພຣົຫ໌ມຈັຣຍ໌ເກີດຂຶ້ນ.

ໃນຂໍ້ນັ້ນ ຫາກກິກຂຸທັ້ງຫຼາຍໃນອາວາສນັ້ນມີຄວາມຄິດເຫັນຢ່າງນີ້ວ່າ ເຫຕຸລຸກເລີນນີ້ແຫຼະ ຄື ອັນຕຣາຍແກ່ພຣົຫ໌ມຈັຣຍ໌ ຖ້າສົງຄ໌ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວເຖິງກັນ ອັນຕຣາຍແກ່ພຣົຫ໌ມຈັຣຍ໌ນີ້ກໍຈັກເກີດເສັຽກ່ອນ. ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍ ຌັຕຕິກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ເຫຕຸລຸກເລີນນີ້ຄືອັນຕຣາຍແກ່ພຣົຫ໌ມຈັຣຍ໌ ຖ້າສົງຄ໌ ຈັກປວາຣຕາ ໓ ເທື່ອ ສົງຄ໌ຈະບໍ່ທັນໄດ້ປວາຣຕາທົ່ວເຖິງກັນ ອັນຕຣາຍແກ່ພຣົຫ໌ມຈັຣຍ໌ນີ້ກໍຈັກເກີດ ເສັຽກ່ອນ. ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣປວາຣຕາ ໔ ເທື່ອ .... ເທື່ອດຽວ .... ມີພັຣສາ ເທົ່າກັນ.

ກິກຂຸມີອາບັຕິຫ້າມປວາຣຕາ

[໔໔໕] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ມີອາບັຕິຕິດໂຕໄດ້ປວາຣຕາ. ກິກຂຸທັ້ງຫຼາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸ ທັ້ງຫຼາຍ ກິກຂຸມີອາບັຕິຕິດໂຕບໍ່ຄວຣປວາຣຕາ ອົງຄ໌ໃດປວາຣຕາ ຕ້ອງອາບັຕິທຸກກົຜ. ດູຣາກິກຂຸທັ້ງຫຼາຍ ເຮົາອນຸຌາຕໃຫ້ກິກຂຸຜູ້ມີອາບັຕິຕິດໂຕປວາຣຕາ ອົງຄ໌ນັ້ນທຳໂອກາສ ໂຈທດ້ວຍອາບັຕິ.

ສມັຍຕໍ່ມາ ພຣະຈັພພັຄຄີຍ໌ອັນສົງຄ໌ໃຫ້ທຳໂອກາສ ກໍບໍ່ປັຕຖນາຈະທຳໂອກາສ. ກິກຂຸທັ້ງຫຼາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫຼາຍວ່າ ດູຣາກິກຂຸ ທັ້ງຫຼາຍ ເຮົາອນຸຌາຕໃຫ້ງົດປວາຣຕາຂອງກິກຂຸຜູ້ບໍ່ຍອມທຳໂອກາສ.

ວິທີງົດປວາຣຕາ

ດູຣາກິກຂຸທັ້ງຫຼາຍ ກໍແລ ສົງຄ໌ຄວຣງົດປວາຣຕາຢ່າງນີ້:-

ເມື່ອເຖິງວັນປວາຣຕາ ໑໔ ຄ່ຳ ຫຼື ໑໕ ຄ່ຳ ເມື່ອບຸຄຄົລນັ້ນຢູ່ພ້ອມໜ້າ ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃນທ່າມກາງສົງຄ໌ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ບຸຄຄົລມີຊື່ນີ້ ມີອາບັຕິຕິດໂຕປວາຣຕາ ຂ້າພເຈົ້າ ຂອງົດປວາຣຕາຂອງທ່ານເສັຽ ເມື່ອທ່ານຍັງຢູ່ພ້ອມໜ້າ ສົງຄ໌ບໍ່ຄວຣປວາຣຕາ.

ເທົ່ານີ້ ເປັນອັນງົດປວາຣຕາແລ້ວ.

ສມັຍຕໍ່ມາ ພຣະສັພພັຄຄີຍ໌ທາຣືກັນວ່າ ກິກຂຸທັ້ງຫຼາຍຜູ້ມີສີລເປັນທີ່ຮັກ ງົດປວາຣຕາຂອງພວກເຮົາກ່ອນ ດັ່ງນີ້ ຈຶ່ງຟ້າວງົດປວາຣຕາຂອງກິກຂຸທີ່ບໍຣິສຸທສິ່ບໍ່ມີອາບັຕິເສັຽກ່ອນ ເພາະເຣື່ອງອັນບໍ່ສົມຄວຣ ເພາະເຫຕຸອັນບໍ່ສົມຄວຣ ແມ້ປວາຣຕາຂອງກິກຂຸທີ່ປວາຣຕາແລ້ວກໍງົດດ້ວຍ. ກິກຂຸທັ້ງຫຼາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ກິກຂຸບໍ່ຄວຣງົດປວາຣຕາ ຂອງກິກຂຸຜູ້ບໍຣິສຸທສິ່ ບໍ່ມີອາບັຕິ ເພາະເຣື່ອງອັນບໍ່ສົມຄວຣ ເພາະເຫຕຸອັນບໍ່ສົມຄວຣ ອົງຄ໌ໃດງົດ ຕ້ອງອາບັຕິທຸກກົຜ. ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ແມ້ປວາຣຕາຂອງກິກຂຸທີ່ປວາຣຕາແລ້ວ ກໍບໍ່ຄວຣງົດ ອົງຄ໌ໃດງົດ ຕ້ອງອາບັຕິທຸກກົຜ.

ລັກຂຕະປວາຣຕາທີ່ບໍ່ເປັນອັນງົດ

[໔໔໖] ດູຣາກິກຂຸທັ້ງຫຼາຍ ຢ່າງນີ້ແລ ປວາຣຕາເປັນອັນງົດ ຢ່າງນີ້ບໍ່ເປັນອັນງົດ. ດູຣາກິກຂຸທັ້ງຫຼາຍ ປວາຣຕາບໍ່ເປັນອັນງົດຢ່າງໃດລະ. ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາ ໓ ເທື່ອ ອັນກິກຂຸກ່າວວ່າຈົບແລ້ວ ຈຶ່ງງົດປວາຣຕາ ປວາຣຕາບໍ່ເປັນອັນງົດ.

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາ ໔ ເທື່ອ ....

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາເທື່ອດຽວ ....

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາມີພັຣຊາເທົ່າກັນ ອັນກິກຂຸກ່າວວ່າຈົບແລ້ວ ຈຶ່ງງົດປວາຣຕາ ປວາຣຕາບໍ່ເປັນອັນງົດ.

ດູຣາກິກຂຸທັ້ງຫຼາຍ ຢ່າງນີ້ແລ ປວາຣຕາບໍ່ເປັນອັນງົດ.

ລັກຂຕະປວາຣຕາເປັນອັນງົດ

ດູຣາກິກຂຸທັ້ງຫຼາຍ ປວາຣຕາເປັນອັນງົດຢ່າງໃດລະ?

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາ ໓ ເທື່ອ ອັນກິກຂຸກ່າວວ່າຍັງບໍ່ທັນຈົບ ຈຶ່ງງົດປວາຣຕາ ປວາຣຕາເປັນອັນງົດ.

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາ ໔ ເທື່ອ ....

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາເທື່ອດຽວ ....

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອປວາຣຕາມີພັຣຊາເທົ່າກັນອັນກິກຂຸກ່າວວ່າຍັງບໍ່ທັນຈົບ ຈຶ່ງງົດປວາຣຕາ ປວາຣຕາເປັນອັນງົດ.

ດູຣາກິກຂຸທັ້ງຫຼາຍ ຢ່າງນີ້ແລ ປວາຣຕາເປັນອັນງົດ.

ກິກຸຜູ້ງົດປວາຣຕາ

[໔໘] ດູຣາກິກຸທັ້ງຫຼາຍ ກໍເມື່ອເຖິງວັນປວາຣຕາ ກິກຸໃນສາສນານີ້ ງົດປວາຣຕາຂອງກິກຸເສັຽ. ຖ້າກິກຸເຫຼົ່າອື່ນຮູ້ຈັກກິກຸອົງຄ໌ນັ້ນວ່າ ທ່ານອົງຄ໌ນີ້ແລ ມີຄວາມປະພຶຕທາງກາຍບໍ່ບໍຣິສຸທธິ໌ ມີຄວາມປະພຶຕທາງວາຈາບໍ່ບໍຣິສຸທธິ໌ ມີອາຊີວະບໍ່ບໍຣິສຸທธິ໌ ເປັນຜູ້ໂງ່ ບໍ່ฉລາດ ເມື່ອຖືກຊັກຖາມ ບໍ່ອາຈໃຫ້ຄຳຕອບຂໍ້ທີ່ຊັກຖາມ. ສົງฆ໌ຄວຣກ່າວຫ້າມວ່າ ຢ່າເລີຍ ກິກຸ ຢ່າຫຸ່ມຖຽງກັນ ຢ່າຜິດກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ ດັ່ງນີ້ ແລ້ວຈຶ່ງປວາຣຕາ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອເຖິງວັນປວາຣຕາ ກິກຸໃນສາສນານີ້ງົດປວາຣຕາຂອງກິກຸເສັຽ ຖ້າກິກຸເຫຼົ່າອື່ນຮູ້ຈັກກິກຸອົງຄ໌ນັ້ນວ່າ ທ່ານອົງຄ໌ນີ້ແລ ມີຄວາມປະພຶຕທາງກາຍບໍຣິສຸທธິ໌ ແຕ່ມີຄວາມປະພຶຕທາງວາຈາບໍ່ບໍຣິສຸທธິ໌ ມີອາຊີວະບໍ່ບໍຣິສຸທธິ໌ ເປັນຜູ້ໂງ່ ບໍ່ฉລາດ ເມື່ອຖືກຊັກຖາມ ກໍບໍ່ອາຈໃຫ້ຄຳຕອບຂໍ້ທີ່ຊັກຖາມ. ສົງฆ໌ຄວຣກ່າວຫ້າມວ່າ ຢ່າເລີຍ ກິກຸ ຢ່າຫຸ່ມຖຽງກັນ ຢ່າຜິດກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ ດັ່ງນີ້ ແລ້ວຈຶ່ງປວາຣຕາ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອເຖິງວັນປວາຣຕາ ກິກຸໃນສາສນານີ້ງົດປວາຣຕາຂອງກິກຸເສັຽ. ຖ້າກິກຸເຫຼົ່າອື່ນຮູ້ຈັກກິກຸອົງຄ໌ນັ້ນວ່າ ທ່ານອົງຄ໌ນີ້ແລ ມີຄວາມປະພຶຕທາງກາຍບໍຣິສຸທธິ໌ ມີຄວາມປະພຶຕທາງວາຈາບໍຣິສຸທธິ໌ ແຕ່ມີອາຊີວະບໍ່ບໍຣິສຸທธິ໌ ເປັນຜູ້ໂງ່ ບໍ່ฉລາດ ເມື່ອຖືກຊັກຖາມ ກໍບໍ່ອາຈໃຫ້ຄຳຕອບຂໍ້ທີ່ຊັກຖາມ. ສົງฆ໌ຄວຣກ່າວຫ້າມວ່າ ຢ່າເລີຍ ກິກຸ ຢ່າຫຸ່ມຖຽງກັນ ຢ່າຜິດກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ ດັ່ງນີ້ ແລ້ວຈຶ່ງປວາຣຕາ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອເຖິງວັນປວາຣຕາ ກິກຸໃນສາສນານີ້ງົດປວາຣຕາຂອງກິກຸເສັຽ. ຖ້າກິກຸເຫຼົ່າອື່ນຮູ້ຈັກກິກຸອົງຄ໌ນັ້ນວ່າ ທ່ານອົງຄ໌ນີ້ແລ ມີຄວາມປະພຶຕທາງກາຍບໍຣິສຸທธິ໌ ມີຄວາມປະພຶຕທາງວາຈາບໍຣິສຸທธິ໌ ມີອາຊີວະບໍຣິສຸທธິ໌ ແຕ່ເປັນຜູ້ໂງ່ ບໍ່ฉລາດ ເມື່ອຖືກຊັກຖາມ ກໍບໍ່ອາຈໃຫ້ຄຳຕອບຂໍ້ທີ່ຊັກຖາມ. ສົງฆ໌ຄວຣກ່າວຫ້າມວ່າ ຢ່າເລີຍ ກິກຸ ຢ່າຫຸ່ມຖຽງກັນ ຢ່າຜິດກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ ດັ່ງນີ້ ແລ້ວຈຶ່ງປວາຣຕາ.

ດູຣາກິກຸທັ້ງຫຼາຍ ອີກຢ່າງນຶ່ງ ເມື່ອເຖິງວັນປວາຣຕາ ກິກຸໃນສາສນານີ້ ງົດປວາຣຕາຂອງກິກຸເສັຽ. ຖ້າກິກຸເຫຼົ່າອື່ນຮູ້ຈັກກິກຸອົງຄ໌ນັ້ນວ່າ ທ່ານອົງຄ໌ນີ້ແລ ມີຄວາມປະພຶຕທາງກາຍບໍຣິສຸທธິ໌ ມີຄວາມປະພຶຕທາງວາຈາບໍຣິສຸທธິ໌ ມີອາຊີວະບໍຣິສຸທธິ໌ ເປັນບັຕທິຕ ฉລາດ ມີປັญญາ ເມື່ອຖືກຊັກຖາມ ສາມາຖໃຫ້ຄຳຕອບຂໍ້ທີ່ຊັກຖາມໄດ້. ກິກຸນັ້ນອັນສົງฆ໌ຄວຣວ່າກ່າວ ຢ່າງນີ້ວ່າ ອາວຸໂສ ຄຸຕງົດປວາຣຕາຂອງກິກຸອົງຄ໌ນີ້ເພາະຫຍັງ? ງົດເພາະສີລວິບັຕິບໍ່? ງົດເພາະອາຈາຣວິບັຕິບໍ່? ງົດເພາະທິຕຖິວິບັຕິບໍ່? ຫາກທ່ານອາຈຈະຕອບ ຢ່າງນີ້ວ່າ ຂ້າພເຈົ້າງົດເພາະສີລວິບັຕິ ຂ້າພເຈົ້າ

ງົດເພາະອາຈາຣວິບັຕິ ຂ້າພເຈົ້າງົດເພາະທິຕຖິວິບັຕິ. ທ່ານອັນສົງฆ໌ຄວຣຖາມ ຢ່າງນີ້ວ່າ ຄຸຕຮູ້ຈັກສີລວິບັຕິ ຮູ້ຈັກອາຈາຣວິບັຕິ ຮູ້ຈັກທິຕຖິວິບັຕິບໍ່? ຫາກທ່ານອາຈຈະຕອບ ຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ຂ້າພເຈົ້າຮູ້ຈັກສີລວິບັຕິ ຮູ້ຈັກອາຈາຣວິບັຕິ ຮູ້ຈັກທິຕຖິວິບັຕິ. ທ່ານອັນສົງฆ໌ຄວຣຖາມຢ່າງນີ້ວ່າ ອາວຸໂສ ກໍສີລວິບັຕິເປັນຢ່າງໃດ? ອາຈາຣວິບັຕິເປັນຢ່າງໃດ? ທິຕຖິວິບັຕິເປັນຢ່າງໃດ? ຫາກທ່ານອາຈຈະຕອບ ຢ່າງນີ້ວ່າ ປາຣາຊິກ ໔ ສັງฆາທິເສສ ໑໓ ນີ້ຊື່ວ່າສີລວິບັຕິ ຖຸລລັຈຈັຍ ປາຈິຕຕິຍະ ປາຕິເທສນີຍະ ທຸກກົฏ ທຸພภາສິຕ ນີ້ຊື່ວ່າອາຈາຣວິບັຕິ ມິຈฉາທິຕຖິ ອັນຕຄາຫິກທິຕຖິ ນີ້ຊື່ວ່າທິຕຖິວິບັຕິ. ທ່ານອັນສົງฆ໌ຄວຣຖາມ ຢ່າງນີ້ວ່າ ອາວຸໂສ ຄຸຕງົດປວາຣຕາຂອງภິກษຸນີ້ດ້ວຍເຫຕຸໃດ? ງົດດ້ວຍໄດ້ເຫັນບໍ່? ງົດດ້ວຍໄດ້ຟັງບໍ່? ງົດດ້ວຍສົງສັຍບໍ່?. ຫາກທ່ານອາຈຈະຕອບຢ່າງນີ້ວ່າ ຂ້າພເຈົ້າງົດດ້ວຍໄດ້ເຫັນກໍດີ ຂ້າພເຈົ້າງົດດ້ວຍໄດ້ຟັງກໍດີ ຂ້າພເຈົ້າງົດດ້ວຍສົງສັຍກໍດີ. ທ່ານອັນສົງฆ໌ຄວຣຖາມຢ່າງນີ້ວ່າ ອາວຸໂສ ຄຸຕງົດປວາຣຕາຂອງภິກษຸນີ້ດ້ວຍໄດ້ເຫັນຢ່າງໃດ? ຄຸຕເຫັນຫຍັງ? ຄຸຕເຫັນວ່າຢ່າງໃດ? ຄຸຕເຫັນເມື່ອໃດ? ຄຸຕເຫັນທີ່ໃດ? ภິກษຸນີ້ຕ້ອງອາບັຕິປາຣາຊິກ ຄຸຕເຫັນບໍ່? ภິກษຸນີ້ຕ້ອງອາບັຕິສັງฆາທິເສສ ຄຸຕເຫັນບໍ່? ภິກษຸນີ້ຕ້ອງອາບັຕິຖຸລລັຈຈັຍ .... ອາບັຕິປາຈິຕຕິຍະ .... ອາບັຕິປາຕິເທສນີຍະ .... ອາບັຕິທຸກກົฏ .... ອາບັຕິທຸພภາສິຕ ຄຸຕເຫັນບໍ່? ຄຸຕຢູ່ທີ່ໃດ? ແລະภິກษຸນີ້ຢູ່ທີ່ໃດ? ຄຸຕເຮັດຫຍັງແດ່? ภິກษຸນີ້ເຮັດຫຍັງແດ່?. ຫາກທ່ານອາຈຈະຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ຂ້າພເຈົ້າບໍ່ໄດ້ງົດປວາຣຕາຂອງภິກษຸນີ້ດ້ວຍໄດ້ເຫັນ ແຕ່ງົດປວາຣຕາດ້ວຍໄດ້ຟັງຕ່າງຫາກ. ທ່ານອັນສົງฆ໌ຄວຣຖາມຢ່າງນີ້ວ່າ ອາວຸໂສ ຄຸຕງົດປວາຣຕາຂອງภິກษຸນີ້ດ້ວຍໄດ້ຟັງມາຢ່າງໃດ? ຄຸຕໄດ້ຟັງເຣື່ອງຫຍັງ? ຄຸຕໄດ້ຟັງມາວ່າຢ່າງໃດ? ຄຸຕໄດ້ຟັງມາເມື່ອໃດ? ຄຸຕໄດ້ຟັງທີ່ໃດ? ຄຸຕໄດ້ຟັງວ່າ ภິກษຸນີ້ຕ້ອງອາບັຕິ-ປາຣາຊິກບໍ່? ໄດ້ຟັງວ່າภິກษຸນີ້ຕ້ອງອາບັຕິສັງฆາທິເສສບໍ່? ໄດ້ຟັງວ່າภິກษຸນີ້ຕ້ອງອາບັຕິຖຸລລັຈຈັຍ .... ອາບັຕິປາຈິຕຕິຍະ .... ອາບັຕິປາຕິເທສນີຍະ .... ອາບັຕິທຸກກົฏ .... ອາບັຕິທຸພภາສິຕບໍ່? ໄດ້ຟັງມາຈາກภິກษຸບໍ່? ໄດ້ຟັງມາຈາກภິກษຸຕີບໍ່? ໄດ້ຟັງມາຈາກສິກຂມານາບໍ່? ໄດ້ຟັງມາຈາກສາມເຕຣບໍ່? ໄດ້ຟັງມາຈາກສາມເຕຣີບໍ່? ໄດ້ຟັງມາຈາກອຸບາສົກບໍ່? ໄດ້ຟັງມາຈາກອຸບາສິກາບໍ່? ໄດ້ຟັງມາຈາກພຣະຣາຊາບໍ່? ໄດ້ຟັງມາຈາກຣາຊມຫາອຳມາຕຍ໌ບໍ່? ໄດ້ຟັງມາຈາກພວກເດັຽຣຖີຍ໌ບໍ່? ໄດ້ຟັງມາຈາກພວກສາວົກເດັຽຣຖີຍ໌ບໍ່?. ຫາກທ່ານອາຈຈະຕອບ ຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ຂ້າພເຈົ້າບໍ່ໄດ້ງົດປວາຣຕາຂອງภິກษຸນີ້ດ້ວຍໄດ້ຟັງ ແຕ່ຂ້າພເຈົ້າງົດປວາຣຕາດ້ວຍສົງສັຍຕ່າງຫາກ. ທ່ານອັນສົງฆ໌ຄວຣຖາມຢ່າງນີ້ວ່າ ອາວຸໂສ ຄຸຕງົດປວາຣຕາຂອງภິກษຸນີ້ດ້ວຍສົງສັຍຢ່າງໃດ? ຄຸຕສົງສັຍຫຍັງ? ສົງສັຍວ່າຢ່າງໃດ? ສົງສັຍເມື່ອໃດ? ສົງສັຍທີ່ໃດ? ຄຸຕສົງສັຍວ່າภິກษຸນີ້ຕ້ອງອາບັຕິປາຣາຊິກບໍ່? ສົງສັຍວ່າภິກษຸນີ້ຕ້ອງອາບັຕິສັງฆາທິເສສບໍ່? ສົງສັຍວ່າภິກษຸນີ້ຕ້ອງອາບັຕິຖຸລລັຈ .... ອາບັຕິປາຈິຕຕິຍະ .... ອາບັຕິປາຕິເທສນີຍະ ....

ອາບັຕິທຸກກົຜ .... ອາບັຕິທຸພກາສິຕບໍ່? ຄຸຓຟັງມາຈາກກິກຸແລ້ວສົງສັຍບໍ່? ຄຸຓຟັງມາຈາກກິກຸຕີແລ້ວສົງສັຍບໍ່? ຄຸຓຟັງມາຈາກສິກຂມານາແລ້ວສົງສັຍບໍ່? ຄຸຓຟັງມາຈາກສາມເຓຣແລ້ວສົງສັຍບໍ່? ຄຸຓຟັງມາຈາກສາມເຓຣີແລ້ວສົງສັຍບໍ່? ຄຸຓຟັງມາຈາກອຸບາສົກແລ້ວສົງສັຍບໍ່? ຄຸຓຟັງມາຈາກອຸບາສິກາແລ້ວສົງສັຍບໍ່? ຄຸຓຟັງມາຈາກພຣະຣາຊາແລ້ວສົງສັຍບໍ່? ຄຸຓຟັງມາຈາກຣາຊມຫາອຳມາຕຍ໌ແລ້ວສົງສັຍບໍ່? ຄຸຓຟັງມາຈາກພວກເດັຽຣຖີຍ໌ແລ້ວສົງສັຍບໍ່? ຄຸຓຟັງມາຈາກພວກສາວົກເດັຽຣຖີຍ໌ແລ້ວສົງສັຍບໍ່? ຫາກທ່ານອາຈຈະຕອບຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ຂ້າພເຈົ້າບໍ່ໄດ້ງົດປວາຣຓາຂອງກິກຸນີ້ດ້ວຍສົງສັຍ ຄວາມຈິງແມ້ຂ້າພເຈົ້າເອງກໍ່ບໍ່ຮູ້ວ່າ ເຮົາງົດປວາຣຓາຂອງກິກຸນີ້ເສັຽດ້ວຍເຫຕຸໃດລະ?.

ຟັງຄຳປຕິຍາຓຂອງໂຈທກ໌ແລະຈຳເລີຍ

ດູຣາກິກຸທັ້ງຫຼາຍ ຫາກກິກຸໂຈທກ໌ນັ້ນຕອບຂໍ້ຊັກຖາມບໍ່ເປັນທີ່ພໍໃຈຂອງສພຣົຫ໌ມຈາຣີຜູ້ຮູ້ທັ້ງຫຼາຍ ສົງຄ໌ຄວຣບອກວ່າ ຄຸຓບໍ່ຄວຣຟ້ອງກິກຸຈຳເລີຍ.

ດູຣາກິກຸທັ້ງຫຼາຍ ຫາກກິກຸໂຈທກ໌ນັ້ນຕອບຂໍ້ຊັກຖາມເປັນທີ່ພໍໃຈຂອງສພຣົຫ໌ມຈາຣີຜູ້ຮູ້ທັ້ງຫຼາຍ ສົງຄ໌ຄວຣບອກວ່າ ຄຸຓຄວຣຟ້ອງກິກຸຈຳເລີຍ.

ດູຣາກິກຸທັ້ງຫຼາຍ ຫາກກິກຸໂຈທກ໌ນັ້ນປຕິຍາຓວ່າ ຕົນຕາມກຳຈັດດ້ວຍອາບັຕິປາຣາຊິກບໍ່ມີມູລ ສົງຄ໌ຄວຣປັ້ບອາບັຕິສັງຄາທິເສສແລ້ວຈຶ່ງປວາຣຓາ.

ດູຣາກິກຸທັ້ງຫຼາຍ ຫາກກິກຸໂຈທກ໌ນັ້ນປຕິຍາຓວ່າ ຕົນຕາມກຳຈັດດ້ວຍອາບັຕິສັງຄາທິເສສບໍ່ມີມູລ ສົງຄ໌ຄວຣປັ້ບອາບັຕິຕາມສົມມ໌ແລ້ວຈຶ່ງປວາຣຓາ.

ດູຣາກິກຸທັ້ງຫຼາຍ ຫາກກິກຸໂຈທກ໌ນັ້ນປຕິຍາຓວ່າ ຕົນຕາມກຳຈັດດ້ວຍອາບັຕິຖຸລລັຈຈັຍບໍ່ມີມູລ .... ດ້ວຍອາບັຕິປາຈິຕຕີຍະ .... ດ້ວຍອາບັຕິປາຕິເທສນີຍະ .... ດ້ວຍອາບັຕິທຸກກົຜ .... ດ້ວຍອາບັຕິທຸພກາສິຕບໍ່ມີມູລສົງຄ໌ຄວຣປັ້ບອາບັຕິຕາມສົມມ໌ ແລ້ວຈຶ່ງປວາຣຓາ.

ດູຣາກິກຸທັ້ງຫຼາຍ ຫາກກິກຸຈຳເລີຍນັ້ນປຕິຍາຓວ່າ ຕົນຕ້ອງອາບັຕິປາຣາຊິກ ສົງຄ໌ຄວຣນາສນະເສັຽ ແລ້ວຈຶ່ງປວາຣຓາ.

ດູຣາກິກຸທັ້ງຫຼາຍ ຫາກກິກຸຈຳເລີຍນັ້ນປຕິຍາຓວ່າ ຕົນຕ້ອງອາບັຕິສັງຄາທິເສສ ສົງຄ໌ຄວຣປັ້ບອາບັຕິສັງຄາທິເສສ ແລ້ວຈຶ່ງປວາຣຓາ.

ດູຣາກິກຸທັ້ງຫຼາຍ ຫາກກິກຸຈຳເລີຍນັ້ນປຕິຍາຓວ່າ ຕົນຕ້ອງອາບັຕິຖຸລລັຈຈັຍ .... ອາບັຕິປາຈິຕຕີຍະ.... ອາບັຕິປາຕິເທສນີຍະ .... ອາບັຕິທຸກກົຜ .... ອາບັຕິທຸພກາສິຕ ສົງຄ໌ຄວຣປັ້ບອາບັຕິຕາມສົມມ໌ ແລ້ວປວາຣຓາເຖີດ.

ມີຄວາມເຫັນບໍ່ຕົງກັນໃນອາບັຕິທີ່ຕ້ອງ

[໔໔໗] ດູຣາພິກຂຸທັ້ງຫຼາຍ ກໍພິກຂຸໃນສາສນານີ້ ຕ້ອງອາບັຕິຖຸລລັຈຈັຍ ໃນວັນປວາຣຓາ. ພິກຂຸບາງພວກມີຄວາມເຫັນວ່າ ຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າ ຕ້ອງອາບັຕິສັງຄາທິເສສ

ດູຣາພິກຂຸທັ້ງຫຼາຍ ພິກຂຸພວກທີ່ມີຄວາມເຫັນວ່າ ຕ້ອງອາບັຕິຖຸລລັຈຈັຍ ຄວຣນຳພິກຂຸອົງຄ໌ນັ້ນອອກໄປໃນທີ່ຄວຣສ່ວນຂ້າງນຶ່ງ ປັ້ບອາບັຕິຕາມທັມມ໌ ແລ້ວເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພິກຂຸອົງຄ໌ນັ້ນຕ້ອງອາບັຕິໃດແລ ອາບັຕິນັ້ນທ່ານທຳຄືນຕາມທັມມ໌ແລ້ວ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣປວາຣຓາ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ ຕ້ອງອາບັຕິຖຸລລັຈຈັຍ ໃນວັນປວາຣຓາ. ພິກຂຸບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຈິຕຕິຢະ ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຕິເທສນີຢະ ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸກກົຎ ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ.

ດູຣາພິກຂຸທັ້ງຫຼາຍ ພິກຂຸພວກທີ່ມີຄວາມເຫັນວ່າ ຕ້ອງອາບັຕິຖຸລລັຈຈັຍ ຄວຣນຳພິກຂຸອົງຄ໌ນັ້ນອອກໄປ ໓ ທີ່ຄວຣສ່ວນຂ້າງນຶ່ງ ປັ້ບອາບັຕິຕາມທັມມ໌ແລ້ວ ເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພິກຂຸນັ້ນຕ້ອງອາບັຕິໃດແລ ອາບັຕິນັ້ນທ່ານທຳຄືນຕາມທັມມ໌ແລ້ວ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣປວາຣຓາ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ ຕ້ອງອາບັຕິປາຈິຕຕິຢະ .... ຕ້ອງອາບັຕິປາຕິເທສນີຢະ.... ຕ້ອງອາບັຕິທຸກກົຎ .... ຕ້ອງອາບັຕິທຸພກາສິຕ ໃນວັນປວາຣຓາ. ພິກຂຸບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິສັງຄາທິເສສ.

ດູຣາພິກຂຸທັ້ງຫຼາຍ ພິກຂຸທີ່ມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ຄວຣນຳພິກຂຸອົງຄ໌ນັ້ນອອກໄປໃນທີ່ຄວຣສ່ວນຂ້າງນຶ່ງ ປັ້ບອາບັຕິຕາມທັມມ໌ແລ້ວ ເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍພິກຂຸນັ້ນຕ້ອງອາບັຕິໃດແລ ອາບັຕິນັ້ນທ່ານທຳຄືນຕາມທັມມ໌ແລ້ວ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວສົງຄ໌ຄວຣປວາຣຓາ.

ດູຣາພິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ພິກຂຸໃນສາສນານີ້ ຕ້ອງອາບັຕິທຸພກາສິຕໃນວັນປວາຣຓາ. ພິກຂຸບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິຖຸລລັຈຈັຍ ບາງພວກ

ມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຈິຕຕິຢະ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິປາຕິເທສນີຢະ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ບາງພວກມີຄວາມເຫັນວ່າຕ້ອງອາບັຕິທຸກກົຜ.

ດູຣາກິກຂຸທັ້ງຫຼາຍ ກິກຂຸທີ່ມີຄວາມເຫັນວ່າຕ້ອງອາບັຕິທຸພກາສິຕ ຄວຣນຳກິກຂຸອົງຄ໌ນັ້ນອອກໄປໃນທີ່ຄວຣສ່ວນຂ້າງນຶ່ງ ປັບອາບັຕິຕາມສັມມ໌ແລ້ວ ເຂົ້າໄປຫາສົງຄ໌ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍກິກຂຸນັ້ນຕ້ອງອາບັຕິໃດແລ ອາບັຕິນັ້ນທ່ານທຳຄືນຕາມສັມມ໌ແລ້ວ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວສົງຄ໌ຄວຣປວາຣຓາ.

ວັຕຖຸແລະບຸຄຄົລປຼາກົຕ

[໔໙] ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສາສນານີ້ ຄວຣປະກາສໃນທ່າມກາງສົງຄ໌ ໃນວັນປວາຣຓາວ່າ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ວັຕຖຸນີ້ປຼາກົຕ ບຸຄຄົລບໍ່ປຼາກົຕ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣງົດວັຕຖຸ ແລ້ວປວາຣຓາເຖີດ.

ກິກຂຸນັ້ນອັນສົງຄ໌ຄວຣກ່າວຢ່າງນີ້ວ່າ ອາວຸໂສ ພຣະຜູ້ມີພຣະກາຄທຮົງບັຌລັຕິປວາຣຓາໄວ້ສຳຫຼັບກິກຂຸທັ້ງຫຼາຍຜູ້ບໍຣິສຸທສິ໌ ຖ້າວັຕຖຸປຼາກົຕ ບຸຄຄົລບໍ່ປຼາກົຕ ທ່ານຈົ່ງຣະບຸຄຄົລນັ້ນມາດຽວນີ້.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ ຄວຣປະກາສໃນທ່າມກາງສົງຄ໌ໃນວັນປວາຣຓາວ່າ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ບຸຄຄົລນີ້ປຼາກົຕ ວັຕຖຸບໍ່ປຼາກົຕ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣງົດບຸຄຄົລ ແລ້ວປວາຣຓາເຖີດ.

ກິກຂຸນັ້ນອັນສົງຄ໌ຄວຣກ່າວຢ່າງນີ້ວ່າ ອາວຸໂສ ພຣະຜູ້ມີພຣະກາຄທຮົງບັຌລັຕິປວາຣຓາໄວ້ສຳຫຼັບກິກຂຸທັ້ງຫຼາຍຜູ້ພ້ອມພຽງກັນ ຖ້າບຸຄຄົລປຼາກົຕ ວັຕຖຸບໍ່ປຼາກົຕ ທ່ານຈົ່ງຣະບຸວັຕຖຸນັ້ນມາດຽວນີ້.

ດູຣາກິກຂຸທັ້ງຫຼາຍ ອີກຢ່າງນຶ່ງ ກິກຂຸໃນສາສນານີ້ ຄວຣປະກາສໃນທ່າມກາງສົງຄ໌ໃນວັນປວາຣຓາວ່າ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ວັຕຖຸແລະບຸຄຄົລນີ້ປຼາກົຕ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣງົດວັຕຖຸແລະບຸຄຄົລແລ້ວ ປວາຣຓາເຖີດ.

ກິກຂຸນັ້ນອັນສົງຄ໌ຄວຣກ່າວຢ່າງນີ້ວ່າ ອາວຸໂສ ພຣະຜູ້ມີພຣະກາຄທຮົງບັຌລັຕິປວາຣຓາໄວ້ສຳຫຼັບກິກຂຸທັ້ງຫຼາຍຜູ້ບໍຣິສຸທສິ໌ ແລະພ້ອມພຽງກັນ ຖ້າວັຕຖຸແລະບຸຄຄົລປຼາກົຕ ທ່ານຈົ່ງຣະບຸວັຕຖຸແລະບຸຄຄົລນັ້ນມາດຽວນີ້.

ດູຣາກິກຂຸທັ້ງຫຼາຍ ຫາກວັຕຖຸປຼາກົຕກ່ອນປວາຣຓາ ກາຍຫລັງບຸຄຄົລຈຶ່ງປຼາກົຕ ຄວຣເວົ້າຂຶ້ນ. ຫາກບຸຄຄົລປຼາກົຕກ່ອນປວາຣຓາ ກາຍຫລັງວັຕຖຸຈຶ່ງປຼາກົຕ ກໍຄວຣເວົ້າຂຶ້ນ. ຫາກວັຕຖຸແລະບຸຄຄົລປຼາກົຕກ່ອນປວາຣຓາ. ຖ້າເມື່ອທຳປວາຣຓາແລ້ວ ຟື້ນເຣື່ອງນັ້ນຂຶ້ນເປັນປາຈິຕຕິຢະ ເພາະຟື້ນເຣື່ອງຂຶ້ນ.

ภิกษุก่ความบาดหมางเป็นต้น

[๒๘๐] ก็โดยสมัยนั้นแล ภิกษุหลายอิงค์ด้วยกันที่เคยเห็นร่อมคิบหากันมา จำพัธษาอยู่ในอาวาสแห่งนึ่ง ในโกสลชนบท ๓ สถานที่ใก้ล้ยงของภิกษุเหຼົ່ານັ້ນ มีภิกษุเหຼົ່າอื่นที่ก่ความบาดหมาง ก่ความผิด ก่ความวิวาท ทำความอื้ฉาว ก่อธิกรณ์ในสงฆ์ จำพัธษาอยู่ด้วยปะสงค์ว่า ในวันปวารณา พวกเราจักงดปวารณาของภิกษุที่อยู่จำพัธษาเหຼົ່ານັ້ນเสย. ภิกษุเหຼົ່ານັ້ນได้รู้ข่าวว่า ๓ สถานที่ใก้ล้ยงของพวกเรา มีภิกษุเหຼົ່າอื่นที่ก่ความบาดหมาง ก่ความผิด ก่ความวิวาท ทำความอื้ฉาว ก่อธิกรณ์ในสงฆ์ จำพัธษาอยู่ ด้วยมุ่งหมายว่า ในวันปวารณา พวกเราจักงดปวารณาของภิกษุที่อยู่จำพัธษาเหຼົ່ານັ້ນเสย ดังนี้ พวกเราอาจจะปฏิบัติอย่างใดนํ จึงขาบทูลเรื่องแด่พระผู้มีพระภาค.

พระผู้มีพระภาครับสั่งกับภิกษุทั้งหลาย ว่าดังนี้:-

ดูราภิกษุทั้งหลาย ก็ภิกษุในสาสนานี้ หลายอิงค์ด้วยกัน ซึ่งเคยเห็นร่อมคิบหากันมาจำพัธษาอยู่ในอาวาสแห่งนึ่ง. ๓ สถานที่ใก้ล้ยงของภิกษุเหຼົ່ານັ້ນ มีภิกษุเหຼົ່າอื่นที่ก่ความบาดหมาง ก่ความผิด ก่ความวิวาท ทำความอื้ฉาว ก่อธิกรณ์ในสงฆ์ จำพัธษาอยู่ด้วยมุ่งหมายว่า ในวันปวารณา พวกเราจักงดปวารณาของพวกภิกษุที่อยู่จำพัธษาเหຼົ່ານັ້ນเสยดังนี้. ดูราภิกษุทั้งหลาย เราอนุญาตให้ภิกษุเหຼົ່ານັ້ນทำอุโบสถ ๒ คือ ที่ ๑ ที่ ๔ หรือ ๑ อุโบสถ คือ ที่ ๑ ที่ ๔ ที่ ๕ ให้เป็นอุโบสถ ๑๔ ค่ำ ด้วยปะสงค์ว่า แนวใดพวกเราควรปวารณาก่อนภิกษุเหຼົ່ານັ້ນ.

ดูราภิกษุทั้งหลาย หากภิกษุพวกที่ก่ความบาดหมาง ก่ความผิด ก่ความวิวาท ทำความอื้ฉาว ก่อธิกรณ์ในสงฆ์เหຼົ່ານັ້ນ มาสู่อาวาส ภิกษุพวกเจ้าถิ่นเหຼົ່ານັ້ນ ควรรีบปะชุมปวารณาเสยโดยไว คั้นแล้วควรแจ้งว่า อาวุโสทั้งหลาย พวกเราปวารณากันแล้วๆ ท่านทั้งหลายจะสำคัญสถานใด ก็จงทำสถานนั้นเถิด.

ดูราภิกษุทั้งหลาย หากภิกษุพวกที่ก่ความบาดหมาง ก่ความผิด ก่ความวิวาท ทำความอื้ฉาว ก่อธิกรณ์ในสงฆ์เหຼົ່ານັ້ນ บ่แจ้งให้รู้ก่อนมาสู่อาวาสนั้น พวกภิกษุเจ้าถิ่นเหຼົ່ານັ້ນ ควรปูอาสนะ จัดหาน้ำล้างตีน ตั้งเกีบ กะเบื้องเช็ดตีนไว้ ควรลุกขึ้นแล้วรับบาตร์จีวร ควรต้อนรับด้วยน้ำดื่ม. ควรแก้งกล่าวแก่ภิกษุเหຼົ່ານັ້ນ แล้วไปปวารณานอกสีมา. คั้นแล้วควรแจ้งว่า อาวุโสทั้งหลาย พวกเราปวารณากันแล้วๆ ท่านทั้งหลายจะสำคัญสถานใด

ກໍຈົງທຳສຖານນັ້ນເຖີດ. ຖ້າໄດ້ວິຣີການນັ້ນຢ່າງນີ້ ການໄດ້ຢ່າງນີ້ ນັ່ນເປັນການດີ ຫາກບໍ່ໄດ້ກິກຂຸເຈົ້າຖິ່ນຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ກິກຂຸເຈົ້າຖິ່ນທັ້ງຫຼາຍຮູ້ວ່າ

ຂໍທ່ານເຈົ້າຖິ່ນທັ້ງຫຼາຍ ຈົງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ພວກເຮົາຄວຣທຳອຸໂບສົຖ ສູຕສູຕປາຕິໂມກຂ໌ໃນບັດນີ້ ຄວຣປວາຣຕາໃນວັນກາລປັກທີ່ຈະມາເຖິງເຖີດ.

ດູຣາກິກຂຸທັ້ງຫຼາຍ ຫາກກິກຂຸພວກທີ່ກໍ່ຄວາມບາດໝາງ ກໍ່ຄວາມຜິດ ກໍ່ຄວາມວິວາທ ທຳຄວາມອື້ລາວ ກໍ່ອະທິກຣນ໌ໃນສົງຂ໌ເຫຼົ່ານັ້ນ ອາຈຈະກ່າວກະກິກຂຸເຫຼົ່ານັ້ນ ຢ່າງນີ້ວ່າ ດີແລ້ວ ອາວຸໂສທັ້ງຫຼາຍ ຂໍພວກທ່ານຈົງປວາຣຕາຕໍ່ພວກເຮົາໃນບັດນີ້ເຖີດ. ພວກທ່ານອັນກິກຂຸທັ້ງຫຼາຍ ຄວຣກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພວກທ່ານບໍ່ເປັນໃຫຍ່ໃນປວາຣຕາຂອງພວກເຮົາ ພວກເຮົາຈະຍັງບໍ່ປວາຣຕາກ່ອນລະ.

ດູຣາກິກຂຸທັ້ງຫຼາຍ ຫາກກິກຂຸທີ່ກໍ່ຄວາມບາດໝາງ ກໍ່ຄວາມຜິດ ກໍ່ຄວາມວິວາທ ທຳຄວາມອື້ລາວ ກໍ່ອະທິກຣນ໌ໃນສົງຂ໌ເຫຼົ່ານັ້ນ ອາຈຈະຢູ່ຖ້າໄປເຖິງວັນກາລປັກຂ໌ນັ້ນ ກິກຂຸເຈົ້າຖິ່ນຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ພວກກິກຂຸເຈົ້າຖິ່ນຮູ້ວ່າ

ທ່ານເຈົ້າຖິ່ນທັ້ງຫຼາຍ ຈົງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ພວກເຮົາຄວຣທຳອຸໂບສົຖ ສູຕສູຕປາຕິໂມກຂ໌ໃນບັດນີ້ເຖີດ ພວກເຮົາຄວຣປວາຣຕາໃນວັນຊຸຕຫປັກຂ໌ທີ່ຈະມາເຖິງເຖີດ.

ດູຣາກິກຂຸທັ້ງຫຼາຍ ຫາກກິກຂຸພວກທີ່ກໍ່ຄວາມບາດໝາງ ກໍ່ຄວາມຜິດ ກໍ່ຄວາມວິວາທ ທຳຄວາມອື້ລາວ ກໍ່ອະທິກຣນ໌ໃນສົງຂ໌ເຫຼົ່ານັ້ນ ອາຈຈະກ່າວກະກິກຂຸເຫຼົ່ານັ້ນ ຢ່າງນີ້ວ່າ ດີແລ້ວ ອາວຸໂສທັ້ງຫຼາຍ ຂໍພວກທ່ານຈົງປວາຣຕາຕໍ່ພວກເຮົາໃນບັດນີ້ເຖີດ. ພວກທ່ານອັນກິກຂຸທັ້ງຫຼາຍຄວຣກ່າວຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ພວກທ່ານບໍ່ເປັນໃຫຍ່ໃນປວາຣຕາຂອງພວກເຮົາ ພວກເຮົາຈະຍັງບໍ່ປວາຣຕາກ່ອນລະ.

ດູຣາກິກຂຸທັ້ງຫຼາຍ ຫາກກິກຂຸພວກທີ່ກໍ່ຄວາມບາດໝາງ ກໍ່ຄວາມຜິດ ກໍ່ຄວາມວິວາທ ທຳຄວາມອື້ລາວ ກໍ່ອະທິກຣນ໌ໃນສົງຂ໌ເຫຼົ່ານັ້ນ ອາຈຈະຢູ່ຄອຍໄປເຖິງວັນຊຸຕຫປັກຂ໌ແມ້ນັ້ນ ກິກຂຸເຫຼົ່ານັ້ນທຸກອົງຄ໌ບໍ່ປວາຣຕາ ກໍຕ້ອງປວາຣຕາໃນວັນເພັລເດືອນ ໑໔ ເປັນທີ່ຄົບ ໔ ເດືອນທີ່ຈະມາເຖິງ.

ດູຣາກິກຂຸທັ້ງຫຼາຍ ຖ້າເມື່ອກິກຂຸເຫຼົ່ານັ້ນກຳລັງປວາຣຕາກັນ ກິກຂຸອາພາລງົດປວາຣຕາຂອງກິກຂຸຜູ້ບໍ່ອາພາລ ກິກຂຸອາພາລນັ້ນອັນກິກຂຸທັ້ງຫຼາຍຄວຣວ່າກ່າວຢ່າງນີ້ວ່າ ທ່ານກຳລັງອາພາລ ອັນຜູ້ອາພາລພຣະຜູ້ມີພຣະກາຄຕຣັສວ່າ ບໍ່ສູ້ຈະອົດທົນຕໍ່ການຊັກຖາມ ອາວຸໂສ ຂໍທ່ານຈົງຖ້າຈົນກວ່າຈະຫາຍອາພາລ ຫາຍອາພາລແລ້ວ ເມື່ອຈຳນົງຈຶ່ງຄ່ອຍໂຈທ. ຫາກກິກຂຸອາພາລຖືກວ່າກ່າວຢ່າງນີ້ ຍັງຂືນໂຈທ ເປັນປາຈິຕຕິຍະເພາະບໍ່ເອື້ອເຟື້ອ.

ດູຣາກິກຊຸທັ້ງຫຼາຍ ຖ້າເມື່ອກິກຊຸເຫຼົ່ານັ້ນກຳລັງປວາຣຕາກັນ ກິກຊຸຜູ້ບໍ່ອາພາສງົດປວາຣຕາຂອງກິກຊຸຜູ້ອາພາສ ກິກຊຸຜູ້ບໍ່ອາພາສນັ້ນ ອັນກິກຊຸທັ້ງຫຼາຍຄວຣວ່າກ່າວ ຢ່າງນີ້ວ່າ ອາວຸໂສ ກິກຊຸອົງຄ໌ນີ້ແລກຳລັງອາພາສ ອັນຜູ້ອາພາສ ພຣະຜູ້ມີພຣະກາຄຕຣັສວ່າ ບໍ່ສູ້ຈະອົດທົນຕໍ່ການຊັກຖາມ ອາວຸໂສ ຂໍທ່ານຈົ່ງຣໍຢູ່ຈົນກວ່າກິກຊຸອົງຄ໌ນີ້ຫາຍອາພາສ ກິກຊຸນັ້ນຫາຍອາພາສແລ້ວ ເມື່ອຈຳນົງຈຶ່ງຄ່ອຍໂຈທ. ຫາກກິກຊຸຜູ້ບໍ່ອາພາສຖືກວ່າກ່າວຢູ່ຢ່າງນີ້ ຍັງຂືນໂຈທ ເປັນປາຈິຕຕິຍະ ເພາະບໍ່ເອື້ອເຟື້ອ.

ດູຣາກິກຊຸທັ້ງຫຼາຍ ຖ້າເມື່ອກິກຊຸເຫຼົ່ານັ້ນກຳລັງປວາຣຕາຢູ່ ກິກຊຸອາພາສງົດປວາຣຕາຂອງກິກຊຸອາພາສໆ ນັ້ນ ອັນກິກຊຸທັ້ງຫຼາຍຄວຣວ່າກ່າວ ຢ່າງນີ້ວ່າ ທ່ານທັ້ງຫຼາຍກຳລັງອາພາສ ອັນຜູ້ອາພາສພຣະຜູ້ມີພຣະກາຄຕຣັສວ່າ ບໍ່ສູ້ຈະອົດທົນຕໍ່ການຊັກຖາມ ໂປຼດຖ້າກ່ອນຈົນກວ່າຈະຫາຍອາພາສດ້ວຍກັນຫາຍອາພາສດ້ວຍກັນແລ້ວ ເມື່ອຈຳນົງຈຶ່ງຄ່ອຍໂຈທ. ຫາກກິກຊຸຜູ້ອາພາສນັ້ນຖືກວ່າກ່າວຢ່າງນີ້ ຍັງຂືນໂຈທເປັນປາຈິຕຕິຍະ ເພາະບໍ່ເອື້ອເຟື້ອ.

ດູຣາກິກຊຸທັ້ງຫຼາຍ ຖ້າເມື່ອກິກຊຸເຫຼົ່ານັ້ນກຳລັງປວາຣຕາກັນ ກິກຊຸຜູ້ບໍ່ອາພາສງົດປວາຣຕາຂອງກິກຊຸຜູ້ບໍ່ອາພາສ. ທັ້ງສອງຝ່າຍ ສົງຄ໌ຄວຣສອບສວນສືບສວນເປັນການສົງຄ໌ປັ້ບອາບັຕິຕາມສັມມ໌ແລ້ວຈຶ່ງປວາຣຕາເຖີດ.

ພວກທີ່ພ້ອມພຽງກັນເປັນຕົ້ນເລື່ອນປວາຣຕາ

[໔໕໑] ກໍໂດຍສມັຍນັ້ນແລ ກິກຊຸຫຼາຍອົງຄ໌ດ້ວຍກັນ ຊຶ່ງເຄີຍເຫັນຮ່ວມຄົບຫາກັນມາ ຈຳພັຣຊາຢູ່ໃນອາວາສແຫ່ງນຶ່ງ ໃນໂກສົລຊົນບົທ. ເມື່ອພວກທ່ານພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ຍ່ອມບັຣລຸຜາສຸວິຫາຣສັມມ໌ຢ່າງໃດຢ່າງນຶ່ງ ຈຶ່ງພວກລາວໄດ້ມີຄວາມປຣິວິຕົກວ່າ ເມື່ອພວກເຮົາພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ໄດ້ບັຣລຸຜາສຸວິຫາຣສັມມ໌ຢ່າງໃດຢ່າງນຶ່ງແລ້ວ. ຖ້າພວກເຮົາຈັກປວາຣຕາກັນເສັຽໃນບັດນີ້ ບາງເທື່ອພວກກິກຊຸປວາຣຕາກັນແລ້ວອາຈຈະຫລີກໄປສູ່ຈາຣິກກໍຈະມີແດ່ ເມື່ອເປັນເຊັ່ນນັ້ນ ພວກເຮົາກໍຈັກເຫີນຫ່າງຈາກຜາສຸວິຫາຣສັມມ໌ນີ້ ພວກເຮົາອາຈຈະປຕິບັຕິຢ່າງໃດນໍແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະພຸທສານຸຍາຕໃຫ້ເລື່ອນປວາຣຕາ

ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຊຸທັ້ງຫຼາຍ ວ່າດັ່ງນີ້:-

ດູຣາກິກຊຸທັ້ງຫຼາຍ ກໍກິກຊຸໃນສາສນານີ້ຫຼາຍອົງຄ໌ດ້ວຍກັນ ຊຶ່ງເຄີຍເຫັນຮ່ວມຄົບຫາກັນມາຈຳພັຣຊາຢູ່ໃນອາວາສແຫ່ງນຶ່ງ. ເມື່ອພວກທ່ານພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ຍ່ອມບັຣລຸຜາສຸວິຫາຣສັມມ໌ຢ່າງໃດຢ່າງນຶ່ງ. ຫາກກິກຊຸທັ້ງຫຼາຍໃນສັງຄສັນນິບາຕນັ້ນຄິດກັນຢ່າງນີ້ວ່າ

ພວກເຮົາພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ ໄດ້ບັຣລຸຜາສຸວິຫາຣສົມມ໌ຢ່າງໃດຢ່າງນຶ່ງ ແລ້ວ ຖ້າພວກເຮົາຈັກປວາຣຕາກັນເສັຽໃນບັດນີ້ ບາງເທື່ອພວກພິກຂຸປວາຣຕາກັນແລ້ວອາຈຈະຫລີກໄປສູ່ຈາຣິກ ກໍຈະມີແດ່ ເມື່ອເປັນເຊັ່ນນັ້ນ ພວກເຮົາກໍຈັກເຫີນຫ່າງຈາກຜາສຸວິຫາຣສົມມ໌ນີ້ ດູຣາພິກຂຸທັ້ງຫຼາຍ ເຮົາ ອນຸຍາຕໃຫ້ພິກຂຸເຫຼົ່ານັ້ນທຳການເລື່ອນປວາຣຕາອອກໄປ.

ວິທີເລື່ອນປວາຣຕາ

ດູຣາພິກຂຸທັ້ງຫຼາຍ ກໍແລ ສົງຄ໌ຄວຣເຮັດການເລື່ອນປວາຣຕາຢ່າງນີ້.

ພິກຂຸທຸກໆ ອົງຄ໌ຕ້ອງປະຊຸມພ້ອມກັນ. ຄັ້ນແລ້ວພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສ ໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາເລື່ອນປວາຣຕາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ເມື່ອພວກເຮົາພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ ໄດ້ບັຣລຸຜາສຸວິຫາຣສົມມ໌ຢ່າງໃດຢ່າງນຶ່ງແລ້ວ. ຫາກພວກເຮົາຈັກປວາຣຕາ ເສັຽໃນບັດນີ້ ບາງເທື່ອພິກຂຸທັ້ງຫຼາຍປວາຣຕາກັນແລ້ວ ຄວຣຫລີກໄປສູ່ຈາຣິກກໍຈະມີແດ່ ເມື່ອເປັນ ເຊັ່ນນັ້ນ ພວກເຮົາກໍຈັກເຫີນຫ່າງຈາກຜາສຸວິຫາຣສົມມ໌ນີ້ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣເຮັດການເລື່ອນປວາຣຕາອອກໄປ ບັດນີ້ຄວຣເຮັດອຸໂບສົຖ ສູຕປາຕິໂມກຂ໌ ຄວຣປວາຣຕາ ໃນວັນເພັຍເດືອນ ໑໔ ເປັນທີ່ຄົບ ໔ ເດືອນທີ່ຈະມາເຖິງ. ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ເມື່ອພວກເຮົາພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນຢູ່ ໄດ້ບັຣລຸຜາສຸວິຫາຣສົມມ໌ຢ່າງໃດຢ່າງນຶ່ງແລ້ວ. ຫາກພວກເຮົາຈັກປວາຣຕາເສັຽ ໃນບັດນີ້ ບາງເທື່ອພິກຂຸທັ້ງຫຼາຍປວາຣຕາກັນແລ້ວ ຄວຣຫລີກໄປສູ່ຈາຣິກກໍຈະມີແດ່ ເມື່ອເປັນເຊັ່ນນັ້ນ ພວກເຮົາກໍຈັກເຫີນຫ່າງຈາກຜາສຸວິຫາຣສົມມ໌ນີ້. ສົງຄ໌ທຳການເລື່ອນປວາຣຕາອອກໄປ ບັດນີ້ສົງຄ໌ ຈະທຳອຸໂບສົຖ ສູຕປາຕິໂມກຂ໌ ຈັກປວາຣຕາໃນວັນເພັຍເດືອນ ໑໔ ເປັນທີ່ຄົບ ໔ ເດືອນທີ່ຈະ ມາເຖິງ ການກະທຳຊຶ່ງການເລື່ອນປວາຣຕາອອກໄປ ດຽວນີ້ສົງຄ໌ຈະທຳອຸໂບສົຖ ສູຕປາຕິໂມກຂ໌ ຈັກປວາຣຕາໃນວັນເພັຍເດືອນ ໑໔ ເປັນທີ່ຄົບ ໔ ເດືອນທີ່ຈະມາເຖິງ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນ ຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ການເລື່ອນປວາຣຕາອັນສົງຄ໌ທຳແລ້ວ ບັດນີ້ສົງຄ໌ຈະທຳອຸໂບສົຖ ສູຕປາຕິໂມກຂ໌ ຈັກປວາຣຕາໃນວັນເພັນເດືອນ ໑໔ ເປັນທີ່ຄົບ ໔ ເດືອນທີ່ຈະມາເຖິງ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຫຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ບໍ່ເປັນໃຫຍ່ໃນປວາຣຕາ

ດູຣາພິກສຸທັ້ງຫຼາຍ ເມື່ອພິກສຸເຫຼົ່ານັ້ນທຳການເລື່ອນປວາຣຕາອອກໄປແລ້ວ ຫາກຈະມີພິກສຸສັກອົງຄ໌ນຶ່ງເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫຼາຍ ຂ້ານ້ອຍປັຕຖນາຈະຫລີກໄປສູ່ຈາຣິກຕາມຊົນບົທ ເພາະຂ້ານ້ອຍມີກິຈຈຳເປັນທີ່ຊົນບົທ. ພິກສຸອົງຄ໌ນັ້ນອັນພິກສຸທັ້ງຫຼາຍຄວຣກ່າວຢ່າງນີ້ວ່າ ດີແລ້ວ ອາວຸໂສ ທ່ານປວາຣຕາແລ້ວຈຶ່ງຄ່ອຍໄປ. ດູຣາພິກສຸທັ້ງຫຼາຍ ຫາກພິກສຸອົງຄ໌ນັ້ນອັນສົງຄ໌ປວາຣຕາຢູ່ ງົດປວາຣຕາຂອງພິກສຸອົງຄ໌ນຶ່ງເສັຽ ພິກສຸຜູ້ງົດປວາຣຕາ ອັນພິກສຸຜູ້ຖືກຫ້າມປວາຣຕາຄວຣກ່າວຢ່າງນີ້ວ່າ ອາວຸໂສ ທ່ານບໍ່ເປັນໃຫຍ່ໃນການປວາຣຕາຂອງຂ້ານ້ອຍໆ ຈັກຍັງບໍ່ປວາຣຕາກ່ອນ. ດູຣາພິກສຸທັ້ງຫຼາຍ ເມື່ອພິກສຸນັ້ນປວາຣຕາຢູ່ ພິກສຸອົງຄ໌ນຶ່ງຫ້າມປວາຣຕາຂອງພິກສຸອົງຄ໌ນັ້ນ ສົງຄ໌ຄວຣສອບສວນສືບສວນທັ້ງ ໔ ຝ່າຍ ແລ້ວປັບອາບັຕິຕາມສົມມ໌.

ດູຣາພິກສຸທັ້ງຫຼາຍ ຫາກພິກສຸອົງຄ໌ນັ້ນທຳກຣຕີຍກິຈນັ້ນໃນຊົນບົທແລ້ວໆກັບມາສູ່ອາວາສນັ້ນກາຍໃນວັນເພັນເດືອນ ໑໔ ເປັນທີ່ຄົບ ໔ ເດືອນ ຫາກເມື່ອພິກສຸເຫຼົ່ານັ້ນກຳລັງປວາຣຕາ ພິກສຸອີກອົງຄ໌ນຶ່ງງົດປວາຣຕາຂອງພິກສຸອົງຄ໌ນັ້ນ ພິກສຸຜູ້ງົດປວາຣຕາ ອັນພິກສຸຜູ້ຖືກງົດຄວຣກ່າວຢ່າງນີ້ວ່າ ອາວຸໂສ ທ່ານບໍ່ເປັນໃຫຍ່ໃນປວາຣຕາຂອງຂ້ານ້ອຍ ເພາະຂ້ານ້ອຍປວາຣຕາແລ້ວໆ. ດູຣາພິກສຸທັ້ງຫຼາຍ ຫາກເມື່ອພິກສຸເຫຼົ່ານັ້ນປວາຣຕາຢູ່ ພິກສຸນັ້ນງົດປວາຣຕາຂອງພິກສຸອີກອົງຄ໌ນຶ່ງ. ທັ້ງ ໔ ຝ່າຍສົງຄ໌ຄວຣສອບສວນສືບສວນເປັນການສົງຄ໌ ປັບອາບັຕິຕາມສົມມ໌ແລ້ວຈຶ່ງປວາຣຕາເຖີດ.

ປວາຣຕາຂັນສກະທີ່ ໔ ຈົບ.

ເຣື່ອງໃນຂັນສກະນີ້ມີ ໔໖ ເຣື່ອງ

ຫົວຂໍ້ປະຈຳຂັນສກະ

[໔໕໔] ໑. ເຣື່ອງກິກຂຸຈຳພັຣຊາໃນໂກສົລຊົນບົທມາເຝົ້າພຣະສາສດາ ໒. ເຣື່ອງຈຳພັຣຊາບໍ່ຜາສຸກເໝືອນປສຸສັຕວ໌ຢູ່ຮ່ວມກັນ ໓. ເຣື່ອງການປວາຣຕາທີ່ເໝາະສົມເພື່ອວ່າກ່າວກັນ ໔. ເຣື່ອງພຣະລັພພັຄຄີຍ໌ນັ່ງຮາບເທິງອາສນະປວາຣຕາ ໕. ເຣື່ອງວັນປວາຣຕາມີ ໒ ມື້ ໖. ເຣື່ອງອາການທີ່ທຳປວາຣຕາ ໗. ເຣື່ອງໃຫ້ກິກຂຸອາພາສມອບປວາຣຕາ ໘. ເຣື່ອງກິກຂຸຖືກພວກຍາຕິຄຸມໂຕໄວ້ ໙. ເຣື່ອງກິກຂຸຖືກພຣະຣາຊາຄຸມໂຕໄວ້ ໑໐. ເຣື່ອງກິກຂຸຖືກພວກໂຈຣຈັບໄວ້ ໑໑. ເຣື່ອງກິກຂຸຖືກພວກນັກເລງຈັບໄວ້ ໑໒. ເຣື່ອງກິກຂຸຖືກກິກຂຸຜູ້ເປັນຂ້າເສິກຈັບໄວ້ ໑໓. ເຣື່ອງສົງຄ໌ປວາຣຕາ ໕ ອົງຄ໌ ໑໔. ເຣື່ອງຄຕະປວາຣຕາ ໔ ອົງຄ໌ ໑໕. ເຣື່ອງຄຕະປວາຣຕາ ໓ ອົງຄ໌ ໑໖. ເຣື່ອງຄຕະປວາຣຕາ ໒ ອົງຄ໌ ໑໗. ເຣື່ອງກິກຂຸອົງຄ໌ດຽວອທິຊຖານປວາຣຕາ ໑໘. ເຣື່ອງກິກຂຸຕ້ອງອາບັຕິປວາຣຕາ ໑໙. ເຣື່ອງກິກຂຸສົງສັຍໃນອາບັຕິປວາຣຕາ ໒໐. ເຣື່ອງກິກຂຸຣະລຶກອາບັຕິ ໒໑. ເຣື່ອງສົງຄ໌ທັ້ງໝົດຕ້ອງສກາຄາບັຕິ ໒໒. ເຣື່ອງສົງຄ໌ທັ້ງໝົດສົງສັຍໃນສກາຄາບັຕິ ໒໓. ເຣື່ອງກິກຂຸເຈົ້າຖິ່ນພວກອື່ນມາຫຼາຍກວ່າ ໒໔. ເຣື່ອງກິກຂຸເຈົ້າຖິ່ນພວກອື່ນມາເທົ່າກັນ ໒໕. ເຣື່ອງກິກຂຸເຈົ້າຖິ່ນພວກອື່ນມານ້ອຍກວ່າ ໒໖. ເຣື່ອງວັນປວາຣຕາຂອງເຈົ້າຖິ່ນເປັນ ໑໔ ຄ່ຳ ໒໗. ເຣື່ອງລັກຂຕະເຈົ້າຖິ່ນ ໒໘. ເຣື່ອງກິກຂຸສອງສັງວາສປວາຣຕາ ໒໙. ເຣື່ອງບໍ່ຄວຣໄປ ໓໐. ເຣື່ອງບໍ່ຄວຣປວາຣຕາໃນບໍຣິສັທມີກິກຂຸຕີເປັນຕົ້ນນັ່ງຢູ່ດ້ວຍ ໓໑. ເຣື່ອງໃຫ້ລັນທະ ໓໒. ເຣື່ອງຫ້າມປວາຣຕາໃນວັນບໍ່ແມ່ນວັນປວາຣຕາ ໓໓. ເຣື່ອງຄົນຊາວດົງ ໓໔. ເຣື່ອງຣາຕຣີຈວນສວ່າງ ໓໕. ເຣື່ອງຝົນ ໓໖. ເຣື່ອງມີອັນຕຣາຍ ໓໗. ເຣື່ອງກິກຂຸມີອາບັຕິປວາຣຕາ ໓໘. ເຣື່ອງບໍ່ຍອມທຳໂອກາສ ໓໙. ເຣື່ອງງົດປວາຣຕາຂອງພວກເຮົາກ່ອນ ໔໐. ເຣື່ອງບໍ່ເປັນອັນງົດປວາຣຕາ ໔໑. ເຣື່ອງງົດປວາຣຕາຂອງກິກຂຸ ງົດເພາະເຣື່ອງແມ່ນຫຍັງຕົ້ນ ເປັນຢ່າງໃດ ງົດດ້ວຍໄດ້ເຫັນ ໄດ້ຍິນ ຫຼືນ່າຍໂຈທກ໌ແລະຈຳເລີຍ ໔໒. ເຣື່ອງກິກຂຸຕ້ອງອາບັຕິຖຸລລັຈຈັຍ ໔໓. ເຣື່ອງວັຕຖຸປຼາກົຕ ໔໔. ເຣື່ອງກໍ່ຄວາມບາດໝາງ ໔໕. ເຣື່ອງເລື່ອນປວາຣຕາ ໔໖. ເຣື່ອງບໍ່ເປັນໃຫຍ່ໃນປວາຣຕາ.

ຫົວຂໍ້ປະຈຳຂັນສກັບຈົບ.